ກ. ມາກ–ຟ. ອັງແກນ

ວ.ອ.ເລນິນ

# ກ່ຽວກັບ ການແບ່ງງານສັງຄົມ

ສຳນັກພິມຈຳໜ່າຍສືເທິດ

ຮ່າໂນ້ຍ 1987

ຊາວກຳມາຊີບທຸກໆ ປະເທດ
ຈົ່ງສາມັກຄີກັນ !

ກ. ມາກ–ຟ.ອັງແກນ

ວ.ອ.ເລນິນ

# ກ່ຽວກັບ
# ການແບ່ງງານສັງຄົມ

ສຳນັກພິມຈຳໜ່າຍຊີເທິດ

ຮ່າໂນ້ຍ 1987

# ຄຳນຳຂອງ ສຳນັກພິມຈຳໜ່າຍ

ປຶ້ມບັນຫາສະເພາະທີ່ໃສ່ຊື່ວ່າ " ກ່ຽວກັບການແບ່ງງານສັງຄົມ" ເຊິ່ງພວກເຮົາແປ ແລະ ພິມຈຳໜ່າຍເປັນພາສາລາວຫົວນີ້ແມ່ນ ແປຈາກສະບັບພາສາ ຫວຽດນາມ ທີ່ພິມຈຳໜ່າຍເມື່ອປີ ໑໙໗໗ ຂອງສຳນັກພິມຈຳໜ່າຍ ຊິເທິດ, ຮ່າໂນ້ຍ. ພວກເຮົາກໍໄດ້ກວດຄືນເພື່ອເປັນເອກະພາບກັນກັບເນື້ອໃນຂອງມັນທີ່ຄັດຈາກປຶ້ມ ມາກ - ອັງແກນ ນິພົນເລືອກເຟັ້ນ ແລະ ປຶ້ມເລນິນ ຄົບຊຸດແລ້ວ.

# ພາກທີໜຶ່ງ

## ລັກສະນະຈຳເປັນຂອງການ ແບ່ງງານຄືນໃໝ່ ຈາກການ ຜະລິດນ້ອຍກ້າວຂຶ້ນສູ່ການ ຜະລິດໃຫຍ່.

24/VII
ຫ້າມຈຳໜ່າຍ

ຄັດຈາກ :

ລະບົບແນວຄິດເຍຍລະມັນ

ບັນດາສາຍພົວພັນຊຶ່ງກັນ ແລະ ກັນລະຫວ່າງຊາດຕ່າງໆທີ່ຕ່າງກັນລ້ວນຂຶ້ນກັບລະດັບຂະຫຍາຍຕົວຂອງແຕ່ລະຊາດນັ້ນ ທາງດ້ານບັນດາ ກຳລັງການຜະລິດ, ການແບ່ງງານ ແລະ ການພົວພັນຕິດຕໍ່ພາຍໃນ. ມູນຫລັກທີ່ກ່າວມາແລ້ວນັ້ນໄດ້ຮັບການຮັບຮູ້ຈາກທຸກໆຄົນ. ແຕ່ວ່າບໍ່ແມ່ນສະເພາະແຕ່ ບັນດາສາຍພົວພັນຂອງຊາດໜຶ່ງຕໍ່ບັນດາຊາດອື່ນເທົ່ານັ້ນ, ມັນຫາກແມ່ນທັງທົ່ວໂຄງປະກອບ ພາຍໃນຂອງກະໂຕຊາດນັ້ນເອງ, ລ້ວນຂຶ້ນກັບລະດັບຂະຫຍາຍຕົວເອງຂອງການຜະລິດ ແລະ ຂອງການພົວພັນ ຕິດຕໍ່ພາຍໃນ ແລະ ພາຍນອກຂອງຊາດນັ້ນເອງ. ລະດັບຂະຫຍາຍຕົວຂອງບັນດາກຳລັງການຜະລິດຂອງຊາດໜຶ່ງປະກົດມາຢ່າງຈະແຈ້ງ ທີ່ສຸດຢູ່ກັບລະດັບຂະຫຍາຍຕົວຂອງການແບ່ງງານ. ບໍ່ວ່າກຳລັງການ ຜະລິດໃໝ່ໃດໆທີ່ຢູ່ໃນລະດັບບໍ່ພຽງແຕ່ເປັນການເປີດກວ້າງທາງດ້ານ ປະລິມານອອຍຕອຍຂອງບັນດາກຳລັງການຜະລິດ ຊຶ່ງຄົນເຮົາເຖິງເວລານັ້ນໄດ້ມາແລ້ວ ( ສົມມຸດຄືການບຸກເບີກດິນໃໝ່ ) ກໍລ້ວນນຳມາເຊິ່ງຜົນສຳເລັດຄືການຂະຫຍາຍຕົວໃໝ່ຂອງການແບ່ງງານ.

.....

ເປັນອັນແນ່ນອນວ່າໃນແນວຄິດທຳອິດ, ສະຕິຫາກໍ່ເປັນສະຕິກ່ຽວກັບສະພາບແວດລ້ອມທີ່<u>ໝໍ່ກວ່າໝູ່</u> ຊຶ່ງສາມາດຈະສຳພັດໄດ້ ແລະເປັນ

ສະຕິກ່ຽວກັບສາຍກ່ຽວກັນອັນຈຳກັດຕໍ່ຄົນອື່ນໆ ແລະ ສິ່ງອື່ນໆ ຢູ່ນອກຕົວຂອງບຸກຄົນທີ່ພອນສຳນຶກຕໍ່ຕົນເອງ; ພ້ອມກັນນັ້ນມັນກໍ່ແມ່ນສຳນຶກ ຕໍ່ທຳມະຊາດ, ໝາຍຄວາມວ່າ ສິ່ງທີ່ໃນເວລາທຳອິດ ປໍລະປັກກັບ ຄົນເໝືອນດັ່ງອິດທິກຳລັງໜຶ່ງອື່ນໄກ, ມີຄວາມສາມາດຮອບດ້ານ ແທ້ຈິງ ແລະ ບໍ່ສາມາດຈະແຕະຕ້ອງເຖິງມັນໄດ້, ໝາຍຄວາມວ່າເປັນສິ່ງຊຶ່ງຕໍ່ມັນນັ້ນ, ຄົນມີການພົວພັນແບບເປັນສັດແທ້ຈິງ, ເປັນສິ່ງຊຶ່ງຕໍ່ໜ້າມັນ, ຄົນຕ້ອງຍອມຈຳນົນເໝືອນກັນກັບສັດ; ເນື່ອງຈາກນັ້ນ, ມັນເປັນສະຕິແບບສັດແທ້ຈິງຕໍ່ທຳມະຊາດ ( ການເຄົາຣົບບູຊາສິ່ງທຳມະຊາດ ) . ແລະ ໃນດ້ານອື່ນ, ຕໍ່ຄົນ, ສະຕິກ່ຽວກັບຄວາມຈຳເປັນຕ້ອງມີການພົວພັນກັບຄົນອື່ນໆທີ່ຢູ່ອ້ອມຂ້າງນັ້ນ ໝາຍເຖິງຄວາມເລີ່ມຕົ້ນ ຂອງສະຕິຕໍ່ຄວາມຈິງຄືເວົ້າລວມແລ້ວຄົນຕ້ອງດຳລົງຊີວິດຢູ່ໃນສັງຄົມ. ໃນເບື້ອງຕົ້ນດັ່ງກ່າວກໍ່ມີລັກສະນະສັດເໝືອນກັນກັບກະໂຕຊີວິດສັງຄົມທີ່ຢູ່ໃນໄລ ຍະນັ້ນ; ນັ້ນແມ່ນສະຕິໝູ່ຝູງລ້ວນໆ, ແລະ ຢູ່ໃນກໍລະນີນີ້ຄົນພຽງແຕ່ຕ່າງກັນກັບໂຕແກະຢູ່ບ່ອນວ່າໃນກະໂຕຄົນ, ສະຕິທົດແທນໃຫ້ຄວາມສາມາດໃນຕົວຫລືວ່າຄວາມສາມາດໃນຕົວຂອງຄົນເປັນຄວາມສາມາດໃນຕົວໄດ້ມີສະຕິຢູ່ແລ້ວ. ໃນພາກຫລັງນີ້, ອັນເປັນສະຕິແບບຝູງແກະຫລື ສະຕິແບບເຜົ່າຊົນດັ່ງກ່າວ ຂະຫຍາຍຕົວຂຶ້ນ ແລະ ຖືກບູລະນະຢ່າງ ສົມບູນໂດຍອີງອາໄສການເພີ່ມສະມັດຖະພາບຂຶ້ນຕື່ມ, ການເພີ່ມທະວີ ຄວາມຮຽກຮ້ອງຕ້ອງການ ແລະ ອີງອາໄສການເພີ່ມຈຳນວນພົນລະເມືອງຂຶ້ນຕື່ມ, ພື້ນຖານຂອງການເພີ່ມສະມັດຖະພາບຂຶ້ນຕື່ມ ແລະ ເພີ່ມ ທະວີຄວາມຮຽກຮ້ອງຕ້ອງການຂຶ້ນຕື່ມ, ດັ່ງນັ້ນແລ້ວ ການແບ່ງງານ ກໍ່ຂະ

ຫຍາຍຕົວ, ທຳອິດມັນພຽງແຕ່ເປັນການແບ່ງງານໃນການປະພຶດ ຕາມຕົນຫາ ແລະ ໃນພາຍຫລັງກໍ່ເປັນການແບ່ງງານແບບເກີດເອງຫລືເກີດຂຶ້ນ " ຕາມທຳມະຊາດ " ເນື່ອງຈາກນິດໄສທີ່ມີມາແຕ່ເວລາກຳເນີດ ( ເຊັ່ນວ່າກຳລັງກາຍເປັນຕົ້ນ ), ເນື່ອງມາຈາກຄວາມຮຽກຮ້ອງຕ້ອງການຕ່າງໆ ເນື່ອງມາຈາກບັນດາຄວາມເປັນບັງເອີນ ຯລຯ ແລະ ຯລຯ ... ການແບ່ງງານພຽງແຕ່ກາຍເປັນການແບ່ງງານແທ້ຈິງ ນັບແຕ່ເວລາເກີດມີການຈັດແບ່ງເປັນການອອກແຮງງານທາງວັດຖຸ ແລະ ການອອກແຮງງານທາງຈິດໃຈ (໑).ເລີ່ມຈາກເວລານັ້ນ, ສະຕິສາມາດ ວາດນຶກວ່າມັນເປັນສິ່ງອື່ນໃດໜຶ່ງ, ມັນຫາກບໍ່ແມ່ນສະຕິກ່ຽວກັບພຶດຕິກຳທີ່ເກີດມີໃນປະຈຸບັນ, ວ່າມັນສາມາດຈະນຶກເຫັນຢ່າງແທ້ຈິງສິ່ງໃດສິ່ງໜຶ່ງ, ຫາກບໍ່ນຶກເຫັນແມ່ນແຕ່ສິ່ງໃດທີ່ມີຈິງເລີຍ; ເລີ່ມຈາກ ເວລານັ້ນ, ສະຕິມີຄວາມສາມາດຫລອດຕົວພົ້ນຈາກໂລກເອງ ແລະ ຍົກຍ້າຍມາສູ່ທິດສະດີ "ລ້ວນໆ", ເທວະສາດ, ປັດຊະຍາ, ສູນທຳ ຯລຯ ... ແຕ່ຈົນວ່າໃນເວລາທິດສະດີດັ່ງກ່າວ, ເທວະສາດດັ່ງກ່າວ, ປັດຊະຍາດັ່ງກ່າວ, ສູນທຳດັ່ງກ່າວ ຯລຯ ... ຂັດແຍ່ງກັບ ບັນດາສາຍພົວພັນທີ່ພວມມີຢູ່ໃນປະຈຸບັນ, ເລື່ອງນັ້ນກໍ່ພຽງແຕ່ປະກົດອອກ ມາຍ້ອນບ່ອນວ່າບັນດາສາຍພົວພັນສັງຄົມທີ່ພວມມີຢູ່ນັ້ນໄດ້ມີຄວາມ ຂັດແຍ່ງກັບບັນດາກຳລັງການຜະລິດທີ່ພວມຄົງຕົວ; ອີກຢ່າງໜຶ່ງ,ພາຍໃນຂອບເຂດຊາດໜຶ່ງທີ່ແນ່ນອນ, ເລື່ອງນັ້ນກໍ່ສາມາດເກີດຂຶ້ນ ເພາະວ່າໃນກໍລະນີນີ້, ຂໍ້ຂັດແຍ່ງບໍ່ປະກົດຕົວອອກມາຢູ່ໃນຂອບເຂດຊົນຊາດນັ້ນ ຫາກປະກົດອອກລະຫວ່າງຈິດສຳນຶກຂອງຊາດນັ້ນກັບພຶດຕິກຳຂອງບັນດາຊາດ

ອື່ນໆ, ໝາຍຄວາມວ່າລະຫວ່າງຈິດສຳນຶກຂອງຊາດໜຶ່ງ ແລະ ຈິດສຳນຶກອັນແຜ່ ລາມຂອງຊາດນັ້ນ ( ຄືໃນກໍລະນີຢູ່ເຍຍລະມັນ ໃນປະຈຸບັນ (໑)* ແລະ ໃນເວລານັ້ນຕໍ່ຊົນຊັ້ນນັ້ນ, ເນື່ອງຈາກວ່າເບິ່ງທາງຮູບນອກ, ຂໍ້ຂັດແຍ່ງດັ່ງກ່າວພຽງແຕ່ສະແດງອອກເປັນຂໍ້ຂັດແຍ່ງ ຢູ່ໃນພາຍໃນສະຕິຊາດເທົ່ານັ້ນ,ສະນັ້ນການຕໍ່ສູ້ດັ່ງວ່າມັນພຽງແຕ່ຈຳກັດ ຢູ່ໃນອັນທີ່ເປັນຂໍ້ເຫຍື່ອຂອງຊາດເທົ່ານັ້ນ, ກໍ່ແມ່ນຍ້ອນກະໂຕຊາດນັ້ນ ກໍ່ເປັນການເໜື່ອເປື່ອຍ. ກະໂຕຈິດສຳນຶກເອງນັ້ນຢາກເຣັດແນວ ໃດແນວໜຶ່ງດ້ວຍໂຕເອງ, ເລື່ອງນັ້ນບໍ່ສຳຄັນຫຍັງເລີຍ,ອັນເປັນຂໍ້ເຫຍື່ອທັງມວນນັ້ນພຽງແຕ່ນຳມາໃຫ້ພວກເຮົາຂໍ້ສະຫລຸບແຕ່ຢ່າງດຽວວ່າ:ສາມປັດໄຈທີ່ໄດ້ກ່າວມາຂ້າງເທິງ - ກຳລັງການຜະລິດ, ປະກົດການ ສັງຄົມ ແລະ ຈິດສຳນຶກ - ສາມາດ ແລະ ຕ້ອງປະທະຊຶ່ງກັນ ແລະ ກັນເພາະວ່າ ການແບ່ງງານ ນຳມາເຊິ່ງຄວາມສາມາດ, ຍິ່ງກ່ວານັ້ນ , ມັນຍັງນຳມາເຊິ່ງອັນເປັນຕົວຈິງແມ່ນການເຄື່ອນໄຫວທາງຈິດໃຈ ແລະການເຄື່ອນໄຫວທາງວັດຖຸ - ການຊົມໃຊ້ ແລະ ການອອກແຮງງານ, ການຜະລິດ ແລະ ການໃຊ້ສອຍ - ໄດ້ຈັດແບ່ງໃຫ້ບັນດາບຸກຄົນທີ່ຕ່າງ

---

໑* ( ຢູ່ທີ່ນີ້, ທ່ານມາກຈົດໃສ່ສ່ວນທີ່ເບື້ອງຂວາ ) ວ່າ :ກົງກັນກັບເລື່ອງນັ້ນ ແມ່ນຮູບການທຳອິດ ຂອງບັນດານັກແນວຄິດໝາຍຄວາມວ່າ ບັນດາຄູນພໍ່.

(໑) (ຢູ່ທີ່ນີ້, ທ່ານຈົດໃສ່ທີ່ຢູ່ເບື້ອງຂວາ ) ສາສະໜາຄົນເຍຍລະມັນ ກັບ ລະບົບແນວຄິດ ໃນຖານະນາມເປັນແນວນັ້ນ.

ກັນ; ແລະ ດັ່ງນັ້ນແລ້ວ, ຢາກໃຫ້ບັນດາປັດໄຈດັ່ງກ່າວບໍ່ມີຄວາມ ຂັດແຍ່ງນຳກັນນັ້ນ, ມີແຕ່ວິທີດຽວແມ່ນໃຫ້ມີການລົບລ້າງການແບ່ງ ງານເສຍອີກໃໝ່. ນອກຈາກນັ້ນ, ເປັນອັນແນ່ນອນວ່າ " ພີສາງ ", " ຊີກໂສ້ ", ( ຟ້າແຖນ ) " ທັດສະນະການ ", " ຄວາມສົງໄສ " [໔]. ພຽງແຕ່ເປັນປະກົດການທາງຈິດໃຈ, ຈິດຕະນິຍົມ, ພຽງແຕ່ເປັນຄວາມເຂົ້າໃຈອັນປອມແປງຂອງບຸກຄົນທີ່ຖືກໂດດດ່ຽວ, ເປັນຄວາມເຂົ້າໃຈກ່ຽວກັບບັນດາຊີກໂສ້ ແລະ ການຈຳກັດຂອບເຂດ ອັນເປັນບົດຣຽນນິຍົມທີ່ສຸດ ຊຶ່ງໃນນັ້ນແບບວິທີຜະລິດຊີວິດສັງຄົມພວມເຄື່ອນໄຫວຢູ່ ແລະ ຮູບການພົວພັນຕິດຕໍ່ທີ່ຕິດແໜ້ນກັບແບບວິທີຜະລິດດັ່ງກ່າວເທົ່ານັ້ນ,

ການແບ່ງງານດັ່ງກ່າວ - ການແບ່ງງານໜຶ່ງຊຶ່ງກວມມີຂໍ້ ຂັດແຍ້ງທີ່ໄດ້ກ່າວມາຂ້າງເທິງ ແລະ ເຖິງຂັ້ນຂອງມັນ, ມັນເລີຍອີງ ໃສ່ການແບ່ງງານແບບທຳມະຊາດພາຍໃນຂອບເຂດ ແລະ ອີງໃສ່ ການແບ່ງປັນສັງຄົມເປັນບັນດາຄອບຄົວສະເພາະຕ່າງຫາກຕໍ່ກັນ, - ພ້ອມກັນນັ້ນກໍກວມມີການແບ່ງປັນແຮງງານ ແລະ ຜະລິດພັນແຫ່ງການ ອອກແຮງງານ ຊຶ່ງເປັນການແບ່ງປັນໃຫ້ຕົວຈິງແມ່ນ ບໍ່ມີການສະໝ່ຳ ສະເໝີກັນ ທັງທາງດ້ານປະລິມານທັງທາງດ້ານຄຸນນະພາບ; ເພາະ ສະນັ້ນມັນກໍ່ກວມມີການຖືກຳມະສິດ, ຊຶ່ງຮູບຖານທຳອິດ ແລະ ເປັນໜໍ່

---

(໔) ນີ້ແມ່ນສັບຕ່າງໆ ຊຶ່ງຝ່າຍ ເຮເກນ ໜຸ່ມເຄີຍໃຊ້, ໂດຍສະເພາະແມ່ນ ສຕຽກ - ເນີ,

ແໜງແມ່ນນອນຢູ່ໃນຄອບຄົວ, ໃນນັ້ນຜູ້ເປັນເມຍ ແລະ ລູກສາວເປັນຂ້ອຍຂ້າຂອງຜູ້ຊາຍ. ການຢຶດກຳມະສິດພາຍໃນຄອບຄົວ - ຈິງຢູ່ແລ້ວວ່າມັນຍັງເປັນປະຖົມມະຖານທີ່ສຸດ ແລະ ຖືກປົກປິດເປັນຮູບການກຳມະສິດທຳອິດ, ເປັນຮູບການໜຶ່ງທີ່ຖືກກັບຄຳນິຍາມຂອງບັນດານັກເສດຖະກິດທັນສະໄໝຢ່າງສົມບູນ, ເຂົາໄດ້ເວົ້າວ່າ ກຳມະສິດແມ່ນ ສິດຄອບຄອງແຮງງານຂອງຜູ້ອື່ນໂດຍເສລີ. ອີກຢ່າງໜຶ່ງ, ການແບ່ງງານແລະກຳມະສິດເອກະເທດເປັນສັບຕ່າງໆ ທີ່ມີຄວາມໝາຍຄືກັນ :ເຂົາເຈົ້າໃຊ້ສັບທີໜຶ່ງເພື່ອກ່າວທາງດ້ານການເຄື່ອນໄຫວ ແລະ ໃຊ້ສັບທີ ສອງເພື່ອກ່າວທາງດ້ານຜະລິດພັນຂອງການເຄື່ອນໄຫວ.

ອີກປະການໜຶ່ງ, ການແບ່ງງານໃນວາລະດຽວກັນກໍກອນມີຂໍ້ຂັດແຍ້ງລະຫວ່າງຜົນປະໂຫຍດຂອງບຸກຄົນເປັນສະເພາະຕ່າງຫາກຫລືຂອງຄອບຄົວສະເພາະຕ່າງຫາກກັບຜົນປະໂຫຍດລວມໝູ່ຂອງທຸກໆ ບຸກຄົນທີ່ມີຄວາມກ່ຽວພັນນຳກັນ; ຍິ່ງກວ່ານັ້ນ, ຜົນປະໂຫຍດລວມໝູ່ ອັນນີ້ບໍ່ແມ່ນວ່າພຽງແຕ່ຄົງຕົວພາຍໃນການວາດນຶກດ້ວຍຖານະນາມເປັນ "ອັນລວມ" ເທົ່ານັ້ນ, ຫາກກ່ອນອື່ນໝົດ, ມັນຄົງຕົວຢູ່ໃນອັດຖະການ ຕົວຈິງ, ດ້ວຍຖານະນາມເປັນການຂຶ້ນກັບຊຶ່ງກັນ ແລະ ກັນລະຫວ່າງ ບຸກຄົນຕ່າງໆ ທີ່ມີການແບ່ງງານນຳກັນ... ( ແລະທ້າຍສຸດການ ແບ່ງງານກໍ່ສະໜອງໃຫ້ພວກເຮົາໂດຍກົງຕົວຢ່າງອັນທຳອິດກ່ຽວກັບ ສະຖານະການດັ່ງຕໍ່ໄປນີ້: ຕາບໃດມະນຸດຍັງຢູ່ໃນສັງຄົມໜຶ່ງຊຶ່ງໄດ້ກໍ່ຮູບ ຂຶ້ນແບບທຳມະຊາດ, ຈາກນັ້ນຕາບໃດຍັງມີການຕັດແບ່ງລະຫວ່າງ ຜົນປະໂຫຍດສ່ວນຕົວ ແລະ ຜົນປະໂຫຍດສ່ວນລວມ, ເພາະສະນັ້ນ ຕາບໃດ

ການແບ່ງປັນການເຄື່ອນໄຫວຫາກຍັງຖືກດຳເນີນໄປໂດຍບໍ່ແມ່ນ ດ້ວຍຄວາມສະໝັກໃຈແຕ່ໂດຍຕາມທຳມະຊາດແລ້ວ, ຕາບນັ້ນການ ເຄື່ອນໄຫວຂອງກະໂຕຄົນເອງຈະກາຍເປັນກຳລັງອັນອື່ນໄກ, ປໍລະປັກກັບຄົນ ແລະ ລ່າຫາດຕໍ່ຄົນ, ບໍ່ແມ່ນວ່າມັນຖືກມະນຸດປົກຄອງ. ຕັ້ງແມ່ນ ແນວນັ້ນແຫຼ້ ເມື່ອໃດຫາກເລີ່ມມີການແບ່ງງານ, ເມື່ອນັ້ນແຕ່ລະຄົນກໍ່ມີຂອບເຂດເຄື່ອນໄຫວທີ່ແນ່ນອນ ແລະ ຜູກຂາດສະເພາະຊຶ່ງຄົນຜູ້ນັ້ນຈຳເປັນຕ້ອງຮັບເອົາ ແລະ ບໍ່ສາມາດຈະພົ້ນໄປໄດ້ : ຜູ້ນັ້ນເປັນຄົນລ່າເນື້ອ, ຊາວປະມົງ, ຫລື ເປັນຄົນລ້ຽງສັດຫລືເປັນນັກວິພາກວິຈານທີ່ມີ ລັກສະນະວິພາກວິຈານ, ແລະ ຜູ້ນັ້ນຄົງຕ້ອງເປັນແນວນັ້ນ ຖ້າວ່າເຂົາບໍ່ຢາກເສຍພາຫະນະດຳລົງຊີວິດຂອງຕົນເອງ.

.....

ໃນດ້ານອື່ນ, ກະໂຕບຸກຄົນຕ່າງໆກໍ່ຖືກການແບ່ງງານຄອບຄອງຢ່າງສົມບູນ, ແລະ ເນື່ອງຈາກນັ້ນເຂົາເຈົ້າຕົກຢູ່ໃນສະພາວະຂຶ້ນກັບຊຶ່ງກັນ ແລະ ກັນຢ່າງສົມບູນ. ກຳມະສິດເອກະເທດ, ໃນລະດັບຂອບຂ່າຍຊຶ່ງຢູ່ໃນຂອບເຂດຂອງການອອກແຮງງານ, ມັນປໍລະປັກກັບການອອກແຮງງານ, ມັນຂະຫຍາຍຕົວຍິ່ງຂຶ້ນ ຍ້ອນຄວາມຈຳເປັນຕ້ອງສະສົມ, ແລະ ໃນວາລະທຳອິດມັນຄົງສືບຕໍ່ປ້ອງກັນຮັກສາຮູບການວົງຄະນະຍາດແຕ່ວ່າຢູ່ໃນການຂະຫຍາຍຕົວໃນພາຍຫລັງ, ມັນນັບມື້ນັບຫຍັບເຂົ້າມໍ່ກັບ ຮູບການທັນສະໄໝຂອງກຳມະສິດເອກະເທດ. ແຕ່ເວລາທຳອິດໂລດ , ການແບ່ງງານໄດ້ກວມມີການແບ່ງປັນ ເງື່ອນໄຂແຫ່ງການ ອອກແຮງງານ, ເຄື່ອງມື ແລະ ອຸປະກອນ, ຈາກນັ້ນກໍ່ກວມມີທັງການແບ່ງຍ່ອຍ

ຕໍ່ທຶນສະສົມລະຫວ່າງບັນດາຜູ້ຄົນທີ່ມີກຳມະສິດຕ່າງກັນ, ແລະ ເນື່ອງຈາກກວມມີທັງການຕັດແບ່ງລະຫວ່າງ ທຶນ ແລະ ແຮງງານ, ເຊັ່ນດຽວກັນກັບລະຫວ່າງຮູບການຕ່າງໆ ທີ່ຕ່າງກັນຂອງກະໂຕ ລະບອບ ກຳມະສິດອີກດ້ວຍ. ການແບ່ງງານຍິ່ງຂະຫຍາຍຕົວ ແລະ ການສະສົມ ຍິ່ງເພີ່ມທະວີຂຶ້ນຕື່ມ, ການຕັດແບ່ງດັ່ງກ່າວກໍ່ຍິ່ງກາຍເປັນອັນຈະແຈ້ງ. ກະໂຕແຮງງານເອງສາມາດຄົງຕົວຢູ່ໄດ້ພຽງແຕ່ດ້ວຍເງື່ອນໄຂມີການ ຕັດແບ່ງດັ່ງກ່າວນັ້ນແລ້ວ.

ກ.ມາກ ແລະ ຟ. ອັງແກນ, ລະບົບແນວຄິດເຍຍລະມັນ, ໂຮມບົດ ເລືອກເຟັ້ນ ເຫລັ້ມ ໑, ສຳນັກພິມຈຳໜ່າຍຊິເທິດ, ຮ່າໂນ້ຍ, ໑໙໘໐, ໜ້າ ໑໒໙-໔໗໐, ໔໙໐-໔໙໕; ໖໕໗-໖໕໘.

ຄັດຈາກປຶ້ມ :

ການຂະຫຍາຍຕົວຂອງ
ລັດທິທຶນນິຍົມຢູ່ລັດເຊຍ

ພາກ VI

ໂຮງຫັດຖະກຳທຶນນິຍົມ ແລະ ແຮງງານທີ່ເຮັດຢູ່ເຮືອນ ໃຫ້ນາຍທຶນ

I .- <u>ການກໍ່ຕົວຂຶ້ນເປັນໂຮງງານຫັດຖະກຳ ແລະ ບັນດາຈຸດພິເສດຕົ້ນຕໍຂອງມັນ</u>.

ທຸກຄົນຕ່າງກໍ່ຮູ້ວ່າ ໂຮງງານຫັດຖະກຳແມ່ນການຮ່ວມມື ບົນພື້ນຖານການແບ່ງງານ. ເນື່ອງຈາກຕົ້ນກຳເນີດຂອງມັນ ສະນັ້ນໂຮງງານຫັດຖະກຳຈຶ່ງມີການກ່ຽວພັນໂດຍກົງກັບບັນດາ "ໄລຍະທຳອິດຂອງລັດທິທຶນນິຍົມ ໃນອຸດສາຫະກຳ " ຊຶ່ງໄດ້ກ່າວມາຢູ່ຂ້າງເທິງນັ້ນ. ດ້ານໜຶ່ງ, ບັນດາໂຮງງານທີ່ມີກຳມະກອນຈຳນວນທີ່ຫລາຍພໍຄວນກໍ່ໄດ້ຄ່ອຍໆ ໝູນໃຊ້ການແບ່ງງານ, ແລະ ຈາກນັ້ນການຮ່ວມມືອັນງ່າຍດາຍແບບ ທຶນນິຍົມຈຶ່ງກ້າວຂຶ້ນສູ່ໂຮງງານຫັດຖະກຳທຶນນິຍົມ. ເອກະສານສະຖິຕິຕ່າງໆ ກ່ຽວກັບຫັດຖະກຳຂອງແຂວງ ມົສກູ ຊຶ່ງເອົາມາພິສູດຢູ່ຂ້າງເທິງນັ້ນໄດ້

ພິສູດຂະບວນການວິວັດກໍ່ຕົວຂຶ້ນນັ້ນ ຂອງໂຮງງານຫັດຖະກຳຢ່າງ ຈັດເຈນ: ບັນດາໂຮງງານໃຫ່ຍກ່ວາຫມູ່ຂອງອາຊີບຫັດຖະກຳຊັ້ນສີ່, ຂອງອາຊີບຊັ້ນສາມຈຳນວນຫນຶ່ງ ແລະ ບາງອາຊີບເອກະເທດຊັ້ນສອງຕ່າງກໍ່ຫມູນໃຊ້ການແບ່ງງານຢ່າງມີລະບົບ ແລະ ໃນຂະຫນາດ ກວ້າງໃຫ່ຍ ເພາະສະນັ້ນຈຶ່ງຕ້ອງຖືໂຮງງານເຫລົ່ານັ້ນ ເປັນໂຮງງານຫັດຖະກຳທຶນນິຍົມ, ລຸ່ມນີ້ ພວກຂ້າພະເຈົ້າຈະນຳສະເຫນີບັນດາເອກະສານ ທີ່ລະອຽດກ່ວາທາງດ້ານເຕັກນິກ ແລະ ທາງດ້ານເສດຖະກິດຂອງບາງ ອາຊີບຫັດຖະກຳດັ່ງກ່າວນັ້ນ.

ດ້ານອື່ນ, ໃນບັນດາອາຊີບຫັດຖະກຳນ້ອຍ, ພວກເຮົາກໍ່ໄດ້ເຫັນວ່າ ນາຍທຶນການຄ້າ, ຂະຫຍາຍຕົວເຖິງລະດັບສູງ, ຈຶ່ງຫັນ ບັນດາຊາວພະລິດໃຫ້ກາຍເປັນກຳມະກອນຜູ້ຮັບຈ້າງຄືແນວໃດ ໃນການ ປຸງແຕ່ງຮັບເຫມົາວັດຖຸດິບຕ່າງໆທີ່ບໍ່ແມ່ນຂອງເຂົາ. ຖ້າຜົນໄດ້ຂອງ ການຂະຫຍາຍຕົວໃນຕໍ່ມານັ້ນພາໄປເຖິງການຫມູນໃຊ້ການແບ່ງງານ ທີ່ມີລະບົບ, ອັນແມ່ນການແບ່ງງານທີ່ເຮັດໃຫ້ເຕັກນິກຂອງຊາວພະລິດ ນ້ອຍປ່ຽນແປງໄປ, ຖ້າວ່າ " ເຈົ້າຂອງຮັບຊື້ " ແຍກວຽກງານພາກສ່ວນຈຳນວນຫນຶ່ງອອກ ເພື່ອໃຫ້ກຳມະກອນຜູ້ຮັບຈ້າງເປັນຜູ້ເຮັດ ໃນໂຮງງານຂອງເຂົາ; ຖ້າວ່າຄຽງຂ້າງລະບອບແຈກຢາຍວຽກເພື່ອໃຫ້ເຮັດຢູ່ເຮືອນນັ້ນ, ຊຶ່ງຕິດພັນກັບລະບອບດັ່ງກ່າວ, ຄົນທັງຫລາຍກໍ່ເຫັນບັນດາໂຮງງານໃຫ່ຍດຳເນີນການແບ່ງງານປະກົດຕົວອອກ ( ຕາມທຳມະດາໂຮງງານເຫລົ່ານັ້ນຊ້ຳພັດເປັນຂອງພວກເຈົ້າຂອງຮັບຊື້ນັ້ນເອງ ) ດັ່ງນັ້ນ ພວກເຮົາພວມຢືນຕໍ່ຫນ້າຂະບວນວິວັດປະກົດຕົວແນວອື່ນ ປະເພດ

ໜື້ງຂອງໂຮງງານຫັດຖະກຳທຶນນິຍົມ (໑)

ໂຮງງານຫັດຖະກຳມີຄຸນປະໂຫຍດ ອັນສຳຄັນຕໍ່ການຂະຫຍາຍຕົວຂອງບັນດາຮູບການອຸດສາຫະກຳທຶນນິຍົມ, ເພາະມັນເປັນຂອດ ລະຫວ່າງກາງຂອງອາຊີບຫັດຖະກຳ ແລະ ການຜະລິດສິນຄ້ານ້ອຍ, ຖືບັນດາຮູບການເດີມຂອງທຶນນິຍົມກັບອຸດສາຫະກຳກົນຈັກໃຫ່ຍ ( ໂຮງຈັກໂຮງງານ ). ໂຮງງານຫັດຖະກຳໃກ້ກັນກັບຫັດຖະກຳນ້ອຍຢູ່ບ່ອນ ວ່າເຕັກນິກຫັດຖະກຳຍັງຄົງເປັນພື້ນຖານຂອງໂຮງງານຫັດຖະກຳ, ຢູ່ບ່ອນວ່າບັນດາໂຮງງານໃຫ່ຍຊຶ່ງຍອມວ່າມັນບໍ່ອາດປະຖິ້ມບັນດາ ໂຮງງານນ້ອຍນັ້ນອອກໄດ້ຢ່າງຂາດຂັ້ນ, ມັນກໍ່ບໍ່ອາດແຍກ " ຊາວທຳອາຊີບຫັດ

---

(໑) ກ່ຽວກັບຂະບວນວິວັດປະກົດຕົວອອກຂອງໂຮງງານ ຫັດຖະກຳທຶນນິຍົມນີ້ ຈົ່ງອ່ານ ກ.ມາກ "Das Kapital" ເຫຼັ້ມ III ໜ້າ ໗໑໘-໗໔໐, ສະບັບເປັນພາສາລັດເຊຍ ໜ້າ ໘໕໗ - ໘໗໐.

" ໂຮງງານຫັດຖະກຳກໍ່ບໍ່ແມ່ນມັນກຳເນີດເກີດຂຶ້ນໃນທ້ອງ ຂອງບັນດາສັງຄົມອາຊີບເກົ່ານັ້ນເອງ, ແມ່ນກະໂຕຊາວຄ້າຂາຍເອງຫາກບໍ່ແມ່ນຜູ້ເປັນເຈົ້າຂອງເນື້ອກ່ອນຂອງບັນດາສັງຄົມອາຊີບ, ໄດ້ກາຍເປັນເຈົ້າຂອງໂຮງຈັກທັນສະໄໝ(Misère de la philosophie) = (ຄວາມອັບຈົນຂອງປັດຊະຍາ, ໜ້າ ໑໕໐).ຢູ່ຕອນອື່ນພວກຂ້າພະເຈົ້າກໍ່ໄດ້ສະເໜີບັນດາຈຸດຕົ້ນຕໍຂອງຄວາມຄິດໂຮງງານຫັດຖະກຳຂອງມາກ("ບັນດາບົດຄົ້ນຄວ້າ",໑໐໕(ອ່ານ ວ.ອູ.ເລນິນ,ຄົບຊຸດ,ເຫຼັ້ມ ໘,ສຳນັກພິມຈຳໜ່າຍ ໂປຼແກຼສ, ມົສກູ, ໜ້າ ໔໕໓ - ໔໕໔).

ຖະກຳ " ອອກຈາກກະສິກຳໄດ້ຢ່າງຂາດຂັ້ນ. " ໂຮງງານຫັດຖະກຳ ບໍ່ສາມາດກວມເອົາການຜະລິດສັງຄົມທັງໝົດນັ້ນໄດ້ເທື່ອ, ມັນກໍ່ບໍ່ອາດ ດັດສ້າງການຜະລິດສັງຄົມໄດ້ຢ່າງເຖິງຖອງ ( inihrer tiefe ) ໂດຍທີ່ເປັນກິດຈະກຳສິບລະປະກຳດ້ານເສດຖະກິດ, ໂຮງງານ ຫັດຖະ ກຳ ອີງໃສ່ພື້ນຖານອັນກວ້າງໃຫຍ່ອັນແມ່ນຫັດຖະກຳຢູ່ຕົວເມືອງແລະອາ ຊີບສຳຮອງຢູ່ຊົນນະບົດ"(໔). ໂຮງງານຫັດຖະກຳ ໃກ້ກັນກັບໂຮງຈັກ ໂຮງງານກໍ່ຍອມວ່າມີການກໍ່ຕົວຂຶ້ນເປັນຕະຫລາດໃຫຍ່ຢ່າງໜຶ່ງ, ບັນ ດາໂຮງງານໃຫຍ່ໃຊ້ກຳມະກອນຜູ້ຮັບຈ້າງ, ນາຍທຶນໃຫຍ່ຜູ້ໜຶ່ງຄອບງຳ ມວນຊົນກຳມະກອນກຳມາຊີບຢ່າງສິ້ນເຊີງ.

ໃນປຶ້ມ ແລະ ໜັງສືພິມຂອງລັດເຊຍ; ເຂົານັກນຶກຄິດຕາຍ ຕົວ ວ່າ ເຫວເລິກແຫ່ງໜຶ່ງລະຫວ່າງອັນທີ່ເຂົາເອີ້ນວ່າການຜະລິດແບບ " ໂຮງຈັກໂຮງງານ " ກັບການຜະລິດແບບ " ຫັດຖະກຳ ", ຄວາມ ນຶກຄິດຕາຍຕົວນັ້ນຕິດລັກສະນະ "ທຣຸນ" ຢ່າງໜຶ່ງໃຫ້ໂຮງຈັກ ແລະ ໂຮງງານ ແລະ ຕິດລັກສະນະ " ປະຊາຊົນ " ໃຫ້ການຜະລິດຫັດຖະ ກຳ, ສະນັ້ນພວກເຮົາຈຶ່ງເຫັນມີຄວາມຈຳເປັນທີ່ສຸດວ່າຕ້ອງສັງເກດກວດ ເບິ່ງບັນດາເອກະສານກ່ຽວກັບຫຼາຍໆຂະແໜງອຸດສາຫະກຳປຸງແຕ່ງທີ່ສຳ ຄັນກວ່າໝູ່ ແລະ ຕ້ອງເວົ້າແຈ້ງເຖິງການຈັດຕັ້ງເສດຖະກິດ ຂອງບັນ ດາຂະແໜງການນັ້ນດີ ແນວໃດໃນເມື່ອຂະແໜງການເຫລົ່ານັ້ນ ໄດ້ ຂ້າມຜ່ານໄລຍະການຜະລິດແບບຫັດຖະກຳນ້ອຍຂອງຊາວນາ ແລະກ່ອນ

(໔) "Das Kapital" ເຫລັ້ມ ໔, ໜ້າ ໓໘໓.

ຈະຖືກດັດສ້າງຈາກຊຸດສາຫະກຳກົນຈັກ.

ວ.ອ.ເລນິນ, ຄົບຊຸດ, ພາສາ
ຫວຽດນາມ, ສຳນັກພິມຈຳຈຳ
ໜ່າຍ ໂປຼແກຼສ, ມົສກູ ,
໑໙໗໖, ເຫລັ້ມ ໓, ໜ້າ
໔໘໐ - ໔໘໘ .

ຄັດຈາກນິພົນວ່າດ້ວຍ :

ທຶນ

ພາກ IV

ກົນຈັກ ແລະ ອຸດສາຫະກຳໃຫຍ່

..... ພ້ອມກັບເຄື່ອງມື, ຄວາມຄ່ອງແຄ້ວນຳໃຊ້ເຄື່ອງມືໄດ້ມີການ ຍົກຍ້າຍຈາກຊາວກຳມະກອນສູ່ກົນຈັກ. ການນຳໃຊ້ເຄື່ອງມືຈາກນັ້ນໄດ້ຖືກປົດປ່ອຍພົ້ນຈາກຄວາມຈຳກັດຕ່າງໆ ໂດຍແມ່ນກຳລັງແຮງງານ ຂອງຜູ້ນັ້ນເປັນຜູ້ກໍ່ຂຶ້ນ, ສະນັ້ນ, ພື້ນຖານເຕັກນິກທີ່ເປັນບ່ອນຕັ້ງທ່າໃຫ້ ການແບ່ງງານພາຍໃນໂຮງງານ ຫັດຖະກຳຈາກນັ້ນກໍ່ຖືກລົບລ້າງ. ອັນໄດແຫ່ງການແບ່ງລຳດັບຊັ້ນຂອງກຳມະກອນທີ່ມີວິຊາສະເພາະເຊິ່ງ ເດີມແມ່ນເອກະລັກພິເສດຂອງການແບ່ງງານແບບໂຮງງານຫັດຖະກຳນັ້ນ , ໃນໂຮງຈັກອັດຕະໂນມັດ, ພັດຖືກປ່ຽນແທນດ້ວຍທ່າອຽງຕິສະເລ່ຍ ຫລື ຕິລອດທຸກວຽກງານທີ່ໄດ້ມອບໝາຍໃຫ້ບັນດາຜູ້ທີ່ຊ່ວຍຊູແກ່ກົນຈັກ ຕ້ອງເຮັດ (໑) .ແທນທີ່ວ່າບັນດາຄວາມແຕກຕ່າງກັນອັນປອມແປງລະຫວ່າງ

---

(໑) ປື້ມທີ່ໄດ້ແນະນຳມາຂ້າງເທິງ, ໜ້າ໓໐-໓໑. ເຊີນອ່ານຕື່ມ ກ. ມາກ ປື້ມທີ່ໄດ້ແນະນຳມາ, ໜ້າ໑໔໐-໑໔໑ "ຄວາມຈົນຕາແຈກຂອງປັດຊະຍາ" ໜ້າ໑໑໓, ສຳນັກພິມຈຳໜ່າຍ ສັງຄົມ, ປາຣີ, ໑໙໔໗.

ບັນດາກຳມະກອນພາກສ່ວນ, ມັນພັດເປັນບັນດາຄວາມແຕກຕ່າງ ກັບແບບທຳມະຊາດທາງອາຍຸ ແລະ ລັກສະນະທາງເພດ.

ພາຍໃນໂຮງຈັກອັດຕະໂນມັດນັ້ນ, ການແບ່ງງານພັດປະກົດ ຕົວຄືນໃໝ່ ກ່ອນອື່ນໝົດເປັນການແບ່ງປັນກຳມະກອນລະຫວ່າງ ບັນດາເຄື່ອງຈັກພະລິດສະເພາະ ແລະ ການແບ່ງປັນສ່ວນຫລາຍ ຂອງກຳມະກອນ, ເຖິງແມ່ນວ່າບໍ່ປະກອບເຂົ້າກັນເປັນຈຸ ຕ່າງໆ ທີ່ມີການຈັດຕັ້ງ, ລະຫວ່າງພາກສ່ວນຕ່າງໆພາຍໃນໂຮງຈັກຊຶ່ງຢູ່ທີ່ນັ້ນເຂົາເຈົ້າເຮັດ ວຽກດ້ວຍບັນດາເຄື່ອງໃຊ້ດ້ວຍຈັກທີ່ໄດ້ຈັດວາງອັນນຶ່ງຄຽງຂ້າງກັບອັນອື່ນ.ດັ່ງນັ້ນການຮ່ວມມືກັນລະຫວ່າງເຂົາເຈົ້າດ້ວຍກັນພຽງແຕ່ເປັນການ ຮ່ວມມືແບບງ່າຍດາຍເທົ່ານັ້ນ. ຈຸທີ່ມີການຈັດຕັ້ງພາຍໃນໂຮງງານ ທັດຖະກຳຖືກທົດແທນດ້ວຍສາຍກ່ຽວພັນກຳມະກອນຜູ້ຕົ້ນຕໍ ແລະ ບັນດາຜູ້ ຊ່ວຍວຽກຂອງເຂົາເອງ, ຕົວຢ່າງຄືລະຫວ່າງຜູ້ເຂັນຝ້າຍ ແລະ ຜູ້ຕໍ່ເສັ້ນຝ້າຍ.

ການຈັດແບ່ງຕົ້ນຕໍ ແມ່ນການຈັດແບ່ງໃຫ້ເປັນຄົນອອກແຮງງານຢູ່ກັບເຄື່ອງຈັກປະຕິບັດງານ ( ນັບທັງບາງກຳມະກອນເຮັດສະເພາະແຕ່ການຈູດໝໍ້ອາຍ) ກັບຄົນອອກແຮງງານທີ່ບໍ່ມີວິຊາສະເພາະ, ສ່ວນຫລາຍແມ່ນເປັນເດັກນ້ອຍ, ຊ່ວຍວຽກໃຫ້ບັນດາຜູ້ຄົນທີ່ກ່າວມາ ຂ້າງເທິງ. ໃນຈຳນວນຄົນອອກແຮງງານທີ່ບໍ່ມີວິຊາສະເພາະດັ່ງກ່າວ, ບໍ່ຫລາຍກໍ່ນ້ອຍ, ເພິ່ນເຫັນວ່າມີ jeeders ທັງຫລາຍໝາຍຄວາມວ່າບັນດາຜູ້ຄົນເຮັດສະເພາະແຕ່ວຽກປ້ອນວັດຖຸດິບໃຫ້ແກ່ກົນຈັກ.ຄຽງຂ້າງກັບບັນດາກຳມະກອນຕົ້ນຕໍດັ່ງກ່າວ, ຍັງມີຄົນເປັນຈຳນວນນ້ອຍປະກອບ

ດ້ວຍບັນດານັກວິສະວະກອນ, ຊ່າງກົນຈັກ, ຊ່າງໄມ້, ຯລຯ... ຊຶ່ງມີໜ້າທີ່ເບິ່ງແຍງເຄື່ອງຈັກທັງໝົດ ແລະ ຊ້ອມແປງເມື່ອເວລາ ຕ້ອງການ. ນັ້ນແມ່ນຊັ້ນຊາວຜູ້ອອກແຮງງານຂັ້ນເທິງຊຶ່ງສ່ວນໜຶ່ງແມ່ນ ໄດ້ຮັບການກໍ່ສ້າງຢ່າງວິທະຍາສາດ, ສ່ວນໜຶ່ງອີກກໍ່ມີລັກສະນະຫັດຖະກຳຂອງຊັ້ນວັນນະນາຍຊ່າງທີ່ຢືນຢູ່ນອກປະເພດກຳມະກອນໂຮງຈັກ ແລະ ພຽງແຕ່ແປະເຂົ້າໃສ່ກຳມະກອນເຫຼົ່ານັ້ນເທົ່ານັ້ນດອກ (໑). ການແບ່ງງານດັ່ງກ່າວພຽງແຕ່ເປັນການແບ່ງງານທາງດ້ານເຕັກນິກ ວິທະຍາເທົ່ານັ້ນເອງ.

ເມື່ອເວລາຍັງໜຸ່ມ, ຊາວກຳມະກອນ ສາມາດຮຽນເອົາ ວິທີເຮັດໃຫ້ການເໜັງຕີງຂອງຕົນເໝາະສົມກັບເຄື່ອນເໜັງລຽນຕິດແລະສະໝ່ຳສະເໝີຂອງກົນຈັກ. ຢູ່ບ່ອນໃດເຄື່ອງຈັກຄົບຊຸດຫາກເປັນ ລະ

---

(໑) ກົດໝາຍແຫ່ງໂຮງຈັກຂອງປະເທດອັງກິດບໍ່ຫົວຊາ ໜັງເລີຍຕໍ່ຊັ້ນຊາວຜູ້ອອກແຮງງານທີ່ໄດ້ກ່າວຢູ່ຕອນສຸດທ້າຍຂອງເອກະສານດັ່ງກ່າວ, ຄືວ່າເຂົານັ້ນບໍ່ແມ່ນກຳມະກອນໂຮງຈັກ; ແຕ່ວ່າຢູ່ໃນບັນດາ Returns * ທີ່ໄດ້ປະກາດຂອງລັດຖະສະພາພັດນັບເປັນ ກຳມະກອນໂຮງງານ, ບໍ່ພຽງແຕ່ບັນດາວິສະວະກອນ, ຊ່າງກົນຈັກ ຯລຯ ... ເທົ່ານັ້ນ, ຫາກນັບທັງພວກຄຸ້ມຄອງ, ຜູ້ປຸກລະດົມຂົນຂວາຍ, ຜູ້ກວດກາສາງ, ຜູ້ຕິດຕໍ່, ຜູ້ມັດຫໍ່ສິນຄ້າ, ຯລຯ ... ອີກດ້ວຍ, ລວມຄວາມວ່າຄິດໄລ່ໝົດທຸກຄົນ, ຍົກເວັ້ນແຕ່ເຈົ້າຂອງໂຮງຈັກເທົ່ານັ້ນ - ເຮັດແນວນັ້ນແມ່ນເພື່ອເພີ່ມເຕີມຈຳນວນຄົນບັນຊາເຄື່ອງຈັກຂຶ້ນ.

*ບົດລາຍງານ - (ຜູ້ແປ)

ບົບໜຶ່ງຊຶ່ງໄດ້ແບ່ງເປັນຊັ້ນລະດັບປະກອບດ້ວຍບັນດາເຄື່ອງຈັກ ມະຍົກ ມະຍ່ອຍ, ສົມທົບນຳກັນ ແລະ ເຄື່ອນໄຫວຮ່ວມກັນ ຢູ່ບ່ອນນັ້ນ ການຮ່ວມມືໂດຍອີງບົນລະບົບດັ່ງກ່າວມານັ້ນ, ຮຽກຮ້ອງໃຫ້ມີການ ແບ່ງປັນກຳມະກອນລະຫວ່າງບັນດາເຄື່ອງຈັກພາກສ່ວນຫລືບັນດາງູເຄື່ອງ ຈັກພາກສ່ວນ. ແຕ່ວ່າບໍ່ຈຳເປັນຕອງປັບປຸງການແບ່ງປັນນັ້ນດວຍວິທີມັດກຳມະກອນຜູ້ໜຶ່ງໃສ່ໜ້າວຽກໜຶ່ງຢ່າງແໜ້ນໜາ ແລະ ຕະຫລອດການເໝືອນດັ່ງຢູ່ໃນບັນດາໂຮງງານຫັດຖະກຳອີກ (໑). ຍ້ອນວ່າ ການເຄື່ອນໄຫວລວມຂອງໂຮງຈັກແມ່ນອີງໃສ່ກະໂຕກົນຈັກ, ມັນຫາກບໍ່ ອີງໃສ່ກະໂຕກຳມະກອນ ສະນັ້ນເຖິງວ່າມີການຍ້າຍປ່ຽນກຳມະກອນກໍ່ຕາມກໍບໍ່ພາໃຫ້ເກີດມີການສະງັກຊັກຊາໃນຂະບວນວິວັດແຫ່ງການອອກ ແຮງງານແຕ່ຢ່າງໃດເລີຍ. ກະໂຕແບບວິທີໝູນວຽນເປັນຈຸດເປັນຊຸດ ຊຶ່ງບັນດາເຈົ້າໂຮງງານອັງກິດໄດ້ນຳໃຊ້ໃນການລຸກຮືຂຶ້ນຂອງເຂົາປີ໑໘໔໘

---

(໑) ກະໂຕ ອູເຣີ ກໍເຫັນແບບນັ້ນ. ຫລັງຈາກທີ່ໄດ້ເວົ້າວ່າໃນກໍລະນີຮີບດ່ວນ, ກຳມະກອນອາດຈະຍົກຍ້າຍຈາກແຕ່ຈັກຫລັງນີ້ ຫາຈັກຫລັງອື່ນຕາມຄວາມເຫັນຂອງຫົວໜ້າໂຮງງານນັ້ນ, ເຂົາກໍ່ຮ້ອງຂຶ້ນດ້ວຍສຽງຂອງຜູ້ມີໄຊວ່າ: " ບັນດາການຍົກຍ້າຍດັ່ງນັ້ນເປັນກົງກັນຂ້າມກັບທຳນຽມເກົ່າ ຊຶ່ງຄົງແບ່ງງານໃຫ້ ກຳມະກອນ ຜູ້ນີ້ເຣັດຫົວເຂັມຄັດ , ກຳມະກອນ ຜູ້ອື່ນຝົນປາຍຂອງເຂັມຄັດ". ແທນທີ່ເຂົາຄວນສໍ້ຖາມ ຕົວເອງວ່າ ເປັນຫຍັງ " ທຳນຽມເກົ່າດັ່ງກ່າວ " ຢູ່ໃນໂຮງຈັກ ອັດຕະໂນມັດພັດພຽງແຕ່ລະຖິ້ມເສຍ " ເມື່ອເວລາຮີບດ່ວນ " ເທົ່ານັ້ນ.

* ປື້ມທີ່ໄດ້ແນະນຳຂ້າງບົນ, ເຫລັ້ມ ໑, ໜ້າ ໓໓.

-໑໙໔໐ ໄດ້ນຳມາໃຫ້ເຮົາເປັນຫລັກຖານພະຍານໜຶ່ງຊຶ່ງຕໍ່ວຽກນັ້ນບໍ່ມີໃຜສາມາດຈະປະຕິເສດໄດ້. ທ້າຍສຸດ, ຍ້ອນວ່າເດັກນ້ອຍກໍ່ ສາມາດຮຽນເອົາວິທີບັນຊາເຄື່ອງຈັກຢ່າງໄວວາທີ່ສຸດ ສະນັ້ນເຂົາເຈົ້າເຫັນວ່າເດັກຊາດ ບໍ່ຈຳເປັນຕ້ອງຖືວ່າການບັນຊາເຄື່ອງຈັກເປັນວິຊາໜຶ່ງ ຈຶ່ງໄວ້ໃຫ້ສະເພາະແຕ່ຊາວຜູ້ອອກແຮງງານຊັ້ນໃດເປັນພິເສດເລີຍ(໑) .

---

(໑) ໃນກໍລະນີທີ່ຣົບຣອນ, ສົມມຸດຄືຢູ່ໃນສົງຄາມກາງເມືອງ ຢູ່ອາເມລິກາ, ຊາວກຳມະກອນໂຮງຈັກຖືກພວກນາຍທຶນເອົາໄປໃຊ້ໃນ ບັນດາວຽກງານອັນຮ້າຍທີ່ສຸດ, ເຊັ່ນວ່າລູນຖະໜົນຫົນທາງເປັນຕົ້ນ,ໆລໆ... ບັນດາໂຮງຈັກຂອງລັດຢູ່ໃນອັງກິດໄດ້ກໍ່ສ້າງຂຶ້ນໃນປີ ໑໙໖໘ ແລະ ຊຸມປີຕໍ່ມາ ເພື່ອຮັບເອົາບັນດານາຍຊ່າງທີ່ວ່າງງານ, ຕ່າງກັນກັບ ບັນດາໂຮງຈັກຂອງລັດຢູ່ຝະລັ່ງ ໃນປີ ໑໙໔໙ ຢູ່ບ່ອນວ່າພາຍໃນບັນດາ ໂຮງຈັກນີ້ກຳມະກອນໄດ້ເຮັດວຽກງານຕ່າງໆບໍ່ຜະລິດໂດຍແມ່ນລັດເປັນ ຜູ້ເບີກຈ່າຍ, ແຕ່ຢູ່ໃນບັນດາໂຮງຈັກອື່ນນັ້ນຊາວກຳມະກອນພັດເຮັດວຽກງານຜະລິດຕ່າງໆຂອງຕົວເມືອງ ແລະ ມີຜົນປະໂຫຍດໃຫ້ແກ່ນາຍທຶນ, ແລະຍິ່ງກວ່ານັ້ນ, ເຂົາພັດເຮັດຖືກກ່ວາກຳມະກອນທາງການ ຊຶ່ງເພີ່ມຈຳໃຫ້ເຂົາເຈົ້າຕ້ອງແກ່ງແຍ້ງນຳກັນ. "ກ່າວທາງດ້ານຮ່າງກາຍ ບັນດາກຳມະກອນໂຮງງານເຂັ້ນຟ້າຍດີຈຶ່ງໄດກວ່າ. ເຮົາເຂົ້າໃຈວ່າສ່ວນບັນດາກຳມະກອນເພດຊາຍ ...ນັ້ນແມ່ນຍ້ອນເຂົາເຈົ້າເຮັດວຽກ ຢູ່ຕາມສະຖານທີ່ກາງແຈ້ງ" (ນີ້ແມ່ນເວົ້າເຖິງບັນດາກຳມະກອນຢູ່ທີ່ ເປູສະເຕີນ ທີ່ຖືກນຳໄປທຳຄວາມສະອາດຢູ່ບ່ອນຫລົ່ມຕ່າງໆພາຍໃນ ຕົວເມືອງດັ່ງກ່າວ).(Rep et Insp,of ວັນທີ່໓໑ຕຸລາ໑໙໖໕, ໜ້າ ໕໓).
fact,

ສ່ວນບັນດາວຽກງານ ໂດຍແມ່ນຊາວຜູ້ອອກແຮງງານທີ່ບໍ່ມີວິຊາ ສະເພາະທຳມະດາຢູ່ໃນໂຮງຈັກເຄີຍໄດ້ເຮັດນັ້ນ, ກົນຈັກສາມາດເຮັດແທນເຂົາເປັນສ່ວນຫລາຍ, ແລະ ຍ້ອນວ່າວຽກງານເຫລົ່ານັ້ນເປັນ ວຽກງານງ່າຍດາຍ, ສະນັ້ນບັນດາຜູ້ຄົນທີ່ເຮັດວຽກງານເຫລົ່ານັ້ນ ສາມາດຖືກຍ້າຍປ່ຽນຢ່າງໄວວາໃນແຕ່ລະໄລຍະ (໑).

ເຖິງວ່າທາງດ້ານເຕັກນິກ, ລະບົບກົນໄກໄດ້ເຮັດໃຫ້ ການແບ່ງງານເກົ່າຢຸດຕິລົງ, ແຕ່ວ່າລະບອບນັ້ນຄົງຖືກຄ້ຳປະກັນໄວ້ພາຍໃນໂຮງຈັກ, ກ່ອນອື່ນໝົດແມ່ນກາຍເປັນລະບຽບທຳນຽມໂດຍແມ່ນ ໂຮງງານຫັດຖະກຳເປັນຜູ້ປະໄວ້; ຖັດຈາກນັ້ນອີກເມື່ອເວລາພວກນາຍທຶນໄດ້ກຳ

---

(໑) ຕົວຢ່າງຄື: ຈັກຫລາຍເຄື່ອງ ຊຶ່ງຖືກນຳມາໃຊ້ຢູ່ໃນໂຮງຈັກຜະລິດແພຂົນສັດ, ນັບແຕ່ເວລາມີກົດດຳລັດ ໑໘໔໔, ເພື່ອປ່ຽນ ແທນໃຫ້ວຽກງານຂອງເດັກນ້ອຍ. ນັບແຕ່ເວລາລູກເຕົ້າຂອງກະໂຕ ພວກເຈົ້າຂອງໂຮງຈັກກໍ່ຕ້ອງເຮັດວຽກໜັກ ເພື່ອຮຽນເອົາວິຊາ, ເມື່ອນັ້ນຂົງເຂດກົນຈັກ ຊຶ່ງບໍ່ເຄີຍຖືກຂຸດຄົ້ນພັດກ້າວຂຶ້ນຢ່າງມະຫັດສະຈັນໂລດ. " ບັນດາເຄື່ອງຈັກຕຳແຜ່ນອັດຕະໂນມັດ " ເປັນບັນດາເຄື່ອງຈັກ ທີ່ມີຄວາມອັນຕະລາຍທີ່ສຸດ. ສ່ວນຫລວງຫລາຍເດັກນ້ອຍຖືກໄພອັນຕະລາຍຍ້ອນວ່າຕ້ອງໝົ້ນຢູ່ກ້ອງເຄື່ອງຈັກທີ່ພວມແລ່ນເພື່ອກວາດພື້ນເຮືອນ... ຖ້າວ່າຜະລິດຈັກກວາດເຮືອນອັດຕະໂນມັດມັນຈະເປັນການຊຸທິດ ອັນລ້ຳຄ່າທີ່ສຸດຕໍ່ບັນດາວິທີການສຳຫລັບປ້ອງກັນການອອກແຮງງານ!"( Rep, of Insp, of fact, ໃນວັນທີ ໓໑ ຕຸລາ໑໘໖໖, ໜ້າ໖໓).

ເອົາມັນ ເພື່ອປັບປຸງ ແລະ ສ້າງມັນຄືນໃຫມ່ພາຍໃຕ້ຮູບການຫນຶ່ງ ຊຶ່ງຍິ່ງມະຫັດສະຈັນກ່ວານັ້ນອີກ, ເມື່ອນັ້ນມັນກໍ່ຖືກຄ້ຳປະກັນໄວ້ເປັນແບບວິທີຊູດຣີດແນວຫນຶ່ງ. ອັນເປັນວິຊາສະເພາະຂອງຊາວກຳມະກອນຊຶ່ງໃນຕະຫລອດຊີວິດຂອງຕົນພຽງນຳໃຊ້ແຕ່ເຄື່ອງມືພາກສ່ວນເລີຍກາຍເປັນວິຊາສະເພາະຮັບໃຊ້ເຄື່ອງຈັກພາກສ່ວນອັນດຽວຈົນຕະຫລອດຊີວິດ. ເຂົາເຈົ້າສວຍໃຊ້ກົນຈັກ ເພື່ອພັນປ່ຽນຊາວກຳມະກອນ, ນັບຕັ້ງແຕ່ ເວລາຍັງອ່ອນນ້ອຍ, ໃຫ້ກາຍເປັນພາກສ່ວນຫນຶ່ງຂອງເຄື່ອງຈັກອັນຫນຶ່ງແລະກະໂຕເຄື່ອງຈັກອັນນີ້ພັດເປັນພາກສ່ວນຫນຶ່ງຂອງເຄື່ອງຈັກອື່ນອີກ (໑) ເນື່ອງຈາກນັ້ນ, ບໍ່ພຽງແຕ່ລາຍຈ່າຍທີ່ຕ້ອງການເພື່ອພະລິດຊາວກຳມະກອນຄືນໃຫມ່ໄດ້ຫລຸດລົງຫລາຍເທົ່ານັ້ນ, ຫາກການຂຶ້ນກັບຢ່າງ ເດັດຖານຂອງຊາວກຳມະກອນຕໍ່ໂຮງຈັກ ແລະ ຕັ້ງແມ່ນຍ້ອນແນວນັ້ນ ເລີຍຂຶ້ນກັບນາຍທຶນ - ກໍ່ເປັນເລື່ອງຖືກສຳເລັດລົງຢ່າງຂາດຕົວແລ້ວ. ຢູ່ທີ່

(໑) ດັ່ງນັ້ນແລ້ວ, ເຮົາເຫັນວ່າປຣູດົງໄດ້ມີຄວາມເຫັນອັນລ້ຳຄ່າທີ່ ສຸດ ເມື່ອເພິ່ນໄດ້ກ່າວວ່າກົນຈັກບໍ່ແມ່ນເປັນການສັງລວມບັນດາເຄື່ອງມື , ຫາກມັນເປັນ "ວິທີສົມທົບຫລາຍພາກສ່ວນນ້ອຍໆຂອງການອອກແຮງງານຊຶ່ງໄດ້ແຍກຕົວອອກຍ້ອນການແບ່ງງານ". ເພິ່ນຍັງມີການຄົ້ນພົບນີ້ໄດ້ມັນທັງມີລັກສະນະປະຫວັດສາດທັງເປັນອັນມະຫັດສະຈັນກ່າວຄື: " ສະໄຫມກົນຈັກໄດ້ຮັບເອກະລາດ ດ້ວຍລະບອບອອກແຮງງານຮັບຈ້າງ".

* ປຣູດົງ: ລະບົບບັນດາຂໍ້ຂັດແຍ່ງເສດຖະກິດ ຫລື ການຈົນຕາແຈ ຂອງປັດຊະຍາ, ປາຣີ, ກຸຍໂອແມງ, ໑໘໔໖, ເຫລັ້ມ ໑ , ຫນາ ໑໓໔, ໑໓໖, ໑໖໑.

ນີ້ກໍ່ເຊັ່ນດຽວກັນຢູ່ທົ່ວທຸກແຫ່ງ, ຕ້ອງຈຳແນກໃຫ້ໄດ້ ລະຫວ່າງ ການເພີ່ມສະມັດຖະພາບຊຶ່ງເກີດຂຶ້ນຍ້ອນການຂະຫຍາຍຕົວຂອງຂະບວນວິວັດແຫ່ງການອອກແຮງງານສັງຄົມ ແລະ ການເພີ່ມສະມັດຖະພາບ ໂດຍແມ່ນການຂູດຮີດແບບທຶນນິຍົມຕໍ່ຂະບວນວິວັດອອກແຮງງານເປັນຜູ້ກໍ່ຂຶ້ນ.

ຢູ່ໃນໂຮງງານຫັດຖະກຳ ແລະ ອາຊີບຫັດຖະກຳນັ້ນ, ນາຍຊ່າງໄດ້ນຳໃຊ້ເຄື່ອງມື; ຢູ່ໃນໂຮງຈັກ, ລາວພັດຮັບໃຊ້ກົນຈັກ. ຢູ່ທາງພຸ້ນ, ຊາວກຳມະກອນເປັນຜູ້ເຮັດໃຫ້ເຄື່ອງມືມີການເຄື່ອນໄຫວ, ສ່ວນຢູ່ທາງພີ້, ກຳມະກອນພຽງແຕ່ເຮັດຕາມເຄື່ອງຈັກເທົ່ານັ້ນເອງ. ຢູ່ໃນໂຮງງານຫັດຖະກຳ, ມີກຳມະກອນເທົ່າໃດຄົນແມ່ນເທົ່ານັ້ນ ພາກສ່ວນຂອງໂຄງປະກອບໜຶ່ງທີ່ມີຊີວິດຊີວາ. ຢູ່ໃນໂຮງຈັກ, ເຂົາເຈົ້າລ້ວນ ຖືກຮ່ວມສົມທົບກັນເຂົ້າໃນໂຄງປະກອບຕາຍອັນໜຶ່ງ, ຄົງຕົວເປັນ ເອກະລາດສຳລັບເຂົາ.

.....

ກົນຈັກບໍ່ມີຄວາມຮັບຜິດຊອບແຕ່ຢ່າງໃດຕໍ່ຄວາມລຳບາກ ການກຳຊຶ່ງມັນເອງເປັນຜູ້ກໍ່ຂຶ້ນ, ຖ້າແມ່ນວ່າຢູ່ໃນສະພາບແວດລ້ອມຂອງສັງຄົມເຮົາ, ມັນໄດ້ເຮັດໃຫ້ກຳມະກອນເສຍແຫຼ່ງທຳມາຫາກິນຄືແນວນັ້ນ , ນັ້ນບໍ່ແມ່ນໂທດທີ່ມາຈາກມັນ. ຢູ່ບ່ອນໃດມັນຫາກຖືກນຳມາໃຊ້ນັ້ນ, ຢູ່ບ່ອນນັ້ນລາຄາຜະລິດພັນຈະຖືກກວ່າ ແລະ ມີຫລາຍກວ່າ. ດັ່ງນັ້ນໝາຍວ່າພາຍຫລັງຫລືກ່ອນເວລາຊຶ່ງກົນຈັກຖືກນຳອອກມາໃຊ້ນັ້ນ, ຢ່າງນ້ອຍສັງຄົມກໍ່ຄົງມີຈຳນວນສະບຽງອາຫານສ່ຳດຽວກັນສຳຫລັບໃຫ້ບັນດາ ກຳມະກອນທີ່ບໍ່ມີວຽກເຮັດງານທຳ, ນັ້ນແມ່ນຍັງບໍ່ນັບເຖິງຜະລິດຕະພັນສ່ວນ

ຫລວງຫລາຍປະຈຳປີຂອງສັງຄົມໄດ້ຖືກພວກນຶ່ງລ້າກິນດາຍ ໃຊ້ຈ່າຍໄປຢ່າງຟູມເຟືອຍ.

ຕັ້ງແມ່ນຢູ່ໃນການອະທິບາຍຄວາມຈິງດັ່ງກ່າວມານັ້ນ, ຄົນເຮົາເຄີຍເຫັນນ້ຳໃຈປະຈົບປະແຈງຂອງບັນດານັກເສດຖະສາດ ປະກົດອອກຢ່າງຈະແຈ້ງ.

ຕາມທ່ານເຫລົ່ານັ້ນແລ້ວ, ບໍ່ມີຂໍ້ຂັດແຍ່ງຕ່າງໆ ແລະ ຄວາມ ປໍ່ລະປັກທີ່ບໍ່ສາມາດແຍກອອກຈາກການນຳໃຊ້ກົນຈັກຂອງພວກນາຍທຶນ ; ເພາະວ່າສິ່ງເຫລົ່ານັ້ນບໍ່ແມ່ນມາຈາກກົນຈັກ, ມັນຫາກຍ້ອນການນຳໃຊ້ກົນຈັກຕາມແບບທຶນນິຍົມນັ້ນດອກ!

ດັ່ງນັ້ນ ໝາຍວ່າກົນຈັກ, ທີ່ຈິງເປັນການມີໄຊຂອງມະນຸດ ຕໍ່ບັນດາກຳລັງທຳມະຊາດ, ແຕ່ວ່າຕົກຢູ່ໃນກຳມືຂອງພວກນາຍທຶນແລ້ວ,ມັນພັດກາຍເປັນເຄື່ອງມືສຳຫລັບເຮັດໃຫ້ມະນຸດຖືກກົດຂີ່ ຂຶ້ນກັບບັນດາ ກຳລັງເຫລົ່ານັ້ນ; ຍ້ອນວ່າກົນຈັກໃນຕົວຈິງເປັນພາຫະນະອັນໝັກແໜ້ນທີ່ສຸດ ເພື່ອເຮັດໃຫ້ການອອກແຮງງານໃນແຕ່ລະວັນສັ້ນເຂົ້າ, ແຕ່ວ່າຕົກໃສ່ກຳມືພວກນາຍທຶນແລ້ວມັນພັດແກ່ຍາວອອກແຮງງານນັ້ນອອກ; ຍ້ອນວ່າກົນຈັກໃນຕົວຈິງແມ່ນເປັນໄມ້ຖູ່ສັກສິດ ເພື່ອເພີ່ມທະວີຄວາມຮັ່ງ ມີຂອງຜູ້ທຳການຜະລິດຂຶ້ນຕື່ມ, ແຕ່ວ່າຕົກໃສ່ກຳມືພວກນາຍທຶນ, ມັນພັດເຮັດໃຫ້ຄົນຜູ້ນັ້ນທຸກຈົນລົງ; ຍ້ອນ... ນັກເສດຖະສາດທຶນນິຍົມ ປະກາດຢ່າງບໍ່ອັບອາຍວ່າ ທັງໝົດຢູ່ຂໍ້ຂັດແຍ່ງອັນຈະແຈ້ງດັ່ງກ່າວ ບໍ່ພຽງແຕ່ເປັນສິ່ງທາງນອກທີ່ປອມແປງ ແລະ ໄຝ່ຝັນເທົ່ານັ້ນດອກ, ສະນັ້ນ ໃນຕົວຈິງ ແລະ ກໍ່ຍ້ອນແນວນັ້ນທັງຢູ່ໃນທິດສະດີອີກ, ບໍ່ມີບັນດາ ຂໍ້ຂັດ

ແຍ່ງເຫລົ່ານັ້ນ.

ເຖິງວ່າເຂົາເຈົ້າບໍ່ປະຕິເສດບັນດາຜົນຮ້າຍຊົ່ວຄາວ, ແທ້ໃດ , ແຕ່ວ່າຫຼຽນໄຊອັນໃດທີ່ຈະບໍ່ມີການປ້ອງມັນ ! ແລະ ຕໍ່ເຂົາເຈົ້ານັ້ນ, ການນຳໃຊ້ກົນຈັກພຽງສາມາດນຳໃຊ້ຕາມແບບທຶນນິຍົມເທົ່ານັ້ນແລ້ວ . ການຂູດຮີດຊາວຜູ້ອອກແຮງງານດ້ວຍກົນຈັກກໍ່ຄືກັນກັບການ ເອົາຊາວຜູ້ອອກແຮງງານເພື່ອຂູດຮີດກົນຈັກ. ຜູ້ໃດຫາກກ່າວເຖິງບັນດາຄວາມຈິງຕ່າງໆກ່ຽວກັບການນຳໃຊ້ກົນຈັກຕາມແບບທຶນນິຍົມ, ກໍ່ແມ່ນເປັນ ການຕ້ານທານກັບການນຳໃຊ້ກົນຈັກ ແລະ ຕ້ານທານການກ້າວໜ້າຂອງສັງຄົມ (໑). ການຍົກເຫດຜົນແບບນັ້ນມັນຈະບໍ່ເຮັດໃຫ້ຄົນເຮົາ ສົມທຽບກັບຄຳແກ້ຕົວຂອງນັກປຸ້ນຜູ້ລືຊື່ ບິນຊາຍເກີເຊີຫວະ ? ມັນໄດ້ເວົ້າວ່າ:

---

(໑) <u>ສະບັບເປັນພາສາເຢລະມັນ, ພິມຈຳໜ່າຍຄັ້ງທີໜຶ່ງ</u>: ຜູ້ເກັ່ງກ້າຜູ້ໜຶ່ງທີ່ຢູ່ໃນຈຳນວນຜູ້ທີ່ເປັນຕົວແທນໃຫ້ແກ່ຄວາມໂງ່ຈ້າ ຂອດຕົວນັ້ນແມ່ນ ມາກກູໂລເຊີ" ຖາຄ່ອຍໆຂະຫຍາຍຄວາມຄ່ອງແຄ້ວ ຂອງກຳມະກອນຄືແນວໃດ ເພື່ອໃຫ້ລາວສາມາດຜະລິດສິນຄ້ານັບມື້ນັບຫລາຍຂຶ້ນດ້ວຍຈຳນວນແຮງງານຄືເກົ່າຫລືນ້ອຍກວ່າແນວນັ້ນແມ່ນມີຜົນດີ, ເມື່ອເປັນແນວນັ້ນແລ້ວ ເວລາຊາວກຳມະກອນນຳໃຊ້ພາຫະນະກົນຈັກຕ່າງໆເພື່ອບັນລຸເຖິງຈຸດປະສົງດັ່ງກ່າວຢ່າງມີປະສິດທິຜົນກວ່າແນວນັ້ນ ກໍ່ແນ່ນອນວ່າແມ່ນມີຜົນດີ ".

( ມາກກູໂລເຊີ :Prince,of polit, tess ລອນດອນ ໑໘໓໐ , ໜ້າ ໑໖໖ ).

" ຮຽນບັນດາທ່ານນາຍສານ, ລຳຄໍຂອງຜູ້ຮອງຈ່າວຂາຍເຄື່ອງໄດ້ຖືກຕັດແຫ້ແລ້ວ. ເລື່ອງນັ້ນມີຈິງ, ແຕ່ວ່າໂທດກຳບໍ່ແມ່ນຍ້ອນເຮົາ ເອງຫາກແມ່ນຍ້ອນມີດ. ບໍ່ແມ່ນວ່າຍ້ອນຜົນຮ້າຍຊົ່ວຄາວດັ່ງກ່າວນັ້ນ ຫວະພວກທ່ານຈຶ່ງຢາກຫ້າມບໍ່ໃຫ້ໃຊ້ມີດ ? ຂໍໃຫ້ພວກທ່ານຈົ່ງຄິດທວງຳ ໃຫ້ຖີ່ຖ້ວນເສຍກ່ອນ. ມີດເປັນໜຶ່ງໃນບັນດາເຄື່ອງມືທີ່ມີປະໂຫຍດກວ່າ ໝູ່ໃນບັນດາອາຊີບຫັດຖະກຳ ແລະ ກະສິກຳ, ມັນຊ່ວຍຊູມະນຸດ ໃນການຜ່າຕັດກໍ່ຄືມັນຊ່ານິຊຳນານໃນວິຊາຜ່າຕັດ ແລະ ເປັນເພື່ອນຜູ້ຊວນມ່ວນໃນຄາບເຂົ້າຕ່າງໆ. ຖ້າຫາກຫ້າມບໍ່ໃຫ້ໃຊ້ມີດນັ້ນ, ແມ່ນພວກທ່ານຍົກຍົ້ນພວກຂ້າພະເຈົ້າລົງສູ່ສະໄໝໂງ່ຈ້າຄືນໃໝ່ເສຍແລ້ວ " (໑).

ເຖິງແມ່ນວ່າເມື່ອເວລາຖືກນຳໃຊ້ໃນອາຊີບຫັດຖະກຳ ແລະໂຮງງານຫັດຖະກຳ, ກົນຈັກໃນຕົວຈິງໄດ້ເຮັດໃຫ້ກຳມະກອນຖືກເສຍ ວຽກເຮັດງານທຳບໍ່ຫຼາຍກໍ່ນ້ອຍກໍ່ຕາມ, ແຕ່ວ່າມັນຄົງສາມາດພາໃຫ້ເກີດມີວຽກງານເພີ່ມເຕີມໃນບັນດາຂະແໜງການຜະລິດອື່ນໆ, ແຕ່ຜົນທີ່ໄດ້ຮັບນັ້ນບໍ່ມີຫຍັງຕິດພັນກັບອັນທີ່ເອີ້ນວ່າ ທິດສະດີບວກລົບເລີຍ.

<u>ຍ້ອນວ່າຜະລິດຕະພັນຂອງກົນຈັກ, ເຊັ່ນແຜ່ນແພຜູ້ມັດໜຶ່ງຖືກຕ່ຳ</u>

---

(໑) " ກົນປະດິດຈັກເຂັ້ນຝ້າຍໄດ້ເຮັດໃຫ້ອິນເດຍຊຸດໂຊມລົງ, <u>ເລື່ອງນັ້ນບໍ່ເຮັດໃຫ້ພວກເຮົາສະທ້ອນໃຈປານໃດ</u> " ( ອາທິແອະ De la propriété, ໑໘໔໘ *. ນັກການເມືອງຜູ້ລືຊື່ໄດ້ຫຼັງປັ່ນຈັກເຂັ້ນຝ້າຍກັບຈັກຕ່ຳຫູກ , ບັນຫານັ້ນ, ທີ່ຈິງ <u>ກໍ່ບໍ່ເຮັດໃຫ້ ພວກເຮົາສະທ້ອນໃຈຫຼາຍປານໃດດອກ.</u>

* ໜ້າ ໔໗໕ (ບ.ກ.).

ດ້ວຍເຄື່ອງຈັກໃຊ້ອາຍນ້ຳເປັນຕົ້ນ, ຖືກກ່ວາຜະລິດພັນທີ່ໄດ້ເຮັດ ມາດ້ວຍມື ຈຶ່ງຖືກພັນແກ່ງແຍ້ງ, ສະນັ້ນແນ່ນອນວ່າຕ້ອງມີກົດເກນດັ່ງຕໍ່ໄປນີ້ :

ຖ້າວ່າຍອດປະລິມານຂອງຜະລິດພັນແນວໜຶ່ງ ຈຶ່ງໄດ້ເຮັດ ດ້ວຍຈັກຫາກເທົ່າກັນກັບຜະລິດພັນແນວໜຶ່ງທີ່ໄດ້ເຮັດມາດ້ວຍມື ໂດຍ ແມ່ນຜະລິດພັນທີ່ໄດ້ເຮັດດ້ວຍຈັກເປັນສິ່ງທົດແທນມັນນັ້ນ, ຍອດປະລິມານແຮງງານທີ່ຖືກນຳໃຊ້ຈະລົດລົງ. ຖ້າບໍ່ດັ່ງນັ້ນ, ຜະລິດພັນທີ່ໄດ້ເຮັດດ້ວຍຈັກກໍຈະສິ້ນເປືອງເທົ່າກັນ. ຖ້າບໍ່ແມ່ນເປືອງກວ່າເຮັດດ້ວຍມື.

ແຕ່ວ່າ, ໃນຕົວຈິງ ຍອດປະລິມານຜະລິດພັນເຮັດດ້ວຍຈັກຊຶ່ງຈຳນວນກຳມະກອນໄດ້ຫລຸດລົງນັ້ນພັດລື່ນກວ່າຫລາຍ ຖ້າປຽບທຽບກັບ ຈຳນວນຜະລິດພັນຊະນິດດຽວກັນ ຊຶ່ງອາຊີບຫັດຖະກຳຫລືໂຮງງານຫັດ ຖະກຳໄດ້ຜະລິດອອກມາໃນຄາວກ່ອນ. ສົມມຸດຕິແຜ່ນແພຕ່ຳດ້ວຍມື ໑.໐໐໐.໐໐໐ແມັດ ຖືກທົດແທນດ້ວຍແຜ່ນແພຕ່ຳດ້ວຍຈັກ໔.໐໐໐.໐໐໐ ແມັດ ຈຳນວນ ໔ ລ້ານແມັດນັ້ນບັນຈຸວັດຖຸດິບ, ເຊັ່ນຂົນສັດເປັນຕົ້ນ , ຫລາຍກວ່າຈຳນວນ ໑ ລ້ານແມັດສີ່ເທົ່າ. ດັ່ງນັ້ນໝາຍວ່າຕ້ອງ ເພີ່ມການຜະລິດແລນຂຶ້ນ ໔ ເທົ່າ. ສ່ວນບັນດາພາຫະນະແຫ່ງການ ອອກແຮງງານອັນເປັນຫລັກ ຊຶ່ງຍ້ອນການຕ່ຳດ້ວຍຈັກໄດ້ນຳໃຊ້ມັນ, ເຊັ່ນກົນຈັກ, ວັດສະດຸກໍ່ສ້າງ, ຖ່ານ, ໆລໆ...ນັ້ນ, ແຮງງານທີ່ຖືກ ນຳໃຊ້ເພື່ອຜະລິດສິ່ງເຫລົ່ານັ້ນຈະເພີ່ມຂຶ້ນໄປຕາມຄວາມພິດດ່ຽງກັນ ລະຫວ່າງຈຳນວນແຜ່ນແພຕ່ຳດ້ວຍຈັກ ແລະ ຈຳນວນແຜ່ນແພຕ່ຳດ້ວຍມືຊຶ່ງກຳມະກອນຜູ້ໜຶ່ງສາມາດເຮັດດ້ວຍລະດັບສຳກາງໃນກາລະເວລາ ອັນ

ດຽວກັນ.

ຢ່າງໃດກໍດີ, ເຖິງວ່າຈຳນວນແຮງງານທີ່ໄດ້ເພີ່ມຂຶ້ນນັ້ນ ເປັນແນວໃດກໍຕາມ, ມັນຄົງນ້ອຍກ່ວາຖ້າປຽບກັບຈຳນວນແຮງງານ ຖືກລຶດຜ່ອນລົງຢ່າງແທ້ຈິງ ໂດຍແມ່ນຍ້ອນການນຳໃຊ້ກົນຈັກ.

ດັ່ງນັ້ນໝາຍວ່າການນຳໃຊ້ກົນຈັກຍິ່ງຖືກແຜ່ຫລາຍໃນ ຂະແໜງຊຸດສາຫະກຳໜຶ່ງແລ້ວ, ບັນດາຂະແໜງຊຸດສາຫະກຳອື່ນໆ ຊຶ່ງໄດ້ສະໜອງວັດຖຸດິບ ໆລໆ ... ໃຫ້ແກ່ຂະແໜງຊຸດສາຫະກຳດັ່ງກ່າວຕ້ອງເພີ່ມຈຳນວນຜະລິດພັນຂອງຕົນຂຶ້ນຕື່ມ. ເປັນແນວນັ້ນແລ້ວ ບັນດາຂະແໜງຊຸດສາຫະກຳເຫລົ່ານັ້ນຈະເພີ່ມຈຳນວນກຳມະກອນຂອງຕົນ ຂຶ້ນຕາມອັດຕາສ່ວນອັນໃດ ? ແທນທີ່ວ່າຕ້ອງເພີ່ມຈຳນວນກຳມະກອນ ຂຶ້ນແຕ່ບັນດາຂະແໜງເຫລົ່ານັ້ນຄືຈິ່ງແມ່ນພຽງແຕ່ເພີ່ມຄວາມເຂັ້ມແລະກາລະເວລາອອກແຮງງານຂຶ້ນເທົ່ານັ້ນ. ແຕ່ວ່າດ້ວຍຄວາມເຂັ້ມງານແລະກາລະເວລາ ອອກແຮງງານອັນແນ່ນອນນັ້ນ, ທຸກສິ່ງທຸກຢ່າງ ລ້ວນຂຶ້ນກັບພາກສ່ວນປະກອບຂອງທຶນທີ່ໄດ້ນຳໃຊ້, ໝາຍວ່າຂຶ້ນກັບອັດຕາສ່ວນລະຫວ່າງພາກສ່ວນປ່ຽນ ແລະ ພາກສ່ວນບໍ່ປ່ຽນຂອງທຶນ ທີ່ໄດ້ກ່າວມາແລ້ວນັ້ນ. ກົນຈັກຍິ່ງແຊກຊຶມເຂົ້າໃນຂະແໜງຊຸດສາຫະກຳຜະລິດວັດຖຸດິບ...ຫລາຍນັ້ນ, ພາກສ່ວນປ່ຽນຂອງທຶນດັ່ງກ່າວຈະຍິ່ງນ້ອຍລົງຢ່າງທຽບຖານ.

ເນື່ອງຈາກການຜະລິດດ້ວຍກົນຈັກຢູ່ອັງກິດກ້າວຂຶ້ນຕື່ມ, ສະນັ້ນຈຳນວນຄົນທີ່ຈຳເປັນຕ້ອງເຣັດວຽກຢູ່ໃນບໍ່ຖ່ານຫີນ ແລະ ບໍ່ໂລຫະທາດຕ່າງໆໄດ້ເພີ່ມຂຶ້ນຫລາຍທີ່ສຸດ, ຕາມຕົວເລກສະຖິຕິຂອງປີ ໑໘໖໑ນັ້ນ,

ມີກຳມະກອນບໍ່ແຮ່ ໒໕໖.໖໑໓ຄົນ, ໃນຈຳນວນນັ້ນຄົນທີ່ມີອາຍຸຕ່ຳກວ່າ ໒໐ ປີ ມີ ໗໓.໕໔໕ ຄົນ ແລະ ຄົນທີ່ມີອາຍຸກາຍ ໒໐ ປີມີ໑໘໓.໐໖໘ ຄົນ. ໃນຈຳນວນຄົນທີ່ມີອາຍຸຕ່ຳກວ່າ ໒໐ ປີນັ້ນ, ມີ ໙໓໕ ຄົນ ຊຶ່ງ ອາຍຸຫາກໍ່ໄດ້ ໕ ເຖິງ ໑໐ ປີ, ແຕ່ ໑໐ ເຖິງ ໑໕ປີມີ ໓໐.໘໐໑ຄົນ ແຕ່ ໑໕ ເຖິງ ໑໘ ປີມີ ໔໒.໐໑໐ ຄົນ. ຈຳນວນກຳມະກອນທີ່ ເຮັດ ວຽກຢູ່ໃນບັນດາບໍ່ເຫລັກ, ທອງ, ຕະກົ່ວ, ດີບຸກ ແລະ ບັນດາ ທາດ ໂລຫະອື່ນອື້ນເຖິງ ໓໑໘.໒໒໒ ຄົນ [໑].

ກົນຈັກໄດ້ເຮັດໃຫ້ກຳມະກອນໃໝ່ຊະນິດໜຶ່ງຊຶ່ງປະກົດສະເພາະ ແຕ່ກົນຈັກກຳເນີດເກີດຂຶ້ນ. ຢູ່ອັງກິດ, ໃນປີ ໑໙໖໑, ຈຳນວນຄົນເຫຼົ່ານັ້ນມີປະມານ ໘໐.໐໐໐ ຄົນ [໒]. ພວກເຮົາໄດ້ຮູ້ແລ້ວວ່າ ກົນຈັກ ໄດ້ແຊກຊຶມເຂົ້າໃນຂະແໜງກົນຈັກດັ່ງກ່າວດ້ວຍຂະໜາດນັບມື້ນັບຫຼວງ ຫລາຍກວ່າ. ສ່ວນວັດຖຸດິບນັ້ນ [໓], ເປັນອັນແນ່ນອນແທ້ຈິງແລ້ວວ່າ

---

(໑) Cerans ໑໙໖໑, ເຫລັ້ມ ໒, ລອນດອນ, ໑໙໖໓.

(໒) ມີວິສະວະກອນ ໓.໓໒໙ ຄົນ.

(໓) ຍອມວ່າເຫລັກເປັນໜຶ່ງໃນບັນດາວັດຖຸດິບທີ່ສຳຄັນກວ່າໝູ່ ສະນັ້ນພວກເຮົາຈຶ່ງເຫັນໄດ້ວ່າປະເທດອັງກິດ(ນັບທັງເຂດການເລີ) ໃນ ປີ ໑໙໖໑ ໄດ້ນຳໃຊ້ຊ່າງຫລໍ່ໂລຫະ ໑໒໕.໘໘໑ ຄົນ, ໃນຈຳນວນນັ້ນມີ ຜູ້ຊາຍ ໑໒໓.໕໓໐ຄົນແລະຜູ້ຍິງ ໒.໓໕໑ ຄົນ, ໃນຈຳນວນຜູ້ຊາຍ ທີ່ກ່າວມານັ້ນ, ຄົນມີອາຍຸຕ່ຳກວ່າ ໒໐ ປີມີ ໓໐.໙໑໐ຄົນແລະຄົນມີ ອາຍຸ ກາຍ ໒໐ ປີມີ ໙໒.໖໒໐ ຄົນ.

ບາດກ້າວອັນແຮງກ້າຂອງໂຮງງານເຂັນຝ້າຍຕ່າງໆ ໄດ້ສ້າງໃຫ້ມີ ທ່າອັນແຂງແຮງທີ່ສຸດໃຫ້ແກ່ການປູກຕົ້ນຝ້າຍຢູ່ໃນອາເມລິກາໃຫ້ມີການ ຂະຫຍາຍຕົວ, ຈາກນັ້ນຊຸກຍູ້ທັງການຄ້າຂາຍຄົນຜິວດຳຢູ່ໃນທະວີບ ອາຟະລິກກາທັງການລ້ຽງເກືອຄົນຜິວດຳຢູ່ໃນບັນດາ boders ;lave state (໑) ຢ່າງພ້ອມໆກັນ, ປີ ໑໗໙໐, ເມື່ອເວລາເຂົາເຈົ້າຈົດສະຖິຕິຈຳນວນຂ້າທາດນັ້ນເລີຍເຫັນວ່າຈຳນວນດັ່ງກ່າວຂຶ້ນເຖິງ ໖໙໗.໐໐໐ຄົນ, ປີ ໑໘໖໑ ຈຳນວນດັ່ງກ່າວໄດ້ຂຶ້ນເຖິງ ໔.໐໐໐.໐໐໐ ຄົນ. ດ້ານອື່ນອີກກໍ່ແນ່ວແນ່ວ່າການພັດທະນານັບມື້ນັບທະວີຂຶ້ນຂອງບັນດາຈັກຕຳ ເສັ້ນແລນຢູ່ໃນອັງກິດໄດ້ເຮັດໃຫ້ບັນດາດິນນາເພາະປູກຄ່ອຍໆກາຍເປັນ ທົ່ງລ້ຽງສັດ, ແລະ ເຮັດໃຫ້ຊາວກະສິກອນຕ່າງໆກາຍເປັນຄົນຫລືອແລະຕ້ອງຫລັ່ງໄຫລພາກັນເຂົ້າໄປຫາຕົວເມືອງ. ອາຍເຣິແລນ, ໃນເວລານັ້ນ, ກໍ່ຕ້ອງຍອມຢູ່ໃນສະພາວະອັນເຈັບແສບດັ່ງກ່າວເລີຍໄດ້ເຮັດ ໃຫ້ພົນລະເມືອງຂອງປະເທດນັ້ນແຕ່ ໘໐ ປີມານີ້ໄດ້ຫລຸດລົງເຖິງ ເຄິ່ງໜຶ່ງ, ປະຈຸບັນພັດຫລຸດລົງກ່ວານັ້ນອີກໃໝ່ ເພື່ອສອດຄ່ອງກັບ ຄວາມຮຽກຮ້ອງຕ້ອງການຂອງເຈົ້າທີ່ດິນ ແລະ ຂອງພະນະທ່ານຫົວໜ້າໂຮງຈັກຕຳເສັ້ນແລນຄົນອັງກິດ.

---

(໑)Border slave states ເປັນບັນດາເຂດຄ້າຂາຍຂ້າທາດຢູ່ທີ່ພົມແດນ, ຕັ້ງຢູ່ລະຫວ່າງບັນດາເຂດພາກເໜືອ ແລະ ບັນດາ ເຂດພາກໃຕ້, ແລະ ຂາຍສະເພາະແຕ່ຄົນຜິວດຳ ຊຶ່ງເຂົາເຈົ້າລ້ຽງ ເກືອເພື່ອຂາຍໃຫ້ປະເທດນອກເໝືອນກັນກັບຂາຍສັດ.

ຖ້າວ່າກົນຈັກຖືກນຳໃຊ້ເຂົ້າໃນບັນດາຂະບວນວິວັດທຳອິດ ຫລືຂະບວນວິວັດເຄິ່ງກາງ ຊຶ່ງເປົ້າໝາຍແຫ່ງການອອກແຮງງານ ຈຳຕ້ອງຜ່ານໄປກ່ອນເວລາຈະບັນລຸເຖິງຮູບການອັນສົມບູນຂອງມັນນັ້ນແລ້ວ, ບັນດາອາຊີບຫັດຖະກຳຫລືໂຮງງານຫັດຖະກຳຖືກຕອບສະໜອງດ້ວຍຜະລິດພັນຂອງກົນຈັກ, ຈະມີອຸປະກອນຫລາຍກ່ວາ ແລະ ຈະຮັບເອົາແຮງງານຫລາຍກ່ວາ, ກ່ອນເວລາຊຶ່ງບັນດາຈັກເຂັນຝ້າຍຖືກປະດິດ ແຕ່ງອອກມານັ້ນ, ບັນດາຊ່າງຕຳແຜ່ນອັງກິດເລີຍຕ້ອງພັກບໍ່ເຮັດວຽກ ຍ້ອນບໍ່ມີວັດຖຸດິບເພື່ອເຮັດ, ແຕ່ວ່າການເຂັນຝ້າຍດ້ວຍຈັກໄດ້ສະໜອງເສັ້ນຝ້າຍຫລາຍໃຫ້ເຂົາເຈົ້າ ແລະ ມີລາຄາຖືກຈົນວ່າໃນຕອນທ້າຍຂອງສະຕະວັດກ່ອນ ແລະ ຕົ້ນສະຕະວັດຂອງພວກເຮົາ, ຄອບຄົວໜຶ່ງ, ມີຜູ້ໃຫຍ່ ໔ ຄົນ ແລະ ເດັກນ້ອຍ ໒ ຄົນທີ່ໄດ້ເຮັດວຽກ ໑໐ ຊົ່ວໂມງຕໍ່ມື້ໃນການເຂັນຝ້າຍ, ໄດ້ຮັບ41, at,ໃນອາທິດໜຶ່ງ. ເມື່ອເວລາ ມີວຽກດ່ວນ; ຄອບຄົວນັ້ນຍັງສາມາດໄດ້ຮັບຫລາຍກວ່ານັ້ນອີກ (໑)

ເມື່ອເວລານັ້ນກຳມະກອນຫລັ່ງໄຫລເຂົ້າມາໃນການເຂັນ ຝ້າຍດ້ວຍມື, ຕະຫລອດຈົນເຖິງເວລາຊ່າງຕຳແຜ່ນ ໕໐໐.໐໐໐ ຄົນ ໂດຍແມ່ນບັນດາຈັກ jenny, muler ແລະ thorestle (໒) ໄດ້ຮັບການສ້າງຂຶ້ນ, ລ້ວນແຕ່ຖືກຈັກຕຳຫູກດ້ວຍອາຍໄລ່ອອກໝົດແລ້ວ ຈຶ່ງ

---

(໑) ກາສະແກນ, ໜ້າ ໒໔ - ໒໗. the manufacturing " population of England, ", ລອນດອນ, ໑໘໓໓

(໒) ຊື່ຂອງບັນດາຈັກຕຳຫູກທີ່ເປັນ ພາສາອັງກິດ.

ເຊົາ. ຈຳນວນຊ່າງຫຍິບຈັກ. ຊ່າງເຮັດເຄື່ອງນຸ່ງຂອງຜູ້ຍິງ, ຊ່າງຫຍິບດ້ວຍມື ໆລໆ ... ນັບມື້ນັບເພີ່ມຂຶ້ນຄຽງຄູ່ກັບຈຳນວນແຜ່ນ ແຜຫລາຍທີ່ສຸດ ຊຶ່ງກົນຈັກໄດ້ສະໜອງໃຫ້, ມັນເພີ່ມຂຶ້ນຈົນເຖິງເວລາຈັກຫຍິບກຳເນີດອອກມາຈຶ່ງເຊົາ.

ກົນຈັກນຳໃຊ້ນາຍຊ່າງເປັນຈຳນວນນ້ອຍພໍຄວນ, ສະນັ້ນຖ້າຄ່ອຍຄ່ອຍເພີ່ມທະວີກ້ອນປະລິມານວັດຖຸດິບ, ເຄື່ອງຜະລິດພັນ, ເຄື່ອງມືແຫ່ງການອອກແຮງງານ ໆລໆ ...ຂຶ້ນ, ຂະແໜງອຸດສາຫະກຳຕ່າງໆ ທີ່ນຳໃຊ້ວັດຖຸດິບເຫລົ່ານັ້ນ, ໆລໆ...ເລີຍຄ່ອຍໆແຍກອອກເປັນ ຫລາຍຂະແໜງການທີ່ຕ່າງກັນ. ເນື່ອງຈາກນັ້ນ, ການແບ່ງງານສັງຄົມ ດັ່ງກ່າວຈຶ່ງມີທ່າອຸກຍູ້ແຮງກວ່າທ່າອຸກຍູ້ຂອງໂຮງງານຫັດຖະກຳອັນ ເປັນຫລັກ.

ກ່ອນອື່ນຫມົດ ກົນຈັກໄດ້ເຮັດໃຫ້ມູນຄ່າສ່ວນເກີນ ແລະ ກ້ອນປະລິມານຜະລິດພັນຊຶ່ງໃນນັ້ນມູນຄ່າສ່ວນເກີນຖືກສະແດງອອກນັ້ນເພີ່ມຂຶ້ນ. ຫາກວັດຖຸທີ່ໄດ້ລ້ຽງເກືອພວກນາຍທຶນ ແລະ ພວກຕີນມືຜູ້ເກາະກິນຂອງພວກມັນຫາກຄ່ອຍໆເພີ່ມຂຶ້ນນັ້ນ, ບັນດາພາກສ່ວນສັງຄົມດັ່ງກ່າວ ຈະເພີ່ມຂຶ້ນ ແລະ ແຕກນໍ່ກໍ່ຈາວ. ຊັບສົມບັດຂອງພວກມັນຫາກເພີ່ມຂຶ້ນຕື່ມນັ້ນ, - ໃນປະຈຸບັນວຽກນັ້ນໄປຄຽງຄູ່ກັນກັບການລົດຜ່ອນຈຳນວນ ກຳມະກອນທີ່ໄດ້ນຳໃຊ້ໃນການຜະລິດບັນດາສິນຄ້າອັນສຳຄັນຈຳເປັນອັນດັບໜຶ່ງ, - ມັນເລີຍເຮັດໃຫ້ກຳເນີດເກີດມີບັນດາພາຫະນະໃຫ່ມສຳຫລັບຕອບສະໜອງບັນດາຄວາມຮຽກຮ້ອງຕ້ອງການເຫລົ່ານັ້ນພອນໆກັນ ກັບບັນດາຄວາມຮຽກຮ້ອງຕ້ອງການອັນຟຸມເຟືອຍໃຫ່ມໆ, ຜະລິດພັນສັງຄົມ-

ສ່ວນໃຫ່ຍກ່ວາເລີຍກາຍເປັນຜະລິດພັນສ່ວນເກີນ (໑), ແລະ ສ່ວນໜຶ່ງທີ່ໃຫ່ຍກ່ວາຂອງຜະລິດພັນສ່ວນເກີນອັນນີ້ເລີຍຖືກເອົາໄປໃຊ້ ພາຍໃຕ້ບັນດາຮູບການທີ່ເປັນຫລາຍຮູບຫລາຍສີກ່ວາ ແລະ ແນບນຽນກ່ວາ. ເວົ້າໄປຢ່າງໜຶ່ງອີກ, ການຜະລິດສິນຄ້າອັນຟູມເຟືອຍເພີ່ມຂຶ້ນຕື່ມ (໒)

ຄວາມແນບນຽນ ແລະ ລັກສະນະເປັນຫລາຍຮູບຫລາຍສີຂອງຜະລິດພັນຕ່າງໆ ກໍເປັນຜົນສຳເລັດຂອງບັນດາສາຍພົວພັນໃໝ່ແຫ່ງ ຕະຫລາດຂອງໂລກທັງສອງ ໂດຍແມ່ນອຸດສາຫະກຳໃຫ່ຍເປັນຜູ້ສ້າງຂຶ້ນ. ບໍ່ພຽງແຕ່ມີຜະລິດພັນຟູມເຟືອຍຫລາຍຢ່າງຂອງຕ່າງປະເທດຖືກແລກປ່ຽນເອົາຜະລິດພັນພາຍໃນປະເທດເທົ່ານັ້ນ, ຫາກຍັງມີວັດຖຸດິບ, ຫວ້ານຢາເຄື່ອງຜະລິດພັນຈຳນວນໜຶ່ງຫລາຍກ່ວານັ້ນອີກຖືກນຳໃຊ້ເປັນ ພາຫະນະການຜະລິດຢູ່ໃນບັນດາຂະແໜງອຸດສາຫະກຳພາຍໃນປະເທດ. ດັ່ງນັ້ນໝາຍວ່າ ຄວາມຕ້ອງການທາງດ້ານແຮງງານພາຍໃນຂະແໜງ ການອົບສິ່ງເພີ່ມຂຶ້ນ ຂະແໜງການນີ້ກໍເລີຍແບ່ງຍ່ອຍ, ເປັນຫລາຍ ຂະ

---

(໑) Produit net ພາສາອັງກິດ:surplus-produit(ຜູ້ແປ)

(໒) ຟ.ອັງແກນ ໄດ້ຊີ້ອອກຢ່າງຈະແຈ້ງວ່າສະພາວະອັນໜ້າ ສັງເວດຂອງພາກສ່ວນໃຫ່ຍແຫ່ງບັນດາກຳມະກອນທີ່ໄດ້ປະດິດຜະລິດພັນຟູມເຟືອຍເຫລົ່ານັ້ນ, ຢູ່ໃນປຶ້ມທີ່ໄດ້ແນະນຳມາແລ້ວກ່ຽວກັບສະພາວະ ຂອງຊົນຊັ້ນຜູ້ອອກແຮງງານ. ກ່ຽວກັບບັນຫານີ້, ມີເອກະສານໃໝ່ຫລາຍຢ່າງຢູ່ໃນບັນດາບົດລາຍງານຂອງ Child, Employm, Commision

•

ແຫນງການໃຫມ່ (໑)

ການທີ່ບັນດາພາຫະນະແຫ່ງການອອກແຮງງານ ແລະ ພາຫະນະດຳລົງຊີວິດເພີ່ມຂື້ນ ແລະ ການທີ່ຈຳນວນກຳມະກອນທີ່ຕ້ອງການໃຫ້ແກ່ການຜະລິດເຫລົ່ານັ້ນຄ່ອຍໆຫລຸດລົງຢ່າງທຽບຖານນັ້ນ, ໄດ້ຊຸກຍູ້ບັນດາກິດຈະການອັນຍາວນານໃຫ້ມີການພັດທະນາຍິ່ງຂື້ນ, ແລະ ຜະລິດ ພັນຂອງກິດຈະການເຫລົ່ານັ້ນເຊັ່ນ ຄອງນ້ຳ, ທ່າກຳປັ່ນ, ທາງລົດໄຟ , ຂົວ ຯລຯ... ຊຶ່ງພຽງແຕ່ນຳມາເຊິ່ງຜົນສຳເລັດໃນອະນາຄົດໄກເຕີບ ເທົ່ານັ້ນດອກ.

ຢ່າງໜຶ່ງແມ່ນອີງໃສ່ກົນຈັກໂດຍກົງ, ຫລືວ່າຍ້ອນ ຜົນສຳເລັດຂອງການປ່ຽນແປງຕ່າງໆ ໂດຍແມ່ນກົນຈັກເປັນຜູ້ກໍ່ຂື້ນໃນຊີວິດເສດຖະກິດ, ບັນດາຂະແຫນງການອຸດສາຫະກຳໃຫມ່ໆພັດໄດ້ປະກົດຕົວຂື້ນ, , ຈາກນັ້ນ, ຖ້າວ່າມີອຸດສາຫະກຳເທົ່າໃດ ຂະແຫນງແມ່ນມີເທົ່ານັ້ນ ຂົງເຂດອອກແຮງງານໃຫມ່, ເຖິງວ່າເປັນແນວນັ້ນກໍ່ຕາມ, ຖານະຂອງຂົງເຂດເຫລົ່ານັ້ນຢູ່ໃນທົ່ວທັງພົ້ນຖານການຜະລິດກໍ່ບໍ່ແມ່ນວ່າໃຫ່ຍຫລວງປານໃດ, ຈົນວ່າໃນກະໂຕບັນດາປະເທດທີ່ພັດທະນາກວ່າໝູ່ເອງ ກໍ່ຄືກັນ, ແລະ ຈຳນວນກຳມະກອນທີ່ເຮັດວຽກຢູ່ໃນບັນດາຂົງເຂດ ເຫລົ່ານັ້ນກໍ່ເປັນມາດຕາສ່ວນເໝາະສົມກັບຄວາມຮຽກຮ້ອງຕ້ອງການ ທາງດ້ານແຮງງານຕົນມືອັນປະຖົມມະຖານກວ່າໝູ່ໝົດ ຊຶ່ງບັນດາຂະແຫນງ

---

(໑) ຢູ່ອັງກິດ, ນັບທັງເຂດ ການເລີ, ປີ ໑໙໖໑, ໃນບັນດາເຮືອຄ້າຂາຍໄດ້ມີ ກະລາສີ ໙໔.໖໖ ຄົນ.

ເຫລົ່ານັ້ນໄດ້ຍົກອອກມາ.

ກ.ມາກ, ທຶນ,ສຳນັກພິມຈຳໜ່າຍ ຊິເທິດ, ຮ່າໂນ້ຍ, ໑໙໖໐, ຫົວ I/ , ເຫລັ້ມ ໔, ໜ້າ ໑໔໗-໑໕໐, ໑໗໕ - ໑໖໐

ຄັດຈາກ :

ສະບັບຮ່າງ ແລະ ການອະທິບາຍ
ໂຄງການການເມືອງ ຂອງພັກ
ປະຊາທິປະໄຕ-ສັງຄົມ

.....

.໔. ພ້ອມກັນກັບການປ່ຽນແທນຂອງການຜະລິດໃຫ່ຍຕໍ່ການ ຜະລິດນ້ອຍ, ບັນດາຈຳນວນທຶນອັນເລັກນ້ອຍຂອງເຈົ້າຂອງໂຮງຈັກເອກະເທດໄດ້ຖືກປ່ຽນແທນດ້ວຍບັນດາທຶນອັນໃຫ່ຍຫລວງ, ແລະ ບັນດາ ກຳໄລອັນເລັກນ້ອຍໄດ້ຖືກປ່ຽນແທນດ້ວຍບັນດາກຳໄລເປັນເງິນລ້ານ . ເນື່ອງຈາກນັ້ນ, ການຂະຫຍາຍຕົວຂອງລັດທິທຶນນິຍົມໄດ້ທຳໃຫ້ການຟູມເຟືອຍ ແລະ ຊັບສິນເງິນທອງຢູ່ທົ່ວທຸກແຫ່ງເພີ່ມທະວີຂຶ້ນ. ຢູ່ໃນປະເທດລັດເຊຍ, ໄດ້ເກີດມີຊົນຊັ້ນທຳມາຫາກິນໃຫ່ຍ: ຫົວໜ້າໂຮງຈັກ, ຫົວໜ້າທາງລົດໄຟ, ພໍ່ຄ້າໃຫ່ຍ, ຫົວໜ້າທະນະຄານ; ຊົນຊັ້ນດຳລົງຊີວິດດ້ວຍລາຍຮັບທີ່ມາຈາກບັນດາຈຳນວນທຶນທີ່ເປັນເງິນຕາຊຶ່ງເຂົາເຈົ້າໄດ້ໃຫ້ບັນດາຫົວໜ້າອຸດສາຫະກຳກູ້ຢືມ ເພື່ອເກັບເອົາດອກເບັ້ຽ,ພວກເຈົ້າທີ່ດິນທີ່ໃຫ່ຍໆ ຮັ່ງມີຂຶ້ນ ໂດຍອີງອາໄສບັນດາກ້ອນເງິນໄຖ່ຖອນຊຶ່ງຊາວນາໄດ້ມອບໃຫ້ເຂົາເພື່ອໄຖ່ເອົາດິນນາຄືນ, ອີງອາໄສສະພາວະຂາດເຂີນດິນນາຂອງຊາວນາ ເພື່ອຍົກສູງຄ່າເຊົ່ານາ ແລະ ອີງອາໄສ

ການກໍ່ສ້າງບັນດາໂຮງງານໃຫຍ່ຜະລິດນ້ຳຕານ ແລະ ເຫລົ້າ ພາຍໃນບັນດາສ່ວນໃຫຍ່ຂອງພວກມັນ. ຄວາມສະໜຸກສະໜານ ແລະ ຟູມເຟືອຍຂອງຊົນຊັ້ນທີ່ຮັ່ງມີເຫລົ່ານັ້ນ ໄດ້ກ້າວຂຶ້ນເຖິງຂີດຂັ້ນຊຶ່ງບໍ່ເຄີຍເຫັນຈັກເທື່ອ; ບັນດາຫໍຜາສາດລາຊະວັງ ແລະ ບັນດາຫໍໂຮງອັນງອກງາມຂອງພວກມັນປົ່ງຂຶ້ນລຽບຕາມບັນດາຖະໜົນຫລວງອັນເປັນຕົ້ນຕໍຂອງຕົວເມືອງໃຫຍ່ຕ່າງໆ. ແຕ່ວ່າລັດທິທຶນນິຍົມຍິ່ງຂະຫຍາຍຕົວຂຶ້ນ, ສະພາວະດຳລົງຊີວິດຂອງກຳມະກອນຍິ່ງທຸກຈົນຢ່າງສາຫັດ. ພາຍຫລັງ ຊາວນາຖືກປົດປ່ອຍ, ຖ້າວ່າເງິນເດືອນຖືກເພີ່ມຂຶ້ນຢູ່ບາງທ້ອງຖິ່ນໃດ ໜຶ່ງນັ້ນ, ມັນກໍເປັນການເພີ່ມເຕີມໜ້ອຍໜັກໜ້ອຍໜາ ແລະ ພຽງຢູ່ໃນກາລະເວລາອັນສັ້ນໆເທົ່ານັ້ນເອງ ເພາະວ່າມະຫາຊົນຜູ້ອຶດຢາກທີ່ ມາຈາກຊົນນະບົດໄດ້ເຮັດໃຫ້ເງິນຄ່າແຮງງານຫລຸດລົງ, ໃນເວລາ ດຽວກັນນັ້ນ ອາຫານການກິນ ແລະ ຜະລິດພັນອັນສຳຄັນທີ່ຈຳເປັນອື່ນໆ ພັດແພງຂຶ້ນຕື່ມຈົນກະທັ້ງໃນກະໂຕເວລາເງິນເດືອນຖືກຍົກສູງຂຶ້ນນັ້ນ ກຳມະກອນກໍ່ຊື້ພາຫະນະດຳລົງຊີວິດໄດ້ຈຳນວນໜ້ອຍກວ່າເກົ່າ; ວຽກເຮັດງານທຳກໍ່ຫາຍາກ ແລະ ຢູ່ແປະກັບບັນດາຫໍຜາສາດອັນສວຍ ງາມຂອງພວກຮັ່ງມີ ( ຫລືວ່າຢູ່ເຂດຊານເມືອງຕ່າງໆ ) ເພິ່ນພັດເຫັນບັນດາຫລັງເຮືອນທີ່ເປ່ເພຂອງກຳມະກອນປະກົດຕົວຂຶ້ນ, ເຂົາຈຳເປັນ ຢູ່ໃນບັນດາຫ້ອງເຮືອນອັນຄັບແຄບ, ເຕັມອັດດ້ວຍຄົນປຽກຊຸ່ມແລະໜາວ, ຫລືຈົນກະທັ້ງຍັງຢູ່ໃນບັນດາຂຸມດິນຢູ່ແປະກັບບັນດາໂຮງຈັກທາກໍ່ສ້າງຂຶ້ນໃໝ່. ຕົ້ນທຶນຂອງນາຍທຶນຍິ່ງຫລວງຫລາຍຂຶ້ນມັນກໍ່ຍິ່ງເປັນອັນກົດເຕັງກຳມະກອນຢ່າງໜັກໜ່ວງ, ເຮັດໃຫ້ເຂົາກາຍເປັນຄົນທຸກຈົນ, ຈຳ

ເປັນຕ້ອງເອົາເວລາທັງໝົດຂອງເຂົາມອບໃຫ້ໂຮງຈັກ, ຈຳໃຫ້ລູກເມຍກຳມະກອນຕ້ອງໄປເຮັດວຽກໃຫ້ນາຍທຶນ. ດັ່ງນັ້ນ, ການປ່ຽນແປງທຳອິດຈຶ່ງການຂະຫຍາຍຕົວຂອງລັດທິທຶນນິຍົມໄດ້ນຳມາສູ່ນັ້ນມັນເປັນແນວນີ້ : ຊັບສົມບັດອັນອຸດົມສົມບູນຖືກສະສົມຢູ່ໃນກຳມືຂອງກຸ່ມນາຍທຶນ ຈຳນວນນ້ອຍໆ, ສ່ວນປວງປະຊາຊົນນັ້ນກໍ່ກາຍເປັນຄົນທຸກຍາກກາກກຳ.

ການປ່ຽນແປງທີສອງແມ່ນພາຍຫລັງການຜະລິດໃຫຍ່ໄດ້ປ່ຽນແທນໃຫ້ການຜະລິດນ້ອຍແລ້ວນັ້ນ, ພາຍໃນການຜະລິດເອງກໍ່ມີການດັດແປງໃຫ້ກ້າວໜ້າຕື່ມຫລາຍຢ່າງ. ກ່ອນອື່ນໝົດນັ້ນ, ການອອກແຮງງານເອກະເທດກະແຈກກະຈາຍໃຫ້ແກ່ເຈົ້າຊັບນ້ອຍແຕ່ລະຄົນທີ່ຢູ່ໃນແຕ່ ລະໂຮງຈັກນ້ອຍໄດ້ຖືກປ່ຽນແທນດ້ວຍການອອກແຮງງານຂອງກຳມະກອນທີ່ຖືກລວບລວມມາໄດ້, ເຂົາພ້ອມກັນເຮັດວຽກໃຫ້ເຈົ້າທີ່ດິນຜູ້ໜຶ່ງ, ນາຍເໝົາຜູ້ໜຶ່ງຢູ່ໃນໂຮງຈັກ, ຖ້າປຽບກັບການອອກແຮງງານເອກະເທດນັ້ນ, ການອອກແຮງງານລວມກັນມີປະສິດທິຜົນຫລາຍກວ່າ ( ມີສະມັດຖະພາບຂອງງານສູງກວ່າ ) ແລະ ມັນສ້າງເງື່ອນໄຂໃຫ້ມີການຜະລິດສິນຄ້າງ່າຍ ແລະ ໄວກວ່າຫລາຍທີ່ສຸດ. ແຕ່ວ່າທັງໝົດທຸກການ ດັດແປງໄດ້ກ້າວໜ້າເຫລົ່ານີ້ພຽງມີຜົນໃຫ້ແກ່ນາຍທຶນເທົ່ານັ້ນເອງ, ມັນເສຍເງິນໃຫ້ກຳມະກອນບາງອັດຊຶ່ງເປັນເງິນມາຈາກກຳມະກອນ ເອງແລະ ຍຶດເອົາຜົນທີ່ໄດ້ຮັບທັງໝົດທີ່ມາຈາກແຮງງານລວມໝູ່ຂອງ ກຳມະກອນລາງ. ນາຍທຶນພັດແຂງແຮງຍິ່ງຂຶ້ນ, ກຳມະກອນພັດອ່ອນ ແອຍິ່ງກວ່າອີກ, ເພາະວ່າເຂົາໄດ້ມີການຊິນເຄີຍກັບວຽກງານໃດໜຶ່ງ ທີ່ແນ່ນອນ, ແລະ ຖ້າວ່າຖືກຍົກຍ້າຍໄປເຮັດວຽກອື່ນ, ປ່ຽນອາຊີບໃໝ່

ເຂົາຈະຖືກຫຍຸ້ງຍາກກ່ວາ.

ການດັດແປງໃຫ້ກ້າວໜ້າແນວໜຶ່ງອີກຊຶ່ງມີຄວາມສຳຄັນຫລາຍທີ່ສຸດໃນການຜະລິດ, ນັ້ນແມ່ນກົນຈັກ ຕ່າງໆ ຊຶ່ງນາຍທຶນໄດ້ນຳໃຊ້ . ການນຳໃຊ້ກົນຈັກໄດ້ເຮັດໃຫ້ປະສິດທິພົນຂອງງານເພີ່ມຂຶ້ນຫລາຍກ່ວາ; ແຕ່ວ່ານາຍທຶນໄດ້ນຳໃຊ້ພົນທີ່ໄດ້ຮັບທັງໝົດນັ້ນສຳຫລັບຕ້ານກຳມະກອນ ກົນຈັກຮຽກຮ້ອງຕ້ອງການເຫື່ອແຮງນ້ອຍກ່ວາ, ນາຍທຶນສວຍໃຊ້ເລື່ອງນັ້ນ ເພື່ອນຳເອົາຜູ້ຍິງ ແລະ ເດັກນ້ອຍເຂົ້າມາເຮັດວຽກດ້ວຍຈັກແລະເສຍຄ່າແຮງງານໃຫ້ເຂົານ້ອຍກ່ວາ. ກົນຈັກຕ້ອງການກຳມະກອນນ້ອຍກ່ວາຫລາຍ, ນາຍທຶນສວຍໃຊ້ອາການນີ້ເພື່ອໄລ່ກຳມະກອນເປັນລວາດອອກຈາກໂຮງງານແລະສວຍໃຊ້ສະພາວະວ່າງງານ ອັນນີ້ເພື່ອກົດຂີ່ກຳມະກອນໃຫ້ແຮງກ່ວາເກົ່າອີກ, ເພື່ອແກ່ຍາວວັນງານ, ຕັດສິນພັກຜ່ອນຕອນກາງຄືນ ແລະ ເຮັດໃຫ້ເຂົາກາຍເປັນສິ່ງໜຶ່ງຂຶ້ນກັບກົນຈັກ ອ້ອຍຕ້ອຍ. ໄພວ່າງງານໂດຍແມ່ນກົນຈັກເປັນຜູ້ກໍ່ເຫດ ແລະ ພວມເພີ່ມທະວີຂຶ້ນໃນປະຈຸບັນໄດ້ນຳເອົາກຳມະກອນ ໄປເຖິງບ່ອນວ່າບໍ່ມີວິທີໃດ ສຳຫລັບປ້ອງກັນຕົວເອງ. ສີມືຂອງເຂົາເຈົ້າຖືກເສຍລາຄາ, ເຂົາເຈົ້າຈະຖືກປ່ຽນແທນໂດຍງ່າຍດ້ວຍຄົນງານທຳມະດາ ຊຶ່ງເປັນຜູ້ທີ່ຈະຊິນ ເຄີຍກັບການນຳໃຊ້ກົນຈັກໂດຍງ່າຍ ແລະ ພ້ອມແລ້ວຈະອອກແຮງງານດ້ວຍຄ່າແຮງຫນ້ອຍກ່ວາ. ທຸກຫລ່ຽມລາຍທີ່ຈະຕ້ານການກົດຂີ່ອັນບັບຸມ໌ ນັບເພີ່ມທະວີຍິ່ງຂຶ້ນຂອງນາຍທຶນລ້ວນແຕ່ພາໄປເຖິງບ່ອນຖືກໄລ່ອອກ ຈາກໂຮງງານ. ກຳມະກອນທີ່ຢູ່ໂດດດ່ຽວນັ້ນຈະບໍ່ມີຄວາມສາມາດຢ່າງ ສົມບູນໃນການຕ້ານກັບນາຍທຶນ, ເຄື່ອງຈັກພວມຂົ່ມຂູ່ເຂົາເຈົ້າໄປ ຫາ

ຕາຍ.

ວ.ອ.ເລນິນ, ຄົບຊຸດ, ເປັນພາສາ
ຫວຽດນາມ, ສຳນັກພິມຈຳໜ່າຍ-
ໂປຼແກຼສ, ມົສກູ, ໑໙໗໔, ເຫລັ້ມ
໘, ໜ້າ ໑໐໔ - ໑໐໖.

ຄັດຈາກນິພົນວ່າດ້ວຍ :

ຄ່າແຮງ, ລາຄາ ແລະ ພົນກຳໄລ

ຖ້າວ່າບໍ່ນັບເຖິງບັນດາຄວາມແຕກຕ່າງກັນກ່ຽວກັບບັນດາ ຈຸດພິເສດທາງທຳມະຊາດ ແລະ ບັນດາຄວາມຊຳນານວິຊາ ໃນການ ອອກແຮງງານທີ່ມີມາຂອງຊາດຕ່າງໆ ທີ່ຕ່າງກັນນັ້ນ, ກຳລັງຜະລິດ ຂອງແຮງງານຕົ້ນຕໍແມ່ນຕ້ອງຂຶ້ນກັບ :

໑- ບັນດາເງື່ອນໄຂທາງ<u>ທຳມະຊາດ</u> ຂອງການອອກແຮງງານ, ເຊັ່ນລະດັບຊຸດົມຂອງດິນ, ຄວາມຮັ່ງມີຂອງບັນດາແຮ່ ໆລໆ...

໒- ການດັດແປງໃຫ້ກ້າວໜ້າຢ່າງບໍ່ຢຸດຢັ້ງ ຂອງບັນດາ <u>ກຳລັງສັງຄົມຂອງການອອກແຮງງານ</u>, ເໝືອນດັ່ງເວລາບັນດາກຳລັງເຫລົ່ານັ້ນກຳເນີດອອກມາຈາກພື້ນຖານການຜະລິດຂະໜາດໃຫ່ຍ, ຈາກການທ້ອນໂຮມທຶນ ແລະ ການຮ່ວມສົມທົບແຮງງານ, ຈາກການແບ່ງງານ, ກົນຈັກ, ຈາກການດັດແປງບັນດາວິທີການຜະລິດໃຫ້ກ້າວໜ້າ, ຈາກການນຳໃຊ້ບັນດາທາດເຄມີ ແລະ ບັນດາກຳລັງທຳມະຊາດອື່ນໆ ຈາກການຮັດແຄບກາລະ ແລະ ເທສະໂດຍອີງໃສ່ບັນດາພາຫະນະຄົມມະນາຄົມ ແລະ ຂົນສົ່ງ ແລະ ຈາກທຸກໆການປະດິດສ້າງອື່ນໆ ໂດຍອີງໃສ່ສິ່ງເຫລົ່ານັ້ນແຫລະ ວິທະຍາສາດຈຶ່ງຖືກນຳໃຊ້ ເພື່ອຈຳໃຫ້ບັນດາ ກຳລັງທຳມະຊາດຕ້ອງຮັບໃຊ້ການອອກແຮງງານ ແລະ ໂດຍອີງອາໄສສິ່ງ

ເຫລົ່ານັ້ນແຫລະ ລັກສະນະສັງຄົມຫລືລັກສະນະຮ່ວມມືຂອງການ ອອກແຮງງານຈຶ່ງຖືກຂະຫຍາຍຕົວຍິ່ງຂຶ້ນ.

.....

ກາລມາກ-ຟຣີເດຣິກອັງແກລ, ໂຮມ
ບົດເລືອກເຟັ້ນ, ສຳນັກພິມຈຳໜ່າຍ
ຊິເທິດ, ຮ່າໂນ້ຍ, ໑໙໗໘, ເຫລັ້ມ
ມີ, ໜ້າ ໑໘໔.

ຄັດຈາກ ຈົດໝາຍຂອງທ່ານມາກ
ຝາກໃຫ້ Ludawing Kugebman
ຢູ່ທີ່ hannover

.....

ເດັກນ້ອຍຜູ້ໃດກໍ່ຮູ້ໄດ້ວ່າ ແຕ່ລະປະເທດຈະຕາຍທິວຖ້າວ່າ ເຂົາຢຸດຕິການອອກແຮງງານ, ເຮົາບໍ່ເວົ້າວ່າພາຍໃນປີໜຶ່ງ,ຫາກວ່າພາຍໃນໜຶ່ງຫລືສອງອາທິດ. ທຸກຄົນກໍ່ລ້ວນຮູ້ແລ້ວວ່າ ບັນດາກ້ອນປະລິມານຂອງຜະລິດພັນ ທີ່ສົມຄູ່ກັບບັນດາກ້ອນປະລິມານຄວາມຕ້ອງການທີ່ ຕ່າງກັນນັ້ນຮຽກຮ້ອງໃຫ້ບັນດາກ້ອນປະລິມານທີ່ຕ່າງຂອງຍອດປະລິມານແຮງງານສັງຄົມນັ້ນຖືກກຳນົດຕາຍຕົວທາງດ້ານປະລິມານ. ຄວາມຈຳ ເປັນຕ້ອງມີການແບ່ງງານ ສັງຄົມນັ້ນຖືກກຳນົດຕາຍຕົວທາງດ້ານປະລິມານ. ຄວາມຈຳເປັນຕ້ອງມີການແບ່ງງານສັງຄົມຕາມບັນດາອັດຕາສ່ວນ ທີ່ແນ່ນອນຊຶ່ງແນ່ນອນວ່າບໍ່ຫ່ອນຖືກລຶບລ້າງຈັກເທື່ອຍ້ອນຮູບການໃດໜຶ່ງທີ່ແນ່ນອນ ຂອງການຜະລິດສັງຄົມ, ຫາກພຽງແຕ່ຮູບການປະກົດຕົວຂອງມັນນັ້ນຈຶ່ງສາມາດມີການປ່ຽນແປງເທົ່ານັ້ນເອງ, ບັນຫານີ້ selfvident (໑).ເວົ້າລວມແລ້ວ, ບໍ່ອາດຈະລຶບລ້າງກົດເກນທຳມະຊາດໃດໆ.ສິ່ງທີ່ອາດມີການປ່ຽນແປງພາຍໃນສະພາວະຕ່າງໆທີ່ຕ່າງກັນໃນ ປະຫວັດ

---

(໑) ກະໂຕມັນເອງໄດ້ແຈ່ມແຈ້ງຢູ່ແລ້ວ.

ສາດນັ້ນແມ່ນພຽງເປັນ ຮູບການ ຊຶ່ງໃນນັ້ນບັນດາກົດເກນເຫລົ່ານັ້ນຖືກປະຕິບັດ. ແລະ ອັນທີ່ເປັນຮູບການຊຶ່ງໃນນັ້ນການແບ່ງປັນ ແຮງງານຢ່າງມີອັດຕາສ່ວນໄດ້ຖືກປະຕິບັດ, ຢູ່ໃນສະພາວະສັງຄົມຊຶ່ງໃນນັ້ນສາຍກ່ຽວພັນຂອງການອອກແຮງງານສັງຄົມໄດ້ຄົງຕົວຢູ່ພາຍໃຕ້ຮູບການການແລກປ່ຽນເອກະຊົນ ກ່ຽວກັບບັນດາຜະລິດພັນແຫ່ງການອອກແຮງ ງານຂອງບຸກຄົນ, - ກະໂຕຮູບການອັນນັ້ນແມ່ນ ມູນຄ່າແລກປ່ຽນ ຂອງບັນດາຜະລິດພັນເຫລົ່ານັ້ນເອງ.

ກ.ມາກ ແລະ ຟ.ອັງແກນ, ໂຣມ
ບົດເລືອກເຟັ້ນ, ສຳນັກພິມຈຳໜ່າຍ
ອິເຫິດ, ຮ່າໂນ້ຍ, ໑໙໗໘, ເຫລັ້ມ
ນີ, ໜ້າ ໖໗ກ - ໖໗໗

ຄັດບົດປະພັນວ່າດ້ວຍ :

ຕົ້ນກຳເນີດຂອງຄອບຄົວ, ຂອງລະບອບ

ຖືກຳມະສິດເອກະຊົນແລະຂອງລັດ

.....

## IX

## ຄວາມປ່າເຖື່ອນ ແລະ ຄວາມສິວິໄລ

ພວກເຮົາໄດ້ຄົ້ນຄ້ວາກ່ຽວກັບການແຕກທະລາຍຂອງບັນດາ ການຈັດຕັ້ງເຊື້ອຊົນພາຍໃນສາມຕົວຢ່າງໃຫຍ່ສະເພາະຕ່າງຫາກ: ກັບຄົນແກຣຊ, ຄົນໂຣມາ ແລະ ຄົນແຢກແມງ. ເພື່ອມ້ວນທ້າຍ, ບັດນີ້ພວກເຮົາຈຶ່ງພິຈາລະນາກ່ຽວກັບບັນດາເງື່ອນໄຂເສດຖະກິດອັນທົ່ວໄປຊຶ່ງໄດ້ມ້າງທຳລາຍບັນດາການຈັດຕັ້ງເຊື້ອຊົນ ຂອງສັງຄົມໃນກະໂຕ ສະໄໝຂະຫຍາຍຕົວສູງຂອງຍຸກສະໄໝປ່າເຖື່ອນ, ແລະ ໄດ້ລົບລ້າງການຈັດຕັ້ງເຊື້ອຊົນອັນນັ້ນຢ່າງສິ້ນເຊີງເມື່ອເວລາເລີ່ມເຂົ້າສູ່ຍຸກສະໄໝສິວິໄລຢູ່ທີ່ນີ້, ປື້ມວ່າດ້ວຍທຶນຂອງມາກຈະເປັນສິ່ງຕ້ອງການຕໍ່ພວກເຮົາກໍເຊັ່ນດຽວກັນກັບປື້ມຂອງ ມອກການນັ້ນລະ. ເຊື້ອຊົນກຳເນີດອອກມາໃນໄລຍະກາງຂອງສະໄໝໂງ່ຈ້າ, ແລ້ວກໍເລີຍໄດ້ສືບຕໍ່ການຂະຫຍາຍຕົວ ຢູ່ໃນໄລຍະສູງຂອງສະໄໝນັ້ນ, ແລະ ໃນຂອບເຂດຊຶ່ງບັນດາ ເອກະສານເປັນສະບັບຕົ້ນຂອງພວກເຮົາໄດ້ອານຸຍາດໃຫ້ເຮົາໃນການສັງເກດ

ກະຕວງໄດ້ນັ້ນ; ມັນກໍໄດ້ບັນລຸເຖິງລະດັບຮຸ່ງເຮືອງເຫລືອທີ່ສຸດຂອງມັນຢູ່ໃນໄລຍະຂະຫຍາຍຕົວຕໍ່າຂອງຍຸກສະໄຫມປ່າເຖື່ອນ. ດັ່ງນັ້ນແລ້ວ , ພວກເຮົາຈະເລີ່ມຕົ້ນຈາກ ໄລຍະຂະຫຍາຍຕົວທີ່ກ້າວມາແລ້ວນັ້ນ.

ຢູ່ທີ່ນີ້, ຖ້າຍົກຕົວຢ່າງຄືນພິວແດງຢູ່ທະວີບອາເມລິການັ້ນ, ພວກເຮົາກໍ່ເຫັນວ່າລະບອບເຊື້ອຊົນໄດ້ມີການຂະຫຍາຍຕົວຢ່າງ ສົມບູນ, ກົກເຫລົ່າໜຶ່ງໆແບ່ງເປັນຫລາຍເຊື້ອຊົນ, ຕາມເດີມແມ່ນເປັນສອງ (໑) ເມື່ອເວລາພົນລະເມືອງເພີ່ມທະວີຂຶ້ນຕື່ມ, ແຕ່ລະເຊື້ອຊົນທີ່ເປັນທຳອິດນັ້ນເລີຍແບ່ງຍ່ອຍເປັນບາງ ເຜົ່ານ້ອຍ, ແລະ ຕໍ່ບັນດາເຊື້ອຊົນ ນ້ອຍເຫລົ່ານັ້ນ ເຊື້ອຊົນແມ່ ແມ່ນ ໂຄດວົງ; ກະໂຕກົກເຫລົ່າເອງ ກໍ່ແບ່ງເປັນຫລາຍກົກເຫລົ່າ, ແລະ ພາຍໃນແຕ່ລະກົກເຫລົ່າທີ່ຖືກແບ່ງ ອອກນັ້ນ, ໃນຫລາຍກໍລະນີ, ພວກເຮົາລ້ວນພົບບັນດາເຊື້ອຊົນໃນຄາວກ່ອນ, ສະຫະພັນໜຶ່ງທີ່ໄດ້ລວບລວມບັນດາເຫລົ່າທີ່ມີເຊື້ອສາຍດຽວກັນ ເຂົ້າກັນ, ຢ່າງໜ້ອຍກໍແມ່ນຢູ່ໃນບັນດາກໍລະນີເອກະພັນ. ການຈັດຕັ້ງ ອັນງ່າຍດາຍດັ່ງກ່າວສອດຄ່ອງກັບບັນດາເງື່ອນໄຂສັງຄົມທີ່ໄດ້ໃຫ້ການ ກຳເນີດແກ່ມັນຢ່າງສົມບູນ. ທີ່ແທ້ມັນກໍພຽງເປັນໂຄງປະກອບໜຶ່ງທີ່ ເຕີບໂຕຂຶ້ນໂດຍທຳມະຊາດ, ໂຄງປະກອບໜຶ່ງທີ່ມີມາແຕ່ເດີມຂອງ ເງື່ອນໄຂເຫລົ່ານັ້ນເອງ; ມັນມີຄວາມສາມາດແກ້ໄຂບັນດາການປະທະກັນຊຶ່ງອາດຈະເກີດຂຶ້ນຢູ່ໃນສັງຄົມໜຶ່ງທີ່ໄດ້ຈັດຕັ້ງແນວນັ້ນ. ບັນດາການ ປະ

---

(໑) ຄຳທີ່ວ່າ"ຕາມເດີມແມ່ນເປັນສອງນັ້ນ ໂດຍແມ່ນອັງແກລ ເປັນຜູ້ເຕີມໃສ່ ການພິມປີ ໑໘໙໑ (ຜູ້ລຽບລຽງ).

ທະກັນກັບພາຍນອກຈະຖືກແກ້ໄຂຍ້ອນສົງຄາມ, ສົງຄາມອາດຈະສິ້ນສຸດລົງດ້ວຍການດັບສູນກົກເຫລົ່າ; ບໍ່ຫ່ອນມີຈັກເທື່ອດ້ວຍການກົດຂີ່ກົກເຫຼົ່າ. ລັກສະນະຍິ່ງໃຫຍ່ຂອງລະບອບເຊື້ອຊົນ, ແຕ່ພ້ອມກັນນັ້ນກໍແມ່ນ ລັກສະນະຈຳກັດຂອງມັນ, ຕັ້ງແມ່ນຢູ່ບ່ອນວ່າການປົກຄອງແລະການກົດຂີ່ບໍ່ສາມາດຈະຄົງຕົວຢູ່ໃນການຈັດຕັ້ງອັນນັ້ນໄດ້. ຢູ່ພາຍໃນເຊື້ອຊົນ, ບໍ່ເຄີຍມີການແຕກຕ່າງກັນໃດໆ ລະຫວ່າງສິດປະໂຫຍດ ແລະ ພັນທະ, ຕໍ່ຄົນອິນດຽນນັ້ນ, ເຂົາບໍ່ຕັ້ງບັນຫາພິຈາລະນາການເຂົ້າຮ່ວມໃນວຽກ ງານສ່ວນລວມ, ການແກ້ແຄ້ນຫລືການເສຍຄ່າໄຖ່ເປັນສິດປະໂຫຍດ ຢ່າງໜຶ່ງຫລືພັນທະຢ່າງໜຶ່ງ; ສຳຫລັບເຂົາເອງ, ຄຳຖາມດັ່ງກ່າວ ກໍໄຮ້ຄວາມໝາຍເຊັ່ນດຽວກັນກັບຄຳຖາມທີ່ວ່າ: ການກິນ, ນອນ, ການລ່າເນື້ອເປັນສິດປະໂຫຍດຫລືພັນທະໜຶ່ງບໍ່ ? ພາຍໃນກົກເຫລົ່າແລະເຊື້ອຊົນກໍຍິ່ງບໍ່ສາມາດຈະມີການແບ່ງປັນເປັນຫລາຍຊົນຊັ້ນທີ່ຕ່າງກັນ. ແລະບັນຫານີ້ເຮັດໃຫ້ເຮົາກ້າວເຖິງບ່ອນຕ້ອງມີການຄົ້ນຄວ້າພື້ນຖານເສດຖະກິດຂອງລະບອບການທີ່ກ່າວມາແລ້ວນັ້ນ.

ພົນລະເມືອງຢູ່ຫ່າງກັນທີ່ສຸດ; ມີແຕ່ບ່ອນທີ່ກົກເຫລົ່າສ້າງເປັນທີ່ຢູ່ຈຶ່ງມີຄົນຫລາຍກວ່າ: ອອມລອມບ່ອນນັ້ນ ກ່ອນອື່ນໝົດແມ່ນມີ ບໍລິເວນດິນແດນກວ້າງຂວາງ ໃຊ້ເປັນບ່ອນລ່າເນື້ອ, ຈາກນັ້ນຈຶ່ງຮອດເຂດປ່າອາລັກຂາບໍ່ຂຶ້ນກັບກົກເຫລົ່າໃດໆ. ແລະ ເຮັດໃຫ້ກົກເຫລົ່າ ດັ່ງກ່າວແຍກຕົວຢ່າງຂາດຂັ້ນກັບກົກເຫລົ່າອື່ນໆ. ການແບ່ງງານຍັງມີລັກສະນະທຳມະຊາດຢ່າງສົມບູນ, ມັນພຽງແຕ່ຖືກປະຕິບັດລະຫວ່າງຜູ້ຊາຍ ແລະຜູ້ຍິງເທົ່ານັ້ນເອງ ຜູ້ຊາຍກໍມີໜ້າທີ່ຕີເສິກ, ໄປລ່າເນື້ອ ແລະ ຕຶກປາ

ຫາວັດຖຸດິບ ເພື່ອເຮັດເປັນອາຫານການກິນ ແລະ ຫາບັນດາເຄື່ອງມືທີ່ຕ້ອງການຈຳເປັນໃຫ້ແກ່ວຽກນັ້ນ. ຜູ້ຍິງເປັນຜູ້ເບິ່ງແຍງວຽກຄອບຄົວ, ປຸງແຕ່ງອາຫານການກິນ ແລະ ກຽມການນຸ່ງຫົ່ມ: ເຂົາເຈົ້າຄົວກິນ , ຕຳຫູກ, ຫຍິບຕາບເຄື່ອງນຸ່ງຫົ່ມ. ແຕ່ລະຝ່າຍລ້ວນແຕ່ເປັນເຈົ້າ ພາຍໃນຂົງເຂດແຫ່ງການເຄື່ອນໄຫວສະເພາະຂອງຕົນ: ຜູ້ຊາຍເປັນ ເຈົ້າໃນປ່າ, ຜູ້ຍິງເປັນເຈົ້າຢູ່ບ້ານ. ແຕ່ລະຝ່າຍລ້ວນເປັນຜູ້ຖື ກຳມະສິດກ່ຽວກັບບັນດາເຄື່ອງມືຊຶ່ງຕົວເອງເປັນຜູ້ປະດິດ ແລະ ນຳໃຊ້: ຜູ້ຊາຍປະດິດອາວຸດ, ເຄື່ອງມືສຳຫລັບການລ່າເນື້ອ ແລະ ຕຶກປາ; ຜູ້ຍິງກໍ່ເປັນເຈົ້າເຄື່ອງໃຊ້ຕ່າງໆໃນຄອບຄົວ. ເສດຖະກິດຄອບຄົວ ເປັນພື້ນຖານເສດຖະກິດກອມມູນິດລວມຂອງຫລາຍຄອບຄົວ, ຕາມເຄີຍ ແມ່ນເປັນຂອງສ່ວນລວມ ຂອງສ່ວນຫລວງຫລາຍໃນຈຳນວນຄອບຄົວ (໑). ສິ່ງໃດທີ່ໄດ້ພ້ອມກັນຜະລິດອອກມາ ແລະ ໄດ້ຊົມໃຊ້ລວມກັນນັ້ນ, ສິ່ງນັ້ນກໍ່ເປັນຊັບສິນສ່ວນລວມ, ກ່າວຄືເຮືອນຊານ, ສວນຮົ້ວ ແລະເຮືອແພ. ດັ່ງນັ້ນແລ້ວຢູ່ທີ່ນີ້ ແລະ ພຽງແຕ່ຢູ່ນີ້ເທົ່ານັ້ນເອງ, ຈຶ່ງມີອັນທີ່ວ່າ "ກຳ

---

(໑) ເປັນຕົ້ນແມ່ນຢູ່ຣິມທະເລຕາເວັນຕົກສຽງເໜືອແຫ່ງທະວີບອາເມລິກາ (ເຊີນອ່ານບານກຣົບ). ຢູ່ໃນກົກເຫລົ່າຣາຍດາ; ບົນບັນດາເກາະລາຊີນີຊາກລົດ, ເຂົາເຈົ້າໄດ້ເຫັນວ່າມີເສດຖະກິດຄອບຄົວ ປະເພດຕ່າງໆ ເຕົ້າໂຮມກັນມາຢູ່ໃນເຮືອນຫລັງໜຶ່ງທີ່ມີຄົນຢູ່ເຖິງ໗໐໐ຄົນ ຢູ່ກັບຄົນນົດກາ, ຫລາຍກົກເຫລົ່າຢູ່ລວມກັນທັງໝົດພາຍໃນເຮືອນຫລັງດຽວ ( ຄຳອະທິບາຍໝາຍເຫດຂອງທ່ານ ອັງແກນ ).

ມະສິດ ໂດຍແມ່ນແຮງງານຂອງຄົນເອງເປັນຜູ້ປະດິດອອກມາ ", ອັນທີ່ເປັນກຳມະສິດຊຶ່ງບັນດານັກກົດໝາຍ ແລະ ບັນດານັກເສດຖະ ສາດຂອງສັງຄົມສີວິໄລ ໄດ້ປັ້ນແຕ່ງຂຶ້ນ, ໝາຍວ່າອັນເປັນຫລັກກົດ ໝາຍຫລອກລວງສຸດທ້າຍຊຶ່ງລະບອບກຳມະສິດທິນິຍົມໃນປະຈຸບັນພວມ ເອົາເປັນບ່ອນອີງ.

ແຕ່ບໍ່ແມ່ນວ່າຢູ່ບ່ອນໃດມະນຸດກໍ່ຢຸດບົ້ງຢູ່ກັບໄລຍະນັ້ນ. ຢູ່ທະວີບອາຊີ, ເຂົາເຈົ້າໄດຊອກເຫັນສັດຕ່າງໆ ທີ່ສາມາດລ້ຽງເປັນສັດ ບ້ານໄດ້, ແລະ ຫລັງຈາກນັ້ນສາມາດເຮັດໃຫ້ມັນເກີດແມ່ແຜ່ລູກພາຍໃນສະພາວະລ້ຽງເປັນສັດບ້ານ. ເຂົາເຈົ້າຕ້ອງໄປຈັບເອົາຄວາຍແມ່ ມາແຕ່ປ່າ; ແລະ ເມື່ອເວລາຄວາຍແມ່ກາຍເປັນຄວາຍບ້ານແລ້ວ, ໃນແຕ່ລະປີມັນຈະສະໜອງຄວາຍນ້ອຍໂຕໜຶ່ງໃຫ້ເຂົາເຈົ້າ, ນອກຈາກນັ້ນ ມັນຍັງສະໜອງທັງນ້ຳນົມໃຫ້ອີກ. ກົກເຫລົ່າທີ່ເປັນກົກເຫລົ່ານຳໜ້າກ່ວາໝູ່ຈຳນວນໜຶ່ງ, - ຄົນອາຣີແອນ, ຄົນເຊມິດ, ແລະ ອາດຈະແມ່ນທັງຄົນ ຕູຣາເນຍ ອີກ, - ຕຳອິດໄດ້ເອົາການຝຶກສັດໃຫ້ຮູ້ເປັນຕົ້ນຕໍ ແລະ ພາຍຫລັງມາຈຶ່ງເອົາການລ້ຽງສັດ ແລະ ເບິ່ງແຍງສັດບ້ານເປັນຂະແໜງການອອກແຮງງານຕົ້ນຕໍຂອງຄົນ. ບັນດາກົກເຫລົ່າດຳລົງ ຊີວິດແບບລ້ຽງສັດເລ່ເລື່ອນແຍກຕົວອອກຈາກພາກສ່ວນທີ່ຍັງເຫລືອໄວ້ນັ້ນເອງຂອງຝູງຄົນປ່າເຖື່ອນ: <u>ນັ້ນແມ່ນການແບ່ງງານໃຫຍ່ຄັ້ງທຳອິດ</u>. ບັນດາກົກເຫລົ່າທີ່ດຳລົງຊີວິດແບບເລື່ອນທີ່ບໍ່ພຽງແຕ່ຜະລິດໄດຫລາຍ ກ່ວາຄົນປ່າເຖື່ອນອື່ນໆເທົ່ານັ້ນ, ພາຫະນະຊົມໃຊ້ ຊຶ່ງເຂົາເຈົ້າໄດ້ ຜະລິດອອກມາກໍ່ມີຄວາມແຕກຕ່າງກັນ. ເຂົາເຈົ້າບໍ່ພຽງແຕ່ມີນ້ຳນົມ ຫລາຍ

ກ່ວາ, ມີຜະລິດພັນທີ່ປະດິດດ້ວຍນ້ຳນົມຫລາຍກ່ວາ ແລະ ມີຊີ້ນ ຫລາຍກ່ວາເທົ່ານັ້ນ, ຫາກຍັງມີທັງໜັງສັດ, ຂົນແກະ, ຂົນແບ້ກໍດີກັນ ກັບເສັ້ນຝ້າຍ ແລະ ແຜ່ນແພຈຳນວນໜຶ່ງນັບມື້ນັບເພີ່ມຂຶ້ນ, ຍ້ອນວ່າກ້ອນປະລິມານວັດຖຸດິບໄດ້ເພີ່ມຂຶ້ນແລ້ວ. ຍ້ອນແນວນັ້ນແລ້ວເປັນເທື່ອທຳອິດສາມາດມີການແລກປ່ຽນຢ່າງສະໝ່ຳສະເໝີ; ຢູ່ກັບບັນດາໄລຍະກ່ອນນັ້ນ, ພຽງສາມາດມີການແລກປ່ຽນໂດຍບັງເອີນເທົ່ານັ້ນເອງ; ການຊຳນິ ຊຳນານເປັນພິເສດໃນການປະດິດອາວຸດ ແລະ ເຄື່ອງມືອາດ ຈະພາໄປເຖິງການແບ່ງງານຊົ່ວຄາວ. ຕົວຢ່າງດີ, ຢູ່ຫລາຍບ່ອນຄົນເຮົາໄດ້ຊອກເຫັນວັດຖຸບູຮານຕ່າງໆ ແນ່ນອນວ່າແມ່ນຂອງບັນດາ ໂຮງງານປະດິດເຄື່ອງມືດ້ວຍຫີນໃນຕອນທ້າຍຂອງສະໄໝເຄື່ອງຫີນ; ນາຍຊ່າງຕ່າງໆໄດ້ຝຶກຝົນຄວາມຊຳນິຊຳນານວິຊາຂອງຕົນຢູ່ກັບບັນດາ ໂຮງງານເຫລົ່ານັ້ນ, ກໍເໝືອນກັນກັບບັນດາຜູ້ຄົນທີ່ເປັນນາຍຊ່າງຫັດຖະກຳເປັນປະຈຳ ຢູ່ໃນບັນດາກອມມູນເຊື້ອຊົນ ຢູ່ໃນອິນເດຍ ໃນປະຈຸບັນນັ້ນແລ້ວ. ຢູ່ໃນໄລຍະຂະຫຍາຍຕົວດັ່ງກ່າວ, ການແລກປ່ຽນພຽງສາມາດເກີດຂຶ້ນໃນພາຍໃນກົກເຫລົ່ານັ້ນເອງ, ແລະທັງຢູ່ກະໂຕບ່ອນນີ້ເອງ ມັນກໍຄົງເປັນປະກົດການນອກຫລັກທຳນຽມ. ດຽວນີ້ພັດກົງກັນຂ້າມ, ພາຍຫລັງເວລາບັນດາກົກເຫລົ່າທີ່ດຳລົງຊີວິດແບບເຄື່ອນທີ່ໄດ້ແຍກຕົວອອກ ແລ້ວນັ້ນ, ພວກເຮົາເຫັນວ່າມີພ້ອມທຸກເງື່ອນໄຂໃຫ້ແກ່ການແລກປ່ຽນ ລະຫວ່າງບັນດາສະມາຊິກຢູ່ໃນບັນດາກົກເຫລົ່າທີ່ຕ່າງກັນ, ໃຫ້ແກ່ການຂະຫຍາຍຕົວ ແລະ ປັບປຸງການແລກປ່ຽນດັ່ງກ່າວນັ້ນ, ການແລກປ່ຽນໄດ້ກາຍເປັນລະບອບການທີ່ເປັນປົກກະຕິ. ທຳອິດ, ການແລກປ່ຽນ ດຳ

ເບີນໄປລະຫວ່າງບັນດາກົກເຫລົ່າ ໂດຍຜ່ານບັນດາຫົວໜ້າເຊື້ອຊົນຂອງແຕ່ລະຝ່າຍ, ແຕ່ວ່າເຖິງເວລາຝູງສັດລ້ຽງເລີ່ມພົນມາເປັນ ກຳມະສິດສ່ວນຕົວ (໑) ແລ້ວນັ້ນ, ການແລກປ່ຽນລະຫວ່າງບຸກຄົນດ້ວຍກັນກໍ່ນັບມື້ນັບມີທ່າດີ ແລະ ສຸດທ້າຍກໍ່ກາຍເປັນຮູບການແລກປ່ຽນເປັນ ອັນໜຶ່ງອັນດຽວ. ແຕ່ວ່າ, ຜະລິດພັນອັນຕົ້ນຕໍ ຊຶ່ງບັນດາກົກເຫລົ່າທີ່ດຳລົງ ຊີວິດແບບເຄື່ອນທີ່ໄດ້ແລກປ່ຽນກັບບັນດາກົກເຫລົ່າຢູ່ໃກ້ຄຽງກັນ, ພັດແມ່ນສັດລ້ຽງ, ສັດລ້ຽງໄດ້ກາຍເປັນສິນຄ້າຊຶ່ງຖືກນຳໃຊ້ເພື່ອຕີລາຄາ ທັງໝົດທຸກສິນຄ້າອື່ນໆ ແລະ ບໍ່ວ່າຢູ່ບ່ອນໃດມັນກໍ່ຖືກເຂົາເຈົ້າຮັບປ່ຽນກັບສິນຄ້າອື່ນໆ, - ລວມຄວາມວ່າ, ສັດລ້ຽງໄດ້ຖືກຮັບພາລະບົດ ບາດເປັນເງິນຕາ ແລະ ມັນຖືກນຳໃຊ້ເປັນເງິນຕາໃນກະໂຕໄລຍະນັ້ນເອງ. ຄວາມຮຽກຮ້ອງຕ້ອງການໃຫ້ມີສິນຄ້າພິເສດຊະນິດໜຶ່ງ - ໝາຍວ່າເງິນຕາ - ແມ່ນມີຄວາມຈຳເປັນ ແລະ ຮີບດ່ວນທີ່ສຸດນັບຕັ້ງແຕ່ເວລາຫາກໍ່ເລີ່ມມີການແລກປ່ຽນສິນຄ້າ.

ອາຊີບເຮັດສວນຊຶ່ງຄົນປ່າເຖື່ອນໃນທະວີບອາຊີ, ດຳລົງຊີວິດ ຢູ່ໃນໄລຍະຕ່ຳຂອງຍຸກສະໄໝປ່າເຖື່ອນ, ເຊື່ອແນ່ວ່າຍັງບໍ່ທັນຮູ້ເຖິງ , ໄດ້ປະກົດອອກມາຢູ່ນຳເຂົາເຈົ້າຊາທີ່ສຸດແມ່ນຢູ່ໃນໄລຍະກາງ, ກ່ອນເວລາເກີດມີການກະສິກຳ. ຢູ່ໃນເງື່ອນໄຂດິນຟ້າອາກາດຂອງທົ່ງພຽງຕູຣານີ ນັ້ນ, ເຂົາເຈົ້າບໍ່ສາມາດຮັກສາການດຳລົງຊີວິດແບບເຄື່ອນ ທີ່

---

(໑) ໃນສະບັບທີ່ໄດ້ພິມໃນປີ໑໘໘໔, ແທນໃຫ້ສັບ "ກຳມະສິດສ່ວນຕົວ" ( Gondereigent heresse - ແມ່ນສັບ "ກຳມະສິດເອກະຊົນ" ( Privateigeset thum ) (ບ.ກ.).

ໄດ້ ຖ້າວ່າບໍ່ມີການທ້ອນແຮຫຍ້າແຫ້ງໄວ້ໃຫ້ແກ່ລະດູໜາວ ອັນຍືດຍາວ ແລະ ໜາວຈັດຍ້ອນແນວນັ້ນ, ຢູ່ທີ່ນີ້, ຕ້ອງມີການເປີດກວ້າງທົ່ງຫຍ້າຕ່າງໆແລະປູກທັນຍະພືດຕ່າງໆ. ຕໍ່ບັນດາທົ່ງຫຍ້າຢູ່ພາກເໜືອຂອງທະເລດຳ, ກໍ່ເຊັ່ນດຽວກັນ. ແຕ່ຖ້າວ່າໃນທຳອິດເຂົາເຈົ້າພະລິດ ທັນຍະພືດໃຫ້ແກ່ສັດລ້ຽງນັ້ນກໍ່ເຫັນໄດ້ວ່າທັນຍະພືດເຫລົ່ານັ້ນ, ບໍ່ພໍເທົ່າໃດ, ກໍກາຍເປັນອາຫານການກິນທັງໃຫ້ແກ່ຄົນອີກ. ດິນນາປູກຝັງຕ່າງໆ ທີ່ຄົງເປັນຊັບສົມບັດຂອງກົກເຫລົ່າ, ແລະ ທຳອິດໄດ້ມອບໃຫ້ເຊື້ອຊົນນຳໃຊ້, ແລ້ວໃນພາຍຫລັງເຊື້ອຊົນພັດມອບໃຫ້ບັນດາກອມມູນຄອບຄົວ ແລະທ້າຍສຸດ (໑) ເລີຍມອບໃຫ້ບຸກຄົນຕ່າງໆນຳໃຊ້; ຄົນເຫລົ່ານີ້ອາດຈະມີບັນດາສິດທີ່ຍຶດເອົາເປັນກຳມະສິດໃດໜຶ່ງ, ແຕ່ວ່າພຽງແຕ່ມີສິດທີ່ຍຶດເອົາເປັນກຳມະສິດເທົ່ານັ້ນເອງ.

ຢູ່ໃນບັນດາໝາກຜົນຂອງໄລຍະນີ້ພາຍໃນຂົງເຂດແຫ່ງ ການເຄື່ອນໄຫວອຸດສາຫະກຳມີສອງໝາກຜົນໄດ້ມີຄວາມໝາຍສຳຄັນເປັນພິເສດ: ໝາກຜົນທຳອິດແມ່ນກີ່ຕ່ຳຫູກ, ໝາກຜົນທີ່ສອງແມ່ນການ ຕົ້ມແຮ່ທາດ ແລະ ການປະດິດເຄື່ອງໂລຫະທາດ. ທອງ ແລະ ກົ່ວ, ມັນກໍເໝືອນກັນກັບທອງດຳປະກອບດ້ວຍທອງ ແລະ ກົ່ວ, ລ້ວນເປັນ ບັນດາໂລຫະທາດສຳຄັນກວ່າໝູ່; ທອງດຳຖືກນຳໃຊ້ໃນການປະດິດບັນດາເຄື່ອງມື ແລະ ອາວຸດທີ່ມີພົນສັກສິດ, ແຕ່ວ່າມັນບໍ່ສາມາດ ຊຸມຄວນເຄື່ອງມືເປັນຫີນໄດ້ຢ່າງສິ້ນເຊີງ; ມີແຕ່ເຫລັກນັ້ນເອງຈຶ່ງສາມາດເປັນ

(໑) ຄຳທີ່ວ່າ"ບັນດາກອມມູນຄອບຄົວແລະສຸດທ້າຍໂດຍແມ່ນອັງແກນເປັນຜູ້ຕື່ມໃສ່ສະບັບພິມໃນປີ ໑໘໙໑ (ບ.ກ.).

ແນວນັ້ນ, ແຕ່ວ່າຄົນເຮົາບໍ່ທັນຮູ້ຂຸດຄົ້ນເຫລັກ. ຄົນເຮົາເລີ່ມນຳໃຊ້ຄຳ ແລະ ເງິນ ເພື່ອປະດັບປະດາ ແລະ ປະດິດເປັນເຄື່ອງເອ້,ຄຳ ແລະ ເງິນໃນເວລານັ້ນຄືຈຶ່ງແມ່ນໄດ້ມີຄ່າຫລາຍກ່ວາທອງແດງ ແລະ ທອງດຳແລ້ວ.

ການຜະລິດໄດ້ເພີ່ມທະວີຂຶ້ນພາຍໃນທຸກຂະແໜງການ - ລ້ຽງສັດ, ກະສິກຳ, ຫັດຖະກຳຄອບຄົວ - ເຮັດໃຫ້ກຳລັງການຜະລິດຂອງຄົນມີຄວາມສາມາດຜະລິດພັນຕ່າງໆຫລາຍກ່ວາຈຳນວນຜະລິດພັນທີ່ຕ້ອງການຈຳເປັນໃຫ້ແກ່ ການດຳລົງຊີວິດຂອງຕົນ,ພ້ອມກັນນັ້ນມັນກໍເຮັດ ໃຫ້ຈຳນວນແຮງງານໃນແຕ່ລະວັນ ຊຶ່ງແຕ່ລະສະມາຊິກຂອງເຊື້ອຊົນ,ຂອງກອມມູນຄອບຄົວຫລືຂອງຄອບຄົວເອກະຊົນຕ້ອງຮັບຜິດຊອບນັ້ນມີ ການເພີ່ມທະວີຂຶ້ນ. ເນື່ອງຈາກນັ້ນເກີດມີຄວາມຮຽກຮ້ອງຕ້ອງການ ໃຫ້ດູດດຶງເອົາບັນດາແຮງງານໃໝ່. ສົງຄາມເປັນບ່ອນສະໜອງບັນດາແຮງງານໃໝ່ເຫລົ່ານັ້ນ : ບັນດາສະເລີຍເສິກທີ່ຈັບໄດ້ໃນເວລາ ສົງຄາມຖືກເອົາມາເປັນຂ້າທາດ. ການແບ່ງງານສັງຄົມໃຫຍ່ຄັ້ງທຳອິດພ້ອມກັບການຍົກສູງສະມັດຖະພາບຂອງງານ, ໝາຍຄວາມວ່າເຮັດໃຫ້ຊັບ ສິນເພີ່ມຂຶ້ນ ແລະ ພ້ອມພຽງກັນກັບການແຜ່ຂະຫຍາຍອົງເຂດເຄື່ອນ ໄຫວຜະລິດພາຍໃນທົ່ວທັງທຸກເງື່ອນໄຂປະຫວັດສາດໃນເວລານັ້ນ, ແນ່ນອນຕ້ອງພາໄປເຖິງລະບອບຂ້າທາດ, ຈາກການແບ່ງງານສັງຄົມໃຫຍ່ ຄັ້ງທຳອິດ, ໄດ້ເກີດມີການພັນແຍກເທື່ອທຳອິດໃນສັງຄົມເປັນສອງຊົນຊັ້ນ: ເຈົ້າທາດ ແລະ ຂ້າທາດ, ຜູ້ຂູດຮີດ ແລະ ຜູ້ຖືກຂູດຮີດ.

ບັນດາຝູງສັດລ້ຽງໄດ້ຍົກຍາຍຈາກກຳມະສິດສ່ວນລວມຂອງ ກົກ

ເຫລົ່າຫລືຂອງເຊື້ອຊົນມາເປັນກຳມະສິດຂອງບັນດາເຈົ້າຄອບຄົວເອກະຊົນແນວໃດ ແລະ ແຕ່ເວລາໃດນັ້ນ, ຈົນເຖິງປະຈຸບັນພວກເຮົາກໍຄົງບໍ່ທັນຮູ້ຫຍັງເລີຍ. ແຕ່ວ່າກ່າວທາງດ້ານພົ້ນຖານ, ເລື່ອງນັ້ນແນ່ ນອນຕ້ອງເກີດມາຢູ່ໃນໄລຍະນີ້, ພ້ອມດ້ວຍຝູງສັດລ້ຽງ ແລະຊັບສົມບັດໃໝ່ອື່ນໆ. ບັນດາຄອບຄົວໃນເວລານັ້ນພວມຜ່ານການປະຕິວັດ. ການຊອກຫາອາຫານການກິນເວລາໃດກໍເປັນໜ້າວຽກຂອງຜູ້ຊາຍ; ກະໂຕຜູ້ຊາຍເອງໄດ້ປະຕິບັດບັນດາເຄື່ອງມືທີ່ຕ້ອງການຈຳເປັນໃຫ້ແກ່ການຊອກ ຫາອາຫານການກິນ ແລະ ມີສິດຖືກຳມະສິດຕໍ່ເຄື່ອງມືເຫລົ່ານັ້ນ. ຝູງສັດລ້ຽງຕ່າງໆ ແມ່ນເປັນບັນດາພາຫະນະໃໝ່ສຳຫລັບການທຳມາຫາກິນ; ໃນຄາວນັ້ນໜ້າວຽກຂອງຜູ້ຊາຍ, ທຳອິດ, ແມ່ນສອນແອບສັດປ່າ ໃຫ້ກາຍເປັນສັດບ້ານ, ເວລາຕໍ່ມາແມ່ນເບິ່ງແຍງລ້ຽງເກືອສັດບ້ານ. ສະນັ້ນ, ສັດແມ່ນຂອງຜູ້ຊາຍ, ກໍຄືກັນກັບສິນຄ້າ ແລະ ຂ້າທາດ ຊຶ່ງເຂົາເຈົ້າໄດ້ເອົາສັດລ້ຽງໄປແລກເອົາ. ຈຳນວນເສດເຫລືອທັງໝົດ ທີ່ໄດ້ມາຈາກການຜະລິດໃນຄາວນັ້ນແມ່ນຂຶ້ນກັບຜູ້ຊາຍ, ຜູ້ຍິງກໍໄດ້ຮ່ວມ ໃຊ້ສອຍແຕ່ບໍ່ມີສ່ວນຂອງຕົນໃນຈຳນວນຊັບສົມບັດເຫລົ່ານັ້ນ. " ຜູ້ຊາຍສະໄໝໂງ້ຈາ ", ທັງເປັນນັກຮົບ ທັງເປັນນາຍພານ, ຍອມດີໃຈນຳຖານະສຳຮອງໃນຄອບຄົວ, ລຸນຈາກຜູ້ຍິງ; ຜູ້ລ້ຽງສັດມີ " ນິໄສ ອ່ອນໂຍນກ່ວາ " ພັດເພື່ອງອີງໃສ່ບ່ອນວ່າໂຕມີຊັບສິນແລ້ວກ້າວຂຶ້ນຊັ້ນທີ່ໜຶ່ງ ແລະ ເອົາຜູ້ຍິງລົງສູ່ຊັ້ນສຳຮອງ. ແລະ ຜູ້ເປັນຜູ້ຍິງກໍບໍ່ສາມາດ ຄຽດຂຶ້ນຈື່ມວ່າຫຍັງເລີຽ. ການແບ່ງງານພາຍໃນຄອບຄົວໄດ້ມີການກຳໜົດໃຫ້ແກ່ການແບ່ງປັນຊັບສົມບັດລະຫວ່າງຜູ້ຊາຍກັບຜູ້ຍິງ; ການແບ່ງງານ

ດັ່ງກ່າວຄົງຄືເກົ່າແຕ່ວ່າບັດນີ້ມັນພັດເຮັດໃຫ້ສາຍພົວພັນພາຍໃນຄອບຄົວມີການປິ່ນປ່ຽນຢ່າງສິ້ນເຊີງ, ກໍຍອມວ່າການແບ່ງງານຢູ່ພາຍນອກຄອບຄົວໄດ້ມີການປ່ຽນແປງໄປແລ້ວ. ກໍແມ່ນກະໂຕສາຍເຫດຊຶ່ງໃນ ຄາວກ່ອນໄດ້ຮັບປະກັນໃຫ້ຜູ້ຍິງກຳເອົາສິດປົກຄອງໃນເຮືອນ - ນັ້ນແມ່ນເລື່ອງທີ່ຜູ້ຍິງພຽງແຕ່ເຮັດວຽກງານຕ່າງໆຂອງຄອບຄົວເທົ່ານັ້ນ, ກະໂຕສາຍເຫດດັ່ງກ່າວນັ້ນເອງ, ບັດນີ້ພັດເຮັດໃຫ້ການປົກຄອງຂອງຜູ້ ຊາຍຢູ່ໃນເຮືອນກາຍເປັນອັນຈຳເປັນ; ບັດນີ້, ບັນດາວຽກງານ ຄອບຄົວຂອງຜູ້ຍິງໄດ້ໝົດຄວາມໝາຍຂອງມັນເສຍແລ້ວຖ້າປຽບກັບການ ອອກແຮງງານຜະລິດຂອງຜູ້ຊາຍ; ການອອກແຮງງານຂອງຜູ້ຊາຍແມ່ນເປັນທຸກສິ່ງທຸກຢ່າງ, ວຽກງານຂອງຜູ້ຍິງພຽງແຕ່ເປັນການປະກອບສ່ວນທີ່ບໍ່ເປັນຕາບັບ. ກະໂຕຢູ່ບ່ອນນີ້ເອງ, ຄົນເຮົາກໍໄດ້ເຫັນວ່າການປົດປ່ອຍຜູ້ຍິງ, ເລື່ອງເອົາເຈົ້າມີສິດເທົ່າທຽມກັບຜູ້ຊາຍ, ລ້ວນບໍ່ສາມາດຈະມີມາໄດ້ ແລະ ຈະບໍ່ສາມາດມີມາໄດ້ຕະຫລອດການ, ຕາບໃດຜູ້ຍິງ ຄົງຖືກປັດເຂ່ຍອອກຈາກການອອກແຮງງານຜະລິດຂອງສັງຄົມ ແລະ ຍັງຖືກຈຳກັດຢູ່ໃນການອອກແຮງງານເອກະຊົນຂອງຄອບຄົວ. ການປົດປ່ອຍຜູ້ຍິງສາມາດຖືກປະຕິບັດໄດ້ກໍຕໍ່ເມື່ອ ຜູ້ຍິງສາມາດຮ່ວມມືທຳການຜະລິດບົນຂະໜາດສັງຄົມທີ່ກວ້າງໃຫ່ຍ ແລະ ພຽງຕ້ອງເຮັດວຽກງານ ພາຍໃນເຮືອນນ້ອຍທີ່ສຸດນັ້ນ. ແຕ່ວ່າເລື່ອງນັ້ນພຽງສາມາດປະຕິບັດ ລົງໄດ້ພ້ອມດ້ວຍພື້ນຖານອຸດສາຫະກຳທັນສະໄໝ, ໝາຍວ່າພື້ນຖານອຸດສາຫະກຳພຽງແຕ່ຮັບເອົາແຮງງານຂອງຜູ້ຍິງດ້ວຍຂະໜາດໃຫຍ່ເທົ່ານັ້ນ , ຫາກຍັງຮຽກຮ້ອງໂດຍກົງວ່າຕ້ອງມີແຮງງານຜູ້ຍິງແລະນັບມື້ນັບ ພະຍາ

ຍາມລະລາຍແຮງງານເອກະເທດຄອບຄົວເຂົ້າໃນພື້ນຖານການ ຜະລິດສັງຄົມ.

ສິດປົກຄອງຕົວຈິງຂອງຜູ້ຊາຍພາຍໃນຄອບຄົວຖືກສ້າງຕັ້ງຂຶ້ນແລ້ວ, ບັນດາຮົ້ວປິດລ້ອມອັນສຸດທ້າຍຊຶ່ງກີດຂວາງສິດອຳນາດອັນເດັດຖານຂອງຜູ້ຊາຍກໍຖືກລົ້ມທະລາຍລົງ. ສິດອຳນາດອັນເດັດຖານດັ່ງກ່າວໄດ້ຖືກຮັບຮູ້ ແລະ ຄ້ຳປະກັນໄວ້ຢ່າງຕະຫລອດການດ້ວຍວິທີໂຄ່ນລົ້ມລະບອບມານດາສິດທິລາດ, ສ້າງຕັ້ງລະບອບບິດາສິດທິລາດດ້ວຍບາດກ້າວຂ້າມຜ່ານເທື່ອລະກ້າວຈາກການສົມລົດເປັນຄູ່ກັນແນ່ນອນມາສູ່ລະບອບຜົວໃຜເມຍມັນ. ແຕ່ວ່າເລື່ອງນັ້ນກໍພາໃຫ້ມີການແຕກແຫງໃນລະບອບເຊື້ອຊົນ ບູຮານ: ຄອບຄົວເອກະຊົນໄດ້ກາຍເປັນກອງກຳລັງໜຶ່ງ ແລະ ພວມຂູ່ຂວັນເຊື້ອຊົນ.

ກ້າວຂຶ້ນອີກກ້າວໜຶ່ງ ແມ່ນພວກເຮົາໄດ້ກ້າວມາສູ່ໄລຍະ ຂະຫຍາຍຕົວສູງຂອງຍຸກສະໄໝປ່າເຖື່ອນ, ເປັນຍຸກສະໄໝຊຶ່ງ ທັງໝົດທຸກຊົນຊາດສີວິໄລລວນໄດ້ຜ່ານພົ້ນດ້ວຍໄລຍະວິລະອາດຫານຂອງ ເຂົາເຈົ້າ; ຍຸກສະໄໝດາບເຫລັກ, ທັງກໍ່ແມ່ນສະໄໝໄຖ ແລະ ຂວານເຫລັກ. ເຫລັກເລີ່ມໄດ້ຮັບໃຊ້ໃຫ້ແກ່ມະນຸດ: ນັ້ນແມ່ນວັດຖຸດິບ ຊະນິດສຸດທ້າຍ - ຈົນເຖິງເວລາປະກົດມີມັນຝະລັ່ງ - ແລະ ກໍເປັນ ຊະນິດວັດຖຸດິບທີ່ສຳຄັນກ່ວາໝູ່ຢູ່ໃນທັງຫມົດທຸກວັດຖຸດິບຊຶ່ງໄດ້ມີບົດບາດ ປະຕິວັດໃນປະຫວັດສາດ. ເຫລັກອະນຸຍາດໃຫ້ຄົນເຮົາສາມາດປູກຝັງບົນບັນດາເນື້ອທີ່ກວ້າງໃຫຍ່ກ່ວາ, ສາມາດບຸກເບີກເນື້ອທີ່ໃໝ່ຢູ່ໃນ ບັນດາພາກພື້ນປ່າດົງກວ້າງໃຫຍ່ກ່ວາ; ເຫລັກພາໃຫ້ຊ່າງຫັດຖະກຳມີ ເຄື່ອງ

ມີແຂງ ແລະ ຄົນຊຶ່ງບໍ່ມີຫີນຊະນິດໃດຫລືໂລຫະທາດໃດທີ່ເຄີຍຮູ້ ເຄີຍ ເຫັນໃນຄາວນັ້ນສາມາດສູ້ກັບມັນໄດ້. ທຸກປະການທີ່ໄດ້ກ່າວມານັ້ນ ບໍ່ ແມ່ນວ່າເກີດມີຢ່າງກະທັນຫັນ: ເຫລັກຊະນິດທຳອິດເຄີຍອ່ອນກ່ວາທອງ ດຳອີກຊ້ຳ. ຍ້ອນແນວນັ້ນ, ອາວຸດທີ່ເປັນຫີນພຽງແຕ່ສູນຫາຍໄປ ຢ່າງ ລ້າຊ້າເທົ່ານັ້ນ; ບໍ່ພຽງແຕ່ຢູ່ໃນບົດເພງວ່າດ້ວຍ ຮົບເດີເບີຮານ ເທົ່າ ນັ້ນ, ຫາກຍັງຢູ່ໃນດ້ານຮົບ ຮາສຕິງ ຫວ່າງປີ ໑໐໖໖, ຂວານຫີນຄົງ ຖືກນຳໃຊ້ໃນການສູ້ຮົບ. ແຕ່ວ່າແຕ່ເວລານີ້ເປັນຕົ້ນໄປ, ຄວາມ ກ້າວ ໜ້າຖືກສືບຕໍ່ໂດຍບໍ່ມີສິ່ງໃດຈະກີດຂວາງໄດ້, ມັນຖືກຂາດສະບັ້ນ ນ້ອຍ ກ່ວາ ແລະ ກ້າວໜ້າໄວກ່ວາ. ຕົວເມືອງ, – ໂດຍມີບັນດາເຮືອນກໍ່ ດິນຈີ່ຫລືເຮືອນຫີນອ້ອມລ້ອມ, ແລະ ບັນດາຫລັງເຮືອນນີ້ຖືກອ້ອມ ລ້ອມ ໄປດ້ວຍບັນດາກຳແພງຫີນ, ໂດຍມີບັນດາປ້ອມເວນຍາມ, ບັນດາປ່ອງ ກໍ່ດ້ວຍຫີນ, – ໄດ້ກາຍເປັນບ່ອນຢູ່ໃຈກາງກົກເຫລົ່າ ຫລື ຂອງສຳພັນ ທະພາບກົກເຫລົ່າ, – ເລື່ອງນັ້ນສະແດງໃຫ້ເຫັນບາດກ້າວອັນຍິ່ງໃຫຍ່ ຢູ່ໃນສິນລະປະກໍ່ສ້າງ, ແຕ່ໃນເວລາດຽວກັນນັ້ນກໍເປັນສັນຍານ ຊຶ່ງຢັ້ງ ຢືນເຖິງໄພອັນຕະລາຍພວມນັບມື້ນັບເພີ່ມທະວີຂຶ້ນ ແລະ ຄວາມ ຮຽກ ຮ້ອງຕ້ອງການໃຫ້ມີການປົກປ້ອງກໍນັບມື້ນັບເພີ່ມທະວີຂຶ້ນ. ຊັບສິນເພີ່ມ ຂຶ້ນຢ່າງໄວວາ, ແຕ່ຄົງເປັນຊັບສິນຂອງອັດຕະບຸກຄົນຢູ່, ອາຊີບຕຳແຜ່ນ, ອາຊີບປະດິດເຄື່ອງໂລຫະທາດ ແລະ ບັນດາອາຊີບ ຫັດຖະກຳອື່ນໆນັບ ມື້ນັບແຍກອອກຈາກກັນ, ເຮັດໃຫ້ຜະລິດພົນນັບມື້ນັບມີຫລາຍຊະນິດແລະ ສິນລະປະແຫ່ງການຜະລິດນັບມື້ນັບດີເລີດ; ບັດນີ້, ນອກຈາກການ ຜະ ລິດທັນຍະພືດ, ໝາກຖົ່ວຊະນິດຕ່າງໆ ແລະ ໝາກໄມ້ນັ້ນ, ຂະແໜງ

ກະສິກຳຍັງໃຫ້ການສະໜອງທັງນ້ຳມັນ ພິດ ແລະ ເຫລັກແວງຊຶ່ງເຂົາເຈົ້າຮຽນເອົາວິທີເຮັດໄດ້. ການເຄື່ອນໄຫວທີ່ມີຫລາຍດ້ານແບບນັ້ນ ບໍ່ສາມາດມີພຽງແຕ່ບຸກຄົນຜູ້ໃດຜູ້ໜຶ່ງຫາກດຳເນີນໄປໄດ້ດີແຕ່ກ່ອນອີກ , ການແບ່ງງານໃຫຍ່ຄັ້ງທີ່ສອງ ໄດ້ເກີດຂຶ້ນ: ຫັດຖະກຳແຍກຕົວ ອອກຈາກການກະສິກຳ. ການຜະລິດພັດທະນາຂຶ້ນຢ່າງບໍ່ຢຸດຢັ້ງ -ແລະພ້ອມກັບມັນແມ່ນສະມັດຖະພາບຂອງງານ - ໄດ້ເຮັດໃຫ້ມູນຄ່າກຳລັງ ແຮງງານຂອງຄົນຖືກເຊີດຊູຂຶ້ນຕື່ມ; ໃນໄລຍະກ່ອນນັ້ນ, ລະບອບຂ້າທາດ ກໍກຳເນີດອອກມາ ແລະ ຍັງມີລັກສະນະກະຈັດກະຈາຍເທົ່ານັ້ນ,ປະຈຸບັນກໍໄດ້ກັບກາຍເປັນພາກສ່ວນແຫ່ງໂຄງປະກອບຕົ້ນຕໍຂອງລະບອບສັງຄົມ: ຂ້າທາດບໍ່ແມ່ນເປັນຜູ້ຊ່ວຍວຽກສຳຮອງອ້ອຍຕ້ອຍອີກ; ເຂົາເຈົ້າຖືກໄລ່ອອກໄປເຮັດວຽກຢູ່ທົ່ງນາ ແລະ ຢູ່ໃນໂຮງຈັກເປັນແຕ່ລະຄະນະສິບຫລືສິບສອງຄົນ. ເນື່ອງຈາກພື້ນຖານການຜະລິດຖືກແຍກອອກເປັນສອງຂະແໜງຕົ້ນຕໍ, ເປັນການກະສິກຳ ແລະ ຫັດຖະກຳ, ສະນັ້ນພື້ນ ຖານການຜະລິດໂດຍກົງໃຫ້ແກ່ການແລກປ່ຽນໄດ້ກຳເນີດເກີດຂຶ້ນ, ນັ້ນແມ່ນພື້ນຖານການຜະລິດສິນຄ້ານັ້ນເອງ. ການຜະລິດສິນຄ້າໄດ້ປະກົດ ຕົວອອກມາ, ໃນເວລາພ້ອມດຽວກັນນັ້ນ ການຄ້າກໍໄດ້ປະກົດຂຶ້ນນຳ, ບໍ່ພຽງແຕ່ຢູ່ ພາຍໃນກົກເຫລົ່າ ແລະ ບັນດາເຂດພົມແດນຂອງກົກເຫຼົ່າເທົ່ານັ້ນ, ຫາກທັງຢູ່ຕ່າງປະເທດອີກດ້ວຍ. ເຖິງແມ່ນເປັນແນວນັ້ນ ກໍຕາມ, ສະພາບການທັງໝົດເຫລົ່ານັ້ນຄົງຢູ່ໃນຮູບຖານໜໍ່ແໜງ ເທົ່ານັ້ນ; ບັນດາໂລຫະທາດທີ່ປະເສີດເລີ່ມກາຍເປັນສິນຄ້າທີ່ແຜ່ຫລາຍແລະມີທ່າດີເລີດ, ໝາຍວ່າກາຍເປັນເງິນຕາ, ແຕ່ເຂົາເຈົ້າບໍ່ທັນເອົາໄປ

ຫລໍ່ເປັນເງິນຫລຽນ, ຫາກພຽງນຳໄປແລກປ່ຽນໂດຍອີງຕາມນ້ຳໜັກ.

ການຈຳແນກລະຫວ່າງຄົນຮັ່ງ ແລະ ຄົນທຸກໄດ້ປະກົດອອກ ມາຄຽງຂ້າງກັບການຈຳແນກລະຫວ່າງຄົນເສລີ ແລະ ຂ້າທາດ: ພ້ອມກັນກັບການແບ່ງງານໃໝ່ສັງຄົມເລີຍພັນແຍກອີກເທື່ອໜຶ່ງເປັນ ຊົນຊັ້ນ ຄວາມຫລູດລື່ນກັນທາງດ້ານຊັບສົມບັດລະຫວ່າງບັນດາເຈົ້າຄອບຄົວເອກະເທດໄດ້ມ້າງເພກອມມູນຄອບຄົວແບບກອມມູນິດເກົ່າ, ບໍ່ວ່າຢູ່ບ່ອນໃດຊຶ່ງມັນຖືກຄ້ຳປະກັນໄວ້ຈົນເຖິງປະຈຸບັນ; ໃນເວລາດຽວກັນນັ້ນ ການເຣັດນາລວມກັນດ້ວຍບັນດາພາຫະນະຂອງກອມມູນກໍສູນກາຍໄປ. ບັນດາດິນນາຊຶ່ງສາມາດປູກຝັງໄດ້ລວມເບິກໃຫ້ຄອບຄົວຕ່າງໆນຳໃຊ້, ທຳອິດກໍຍັງເບິກເປັນຊົ່ວຄາວ, ຫລັງຈາກນັ້ນກໍເບິກໃຫ້ຢ່າງຂາດຕົວ; ບາດກ້າວຂ້າມຜ່ານເຖິງລະບອບກຳມະສິດເອກະຊົນ ຢ່າງສົມບູນກໍຖືກ ປະຕິບັດຄ່ອຍໆ ແລະ ຄຽງຄູ່ກັບບາດກ້າວຂ້າມຜ່ານຈາກແຕ່ການສົມລົດເປັນຄູ່ກັນແບ່ບອນຂຶ້ນສູ່ລະບອບຜົວໃຜເມຍມັນ. ຄອບຄົວເອກະເທດ ເລີ່ມກາຍເປັນຫົວໜ່ວຍເສດຖະກິດຂອງສັງຄົມ.

ສະພາວະພົນລະເມືອງນັບມື້ນັບດົກໜາຂຶ້ນຕື່ມຈຳໃຫ້ ເຂົາເຈົ້າຕ້ອງສາມັກຄີກັນຢ່າງສະໜິດແໜ້ນກວ່າຢູ່ພາຍໃນກໍດີຢູ່ພາຍນອກ. ຢູ່ທົ່ວທຸກແຫ່ງ, ການຮ່ວມສຳພັນກັນຂອງບັນດາກົກເຫລົ່າທີ່ມີເຊື້ອສາຍ ດຽວກັນກໍກາຍເປັນສິ່ງຕ້ອງການຈຳເປັນ; ບໍ່ນານເທົ່າໃດການໂຮມເປັນອັນໜຶ່ງອັນດຽວຂອງບັນດາກົກເຫລົ່ານັ້ນ, ແລະ ຈາກນັ້ນການໂຮມບັນດາດິນແດນສະເພາະຂອງກົກເຫລົ່າຕ່າງໆເປັນດິນແດນລວມຂອງເຜົ່າຊົນ, ກໍກາຍເປັນອັນຈຳເປັນ. ຜູ້ບັນຊາການທະຫານຂອງເຜົ່າຊົນ- rese

basileus thiudans ກາຍເປັນຂ້າລາຊະການທີ່ຕ້ອງການຈຳເປັນ, ເປັນປະຈຳ. ຢູ່ບ່ອນໃດຊຶ່ງແຕ່ກ່ອນຫາກບໍ່ທັນມີກອງປະຊຸມໃຫຍ່ປະຊາຊົນນັ້ນ ບັດນີ້ກອງປະຊຸມໃຫຍ່ດັ່ງກ່າວເລີຍຖືກສະຖາປະນາຂຶ້ນ. ຜູ້ບັນຊາ ການທະຫານ, ສະພາ, ກອງປະຊຸມໃຫຍ່ປະຊາຊົນ, ນັ້ນເປັນບັນດາ ອົງການສຳນັກງານຂອງອັນທີ່ເປັນສັງຄົມເຊື້ອຊົນທີ່ໄດ້ພັດທະນາໃຫ້ ກາຍເປັນສັງຄົມທີ່ນັບຖືລະບອບປະຊາທິປະໄຕທາງດ້ານການທະຫານ, ເອີ້ນວ່າການທະຫານກໍເພາະວ່າສົງຄາມ ແລະ ອົງການຈັດຕັ້ງສຳຫລັບ ດຳເນີນສົງຄາມເວລານັ້ນໄດ້ກາຍເປັນບັນດາພາລະໜ້າທີ່ເປັນເບື້ອງ ນິດໃນຊີວິດປະຈຳວັນຂອງປະຊາຊົນ. ຊັບສິນຕ່າງໆຂອງບັນດາຄົນຢູ່ ໃກ້ຄຽງກັນໄດ້ຍຸຍົງຄວາມໂລບມາກຂອງເຜົ່າຊົນຕ່າງໆ, ຢູ່ໃນນັ້ນການຍຶດເອົາຊັບສິນໄດ້ກາຍເປັນໜຶ່ງໃນບັນດາຈຸດປະສົງທີ່ສຳຄັນກວ່າໝູ່ ໝົດຂອງການດຳລົງຊີວິດ. ເຂົາເຈົ້າເປັນໝູ່ຄົນປ່າເຖື່ອນ: ຕໍ່ເຂົາເຈົ້າເອງການປຸ້ນສະດົມຄືຈັ່ງວ່າງ່າຍກວ່າ, ແລະ ຈົນກະທັ້ງຍັງມີກຽດກວ່າການອອກແຮງງານປະດິດສ້າງ. ໃນຄາວກ່ອນ, ສົງຄາມພຽງຖືກ ດຳເນີນໄປ ເພື່ອແກ້ແຄ້ນຕໍ່ບັນດາຄະດີ ປຸ້ນສະດົມຫລືເພື່ອແຜ່ຂະຫຍາຍດິນແດນຊຶ່ງໄດ້ກາຍເປັນຄັບແຄບແລ້ວ, ບັດນີ້ມັນຖືກເຂົາເຈົ້າດຳເນີນ ໄປໂດຍເລັ່ງໃສ່ຈຸດປະສົງປຸ້ນສະດົມ; ສົງຄາມໄດ້ກາຍເປັນອາຊີບ ໜຶ່ງເປັນປົກກະຕິ. ບໍ່ແມ່ນຢູ່ບໍ່ຢູ່ຄົນເຮົາຫາກກໍ່ສ້າງບັນດາກຳແພງອັນ ເປັນຕາຍ້ານອ້ອມລ້ອມຕົວເມືອງຕ່າງໆ ທີ່ຖືກປົກປ້ອງຢ່າງໜາແໜ້ນ ບັນດາຮ່ອງເລິກອ້ອມລ້ອມກຳແພງເປັນກອງພອນຂອງລະບອບເຊື້ອຊົນແລະ ປ້ອມເວນຍາມຕ່າງໆຂອງກຳແພງໄດ້ຊີ້ເຖິງຍຸກສະໄໝສີວິໄລ. ຢູ່ຝ່າຍ

ໃນຂອງສັງຄົມກໍ່ເຊັ່ນດຽວກັນ. ບັນດາສົງຄາມປຸ້ນສະດົມລ້ວນແຕ່. ເພີ່ມກຳລັງອຳນາດຂອງຜູ້ບັນຊາການທະຫານສູງສຸດກໍ່ຄືກັນກັບກຳລັງອຳນາດຂອງບັນດາຜູ້ບັນຊາການທະຫານຢູ່ໃຕ້ສິດຂອງຜູ້ນັ້ນ; ການຄັດ ເລືອກແມ່ນປະເພນີເປັນຜູ້ກຳ ນົດ, ບັນດາຄົນສືບທອດບັນດາຜູ້ບັນຊາການທະຫານເຫລົ່ານັ້ນພາຍໃນຄອບຄົວດຽວກັນ. ຄ່ອຍໆກາຍເປັນ, - ໂດຍສະເພາະແມ່ນແຕ່ເວລາມີລະບອບບິດາສິດທິລາດ, ກຳລັງອຳນາດໜຶ່ງສືບຕະກູນ, ຊຶ່ງທຳອິດເຂົາເຈົ້າໄດ້ໃຫ້ຄວາມອາໄພ, ຕໍ່ມາເຂົາ ເຈົ້າຮຽກຮ້ອງໃຫ້ມີ ແລະ ສຸດທ້າຍເຂົາເຈົ້າເລີຍຢຶດ; ພື້ນຖານຂອງ ອຳນາດມະຫາກະສັດສືບຕະກູນໄດ້ຖືກສະຖາປະນາຂຶ້ນ. ດັ່ງນັ້ນ, ບັນດາອົງການຈັດຕັ້ງຂອງລະບອບເຊື້ອຊົນຄ່ອຍໆແຍກອອກຈາກອັນທີ່ເປັນຮາກເຫງົ້າຂອງມັນພາຍໃນປະຊາຊົນ, ພາຍໃນເຊື້ອຊົນ, ເຜົ່າຊົນ, ກົກເຫລົ່າ, ແລະ ທົ່ວທັງລະບອບເຊື້ອຊົນພັນປ່ຽນເປັນອັນທີ່ປໍລະປັກກັບມັນເອງ, ຈາກແຕ່ເປັນອົງການຈັດຕັ້ງຂອງກົກເຫລົ່າຕ່າງໆ ເພື່ອແກ້ໄຂວຽກງານຕ່າງໆຂອງຕົນໂດຍເສລີ, ມັນໄດ້ກາຍເປັນອົງການຈັດຕັ້ງສຳຫລັບປຸ້ນສະດົມ ແລະ ກົດຂີ່ຜູ້ຢູ່ໃກ້ຄຽງກັນ; ແລະ ສອດຄ່ອງກັບ ສະພາບການດັ່ງກ່າວ, ບັນດາສຳນັກອົງການຂອງມັນ, ທຳອິດເປັນເຄື່ອງມືແຫ່ງເຈດຈຳນົງຂອງປະຊາຊົນ, ແຕ່ບັດນີ້ໄດ້ກາຍເປັນອົງການເອກະລາດແຫ່ງການຄອບຄອງ ແລະ ກົດຂີ່, ໂດຍເລັ່ງໃສ່ຕ້ານກະໂຕປະຊາຊົນເອງ. ແຕ່ວ່າສະພາບການດັ່ງກ່າວບໍ່ມີເວລາໃດສາມາດຈະເກີດຂຶ້ນໄດ້, ຖ້າວ່າ ຄວາມກະຫາຍຕໍ່ຊັບສິນບໍ່ເຮັດໃຫ້ບັນດາສະມາຊິກ ຂອງເຊື້ອຊົນແບ່ງເປັນຜູ້ຮັ່ງຜູ້ທຸກ, ຖ້າວ່າ " ຄວາມຫລຸດລື່ນກັນ ທາງດ້ານ

ຊັບສິນຢູ່ພາຍໃນເຊື້ອຊົນໜຶ່ງບໍ່ພົນປ່ຽນຄວາມເປັນເອກະພາບທາງດ້ານສິດພົນປະໂຫຍດໃຫ້ກາຍເປັນການປະຕິປັກກັນລະຫວ່າງບັນດາສະມາຊິກຂອງເຊື້ອຊົນ (ມາກ [໑]) ແລະ ຖ້າວ່າການຂະຫຍາຍຕົວຢ່າງ ກວ້າງຂວາງຂອງລະບອບຂ້າທາດບໍ່ທັນເລີ່ມເຮັດໃຫ້ເຂົາເຈົ້າສຳນຶກວ່າ ການດຳລົງຊີວິດດ້ວຍແຮງງານຂອງຕົນເປັນການເຄື່ອນໄຫວພຽງແຕ່ເໝາະສົມກັບບັນດາຂ້າທາດ ແລະ ເປັນໜ້າອັບອາຍກວ່າການໄປປຸ້ນສະດົມ.

×

× ×

ບັດນີ້ ພວກເຮົາໄດ້ມາເຖິງປາກປະຕູຂອງຍຸກສະໄໝສີວິໄລແລ້ວ. ມັນໄດ້ເປີດສາກດ້ວຍບາດກາວໃໝ່ໃນການແບ່ງງານ. ໃນໄລຍະຕ່ຳ, ມະນຸດພຽງທຳການຜະລິດ ເພື່ອຕອບສະໜອງໂດຍກົງໃຫ້ແກ່ການ ຊົມໃຊ້ຂອງຕົນເອງເທົ່ານັ້ນເອງ; ບັນດາການກະທຳແຫ່ງການແລກປ່ຽນ, ບາງຄັ້ງບາງຄາວຈຶ່ງປະກົດອອກມາ, ເປັນບັນດາປະກົດການທີ່ເປັນອັນໜຶ່ງອັນດຽວແລະພຽງແຕ່ຖືກດຳເນີນໄປດ້ວຍຜະລິດພັນເຫຼືອຕ່າງໆທີ່ມາໂດຍບັງເອີນ. ຢູ່ໃນໄລຍະກາງຂອງຍຸກສະໄໝປ່າເຖື່ອນນັ້ນ, ພວກເຮົາສັງເກດເຫັນວ່າ, ໃນບັນດາເຜົ່າຊົນທີ່ດຳລົງຊີວິດແບບເຄື່ອນຍ້າຍ

---

(໑) ເຊີນອ່ານ ເອກະສານສຳເນົາຂອງມາກ ແລະ ອັງແກນ, ເຫຼັ້ມ /(/, ໜ້າ ໑໕໓ - ໑໕໔ .

ນັ້ນ, ສັດລ້ຽງໄດ້ກາຍເປັນຊັບສິນບັດຊຶ່ງໄດ້ສະໜອງຜະລິດພັນ ເຫລືອຈຳນວນໃດຈຳນວນໜຶ່ງຢ່າງສະໝ່ຳສະເໝີນອກຈາກຈຳນວນສຳຫລັບການຊົມໃຊ້ຂອງຕົນເອງ, ຖ້າແມ່ນວ່າຝູງສັດໄດ້ໃຫຍ່ຂຶ້ນເຖິງລະດັບໃດໜຶ່ງແລ້ວ, ພ້ອມກັນນັ້ນພວກເຮົາກໍເຫັນວ່າໄດ້ມີການແບ່ງງານ ລະຫວ່າງໝູ່ຄົນດຳລົງຊີວິດແບບເຄື່ອນຍ້າຍ ແລະ ບັນດາກົກເຫລົ່າທີ່ຫລ້າຫລັງບໍ່ມີຝູງສັດ; ສະນັ້ນ, ພວກເຮົາເຫັນວ່າມີສອງໄລຍະແຫ່ງການຜະລິດທີ່ຕ່າງກັນຄົງຕົວຄຽງຄູ່ນຳກັນ; ໝາຍວ່າມີເງື່ອນໄຂຕ່າງໆ ໃຫ້ແກ່ການແລກປ່ຽນຢ່າງເປັນເນື່ອງນິດ. ໃນໄລຍະສູງຂອງຍຸກສະໄໝ ປ່າເຖື່ອນ, ພວກເຮົາເຫັນວ່າໄດ້ມີການແບ່ງງານໃໝ່ລະຫວ່າງ ກະສິກຳກັບຫັດຖະກຳ ແລະ ຈາກນັ້ນ, ພວກເຮົາເຫັນວ່າໄດ້ມີການແບ່ງງານໃໝ່ລະຫວ່າງກະສິກຳກັບຫັດຖະກຳ, ແລະ ຈາກນັ້ນການຜະລິດ ໂດຍກົງອອກເປັນພາກສ່ວນນັບມື້ນັບໃຫຍ່ຂອງບັນດາຜະລິດພັນແຫ່ງການອອກແຮງງານເພື່ອນຳໄປແລກປ່ຽນ, ແລະ ກໍຍ້ອນແນວນັ້ນການແລກ ປ່ຽນລະຫວ່າງຊາວຜະລິດເອກະເທດຕ່າງໆໄດ້ກາຍເປັນການຈຳເປັນ ອັນເປັນຕາຍຂອງສັງຄົມ. ຍຸກສະໄໝສີວິໄລໄດ້ປັບປຸງ ແລະ ຂະຫຍາຍທຸກຮູບຖານແຫ່ງການແບ່ງງານເຫລົ່ານັ້ນ, ບັນດາຮູບຖານທີ່ມີມາ ກ່ອນນັ້ນ, ໂດຍສະເພາະແມ່ນດ້ວຍວິທີເພີ່ມທະວີການປໍລະປັກກັນ ລະຫວ່າງຕົວເມືອງ ແລະ ຊົນນະບົດ ( ຕົວເມືອງອາດຈະຄອບງຳ ຊົນນະບົດທາງດ້ານເສດຖະກິດ, ຄືຢູ່ໃນສະໄໝບູຮານ, ຫລືວ່າຊົນນະບົດ ອາດຈະຄອບງຳຕົວເມືອງຄືຢູ່ໃນສະໄໝກາງ ); ແລະ ຍຸກສະໄໝສີວິໄລ, ຕື່ມໃສ່ໜັ້ນຍັງເກີດມີການແບ່ງງານ ຄັ້ງທີສາມອີກ, ນີ້ແມ່ນການ ແບ່ງ

ງານຊຶ່ງສະເພາະມັນເອງເທົ່ານັ້ນຈຶ່ງມີມາໄດ້, ມັນເປັນການແບ່ງງານທີ່ມີຄວາມໝາຍຕັດສິນຊີ້ຂາດ, ການແບ່ງງານໄດ້ໃຫ້ກຳເນີດແກ່ຊົນຊັ້ນໜຶ່ງຊຶ່ງບໍ່ເຂົ້າຮ່ວມໃນການຜະລິດອີກ, ນັ້ນແມ່ນຊົນຊັ້ນ ຊາວຄ້າ. ຈົນເຖິງປະຈຸບັນ, ທັງໝົດທຸກສາຍເຫດແຫ່ງການກໍ່ຮູບຂຶ້ນຂອງຊົນຊັ້ນຕ່າງຕ່າງ ລ້ວນແຕ່ຕິດພັນກັບການຜະລິດທັງນັ້ນ; ສາຍເຫດເຫລົ່ານັ້ນໄດ້ພາໄປເຖິງບ່ອນໄດ້ພັນແຍກບັນດາຜູ້ຄົນທີ່ເຂົ້າຮ່ວມທຳການຜະລິດເປັນຜູ້ບັນຊາ ແລະ ຜູ້ປະຕິບັດຕາມ, ຫລືວ່າຍັງພັນແຍກເຂົາເຈົ້າເປັນບັນດາ ຜູ້ທຳການຜະລິດຂະໜາດໃຫຍ່ຫລືນ້ອຍ. ຢູ່ທີ່ນີ້, ເປັນເທື່ອທຳອິດ ໄດ້ເກີດມີຊົນຊັ້ນໜຶ່ງ, ຊົນຊັ້ນນີ້ເຖິງແມ່ນວ່າບໍ່ເຂົ້າຮ່ວມທຳການຜະລິດແຕ່ຢ່າງໃດ, ແຕ່ວ່າມັນພັດກຳສິດນຳພາທັງໝົດຕໍ່ການຜະລິດ ແລະຈຳໃຫ້ຊາວຜະລິດຕ່າງຕ້ອງຂຶ້ນກັບມັນທາງດ້ານເສດຖະກິດ; ມັນກາຍເປັນຄົນສື່ກາງຊຶ່ງບໍ່ອາດຂາດໄດ້ລະຫວ່າງຊາວຜະລິດສອງຄົນ ແລະ ມັນຂູດຮີດທັງສອງຝ່າຍ. ພາຍໃຕ້ອັນເປັນສາຍເຫດທີ່ໄດ້ເຮັດໃຫ້ຊາວຜະລິດ ພົ້ນຈາກການອິດເມື່ອຍ ແລະ ບໍ່ພົບບັນດາເຄາະຮ້າຍໃນການແລກປ່ຽນ , ພາຍໃຕ້ອັນທີ່ເປັນສາຍເຫດແຜ່ຂະຫຍາຍການຂາຍ ຜະລິດພັນຕ່າງ ໆ ຂອງເຂົາຈົນຮອດບັນດາຕະຫລາດທີ່ຫ່າງໄກທີ່ສຸດ, ແລະ ຈາກນັ້ນກາຍເປັນຊົນຊັ້ນທີ່ມີປະໂຫຍດກວ່າໝູ່ໝົດຢູ່ໃນໝູ່ປະຊາຊົນ, ແລະ ກໍ່ຮ່າງສ້າງຕົວເປັນຊົນຊັ້ນໜຶ່ງຊຶ່ງເປັນພວກກາຝາກ, ພວກເກາະກິນ ສັງຄົມຢ່າງແທ້ຈິງ, ຊົນຊັ້ນນີ້ຍາດເອົາສ່ວນທີ່ເປັນຍອດຢ່ຽມຂອງການ ຜະລິດພາຍໃນປະເທດກໍ່ຄືຂອງການຜະລິດຕ່າງປະເທດ, ຖືວ່ານັ້ນແມ່ນ ຄ່າແຮງງານຂອງຄົນຕໍ່ບໍລິການຮັບໃຊ້ຕ່າງໆ ຊຶ່ງໃນຕົວຈິງມັນເປັນສິ່ງເລັກ

ເລັກນ້ອຍໆທີ່ສຸດ, ຊົນຊັ້ນນີ້ໄດ້ລວບເອົາບັນດາຊັບສິນອັນໃຫຍ່ໂຕມະໂຫ ຖານຢ່າງໄວວາ ແລະ ມັນໄດ້ກໍ່ຜົນສະທ້ອນສັງຄົມໜຶ່ງຂຶ້ນສົມຄູ່ກັບ ບັນ ດາຊັບສິນເຫລົ່ານັ້ນ ແລະ ຕັ້ງແມ່ນຍ້ອນແນວນັ້ນແລ້ວໃນຍຸກສະໄໝສິວິ ໄລ, ຊົນຊັ້ນນັ້ນຈຶ່ງຢຶດເອົາຖານະນັບມື້ນັບມີກຽດ ແລະ ຄອບງຳ ນັບມື້ ນັບແໜ້ນຕໍ່ການຜະລິດໄດ້ ຈົນເຖິງເວລາກະໂຕຊົນຊັ້ນເອງ,ສຸດທ້າຍ, ໄດ້ໃຫ້ການກຳເນີດຜະລິດພັນແນວໜຶ່ງສະເພາະຂອງມັນເອງ - ບັນ ດາວິກິດການທາງການຄ້າທີ່ມີລັກສະນະເປັນຮອບວົງວຽນ.

ອີກປະການໜຶ່ງ, ຢູ່ໃນໄລຍະພັດທະນາຊຶ່ງພວກເຮົາພວມ ຄົ້ນ ຄ້ວານັ້ນ, ຊົນຊັ້ນຊາວຄ້າໃຫຍ່ທີ່ໄດ້ກຳເນີດເກີດຂຶ້ນບໍ່ມີມະໂນພາບ ອັນ ໃດກ່ຽວກັບບັນດາວຽກງານທີ່ຍິ່ງໃຫຍ່ຊຶ່ງມັນຈະປະຕິບັດໃນອະນາຄົດ . ແຕ່ວ່າຊົນຊັ້ນດັ່ງກ່າວກໍຍັງຄົງກໍ່ຮູບຂຶ້ນ ແລະ ກາຍເປັນສິ່ງຈຳເປັນ,ຈັ່ງ ຊັ້ນແມ່ນພໍ. ພ້ອມກັນກັບຊົນຊັ້ນນັ້ນ, ເງິນຕາເປັນໂລຫະທາດ, ໝາຍ ວ່າເງິນຫລໍ່ກໍໄດ້ກຳເນີດອອກມາ, ແລະ ພ້ອມກັນກັບເງິນຕາ ຊະນິດ ຕ່າງໆ ເຫລົ່ານັ້ນ ເລ່ຫລ່ຽມ ປົກຄອງໃໝ່ແນວໜຶ່ງ ຂອງພວກບໍ່ເຮັດ ການຜະລິດ ທີ່ມີຕໍ່ຊາວຜະລິດ ແລະ ຕໍ່ການ ຜະລິດຂອງຜູ້ນັ້ນ ກໍໄດ້ ກຳ ເນີດຂຶ້ນດີກັນ. ສິນຄ້າກໍຖືກຄົ້ນພົບ, ສິນຄ້ານີ້ ສັງກັດໃນຕົວມັນ ເອງ ພາຍໃຕ້ ຮູບການ ຊ້ອນແຝງ , ໝົດທຸກສິນຄ້າອື່ນ , ນັ້ນແມ່ນຄາຖາ ຊຶ່ງສາມາດປ່ຽນຮູບໃຫ້ກາຍເປັນທຸກເຄື່ອງຂອງທີ່ມີລັກສະນະ ເກີຍກ່ອນ ຊຶ່ງເຂົ້າປາກຖະໜາ. ຖ້າວ່າຜູ້ໃດຫາກມີຄາຖາດັ່ງກ່າວແມ່ນຜູ້ນັ້ນ ສາ ມາດຈະຄອບຄອງໂລກການຜະລິດໄດ້. ດັ່ງນັ້ນແລ້ວໃຜເປັນຜູ້ທີ່ມີຄາຖາ ດັ່ງກ່າວກ່ອນໝູ່ໝົດ ? ນັ້ນແມ່ນຊາວຄ້ານັ້ນເອງ, ການບູຊາເງິນຕາ

ນອນຢູ່ໃນສອງຜາມືອັນເປັນໜ້າເຊື່ອຖືຂອງຊາວຄ້າ. ຜູ້ນັ້ນຮັບເອົາໜ້າທີ່ເຮັດໃຫ້ຄົນເຫັນແຈ້ງວ່າ ສິນຄ້າທຸກຊະນິດ ແລະ ຊາວຜະລິດ ສິນຄ້າທຸກຄົນລ້ວນຖືກລົ້ມໝອບຕໍ່ໜ້າເງິນຕາ. ດ້ວຍພຶດຕິກຳຕົວຈິງ, ເຂົາໄດ້ຢັ້ງຢືນວ່າ ທັງໝົດທຸກຮູບການອື່ນໆຂອງຊັບສົມບັດລ້ວນພຽງແຕ່ເປັນເງົາຕໍ່ໜ້າຄວາມປະກົດຕົວດັ່ງກ່າວຂອງຊັບສົມບັດ. ບໍ່ມີເວລາໃດ ຊຶ່ງອິດທິກຳລັງຂອງເງິນຕາພັດສະແດງອອກດ້ວຍຄວາມຫຍາບຊາແລະໂຫດຮ້າຍສາມານທີ່ມີລັກສະນະເຄົ້າມູນເໝືອນດັ່ງຢູ່ໃນສະໄໝໜຸ່ມ ນ້ອຍຂອງມັນ. ຫລັງຈາກການສ້ວຍໃຊ້ເງິນເພື່ອຊື້ເອົາສິນຄ້ານັ້ນ, ກໍແມ່ນການໃຫ້ກູ້ຢືມເງິນ ແລະ ພ້ອມກັນກັບການໃຫ້ກູ້ຢືມເງິນນັ້ນ, ການເກັບດອກເບັ້ຽ ແລະ ການໃຫ້ກູ້ຢືມກິນດອກເບ້ຍໜັກກໍປະກົດຕົວຂຶ້ນ. ບໍ່ມີລະບອບກົດໝາຍອັນໃດຂອງບັນດາຍຸກສະໄໝລຸນຈາກນັ້ນພັດຂື່ມຄົນຕິດໜີ້ລົງໃສ່ຕີນຂອງພວກໃຫ້ກູ້ຢືມກິນດອກເບ້ຍໜັກຢ່າງໂຫດຮ້າຍສາມານ ແລະ ບໍ່ມີການອີດູແຕ່ຢ່າງໃດ ເໝືອນດັ່ງລະບອບກົດໝາຍຂອງ ອາແຕນສະໄໝບູຮານ ແລະ ຂອງໂຣມາ ສະໄໝບູຮານ, - ແລະ ທັງສອງລະບອບກົດໝາຍນີ້ລ້ວນໄດ້ກຳເນີດອອກມາຢ່າງທຳມະຊາດ, ໃນຖານະເປັນປະເພນີແຫ່ງກົດໝາຍ, ອັນເກີດມາຈາກຄວາມຈຳ ເປັນທາງດ້ານເສດຖະກິດເທົ່ານັ້ນ.

ຄຽງຂ້າງກັບຊັບສົມບັດທີ່ເປັນສິນຄ້າ ແລະ ຂ້າທາດ, ຄຽງຂ້າງກັບຊັບສົມບັດທີ່ເປັນເງິນຕາ, ຍັງປະກົດມີຊະນິດຊັບສົມບັດທີ່ເປັນດິນນາອີກຕື່ມ. ສິດທິຢຶດເປັນກຳມະສິດຂອງບັນດາເອກະຊົນຕໍ່ດິນນາຊຶ່ງ ເຊື້ອຊົນຫລືກົກເຫລົ່າໄດ້ແບ່ງໃຫ້ເຂົາໃນເວລາທຳອິດນັ້ນ, ປະຈຸບັນເລີຍຖືກ

ປັບປຸງຈີນເຖິງຂະໜາດວ່າຕອນດິນເຫລົ່ານັ້ນກາຍເປັນຊັບສົມບັດທີ່ມອບ
ຕໍ່ໃຫ້ລູກຫລານໄດ້. ເນື່ອງຈາກວ່າໃນເວລາກ່ອນນັ້ນ, ຄົນເຫລົ່າ ນັ້ນ
ໄດ້ອອກເຫື່ອແຮງກ່ອນອື່ນໝົດແມ່ນເພື່ອປົດປ່ອຍຕອນດິນດັ່ງກ່າວໃຫ້ພົ້ນ
ຈາກສິດຂອງກອມມູນເຊື້ອຊົນ, ອັນເປັນສິດທີ່ໄດ້ກາຍເປັນຊົກໂສ້ຕໍ່ເຂົາ
ເຈົ້າເອງ. ເຂົາເຈົ້າໄດ້ປົດຖິ້ມຊົກໂສ້ເຫລົ່ານັ້ນໄດ້ແລ້ວ, ແຕ່ວ່າຫລັງ
ຈາກນັ້ນບໍ່ດົນ, ເຂົາເຈົ້າກໍ່ເລີຍຖືກປັດເຂ່ຍອອກຈາກສິດຢຶດຖືກຳມະສິດ
ໃຫ່ມຕໍ່ດິນນາຂອງເຂົາເຈົ້າ. ຢຶດຖືສິດກຳມະສິດຢ່າງເສລີ ແລະ ສົມ
ບູນຕໍ່ດິນນາບໍ່ພຽງແຕ່ໝາຍຄວາມວ່າສາມາດຢຶດເປັນກຳມະສິດຕໍ່ດິນນາ
ຢ່າງບໍ່ມີຄວາມຂັດຂວາງຫລືບໍ່ຖືກຈຳກັດເທົ່ານັ້ນ, ຫາກຍັງໝາຍຄວາມ
ວ່າສາມາດຈະນຳຍື່ນມັນໄປໄດ້ອີກ. ຕາບໃດດິນນາຍັງເປັນຊັບ, ສົມບັດ
ຂອງເຊື້ອຊົນ ຕາບນັ້ນຈະບໍ່ມີຄວາມສາມາດດັ່ງກ່າວ. ແຕ່ວ່າເມື່ອ ເວ
ລາຜູ້ເປັນເຈົ້າຂອງໃຫ່ມຂອງດິນນາໄດ້ປະຖິ້ມບັນດາຊົກໂສ້ແຫ່ງສິດຢຶດຖື
ກຳມະສິດສູງສຸດຂອງເຜົ່າຊົນແລະກົກເຫລົ່າໄດ້ຢ່າງຂາດຕົວແລ້ວນັ້ນ, ຜູ້
ນັ້ນກໍ່ຕັດຂາດບັນດາເສັ້ນເຊືອກຊຶ່ງແຕ່ໃດມາໄດ້ຜູກມັດຕົນໃສ່ດິນນາຢ່າງ
ໜັກແໜ້ນ. ເລື່ອງນັ້ນໝາຍຄວາມວ່າແນວໃດ, ເວີນຕາ,ໝາຍວ່າ
ອັນທີ່ຖືກປະດິດສ້າງອອກມາພ້ອມດຽວກັນກັບສິດຢຶດຖືກຳມະສິດ ສ່ວນຕົວ
ຕໍ່ດິນນາ, ກໍ່ໄດ້ອະທິບາຍໃຫ້ເຂົາເຈົ້າຈະແຈ້ງແລ້ວ. ແຕ່ນີ້ໄປ,ດິນນາ
ອາດຈະກາຍເປັນສິນຄ້າຊະນິດໜຶ່ງ ຊຶ່ງເຂົາເຈົ້າສາມາດເອົາໄປຂາຍ
ຫລືຈຳນຳໄດ້. ສິດຢຶດຖືກຳມະສິດດິນນາຫາກໍ່ຖືກສ້າງຕັ້ງຂຶ້ນແລ້ວ,ການ
ຈຳນຳກໍ່ຖືກປະດິດແຕ່ງອອກມາທັນທີ ( ໃຫ້ອ່ານ ອາແຕນ ).ລະບອບ
ສົມລັດຕະພິດຕະພີ ແລະ ການເປັນແມ່ຈ້າງແມ່ເລງໄດ້ເກາະຕາມ ສົ້ນ

ລະບອບຜົວດຽວເມຍດຽວສັນໃດ, ການຈຳນຳແຕ່ເວລານີ້ໄປ ກໍເກາະຕາມສົ້ນລະບອບກຳມະສິດຕໍ່ດິນນາຄືແນວນັ້ນແລ້ວ. ເຈົ້າເຄີຍຢາກມີສິດຍຶດຖືກຳມະສິດຢ່າງຄົບຖ້ວນ, ເສລີ ແລະ ສາມາດມອບຫລືຂາຍໄປໄດ້;

Tu l'as voulu George
- ເອົາ, ເຈົ້າຈຶ່ງຮັບເອົາມັນ: Dandin(໑)

ດັ່ງນັ້ນ, ພ້ອມກັນກັບການແຜ່ຂະຫຍາຍການຄ້າພ້ອມກັນກັບ ເງິນຕາ ແລະ ການໃຫ້ກູ້ຢືມກິນດອກເບັ້ຽໜັກ, ພ້ອມກັບສິດຍຶດຖືກຳມະສິດດິນນາ ແລະ ລະບອບຈຳນຳເນັ້ນ, ການທ້ອນໂຮມ ແລະ ລວບລວມຊັບສົມບັດເຂົ້າໃນເງື້ອມມືຊົນຊັ້ນທີ່ຈຳນວນຄົນນ້ອຍກໍໄດ້ສະແດງອອກ ມາຢ່າງໄວວາ, ແລະ ຄຽງຂ້າງກັບສະພາບການດັ່ງກ່າວ, ການທີ່ກາຍເປັນທຸກຈົນຂອງມະຫາຊົນ ແລະ ປະຊາຊົນຜູ້ທຸກຈົນທີ່ເປັນຈຳນວນຫຼາຍກໍເພີ່ມຂຶ້ນ. ຊັ້ນຄົນຊຸນນາງຮັ່ງມີໃໝ່, ຖ້າວ່າບໍ່ກຳເນີດຈາກຊັ້ນ ຊຸນນາງເກົ່າຂອງເຊື້ອຊົນ, ມັນກໍເຂ່ຍຊັ້ນຊຸນນາງເກົ່າດັ່ງກ່າວລົງສູ່ຊັ້ນສຳຮອງ ( ເຊັ່ນວ່າຢູ່ ອາແຕນ, ຢູ່ໂຣມ, ຢູ່ກັບຄົນແຢກແມງເປັນຕົ້ນ). ຄຽງຂ້າງກັບສະພາວະບັນດາພົນລະເມືອງເສລີທີ່ໄດ້ແບ່ງເປັນຫລາຍຊົນຊັ້ນໂດຍອີງຕາມຊັບສົມບັດຂອງເຂົາເຈົ້າແນວນັ້ນ, ຈຳນວນຂ້າທາດ(໒)

---

(໑) ພາສາຝະລັ່ງຢູ່ໃນສະບັບເດີມ, ແປວ່າ " ກະໂຕເຈົ້າເອງຢາກໄດ້ແນວນັ້ນ, ຢອກເຢີດັງແດງ !" (ໂມລີແອ, ຢອກເຢີດັງແດງ, ສາກທີ I, ພາຍ ໝ ) (ບ.ກ.).

(໒) ຈຳນວນຂ້າທາດທີ່ຢູ່ໃນອາແຕນ, ເຊິ່ນອ່ານປຶ້ມທີ່ໄດ້ ກ່າວອ້າງບົນ, ໜ້າ ໑໑໗ (ກ.ມາກ ແລະ ຟ. ອັງແກນ, ໂຣມບົດ =)

ໂດຍສະເພາະແມ່ນເງັກ, ພັດເພີ່ມຂຶ້ນເປັນຈຳນວນຫລາຍທີ່ສຸດ, ການອອກແຮງງານທີ່ຖືກບັງຄັບຂອງເຂົາເຈົ້າ ເປັນພື້ນຖານແຫ່ງໂຄງ ບົນຂອງທົ່ວສັງຄົມ.

ບັດນີ້ພວກເຮົາຈຶ່ງສັງເກດເບິ່ງດູ, ຢູ່ໃນການປະຕິວັດສັງຄົມດັ່ງກ່າວ, ລະບອບເຊື້ອຊົນຈະເປັນແນວໃດ ? ຕໍ່ບັນດາປັດໄຈໃໝ່ຊຶ່ງໄດ້ປະກົດອອກມາຫາກບໍ່ມີການເຂົ້າຮ່ວມຂອງມັນນັ້ນ ລະບອບເຊື້ອຊົນ ໄດ້ສະແດງວ່າຂາດຄວາມສາມາດ. ປະຖົມປັດໄຈຂອງລະບອບເຊື້ອ ຊົນແມ່ນບັນດາສະມາຊິກຂອງເຊື້ອຊົນໜຶ່ງ ຫລື ກົກເຫລົ່າໜຶ່ງໆແມ່ນຕອງດຳລົງຊີວິດພ້ອມກັນບົນພື້ນແຜ່ນດິນອັນດຽວ ຊຶ່ງຜູ້ຢູ່ໃນນັ້ນມີພຽງແຕ່ເຂົາເຈົ້າເອງເທົ່ານັ້ນ. ສະພາບການດັ່ງກ່າວໄດ້ຢຸດຕິລົງແຕ່ດົນແລ້ວ. ບໍ່ວ່າຢູ່ບ່ອນໃດ, ເຊື້ອຊົນ ແລະ ກົກເຫລົ່າກໍ່ລ້ວນດຳລົງຊີວິດປົນເປນຳກັນ, ບໍ່ວ່າບ່ອນໃດຂ້າທາດ, ພົນລະເມືອງທີ່ຖືກຂາລັກຂາ ແລະ ບັນດາຄົນທີ່ມາຈາກບ່ອນອື່ນ, ລ້ວນດຳລົງຊີວິດຮ່ວມກັນກັບພົນລະເມືອງເສລີ. ການຕັ້ງຖິ່ນຖາວອນຊຶ່ງຈົບເຖິງໄລຍະກາງຂອງຍຸກສະໄໝປ່າເຖື່ອນຈຶ່ງມີມາ

---

* ເລືອກເຟັ້ນ, ເຫລັ້ມ III, ໑໙໗໐ ໜ້າ ໓໒໐, ( ບ.ກ.).
ຢູ່ທີ່ ໂກແຣງຕີໃນໄລຍະສີວິໄລຂອງຕົວເມືອງທີ່ກ່າວມາ, ຈຳນວນຂ້າທາດລວມທັງໝົດແມ່ນ ໔໖໐.໐໐໐ ຄົນ, ຢູ່ທີ່ເອກິນ ກໍ່ມີຈຳນວນ ໔໗໐.໐໐໐ ຄົນ, ຢູ່ໃນສອງກໍລະນີນີ້, ຈຳນວນຂ້າທາດລ້ວນແຕ່ ຫລາຍກວ່າເປັນສິບເທົ່າປຽບກັບຈຳນວນກຳມະກອນເສລີ ( ຄຳອະທິ ບາຍໝາຍເຫດຂອງ ອັງແກນ ).

ໄດ້ນັ້ນ, ກໍຖືກປິ່ນປ່ວນຢູ່ເລື້ອຍ ເນື່ອງຈາກການປ່ຽນແປງຢູ່ໃນໂຄງປະກອບພົນລະເມືອງ ແລະ ການປ່ຽນຍ້າຍບ່ອນຢູ່, ເນື່ອງຈາກ ການເຄື່ອນໄຫວການຄ້າ, ເນື່ອງຈາກການປ່ຽນຍາຍອາຊີບ, ແລະ ການປ່ຽນສິດຍຶດຖືກຳມະສິດຕໍ່ດິນມາເປັນຜູ້ອື່ນ. ບັນດາສະມາຊິກຂອງ ບັນດາສຳພັນຕະພາບເຊື້ອຊົນບໍ່ສາມາດຈະຊຸມນຸມກັນ ເພື່ອແກ້ໄຂວຽກງານລວມຂອງເຂົາເຈົ້າອີກຄືແຕ່ກ່ອນ; ມີແຕ່ບັນດາວຽກງານທີ່ບໍ່ສຳຄັນເຊັ່ນວ່າພິທີຕ່າງໆຂອງສາສະໜາຈຶ່ງຍັງຖືກເຂົາເຈົ້າພະຍາຍາມຮັບປະກັນຢູ່ຄຽງຂ້າງກັບບັນດາຄວາມຮຽກຮ້ອງຕ້ອງການ ແລະ ບັນດາຜົນ ປະໂຫຍດຊຶ່ງບັນດາເຊື້ອຊົນມີພາລະກຳຕ້ອງມີການຮັບປະກັນ ແລະ ໄດ້ຮັບການຈັດຕັ້ງຢ່າງເໝາະສົມ ເພື່ອເຮັດໃຫ້ໄດ້ນັ້ນ, ການປີ້ນປ່ຽນບັນດາເງື່ອນໄຂການຜະລິດ ແລະ ບັນດາຄວາມປ່ຽນແປງພາຍໃນ ໂຄງປະກອບສັງຄົມໂດຍແມ່ນການປີ້ນປ່ຽນດັ່ງກ່າວເປັນຜູ້ອື່ນ, ມັນໄດ້ໃຫ້ການກຳເນີດຄວາມຮຽກຮ້ອງຕ້ອງການໃໝ່ຕ່າງໆ ແລະ ຜົນປະໂຫຍດໃໝ່ຕ່າງໆ, ບັນດາຄວາມຮຽກຮ້ອງຕ້ອງການ ແລະ ຜົນປະໂຫຍດນັ້ນບໍ່ພຽງແຕ່ແຕກຕ່າງກັບລະບອບເຊື້ອຊົນບູຮານ ຫາກຍັງຝືນຕໍ່ລະບອບການ ດັ່ງກ່າວຢູ່ໃນທຸກດ້ານ: ຜົນປະໂຫຍດຂອງບັນດາວຸດຫັດຖະກຳ ໄດ້ປະກົດອອກມາໂດຍອີງອາໄສການແບ່ງງານ, ແລະ ບັນດາຄວາມ ຮຽກຮ້ອງຕ້ອງການເປັນພິເສດຂອງຕົວເມືອງ, ຝືນຕໍ່ຊົນນະບົດ, ຮຽກຮ້ອງໃໝ່ບັນດາອົງການໃໝ່; ແຕ່ວ່າແຕ່ລະວຸເຫຼົ່ານັ້ນລວມປະກອບດ້ວຍບັນດາສະມາຊິກຂອງເຊື້ອຊົນພົງເຜົ່າຕ່າງກັນທີ່ສຸດ, ແລະ ຈົນກະທັ້ງ ຍັງປະກອບດ້ວຍຄົນທີ່ມາຈາກບ່ອນອື່ນອີກດ້ວຍ; ຍ້ອນແນວນັ້ນ ບັນດາອົງການ

ໃຫ່ມດັ່ງກ່າວຕ້ອງປະກົດຕົວອອກມາຢູ່ນອກລະບອບເຊື້ອຊົນ, ຢູ່ຄຽງຂ້າງ
ກັບມັນແລະໃນຂະນະດຽວກັນກໍຝືນຕໍ່ມັນເອງ. - ຢູ່ໃນແຕ່ລະອົງ ການ
ຈັດຕັ້ງເຊື້ອຊົນ, ກໍພັດນິການປະທະກັນທາງດ້ານຜົນປະໂຫຍດແນວນັ້ນ,
ການປະທະກັນດັ່ງກ່າວບັນລຸເຖິງລະດັບສັບສົນທີ່ສຸດຢູ່ບ່ອນໃດ ຊຶ່ງບັນດາ
ຄົນຮັ່ງ ແລະ ຄົນທຸກ, ເຈົ້າໜີ້ ແລະ ລູກໜີ້ລວມຮ່ວມຊຸມນຸມກັນຢູ່ໃນ
ເຊື້ອຊົນໜຶ່ງ ແລະ ຢູ່ໃນກົກເຫລົ່າອັນດຽວກັນ. - ຕື່ມໃສ່ນັ້ນພັດຍັງມີ
ພົນລະເມືອງໃຫ່ມເປັນຈຳນວນຫລວງຫລາຍ, ຫມູ່ຄົນເຫລົ່ານີ້ບໍ່ຂຶ້ນ ກັບ
ບັນດາກອມມູນເຊື້ອຊົນ, ເຊັ່ນຢູ່ໂຣມ , ເຂົາເຈົ້າອາດຈະກາຍ ເປັນ
ກຳລັງໜຶ່ງໃນປະເທດ, ແຕ່ວ່າພັດເປັນຈຳນວນຫລາຍເກີນໄປ, ສະ
ນັ້ນບໍ່ສາມາດຄ່ອຍໆເຂົ້າ ຮ່ວມຢູ່ໃນບັນດາເຊື້ອຊົນ ແລະ ບັນດາ ກົກ
ເຫລົ່າທີ່ໄດ້ສ້າງຕັ້ງຂຶ້ນ ບົນພື້ນຖານເຊື້ອສາຍໄດ້. ຕໍ່ໜ້າພົນລະເມືອງ
ໃຫ່ມທີ່ເປັນຈຳນວນຫລວງຫລາຍດັ່ງກ່າວ, ບັນດາກອມມູນເຊື້ອຊົນກາຍ
ເປັນບັນດາກຸ່ມຄົນທີ່ມີລັກສະນະອັດປະຕູ ແລະ ມີອະພິສິດ, ລະບອບປະ
ຊາທິປະໄຕປະຖົມບູຮານປະກົດຕົວຂຶ້ນຢ່າງທຳມະຊາດ, ໄດ້ກາຍເປັນລະ
ບອບຊຸມນາງອັນເປັນຕາຊັງ. - ທ້າຍສຸດ, ລະບອບເຊື້ອຊົນ ໄດ້ກຳ
ເນີດອອກມາຈາກສັງຄົມໜຶ່ງ ຊຶ່ງໃນນັ້ນຄົນເຮົາບໍ່ຮູ້ເຖິງຂໍ້ຂັດແຍ້ງແນວ
ໃດເລີຍ ແລະ ມັນພຽງແຕ່ສອດຄ່ອງກັບສັງຄົມແບບນັ້ນເທົ່ານັ້ນເອງ..
ນອກຈາກຄຳວິພາກວິຈານເລົ່າລືກັນຂອງປວງປະຊາຊົນແລ້ວ, ມັນບໍ່ມີ
ເລ່ຫລ່ຽມໜີບເຕັງບັງຄັບແຕ່ຢ່າງໃດເລີຍ. ແຕ່ບັດນີ້ສັງຄົມໃຫ່ມ ແນວ
ໜຶ່ງໄດ້ກຳເນີດອອກມາແລ້ວ, ສັງຄົມໜຶ່ງຊຶ່ງຍອມບັນດາເງື່ອນ ໄຂ
ເສດຖະກິດແຫ່ງການຄົງຕົວຂອງມັນເອງ, ແລ້ວແບ່ງເປັນຄົນເສລີແລະ

ຂ້າທາດ, ເປັນພວກຮັ່ງມີໄປຊຸດຣິດ ແລະ ຫມູ່ຄົນທຸກຈົນເປັນຜູ້ຖືກ ຂູດຣີດ, ສັງຄົມໜຶ່ງຊຶ່ງບໍ່ພຽງແຕ່ບໍ່ສາມາດຈະແກ້ໄຂບັນດາດ້ານຝືນຕໍ່ ກັນເຫລົ່ານັ້ນໄດ້ເທົ່ານັ້ນ, ຫາກຍັງຊຸກຍູ້ມັນໄປເຖິງບ່ອນນັບມື້ນັບຂ້ຽວຂາດຍິ່ງຂຶ້ນ. ສັງຄົມໜຶ່ງຊຶ່ງເປັນແນວນັ້ນສາມາດຄົງຕົວໄດ້ພຽງແຕ່ໃນການຕໍ່ສູ້ຢ່າງບໍ່ຢຸດຢັ້ງ ແລະ ເປີດເຜີຍລະຫວ່າງຊົນຊັ້ນເຫລົ່ານັ້ນດ້ວຍ ກັນເທົ່ານັ້ນ, ຫລືວ່າຄົງຕົວຢູ່ພາຍໃຕ້ການຄອບຄອງຂອງກຳລັງທີສາມ, ກຳລັງນີ້, ຄ້າຍຄືວ່າຢືນຢູ່ເໜືອຊົນຊັ້ນຕ່າງໆ ທີ່ພວມຕໍ່ສູ້ນຳກັນ, ມັນໄດ້ມູດມອດການປະທະກັນຢ່າງເປີດເຜີຍລະຫວ່າງເຂົາເຈົ້າເອງແລະຢ່າງໜ້ອຍແນ່ນເພື່ອເຮັດໃຫ້ການຕໍ່ສູ້ທາງຊົນຊັ້ນເປັນໄປພາຍໃນ ຂົງເຂດເສດຖະກິດ, ພາຍໃຕ້ຮູບການໜຶ່ງໃນນາມການຕໍ່ສູ້ທີ່ຖືກກົດໝາຍ. ຍຸກສະໄໝແຫ່ງລະບອບເຊື້ອຊົນໄດ້ຜ່ານພົ້ນໄປແລ້ວ. ມັນໄດ້ຖືກມາງ ເພຍ້ອນການແບ່ງງານ ແລະ ຍ້ອນຜົນປອນຫລັງຂອງການແບ່ງງານອັນນີ້: ການແບ່ງປັນສັງຄົມ ເປັນຊົນຊັ້ນມັນໄດ້ຖືກ<u>ລັດ</u> ເປັນຜູ້ມາປ່ຽນແທນ.

ຟ. ອັງແກນ, "ຕົ້ນກຳເນີດຂອງຄອບຄົວ, ຂອງລະບອບກຳມະສິດສ່ວນຕົວ ແລະຂອງລັດ". ກ. ມາກ-ຟ. ອັງແກນ, ໂຮມບົດເລືອກເຟັ້ນ, ສຳນັກພິມຈຳໜ່າຍ ຊີເທີດ, ຮ່າໂນ້ຍ, ໑໙໗໑, ເຫລັ້ມ໔, ໜ້າ໓໘໗-໓໙໐.

ຄັດຈາກ ນິພົນ :

ຫລັກມູນຕ່າງໆ ຂອງ ລັດທິກອມມູນິດ

.....

ການປະຕິວັດດັ່ງກ່າວເກີດຂຶ້ນຢູ່ອັງກິດ ໃນເຄິ່ງຫລັງ ຂອງສັດຕະວັດກ່ອນ, ແລະ ຫລັງຈາກນັ້ນໄດ້ເກີດຂຶ້ນໃຫ່ມອີກຢູ່ທຸກໆປະເທດສີວິໄລໃນໂລກ. ການທີ່ມີການປະຕິວັດອຸດສາຫະກຳດັ່ງກ່າວນັ້ນ ກໍຍ້ອນວ່າ ມີການປະດິດສ້າງຈັກໃຊ້ອາຍນ້ຳ, ຈັກເຂັນຝ້າຍຊະນິດຕ່າງໆ ຈັກຕ່ຳຫູກ ແລະ ບັນດາເຄື່ອງປະກອບກົນຈັກອື່ນໆເປັນລວາດໆ. ແຕ່ວ່າ ກົນຈັກເຫລົ່ານັ້ນ - ແພງທີ່ສຸດ ແລະ ເນື່ອງຈາກນັ້ນມີແຕ່ບັນດານາຍທຶນໃຫ່ຍຈຶ່ງສາມາດນຳໃຊ້ມັນໄດ້ - ໄດ້ເຮັດໃຫ້ທົ່ວທັງແບບວິທີການຜະລິດທີ່ໄດ້ຄົງຕົວແຕ່ກ່ອນມາເຖິງປະຈຸບັນນີ້ມີການປ່ຽນແປງ ແລະ ໄລ່ບັນດາ ກຳມະກອນເກົ່າອອກຈາກການຜະລິດ, ເພາະວ່າສິນຄ້າຊຶ່ງກົນຈັກ ໄດ້ຜະລິດອອກມານັ້ນຖືກກ່ວາແລະດີກ່ວາ ຖ້າປຽບກັບສິນຄ້າຊຶ່ງ ກຳມະກອນໄດ້ຜະລິດອອກມາດ້ວຍຫລາເຂັນຝ້າຍ ແລະ ກີ່ຕ່ຳຫູກອັນບໍ່ບໍລິບູນ ຂອງຕົນ. ດ້ວຍວິທີນັ້ນ, ບັນດາກົນຈັກເຫລົ່ານັ້ນໄດ້ມອບອຸດສາຫະກຳ ທັງໝົດໃສ່ມືຂອງພວກນາຍທຶນໃຫ່ຍ ແລະ ເຮັດໃຫ້ຫລຸນຄ່າຂອງຊັບສິນ ບັດຈຳນວນນ້ອຍຫນັກນ້ອຍຫນາ, ບໍ່ເປັນຕານັບຂອງກຳມະກອນ ( ເຄື່ອງມື, ກີ່ຕ່ຳຫູກ, ໆລໆ...) ຫລຸດລົງຢ່າງສົມບູນ, ເພາະສະນັ້ນ ບໍ່ດົນ

ບ່ານໃດ, ພວກນາຍທຶນເລີຍໄດ້ກຳເອົາທຸກສິ່ງທຸກຢ່າງເຂົ້າໃນ ກຳມື ຂອງມັນເອງ, ສ່ວນກຳມະກອນນັ້ນບໍ່ເຫລືອໄວ້ແຕ່ຢ່າງໃດເລີຍ;ນັບແຕ່ ເວລານັ້ນແລ້ວ, ພາຍໃນຂະແໜງຜະລິດແຜ່ນແພເລີ່ມປະຕິບັດລະບອບ ໂຮງຈັກ, ເມື່ອເວລາໄດ້ມີທ່ວງໃຫ້ແກ່ການນຳໃຊ້ກົນຈັກ ແລະລະບອບ ໂຮງຈັກແລ້ວນັ້ນ, ລະບອບນັ້ນເລີຍແຜ່ຫລາຍຢ່າງໄວວາຢູ່ໃນ ທັງໝົດ ທຸກຂະແໜງອຸດສາຫະກຳອື່ນໆ, ເປັນຕົ້ນແມ່ນຢູ່ໃນຂະແໜງພິມ ໃສ່ ແຜ່ນແພ, ພິມປື້ມ, ຜະລິດເຄື່ອງກະເບື້ອງ ແລະ ປະດິດຜະລິດ ພັນ ຕ່າງໆ ທີ່ເປັນໂລຫະທາດ. ແຮງງານນັບມື້ນັບຖືກແບ່ງອອກຢ່າງກວ້າງ ຂວາງລະຫວ່າງກຳມະກອນດ້ວຍກັນ; ເພາະສະນັ້ນກຳມະກອນກ່ອນນີ້ຜູ້ ດຽວຕ້ອງເຮັດທຸກໜ້າວຽກຂອງວຽກງານໜຶ່ງ, ມາເຖິງດຽວນີ້ ພຽງ ແຕ່ຕ້ອງເຮັດພາກສ່ວນໜຶ່ງຂອງວຽກງານເທົ່ານັ້ນເອງ.ການແບ່ງງານ ດັ່ງກ່າວເຮັດໃຫ້ຄົນເຮົາສາມາດທຳການຜະລິດໄວວາກ່ວາ, ຈາກນັ້ນ ລາຄາຂອງມັນກໍ່ຖືກກວ່າເກົ່າ, ມັນໄດ້ເຮັດໃຫ້ການເຄື່ອນໄຫວຂອງກຳ ມະກອນແຕ່ລະຄົນພຽງເຫລືອໄວ້ແຕ່ຈັງຫວະໜຶ່ງສຸດທີ່ງ່າຍດາຍ, ຊ້ຳ ໄປຊ້ຳມາຢ່າງເປັນເນື່ອງນິດ, ແບບກົນຈັກໃດໜຶ່ງ, ການອອກ ແຮງ ງານຈັງຫວະດຽວກໍ່ສາມາດດຳເນີນດ້ວຍຈັກຫາກຄົງບັນລຸເຖິງຜົນ ສຳ ເລັດດີເກົ່າ ແລະ ຈົນກະທັ້ງດີກວ່າເກົ່າຫລາຍທີ່ສຸດ.

ມາກ - ອັງແກນ, ໂຮມບົດເລືອກ
ເຟັ້ນ, ເຫລັ້ມ ໑, ສຳນັກພິມ ຈຳ
ໜ່າຍ ຊຶເຫິດ, ຮ່າໂນ້ຍ,໑໙໘໐,
ໜ້າ ໔໔໑ - ໔໔໘ .

ຄັດຈາກ ນິພົນ :

ຕ້ານ ດຸຍຮົງ

.....

ບໍ່ວ່າໃນສັງຄົມໃດຊຶ່ງການຜະລິດ ຫາກຂະຫຍາຍຕົວຢ່າງເປັນໄປເອງນັ້ນ; - ແລະ ສັງຄົມປະຈຸບັນແມ່ນຢູ່ໃນກໍລະນີດັ່ງກ່າວ, - ມັນບໍ່ແມ່ນບັນດາຜູ້ທຳການຜະລິດມີຖານະກຳ ນົດຊີ້ຂາດຕໍ່ພາຫະນະ ການຜະລິດຕ່າງໆ, ຫາກກະໂຕພາຫະນະການຜະລິດພັດມີຖານະກຳໜົດຊີ້ຂາດຕໍ່ຜູ້ທຳການຜະລິດ. ພາຍໃນສັງຄົມໜຶ່ງແນວນັ້ນ, ບໍ່ວ່າໄມ້ວັດໃໝ່ໃດໃດ ຂອງການຜະລິດກໍຈຳເປັນຈະກາຍເປັນພາຫະນະໃໝ່ແນວໜຶ່ງຊຶ່ງປ່ອຍໃຫ້ພາຫະນະການຜະລິດມີຖານະກົດຂີ່ຜູກຫາດຕໍ່ຜູ້ທຳການຜະລິດ. ຂໍ້ນັ້ນຍິ່ງຖືກຕ້ອງໂດຍສະເພາະແມ່ນຕໍ່ອັນທີ່ເປັນໄມ້ວັດຂອງພື້ນຖານ ການຜະລິດກ່ອນເວລາກຳເນີດຂຶ້ນຂອງອຸດສາຫະກຳໃຫຍ່, ອັນເປັນໄມ້ ວັດແຂງກ່ວາໝູ່ໝົດ : ແມ່ນການແບ່ງງານ : ກະໂຕການແບ່ງ ງານໃຫຍ່ຄັ້ງທີໜຶ່ງ, ເຊິ່ງແມ່ນການຕັດແຍກຕົວເມືອງອອກຈາກຊົນນະບົດ, ໄດ້ກົດໜ່ວງພົນລະເມືອງຊົນນະບົດຢູ່ໃນວົງໂງ່ຈ້າມືດມົນ, ແລະ ໄດ້ກົດໜ່ວງຊາວຕົວເມືອງ ເຮັດໃຫ້ແຕ່ລະຄົນຕ້ອງຂຶ້ນກັບອາຊີບຫັດຖະກຳເອກະເທດຂອງຕົນ. ມັນໄດ້ມ້າງທຳລາຍບັນດາພື້ນຖານແຫ່ງການ ພັດທະນາ ກຳລັງນຶກຄິດຂອງພົນລະເມືອງຢູ່ຊົນນະບົດ, ແລະມ້າງທຳລາຍ

ພື້ນຖານແຫ່ງການພັດທະນາກຳລັງກາຍຂອງພົນລະເມືອງຢູ່ຕົວເມືອງ , ຖ້າແມ່ນວ່າຊາວນາຢຶດເອົາກຳມະສິດຕໍ່ດິນນາ ແລະ ຊາວຕົວເມືອງ ມີສິດເປັນເຈົ້າອາຊີບຫັດຖະກຳນັ້ນ, ດິນນາກໍຈະມີການກຳນົດຊື້ຂາດທັງຕໍ່ຊາວນາ ແລະ ອາຊີບຫັດຖະກຳ, ກໍກຳນົດຊື້ຂາດຕໍ່ຊ່າງຫັດຖະກຳ ອີກນຳ. ຄຽງຄູ່ກັບການແບ່ງງານ, ເຂົາເຈົ້າກໍແບ່ງທັງຄົນອີກດ້ວຍ.ການພັດທະນາສະເພາະແຕ່ຂະແໜງການເຄື່ອນໄຫວດຽວ ໄດ້ພາໃຫ້ ເຂົາເຈົ້າກ້າວເຖິງບ່ອນຕ້ອງເສຍສະລະທັງໝົດທຸກພອນສະຫວັນແຫ່ງກຳລັງກາຍ ແລະ ກຳລັງສະຕິປັນຍາອື່ນໆ. ການແບ່ງງານຍິ່ງມີການ ຂະຫຍາຍຕົວຂຶ້ນປານໃດ, ຄົນກໍຍິ່ງຊຸດໂຊມລົງປານນັ້ນ; ໃນສະໄໝໂຮງງານຫັດຖະກຳນັ້ນ ການແບ່ງງານພັດບັນລຸເຖິງລະດັບຂະຫຍາຍຕົວສູງທີ່ສຸດ, ໂຮງງານຫັດຖະກຳໄດ້ແບ່ງອາຊີບຫັດຖະກຳໜຶ່ງເປັນບັນດາ ຈັງຫວະຕ່າງຫາກແຕ່ລະພາກສ່ວນ ແລະ ມອບໃຫ້ແຕ່ລະຈັງຫວະ ດັ່ງກ່າວໃຫ້ນາຍຊ່າງສະເພາະຕ່າງຫາກຮັບຜິດຊອບເອົາ, ຖືວ່ານັ້ນແມ່ນ ວິຊາອາຊີບຕະຫລອດຊີວິດຂອງເຂົາເຈົ້າ, ຈາກນັ້ນຈຶ່ງຜູກມັດກຳມະກອນ ຜູ້ນັ້ນເຂົ້າໃນພາກສ່ວນໜຶ່ງຂອງວຽກງານທີ່ແນ່ນອນຕະຫລອດຊີວິດ ແລະ ເຂົ້າໃສ່ເຄື່ອງມືອັນໜຶ່ງທີ່ແນ່ນອນ.

ໂຮງງານຫັດຖະກຳໄດ້ເຮັດໃຫ້ຊາວອອກແຮງງານກາຍເປັນ ຄົນຂະຫຍາຍຕົວບໍ່ສະໝ່ຳສະເໝີ, ເຮັດໃຫ້ເຂົາເຈົ້າກາຍເປັນສິ່ງໜຶ່ງທີ່ແປກປະຫລາດ, ດ້ວຍວິທີຊຸກຍູ້ການຂະຫຍາຍຕົວຄວາມຊຳນິ ຊຳນານຂອງເຂົາເຈົ້າຢ່າງປອມແປງໃນບັນດາໜ້າວຽກລະອຽດ, ພ້ອມກັນນັ້ນກໍເຮັດໃຫ້ເສຍພອນສະຫວັນ ແລະ ຄວາມປະດິດສ້າງທີ່ມີມາແຕ່ ເດີມ

ໂດຍບໍ່ຈັກເທື່ອໃດໝົດ...ຕັ້ງແມ່ນກະໂຕຄົນເຮົາເອງຖືກແບ່ງອອກ . ກາຍເປັນສະປິງອັດຕະໂນມັດອັນໜຶ່ງຂອງຈັງຫວະໜຶ່ງຊຳນານ ວິຊາ ກວ່າໝູ່ໝົດ (໑) . ສະປິງອັນນີ້ໃນຫລາຍກໍລະນີ, ພຽງສາມາດກ້າວ ເຖິງບ່ອນດີເລີດ, ດ້ວຍວິທີທຳລາຍກຳລັງກາຍ ແລະ ກຳລັງສະຕິ ປັນ ຍາຂອງຊາວກຳມະກອນຢ່າງແທ້ຈິງ. ພື້ນຖານການຜະລິດທີ່ຜະລິດດ້ວຍ ກົນຈັກຂອງພື້ນຖານອຸດສາຫະກຳໃຫຍ່ພັດຍິ່ງເຮັດໃຫ້ກຳມະກອນຕ່ຳຕ້ອຍ ລົງຈາກບ່ອນເຂົາເຈົ້າເປັນຈັກອັນໜຶ່ງ ເຖິງບ່ອນງ່າຍໆເປັນພຽງພາກ ສ່ວນເຄື່ອງອາໄຫລ່ຂອງເຄື່ອງຈັກອັນໜຶ່ງ.

ໃນຄາວກ່ອນ, ການຜະລິດສະເພາະແມ່ນນຳໃຊ້ແຕ່ພຽງເຄື່ອງມື ສະເພາະຕ່າງຫາກ ແຕ່ຢ່າງດຽວຕະຫລອດຊີວິດ, ດຽວນີ້ມັນກາຍເປັນ ການຜະລິດສະເພາະແມ່ນພຽງແຕ່ນຳໃຊ້ເຄື່ອງຈັກສະເພາະ ຕ່າງຫາກ ອັນໜຶ່ງຕະຫລອດຊີວິດ. ເຂົາເຈົ້າສວຍໃຊ້ກົນຈັກເພື່ອຫັນຊາວ ກຳມະ ກອນຕັ້ງແຕ່ເວລາເຂົາຍັງອ່ອນນ້ອຍທີ່ສຸດໃຫ້ກາຍເປັນພາກສ່ວນ ໜຶ່ງ ຂອງເຄື່ອງຈັກອັນໜຶ່ງສະເພາະຕ່າງຫາກ (໒) .

ແລະ ການແບ່ງງານບໍ່ພຽງແຕ່ຈຳໃຫ້ກຳມະກອນຕ້ອງຂຶ້ນ ກັບ ເຄື່ອງມືແຫ່ງການເຄື່ອນໄຫວຂອງເຂົາເອງ, ຫາກຍັງຈຳໃຫ້ບັນດາຊົນ ຊັ້ນທີ່ຂູດຣີດກຳມະກອນໂດຍກົງຫລືໂດຍທາງອ້ອມ ກໍຕ້ອງຂຶ້ນກັບເຄື່ອງມື

---

(໑) ຊຸດທຶນ, ຫົວ ໑, ເຫລັ້ມ໒, ໜ້າ ໔໙ - ໕໐, ສະບັບເປັນ ພາສາຝະລັ່ງ, ສຳນັກພິມຈຳໜ່າຍສັງຄົມ, ປາຣີ, ໑໙໔໘ (ບ.ກ.).

(໒) ກ.ມາກ, ຊຸດທຶນ, ເປັນພາສາລັດເຊຍ, ຫົວ໑, ໜ້າ ໔໒໗.

ດັ່ງກ່າວ; ນາຍທຶນ, ຈິດໃຈຂອງເຂົາຖືກເຊື່ອມຊາມ, ກາຍເປັນ ຂ້າທາດຂອງອັນທີ່ເປັນທຶນຂອງເຂົາເອງ ແລະ ຂອງກະໂຕການແລ່ນ ໄປຕາມກຳໄລຢ່າງ ປ່ວງບ້າຂອງເຂົາ; ນັກກົດໝາຍກໍເປັນຂ້າທາດ ໃຫ້ແກ່ບັນດາແນວຄິດອັນແຂງກະດ້າງທາງດ້ານ ກົດໝາຍຂອງເຂົາ, ແນວຄິດເຫລົ່ານັ້ນຄອບຄອງເຂົາເໝືອນດັ່ງກຳລັງແຮງແນວໜຶ່ງທີ່ເປັນເອກກະລາດ; ບັນດາຊົນຊັ້ນທີ່ມີຄວາມຮູ້ " ເວົ້າລວມແມ່ນຕົກເປັນຂ້າທາດຍ້ອນບັນດາຄວາມລຳອຽງທ້ອງຖິ່ນທີ່ເປັນກອງໜຶ່ງ ແລະ ຍ້ອນຄວາມຕ່ຳຊ້າ, ຍ້ອນລັກສະນະສາຍຕາສັ້ນທາງດ້ານກຳລັງ ກາຍ ແລະ ກຳລັງສະຕິປັນຍາຂອງກະໂຕເຂົາເອງ, ຍ້ອນສະພາວະພິການຂອງ ເຂົາເນື່ອງຈາກການສຶກສາອ່ຽງໄປໃສ່ວິຊາສະເພາະແນວດຽວ ແລະ ຍ້ອນສະພາວະເຂົາຖືກຜູກມັດໃສ່ກະໂຕວິຊາສະເພາະແນວນັ້ນຈົນຕະຫລອດຊີວິດ, ເຖິງອັນນັ້ມັນເປັນພຽງວິຊາສະເພາະຊະນິດໜຶ່ງຊຶ່ງມີຜົນ ຮ້າຍອ້ອຍຕ້ອຍເທົ່ານັ້ນກໍຕາມ.

ຟ. ອັງແກນ, ຕ້ານ ດູຍຣິງ, ສຳ
ນັກພິມຈຳໜ່າຍ ຊິເທີດ,ຮ່າໂນ້ຍ,
໑໙໗໑, ໜ້າ ໔໙໙ - ໔໐໘.

ຄັດຈາກ ນິພົນ :
ກ່ຽວກັບອັນທີ່ເອີ້ນວ່າບັນຫາຕະຫລາດ

.....

ຂໍ້ສະຫລຸບທີໜຶ່ງ: ຄວາມຄິດ " ຕະຫລາດ "ບໍ່ສາມາດຈະແຍກອອກຈາກຄວາມຄິດແບ່ງງານ, - ການແບ່ງງານນີ້, ຄືມາກໄດ້ ເວົ້າມາແລ້ວນັ້ນ' ມັນເປັນ " ພື້ນຖານລວມຂອງທຸກພື້ນຖານການຜະລິດສິນຄ້າ " ( ແລະ ຈາກນັ້ນ - ພວກເຮົາຂໍເວົ້າຕື່ມ - ມັນເປັນພື້ນຖານຂອງພື້ນຖານການຜະລິດທຶນນິຍົມ ). ຖ້າແນມວ່າບ່ອນໃດ ແລະເວລາໃດຫາກມີການແບ່ງງານສັງຄົມ ແລະ ມີການຜະລິດສິນຄ້າ, ຢູ່ບ່ອນນັ້ນ ແລະ ໃນເວລານັ້ນ, ກໍ່ມີ " ຕະຫລາດ " ຂະໜາດຂອງຕະຫລາດຕິດແໜ້ນກັບລະດັບທັນເປັນວິຊາສະເພາະຂອງແຮງງານສັງຄົມ.

" ສິນຄ້າພຽງຖືຮູບພານສິ່ງທີ່ມີມູນຄ່າເທົ່າທຽມລວມຊຶ່ງຖືກສັງຄົມຮັບຮູ້, ເມື່ອເວລາມັນຢູ່ຮູບການເງິນ, ແຕ່ເງິນຕາພັດຢູ່ໃນຖົງຂອງ ຜູ້ອື່ນ, ຢາກຈິກເອົາເງິນອອກມາຈາກຖົງຂອງຜູ້ອື່ນນັ້ນ, ກ່ອນອື່ນ ໝົດແມ່ນສິນຄ້າຕ້ອງເປັນມູນຄ່າໃຊ້ສອຍຕໍ່ຄົນມີເງິນ, ແລະ ແຮງງານທີ່ຖືກສິ້ນເປືອງໃນການຜະລິດສິນຄ້າດັ່ງກ່າວຕ້ອງເປັນການສິ້ນເປືອງພາຍໃຕ້ຮູບການທີ່ມີຜົນດີໃຫ້ແກ່ສັງຄົມ, ເວົ້າໄປຢ່າງໜຶ່ງ, ແຮງງານດັ່ງກ່າວ ຕ້ອງເປັນພາກສ່ວນໜຶ່ງໃນໂຄງປະກອບຂອງການແບ່ງງານສັງຄົມ. ແຕ່

ວ່າການແບ່ງງານພັດເປັນຮ່າງກາຍແຫ່ງການຜະລິດຊຶ່ງຖືກກໍ່ຮູບຂຶ້ນຢ່າງທຳມະຊາດ, ຮ່າງກາຍໜຶ່ງຊຶ່ງບັນດາອະໄວຍະວະຂອງມັນໄດ ເກາະແໜ້ນ ແລະ ຈະສືບຕໍ່ເກາະແໜ້ນນຳກັນຫາກບັນດາຜູ້ທຳການຜະລິດບໍ່ສາມາດຮູ້ເຫັນມັນໄດ້. ອາດຈະແມ່ນວ່າ, ສິນຄ້າເປັນຜະລິດພັນ ແຫ່ງແຮງງານໃຫ່ມຊະນິດໜຶ່ງ, ໝາຍວ່າຊະນິດແຮງງານສຳຫລັບຕອບສະໜອງຄວາມຕ້ອງການໃຫ່ມແບວໜຶ່ງຫລືວ່າຈາກການກຳເນີດຂອງ ຕົນເລີຍພາໃຫ້ເກີດຄວາມຕ້ອງການໃໝ່. ຈັ່ງຫວະພິເສດໃນຂະບວນ ວິວັດແຫ່ງການອອກແຮງງານ, ນີ້ວານນີ້ຍັງເປັນໜຶ່ງໃນຫລາຍພາລະບົດບາດຂອງຜູ້ຜະລິດສິນຄ້າດຽວ, ນັ້ນມັນອາດຈະແຍກອອກຂະບວນ ວິວັດດັ່ງກ່າວ, ຕັ້ງຕົວຢູ່ຕ່າງຫາກ, ແລະ ຕັ້ງແມ່ນຍອມແບວນັ້ນຈຶ່ງສາມາດນຳເອົາຜະລິດຕະພັນພາກສ່ວນຂອງມັນອອກສູ່ຕະຫລາດເປັນສິນຄ້າເອກກະລາດແບວໜຶ່ງ ( " Dascapital" IBDS' ໑໔ ໑ )
ເຮົາເອງເປັນຜູ້ຂຽນເປັນຕົວ ຫ່ຽງ .

ສະນັ້ນຂີດຂັ້ນແຫ່ງຄວາມຂະຫຍາຍຕົວຂອງຕະຫລາດໃນສັງຄົມທຶນນິຍົມແມ່ນຍ້ອນຂີດຂັ້ນແຫ່ງການໜັນແຮງງານສັງຄົມເປັນການຜະລິດ ສະເພາະເປັນຜູ້ຕັດສິນຊີ້ຂາດ. ແຕ່ການໜັນເປັນການຜະລິດສະເພາະ ດັ່ງກ່າວຖ້າພິຈາລະນາທາງດ້ານທາດແທ້ຂອງມັນແມ່ນບໍ່ສິ້ນບໍ່ສຸດ, ທັງນີ້ກໍເໝືອນກັນກັບຄວາມກ້າວໜ້າຂອງເຕັກນິກນັ້ນແລ້ວ, ຢາກຍົກສູງ ສະມັດຖະພາບຂອງງານຊຶ່ງຄົນເຮົານຳໃຊ້ເຂົ້າໃນການປະດິດພາກສ່ວນໃດໜຶ່ງຂອງຜະລິດພັນອັນຄົບຖ້ວນອອກມານັ້ນ, ແມ່ນຕ້ອງເຮັດໃຫ້ການຜະ

(໑) "ຊຸດທຶນ ", ຫົວ ໑, ໜ້າ ໑໔.

ລິດພາກສ່ວນດັ່ງກ່າວກາຍເປັນການຜະລິດສະເພາະ ແລະ ການເປັນຂະແໜງການຜະລິດສະເພາະຕ່າງຫາກ; ປະດິດຜະລິດພັນອອກມາໄດ້ເປັນລວາດ ແລະ ຍ້ອນເຫດນັ້ນຈຶ່ງສາມາດ (ແລະຈຳເປັນຕ້ອງ) ນຳໃຊ້ກົນຈັກ, ໆລໆ... ນັ້ນແມ່ນດ້ານໜຶ່ງ, ດ້ານໜຶ່ງອີກ, ຢູ່ໃນສັງຄົມທຶນນິຍົມ, ຄວາມກ້າວໜ້າທາງດ້ານເຕັກນິກແມ່ນຢູ່ບ່ອນວ່າ ຫັນແຮງງານໃຫ້ເປັນແຮງງານສັງຄົມ; ການຫັນແຮງງານໃຫ້ເປັນແຮງງານສັງຄົມນີ້ແນ່ນອນວ່າຮຽກຮ້ອງໃຫ້ບັນດາພາລະບົດບາດທີ່ຕ່າງກັນຂອງ ຂະບວນວິວັດແຫ່ງການຜະລິດໃຫ້ກາຍເປັນບັນດາພາລະບົດບາດສະເພາະ, ຕ້ອງຫັນບັນດາພາລະບົດບາດດັ່ງກ່າວຈາກບ່ອນເປັນກະແຈກກະຈາຍ , ເອກະເທດ, ຊ້ຳໄປຊ້ຳມາຢ່າງເປັນສະເພາະຕ່າງຫາກພາຍໃນແຕ່ລະວິສາຫະກິດຜະລິດສະເພາະແຕ່ຂະແໜງການຜະລິດນັ້ນ, ໃຫ້ກາຍເປັນບັນດາພາລະບົດບາດທີ່ຖືກພັນແຍກຍ້ອນສັງຄົມ, ເຕົ້າໂຮມເຂົ້າໃນວິສາຫະກິດໃຫ່ມແຫ່ງໜຶ່ງ, ແລະ ເລັ່ງໃສ່ຕອບສະໜອງຄວາມຮຽກ ຮອງຕ້ອງການຂອງທົ່ວສັງຄົມ. ຂໍຍົກຕົວຢ່າງດັ່ງຕໍ່ໄປນີ້:

" ເມື່ອມໍ່ໆນີ້, ຢູ່ສະຫະລັດອະເມລິກາເໜືອ, ບັນດາໂຮງງານປຸງແຕ່ງໄມ້ນັບມື້ນັບຖືກຫັນເປັນການຜະລິດສະເພາະ; ເປັນຕົ້ນວ່າ ມີຫລາຍໂຮງງານພຽງແຕ່ປະດິດດ້າມຂວານ, ກ້ານຟອຍ, ຫລື ໂຕະພັບ ... ຂະແໜງກົນຈັກໄດ້ຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ, ປະດິດເຄື່ອງຈັກໃຫ່ມອອກມາເປັນເນື່ອງນິດ ເຮັດໃຫ້ການຜະລິດດ້ານໃດດ້ານ ໜຶ່ງງ່າຍລົງ, ແລະ ເຮັດໃຫ້ຄວາມສິ້ນເປືອງໃນການຜະລິດນັ້ນລົດຜ່ອນລົງ ... ແຕ່ລະຂະແໜງການ, ສົມມຸດຄື ຂະແໜງປະດິດເຄື່ອງໄມ້ ,

ກາຍເປັນຂະແໜງຜະລິດສະເພາະ, ມັນຮຽກຮ້ອງໃຫ້ມີບັນດາກົນຈັກສະເພາະແລະບັນດາກຳມະກອນຜະລິດສະເພາະ...ຢູ່ໃນຂະແໜງ ການຜະລິດລົດມ້າ, ກົງລົດຖືກຜະລິດຢູ່ໃນບັນດາໂຮງງານຜະລິດສະເພາະ (ຢູ່ມິດຊູຣີ, ອາກການຊ້າດ, ເຕແນດຊີ) ອໍ້ວຖືກຜະລິດອອກມາຢູ່ອິນດີ ອານາ ແລະໂອຮາຍໂອ; ເພົາພັດຖືກຜະລິດຢູ່ໃນບັນດາໂຮງງານຜະລິດ ສະເພາະຢູ່ແກນຕຸກກີແລະອິລີນົວ. ບັນດາໂຮງງານທີ່ຜະລິດສະເພາະແຕ່ຕົບລົດທັງໝົດພັດຕ້ອງຊື້ບັນດາພາກສ່ວນຍ່ອຍສະເພາະຕ່າງໆຫາກເຫຼົ່ານັ້ນ. ດັ່ງນັ້ນໝາຍວ່າມີເປັນສິບໆໂຮງງານເຂົ້າຮ່ວມໃນການຜະລິດລົດມ້າຄັນໜຶ່ງໂດຍມີລາຄາຖືກຄືແນວນັ້ນ " ( ທ່ານຕແວັກສໂກຍ: " ສິບປີທີ່ຢູ່ອາເມລິກາ ", ລົງພິມໃນ " ສື່ງຂ່າວທະວີບເອີຣົບ ", ປີ ໑໘໙໖, ສະບັບທີ ໑. ຕອນນີ້ແມ່ນໄດ້ຄັດອອກຕາມນິກໂອນ, ໜ້າ ໙໑, ໝາຍເຫດທີ ໑ ).

ດັ່ງນັ້ນເປັນການຜິດພາດທີ່ສຸດຖ້າແມ່ນຢືນຢັນຢ່າງເດັດຂາດ ວ່າຢູ່ໃນສັງຄົມ, ການແຜ່ຂະຫຍາຍຕະຫລາດຊຶ່ງເກີດມາຈາກການທັນ ແຮງງານສັງຄົມເປັນການຜະລິດສະເພາະຈຳເປັນຕ້ອງຢູ່ຄືລົງໂດຍທັນ ທີເມື່ອເວລາຜູ້ທີ່ທຳການຜະລິດທາງມູນຕົບຂອງຫາກໄດ້ກາຍເປັນຜູ້ ຜະລິດສິນຄ້າ. ຂະແໜງການຜະລິດລົດມ້າຢູ່ໃນລັດເຊຍໄດ້ກາຍເປັນ ຂະແໜງການຜະລິດສິນຄ້າຕັ້ງແຕ່ດົນແລ້ວ, ແຕ່ວ່າຕົບລົດຖີບຍັງຄົງ ແມ່ນສະເພາະແຕ່ລະໂຮງງານຜະລິດລົດ ( ຫລືເຮັດຕົບລົດ ) ຫາກຜະລິດ

---

(໑) ພາສາຝະລັ່ງ: Tables à rallonges ( ຜູ້ແປ).

ເອົາເອງ; ເຕັກນິກກໍ່ຕ່ຳ, ການຜະລິດກໍຖືກແຈກຢາຍໃຫ້ຫລາຍຄົນຜະລິດຢ່າງກະແຈກກະຈາຍ. ຄວາມກ້າວໜ້າຂອງເຕັກນິກແນ່ນອນ ຕ້ອງພາໄປເຖິງບ່ອນຫັນເປັນການຜະລິດສະເພາະ, ຫັນບັນດາພາກສ່ວນຜະລິດໃຫ້ກາຍເປັນການຜະລິດສັງຄົມ. ແລະ ຈາກນັ້ນກໍພາໄປເຖິງ ບ່ອນຕະຫລາດຖືກຂະຫຍາຍກ້ວາງອີກຕື່ມ.

ຢູ່ທີ່ນີ້ຈຳເປັນຕ້ອງເວົ້າຕື່ມອີກນ້ອຍໜຶ່ງ. ທຸກປະການທີ່ໄດ້ ກ່າວມາຂ້າງບົນບໍ່ຫ່ອນປະຕິເສດບົດທະຍັນທີ່ຖືວ່າຖ້າບໍ່ມີຕະຫລາດພາຍ ນອກນັ້ນ ປະເທດທຶນນິຍົມໜຶ່ງກໍບໍ່ສາມາດຈະຄົງຕົວຢູ່ໄດ້. ໃນລະບອບການຜະລິດທຶນນິຍົມ, ການດຸ່ນດ່ຽງລະຫວ່າງການຜະລິດ ແລະການໃຊ້ສອຍພຽງມີມາພາຍຫລັງການຜັນແປຫລາຍເທື່ອ; ການຜະລິດຍິ່ງໃຫ່ຍໂຕ , ຈຳນວນຜູ້ໃຊ້ສອຍ ຊຶ່ງພື້ນຖານການຜະລິດດັ່ງກ່າວຕ້ອງຮັບໃຊ້, ຍິ່ງຫລາຍ, ບັນດາການຜັນແປເຫລົ່ານັ້ນກໍແຮງຍິ່ງຂຶ້ນ. ສະນັ້ນກໍເປັນ ອັນເຂົ້າໃຈງ່າຍແລ້ວວ່າ, ເມື່ອເວລາພື້ນຖານການຜະລິດທຶນນິຍົມ ໄດ້ມີການຂະຫຍາຍຕົວຂຶ້ນສູ່ລະດັບສູງນັ້ນ, ມັນກໍບໍ່ສາມາດພຽງຈຳກັດຢູ່ ໃນປະຊາຊາດໜຶ່ງໄດ້ອີກ: ການແກ່ງແຍ່ງຈຳໃຫ້ບັນດານາຍທຶນຕ້ອງນັບມື້ນັບເປີດກ້ວາງການຜະລິດ ແລະ ຊອກຫາເອົາຕະຫລາດພາຍນອກເພື່ອຊຳລະຜະລິດພັນຂອງຕົນໄດ້ໃຫ້ຫລາຍ. ເປັນອັນແນ່ນອນວ່າ ,ປະເທດທຶນນິຍົມໜຶ່ງໆ ຕ້ອງມີຕະຫລາດພາຍນອກ, ບັນຫານັ້ນພິດກັບກົດເກນທີ່ວ່າ: ຢູ່ໃນພື້ນຖານເສດຖະກິດສິນຄ້າ, ຕະຫລາດຖ້າເວົ້າແຫມັ້ນກໍເປັນປະກົດການແຫ່ງການແບ່ງງານສັງຄົມນັ້ນເອງ, ແລະ ເນື່ອງຈາກ ນັ້ນມັນສາມາດຂະຫຍາຍຕົວຂຶ້ນຢ່າງບໍ່ສິ້ນສຸດ, ກໍເຊັ່ນດຽວກັບການ ແບ່ງ

ງານນັ້ນເອງ, - ມັນກໍເໝືອນກັນກັບບັນດາຂັ້ນວິກິດການເສດຖະກິດບໍ່ຫ່ອນຜິດກັບກົດເກນມູນຄ່າ. ຄວາມເປັນຫ່ວງໄຍກ່ຽວກັບຕະຫລາດພຽງປະກົດອອກມາບົນບັນດາປຶ້ມ, ໜັງສືພິມລັດເຊຍໃນເມື່ອພື້ນຖານ ການຜະລິດທຶນນິຍົມຂອງບາງຂະແໜງການໃນປະເທດເຮົາ ( ເຊັ່ນວ່າອຸດສາຫະກຳຕ່ຳແຜ່ນເປັນຕົ້ນ ) ໄດ້ມີການພັດທະນາຢ່າງຄົບຖ້ວນ, ມັນໄດ້ກວມລວມເກືອບທົ່ວຕະຫລາດພາຍໃນປະເທດ ແລະ ໄດ້ສ້າງເປັນບາງໂຮງງານໃຫຍ່. ຫລັກຖານພະຍານອັນຈັດເຈນກ່ວາໝູ່ຊຶ່ງເຮັດໃຫ້ເຮົາເຫັນວ່າພື້ນຖານວັດຖຸຂອງບັນດາຄຳສົນທະນາກ່ຽວກັບຕະຫລາດ ແລະ ຂອງບັນດາ " ບັນຫາ " ຕະຫລາດຕັ້ງແມ່ນບັນດາຜົນປະໂຫຍດ ຂອງພື້ນຖານອຸດສາຫະກຳໃຫຍ່ທຶນນິຍົມຢູ່ໃນປະເທດເຮົານັ້ນເອງ - ຫລັກຖານພະຍານນັ້ນແມ່ນ: ຢູ່ໃນປຶ້ມ ແລະ ໜັງສືພິມຕ່າງໆ ຢູ່ໃນປະເທດເຮົາ, ບໍ່ທັນມີຜູ້ໃດຄາດຄະເນລ່ວງໜ້າວ່າ ຂະແໜງການ ຫັດຖະກຳປະເທດເຮົາຈະດັບສູນຍ້ອນວ່າ " ຕະຫລາດ " ຫາຍຕົວໄປ, ເຖິງແມ່ນວ່າ ຂະແໜງການຫັດຖະກຳນີ້ພວມຜະລິດໄດ້ມູນຄ່າກ່ວາໜຶ່ງຕື້ຮູບ. ແລະ ໄດ້ຜະລິດໃຫ້ແກ່ກະໂຕຈຳນວນ " ປະຊາຊົນ " ທີ່ໄດ້ກາຍເປັນຜູ້ທຸກຈົນນັ້ນເອງ. ບັນດາຄຳປ່າວຮ້ອງຂຶ້ນວ່າພື້ນຖານອຸດສາຫະກຳຂອງປະເທດເຮົາພວມດັບສູນ ຍ້ອນວ່າຂາຍຕະຫລາດນັ້ນ, ເວົ້າແທ້ມັນ ກໍເປັນພຽງຫລ່ຽມລາຍຊຶ່ງຖືກປົກປິດຢ່າງເຊີະຊະຊຶ່ງບັນດານາຍທຶນໃນປະເທດເຮົາໄດ້ສວຍໃຊ້ ເພື່ອກໍ່ເປັນກຳລັງຕ້ານຕໍ່ການເມືອງ; ເຂົາຖືວ່າຜົນປະໂຫຍດອັນເປັນຖົງເງິນຂອງເຂົາ ແລະ ຜົນປະໂຫຍດຂອງ "ປະເທດຊາດ " ແມ່ນເປັນອັນດຽວ ( ເຂົາຮັບສາລະພາບຢ່າງຄ່ຽມ ຄົມ

ວ່າ ເຂົາ "ໄຮ້ຄວາມສາມາດ"), ແລະສະແດງໃຫ້ເຫັນແຈ້ງວ່າເຂົາມີຄວາມສາມາດຊຸກຍູ້ລັດຖະບານໃຫ້ໄປຕາມເສັ້ນທາງນຳໃຊ້ນະໂຍບາຍຮຸກຮານປຶດເອົາເມືອງຂຶ້ນ, ຈົນກະທັ້ງຈ່ອງດຶງລັດຖະບານເຂົ້າສູ່ ສົງຄາມ ເພື່ອປ້ອງກັນຮັກສາບັນດາຜົນປະໂຫຍດ " ແຫ່ງຊາດ "ແບບນັ້ນຈຶ່ງຢູ່ແລ້ວວ່າຕ້ອງຕິດພະຍາດອະພິທຳທີ່ສຸດ ແລະ ໄຮ້ດຽງສາ ດັ່ງຝ່າຍປະຊາລາວຈຶ່ງສາມາດຮັບຮູ້ວ່າຄວາມປ່າວຮ້ອງວ່າດ້ວຍຕະຫລາດ -ບັນດາຢາດນ້ຳຕາແລະດັ່ງກ່າວຂອງຈີນຊັ້ນເຈົ້າຫົນ ໄດ້ຖືກປັບປຸງຢ່າງ ສົມບູນແລະ ປະຈຸບັນນີ້ໄດ້ສະແດງຄວາມອວດອ້າງທະນົງຕົວ - ເປັນຫລັກຖານພະຍານແນວໜຶ່ງຊຶ່ງສະແດງໃຫ້ເຫັນແຈ້ງຄວາມ "ໄຮ້ຄວາມສາມາດ" ຂອງລັດທິຫິນນິຍົມຢູ່ໃນປະເທດເຮົາ !

ວ.ອ.ເລນິນ, ຄົບຊຸດ, ເປັນພາສາຫວຽດນາມ, ສຳນັກພິມຈຳໜ່າຍໂປຼແກຣສ, ມົສກູ, ໑໙໗໔, ເຫລັ້ມ໑, ໜາ ໑໑໔ - ໑໑໗ .

ຄັດຈາກນິພົນ :

ວ່າດ້ວຍຈຸດພິເສດແຫ່ງລັດທິ

ເພີນຈິດເສດຖະສາດ

ພາກທີ ໑໑

ລັກສະນະແຫ່ງຄວາມຕຳໜິວິຈານ

ຂອງບັນດານັກເພີນຈິດນິຍົມ

ຕໍ່ລັດທິທຶນນິຍົມ.

.....

----
///
----

## ບັນດາພົນລະເມືອງ ອຸດສາຫະກຳເພີ່ມຂຶ້ນເຮັດໃຫ້ພົນ ລະເມືອງ ກະສິກຳ ຫລຸດລົງ.

ພວກເຮົາກັບຄືນມາເວົ້າກ່ຽວກັບຈິດສມົນດີ. ນອກຈາກການ ຫັນ ຈົນຊັ້ນເຈົ້າທຶນນ້ອຍເປັນອຸດົມຄະຕິ, ນອກຈາກຄວາມບໍ່ເຂົ້າໃຈ ຕາມ ແບບເພີນຈິດນິຍົມວ່າພາຍໃນລະບອບເສດຖະກິດສັງຄົມປະຈຸບັນ, "ຊາວ ນາ" ກາຍເປັນເຈົ້າທຶນນ້ອຍ ທັງນີ້ເພີ່ນຍັງມີທັດສະນະເປັນຕົວແທນ ຕໍ່ ປະກົດການພົນລະເມືອງກະສິກຳລົດລົງ ເຮັດໃຫ້ພົນລະເມືອງອຸດສາຫະ ກຳເພີ່ມຂຶ້ນ, ຄົນເຮົາລວມຮູ້ວ່າປະກົດການອັນນີ້ - ໜຶ່ງໃນບັນດາປະ ກົດການທີ່ເດັ່ນຂຶ້ນກ່ອນໝູ່ໝົດຂອງການພັດທະນາລັດທິທຶນນິຍົມພາຍໃນ

ປະເທດ - ທັງໝົດທຸກປະເທດສືວິໄລລວນມີມາ ແລະ ທັງຢູ່ໃນ ປະເທດລັດເຊຍກໍມີ (໑)

ໂດຍເປັນນັກເສດຖະສາດເດີ່ນໃນສະໄໝຂອງຕົນ, ແນ່ນອນວ່າ ຊິດສມົນດີ ບໍ່ສາມາດຈະບໍ່ມອງເຫັນຄວາມຈິງດັ່ງກ່າວ. ເພີ່ນຮັບຮູ້ຄວາມຈິງດັ່ງກ່າວຢ່າງເປີດເຜີຍ, ແຕ່ເພີ່ນບໍ່ເຂົ້າໃຈວ່າມັນມີຄວາມກ່ຽວ ພັນຢ່າງຈຳເປັນກັບການຂະຫຍາຍຕົວຂອງລັດທິທຶນນິຍົມ ( ຈີນກະທັ້ງເວົ້າຢ່າງສັງເຂບວ່າ : ຕໍ່ການແບ່ງງານສັງຄົມ, ຕໍ່ການຂະຫຍາຍຕົວຂອງພື້ນຖານເສດຖະກິດສິນຄ້າ ໂດຍແມ່ນການແບ່ງງານດັ່ງກ່າວເປັນຜູ້ ກໍ່ຂຶ້ນ ). ເພີ່ນພຽງແຕ່ກ່າວໂທດ ຂອງປະກົດການດັ່ງກ່າວເທົ່ານັ້ນ, ຖືວ່າມັນເປັນຂໍ້ບົກພ່ອງໃດໜຶ່ງຂອງ " ລະບອບການ ".

---

(໑) ຢູ່ໃນພາກສ່ວນປະເທດລັດເຊຍ ທີ່ຂຶ້ນກັບທະວີບເອີຣົບ ນັ້ນ ອັດຕາສ່ວນພົນລະເມືອງຂອງຕົວເມືອງເພີ່ມຂຶ້ນໃນໄລຍະຈູນຂອງ ການປະຕິຮູບ. ຢູ່ທີ່ນີ້, ພວກເຮົາພຽງຍົກອັນເປັນສັນຍາ ຊຶ່ງຫລາຍຄົນ ຮູ້ກວ່າໝູ່ອອກມາເທົ່ານັ້ນ, ເຖິງແມ່ນວ່າມັນ <u>ຍັງໄກ</u> ຈຶ່ງສະແດງ ອອກ<u>ຢ່າງຄົບຖ້ວນກ່ຽວກັບ</u> ປະກົດການທີ່ພວມຖືກພິຈາລະນາ, ເພາະວ່າມັນບໍ່ປະກອບດ້ວຍບັນດາຈຸດພິເສດທີ່ສຳຄັນຂອງປະເທດລັດເຊຍຖ້າປຽບກັບເອີຣົບຕາເວັນຕົກ. ຢູ່ທີ່ນີ້, ພວກເຮົາຈະບໍ່ໄຈ້ແຍກບັນດາ ຈຸດພິເສດເຫລົ່ານັ້ນ (ຊາວນາບໍ່ມີສິດໄປມາໂດຍເສລີ, ການຄົງຕົວຂອງບັນ ດາບ້ານ ຊຸດສາຫະກຳ ແລະ ໂຮງຈັກ, ລະບອບ ວິສາຫະກິດ ດິນນາ ພາຍໃນປະເທດ, ໆລໆ...).

ຫລັງຈາກໄດ້ບົ່ງແຈ້ງບັນດາຄວາມກ້າວໜ້າອັນຍິ່ງໃຫຍ່ຂອງການກະສິກຳອັງກິດແລ້ວ, ຊິດສມົນດີກ່າວວ່າ:

"ແຕ່ວ່າໃນເວລານິຍົມຊົມຊອບຕໍ່ບັນດາດິນນາທີ່ຖືກໄຖຄາດ ຢ່າງລະອຽດນັ້ນຈຶ່ງມອງເບິ່ງເຖິງຈຳນວນພົນລະເມືອງຊຶ່ງພວມປູກຝັງບົນບັນດາດິນນາເຫລົ່ານັ້ນ, ຈຳນວນເຫລົ່ານີ້ ພຽງແຕ່ທໍ່ກັນກັບເຄິ່ງໜຶ່ງຂອງຈຳນວນພົນລະເມືອງທີ່ພວມປູກຝັງບົນຕອນດິນນາຊ້ຳກັນຢູ່ປະເທດຝະລັ່ງ. ຕາມສາຍຕາຂອງນັກເສດຖະສາດບາງຄົນນັ້ນກໍ່ເປັນປະການໜຶ່ງທີ່ມີປະໂຫຍດ: ແຕ່ວ່າຕາມຄວາມເຫັນຂອງເຮົານັ້ນ, ນັ້ນເປັນສິ່ງທີ່ມີຜົນຮ້າຍ" ( ເຫລັ້ມ໑, ໜ້າ ໔[illegible] ).

ທັງນີ້ກໍ່ເປັນອັນເຂົ້າໃຈງ່າຍແລ້ວວ່າ ເປັນຫຍັງບັນດານັກຄົ້ນຄ້ວາທາງດ້ານແນວຄິດຂອງຊົນຊັ້ນນາຍທຶນພັດຖືປະກົດການດັ່ງກ່າວເປັນສິ່ງທີ່ມີປະໂຫຍດ ( ອີກຄາວໜຶ່ງພວກເຮົາຈະໄດ້ເຫັນວ່າການຕຳໜິວິຈານລັດທິນາຍທຶນຢ່າງມີວິທະຍາສາດກໍ່ເຫັນດີນຳຄວາມເຫັນອັນນີ້ ) ເຂົາເຈົ້າຖືວ່າ ນັ້ນແມ່ນການປະກົດຕົວຂຶ້ນແຫ່ງການເພີ່ມທະວີຂຶ້ນຂອງຊັບສົມບັດຂອງນາຍທຶນ, ຂອງການຄ້າ ແລະ ຂອງອຸດສາຫະກຳ. ດ້ວຍການກ່າວປະນາມ ປະກົດການດັ່ງກ່າວຢ່າງຟ້າວຟັ່ງ, ຊິດສມົນດີ ຫລົງລືມບໍ່ຄິດເຖິງສາຍເຫດແຫ່ງການກຳເນີດຂອງມັນ.

ເພິ່ນໄດ້ກ່າວວ່າ: " ຢູ່ຝະລັ່ງ ແລະ ຢູ່ອີຕາລີນັ້ນ, ເຂົາເຈົ້າໄດ້ຄິດໄລ່ວ່າສີ່ສ່ວນຫ້າຂອງພົນລະເມືອງແມ່ນຂຶ້ນກັບຊົນຊັ້ນຊາວນາ, ສະນັ້ນເຖິງວ່າລາຄາເຂົ້າເບຣຢູ່ຕ່າງປະເທດຈະເປັນແນວໃດກໍ່ຕາມ, ສີ່ສ່ວນຫ້າຂອງພົນລະເມືອງກໍ່ຄົງຈະຖືກລ້ຽງຊີບດ້ວຍເຂົ້າເບຣຂອງ ປະ

ເທດຕົນ " ( I, ໘໖໔). Fuit troja ! ກ່ຽວກັບບັນຫານີ້, ເຂົາເຈົ້າອາດຈະຮອງໂກກຂຶ້ນແນວນັ້ນ. ໃນປະຈຸບັນບໍ່ມີປະເທດໃດ ( ທັງຢູ່ໃນບັນດາປະເທດກະສິກຳກ່ວາໝູ່ໝົດ) ທີ່ບໍ່ຂຶ້ນກັບລາຄາເຂົ້າເບຣ ຢ່າງສົມບູນ. ໝາຍຄວາມວ່າຂຶ້ນກັບການຜະລິດເຂົ້າເບຣຕາມແບບວິທີ ການຜະລິດທຶນນິຍົມຢູ່ໃນໂລກ.

" ຖ້າຫາກວ່າປະເທດຊາດບໍ່ສາມາດຈະເພີ່ມຈຳນວນພົນ ລະເມືອງການຄ້າຂຶ້ນຕື່ມດ້ວຍວິທີອື່ນໃດໜຶ່ງນັ້ນ, ນອກຈາກການຮຽກຮ້ອງໃຫ້ແຕ່ລະຄົນຕ້ອງອອກແຮງງານຫລາຍກ່ວາອີກແຕ່ຄ່າແຮງງານພັດຄົງຄືເກົ່າຢູ່, ກໍແນ່ນອນວ່າມັນຕ້ອງຢ້ານການເພີ່ມພົນລະເມືອງອຸດສາຫະກຳຂຶ້ນຕື່ມ " ( I, ໓໘໘ ). ຜູ້ອ່ານທັງຫລາຍກໍເຫັນແລ້ວວ່າເວົ້າໃຫ້ເຖິງທີ່ສຸດ, ຖ້ອຍຄຳດັ່ງກ່າວພຽງເປັນບັນດາຄຳຕັກເຕືອນໂດຍມີ ເຈດຕະນາດີ, ແຕ່ວ່າມັນບໍ່ມີຄວາມໝາຍ ແລະ ບໍ່ມີປະໂຫຍດແຕ່ຢ່າງໃດ, ເພາະວ່າຢູ່ທີ່ນີ້ຄວາມສຳນຶກທີ່ວ່າ "ປະເທດຊາດ" ນັ້ນຖືກກໍ່ສ້າງຂຶ້ນບົນພື້ນຖານລະຖິ້ມບັນດາຂໍ້ຂັດແຍ່ງທີ່ຄົງຕົວລະຫວ່າງກາງຂອງບັນດາຊົນຊັ້ນຊຶ່ງປະກອບເປັນອັນທີ່ເປັນ " ປະເທດຊາດ " ດັ່ງກ່າວ ! ໝັ້ນໃຈ, ຈິດສົມບົດ ຍັງຄົງຫລີກລ່ຽງ ແຕ່ພຽງບັນດາຂໍ້ຂັດແຍ່ງເຫລົ່ານັ້ນດ້ວຍວິທີຫລັງຄອຍຢ່າງໄຮ້ດຽງສາວ່າ ... ບໍ່ມີຂໍ້ຂັດແຍ່ງ.

" ຢູ່ອັງກິດ. ການກະສິກຳພຽງກວມມີ ໗໗໐.໑໙໙ ຄອບຄົວເທົ່ານັ້ນ, ການຄ້າ ແລະ ໂຮງງານ: ໙໔໙.໖໓໘ ຄອບຄົວ, ບັນດາຊັ້ນຄົນອື່ນໆຂອງສັງຄົມ: ໔໑໓.໓໑໖ ຄອບຄົວ. ໃນຍອດຈຳນວນ - ໘.໑໔໓.໑໔໗ ຄອບຄົວ ຫລື ໑໐.໑໕໐.໖໑໔ ຄົນຊຶ່ງມີ ພົນລະເມືອງ

ພາກສ່ວນໜຶ່ງຫລວງຫລາຍຄືແນວນັ້ນໄດ້ດຳລົງຊີວິດດ້ວຍຊັບສິນບັດການຄ້ານັ້ນກໍເປັນອັນເປັນຕາຢ້ານແທ້ໆ ( effrayante ). ໂຊກດີແລ້ວວ່າປະເທດຝະລັ່ງຍັງໄກທີ່ສຸດຈຶ່ງຈະມີຈຳນວນ ກຳມະກອນຫລວງຫລາຍແນວນັ້ນຊຶ່ງມີຊີວິດຢູ່ໄດ້ໂດຍອີງອາໄສໂຊກລາງຂອງ ຕະຫລາດໜຶ່ງທີ່ຢູ່ໄກ " ( I , ໔໓໔ ),ຢູ່ທີ່ນີ້, ຊິດສມົນດີ ຄືຈຶ່ງ ລືມຈົນກະທັ້ງວ່າການທີ່ມີ " ໂຊກໝານ " ນີ້ກໍພຽງແຕ່ຍອມວ່າລັດທິທຶນນິຍົມຢູ່ໃນປະເທດຝະລັ່ງໄດ້ຂະຫຍາຍຕົວຊ້າ.

ເມື່ອເວລາວາດຂຽນຄວາມປ່ຽນແປງຕ່າງໆ ຊຶ່ງເພີ່ນຖືວ່າ"ເປັນຕາຢາກໄດ້" ໃນລະບອບການປະຈຸບັນ ( ພາຍຫລັງພວກເຮົາຈະກ່າວເຖິງຄວາມປ່ຽນແປງເຫລົ່ານີ້ ). ຊິດສມົນດີໄດ້ຊີ້ແຈງວ່າ: " ບໍ່ລະແວງສົງໃສຫຍັງເລີຍ, ໝາກຜົນ " ຂອງການປະຕິຮູບຕ່າງໆກໍຖືກ ກັບລົດນິຍົມຂອງຄົນເພີ່ນຈິດນິຍົມ ) ຈະເປັນແນວນີ້: ຫລາຍປະເທດ ຊຶ່ງພຽງດຳລົງຊີວິດດ້ວຍອຸດສາຫະກຳຈະສືບເນື່ອງກັນອັດປະຕູ ໂຮງງານຂອງຕົນຕັ້ງຫລາຍແຫ່ງ, ແລະ ຈຳນວນພົນລະເມືອງໃນຕົວເມືອງ ຊຶ່ງໃນຄາວກ່ອນໄດ້ເພີ່ມຂຶ້ນຢ່າງເຫລືອເກີນນັ້ນເຖິງປະຈຸບັນຈະຫລຸດ ລົງຢ່າງໄວວາ, ສ່ວນພົນລະເມືອງຊົນນະບົດນັ້ນກໍຈະເລີ່ມເພີ່ມຂຶ້ນ ອີກໃໝ່". ( II , ໓໖໗ ).

ຕົວຢ່າງທີ່ໄດ້ຍົກມາຂ້າງບົນໄດ້ເຮັດໃຫ້ລັກສະນະໄຮ້ຄວາມ ສາມາດຂອງການຕຳໜິວິຈານລັດທິທຶນນິຍົມຢ່າງມີຄວາມຮັກ ແລະ ຄວາມກຽດຊັງອັນອ່ອນແອ ຂອງເຈົ້າທຶນນ້ອຍຜູ້ໜຶ່ງເດັ່ນຂຶ້ນເປັນພິເສດ. ຊິດ

ສົມບດິ ພຽງແຕ່ຈົ່ມ (໑) ໂດຍລ້ອນໆວ່າ ເຫດການໄດ້ເກີດຂຶ້ນແນວນີ້ ຫາກບໍ່ເກີດຂຶ້ນແນວນັ້ນ. ດ້ວຍການມອງເຫັນສະຫວັນແຫ່ງການໂງ່ງ່າວ ແລະ ປຶກໜາ ແບບເຈົ້າໂຄດຂອງຊາວຊົນນະບົດຖືກມ້າງທຳລາຍ. ນັກເສດຖະສາດຂອງພວກເຮົາເລີຍຮູ້ສຶກງ່ວນເຫງົາຢ່າງສູດຂີດ, ຈີນກະທັ້ງວ່າເພີ່ນບໍ່ຫົວຊາເຖິງການຊອກຫາສາຍເຫດເປັນຫຍັງມັນຈຶ່ງ ເປັນແນວນັ້ນ. ເນື່ອງຈາກນັ້ນ, ເພີ່ນບໍ່ມອງເຫັນສາຍກ່ຽວພັນ ອັນຈຳເປັນ ແລະ ໜຽວແໜ້ນລະຫວ່າງເບື້ອງໜຶ່ງແມ່ນການເພີ່ມຈຳນວນ ພົນລະເມືອງອຸດສາຫະກຳຂຶ້ນຕື່ມ ແລະ ອີກເບື້ອງໜຶ່ງແມ່ນພື້ນຖານ ເສດຖະກິດສິນຄ້າ ແລະ ລັດທິທຶນນິຍົມ. ເສດຖະກິດສິນຄ້າໄດ້ມີການຂະຫຍາຍຕົວພ້ອມກັນກັບການຂະຫຍາຍຕົວຂອງການແບ່ງງານສັງຄົມ. ແຕ່ການແບ່ງງານສັງຄົມແມ່ນຢູ່ບ່ອນວ່າ ບັນດາຂະແໜງການອຸດສາຫະກຳ ທີ່ແຕກຕ່າງກັບບັນດາຮູບການທີ່ແຕກຕ່າງກັນຂອງການປຸງແຕ່ງວັດຖຸດິບສືບເນື່ອງກັນ ແຍກອອກຈາກ ການກະສິກຳ ແລະ ກາຍເປັນເອກະລາດ, ຈາກນັ້ນຈຶ່ງສ້າງເປັນພົນລະເມືອງອຸດສາຫະກຳ. ສະນັ້ນ ໃນເວລາປຶກສາຫາລືກັນກ່ຽວກັບເສດຖະກິດສິນຄ້າ ແລະ ລັດທິທຶນນິຍົມຖ້າຫາກ ບໍ່ເອົາໃຈໃສ່ເຖິງກົດເກນກ່ຽວກັບການເພີ່ມຈຳນວນພົນລະເມືອງ ອຸດສາຫະກຳຂຶ້ນຕື່ມຢ່າງຫລຽບຖານນັ້ນ, ກໍ່ໝາຍຄວາມວ່າບໍ່ມີຄວາມ ສຳນຶກ

(໑) ໃນການຂະຫຍາຍຕົວຕາມຫລັງຂອງມັນ, ກະແສຟອງ ດັ່ງກ່າວ ( ກ່າວລະອຽດແມ່ນເປັນກະແສຟອງແຫ່ງການຕຳໜິວິຈານຕາມແບບເຈົ້າທຶນນ້ອຍ ຊຶ່ງ ຊິດສົມບດິ, ເປັນຜູ້ນຳໜ້າ ) ໄດ້ກາຍ ເປັນບັນດາຖ້ອຍຄຳຄຽດຂຶ້ນຈົ່ມວ່າຢ່າງຕ່ຳຊ້າກ່ຽວກັບສະຖານະການປະຈຸບັນ".

ແມ່ນແຕ່ນ້ອຍດຽວກ່ຽວກັບບັນດາລັກສະນະພິເສດອັນພົ້ນຖານ ຂອງລະບອບເສດຖະກິດ ສັງຄົມປະຈຸບັນ.

" ລັກສະນະສະເພາະຕົວຂອງໝູບວິທີການຜະລິດທຶນນິຍົມ ແມ່ນເຮັດໃຫ້ຈຳນວນພົນລະເມືອງກະສິກຳລົດພ່ອນລົງປຽບກັບຈຳນວນພົນລະເມືອງຢູ່ນອກການກະສິກຳ, ເພາະວ່າພາຍໃນຊຸດສາຫະກຳເອງ (ຕາມຄວາມໝາຍແຄບຂອງສັບນີ້). ປະກົດການທຶນບໍ່ປ່ຽນເພີ່ມຂຶ້ນປຽບ ກັບທຶນປ່ຽນໄດ້ຕິດແໜ້ນກັບປະກົດການທຶນປ່ຽນເພີ່ມຂຶ້ນຢ່າງເດັດຖານ , ເຖິງວ່າທຶນປ່ຽນລຸດລົງຢ່າງຫຽບຖານ (໑). ໃນເວລານັ້ນ ພາຍໃນການກະສິກຳ, ທຶນປ່ຽນ, - ທີ່ຖືກນຳໃຊ້ເຂົ້າໃນການວິສາຫະກິດ ດິນນາຈຳນວນໜຶ່ງທີ່ແນ່ນອນ - ຫລຸດລົງຢ່າງເດັດຖານ; ຈາກນັ້ນ ມັນພຽງສາມາດເພີ່ມຂຶ້ນໃນກໍລະນີບຸກເບີກບັນດາດິນນາໃໝ່ໄດ້ຕື່ມ (໒)

---

(໑) ຜ່ານບ່ອນນີ້, ທ່ານຜູ້ອ່ານສາມາດສັງເກດຄວາມລະອຽດແນບເນຽນຂອງທ່ານ ນ.ໂອນ, ເປັນຜູ້ທີ່, ຢູ່ໃນປຶ້ມ " ສະເໜີຫຍໍ້ " ຂອງຕົນ, ໄດ້ພັນປ່ຽນຢ່າງບໍ່ອັບອາຍການລຸດລົງຢ່າງຫຽບຖານຂອງທຶນປ່ຽນ ແລະ ຂອງຈຳນວນກຳມະກອນໃຫ້ກາຍເປັນການລົດລົງຢ່າງເດັດຖານ, ແລະ ຈາກນັ້ນຈຶ່ງຖອດເປັນກອງຂໍ້ສະຫລຸບອັນໂງ່ງ່າວ ກ່ຽວກັບການ " ຮັດແຄບ " ຂອງຕະຫລາດພາຍໃນ ປະເທດ, ງລງ...

(໒) ນັ້ນແມ່ນກະໂຕເງື່ອນໄຂຈຶ່ງພວກເຮົາຢາກກ່າວເຖິງ, ເມື່ອພວກເຮົາເວົ້າວ່າ ລະບອບວິສາຫະກິດດິນນາໃນປະເທດລັດເຊຍ ໄດ້ເຮັດໃຫ້ປະກົດການຂອງກົດເກນສັບສົນຂຶ້ນຕື່ມ: ພົນລະເມືອງຊຸດ =>

ແຕ່ບັນຫານີ້ພັດເປັນເງືອນໄຂທີ່ໄດ້ເຮັດໃຫ້ຈຳນວນພົນລະເມືອງ ບໍ່ເຮັດກະສິກຳເພີ່ມຂຶ້ນຫລາຍກ່ວານັ້ນອີກ". ( 777 , ໔, ໑໗໗).

ທັງຢູ່ໃນຈຸດນີ້ອີກ, ທັດສະນະຂອງທິດສະດີໃໝ່ກ່ວາໝູ່ກໍ່ຝືນ ຕໍ່ທັດສະນະຂອງລັດທິໄຝ່ຝັນເພີນຈິດ ແລະ ບັນດາຖ້ອຍຄຳຈື່ມທຸກເວດທະກຳຂອງມັນຢ່າງສິ້ນເຊີງ. ເມື່ອເວລາໄດ້ເຂົ້າໃຈລັກສະນະ ຈຳເປັນຂອງປະກົດການໃດໜຶ່ງແລ້ວກໍ່ເປັນອັນທຳມະດາວ່າຄົນເຮົາຈະມີທ່າ ທີແຕກຕ່າງເກົ່າຕໍ່ມັນ, ແລະ ຄົນເຮົາຈະມີຄວາມສາມາດຕີລາຄາດ້ານທີ່ແຕກຕ່າງກັນຂອງມັນ. ປະກົດການຊຶ່ງພວກເຮົາພວມຄົ້ນຄ້ວາເປັນໜຶ່ງໃນບັນດາຂໍ້ຂັດແຍ່ງອັນເລິກເຊິ່ງກ່ວາໝູ່ ແລະ ແຜ່ຫລາຍກ່ວາໝູ່ຂອງລັດທິທຶນນິຍົມ. ການຕັດແຍກ, ການຝືນຕໍ່ກັນລະຫວ່າງຕົວເມືອງກັບຊົນ

---

→ສາທະກຳເປັນປະເພດພົນລະເມືອງທີ່ໄດ້ເພີ່ມຂຶ້ນໄວກ່ວາ. ພຽງແຕ່ ຈື່ຈຳເອົາຄວາມແຕກຕ່າງກັນລະຫວ່າງເບື້ອງໜຶ່ງແມ່ນເຂດກາງຂອງປະເທດລັດເຊຍ ຊຶ່ງເປັນບ່ອນພົນລະເມືອງ ດົກໜານາແຕ່ດົນ, ຢູ່ຫັ້ນພົນລະເມືອງຊຸດສາທະກຳພາຍໃນຕົວເມືອງຕ່າງໆເພີ່ມຂຶ້ນນ້ອຍກ່ວາ ຢູ່ໃນບ້ານຕ່າງໆ ແລະ ຕົວເມືອງນ້ອຍຊຸດສາທະກຳຕ່າງໆ; ເບື້ອງ ໜຶ່ງແມ່ນເຂດປະເທດລັດເຊຍໃໝ່ເປັນຕົ້ນ, ມັນເປັນບ່ອນຊຶ່ງພາຍຫລັງການປະຕິຮູບແລ້ວພົນລະເມືອງຈຶ່ງດົກໜາແລະຢູ່ຫັ້ນຕົວເມືອງໄດ້ຂະ ຫຍາຍຕົວຂຶ້ນດ້ວຍຄວາມໄວຄ້າຍໆກັນກັບຢູ່ໃນປະເທດອາເມລິກາ. ພວກເຮົາຫວັງວ່າຈະກັບຄືນສູ່ບັນຫານີ້ອີກເທື່ອໜຶ່ງ ແລະ ຈະໄຈ້ແຍກຢ່າງຄັກແນ່ກ່ວານີ້ອີກ.

ນະບົດ, ແລະ ການທີ່ຈີນນະບົດຖືກຕົວເມືອງຂູດຮີດນັ້ນ, ໝາຍວ່າບັນດາຂໍ້ຈຶ່ງລັດທິທຶນນິຍົມໄດ້ກໍ່ຂຶ້ນຢູ່ທົ່ວທຸກບ່ອນ - ນັ້ນແມ່ນພະລິດພັນອັນແມ່ນອນຂອງສະພາວະ " ຈັບສິນແຫ່ງການຄ້າ " ( ເວົ້າຕາມ ປະມວນສັບວິຊາການຂອງຈິດສມົນດີ (ຫລາຍກ່ວາ " ຈັບສິນແຫ່ງດິນນາ"(ຈັບສິນແຫ່ງການກະສິກຳ). ສະນັ້ນທ່າດີຂອງຕົວເມືອງຕໍ່ຈີນນະບົດ (ກ່ຽວກັບບັນດາດ້ານເສດຖະກິດ, ການເມືອງ, ຈິດໃຈ ແລະ ກ່ຽວກັບ ທັງໝົດທຸກດ້ານອື່ນໆ) ເປັນປະກົດການອັນແຜ່ຫລາຍ ແລະ ບໍ່ສາມາດຈະຫລີກລ່ຽງໄດ້ພາຍໃນທຸກປະເທດທີ່ມີການພະລິດສິນຄ້າ ແລະ ມີລັດທິທຶນນິຍົມ, ນັບທັງປະເທດລັດເຊຍເອງອີກ; ພຽງແຕ່ພວກໄຝ່ຝັນເພີນ ຈິດທາງວເທະກຳຈຶ່ງສາມາດມີການຈົ່ມວ່າຕໍ່ປະກົດການດັ່ງກ່າວ ເທົ່ານັ້ນເອງ. ກົງກັນຂ້າມ ທິດສະດີວິທະຍາສາດ, ໄດ້ຊີ້ໃຫ້ເຫັນດ້ານ <u>ກ້າວໜ້າ</u> ຈຶ່ງນາຍທຶນໃຫ່ຍອຸດສາຫະກຳໄດ້ນຳເຂົ້າມາໃນຂໍ້ຂັດແຍ່ງອັນນີ້ . " ພ້ອມກັນກັບທ່າດີຊຶ່ງນັບມື້ນັບເຕີບໃຫ່ຍຂຶ້ນຂອງພົນລະເມືອງຊຶ່ງ ການພະລິດທຶນນິຍົມໄດ້ເຕົ້າໂຮມເອົາເຈົ້າມາໃນບັນດາໃຈກາງໃຫ່ຍໆ, ໃນເວລາດຽວກັນນັ້ນພື້ນຖານການພະລິດດັ່ງກ່າວກໍມີການສະສົມກຳລັງ ດັນປະຫວັດສາດໃຫ້ແກ່ການກ້າວຂຶ້ນທາງໜ້າຂອງສັງຄົມ ( Diegeschichthiche Bemmgungskrafl der gesellachaft )*.

---

* ເຊີນອ່ານຕື່ມທັງການຕີລາຄາອັນເດັ່ນຂຶ້ນເປັນພິເສດກ່ຽວ ກັບຄຸນປະໂຫຍດອັນກ້າວໜ້າຂອງບັນດາໃຈກາງອຸດສາຫະກຳຕໍ່ຄວາມ ແຜ່ຂະຫຍາຍກຳລັງສະຕິປັນຍາຂອງພົນລະເມືອງທີ່ໄດ້ກ່າວໃນປື້ມ ⟹

ຖ້າແມ່ນວ່າທ່າດີຂອງຕົວເມືອງເປັນອັນຕ້ອງການຈຳເປັນນັ້ນ, ພຽງແຕ່ການຫລັ່ງໄຫລເຂົ້າມາໃນຕົວເມືອງຂອງພົນລະເມືອງຈຶ່ງສາມາດ ເຮັດໃຫ້ລັກສະນະດ້ານດຽວຂອງທ່າດີດັ່ງກ່າວອ່ອນເພຍລົງໄດ້ ( ແລະ ໃນຕົວຈິງກໍໄດ້ເຮັດໃຫ້ອ່ອນເພຍລົງ, ດັ່ງຄວາມພິສູດຂອງປະຫວັດສາດ). ຖ້າແມ່ນວ່າຕົວເມືອງຫາກຈັດຕົວເອງຢູ່ໃນຖານະທີ່ມີອະພິສິດຢ່າງ ແນ່ນອນ, ເຮັດໃຫ້ຊົນນະບົດຕົກຢູ່ໃນສະພາວະອື່ນກັບ, ຫລ້າຫລັງ, ໄຮ້ຄວາມສາມາດ ແລະ ໂງ່ຈ້າຢູ່ແລ້ວ, ພົນລະເມືອງຊົນນະບົດພຽງ ແຕ່ຫລັ່ງໄຫລໄປຫາຕົວເມືອງ, ພຽງແຕ່ການປະສົມ ແລະ ປົນເປເຂົ້າກັນລະຫວ່າງຈຳນວນພົນລະເມືອງກະສິກຳ ແລະ ຈຳນວນພົນລະເມືອງ ບໍ່ແມ່ນກະສິກຳເທົ່ານັ້ນຈຶ່ງສາມາດເຮັດໃຫ້ຈຳນວນພົນລະເມືອງຊົນນະບົດພົ້ນຈາກສະພາວະໄຮ້ຄວາມສາມາດໄດ້. ເພາະສະນັ້ນ, ເມື່ອຕອບໂຕ້ກັບຄວາມຈື່ນຫູກຄອນຄາງ, ແບບປະຕິການຕ່າງໆຂອງນັກເພີ້ນຈິດນິຍົມຕ່າງໆ, ທິດສະດີອັນໃໝ່ອ່ຽມກ່ວາໝູ່ຊີ້ບອກວ່າ: ສະພາວະ ບັນດາເງື່ອນໄຂດຳເນີນຊີວິດຂອງຈຳນວນພົນລະເມືອງກະສິກຳໄດ້ຍັບເຂົ້າມາ

---

==) "Klasse in england ໑໘໔໕" ໄດ້ມີການຮັບຮູ ຄຸນປະໂຫຍດດັ່ງກ່າວ, ແຕ່ວ່ານັກປະພັນຂອງປຶ້ມ " ສະພາບຊີວິດການເປັນຢູ່ຂອງຊົນຊັ້ນກຳມະກອນຢູ່ອັງກິດ " ຄົງເຂົ້າໃຈຂໍ້ຂັດແຍ້ງທີ່ໄດ້ ປະກົດອອກມາໃນການຕັດແຍກອອກຈາກກັນລະຫວ່າງຕົວເມືອງ ແລະ ຊົນນະບົດຢ່າງເລິກເຊິ່ງ,-ບົດປະພັນແຫ່ງການຕໍ່ສູ້ທາງທິດສະດີຕານ ດູຍຣິງຂອງເພີ່ນໄດ້ມີການພິສູດບັນຫານັ້ນຢ່າງຈະແຈ້ງ.

ໃກ້ກັບບັນດາເງື່ອນໄຂດຳເນີນຊີວິດຂອງຈຳນວນພົນລະເມືອງ ບໍ່ແມ່ນກະສິກຳແນວນັ້ນ, ມັນຈະສ້າງບັນດາເງື່ອນໄຂເພື່ອຈະລົບລ້າງການປະຕິປັກກັນລະຫວ່າງຕົວເມືອງ ແລະ ຊົນນະບົດຄືແນວໃດ.

ບັດນີ້ , ລອງຖາມວ່າຢູ່ໃນບັນຫານີ້, ນັກເສດຖະສາດຕ່າງໆທີ່ຂຶ້ນກັບຝ່າຍປະຊາລາດ ຂອງພວກເຮົາຈະຢືນບົນ ທັດສະນະອັນໃດ ? ບໍ່ສົງໃສຫຍັງອີກເລີຍ , ເຂົາຢືນບົນທັດສະນະ ວວຫະກຳ ແລະ ເພີນຈິດນິຍົມ . ເຂົາບໍ່ພຽງແຕ່ເຂົ້າໃຈວ່າພາຍໃນ ລະບອບເສດຖະກິດສັງຄົມ ປະຈຸບັນ , ຈຳນວນພົນລະເມືອງ ອຸດສາຫະກຳ <u>ແນ່ນອນຈຳເປັນ</u> ຕ້ອງເພີ່ມຂຶ້ນເທົ່ານັ້ນ , ຫາກຈົນກະທັ້ງເຂົາ <u>ຍັງມີເຈດຕະນາ ບໍ່ແນມເບິ່ງ</u> ກະໂຕປະກົດການດັ່ງກ່າວ , ຄືກັນກັບນົກສຸຍຫົວເຂົ້າໃນປີກ . ປ. ສະເຕີລູເວ ໄດ້ຊີ້ບອກວ່າ - ໃນຖ້ອຍຄຳອ້າງອີງຕ່າງໆຂອງທ່ານ ນ. ໂອນ ກ່ຽວກັບ ລັດທິທຶນນິຍົມນັ້ນ , ໄດ້ມີການຜິດເຂວຢ່າງຫຍາບຊ້າຢູ່ບ່ອນວ່າ ທ່ານ ນ.ໂອນ ໄດ້ຢັ້ງຢືນຢ່າງແນ່ວແນ່ວ່າທຶນໝູນ ວຽນ[1] ມີການລົດລົງຢ່າງ<u>ເດັດຖານ</u> ( ບັນດາຄວາມເຫັນຕຳໜິວິຈານ, ໜ້າ ໔໕໔ ); ແລະ ປ. ສະເຕີລູເວ ກໍໄດ້ແຈ້ງວ່າ ຖ້າແມ່ນ ວ່າເອົາປະເທດລັດເຊຍ ເປັນປະຕິປັກກັບ ພາກຕາເວັນຕົກ , ດ້ວຍວິທີອີງຕາມອັດຕາສ່ວນຈຳນວນພົນລະເມືອງ ທີ່ຕ່ຳກວ່າ , ຫາກບໍ່ເອົາໃຈໃສ່ເຖິງການ <u>ເພີ່ມທະວີຂຶ້ນ</u> ຂອງອັດຕາສ່ວນດັ່ງກ່າວ ໂດຍແມ່ນການຂະຫຍາຍຕົວ ຂອງລັດທິ ທຶນນິຍົມ ເປັນຜູ້ກໍ່ຂຶ້ນແລ້ວ , ມັນກໍເປັນອັນ

---

໑) ທຶນສຳຫລັບຊື້ກຳລັງແຮງງານ. (ຜູ້ແປ).

ໄຮເຫດພົນ [໑]Sojialpolitiches gentralbatit[໔], ໑໘໙໕ , ສະບັບ ໑); ແຕ່ວ່າ, ຖືກຕານການກະຕວງລ່ວງໜ້າຂອງເຂົາເຈົ້າ, ສະເຕີລູເວ ບໍ່ໄດ້ຮັບຄຳຕອບແຕ່ຢ່າງໃດກ່ຽວກັບການສັງເກດຂ້າງບົນ. ບັນດານັກເສດຖະສາດຂອງຝ່າຍປະຊາລາດ ໄດ້ປຶກສາຫາລືກັນ ຢ່າງເນື່ອງນິດກ່ຽວກັບບັນດາຈຸດພິເສດຂອງປະເທດລັດເຊຍ, ແຕ່ເຂົາເຈົ້າບໍ່ສາມາດວາງອອກໄດ້ຈົນກະທັ້ງວ່າ ບັນດາບັນຫາຈຸດພິເສດແທ້ຈິງຂອງການກໍ່ຮູບຂຶ້ນຂອງຈຳນວນພົນລະເມືອງອຸດສາຫະກຳຢູ່ໃນລັດເຊຍ [໕] ) ເຊິ່ງແມ່ນບັນຫາທີ່ພວກເຂົາຫາກໍໄດ້ສະເໜີໂດຍຫຍໍ້ຢູ່ຂ້າງບົນກ່າວທາງດ້ານທິດສະດີ, ນັ້ນແມ່ນທ່າທີຂອງບັນດານັກປະຊາລາດຕໍ່ບັນຫານັ້ນ, ແຕ່ວ່າໃນຕົວຈິງນັ້ນ, ເມື່ອເວລາປຶກສາຫາລືກັນກ່ຽວກັບສະພາບຊີວິດການ

---

໑) ທ່ານຜູ້ອ່ານຈົ່ງຈື່ຈຳຄຳໃຫ້ມວ່າ ຊິດສມົນດີ ກໍມີກະໂຕຂໍ້ຜິດພາດດັ່ງກ່າວ ເມື່ອເພິ່ນກ່າວເຖິງ " ໂຊກດີ " ຂອງປະເທດ ຝະລັ່ງ ເຊິ່ງເປັນປະເທດໜຶ່ງທີ່ມີຈຳນວນພົນລະເມືອງກະສິກຳກວມເຖິງ ໕໐% ເວົ້າຄືວ່າມັນເປັນຈຸດພິເສດສະເພາະຕົວຂອງພື້ນຖານ " ການຜະລິດປວງປະຊາຊົນ" ໃດໜຶ່ງ ໆລໆ... ຫາກບໍ່ແມ່ນເປັນປະກົດການຂອງສະພາວະຫລາຫລັງພາຍໃນການຂະຫຍາຍຕົວຂອງລັດທິທຶນນິຍົມ.

໔) ໜັງສືພິມການເມືອງສັງຄົມ ( ຜູ້ແປ ).

໕) ເຊີນອ່ານ ໂວນ-ກິນ " ທິດສະດີພິສູດວ່າດ້ວຍລັດທິ ປະຊາລາດນິຍົມທີ່ມີຢູ່ໃນບົດປະພັນຂອງ ທ່ານ ໂວລົນຕສົບ " ແຊງເປເຕີກບົວ, ໑໘໙໖, ໜ້າ ໑໔ - ໔໑໖ .

ເປັນຢູ່ຂອງຊາວນາຢູ່ໃນຊົນນະບົດພາຍຫລັງການປະຕິຮູບນັ້ນ, ບັນດາ ນັກປະຊາລາດບໍ່ຫອນມີຈັກເທື່ອຈະຢຸດງ ຢ່ອນໆ ຍອມມີການເສີງໄສ້ດ້ານ ທິດສະດີ, ເຂົາເຈົ້າຮັບຮູ້ປະກົດການທີ່ວ່າບັນດາຊາວນາຖືກປັດ ເຂ່ຍ ອອກຈາກການກະສິກຳ ແລະ ໄດ້ອົບພະຍົບໄປຫາຕົວເມືອງຕ່າງໆແລະ ໃຈກາງອຸດສາຫະກຳຕ່າງໆ; ແລະ ເຂົາພຽງແຕ່ <u>ຈື່ມວ່າ</u> ກ່ຽວກັບບັນ ຫານັ້ນ, ກໍເຊັ່ນດຽວກັບຊິດສມົນດີເຄີຍໄດ້<u>ຈື່ມວ່າ</u> ກ່ຽວກັບປະກົດ ການ ດັ່ງກ່າວ. ສ່ວນການຜັນປ່ຽນຢ່າງເລິກເຊິ່ງພາຍໃນເງື່ອນໄຂ ດຳລົງຊີ ວິດຂອງມວນມະຫາຊົນທີ່ໄດ້ປະກົດອອກມາຢູ່ໃນປະເທດລັດເຊຍ ຫລັງ ການປະຕິຮູບນັ້ນ, - ການຜັນປ່ຽນເທື່ອທຳອິດໄດ້ມີການທັບມາງລັກສະ ນະດຳລົງຊີວິດຄົງທີ່ຂອງຊາວນາທີ່ໄດ້ເກາະແໜ້ນກັບດິນນາ, ເຮັດໃຫ້ ເຂົາເຈົ້າມີຄວາມສາມາດຍົກຍ້າຍຈາກບ່ອນນີ້ໄປຫາບ່ອນນັ້ນ ແລະເຮັດ ໃຫ້ບັນດາຊາວອອກແຮງງານກະສິກຳ ແລະ ບໍ່ແມ່ນກະສິກຳທີ່ຢູ່ໃນ ຊົນ ນະບົດ ແລະ ຢູ່ໃນຕົວເມືອງມີການໃກ້ຊິດນຳກັນ; - ບັນດານັກປະຊາ ລາດກໍບໍ່ເຄີຍແນມເຫັນຄວາມໝາຍຈຸນທຳ ແລະ ທາງອົບຮົມ ສຶກສາ ( ຄວາມໝາຍອັນນີ້ອາດຈະແມ່ນວ່າສຳຄັນກ່ວາ ) ຂອງການຜັນປ່ຽນ ດັ່ງກ່າວ; ໃນຕົວຈິງມັນພຽງເປັນຂໍ້ອ້າງອີງຊ່ວຍໃຫ້ບັນດານັກ ປະຊາ ລາດເກີດມີສຽງທັບໃຈຍາວແບບເວທະກຳນິຍົມແລະເພີນຈິດນິຍົມ ເທົ່າ ນັ້ນເອງ .

ວ.ອ. ເລນິນ,ລົບຊູດ, ພາສາຫວຽດນາມ,
ສຳນັກພິມຈຳໜ່າຍກາວໜ້າ , ມົດສະກູ ,
໑໙໗໔, ເຫລັ້ມ ໔, ໜ້າ ໔໖໗ - ໔໗໕.

ຄັດຈາກ ນິພົນ ວ່າດ້ວຍ :

ການຂະຫຍາຍຕົວຂອງລັດທິ ທຶນນິຍົມ

ຢູ່ທີ່ ລັດເຊຍ

---

## ພາກທີ I

## ບັນດາຂໍ້ຜິດພາດທາງດານທິດສະດີຂອງ ບັນດານັກ ເສດຖະສາດປະຊາລາດ

.....

### I.- ການແບ່ງງານສັງຄົມ.

ການແບ່ງງານສັງຄົມເປັນພື້ນຖານຂອງເສດຖະກິດສິນຄ້າ. ອຸດສາຫະກຳປຸງແຕ່ງແຍກອອກຈາກອຸດສາຫະກຳຂຸດຄົ້ນ, ແລະ ແຕ່ລະຂະແໜງອຸດສາຫະກຳດັ່ງກ່າວຍັງໄດ້ແບ່ງເປັນຫລາຍຊະນິດນ້ອຍໆ ແລະ ຈຳແນກເປັນຫລາຍຊະນິດຍ່ອຍນ້ອຍກວ່າ, ມັນໄດ້ຜະລິດຜະລິດພັນ ພິເສດຕ່າງໆພາຍໃຕ້ຮູບການສິນຄ້າ ແລະ ເອົາໄປແລກປ່ຽນກັບ ທຸກຂະແໜງການຜະລິດອື່ນໆ. ດັ່ງນັ້ນແລ້ວ, ເສດຖະກິດສິນຄ້າຂະຫຍາຍຕົວຈະພາໄປເຖິງບ່ອນທີ່ເຮັດໃຫ້ຈຳນວນຂະແໜງອຸດສາຫະກຳ ສະເພາະຕ່າງຫາກ ແລະ ເປັນເອກະລາດເພີ່ມຂຶ້ນນຳ; ທ່າອຽງຂອງການ ຂະຫຍາຍຕົວນີ້ແມ່ນເພື່ອຫັນການຜະລິດບໍ່ພຽງແຕ່ຫັນການຜະລິດ ສະເພາະ

ແຕ່ລະຜະລິດພັນເທົ່ານັ້ນ, ຫາກຍັງທັນທັງການຜະລິດແຕ່ລະພາກ ສ່ວນຕ່າງຫາກຂອງຜະລິດພັນ, ແລະ ບໍ່ພຽງແຕ່ທັນການຜະລິດຜະລິດ ພັນເທົ່ານັ້ນຫາກຈົນກະທັ້ງຕໍ່ແຕ່ລະຈັງຫວະວຽກງານໃນການປຸງແຕ່ງຜະລິດພັນໃຊ້ສອຍ, ກາຍເປັນຂະແໜງຊຸດສາຫະກຳໜຶ່ງ ສະເພາະ ຕ່າງຫາກ. ພາຍໃຕ້ລະບອບເສດຖະກິດທຳມະຊາດ, ສັງຄົມ ແລະປະກອບດ້ວຍຫລາຍ ຫົວໜ່ວຍເສດຖະກິດເປັນອັນໜຶ່ງອັນດຽວ ( ບັນດາຄອບຄົວຊາວນາເຈົ້າໂຄດ, ບັນດາກອມມູນ ຈີນນະບົດປະຖົມບູຮານ, ບັນດາອານາເຂດສັກດີນາ ), ປະກອບເປັນ, ແລະ ແຕ່ລະຫົວໜ່ວຍນັ້ນເຮັດຄົບທຸກວຽກງານເສດຖະກິດ ນັບຕັ້ງແຕ່ການຂຸດຄົ້ນວັດຖຸດິບຊະນິດທີ່ຕ່າງກັນຕ່າງໆ ຈົນເຖິງການປຸງແຕ່ງວັດຖຸດິບເຫລົ່ານັ້ນເປັນເຄື່ອງ ໃຊ້ສອຍ, ພາຍໃຕ້ລະບອບເສດຖະກິດສິນຄ້າ, ບັນດາຫົວໜ່ວຍເສດ ຖະກິດບໍ່ເປັນອັນໜຶ່ງອັນດຽວກັນໄດ້ກໍ່ຮູບຂຶ້ນ, ຈຳນວນຂະແໜງເສດ ຖະກິດສະເພາະຕ່າງຫາກຕ່າງໆ ໄດ້ເພີ່ມຂຶ້ນ, ຈຳນວນຂະແໜງເສດຖະກິດສະເພາະເພີ່ມຂຶ້ນຈຳນວນຫົວໜ່ວຍຕ່າງໆຊຶ່ງດຳເນີນພາລະບົດບາດເສດຖະກິດຄືກັນໄດ້ລົດລົງ. ກະໂຕການຂະຫຍາຍຕົວນັບມື້ນັບສູງ ຂຶ້ນຂອງການແບ່ງງານສັງຄົມນັ້ນ ເປັນປັດໄຈອັນຕົ້ນຕໍໃນຂະບວນວິວັດ ກໍ່ຮ່າງສ້າງຕົວຂຶ້ນຂອງຫອງຕະຫລາດພາຍໃນປະເທດຂອງລັດທິທຶນນິຍົມ.

ມາກ ໄດ້ກ່າວວ່າ: " ພາຍໃນພື້ນຖານເສດຖະກິດສິນຄ້າ ແລະ ພາຍໃນຮູບຖານເດັດຖາບຂອງມັນ, ເຊິ່ງແມ່ນພື້ນຖານການຜະລິດ ທຶນນິຍົມ ... ຜະລິດພັນເຫລົ່ານີ້ແມ່ນສິນຄ້າ, ແມ່ນເຄື່ອງບໍລິໂພກທີ່ມີ ມູນຄ່າແລກປ່ຽນທີ່ສາມາດປະຕິບັດໄດ້, ໝາຍຄວາມວ່າ ສາມາດພັນ ປ່ຽນ

ເປັນເງິນຕາບໃດມີສິນຄ້າອື່ນ, ເປັນສິ່ງເທົ່າທຽມມູນຄ່າໃຫ້ແກ່ມັນ ,
ຕາບໃດຍັງມີຜະລິດພັນອື່ນໆຊອງໜ້າກັບມັນດ້ວຍຖານະເປັນສິນຄ້າແລະ
ດ້ວຍຖານະເປັນມູນຄ່າ; ເວົ້າໄດ້ຢ່າງໜຶ່ງ, ຕາບໃດມັນຖືກ ຜະລິດ
ອອກມາບໍ່ແມ່ນເພື່ອເປັນພາຫະນະດຳລົງຊີວິດໃຫ້ແກ່ກະໂຕບັນດາຜູ້ທີ່ໄດ້
ຜະລິດມັນອອກໂດຍກົງ, ຫາກເພື່ອຈະເປັນສິນຄ້າ, ໝາຍວ່າເປັນຜະ
ລິດພັນຕ່າງໆ ຊຶ່ງພຽງແຕ່ຜ່ານການພັນປ່ຽນເປັນມູນຄ່າແລກປ່ຽນ (ເປັນ
ເງິນ) ມີແຕ່ຜ່ານການສຳປະທານໃຫ້ຜູ້ອື່ນແລ້ວຈຶ່ງກາຍເປັນບັນດາ ມູນ
ຄ່າໃຊ້ຈ່າຍ. <u>ທ້ອງຕະຫລາດຂອງສິນຄ້າເຫລົ່ານັ້ນມີການຂະຫຍາຍ ຕົວ
ໂດຍອີງອາໃສການແບ່ງງານສັງຄົມ</u>; ການແບ່ງປັນກຳລັງ ແຮງງານ
ການຜະລິດຊະນິດຕ່າງໆໄດ້ເຮັດໃຫ້ຜະລິດພັນຂອງແຮງງານແຕ່ລະ ຊະ
ນິດດັ່ງກ່າວພັນປ່ຽນເປັນສິນຄ້າ, ເປັນບັນດາສິ່ງເທົ່າທຽມມູນຄ່າຊຶ່ງກັນ
ແລະ ກັນ ແລະ ຖືກນຳໃຊ້ເປັນຜະລິດພັນແລກປ່ຽນຊຶ່ງກັນແລະກັນ( "
Daskapital ", III, ໘ ໑໗໗ - ໑໗໘. ສະບັບທີ
ແປຈາກພາສາລັດເຊຍ, ໕໘ລ້, [໔໕.໑] ຢູ່ທີ່ນີ້ກໍຄືຢູ່ໃນທຸກໆຂໍ້ສັນລະສຸດອື່ນໆ ,
ຕົວໜັງສືຂຽນເປັນຕົວຫງ່ຽງລ້ວນແມ່ນຂອງພວກເຮົາ, ຍົກເວັ້ນແຕ່ ກໍ
[໑໑] ລະນີຂໍ້ອະທິບາຍໝາຍເຫດອັນອື່ນ).

ເປັນອັນແນ່ນອນແລ້ວວ່າ, ການແຍກຕົວອອກຈາກກັນດັ່ງກ່າວມາ
ຂ້າງເທິງລະຫວ່າງອຸດສາຫະກຳປຸງແຕ່ງ ແລະ ອຸດສາຫະກຳຂຸດຄົ້ນລະ
ຫວ່າງໂຮງງານຫັດຖະກຳ ແລະ ກະສິກຳ, ໄດ້ພັນປ່ຽນກະໂຕກະສິກຳ
ໃຫ້ກາຍເປັນອຸດສາຫະກຳ, ໝາຍຄວາມວ່າກາຍເປັນຂະແໜງ ໜຶ່ງ
ຂອງເສດຖະກິດຜະລິດ <u>ສິນຄ້າ</u>. ຂະບວນວິວັດແຫ່ງການທຶນເປັນ ການ

ຜະລິດສະເພາະໄດ້ເຮັດໃຫ້ບັນດາຮູບການປຸງແຕ່ງຜະລິດພັນ ຕັດແຍກອອກຈາກກັນ, ແລະ ໄດ້ກໍ່ສ້າງຫລາຍຂະແໜງອຸດສາຫະກຳນັບມື້ ນັບຫລາຍຂຶ້ນຕື່ມ, - ມັນກໍ່ສະແດງອອກທັງຢູ່ໃນກະສິກຳ, ເຮັດໃຫ້ເກີດມີບັນດາເຂດແຄວນກະສິກຳຜະລິດສະເພາະ ( ແລະບັນດາລະບົບ ເສດຖະກິດກະສິກຳ[1]), ແລະ ພາໄປເຖິງການແລກປ່ຽນຕ່າງໆ ບໍ່ພຽງ ແຕ່ລະຫວ່າງຜະລິດພັນກະສິກຳກັບຜະລິດພັນອຸດສາຫະກຳເທົ່ານັ້ນ, ຫາກທັງລະຫວ່າງບັນດາຜະລິດພັນກະສິກຳກັບຜະລິດພັນອຸດສາຫະກຳເທົ່ານັ້ນ ,

---

໑) ຕົວຢ່າງຄື, ອີ. ອາ. ສະເຕບຸດ, ຢູ່ໃນປຶ້ມ"ບັນດາຫລັກ ມູນແຫ່ງການປູກຝັງດິນນາ", ໄດ້ແບ່ງບັນດາລະບົບເສດຖະກິດ ກະສິກຳໂດຍອີງຕາມບັນດາຜະລິດພັນຕົ້ນຕໍຊຶ່ງລະບົບເຫລົ່ານັ້ນໄດ້ຂາຍອອກ. ມີສາມລະບົບເສດຖະກິດອັນເປັນຕົ້ນຕໍ: ໑) ລະບົບປູກຝັງຢູ່ຕາມໄຮ່ນາ( ປູກທັນຍາຫານພືດຕ່າງໆ, ຕາມວິທີເວົ້າຂອງທ່ານ ອາ.ສະເກີ ວອກຕສັບ) ໒) ລະບົບລ້ຽງສັດ ( ຜະລິດພັນທີ່ເປັນຕົ້ນຕໍຖືກນຳໄປ ຂາຍລ້ວນເປັນຜະລິດພັນແຫ່ງການລ້ຽງສັດ ) ແລະ ໓) ລະບົບໂຮງ ງານ ( ລະບົບເຕັກນິກ, ຕາມວິທີເວົ້າຂອງທ່ານ ອາ.ສະເກີວອກຕສັບ ); ຜະລິດພັນທີ່ເປັນຕົ້ນຕໍຊຶ່ງຖືກນຳໄປຂາຍບົນທ້ອງຕະຫລາດເປັນບັນດາຜະລິດພັນກະສິກຳທີ່ໄດ້ຜ່ານຂະບວນວິວັດແຫ່ງການປຸງແຕ່ງທາງດ້ານ ເຕັກນິກ. ເຊີນອ່ານ ອາ.ສະເກີວອກຕສັບ "ຜົນສະທ້ອນຂອງພາຫະນະຂົນສົ່ງດ້ວຍອາຍນ້ຳຕໍ່ການກະສິກຳ", ວັກຊາວາ, ໑໙໓໐, ໜ້າ ໒໘ ແລະ ບັນດາໜ້າຕໍ່ຈາກນັ້ນ.

ທາກທັງລະຫວ່າງບັນດາຜະລິດພັນກະສິກຳດ້ວຍກັນອີກ. ການທັນເປັນສະເພາະອັນນີ້ຂອງພື້ນຖານກະສິກຳສິນຄ້າ ( ແລະ ລັດທິທຶນນິຍົມ ) ໄດ້ສະແດງອອກຢູ່ໃນທຸກງປະເທດທຶນນິຍົມ, ສະແດງອອກໃນການແບ່ງງານສາກົນ, ສະແດງອອກທັງຢູ່ໃນປະເທດລັດເຊຍພາຍຫລັງການປະຕິຮູບ, ດັ່ງທີ່ພວກເຮົາຈະສະເໜີໂດຍລະອຽດລະອໍຂ້າງລຸ່ມນີ້.

ດັ່ງນັ້ນ, ການແບ່ງງານສັງຄົມເປັນພື້ນຖານຂອງທົ່ວທັງຂະບວນວິວັດແຫ່ງການຂະຫຍາຍຕົວຂອງເສດຖະກິດສິນຄ້າ ແລະ ຂອງ ລັດທິທຶນນິຍົມ, ເພາະສະນັ້ນ, ເປັນທຳມະດາວ່າ ບັນດານັກທິດສະດີ ປະຊາລາດ ຂອງພວກເຮົາ - ບັນດາຜູ້ທີ່ໄດ້ຖະແຫລງວ່າ ຂະບວນວິວັດ ດັ່ງກ່າວພຽງເປັນໝາກຜົນຂອງບັນດາວິທີແກ້ໄຂທີ່ຄົນສ້າງຂຶ້ນຂອງ" ບາດກ້າວເດີນຜິດອອກຈາກເສັ້ນທາງຊື່ " ງລງ ແລະ ງລງ ຈຶ່ງໄດ້ອອກເຫື່ອເທແຮງລົບຄວາມຈິງແມ່ນການແບ່ງສັງຄົມຢູ່ລັດເຊຍຫລືໄດ້ເຮັດໃຫ້ຄວາມໝາຍຂອງມັນຫລຸດລົງ. ໃນບົດປະພັນ " ການແບ່ງງານ ພາຍໃນການກະສິກຳ ແລະ ອຸດສາຫະກຳຢູ່ລັດເຊຍ " ( ສິ່ງຂ່າວ ທະວີບເອີຣົບ, ໑໘໘໔, ສະບັບທີ ກ ), ທ່ານ ວ.ວ. ໄດ້ " ປະຕິເສດ" ( ການປົກຄອງຂອງຫລັກການແຫ່ງການແບ່ງງານສັງຄົມຢູ່ລັດເຊຍ " (ໜ້າ ໓໔ກ) ແລະ ປະກາດຖະແຫລງວ່າຢູ່ໃນປະເທດເຮົາ, ການແບ່ງງານສັງຄົມ " ບໍ່ແມ່ນອອກມາຈາກຊີວິດຂອງປະຊາຊົນ, ຫາກມາຈາກພາຍນອກທີ່ຊອກຫາວິທີເລັດລອດເຂົ້າໃນຊີວິດປະຊາຊົນ " (ໜ້າ ໓໓໘). ຢູ່ໃນປື້ມ " ພິຈາລະນາໂດຍຫຍໍ້ " ຂອງຕົນ, ເມື່ອເວົ້າເຖິງການເພີ່ມຂຶ້ນຕື່ມຂອງປະລິມານເຂົ້າເບຣທີ່ໄດ້ຂາຍອອກ, ທ່ານນ. ໂອນ

ໄດ້ອ້າງເຫດຜົນດັ່ງນີ້: " ປະກົດການອັນນີ້ອາດຈະມີຄວາມໝາຍ ວ່າ ເຂົ້າເບຣທີ່ໄດ້ຜະລິດອອກມາໄດ້ຖືກແຈກຢາຍສະໝ່ຳສະເໝີກວ່າພາຍໃນປະເທດ; ມີຄວາມໝາຍວ່າໃນປະຈຸບັນຊາວຕຶກປາຢູ່ ອາຄານແກມສະເກີ ໄດ້ກິນເຂົ້າເບຣ ຊານາຣາ, ສ່ວນຊາວນາຢູ່ ຊານາຣາ ກໍໄດ້ມີປາ ອາກຄານແກມ-ສະເກີ ຢູ່ໃນພາເຂົ້າຂອງຕົນ. ແຕ່ວ່າ, ໃນຕົວຈິງນັ້ນ ບໍ່ຫ່ອນມີແນວນີ້ນຈັກເທື່ອ " ( ພິຈາລະນາໂດຍຫຍໍ້ວ່າ ດວຍເສດຖະກິດສັງຄົມຢູ່ປະເທດຣົາພາຍຫລັງການປະຕິຮູບ. ແຊງເປແຕກບົວ, ໑ຽລ໙, ໜ້າ ໙ກ). ໂດຍບໍ່ຍົກຫລັກຖານອັນໃດເລີຍ, ບໍ່ຫົວຊາຫຍັງເຖິງຄວາມຈິງຊຶ່ງທຸກຄົນໃຜກໍຮູ້, ຢູ່ທີ່ນີ້ເຂົາເຈົ້າຢັ້ງຢືນ ລ້າໄປວ່າຢູ່ລັດເຊຍບໍ່ມີການແບ່ງງານສັງຄົມ ! ອີກຢ່າງໜຶ່ງ, ຖາວ່າບໍ່ປະຕິເສດກະໂຕສິ່ງທີ່ເປັນພື້ນຖານຂອງທຸກເສດຖະກິດສິນຄ້າ, ໝາຍວ່າການແບ່ງງານສັງຄົມ, ຫລືບໍ່ປະກາດວ່າ ພື້ນຖານອັນນັ້ນແມ່ນ "ຫຽມ" ແລ້ວຝ່າຍປະຊາລາດ ບໍ່ສາມາດຈະສ້າງຕັ້ງເປັນທິດສະດີວ່າດ້ວຍ " ລັກສະນະຫຽມຂອງລັດທິທຶນນິຍົມຢູ່ໃນລັດເຊຍຈັກເທື່ອ.

## II - ຈຳນວນພົນລະເມືອງອຸດສາຫະກຳເພີ່ມຂຶ້ນ ເຮັດໃຫ້ຈຳນວນພົນລະເມືອງກະສິກຳຫລຸດລົງ

ເນື່ອງຈາກວ່າ ໃນສະໄໝກ່ອນຈະມີ ເສດຖະກິດສິນຄ້ານັ້ນ, ອຸດສາຫະກຳປຸງແຕ່ງຕິດແໜ້ນກັບອຸດສາຫະກຳຂຸດຄົ້ນ ແລະນຳໜ້າພື້ນຖານອຸດສາຫະກຳອັນນີ້ແມ່ນການກະສິກຳ ສະນັ້ນ ການຂະຫຍາຍຕົວຂຶ້ນຂອງເສດຖະກິດສິນຄ້າແມ່ນການແຍກຕົວຂອງບັນດາຂະແໜງອຸດສາຫະກຳອອກ ຈາກການກະສິກຳເປັນລຳດັບ ຈຳນວນ ພົນລະ

ເມືອງຂອງປະເທດໜຶ່ງ ຊຶ່ງເສດຖະກິດສິນຄ້າບໍ່ຂະຫຍາຍຕົວປານໃດ ( ຫລືວ່າບໍ່ມີການຂະຫຍາຍຕົວທັງສິ້ນ ) ນັ້ນກໍເຫັນວ່າເກືອບໝົດລວມເປັນຈຳນວນພົນລະເມືອງ ກະສິກຳ; ເຖິງແມ່ນເປັນແນວນັ້ນກໍຕາມ , ເລື່ອງນັ້ນບໍ່ໝາຍວ່າ ຈຳນວນພົນລະເມືອງພຽງແຕ່ເຮັດວຽກ ກະສິກຳເທົ່ານັ້ນ, ຫາກໝາຍຄວາມວ່າ ພົນລະເມືອງເຮັດວຽກ ກະສິກຳໄດ້ມີການປຸງແຕ່ງຜະລິດພັນກະສິກຳເອົາເອງ; ໝາຍວ່າຢູ່ໃນພົນລະເມືອງດັ່ງກ່າວນັ້ນ, ການແລກປ່ຽນ ແລະ ການແບ່ງງານເກືອບຄືວ່າບໍ່ມີ.ດັ່ງນັ້ນ ການຂະຫຍາຍຕົວຂອງເສດຖະກິດສິນຄ້າ ipso [1] ) ເລີຍໝາຍຄວາມວ່າພາກສ່ວນໜຶ່ງຊຶ່ງນັບມື້ນັບຫລາຍຂຶ້ນຢູ່ໃນຈຳນວນພົນລະເມືອງໄດ້ແຍກອອກຈາກກະສິກຳ, ໝາຍວ່າຈຳນວນພົນລະເມືອງ ອຸດສາຫະກຳເພີ່ມຂຶ້ນເລີຍເຮັດໃຫ້ຈຳນວນພົນລະເມືອງກະສິກຳລົດລົງ . ເນື່ອງມາຈາກທາດແທ້ຂອງມັນ, ແບບວິທີການຜະລິດທຶນນິຍົມບໍ່ລົດ ລະຫລຸດຈຳນວນພົນລະເມືອງກະສິກຳລົງປຽບກັບຈຳນວນພົນລະເມືອງ ທີ່ບໍ່ແມ່ນກະສິກຳ, ເພາະວ່າຢູ່ໃນອຸດສາຫະກຳເອງ ( ຕາມຄວາມ ໝາຍແຄບຂອງສັບນີ້ ) ບັນດາທຶນຄົງທີ່ເພີ່ມຂຶ້ນພາໃຫ້ທຶນໝູນວຽນຫລຸດ ລົງມັກມີການ ພົວພັນເຖິງການເພີ່ມຂຶ້ນຢ່າງເດັດຖານ. ( ເຖິງແມ່ນ ວ່າເປັນການລົດລົງຢ່າງຫຽບຖານ ) ຂອງທຶນໝູນວຽນກໍຕາມ.ສ່ວນພາຍໃນການກະສິກຳພັດກົງກັນຂ້າມ, ທຶນໝູນວຽນທີ່ຕ້ອງການຈຳເປັນ ໃຫ້ແກ່ການວິສາຫະກິດດິນນາພົ້ນໃດພົ້ນໜຶ່ງທີ່ແນ່ນອນພັດລົງລົງຢ່າງ ເດັດ

---

[1] ) ກໍເນື່ອງຈາກນັ້ນ.

ຖານ; ເນື່ອງຈາກນັ້ນ, ທຶນໝູນວຽນພຽງສາມາດເພີ່ມຂຶ້ນເມື່ອໃດ ມີບັນດາດິນນາໃໝ່ທີ່ຖືກປູກຝັງ ຊຶ່ງອາການນີ້ພັດຮຽກຮ້ອງການໃຫ້ ຈຳນວນພົນລະເມືອງ ທີ່ບໍ່ແມ່ນກະສິກຳຕ້ອງເພີ່ມຂຶ້ນຫລາຍກວ່ານັ້ນອີກ" ( Das Kapital" , III . ໖, ໑ກກ. ສະບັບແປເປັນພາສາລັດເຊຍ' ໜ້າ ໕໘໙ ). ສະນັ້ນບໍ່ສາມາດຈະສຳນຶກໄດ້ວ່າລັດທິທຶນນິຍົມຖ້າຫາກບໍ່ມີປະກົດການຈຳນວນພົນລະເມືອງອຸດສາຫະກຳ ແລະການຄ້າເພີ່ມຂຶ້ນເຮັດໃຫ້ຈຳນວນພົນລະເມືອງກະສິກຳລົດລົງ, ແລະ ບໍ່ມີໃຜຈະບໍ່ຮູ້ວ່າປະກົດການດັ່ງກ່າວ ສະແດງອອກຢ່າງຈະແຈ້ງທີ່ສຸດຢູ່ໃນ ທຸກປະເທດທຶນນິຍົມ ບໍ່ຈຳເປັນຕ້ອງຢັ້ງຢືນວ່າປະກົດການດັ່ງກ່າວມີ ຄວາມໝາຍຍິ່ງໃຫຍ່ໃນບັນຫາທ້ອງຕະຫລາດພາຍໃນປະເທດ, ເພາະວ່າປະກົດການດັ່ງກ່າວຕິດພັນຢ່າງໜັກແໜ້ນທັງກັບການຂະຫຍາຍຕົວຂອງອຸດສາຫະກຳທັງກັບການຂະຫຍາຍຕົວກະສິກຳ; ການກໍ່ຮ່າງສ້າງຕົວ ຂຶ້ນຂອງໃຈກາງອຸດສາຫະກຳຕ່າງໆ, ປະລິມານອັນນັບນັ້ນັບເພີ່ມຂຶ້ນ ຂອງບັນດາໃຈກາງອຸດສາຫະກຳເຫລົ່ານັ້ນ ແລະ ກຳລັງດຶງດູດຂອງມັນ ຕໍ່ພົນລະເມືອງບໍ່ສາມາດຈະມີຜົນສະທ້ອນຢ່າງເລິກເຊິ່ງທີ່ສຸດເຖິງທົ່ວທັງຊີວິດຂອງຊົນນະບົດ, ບໍ່ສາມາດຈະບໍ່ເຮັດໃຫ້ພື້ນຖານກະສິກຳຜະລິດ ສິນຄ້າ ແລະ ທຶນນິຍົມຂະຫຍາຍຕົວຍິ່ງຂຶ້ນ. ສິ່ງທີ່ເປັນຕາເອົາໃຈໃສ່ກວ່ານັ້ນອີກແມ່ນພາຍໃນບັນດາຄຳອ້າງເຫດຜົນອັນເປັນທິດສະດີລ້ວນໆ ຂອງເຂົາ, ກໍຄືພາຍໃນບັນດາຄຳອ້າງເຫດຜົນຂອງເຂົາວ່າດ້ວຍລັດທິ ທຶນນິຍົມຢູ່ລັດເຊຍ ( ຢູ່ຂ້າງລຸ່ມນີ້, ເຖິງພາກທີ III ,ພວກເຮົາຈະກ່າວໂດຍລະອຽດ ບັນດາປະກົດການອັນເປັນພິເສດຂອງກົດເກນ ຢູ່ໃນ

ລັດເຊຍ ). ຜູ້ຕາງໜ້າຕ່າງໆຂອງບັນດານັກເສດຖະສາດປະຊາລາດ ລ້ວນບໍ່ຫືວຊາເຖິງກົດເກນດັ່ງກ່າວແຕ່ຢ່າງໃດເລີຍ. ທິດສະດີຕ່າງຕ່າງ ຂອງສອງທ່ານ ວ.ວ.ແລະນ.ໂອນ ວ່າດ້ວຍທ້ອງຕະຫລາດພາຍໃນປະເທດຂອງລັດທິທຶນນິຍົມໄດ້ຫລົງລືມລາຍລະອຽດນ້ອຍໆແນວໜຶ່ງ: ບັນດາພົນລະເມືອງພັດພາກຈາກກະສິກຳ ເພື່ອກາວເຂົ້າສູ່ອຸດສາຫະກຳ, ແລະ ຜົນສະທ້ອນຂອງ ບັນຫານັ້ນຕໍ່ກະສິກຳ [໑]).

---

໑) ການເປັນເອກະສັນກັນລະຫວ່າງທັດສະນະຕ່າງໆຂອງບັນດານັກພິມຈິດເອີຣົບຕາເວັນຕົກ ແລະ ພວກປະຊາລາດ ລັດເຊຍກ່ຽວກັບການເພີ່ມຂຶ້ນຂອງຈຳນວນພົນລະເມືອງອຸດສາຫະກຳນັ້ນ, ພວກເຮົາໄດ້ຍົກຂຶ້ນຢູ່ໃນບົດຄວາມ: " ວ່າດ້ວຍຈຸດພິເສດຂອງລັດທິເພີ່ມຈິດເສດຖະກິດ. ຊິດສມົນດີ ແລະ ລູກນ້ອງຂອງເພີ່ນຢູ່ໃນປະເທດເຮົາ ".(ວ.ອເລນິນ, ຄົບຊຸດ, ເປັນພາສາຫວຽດນາມ, ສຳນັກພິມຈຳໜ່າຍ ໂປ່ແຍສ, ມົສກູ, ເຫລັ້ມ ໔.

## ພາກທີ IV

## ການຂະຫຍາຍຕົວຂອງພື້ນຖານກະສິກຳ ຜະລິດສິນຄ້າ

.....

ແນວນັ້ນ, ພວກເຮົາເຫັນໄດ້ວ່າຈົນເຖິງຊຸມປີ ໗໐, ຈຸດພິເສດຂອງສະໄໝລຸນຫລັງຂອງການປະຕິຮູບແມ່ນການຜະລິດທັນຍາຫານ ຊະນິດຕ່າງໆຮ່ວມທັງມັນຝະລັ່ງກໍໄດ້ເພີ່ມຂຶ້ນຢ່າງຈະແຈ້ງ, ສະມັດຖະພາບຂອງງານໃນກະສິກຳເພີ່ມຂຶ້ນ: ທີໜຶ່ງແມ່ນລາຍໄດ້ສົດເພີ່ມຂຶ້ນໄວກ່ວາເນື້ອທີ່ປູກຝັງ ( ຍົກເວັ້ນແຕ່ບາງກໍລະນີພິດທຳມະດາ );ທີສອງແມ່ນ, ຄວາມເອົາໃຈໃສ່ວ່າໃນໄລຍະເວລານັ້ນ, ຈຳນວນພົນລະເມືອງຜະລິດສະເພາະແຕ່ກະສິກຳໄດ້ລົດລົງຢ່າງບໍ່ຢຸດຢັ້ງ, ຍ້ອນວ່າມີຫລາຍຄົນ ລະຖິ້ມການກະສິກຳ ເພື່ອໄປຕາມການຄ້າ ແລະ ອຸດສາຫະກຳ, ແລະ ກໍຍ້ອນວ່າການອົບພະຍົບໜີຈາກພາກສ່ວນດິນລັດເຊຍທີ່ຂຶ້ນກັບເອີຣົບ[1]).

---

໑) ຄວາມເຫັນຂອງທ່ານ ນ.ໂອນ ຜິດຢ່າງສິ້ນເຊີງ,ເພາະວ່າ ເພິ່ນໄດ້ຢືນຢັນຢ່າງແນວແນ່ວ່າ " ບໍ່ມີສາຍເຫດອັນໃດເພື່ອຈະຍົກສົມມຸດວ່າຈຳນວນພົນຂອງເຂົາເຈົ້າລົດຜ່ອນລົງ( ຈຳນວນຄົນທີ່ທຳການຜະລິດກະສິກຳ), "ກົງກັນຂ້າມຢ່າງຂາດຕົວ" ("ພິຈາລະນາໂດຍຫຍໍ້", ==)

ນິເທດການເປັນພິເສດໜ້າເອົາໃຈໃສ່ກ່າວຄືກະໂຕກະສິກຳ  <u>ສິນຄ້າ</u>
ພວມພັດທະນາຂຶ້ນ: ຈຳນວນເຂົ້າເບຣທີ່ເກັບກ່ຽວໄດ້ ( ຫັກເຂົ້າແນວ
ອອກແລ້ວ ) ໄລ່ຕາມຫົວຄົນໄດ້ເພີ່ມຂຶ້ນ, ແລະ ການແບ່ງງານສັງຄົມ
ພາຍໃນພົນລະເມືອງເຫລົ່ານັ້ນນັບມື້ນັບຈະແຈ້ງກ່ວາເກົ່າ; ຈຳນວນພົນ
ລະເມືອງການຄ້າ ແລະ ອຸດສາຫະກຳເພີ່ມຂຶ້ນ; ຈຳນວນພົນລະເມືອງ
ກະສິກຳພົນແຍກເປັນເຈົ້າວິສາຫະກິດ ແລະ ຊົນຊັ້ນກຳມາຊີບຊົນນະບົດ;
ການທັບເປັນວິຊາສະເພາະຖືກເພີ່ມທະວີຂຶ້ນທັງຢູ່ໃນກະໂຕ ກະສິກຳອີກ
ດ້ວຍ, ສະນັ້ນຈຳນວນເຂົ້າເບຣທີ່ຖືກຜະລິດອອກ ເພື່ອຂາຍເພີ່ມຂຶ້ນໄວ
ກ່ວາຫລາຍຖາຫລຽບກັບລະດັບເພີ່ມຂຶ້ນຂອງຍອດປະລິມານເຂົ້າເບຣທີ່ຜະ
ລິດໄດ້ພາຍໃນປະເທດ. ລັກສະນະທຶນນິຍົມຂອງຂະບວນວິວັດທີ່ກ່າວມາ
ແລ້ວນັ້ນໄດ້ສະແດງອອກຈະແຈ້ງທີ່ສຸດຢູ່ບ່ອນວ່າມັນຝະລັ່ງຍຶດທີ່ຕັ້ງ ນັບມື້
ນັບສຳຄັນຍິ່ງຂຶ້ນພາຍໃນຍອດປະລິມານການຜະລິດກະສິກຳ ໑). ການ
ເປີດກວ້າງເນື້ອທີ່ປູກມັນຝະລັ່ງຊີ້ໃຫ້ເຫັນໃນດ້ານໜຶ່ງວ່າເຕັກນິກ ກະສິ

---

===) ນີ້ມີ, ໝາຍເຫດ ). ເຊີນອ່ານພາກທີ (III) , ຂໍ້ ໔.
໑) ລາຍໄດ້ສົດກ່ຽວກັບມັນຝະລັ່ງຄິດສະເລ່ຍຕາມຫົວຄົນໄດ້ເພີ່ມຂຶ້ນ ຢູ່
ເຂດແຄວນຂອງພາກສ່ວນດິນລັດເຊຍທີ່ຂຶ້ນກັບ ທະວີບຢູໂຣບ ໂດຍບໍ່ມີການ
ຍົກເວັ້ນເຂດໃດເລີຍ, ແຕ່ ໑໙໕໔ - ໑໙໕໕ ເຖິງ ໑໙໖໐ -໑໙໖໗
ແຕ່ ໑໙໖໐ - ໑໙໖໗ ເຖິງ ໑໙໗໓ - ໑໙໗໖, ເພີ່ມຂຶ້ນຢູ່ໃນກຸຂອງ
ຈຳນວນ ໑໑ເຂດທີ່ເປັນຕົ້ນຕໍກ່າວຄື: ເຂດຣິມທະເລບານຕິກ, ເຂດ
ຕາເວັນຕົກ, ເຂດອຸດສາຫະກຳ, ບັນດາເຂດຕາເວັນຕົກສຽງ ===)

ກຳຖືກດັດປ່ຽນກ້າວໜ້າ ( ປູກບັນດາຕົ້ນໄມ້ທີ່ມີຫົວ ) ແລະ ການປ່ຽນແປງພະລິດພັນກະສິກຳດ້ວຍຊຸດສາຫະກຳ ໄດ້ມີຄວາມກ້າວໜ້າ ( ອາຈົບຕົ້ນເຫລົ້າ ແລະ ພະລິດແປ້ງມັນຝະລັ່ງ ). ດ້ານອື່ນອີກຢືນຢູ່ທາງດ້ານຈົນຈົບທົ່ວໜ້າວິສາຫະກິດຈົນນະບົດ, ນັ້ນແມ່ນແຫລ່ງມູນຄ່າສ່ວນເກີນທຽບຖານ ( ຄ່າແຮງງານຕ່ຳຊຸນນະພາບອາຫານການກິນສຳຫລັບປະຊາຊົນຕ່ຳ ) ຕົວເລກທີ່ນີ້ມາໃນລະຫວ່າງສິບປີ ໑໘໘໕ - ໑໘໙໔ ພັດໄດ້ຢັ້ງຢືນວ່າ ວິກິດການ ໑໘໙໑ - ໑໘໙໒, - ວິກິດການເສດຖະກິດທີ່ໄດ້ເຮັດໃຫ້ຊາວນາຖືກປຸ້ນສະດົມຢ່າງຮ້າຍກາດ, - ໄດ້ເຮັດໃຫ້ການພະລິດເຂົ້າເບຣຈຸດລົງຢ່າງຫລວງຫລາຍ ແລະ ສະມັດຖະພາບຂອງທັນ

---

===) ເໜືອ, ເຂດເໜືອ, ເຂດໃຕ້, ເຂດທົ່ງຫຍ້າ, ຍ່ານລຸ່ມຂອງເຊວອນກາ ແລະ ທິດຕາເວັນອອກຂອງ ເຊວອນກາ ). (ເຊີນອ່ານ "ຊຸດເອກະສານສະຖິຕິກະສິກຳໂດຍອີງຕາມເອກະສານຂອງພວກເຈົ້າຂອງວິສາຫະກິດ". ພາກ III, ແຊງເປແຕັກບົວ, ໑໘໙໗( ກະຊວງກະສິກຳເປັນຜູ້ພິມຈຳໜ່າຍ ) ປີ ໑໘໗໑, ມັນຝະລັ່ງໃນ ໕໐ ແຂວງຂອງພາກສ່ວນດິນລັດເຊຍທີ່ຂຶ້ນກັບເອີຣົບ ກວມເປັນ ໗໙໐.໐໐໐ ເດຊີອາຕິນ; ປີ ໑໘໘໑ - ໑.໓໗໕.໐໐໐; ປີ໑໘໙໕, ໒.໑໕໕.໐໐໐, ໝາຍຄວາມວ່າເນື້ອທີ່ປູກມັນຝະລັ່ງພາຍໃນ ໑໔ ປີໄດ້ເພີ່ມຂຶ້ນ ໕໕%. ຊຸປະນາວ່າການເກັບກ່ຽວມັນຝະລັ່ງປີ ໑໘໔໑ ເປັນ ໑໐໐, ພວກເຮົາຈະມີບັນດາຕົວເລກດັ່ງຕໍ່ໄປນີ້: ປີ ໑໘໖໑-໑໖໐; ປີ ໑໘໗໑-໑໕໖; ປີ ໑໘໘໑ - ໖໙໗; ປີ ໑໘໙໕ - ໕໓໐.

ຍາພືດຊະນິດຕ່າງໆລ້ວນຈຸດລົງ; ແຕ່ວ່າເລື່ອງມັນຝະລັ່ງເຫລືອມລ້ຳທັນຍະພືດນັ້ນໄດ້ມີຄວາມຮຸນແຮງຈົນກະທັ້ງເຖິງແມ່ນວ່າການເກັບກ່ຽວ ຈຸດກວ່າເກົ່າກໍຕາມ ການຜະລິດມັນຝະລັ່ງໄລ່ຕາມຫົວຄົນຍັງຄົງເພີ່ມຂຶ້ນຕື່ມ. ທ້າຍສຸດ, ໃນທ້າຍປີມໍ່ໆນີ້ ( ໑໙໐໐ - ໑໙໐໔ ) ກໍຢັ້ງຢືນວ່າການຜະລິດ ກະສິກຳ ແລະ ສະມັດຖະພາບຂອງງານໃນການກະສິກຳ ລ້ວນມີຄວາມກ້າວໜ້າ, ແລະ ກໍສະແດງວ່າສະພາວະຂອງຊົນຊັ້ນກຳມະກອນຍິ່ງຄັບຂັນຂຶ້ນຕື່ມ ( ບົດບາດຂອງມັນຝະລັ່ງເຕີບໃຫ່ຍຂຶ້ນຕື່ມ).

ດັ່ງທີ່ພວກເຮົາໄດ້ຮັບຮູ້ຂ້າງບົນ, ການຂະຫຍາຍຕົວຂອງການກະສິກຳຜະລິດສິນຄ້າໄດ້ສະແດງອອກໃນການຫັນເປັນການຜະລິດສະເພາະຂອງກະສິກຳ. ບັນດາເອກະສານສັງລວມກ່ຽວກັບການຜະລິດທັນຍະພືດຊະນິດຕ່າງໆນັ້ນພຽງສາມາດໃຫ້ເຮົາຮູ້ຢ່າງລວບລວມກ່ຽວກັບຂະບວນວິວັດດັ່ງກ່າວ ( ແລະ ບໍ່ແມ່ນວ່າເວລາໃດກໍເປັນດີແນວນັ້ນ ), ເພາະວ່າບັນດາຈຸດພິເສດສະເພາະຕົວ ຂອງເຂດຕ່າງໆທີ່ຕ່າງກັນ ໃນເວລານັ້ນກໍບໍ່ຄົງຕົວຢູ່ອີກ. ເຖິງແມ່ນເປັນແນວນັ້ນກໍຕາມ, ຫລັງຈາກ ລະບອບທາດກະສິກອນຖືກລົບລ້າງລົງແລ້ວ, ກະໂຕຄວາມແຕກຕ່າງກັນລະຫວ່າງເຂດກະສິກຳຕ່າງໆພັດເປັນໜຶ່ງໃນບັນດາປະກົດການອັນ ເປັນເອກະລັກກວ່າໝູ່ແຫ່ງການກະສິກຳຢູ່ໃນລັດເຊຍ, ຕົວຢ່າງຄື, ປື້ມ" ສັງເຂບສະຖິຕິປະຫວັດສາດທາງດ້ານອຸດສາຫະກຳຢູ່ໃນລັດເຊຍ ". ( ເຫລັ້ມ 7 ,ແຊງ ເປ ແຕັກບົວ, ໑໘໘໓ ) ທີ່ໄດ້ແນະນຳ ມາຂ້າງບົນບົ່ງແຈ້ງບັນດາເຂດກະສິກຳດັ່ງຕໍ່ໄປນີ້: ເຂດປູກປ່ານ," ເຂດມີທ່າດີທາງດ້ານລ້ຽງສັດ ", ໂດຍສະເພາະແມ່ນເຂດຊຶ່ງ "ອຸດສາຫະ

ກຳພະລິດນີ້ມີຂະຫຍາຍຕົວທີ່ສຸດ " ເຂດມີທ່າດີໃນການພະລິດທັນຍະພືດ ໂດຍສະເພາະແມ່ນເຂດພະລິດໝູນວຽນສາມພາກແລະເຂດ ປະເປັນນາເຮືອຫລືເຂດພະລິດໝູນວຽນຫລາຍພາກໂດຍມີການ ປູກຫຍ້າແກມກັນ ( ປະກອບດ້ວຍສ່ວນໜຶ່ງຂອງເຂດທົ່ງຫຍ້າ " ຊຶ່ງຈຸດພິເສດຂອງມັນແມ່ນພະລິດເຂົ້າເບຣຊະນິດຕ່າງທີ່ປະເສີດກ່ວາໝູ່, ຣຽກວ່າເຂົ້າເບຣແຕງສຳຫລັບຂາອອກ ). ເຂດປູກຫົວຜັກກາດຫວານ, ເຂດປູກມັນຝະລັ່ງສຳລັບຕົ້ມເຫລົ້າ. " ບັນດາເຂດເສດຖະກິດເຫລົ່ານັ້ນກຳເນີດຂຶ້ນບົນພື້ນແຜ່ນດິນພາກສ່ວນຂຶ້ນກັບເອີຣົບຂອງປະເທດລັດເຊຍ ໃນສະໄຫມອ່າວນໍ່ງນີ້ ແລະ ໃນແຕ່ລະປີຍັງຄົງສືບຕໍ່ຂະຫຍາຍຕົວແລະແຍກອອກຈາກກັນຜ່ານບັ້ນຕໍ່ໃສ່ປີອື່ນ" (ປື້ມທີ່ໄດ້ແນະນຳ, ໜ້າ ໑໕, [໑]). ດັ່ງນັ້ນແລ້ວ, ດຽວນີ້ໜ້າທີ່ຂອງພວກເຮົາແມ່ນຄົ້ນຄວ້າຂະບວນ ວິວັດແຫ່ງການຫັນເປັນພະລິດສະເພາະດັ່ງກ່າວຂອງກະສິກຳ;ພວກເຮົາຕ້ອງ

---

໑) ເຊີນອ່ານທັງ " ການກະສິກຳ ແລະ ການປ່າໄມ້ຂອງ ປະເທດລັດເຊຍ ໜ້າ ໘໔-໘໘; ຢູ່ທີ່ນີ້ນັກປະພັນຍັງເວົ້າເຖິງເຂດປູກຢາສູບອີກດ້ວຍ. ບັນດາແຜນທີ່ຂອງພວກທ່ານ ດ.ເຊມີໂອນົບ ແລະ ອາ. ຟອກຕູນາຕົບ ກໍມີການຈຳແນກ ບັນດາເຂດປູກຝັງຕົ້ນຕໍແມ່ນບັນດາພືດພັນທີ່ໄດ້ປູກຝັງຢູ່ນາ: ຕົວຢ່າງຄື, ເຂດເຂົ້າແຊກະລີ - ອາວານີ-ປ່ານ ( ບັນດາແຂວງເປີສກົບ ແລະ ອີອາໂຣບສລາບ ), ບັນດາເຂດເຂົ້າແຊກະລີ - ອາວານີ - ມັນຝະລັ່ງ ( ບັນດາແຂວງ ເກີລົດໂນ ແລະ ມິສກູ ) ໆລໆ ...

ຄົ້ນຄວ້າເບິ່ງວ່າ ການກະສິກຳພະລິດສິນຄ້າຈະມີຄວາມກ້າວໜ້າ ພາຍໃຕ້ທັງໝົດທຸກຮູບການຂອງມັນເອງຫລື, ພ້ອມກັນນັ້ນມັນຈະກໍ່ຮູບເປັນເສດຖະກິດທຶນນິຍົມຫລື, ລັດທິທຶນນິຍົມກະສິກຳຈະມີບັນດາຈຸດພິ ເສດຊຶ່ງພວກເຮົາໄດ້ກ່າວມາຂ້າງບົນເມື່ອເວລາໄຈ້ແຍກຕົວເລກສັງ ເຂບຕ່າງໆກ່ຽວກັບເສດຖະກິດຊາວນາ ແລະ ເສດຖະກິດເຈົ້າທີ່ດິນຫລື . ເປັນອັນແນ່ນອນວ່າ, ເພື່ອບັນລຸເຖິງຈຸດປະສົງຂອງພວກເຮົາເອງ , ພຽງແຕ່ຕ້ອງວາດພາບເຂດຕົ້ນຕໍຕ່າງໆ ແຫ່ງການກະສິກຳພະລິດສິນຄ້າເທົ່ານັ້ນເອງ.

.............

ບັດນີ້ພວກເຮົາຂໍເວົ້າບາງຄວາມກ່ຽວກັບບັນດາວິສາຫະກິດຢູ່ຊານເມືອງຕື່ມອີກ. ຄວາມແຕກຕ່າງກັນລະຫວ່າງວິສາຫະກິດເຫລົ່ານີ້ກັບບັນດາພະແນກກະສິກຳພະລິດສິນຄ້າຕ່າງໆຊຶ່ງໄດ້ຖືກວາດພາບມາຂ້າງບົນ, ແມ່ນຢູ່ບ່ອນວ່າ: ບັນດາພະແນກກະສິກຳຊະນິດຕ່າງໆຂ້າງບົນພຽງ ແຕ່ເລັ່ງໃສ່ພະລິດພັນໜຶ່ງທີ່ແນ່ນອນ ແລະ ເປັນຕົ້ນຕໍບົນທ້ອງ ຕະຫລາດເທົ່ານັ້ນເອງ. ສ່ວນຢູ່ໃນວິສາຫະກິດຕ່າງໆ ຢູ່ຊານເມືອງພັດເປັນ ກົງກັນຂ້າມ, ຊາວນາພະລິດນ້ອຍໄດ້ນຳທຸກສິ່ງທຸກຢ່າງເຂົ້າສູ່ວົງໂຄ ຈອນແຫ່ງການຄ້າຂາຍ: ເຂົາເຈົ້າເປັນຜູ້ໃຫ້ເຊົ່າເຮືອນຢູ່,ເດີ່ນບ້ານ,ແລະນ້າຂອງຕົນ, ຂາຍພະລິດພັນທຸກຊະນິດຊຶ່ງເຂົາເຈົ້າໄດ້ພະລິດອອກມາຢູ່ທົ່ງນາຫລືຢູ່ໃນເຮືອນ, ເຊັ່ນວ່າ: ເຂົ້າເປືອ, ຫົວອາຫານສັດລ້ຽງ,ນ້ຳນົມ, ຊີ້ນ,ຜັກ ໝາກໄມ້ນ້ອຍ, ປາ, ຟືນ ຯລຯ... ເຂົາເຈົ້າໄດ້ຂາຍທັງນ້ຳນົມຂອງເມຍຕົວເອງ ( ນີ້ແມ່ນອາຊີບຂອງບັນດາແມ່ຍິງ ທີ່

ເປັນແມ່ນົມທີ່ຢູ່ໃນເຂດແຄ້ວນອ້ອມແອ້ມນະຄອນຫລວງ), ເຂົາເຈົ້າຫາເງິນດ້ວຍວິທີເຮັດທຸກໜ້າວຽກ ( ບໍ່ແມ່ນວ່າເວລາໃດກໍເວົ້ານາໄດ້ ) ຮັບໃຊ້ຄົນຕົວເມືອງຢູ່ກັບຊານເມືອງ [໑]). ຯລຯ... ແລະ ຯລຯ[໒] ) ລັດທິທຶນນິຍົມໄດ້ເຮັດໃຫ້ຊາວນາຜູ້ເປັນເຈົ້າໂດຍແບບເກື່າມິການ ຜັນປ່ຽນຢ່າງສົມບູນ, ຊາວນາຜູ້ນັ້ນຍິນຍອມຢ່າງຂາດຕົວຕໍ່ " ອິດທິກຳລັງຂອງເງິນຕາ " - ສະພາວະດັ່ງກ່າວໄດ້ສະແດງອອກມາຢູ່ທີ່ນີ້ຢ່າງຈະແຈ້ງຈົນກະທັ້ງວ່າ ຊາວປະຊາລາດເຄີຍໄດ້ແບ່ງຊາວນາ ເທດສະບານ

---

໑) ເຊີນອ່ານ ຊູ - ສແປນ - ສກີ :" ຄັດຈາກບັນທຶກປະຈຳວັນຊົນນະບົດ ".

໒) ເພື່ອເປັນການຢັ້ງຢືນ, ພວກເຮົາແນະນຳປຶ້ມ"ເອກະສານ" ທີ່ໄດ້ກ່າວມາຂ້າງບົນກ່ຽວກັບເສດຖະກິດຊາວນາຢູ່ກັບເມືອງ ປແຕັກບົວ.ຢູ່ທີ່ນີ້, ອັນທີ່ເປັນຄວາມຊິນເຄີຍແບບຊາວຄາຊະນິດຕ່າງໆເປັນຫລາຍຮູບຫລາຍສີຖືກຄົງຕົວພາຍໃຕ້ບັນດາຮູບການແຫ່ງ " ອາຊີບສຳຮອງ"ຕ່າງຕ່າງທີ່ຕ່າງກັນ: ອາຊີບໃຫ້ເຊົ່າບານພັກ ແລະ ໃຫ້ເຊົ່າສ່ວນນອນ, ອາຊີບຜະລິດນ້ຳນົມ, ອາຊີບເຮັດສວນ, ອາຊີບຂາຍຜັກ ແລະ ໝາກໄມ້ອາຊີບແລ່ນກວຽນມາ ເພື່ອເປັນວິຊາທຳມາຫາກິນ", ອາຊີບໄປ ເປັນແມ່ນົມ, ອາຊີບຕຶກກຸ້ງ, ຕຶກປາ, ຯລຯ... ສະພາບການຂອງ ຊາວນາທີ່ຊານເມືອງເມືອງຕູລາ ກໍເຊັ່ນດຽວກັນໃຫ້ອ່ານບົດປະພັນຂອງທ່ານໂບຣິສົບນາຕູາ /x , ປຶ້ມ" ກິດຈະກຳຄົ້ນຄວ້າຂອງຄະນະ ກຳມະການ ສືບສວນກ່ຽວກັບອຸດສາຫະກຳ ຫັດຖະກຳ ".

ອອກເປັນປະເພດໜຶ່ງຕ່າງຫາກ ແລະ ຖືວ່າ " ບໍ່ເປັນຊາວນາອີກ". ເຖິງວ່າເປັນແນວນັ້ນກໍຕາມ, ຊາວນາປະເພດນີ້ພຽງແຕ່ແຕກຕ່າງ ກັບ ຊາວນາປະເພດທີ່ໄດ້ກ່າວມາຂ້າງບົນທາງດ້ານຮູບການປະກົດ ຕົວອອກ ເທົ່ານັ້ນເອງ. ຫາກແຕ່ທາງດ້ານການເມືອງ ແລະ ເສດຖະກິດ ຂອງ ການຜັນປ່ຽນໃນທຸກດ້ານ ໂດຍແມ່ນລັດທິທຶນນິຍົມເປັນຜູ້ນຳມາສູ່ ຊາວນາ ຜະລິດນ້ອຍເວລາໃດ ແລະ ຢູ່ບ່ອນໃດກໍຄືກັນທັງສິ້ນ. ຖ້າວ່າ ຈຳນວນ ຕົວເມືອງ, ເຂດກຳມະກອນ, ໃຈກາງແຫ່ງອຸດສາຫະກຳການຄ້າແລະ ສະຖານີລົດໄຟທາງນັ້ນມີນັບຫລາຍຍິ່ງຂຶ້ນນັ້ນ, ຄົນເຮົາກໍຍິ່ງເຫັນວ່າ " ຊາວນາແຫ່ງກອມມູນຊົນນະບົດ " ຂອງປະເທດເຮົາໄດ້ຜັນປ່ຽນ ເປັນ ຊາວນາຊະນິດໃຫມ່ດັ່ງກ່າວ. ພວກເຮົາຢ່າລືມຄວາມເວົ້າຊຶ່ງ ອາດາມ ສະມິດ ໄດ້ກ່າວມາແຕ່ດົນ, ນັ້ນແມ່ນ: ທາງຄົມມະນາຄົມນັບມື້ນັບ ບໍລິ ບູນຍິ່ງຂຶ້ນ, ມັນຍິ່ງຈະເຮັດໃຫ້ທຸກຄຸ້ມທຸກບ້ານກາຍເປັນບັນດາເຂດຊາຍ ເມືອງ [1]) ໃນປະຈຸບັນບັນດາເຂດສອກຫລີກຫາຍາກທີ່ສຸດ, ນັບມື້ນັບ

---

"good road, canal and navigable rivers by diminishing the espense of carriage put the remots parts of the contry more nearly upon a level withe those in the neigh bourhood of ther :oun"

( ບັນດາເສັ້ນທາງທີ່ດີ, ບັນດາຮ່ອງຂຸດ ແລະ ແມ່ນ້ຳທີ່ໃຊ້ການ ຈໍລະ ຈອນໂດຍດີລ້ວນເຮັດໃຫ້ຄ່າຂົນສົ່ງລົດລົງ, ເຮັດໃຫ້ເຂດຫ່າງໄກ ==)

ກາຍເປັນເລືອງດຶກດຳບັນ, ແລະ ຊາວນາກໍນັບມື້ນັບກາຍເປັນຊາວຜະລິດຊຸດສາທະກຳ ທີ່ຍອມຢູ່ໃຕ້ການຄອບຄອງຂອງບັນດາກົດເກນ ແຫ່ງການຜະລິດສິນຄ້າ.

ເພື່ອມ້ວນທ້າຍການວິພາກວິຈານກ່ຽວກັບບັນດາເອກະສານ ຈຶ່ງກ່າວເຖິງຄວາມກ້າວໜ້າຂອງຂະແໜງກະສິກຳຜະລິດສິນຄ້າ, ພວກເຂົາເຫັນວ່າຕ້ອງເຕືອນຄືນໃໝ່ຢູ່ທີ່ນີ້ວ່າ ໜ້າທີ່ຂອງພວກເຂົາ ບໍ່ແມ່ນວ່າຄົ້ນຄວ້າທັງໝົດທຸກຮູບການຂອງຂະແໜງກະສິກຳດັ່ງກ່າວ, ຫາກເປັນການຄົ້ນຄວ້າຮູບການຕົ້ນຕໍຂອງຂະແໜງດັ່ງກ່າວ.

.....

X . ບັນດາທິດສະດີຂອງຝ່າຍປະຊາລາດກ່ຽວກັບລັດທິທຶນ ນິຍົມໃນການກະສິກຳ. ການຫວ່າງວຽກໃນລະດູໜາວ".

ຕ້ອງມີການເພີ່ມເຕີມໃຫ້ແກ່ບັນດາຄຳສະຫລຸບຢັ້ງຢືນຢ່າງແນ່ວແນ່ກ່ຽວກັບຖານະບົດບາດຂອງລັດທິທຶນນິຍົມ " ດັ່ງທີ່ໄດ້ກ່າວມາຂ້າງບົນ, ໂດຍວິທີໃຈແຍກບາງ " ທິດສະດີ " ພິເສດວ່າດ້ວຍບັນຫາດັ່ງກ່າວ , ບັນດາທິດສະດີທີ່ໄດ້ເຜີຍແຜ່ໃນປຶ້ມ ແລະ ໜັງສືພິມປະເທດເຂົາ.ຕາມປົກກະຕິຝ່າຍປະຊາລາດຢູ່ໃນປະເທດເຂົາສະແດງຕົວວ່າບໍ່ມີຄວາມ ສາມາດຈະຮັບຮູ້ທັດສະນະພື້ນຖານຕ່າງໆຂອງມາກກ່ຽວກັບລັດທິທຶນນິຍົມກະ

---

==) ຕ່າງໆພາຍໃນປະເທດໜຶ່ງບັນລຸເຖິງລະດັບໜຶ່ງທຽບເທົ່າ ກັບເຂດຊານເມືອງຂອງຕົວເມືອງ) ບົດປະພັນທີ່ຖືກແນະນຳມາແລ້ວ, ເຫຼັ້ມ / , ໜ້າ ໔໔໘ - ໔໔໙).

ສິກຳ. ບັນດາຜູ້ທີ່ສັດຊື່ກ່ວາໝູ່ໝົດໃນພວກເຂົາເອງໄດ້ປະກາດ ຢ່າງເປີດແປນວ່າທິດສະດີຂອງມາກບໍ່ກວມເອົາການກະສິກຳ ( ທ່ານ ວ.ວ ຂຽນໃນປຶ້ມ " ບັນດາທິດທາງຂອງພວກເຮົາ "), ສ່ວນຈຳນວນ ອື່ນໃນພວກເຂົາ ( ເຊັ່ນທ່ານ ນ.ໂອນ ເປັນຕົ້ນ ) ພັດພັກຢາກ ຫລີກລຽງບັນຫາທ່າທີຂອງໆທິດສະດີ " ຕ່າງໆຂອງເຂົາເຈົ້າຕໍ່ທິດສະດີຂອງມາກຢ່າງຄ່ອງແຄວ. ໃນຈຳນວນທິດສະດີຊະນິດ ນັ້ນ, ບັນດາທິດສະດີທີ່ຖືກເຜີຍແຜ່ຫລາຍກ່ວາໝູ່ໝົດຂອງນັກເສດຖະສາດຕ່າງໆແຫ່ງ ຝ່າຍປະຊາລາດ, ມີທິດສະດີ " ການຫວ່າງງານ ໃນລະດູໜາວ ".ຕໍ່ໄປນີ້ແມ່ນເນື້ອໃນຂອງທິດສະດີອັນນັ້ນ [1]).

ພາຍໃຕ້ລະບອບທຶນນິຍົມ, ກະສິກຳກາຍເປັນຂະແໜງຊຸດສາຫະກຳສະເພາະຕ່າງຫາກ ແລະ ບໍ່ມີການກ່ຽວກັນຫຍັງກັບຂະແໜງ ການອື່ນໆ. ແຕ່ວ່າໃນການກະສິກຳ, ບໍ່ແມ່ນວ່າຈະມີວຽກເຮັດງານທຳ ຕະຫລອດປີ, ຫາກພຽງມີວຽກເຮັດງານທຳພາຍໃນ ໔ ເຖິງ ໖ ເດືອນເທົ່ານັ້ນເອງ, ເນື່ອງຈາກນັ້ນ, ການຫັນກະສິກຳເປັນກະສິກຳທຶນນິຍົມ

---

ວ.ວ. " ສັງເຂບກ່ຽວກັບ ເສດຖະກິດ ທິດສະດີ ", ໜ້າ ໑໐໙ ແລະ ໜ້າອື່ນໆທີ່ຕໍ່ຈາກນັ້ນ ນ.ໂອນ " ພິຈາລະນາ ໂດຍຫຍໍ້ ", ໜ້າ ໘໑໔ ແລະ ໜ້າອື່ນໆ ຕໍ່ຈາກນັ້ນ. ທ່ານ ກາຍລູກິບ ກໍມີບັນດາແນວຄິດຄືແນວນັ້ນ. " ບັນດາບົດບັນຍາຍວ່າດ້ວຍ ເສດເສດຖະກິດ ກະສິກຳ ". ມົດສະກູ , ໑໙໒໘ . ໜ້າ ໔໔ ແລະ ໜ້າ ອື່ນໆ ຕໍ່ຈາກນັ້ນ .

ຈະພາໄປເຖິງ " ການຫວ່າງວຽກໃນລະດູໜາວ ", ເຖິງ " ການຈຳກັດເວລາອອກແຮງງານຂອງຊາວນາໃນຂອບເຂດສ່ວນໜຶ່ງ ຂອງໝົດປີ ", ນັ້ນແມ່ນເປັນ " ສາຍເຫດອັນຕົ້ນຕໍທີ່ເຮັດໃຫ້ສະພາບການເສດຖະກິດຂອງບັນດາຊົນຊັ້ນກະສິກຳຍິ່ງຮ້າຍແຮງກ່ວາເກົ່າ " ( ນ. ໂອນ, ໜ້າ ໔໔໙ ), ເຮັດໃຫ້ທ້ອງຕະຫລາດພາຍໃນປະເທດຖືກຮັດແຄບເຂົ້າ ແລະ " ເຮັດໃຫ້ກຳລັງການຜະລິດ " ຂອງສັງຄົມ " ຖືກຟຸ່ມເຟືອຍ " " ທ່ານ ວ.ວ).

ນັ້ນແມ່ນເນື້ອໃນທັງໝົດຂອງທິດສະດີທີ່ລືຊື່ດັ່ງກ່າວ, ມັນສ້າງເປັນບັນດາຂໍ້ສະຫລຸບແຫ່ງປະຫວັດສາດປັດຊະຍາອັນກວ້າງຂວາງກ່ວາ ໝູ່ໝົດ ບົນພື້ນຖານສັດຈະທຳທີ່ຍິ່ງໃຫຍ່ເປັນອັນໜຶ່ງອັນດຽວກ່າວຄື: ບັນດາວຽກງານກະສິກຳຖືກຈັດວາງຢ່າງບໍ່ສະໝ່ຳສະເໝີທີ່ສຸດພາຍໃນ ປີໜຶ່ງ ! ພຽງແຕ່ກຳເອົາຈຸດດຽວດັ່ງກ່າວນັ້ນ, ແລ້ວນຳໃຊ້ບັນດາ ຂໍ້ຊຸປະມາແບບບານທຳເພື່ອຊຸມັນຂຶ້ນເຖິງບ່ອນບໍ່ມີເຫດຜົນແລະລະຖິ້ມ ທັງໝົດທຸກຈຸດພິເສດອື່ນໆຂອງຂະບວນວິວັດອັນສັບສົນ ຈຶ່ງພວມເຮັດໃຫ້ພື້ນຖານກະສິກຳແບບເຈົ້າໂຄດກາຍເປັນກະສິກຳແບບທຶນນິຍົມ, -ນັ້ນແມ່ນບັນດາວິທີງ່າຍດາຍເຫລືອເກີນຂອງກົນອຸບາຍມໍ່ທີ່ສຸດນີ້ ໂດຍເລື່ອງໃສ່ຝັນຟູບັນດາທິດສະດີເພີ່ນຈິດວ່າດ້ວຍ " ພື້ນຖານການຜະລິດປະຊາຊົນ " ກ່ອນລັດທິທຶນນິຍົມ.

ເພື່ອສັບລະສູດວ່າທິດສະດີບານທຳດັ່ງກ່າວເປັນການມໍ່ຕື້ນ ທີ່ສຸດຢູ່ຂ້າງລຸ່ມນີ້ພວກເຮົາຈະຊີ້ແຈງໂດຍຫຍໍ້ກ່ຽວກັບດ້ານຕ່າງໆຂອງຂະບວນວິວັດອັນເປັນຈິງຊຶ່ງຝ່າຍປະຊາລາດຢູ່ໃນປະເທດເຮົາບໍ່ຄຳນຶງເຖິງຫລື ນິ

ການຕີລາຄາບໍ່ຖືກລະດັບ. ທີໜຶ່ງແມ່ນ, ການກະສິກຳຍັງກ້າວ ເຖິງບ່ອນຜະລິດສະເພາະ, ພົນລະເມືອງກະສິກຳກໍຍັງລົດລົງ ແລະ ນັບມື້ນັບກວມມີອັດຕາສ່ວນນ້ອຍກວ່າເກົ່າພາຍໃນຍອດປະລິມານພົນລະເມືອງຝ່າຍປະຊາລາດໄດ້ຫລົງລືມເລື່ອງນັ້ນຊ້ຳ, ແຕ່ປານນັ້ນໃນການໄຕ່ຕອງແບບນາມທຳຂອງ ເຂົາເຈົ້າພັດທັບການກະສິກຳເປັນການຜະລິດສະເພາະຂຶ້ນເຖິງລະດັບໜຶ່ງຊຶ່ງໃນຕົວຈິງແມ່ນວ່າບໍ່ມີບ່ອນໃດສາມາດບັນລຸເຖິງ. ເຂົາເຈົ້າຖືວ່າສະເພາະການຕົກກ້າ ແລະ ການເກັບກ່ຽວເຂົ້າເບຣກໍໄດ້ກາຍເປັນອຸດສາຫະກຳຂະແໜງໜຶ່ງສະເພາະຕ່າງຫາກແລ້ວ; ໄຖດາດ ແລະ ໃສ່ຝຸ່ນ - ປຸຍ, ປຸງແຕ່ງ ແລະ ຂົນສົ່ງຜະລິດພັນ , ລ້ຽງສັດ, ຂຸດຄົ້ນປ່າໄມ້ ສ້ອມແປງເຮືອນຊານ ແລະ ເຄື່ອງມື,ຯລຯ. ...ແລະ ຯລຯ..., - ທຸກສິ່ງທຸກຢ່າງທີ່ກ່າວມານັ້ນໄດ້ກາຍເປັນບັນດາຂະແໜງການສະເພາະຕ່າງ ຫາກຂອງພື້ນຖານອຸດສາຫະກຳ ທຶນນິຍົມ. ໝູນໃຊ້ບັນດາທິດສະດີນາມທຳແນວນັ້ນໃສ່ເງື່ອນໄຂຕົວຈິງໃນປະຈຸບັນກໍບໍ່ໃຫ້ການຊ່ວຍຊູຫຍັງພໍປານໃດໃຫ້ແກ່ການອະທິບາຍຕໍ່ຄວາມເປັນຈິງທີ່ກ່າວມານັ້ນເລີຍ. ທີສອງແມ່ນ, ການສົມມຸດຕິຖານກ່ຽວກັບການ ຫັນການກະສິກຳເປັນການຜະລິດສະເພາະຢ່າງສົມບູນດີແນວນັ້ນມີການອຸປະມາວ່າຕ້ອງມີການຈັດຕັ້ງກະສິກຳທຶນນິຍົມລ້ວນໆ ແລະ ມີການແຍກອອກຈາກກັນຢ່າງຂາດຂັ້ນລະຫວ່າງຜູ້ເປັນ ແຟກມີເອ ທຶນນິຍົມ ແລະບັນດາກຳມະກອນຮັບຈ້າງ. ຢູ່ໃນບັນດາເງື່ອນໄຂແນວນັ້ນ ຖ້າຫາກເວົ້າເຖິງ " ຊາວກະສິກອນ " ( ເໝືອນດັ່ງທ່ານ ນ.ໂອນ ໄດ້ກ່າວມາ, ໜ້າ ໘໑໕ ) ກໍເປັນການບໍ່ສອດຄ່ອງຈັກດີ້ກັບໂລຊິກ. ການຈັດຕັ້ງ ກະສິກຳ

ທຶນນິຍົມລ້ວນໆກໍຄືກັນ, ມັນກໍມີຄວາມອຸປະມາວ່າຕ້ອງມີການ ແບ່ງວຽກງານໃຫ້ສະໝ່ຳສະເໝີກວ່າໃນຕະຫລອດປີ ( ໂດຍອີງອາໃສລະບອບເພາະປູກໝູນວຽນ, ອີງອາໃສລະບອບການລ້ຽງສັດທີ່ສົມເຫດສົມຜົນ, ໆລໆ...); ໃນຫລາຍກໍລະນີ, ມັນມີການອຸປະມາວ່າຕ້ອງມີການ ປະສານສົມທົບການປູກແຕ່ງພະລິດພັນດ້ວຍວິທີການອຸດສາຫະກຳກັບກະສິກຳເອງ, ຕ້ອງນຳໃຊ້ແຮງງານເປັນຈຳນວນຫລວງຫລາຍກວ່າເຂົ້າ ໃນການ ກະກຽມດິນນາ, ໆລໆ... [1]). ສາມແມ່ນ,ປະຖົມປັດໄຈຂອງ

---

໑) ເພື່ອຫລີກລ້ຽງການຍືນຍັນຢ່າງບໍ່ມີບ່ອນອີງ, ພວກເຮົາ ຍົກບັນດາຕົວຢ່າງມາຢູ່ທີ່ນີ້ກ່ຽວກັບບັນດານິຄົມເອກະເທດຢູ່ລັດເຊຍ ຊຶ່ງສະພາບການແຫ່ງການຈັດຕັ້ງຄືກັນກັບຮູບການທຶນນິຍົມລ້ວນໆກວ່າໝູ່ໝົດ. ເປັນຕົ້ນວ່າຢູ່ແຂວງ ໂອຣີໂອນ ( ປື້ມສະຖິຕິຂອງສະພາທ້ອງຖິ່ນ ກ່ຽວກັບເມືອງ ໂກຼມີ " ເຫລັ້ມ VII, ນາຕາ ໔, ໂອຣີໂອນ.໑໘໘໔) ນິຄົມຂອງນັກຊຸມນາງ ຄືລີຊຸສະຕິນ ລວມມີດິນເພາະປູກ໑.໑໔໙ ເດຊີອາຕີນ, ຢູ່ໃນນັ້ນມີ ໕໖໔ ເດຊີອາຕີນ ດິນເພາະປູກ, ເຮືອນຊານ ຊຫລັງແລະເຄື່ອງມືທີ່ດີແປງຫລາຍແນວ. ທົ່ງຫຍ້າຫຽມ. ບ່ອນລ້ຽງມ້າພັນ, ການລ້ຽງສັດບ້ານ, ການລະບາຍນ້ຳອອກຈາກທົ່ງນາຫລົ່ມ ດ້ວຍເໝືອງ ແລະ ຝາຍ ( ການລະບາຍນ້ຳອອກຈາກທົ່ງນາຫລົ່ມເຄີຍຖືກດຳເນີນເມື່ອເວລາຫວ່າງວຽກ, ໜ້າ ໑໔໖ ). ຈຳນວນກຳມະກອນທີ່ໄດ້ຖືກນຳໃຊ້: ໃນລະດູຮ້ອນ, ແຕ່ລະມື້ ລະຫວ່າງ ໕໐ ເຖິງ ໘໐ ຄົນ; ໃນລະດູໜາວ, ລະຫວ່າງ ໓໐ ຄົນ. ໃນປີ ໑໘໘໘ .==)

===) ມີກຳມະກອນເຖິງ ໘໑ ຄົນ, ໃນນັ້ນມີ ໖໔ ຄົນ ເຮັດໃນລະດູຮ້ອນ. ປີ ໑໘໘໙ ມີຊ່າງໄມ້ເຮັດເຮືອນ ໑໕ ຄົນ, - ມີຄົນຂອງ ລີ ໃນປີແອ ມີດິນ ໓.໐໐໐ ເດຊີອາຕີນ, ໃນນັ້ນມີດິນເພາະປູກ ໑.໖໙໓ ເດຊີອາຕີນ ແລະ ດິນສຳຫລັບໃຫ້ຊາວບ້ານເຊົ່າ ໑໙໗ ເດຊີອາຕີນ. ດິນເພາະປູກແບບໝູນວຽນມີ ໑໖ເຂດ ຂຸດຄົ້ນຖ່ານຂີ້ຕົມສຳຫລັບເຮັດ ຝຸ່ນປູຍ, ຂຸດຄົ້ນຫີນຂະນິດຕ່າງໆທີ່ມີທາດຟົດຟໍ, ແຕ່ປີ ໑໘໘໙ ມີເດີ່ນທີ່ຖືກນຳໃຊ້ເປັນນາທົດລອງ ໓໐ ເດຊີອາຕີນ. ການຂົນສົ່ງຝຸ່ນປູຍຖືກ ດຳເນີນໄປໃນລະດູໜາວ ແລະ ລະດູບານໃໝ່. ທົ່ງຫຍ້າທຽມ; ການຂຸດຄົ້ນປ່າໄມ້ຖືກຕາມລະດູ ( ແຕ່ເດືອນຕຸລາເຖິງເດືອນມີນາຂອງປີຈູນ ນຳໃຊ້ຊ່າງຕັດໄມ້ ໔໐໐ ເຖິງ ໓໐໐ ຄົນ, ການລ້ຽງງົວ. ຄອກເອົານ້ຳນົມ. ຈຳນວນກຳມະກອນທີ່ຖືກນຳໃຊ້ໃນປີ ໑໘໘໘: ໘໐, ໃນນັ້ນມີ ໓໔ ຄົນເຮັດໃນລະດູຮ້ອນ. - ບົດຄົນຂອງແມນຊີກົບ ໃນແຂວງມົດສະກູ ( " ປຶ້ມເອກະສານ ", ເຫລັ້ມ VII , ມາດຕາ ໔ ): ໔໓.໐໐໐ ແຮງງານຮັບຈ້າງໄດ້ຮັບຄ່າແຮງງານດ້ວຍບັນດາຕອນດິນຕັດໃຫ້ ແລະ ເຊັ່ນຂໍ້ຜູກພັນໂດຍເສລີ. ຂຸດຄົ້ນປ່າໄມ້. ໃນລະດູຮ້ອນ; ນາ ແລະກຳມະກອນທີ່ໄດ້ເຊົ່າຕະຫລອດປີກໍເຮັດວຽກຢູ່ຕາມທົ່ງນາ, ສ່ວນທ້າຍລະດູໃບໄມ້ຫລົ່ນ ແລະ ສ່ວນໜຶ່ງຂອງລະດູໜາວນັ້ນຂົນສົ່ງມັນຝະລັ່ງ ແລະ ແປ້ງໄປຫາເຕົາບົ່ມ ແລະ ໂຮງຈັກເຮັດແປ້ງ, ຂົນສົ່ງໄມ້ຈາກປ່າ ໄປຫາສະຖານີລົດໄຟ, ໂດຍອີງອາໃສທາງໝົດທຸກວຽກງານ ເຫລົ່ານັ້ນແຮງງານເລີຍຖືກຈັດວາງຢ່າງສະໝ່ຳສະເໝີໃນຕະຫລອດປີ ". ( ໜ້າ ໑໔໔ ). ເລື່ອງນັ້ນຍັງເຫັນແຈ້ງໂດຍຜ່ານໃບນັ້ນທີ່ນອັນ ===)

ລັດທິທຶນນິຍົມແມ່ນການຕັດແຍກອອກຈາກກັນຢ່າງຂາດຂັ້ນລະຫວ່າງ <u>ບັນດາໂຮງງານ</u> ກະສິກຳ ກັບ ບັນດາໂຮງງານ ອຸດສາຫະກຳ. ເຫົາວ່າ ຄົນເຮົາເຫັນໄດ້ວ່າ ການຕັດແຍກອອກຈາກກັນທີ່ໄດ້ກ່າວມາຂ້າງເທິງນັ້ນ ໄດ້ປະຕິເສດການປະສານສົມທົບລະຫວ່າງ<u>ແຮງງານຮັບຈ້າງ</u> ໃນກະສິກຳກັບແຮງງານຮັບຈ້າງໃນອຸດສາຫະກຳ, ຢູ່ບ່ອນໃດ ? ຢູ່ໃນທົ່ວໝົດທຸກສັງຄົມທຶນນິຍົມທີ່ຂະຫຍາຍຕົວ, ພວກເຮົາລ້ວນເຫັນວ່າມີການ ປະສານສົມທົບອັນນັ້ນ, ລັດທິທຶນນິຍົມໄດ້ແຍກບັນດາກຳມະກອນທີ່ຈຳນວນ ຈຳນານອອກຈາກບັນດາຊາວຜູ້ອອກແຮງງານທຳມະດາ, ເຊິ່ງເປັນຄົນ ທີ່ຍົກຍ້າຍຈາກອາຊີບຫັດຖະກຳແບບນີ້ໄປຫາອາຊີບຫັດຖະກຳແບບອື່ນ , ບາງທີຖືກຮັບເຂົ້າມາໃນບາງໂຮງງານໃຫຍ່, ບາງທີກໍຖືກຊຸກເຂົ້າ ໃນ

---

===) ງານໃນແຕ່ລະເດືອນ : ວັນງານຂອງນາຄິດສະເລ່ຍໃນແຕ່ລະເດືອນແມ່ນ ໔໙໓ ວັນງານ, ລື່ນຫລຸດ ລະຫວ່າງ ໔໔໓ ວັນງານ ( ເດືອນສີ່ ) ແລະ ໓໖໔ ວັນງານ ( ເດືອນຫົກ ). ວັນງານຂອງຜູ້ຊາຍ : ຄິດສະເລ່ຍແມ່ນໄດ້ ໔໑໖ ວັນງານ, ລື່ນຫລຸດລະຫວ່າງ໑໔໖ ວັນງານ , ເດືອນສອງ ) ແລະ ໔໗໙ ວັນງານ ( ເດືອນສິບເອັດ) ວັນງານຂອງຜູ້ຍິງ : ຄິດສະເລ່ຍແມ່ນໄດ້ ໔໓ ວັນງານ, ລື່ນຫລຸດລະຫວ່າງ ໑໓ ວັນງານ ( ເດືອນມັງກອນ ) ແລະ ໔໗ ວັນງານ ( ເດືອນສາມ ). ຄວາມເປັນຈິງ ດັ່ງກ່າວຈະຖືກກັບວິທີໄຕ່ຕອງພິຈາລະນາ ແບບນາມມະທຳ ຊຶ່ງຝ່າຍປະຊາລາດ ເຄີຍນິຍົມຊົມຊອບ ທີ່ສຸດນັ້ນຫລືບໍ່ ? .

ຖືກແຖວຄືນຫວ່າງງານ ໑) ລັດທິທຶນນິຍົມ ແລະ ອຸດສາຫະກຳໃຫຍ່ຍິ່ງມີການຂະຫຍາຍຕົວ, ເວົ້າລວມ, ບັນດາຄວາມຜັນປ່ຽນຂອງຄວາມຕ້ອງການ ກຳມະກອນກໍແຮງຍິ່ງຂຶ້ນບໍ່ພຽງແຕ່ຢູ່ໃນການກະສິກຳເທົ່ານັ້ນຫາກທັງຢູ່ໃນອຸດສາຫະກຳອີກດ້ວຍ ໒). ຍ້ອນສະນັ້ນ, ໃນເມື່ອ ອຸປະມາ

---

໑) ອຸດສາຫະກຳໃຫຍ່ທຶນນິຍົມໄດ້ເຮັດໃຫ້ເກີດມີຊົນຊັ້ນກຳມະກອນ ຊຶ່ງມັນຢູ່ບ່ອນນີ້,ມື້ອື່ນຢູ່ບ່ອນໃໝ່. ຊົນຊັ້ນນີ້ກໍຮ່າງສ້າງຕົວອອກຈາກພົນລະເມືອງກະສິກຳ,ແຕ່ວ່າຕົ້ນຕໍແມ່ນເຮັດບັນດາວຽກງານອຸດສາຫະກຳ. "ນັ້ນແມ່ນກອງກຳລັງເບົາຂອງນາຍທຶນ, ມັນຖືກນຳໃຊ້ເປັນບາງຄັ້ງບາງຄາວ, ບາງທີກໍຢູ່ບ່ອນນີ້, ບາງທີກໍຢູ່ບ່ອນອື່ນຢູ່ໃນປະເທດ... ເຂົາເຈົ້ານຳໃຊ້ບັນດາກຳມະກອນຈໍລະຈັດເຫລົ່ານັ້ນເຂົ້າໃນວຽກງານກໍ່ສ້າງເຮືອນຊານ,ລະບາຍນ້ຳ,ເຜົາດິນຈີ່,ເຜົາປູນ, ກໍ່ສ້າງທາງລົດໄຟໆລໆ...(          ", I, ໜ້າ ໖໘໒). " ເວົ້າລວມແລ້ວ, ບັນດາໂຮງງານໃຫຍ່ເຊັ່ນໂຮງງານທາງລົດໄຟ,ໆລໆ... ("Das Kapital", I, ໜ້າ ໖໘໒). ເວົ້າລວມແລ້ວ, ບັນດາໂຮງງານໃຫຍ່ເຊັ່ນໂຮງງານທາງລົດໄຟ, ໄດ້ຊອກເຫັນກຳລັງແຮງງານຈຳນວນໜຶ່ງໃນຕະຫລາດແຮງງານ ມີແຕ່ຂະແໜງການຈຳນວນໜຶ່ງເທົ່ານັ້ນເປັນຜູ້ສະໜອງ, ເປັນຕົ້ນວ່າ, ການກະສິກຳ"

໒) ຕົວຢ່າງຄື, ຕາມການສະຖິຕິອະນາໄມຢູ່ນິດສະກູກໍເຫັນວ່າ ໃນແຂວງດັ່ງກ່າວຄິດໄລ່ກໍມີກຳມະກອນໂຮງຈັກ, ໂຮງງານເຖິງ ໑໑໕.ນີ້໑໑ ຄົນ,ນັ້ນແມ່ນຈຳນວນທີ່ມີໃນປະຈຸບັນ, ສູງສຸດແມ່ນມີ ===)

ວ່າລັດທິທຶນນິຍົມຂະຫຍາຍຕົວເຖິງລະດັບສູງສຸດນັ້ນ, ພວກເຮົາກໍ່ຕ້ອງຮູ້ປະມາວ່າ ຊາວກຳມະກອນສາມາດຍົກຍ້າຍວຽກງານກະສິກຳ ໄປຫາວຽກງານບໍ່ແມ່ນກະສິກຳຢ່າງງ່າຍດາຍທີ່ສຸດ ! ພວກເຮົາຕ້ອງຮູ້ປະມາວ່າກອງກຳລັງສຳຮອງທີ່ວໄປກໍ່ຖືກກໍ່ຮ່າງສ້າງຕົວຂຶ້ນ, ຈາກນັ້ນ ພວກເຈົ້າຂອງໂຮງງານທຸກຊະນິດຈະເກັບເອົາກຳມະກອນໄດ້.

ທີ່ສີ່ແມ່ນ, ຖ້າແມ່ນວ່າພວກເຮົາຫາກສັງເກດພວກເຈົ້າຂອງໂຮງງານກະສິກຳໃນປະຈຸບັນນັ້ນກໍ່ແນ່ນອນວ່າພວກເຮົາບໍ່ສາມາດຈະ ປະຕິເສດວ່າບາງຄັ້ງບາງຄາວເຂົາເຈົ້າກໍພົບຄວາມຫຍຸ້ງຍາກໃນການ ສະໜອງແຮງງານໃຫ້ແກ່ບັນດາວິສາຫະກິດເຂົາເອງ. ແຕ່ວ່າໃນດ້ານອື່ນກໍ່ບໍ່ຄວນຫລົງລືມວ່າ ເຂົາເຈົ້າຫາກມີເລ່ຫລ່ຽມແນວໜຶ່ງເພື່ອຜູກມັດກຳມະກອນໃສ່ວິສາຫະກິດຂອງເຂົາຢ່າງແໜ້ນໜາຄື: ແບ່ງປັນດິນ ຕອນໜຶ່ງໃຫ້ກຳມະກອນ ໆລໆ... ຊາວນາທຸກຈົນຫລືຄົນຮັບຈ້າງລາຍ ວັນໄດ້ຮັບການແບ່ງປັນດິນຕອນໜຶ່ງ, - ນັ້ນແມ່ນຮູບຖານສະເພາະພິເສດຂອງບັນດາປະເທດທຶນນິຍົມທັງໝົດໝົດໜຶ່ງໃນບັນດາຂໍ້ຜິດພາດທີ່ເປັນຕົ້ນຕໍ

---

==) ໑໔໖.໓໓໘ຄົນ, ແລະເກົ່າສຸດກໍມີ ໔.໘໑໔ຄົນ ("ສະຫລຸບຫຍໍ້ລວມ" ໆລໆ...ເຫລັ້ມ III, ພາກ I, ໜ້າ ໖໑). ຕາມອັດຕາສ່ວນຮ້ອຍ: ໑໘໙%,-໑໐໐% - ໙໘%. ເວົ້າລວມ, ໃນເມື່ອເຮັດໃຫ້ຈຳນວນ ກຳມະກອນມີການພັນປ່ຽນເພີ່ມຂຶ້ນດີແນວນັ້ນ, ກໍ່ເຫັນວ່າທັງຢູ່ໃນດ້ານນັ້ນເອງ, ລັດທິທຶນນິຍົມກໍ່ຕິລວາດບັນດາຄວາມຫລຸດໂຕນກັນລະຫວ່າງຊຸດສາຫະກຳ ແລະ ກະສິກຳ.

ຂອງຝ່າຍປະຊາລາດແມ່ນເຂົ້າບໍ່ນອງເຫັນການກໍ່ສ້າງຕົວຂຶ້ນຂອງ ຮູບການຄືແນວນັ້ນຢູ່ໃນລັດເຊຍ.

ທີ່ຫາແມ່ນ; ຖ້າວ່າຕັ້ງບັນຫາຊາວນາຫວ່າງງານໃນລະດູ ໜາວ ຫາກແຍກອອກຈາກບັນຫາທົ່ວໄປຄືບັນຫາພົນລະເມືອງເຫລືອ ທຶນນິຍົມ ຢ່າງຂາດຕົວນັ້ນກໍເປັນການຜິດພາດຢ່າງສົມບູນ. ການກໍ່ຮູບຂຶ້ນ ຂອງ ກອງກຳລັງຫວ່າງງານສຳຮອງເປັນປະກົດການສະເພາະພິເສດຂອງລັດທິທຶນນິຍົມເວົ້າລວມ, ແລະຈຸດພິເສດຕ່າງໆຂອງກະສິກຳໃນຕົວຈິງ ກໍ່ພຽງແຕ່ສ້າງເປັນບັນດາຮູບການພິເສດຂອງປະກົດການດັ່ງກ່າວເທົ່ານັ້ນເອງ. ເພາະສະນັ້ນ, ນັກແຕ່ງຊຸດ "ທຶນ" ເປັນຕົ້ນເມື່ອເວລາ ກ່າວເຖິງບັນຫາຈັດວາງແຮງງານໃນການກະສິກຳນັ້ນໃນເວລາດຽວກັນ ພັດຄົ້ນຄວາບັນຫາ " ພົນລະເມືອງເຫລືອຫຼຽບຖານ ໑) ດັ່ງທີ່ໄດ້ກ່າວມາ

---

໑) ເມື່ອເວລາກ່າວເຖິງກະສິກຳອັງກິດເປັນຕົ້ນ, ມາກໄດ້ເວົ້າວ່າ : " ຕໍ່ຄວາມຮຽກຮ້ອງຕ້ອງການ ໂດຍສະເລ່ຍຂອງການກະສິກຳນັ້ນ, ກຳມະກອນກະສິກຳເວລາໃດກໍ່ຫລາຍໂພດ, ແຕ່ວ່າຕໍ່ຄວາມຮຽກຮ້ອງຕ້ອງການອັນພິເສດ ແລະ ຊົ່ວຄາວຂອງກະສິກຳນັ້ນ, ກຳມະກອນກະສິກຳ ເວລາໃດກໍ່ໜ້ອຍໂພດ ", ( /‾‾ 6, ກ໔໕), ສະນັ້ນເຖິງແມ່ນວ່າຍາມໃດກໍ່ມີປະກົດການ " ພົນລະເມືອງເຫລືອຫຼຽບຖານ " ກໍ່ຕາມ, ແຕ່ວ່າຊົນນະບົດກໍບໍ່ດີກໜາປານໃດ, ຢູ່ບ່ອນໃໝ່, ມາກກໍໄດ້ກ່າວວ່າ ພື້ນຖານຜະລິດທຶນນິຍົມຍິ່ງແຊກຊຶມເຂົ້າໃນການກະສິກຳ,ກໍ່ຍິ່ງກໍ່ຮູບເປັນພົນລະເມືອງກະສິກຳເຫລືອ, " ພາກສ່ວນໜຶ່ງຂອງ ===)

ໃນພາກພິເສດວ່າດ້ວຍຄວາມແຕກຕ່າງກັນລະຫວ່າງ "ເວລາອອກແຮງງານ" " ແລະເວລາຜະລິດ (" Das Kapital ", II, . ພາກ໑໓). ເວລາຊຶ່ງແຮງງານກະທົບໃສ່ຜະລິດພັນນັ້ນ ຮຽກວ່າເວລາອອກແຮງງານ, ສ່ວນເວລາຜະລິດນັ້ນແມ່ນເວລາຊຶ່ງຜະລິດພັນນອນຢູ່ໃນຂອບເຂດການຜະລິດ, ນັບທັງເວລາຊຶ່ງແຮງງານ ບໍ່ມີການກະທົບໃສ່ຜະລິດພັນ...ເວລາຜະລິດນັ້ນແມ່ນເວລາຊຶ່ງຜະລິດ ພັນນອນຢູ່ໃນຂອບເຂດການຜະລິດ, ນັບທັງເວລາຊຶ່ງແຮງງານບໍ່ມີການກະທົບໃສ່ຜະລິດພັນ. ເວລາອອກແຮງງານບໍ່ກົງກັບເວລາຜະລິດ ໑) ໃນ

---

===) ພົນລະເມືອງກະສິກຳເວລາໃດກໍ່ຕົກຢູ່ໃນສະພາວະຂ້ານຜ່ານ , ກຽມຈະກາຍເປັນພົນລະເມືອງຕົວເມືອງ ຫລື ພົນລະເມືອງໂຮງ ງານຫັດຖະກຳ ( ,ໜ້າ ໖໒໘), ພາກສ່ວນພົນລະເມືອງດັ່ງກ່າວຖືກວ່າງງານຢູ່ເລື້ອຍໆ; ວຽກງານຂອງເຂົາສຸດທີ່ບໍ່ສະໝ່ຳສະເໝີ,ບາງທີກໍມີບາງທີກໍບໍ່' ແລະ ເງິນເດືອນຂອງເຂົາເຈົ້າຕ່ຳທີ່ສຸດ,( ເປັນຕົ້ນວ່າ, ວຽກງານຮັບເໝົາເມື່ອເຮັດຢູ່ຄອບຄົວໃຫ້ແກ່ບໍລິສັດການຄ້າຕ່າງ ຕ່າງ ໆລໆ...)

໑) ເປັນອັນພິເສດຕອງຍົກມານີ້ຄວາມເຫັນໜຶ່ງຂອງມາກ ທີ່ໄດ້ສັງເກດວ່າ ການກະສິກຳກໍ່ມີບັນດາວິທີແກ້ໄຂເຮັດໃຫ້ຄວາມຮຽກ ຮອງຕ້ອງການທາງດ້ານແຮງງານ " ໄດ້ຮັບການແບ່ງປັນສະໝ່ຳ ສະເໝີກ່ວາໃນຕະຫລອດປີ ", ກ່າວຄື: ປະດິດເປັນຜະລິດພັນ ຫລາຍດ້ານຫລາຍຊະນິດກ່ວາ, ໃຫ້ການປ່ຽນແທນລະບອບເພາະປູກໝູນ ====)

ຫລາຍຂະແໜງການຜະລິດ, ໃນນັ້ນກະສິກຳເປັນຂະແໜງການ ເປັນຕົວຢ່າງກ່ວາໝູ່ໝົດ, ແຕ່ວ່າບໍ່ແມ່ນເປັນຂະແໜງການດຽວ. ຢູ່ທຸກໆປະເທດໃນທະວີບເອີຣົບ, ກະໂຕປະເທດລັດເຊຍເອງເປັນປະເທດຊຶ່ງພາຍໃນການກະສິກຳ, ເວລາອອກແຮງງານ ແລະ ເວລາຜະລິດ ມີການຜິດໂຕນກັນຢ່າງຫລວງຫລາຍເປັນພິເສດ. " ເມື່ອເວລາ ແຍກໂຮງງານຫັດຖະກຳອອກຈາກກະສິກຳ, ພື້ນຖານການຜະລິດທຶນນິຍົມນັບມື້ນັບເຮັດໃຫ້ກຳມະກອນກະສິກຳຂຶ້ນກັບບັນດາວຽກງານປົນເປ ແລະຊາມຊາ, ແລະເຮັດໃຫ້ສະພາວະຂອງເຂົາເຈົ້ານັບມື້ນັບບໍ່ໝັ້ນຄົງ. ຖາເວົ້າໂດຍຢືນທາງຝ່າຍນາຍທຶນນັ້ນ, ທັງໝົດທຸກຄວາມຫລຸດໂຕນ ທາງດ້ານໝູນວຽນລ້ວນມີການທົດແທນໃຫ້ແກ່ກັນ, ແຕ່ວ່າຖ້າເວົ້າໂດຍ ຢືນທາງຝ່າຍກຳມະກອນນັ້ນມັນຈະບໍ່ເປັນແນວນັ້ນ ". ( ib ,ໜ້າ ໒໒໓ -໒໒໔ ). ດັ່ງນັ້ນແລ້ວ, ກ່າວທາງດ້ານນັ້ນ, ຄຳສະຫລຸບ ທີ່ເປັນອັນໜຶ່ງອັນດຽວຊຶ່ງຖອດອອກມາຈາກຈຸດພິເສດຕ່າງໆຂອງກະສິກຳ

---

===) ວຽນ ສ້ານເຂດດ້ວຍ ລະບອບປູກຕົ້ນໄມ້ໝູນວຽນ, ປູກຕົ້ນໄມ້ທົມທົ໊ວ, ປູກຫຍ້າຕ່າງໆ ຯລຯ... ແຕ່ວ່າທັງໝົດທຸກວິທີແກ້ໄຂ ດັ່ງກ່າວລ້ວນ " ຮຽກຮອງຕອງການໃຫ້ເພີ່ມເຕີມທຶນເຄື່ອນທີ່ໃຫ້ແກ່ ການຜະລິດ, ໝາຍຄວາມ ບັນດາຈຳນວນເງິນຈ່າຍ ອອກມາເພື່ອຄ່າແຮງງານ, ຝຸ່ນ ປຸຍ, ແນວພັນ ຯລຯ... " ( ibid , ໜ. ໒໒໕ - ໒໒໖ ).

ດີ : ສະພາວະ ຂອງກຳມະກອນ ກະສິກຳ ແມ່ນອນວ່າກ່ວາສະພາວະ ຂອງກຳມະກອນ ອຸດສາຫະກຳ. ຂໍ້ສະຫລຸບດັ່ງກ່າວນັ້ນ ແຕກຕ່າງກັບ ທິດສະດີຂອງທ່ານ ນ. ໂອນ ເຫລືອທີ່ສຸດ, ທິດສະດີຫນຶ່ງຊຶ່ງຖືວ່າ ການ ຫວ່າງງານໃນລະດູຫນາວເປັນ " ສາຍເຫດອັນພື້ນຖານ " ທີ່ເຮັດໃຫ້ ເກີດມີສະພາວະອັນນັບນີ້ນັບຮ້າຍແຮງຢ່າງສາຫັດຂອງບັນດາອົບຈຸ້ນ ກຳ ມະກອນ ກະສິກຳ " ( ? ! ). ຖ້າແມ່ນວ່າເວລາອອກແຮງງານໃນ ການກະສິກຳຂອງປະເທດເຮົາເປັນ ໑໔ ເດືອນແລ້ວ, ຂະບວນ ວິວັດ ແຫ່ງການຂະຫຍາຍຕົວຂອງລັດທິທຶນນິຍົມກໍຄົງກ້າວໄປຕາມຂະບວນວິວັດ ເຫມືອນກັນກັບປະຈຸບັນ, ຖ້າມີຄວາມແຕກຕ່າງກໍພຽງແຕ່ແຕກຕ່າງ ຢູ່ ບ່ອນວ່າ ສະພາວະຂອງກຳມະກອນ ກະສິກຳ ມີຄວາມດີກັນກັບ ສະພາ ວະຂອງກຳມະກອນ ອຸດສາຫະກຳບາງເລັກນ້ອຍເທົ່ານັ້ນເອງ [1] ).

ດັ່ງນັ້ນແລ້ວຫມາຍຄວາມວ່າ " ທິດສະດີ " ຂອງພວກທ່ານວ.ວ ແລະ ນ. ໂອນ ບໍ່ໄດ້ນຳເອົາອັນໃດມາໃຫ້ຈັກດີ້ເລີຍ, ນັບທັງກະໂຕບັນ ຫາວ່າດ້ວຍການຂະຫຍາຍຕົວຂອງລັດທິທຶນນິຍົມກະສິກຳເວົ້າລວມ. ສ່ວນ ບັນດາຈຸດພິເສດຂອງປະເທດລັດເຊຍນັ້ນ " ທິດສະດີດັ່ງກ່າວບໍ່ໃຫ້ການ ອະທິບາຍ ຫາກກົງກັນຂ້າມ, ມັນຍັງປິດບັງໄວ້. ປະກົດການ ຫວ່າງ ງານໃນລະດູຫນາວພາຍໃນຊາວກະສິກອນປະເທດເຮົາແມ່ນເນື່ອງ ມາ

---

໑) ພວກເຮົາເວົ້າວ່າ"ອ່າວດີ"ກໍ່ຍອມວ່າສະພາວະ ກຳມະກອນ ກະສິກຳນັບນີ້ນັບອັດຕະຄັດແມ່ນເນື່ອງມາຈາກຫລາຍປັດໄຈອື່ນໆ, ຫາກ ບໍ່ແມ່ນພຽງແຕ່ຍອນບໍ່ມີວຽກງານຢ່າງສະຫມ່ຳສະເຫມີ.

ຈາກການຂະຫຍາຍຕົວຢ່າງບໍ່ພຽງພໍຂອງລັດທິທຶນນິຍົມ, ເວົ້າແນວ ນັ້ນ ເໝາະກ່ວາເວົ້າວ່າຍ້ອນລັດທິທຶນນິຍົມເປັນຜູ້ກໍ່ຂຶ້ນ: ອີງຕາມຄ່າ ແຮງ ງານ, ພວກເຂົາໄດ້ບີບແຈ້ງຢູ່ຂ້າງບົນ ( ວັກ 7(7 ຂອງພາກນີ້ ເອງ). ວ່າໃນຈຳນວນແຂວງຕ່າງໆຂອງລັດເຊຍໃຫຍ່ນັ້ນ, ປະກົດການ ຫວ່າງງານໃນລະດູໜາວທີ່ຂຽວຂາດກ່ວາໝູ່ໝົດເຄີຍເກີດຂຶ້ນຢູ່ໃນບັນ ດາແຂວງຊຶ່ງລັດທິທຶນນິຍົມຂະຫຍາຍຕົວໜ້ອຍທີ່ສຸດ ແລະ ລະບອບອອກ ແຮງງານຮັບໃຊ້ຍັງມີທ່າດີເລີດ. ບັນຫານັ້ນກໍເປັນຕາເຂົ້າໃຈງ່າຍ ລະ ບອບອອກແຮງງານຮັບໃຊ້ມັນມີການກີດໜ່ວງການເຊີດຊູສະມັດຖະພາບ ຂອງງານໃຫ້ສູງຂຶ້ນ. ການຂະຫຍາຍອຸດສາຫະກຳ ແລະ ກະສິກຳ , ແລະ ຈາກນັ້ນ, ມັນກີດໜ່ວງຄວາມຮຽກຮ້ອງຕ້ອງການແຮງງານ; ໃນ ເວລາດຽວກັນເມື່ອເວລາມີການຜູກມັດຊາວກະສິກອນໃສ່ດິນນາທີ່ໄດ້ຖືກ ແບ່ງປັນຂອງເຂົາ, ລະບອບອອກແຮງງານຮັບໃຊ້ບໍ່ຮັບປະກັນ ໃຫ້ເຂົາ ເຈົ້າຕ້ອງມີວຽກເຮັດງານທຳໃນລະດູໜາວ, ກໍຄືວ່າຈະສາມາດດຳລົງ ຊີວິດດ້ວຍວິສາຫະກິດອັນທຸກຈົນຂອງເຂົາເອງ.

...

## ພາກ VI

## ໂຮງງານຫັດຖະກຳທຶນນິຍົມ ແລະ ແຮງງານທີ່ເຮັດຢູ່ເຮືອນໃຫ້ນາຍທຶນ

.....

### IV. ການແບ່ງງານຕາມຂົງເຂດ ແລະ ການແຍກອອກຈາກກັນລະຫວ່າງກະສິກຳ ແລະ ອຸດສາຫະກຳ.

ຄືດັ່ງພວກເຮົາໄດ້ເວົ້າຢູ່ເທິງນັ້ນ, ວ່າມັນມີສາຍພົວພັນ ອັນສະໜິດແໜ້ນລະຫວ່າງການແບ່ງງານໂດຍທົ່ວໄປ ແລະ ການແບ່ງ ງານຕາມຂົງເຂດ ( ໝາຍຄວາມວ່າບັນດາຂົງເຂດທີ່ແນ່ນອນ ທຳການຜະລິດໂດຍສະເພາະຜະລິດພັນໜຶ່ງ, ບາງເທື່ອເຮັດໂດຍສະເພາະຜະລິດຕະພັນຊະນິດໜຶ່ງ, ຊ້ຳບໍ່ໜຳໃນບາງເທື່ອພຽງແຕ່ເຮັດພາກສ່ວນ ໃດພາກສ່ວນໜຶ່ງຂອງຜະລິດຕະພັນເທົ່ານັ້ນ). ທ່າດີຂອງການຜະລິດແບບຫັດຖະກຳ, ການຍືນຍົງຄົງຕົວຂອງໂຮງງານນ້ອຍຫລາຍແຫ່ງ, ພາວະການທີ່ກຳມະກອນຍັງຄົງຮັກສາສາຍພົວພັນກັບທີ່ດິນ, ພາວະການທີ່ນາຍຊ່າງຫັດຖະກຳພຽງແຕ່ເຮັດໂດຍສະເພາະ ວິຊາຊີບໜຶ່ງເທົ່ານັ້ນ, ປະກົດການທັງໝົດເຫລົ່ານັ້ນແນ່ນອນວ່າຕ້ອງເຮັດໃຫ້ຂົງເຂດອຸດສາຫະກຳນີ້ນັບຈຳນວນໜຶ່ງຂອງໂຮງງານຫັດຖະກຳກາຍມາເປັນຂົງເຂດທີ່ ໂດດດ່ຽວ; ຊຶ່ງໃນບາງເທື່ອພາວະການໂດດດ່ຽວດັ່ງກ່າວນີ້ຍັງເຮັດໃຫ້ ຂົງ

ເຂດເຫລົ່ານັ້ນແຍກຕົວອອກຈາກໂລກພາຍນອກ [1] ) ຢ່າງສິ້ນເຊີງຊຶ່ງ ພຽງແຕ່ບັນດາຜູ້ເປັນເຈົ້າຂອງທັງເປັນພໍ່ຄ້າຈຶ່ງໄດ້ມາແວ່ຢ້ຽມເທົ່ານັ້ນ.

ໃນຄຳເວົ້າດັ່ງຕໍ່ໄປນີ້ ທ່ານ ຄາຣໍເດເມັບ, ກໍຕີລາຄາ ການແບ່ງງານຕາມອົງເຂດຢ່າງບໍ່ຖືກລະດັບກ່າວຄື: " ຈຸດ ພິເສດຂອງອານາເຂດທີ່ກວ້າງໃຫ່ຍຂອງຈັກກະພັດແມ່ນຢູ່ບ່ອນທີ່ມັນມີເງື່ອນໄຂ ທຳມະຊາດຕ່າງໆ ທີ່ຕ່າງກັນທີ່ສຸດ: ແຖບນີ້ມີປ່າໄມ້ ແລະ ປ່າສຳລັບການລ່າເນື້ອ, ແຖບນັ້ນກໍມີສັດລ້ຽງຫລາຍສຳລັບການລ້ຽງສັດ, ແຖບທີສາມພັດມີດິນດາກ ແລະ ບໍ່ຫລັກຫລາຍ. ບັນດາລັກສະນະພິເສດ ທຳມະຊາດດັ່ງກ່າວຊີ້ຂາດລັກສະນະຂອງອຸດສາຫະກຳ. ຖະໜົນຫົນທາງທີ່ຫ່າງໄກ ແລະ ບໍ່ອຳນວຍຄວາມສະດວກຣັດໃຫ້ການຂົນສົ່ງວັດຖຸອຸປະກອນ ກາຍເປັນການປະຕິບັດໃຫ້ປະກົດເປັນຈິງບໍ່ໄດ້ຫລືສິ້ນເປືອງທີ່ສຸດ, ສະນັ້ນ , ຍ້ອນວ່າສະພາບການຈຳເປັນ, ວິຊາຊີບຫັດຖະກຳຈຶ່ງຈຳຕ້ອງຕັ້ງຢູ່ບ່ອນໃດທີ່ມີວັດຖຸດິບຫລາຍຢູ່ແລ້ວ ດ້ວຍເຫດນັ້ນຈຸດພິເສດຂອງ ອຸດສາຫະກຳໃນປະເທດເຮົາຄື: ຕະຫລອດແຕ່ລະເຂດທີ່ກວ້າງໃຫ່ຍທຳການ ຜະລິດແຕ່ສິນຄ້າຊະນິດດຽວ ". ( ຖະແຫລງຂ່າວກົດໝາຍ, ລ.ກ, ໜ. ໔໔໐ ).

ການແບ່ງງານຕາມອົງເຂດກໍບໍ່ແມ່ນເປັນຈຸດພິເສດຂອງອຸດສາຫະກຳໃນປະເທດເຮົາ, ຫາກເປັນຂອງໂຮງຫັດຖະກຳ ( ທັງຢູ່ລັດເຊຍກໍ

---

໑) ສົມມຸດຄືວິຊາຊີບປຸງແຕ່ງໜັງກະຣອກຢູ່ເມືອງ ກາກໂກປົນ, ວິຊາຊີບຜະລິດບ່ວງ ຢູ່ເມືອງ ເຊມີໂອນົບ ເປັນຕົ້ນ.

247vn ຫ້າມຈຳໜ່າຍ

ຄືຢູ່ປະເທດອື່ນໆ ). ບັນດາວິຊາຊີບຫັດຖະກຳນ້ອຍ ບໍ່ສ້າງຫລາຍ ຂົງເຂດ ທີ່ກວ້າງໃຫຍ່ເຖິງປານນັ້ນ, ໂຮງຊ່າງໄດ້ທັບມ້າງຄວາມ ໂດດດ່ຽວຂອງວິຊາຊີບດັ່ງກ່າວລົງ ແລະ ສ້າງເງື່ອນໄຂທີ່ອຳນວຍຄວາມສະດວກໃຫ້ແກ່ການຍ້າຍບັນດາໂຮງງານນ້ອຍແລະບັນດາກອນກຳມະກອນທີ່ໜາແໜ້ນມາຫາສະຖານທີ່ອື່ນໆ. ໂຮງງານຫັດຖະກຳບໍ່ໄຊ່ແມ່ນ ພຽງແຕ່ສ້າງເປັນແຕ່ລະຂົງເຂດທີ່ກວ້າງໃຫຍ່ຂຶ້ນເທົ່ານັ້ນ. ຫາກຍັງຜັນ ຂົງເຂດເຫລົ່ານັ້ນເປັນວິຊາສະເພາະອີກນຳ ( ການແບ່ງງານຕາມ ສິນຄ້າ ). ການຍືນຍົງຄົງຕົວຂອງວັດຖຸດິບໃນຂົງເຂດໜຶ່ງທີ່ແນ່ນອນ , ເດັດຂາດບໍ່ແມ່ນເປັນເງື່ອນໄຂທີ່ຈຳເປັນສຳລັບໂຮງງານຫັດຖະກຳ, ແຕ່ຊ້ຳບໍ່ໜຳຍັງບໍ່ແມ່ນ ເປັນກົດຂໍ້ບັງຄັບທີ່ມີຕໍ່ໂຮງງານຫັດຖະກຳ, ເພາະວ່າປະຖົມປັດໄຈຂອງໂຮງງານຫັດຖະກຳແມ່ນບັນດາສາຍພົວພັນຄ້າຂາຍທີ່ກວ້າງພໍສົມຄວນແລວ [໑] ).

ຈຸດພິເສດຕ່າງໆ ຊຶ່ງພວກເຮົາໄດ້ກ່າວມານັ້ນຂອງໂຮງງານ ຫັດຖະກຳທີ່ມີການກ່ຽວພັນກັບສະພາບແວດລ້ອມອັນນີ້ແມ່ນໄລຍະຂະ ຫຍາຍ

---

໑) ວັດຖຸດິບຂາເຂົ້າຕ່າງໆ ( ໝາຍຄວາມວ່າທ້ອງຖິ່ນອື່ນ ຂົນສົ່ງມາ ) ໄດ້ຮັບການປຸງແຕ່ງດ້ວຍວິຊາຊີບຕຳແຜ່ນ, ບັນດາຮາກຖານປຸງແຕ່ງໜັງຢູ່ທີ່ ປາວໂລໂວ, ເກີແຊນ, ແພັກເນີ, ແລະຫລາຍວິຊາອື່ນ ( ອ່ານ " ບົດຄົ້ນຄ້ວາຕ່າງໆ ", ໜ້າ. ໑໓໓-໑໓໔).(ອ່ານປື້ມ ເລນິນ,ຄົບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍໂປຼແກຼສມົສກູ, ໑໙໗໔., ເຫລັ້ມ ໓, ໜ້າ ໔໐໔ - ໔໐໕ .

ຕົວຫົນນິຍົມດັ່ງກ່າວໄດ້ຖືກຂີດໝາຍດ້ວຍຮູບການສະເພາະ ພິເສດອັນໜຶ່ງຂອງການແຍກອອກຈາກກັນລະຫວ່າງກະສິກຳກັບອຸດສາຫະກຳ. ບັດນີ້ຜູ້ທີ່ເຮັດ ວິຊາຊີບຫັດຖະກຳທີ່ເປັນຮູບນິທັດກ່ວາໝູ່ກໍບໍ່ແມ່ນຊາວນາອີກ, ຫາກແມ່ນ " ຊາວກຳມະກອນຊ່ຽວຊານວິຊາ " ທີ່ບໍ່ເຮັດວິຊາຊີບ ກະເສດ ( ຢູ່ຂັ້ນນັ້ນ, ແມ່ນຊາວຄ້າ ແລະ ຜູ້ເປັນເຈົ້າຂອງໂຮງງານ). ໃນກໍລະນີຕ່າງໆທີ່ເປັນສ່ວນໃຫຍ່ ( ດັ່ງທີ່ພວກເຮົາກໍໄດ້ເຫັນຢູ່ ເທິງນັ້ນ ). ວິຊາອາຊີບຫັດຖະກຳຕ່າງໆຊຶ່ງຮັບການຈັດຕັ້ງຕາມແບບ ໂຮງງານຫັດຖະກຳລ້ວນແຕ່ມີໃຈກາງທີໄຮກະສິກຳ : ຫລືວ່ານະຄອນຕ່າງໆ, ຫລື ( ຫລາຍກໍລະນີທີ່ສຸດ ) ແມ່ນບັນດາບ້ານທີ່ມີພົນລະເມືອງທີ່ເກືອບບໍ່ເຮັດກະສິກຳ ແລະ ຕ້ອງໄດ້ຈັດເຂົ້າເປັນປະເພດບັນດາທ້ອງຖິ່ນ ອຸດສາຫະກຳການຄ້າ. ຢູ່ທີ່ນີ້, ການແຍກອອກຈາກກັນລະຫວ່າງ ກະສິກຳກັບ ອຸດສາຫະກຳແມ່ນມີສາຍເຫດທີ່ເລິກເຊິ່ງຂອງມັນ, ສາຍເຫດຕ່າງຕ່າງກໍເນີດຈາກເຕັກນິກທັງນັ້ນຂອງໂຮງງານຫັດຖະກຳ, ຈາກລະບອບເສດຖະກິດຂອງໂຮງງານຫັດຖະກຳ. ພ້ອມທັງຈາກບັນດາ ເອກະລັກແຫ່ງແບບດຳລົງຊີວິດ ( ຫລືວັດທະນະທຳ ) ຂອງໂຮງງານ ຫັດຖະກຳ. ເຕັກນິກຜູກພັນຊາວກຳມະກອນເຂົ້າແໜ້ນກັບວິຊາສະເພາະ , ແລະ ຈາກນັ້ນ, ດ້ານໜຶ່ງ, ເຮັດໃຫ້ຜູ້ນັ້ນບໍ່ມີຄວາມອາດສາມາດ ໃນການເຮັດວິຊາຊີບກະເສດອີກ ( ບໍ່ມີກຳລັງວັງຊາຢ່າງພຽງພໍ, ແລະອື່ນໆ ); ແລະ ດ້ານອື່ນໆ, ມັນຮຽກຮ້ອງຊາວກຳມະກອນຕ້ອງ ດຳເນີນວິຊາຊີບ ຂອງຕົນຢ່າງຍາວນານ ແລະ ບໍ່ຢຸດຢັ້ງ. ຈຸດພິເສດຂອງລະບອບເສດຖະກິດຂອງໂຮງງານຫັດຖະກຳແມ່ນຢູ່ບ່ອນກຳມະກອນ ຢູ່ທີ່

ນັ້ນຖືກພັນແຍກຢ່າງເລິກເຊິ່ງທີ່ສຸດອັນລື່ນກ່ວາກຳມະກອນໃນບັນດາວິຊາຊີບຫັດຖະກຳນ້ອຍ, ເຊິ່ງໃນອາຊີບຫັດຖະກຳນ້ອຍ, ພວກເຮົາເຫັນວ່າໄປຄຽງຄູ່ກັບກັບການ ພັນແຍກໃນອຸດສາຫະກຳ, ແມ່ນການພັນແຍກໃນກະສິກຳ, ເພາະວ່າບັນດາຜູ້ຜະລິດນັ້ນສ່ວນຫລວງຫລາຍແມ່ນຖືກ ພັນເປັນທຸກຈົນທັ້ງສິ້ນ - ນັ້ນແມ່ນເງື່ອນໄຂ ແລະ ພື້ນຮ້າຍຍ້ອນຫລັງຂອງໂຮງງານ ຫັດຖະກຳ - ສະນັ້ນໂຮງງານ ຫັດຖະກຳຈຶ່ງບໍ່ຮັບເອົາ ກຳມະກອນຂອງມັນໃນຊາວນາທີ່ອາວຮັ້ງມີສີສຸກແດ່. ຈຸດພິເສດກ່ຽວກັບວັດທະນະທຳຂອງໂຮງງານຫັດຖະກຳຄື : ໑. ການຍືນຍົງຄົງຕົວນານປີທີ່ສຸດ ( ບາງເທື່ອເປັນສະຕະວັດ ) ຂອງວິຊາຊີບ ຫັດຖະກຳ , ແມ່ນວິຊາຊີບທີ່ໄດ້ພົນເຄື່ອງໝາຍ ພິເສດໃສ່ປະຊາກອນ ; ໒. ລະດັບຈິວິດການເປັນຢູ່ທີ່ສູງກ່ວາຂອງປະຊາກອນ [໑]) ບັດນີ້ພວກຂ້າພະເຈົ້າຈະກ່າວໂດຍລະອຽດກ່ວາກ່ຽວກັບຈຸດພິເສດທີ່ສອງນັ້ນ, ແຕ່ກ່ອນອື່ນ ໝົດ

---

໑) ໃນປື້ມ " ພິຈາລະນາໂດຍຫຍໍ້ກ່ຽວກັບອຸດສາຫະກຳແບບຫັດຖະກຳ " ທ່ານ ວ.ວ ໄດ້ຢືນຢັນຢ່າງເດັດຂາດວ່າ " ຢູ່ປະເທດເຮົາ ....ມີຫນ້ອຍທີ່ສຸດທີ່ມີນາຍຊ່າງຫັດຖະກຳລະຖິ້ມອາຊີບກະເສດ" (ໜ້າ ໓໖). ຢູ່ເທິງພູມ, ຂ້າພະເຈົ້າໄດ້ພິສູດວ່າ ກົງກັນຂ້າມມີຫລາຍບ່ອນທີ່ສຸດຄືແນວນັ້ນ, - ແລະ ບັນດາຮ່ອງຮອຍທີ່ມົວງ ຂອງການແບ່ງ ງານຊຶ່ງພວກເຮົາເຫັນໃນປະເທດຊາດ ຂອງພວກເຮົາ, ແມ່ນຍ້ອນຄວາມບໍ່ພັນປ່ຽນແຫ່ງຂະໜາດຢຶດທີ່ດິນເປັນກຳມະສິດຂອງຊາວນາສ້າງຂຶ້ນ, ຊຶ່ງມັນຫລາຍລື່ນການສ້າງຂຶ້ນຈາກກຳລັງແຮງຂອງຄວາມກ້າວໜ້າ ===)

ພວກຂ້າພະເຈົ້າຕ້ອງຍົກຂຶ້ນວ່າໂຮງງານຫັດຖະກຳບໍ່ພາໄປເຖິງ ບ່ອນແຍກອອກຈາກກັນຢ່າງສິ້ນເຊີງລະຫວ່າງອຸດສາຫະກຳ ກັບ ກະສິກຳ . ດ້ວຍເຕັກນິກ ຫັດຖະກຳ, ບັນດາໂຮງງານໃຫຍ່ບໍ່ອາດປະຖິ້ມ ບັນດາໂຮງງານນ້ອຍໄດ້, ໂດຍສະເພາະຢ່າງຍິ່ງແມ່ນໃນເມື່ອບັນດາຊ່າງຫັດຖະກຳນ້ອຍແກ່ຍາວວັນເຣັດວຽກອອກ ແລະ ຫລຸດລະດັບຄວາມ ຕ້ອງການຂອງເຂົາລົງຕ່ຳ : ໃນເງື່ອນໄຂຕ່າງໆ ເຊັ່ນດຽວກັນນັ້ນ, ດັ່ງທີ່ພວກເຮົາກໍໄດ້ເຫັນ, ໂຮງງານຫັດຖະກຳຊ້ຳຍັງຂະຫຍາຍວິຊາຊີບ ຫັດຖະກຳນ້ອຍອີກ. ດັ່ງນັ້ນມັນເປັນທຳມະດາວ່າໃນສ່ວນໃຫຍ່ຂອງກໍ ລະນີຕ່າງໆ. ເຮົາກໍເຫັນຢູ່ອ້ອມແອ້ມໃຈກາງໂຮງງານຫັດຖະກຳໄຮກະສິກຳແຫ່ງໜຶ່ງ, ຍັງມີວົງລ້ອມແຫ່ງບັນດາບ້ານກະສິກຳຊຶ່ງພົນລະເມືອງເຮັດ

---

===) ການອຸດສາຫະກຳ ..." (໔໐). ທ່ານວ.ວ ບໍ່ເຫັນໄດ້ ວ່າບັນດາ " ບ່ອນທີ່ມີບັນດາຊ່າງຫັດຖະກຳ " ດັ່ງກ່າວມັນຕ່າງກັບ ບ່ອນອື່ນໆ ດ້ວຍການປະກອບສະເພາະຢ່າງໜຶ່ງຂອງເຕັກນິກ,ຂອງເສດຖະກິດ ແລະ ຂອງວັດທະນະທຳ, ວ່າບ່ອນເຫລົ່ານັ້ນສະແດງເຖິງ ໄລຍະໜຶ່ງແຫ່ງການຂະຫຍາຍຕົວໂດຍສະເພາະຂອງລັດທິທຶນນິຍົມ. ສິ່ງສຳຄັນ, ຕັ້ງແມ່ນ " ບ້ານອຸດສາຫະກຳຕ່າງ", ສ່ວນໃຫຍ່ລ້ວນແຕ່ໄດ້ຮັບ "ພູດນາທີ່ໄດ້ແບ່ງໜ້ອຍສຸດ" (ໜ້າ ໖໔ )-(ປີ ໑໘໙໑, ເມື່ອຊີວິດການເປັນຢູ່ທາງອຸດສາຫະກຳຂອງບ້ານເຫລົ່ານັ້ນໄດ້ຜ່ານໄປຫລາຍ ສິບແລະບາງເທື່ອຫລາຍຮ້ອຍປີມາແລ້ວ!)-ແລະເປັນທຳມະດາວ່າຖ້າບໍ່ມີຂໍ້ຜິດພາດດັ່ງກ່າວຂອງບັນດາເຈົ້າໜ້າທີ່,ກໍບໍ່ໄດ້ມີລັດທິທຶນນິຍົມ.

ທັງວິຊາຊີບຫັດຖະກຳຕື່ມອີກ. ດັ່ງນັ້ນໃນດ້ານນີ້ ເຮົາເຫັນລັກ ສະນະ ຜ່ານຂ້າມຂອງໂຮງງານຫັດຖະກຳເພີ່ມອອກແຈ້ງລະຫວ່າງພື້ນຖານການ ຜະລິດຫັດຖະກຳນ້ອຍ ແລະ ໂຮງງານ. ຖ້າວ່າຢູ່ໃນພາກຕາເວັນ ຕົກ ນັ້ນເອງ. ສະໄໝໂຮງງານຫັດຖະກຳຂອງລັດທິທຶນນິຍົມກໍ່ບໍ່ອາດ ເຮັດ ໃຫ້ກຳມະກອນອຸດສາຫະກຳແຍກຕົວອອກຈາກກະສິກຳໂດຍສິ້ນເຊີງ [1], ສ່ວນຢູ່ລັດເຊຍ ເຊິ່ງເປັນບ່ອນທີ່ຍັງມີຫລາຍລະບອບທີ່ເລື່ອງໃສ່ ຜູກມັດ ຊາວນາໄວ້ກັບທີ່ດິນຊຶ່ງການແຍກອອກຈາກກັນນັ້ນ ບໍ່ອາດຈະບໍ່ຖືກຊັກຊ້າ ລົງ. ພວກຂ້າພະເຈົ້າຂໍທວນຄືນວ່າ ຍ້ອນແນວນັ້ນເອງ ປະເພດຮູບ ທີ່ ເດີຍເຫັນກ່ວາໝູ່ຂອງໂຮງງານຫັດຖະກຳທຶນນິຍົມຢູ່ລັດເຊຍແມ່ນ ໃຈ ກາງໄຮ່ກະສິກຳແຫ່ງໜຶ່ງ, ມັນດູດດຶງປະຊາຊົນຢູ່ບັນດາບ້ານໃກ້ຄຽງ- ປະຊາຊົນຢູ່ບັນດາບ້ານເຫລົ່ານີ້ແມ່ນ ປະຊາຊົນເຄິ່ງກະສິກຳ. ເຄິ່ງ ອຸດສາຫະກຳ, - ແລະ ຄອບງຳບ້ານເຫລົ່ານັ້ນ.

ຄວາມເປັນຈິງພິເສດຊຶ່ງເປັນໜ້າເອົາໃຈໃສ່ກ່າວຄື : ພົນລະ ເມືອງໃນບັນດາໃຈກາງໄຮ່ກະສິກຳເຫລົ່ານັ້ນມີລະດັບ ວັດທະນະທຳ ທີ່ ສູງກ່ວາ. ອັດຕາສ່ວນຄົນກໍ່ກໜັງສືນ້ອຍກ່ວາ, ລະດັບຊີວິດການເປັນຢູ່ ແລະ ຄວາມຕ້ອງການສູງກ່ວາ, ມີຄວາມຕ້ອງການຢາກຈຳແນກ ກັນ ຢ່າງຈະແຈ້ງກັບພວກ " ບ້ານນອກ " " ໄຮ່ການສຶກສາ " ທີ່ ໜາ ແໜ້ນ, - ນັ້ນມັນມັກແມ່ນຈຸດພິເສດຕ່າງໆຂອງພົນລະເມືອງຢູ່ທີ່ ໃຈ

---

໑) Das Kapital ເຫຼັ້ມ ໒, ໜ້າ ໓໓໙ - ໓໔໐ .

ກາງແນວນັ້ນ ໑*). ຄວາມຈິງນັ້ນກໍມີຄວາມໝາຍໜຶ່ງທີ່ໃຫ່ຍຫລວງ, ມັນຢືນຢັນຢ່າງຈະແຈ້ງເຖິງບົດບາດປະຫວັດສາດທີ່ກ້າວໜ້າຂອງ ລັດທິທຶນນິຍົມ ແລະ ຍິ່ງກ່ວານັ້ນອີກ, ຂອງລັດທິທຶນນິຍົມແບບ "ປະຊາຊົນ" ໂດຍລວມໆ ຊຶ່ງລວມທັງອາຍບ່າວປະຊາລາດທີ່ມີຄວາມຕັ້ງຕໍ່ບໍລິສຸດກ່ວາໝູ່ນັ້ນເອງກໍບໍ່ຫານປະກາດວ່າລັດທິທຶນນິຍົມ "ຫຽມ", ເພາະວ່າ ບັນດາໃຈກາງເກືອບທັງໝົດນັ້ນເຄີຍໄດ້ຈັດລຽງໃສ່ອຸດສາຫະກໍາ" ຫັດຖະກໍາ " ! ລັກສະນະຜ່ານຂ້າມຂອງໂຮງງານຫັດຖະກໍາກໍເພີ່ຍອອກທັງຢູ່

---

໑*) ຄວາມສໍາຄັນຂອງສັດຈະທໍານີ້ ຈໍາໃຫ້ພວກເຮົາຕ້ອງ ເພີ່ມເຕີມເອກະສານຕ່າງໆໃນພາກ _VI_ , ບ້ານບູຕວກລີນົບກາ(ເມືອງໂບບຣົບ, ແຂວງໂວໂຣແນເຍີ ) ແມ່ນໜຶ່ງໃນບັນດາໃຈກາງ ອຸດສາຫະກໍາຟອກໜັງ. ບ້ານນັ້ນມີ ໓.໖໑໕ ຄອບຄົວ, ໃນຈໍານວນດັ່ງກ່າວມີ ໘.໓໕໓ ຄອບຄົວບໍ່ເຮັດວິຊາຊີບກະເສດ, ແລະ ມີພົນລະເມືອງ ໘໑.໐໐໐ ກ່ວາຄົນ. ບັນດາຄອບຄົວທີ່ມີຄົນຮູ້ໜັງສືແມ່ນ ໔໓%; ປຽບກັບຄອບຄົວທີ່ຮູ້ໜັງສືໃນເມືອງແມ່ນ ໓໕% ( ສະຖິຕິຂອງບັນດາສະພາທ້ອງຖິ່ນກ່ຽວກັບເມືອງໂບບຣົບ ). ບ້ານໂປກຣົບກາຍອາ ແລະ ບ້ານບາລາໂກໂວ ( ແຂວງຊາມາຣາ ) ແຕ່ລະບ່ອນນັ້ນມີ ປະຊາຊົນ ໑໔.໐໐໐ ຄົນ, ຊຶ່ງສ່ວນຫລາຍແມ່ນມາແຕ່ບ່ອນອື່ນ. ຈໍານວນຊາວນາທີ່ບໍ່ມີທີ່ດິນແມ່ນ ໔໐% ແລະ ໔໘%. ອັດຕາສ່ວນຄົນຮູ້ໜັງສືສູງກ່ວາລະດັບປານກາງ. ສະຖິຕິໄດ້ກໍານົດຊັດເຈນວ່າບັນດາທ້ອງຖິ່ນອຸດສາຫະກໍາ <u>ໂດຍເວົ້າທົ່ວໄປ</u> ລ້ວນແຕ່ຕ່າງກັບທ້ອງຖິ່ນອື່ນໆ ຢູ່ບ່ອນວ່າອັດ ===)

===) ຕາສ່ວນ ຄົນຮູ້ໜັງສືສູງ ແລະ " ຄອບຄົວທີ່ບໍ່ມີໄຮ່ນາ ແມ່ນມີຫລາຍທີ່ສຸດ " ( ເອກະສານສະຖິຕິຂອງບັນດາສະພາທ້ອງຖິ່ນກ່ຽວກັບເມືອງ ໂນໂວຊູແປນເກີ ແລະ ນິໂກລາຍແອັບ ). - ຢາກຮູ້ລະດັບວັດທະນະທຳທີ່ສູງກ່ວາຂອງ " ຊ່າງຫັດຖະກຳ ". ຈົ່ງເບິ່ງ ກິດຈະການຄົ້ນຄ້ວາຂອງຄະນະກຳມະການສືບສວນກ່ຽວກັບອຸດສາຫະກຳ ແບບຫັດຖະກຳຕື່ມ, ເຫລັ້ມ III , ໜ້າ ໔໘; VIII , ໜ້າ ໓໑໔, ສະມຽກນິບ, ປຶ້ມດັ່ງກ່າວ ໜ້າ ໔໓; ກຣິໂກຣິແອັບ, ປຶ້ມດັ່ງກ່າວໜ້າ ໑໐໖ ແລະ ຕໍ່, ອານແນນສະກີ, ປຶ້ມດັ່ງກ່າວ, ໜ້າ໖໑: " ເອກະສານກ່ຽວກັບແຂວງນິເຢີນິບໂກຣົດ, ເຫລັ້ມ II, ໜ້າ ໘໘໖-໘໖໓, ລາຍງານແລະສືບສວນ", ເຫລັ້ມ໘, ໜ້າ໘໔໖; ເຫລັ້ມ ໙, ໜ້າ ໑໔໑; ຕໍ່ຈາກນັ້ນ, ອ່ານ" ບັນດາວິຊາຊີບສຳຣອງຢູ່ແຂວງວຼາດີເມຍ, ເຫຼັ້ມ III, ໜ້າ໑໐໓, ໃນນັ້ນ ທ່ານ ຄາຣິໂດເນບີບເປັນຜູ້ແຕ່ງນັ້ນໄດ້ ເລົ່າຄືນດ້ວຍຄຳວັນນະຄະດີທີ່ມີຊີວິດຊີວາຂອງການເລົ່າເລື່ອງຂອງທ່ານກັບຜູ້ຂັບລົດມ້າຂອງທ່ານແມ່ນຊ່າງຕຳແຜ່ນໄໝ. ຊ່າງຕຳແຜ່ນຄົນນັ້ນຕຳໜິຊີວິດການເປັນຢູ່ທີ່" ມືດຄຳ" ຂອງຊາວນາຢ່າງດູເດືອດແລະບໍ່ໄວ້ໜ້າ, ລະດັບຄວາມຕ້ອງການຕ່ຳແລະພາວະການຂາດວັດທະນະທຳຂອງ ຊາວນາງລງ...ແລະສະຫລຸບດ້ວຍຄຳຈົ່ມວ່ານີ້: " ອະນິຈາ, ໄຫວ້ພະເຈົ້າ , ເມື່ອຄິດເຖິງຄວາມທຸກຍາກລຳບາກຕ່າງໆຊຶ່ງຊາວກະສິກຳຕ້ອງຍອມທົນທຸກເພື່ອມີຊີວິດຢູ່ນັ້ນຈຶ່ງແມ່ນກະດຽນຄິງ! "ຕັ້ງແຕ່ດົນມາຄົນທັງຫລາຍກໍໄດ້ເຫັນວ່າຊາວນາລັດເຊຍຕົກທຸກທາງດ້ານຄວາມຮັບຮູ້ກ່ຽວກັບ ຄວາມທຸກຍາກຂອງຕົນ, ສ່ວນກຳມະກອນຂອງໂຮງງານຫັດຖະກຳທີ່ນີ້ ==)

ບ່ອນນີ້ອີກ, ເພາະວ່າມັນຫາກໍເລີ່ມຕົ້ນປ່ຽນແປງແນວຄິດຂອງ ພົນລະເມືອງເທົ່ານັ້ນ, ແລະ ກະໂຕຊຸດສາຫະກຳຈັກໃຫ່ຍນັ້ນເອງຈຶ່ງເປັນສິ່ງທີ່ສຳເລັດການປ່ຽນແປງດັ່ງກ່າວ.

ວ.ອ.ເລນິນ, ຄົບຊຸດ. ເປັນ ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ໂປຼແກຼສ, ມົສກູ, ໑໙໗໖, ເຫລັ້ມ ໓ , ໜາ ໘໑-໘໖, ໓໐໗ - ໓໑໐;໓໒໐ - ໓໒໘ - ໓໙໓ - ໔໐໐; ໔໓໒ - ໕໔໓ .

---

===) ຍົນ ( ນີ້ແມ່ນບໍ່ທັນເວົ້າເຖິງໂຮງງານອຸດສາຫະກຳ ) ພວກເຮົາຈຳເປັນຕ້ອງຮັບຮູ້ວ່າ ທາງດ້ານນັ້ນ, ເຂົາເປັນຜູ້ຮັ່ງມີພໍສົມຄວນ.

–

## ພາກທີສອງ

ເນື້ອໃນ ແລະ ປະຖົມປັດໄຈ
ຂອງການແບ່ງງານຄືນໃໝ່ສຳ
ລັບແຮງງານ ສັງຄົມ.

24 / VII
ห้ามจำหน่าย

ຄັດຈາກ ນິພົນ

ລະບົບແນວຄິດເຢຍລະມັນ

.......

ການແບ່ງງານໃຫ້ແກ່ແຮງງານຢູ່ພາຍໃນຊາດໜຶ່ງກ່ອນອື່ນ ໝົດ ແມ່ນກໍ່ໄດ້ເກີດການແຍກອອກຈາກກັນລະຫວ່າງແຮງງານ ອຸດສາຫະກຳ ແລະ ການຄ້າກັບແຮງງານ ກະສິກຳ, ແລະ ຈາກນັ້ນຈຶ່ງກໍ່ການ ແຍກ ອອກຈາກກັນຂຶ້ນລະຫວ່າງຕົວເມືອງກັບຊົນນະບົດ ແລະ ການປໍລະ ປັກ ກັນລະຫວ່າງຜົນປະໂຫຍດຂອງ ຕົວເມືອງ ແລະ ຊົນນະບົດ. ການຂະ ຫຍາຍຕົວຕື່ມອີກຂອງການແບ່ງງານໃຫ້ແກ່ແຮງງານພາເຖິງການ ແຍກ ອອກຈາກກັນລະຫວ່າງແຮງງານການຄ້າກັບແຮງງານ ອຸດສາຫະກຳ . ພ້ອມກັນນັ້ນ, ຍ້ອນການແບ່ງງານໄດ້ແກ່ແຮງງານຢູ່ພາຍໃນ ຂະແໜງ ການຕ່າງໆທີ່ຕ່າງກັນເຫລົ່ານັ້ນ ການແບ່ງງານອັນລະອຽດຕ່າງໆທີ່ຕ່າງ ກັນລະຫວ່າງບັນດາບຸກຄົນທີ່ຮ່ວມມືນຳກັນໃນການອອກແຮງງານ ຊະນິດ ໜຶ່ງທີ່ແນ່ນອນທີ່ຂະຫຍາຍຕົວ. ທີ່ຕັ້ງຂອງການແບ່ງງານອັນລະ ອຽດ ຕ່າງໆທີ່ຕ່າງກັນເຫລົ່ານັ້ນທີ່ມີຕໍ່ກັນ ແລະ ກັນໄດ້ກຳໜົດດ້ວຍ. ບັນດາ ແບບວິທີວິສາຫະກິດແຮງງານກະສິກຳ, ແຮງງານອຸດສາຫະກຳ ແລະ ແຮງງານການຄ້າ ( ລະບອບເຈົ້າໂຄດ, ລະບອບຂາທາດ, ຊັ້ນວັນ ນະ, ຊົນຊັ້ນ). ເມື່ອການພົວພັນຂະຫຍາຍຕົວກ່ວານັ້ນອີກ,ບັນດາສາຍ

ພົວພັນເຊັ່ນດຽວກັນນັ້ນກໍປະກົດຕົວຂຶ້ນທັງໃນສາຍກ່ຽວພັນ ໄປມາ ລະຫວ່າງຊາດຕ່າງໆທີ່ຕ່າງກັນ.

ບັນດາໄລຍະຂະຫຍາຍຕົວທີ່ຕ່າງກັນຂອງການແບ່ງງານໃຫ້ ແກ່ແຮງງານກໍພ້ອມດຽວກັນເປັນຮູບການທີ່ຕ່າງກັນຂອງກຳມະສິດ. ເວົ້າຕາມວິທີອື່ນຄືແຕ່ລະໄລຍະໃຫ່ມຂອງການແບ່ງງານໃຫ້ແກ່ແຮງງານກໍກຳໜົດບັນດາການພົວພັນລະຫວ່າງບຸກຄົນນຳກັນ, ໂດຍອີງໃສ່ການພົວພັນຂອງເຂົາກັບພາຫະນະແຫ່ງການອອກແຮງງານ, ເຄື່ອງມືສຳລັບ ການອອກແຮງງານ ແລະ ຜະລິດຕະພັນຂອງງານ.

ກ.ມາກ ແລະ ຟ. ອັງແກນ, ໂຮມບົດ
ເລືອກເຟັ້ນ ສຳນັກພິມຈຳໜ່າຍ ຊື
ເທິດ, ຮ່າໂນ້ຍ, ໑໙໘໐, ເຫລັ້ມ ໑
ໜ້າ ໔໗໐

ຄັດຈາກ ນິພົນ

ທຶນ

## ພາກ x/x

## ການແບ່ງງານ ແລະ ໂຮງງານຫັດຖະກຳ

.....

ການຮ່ວມມືປະເທດດັ່ງກ່າວຊຶ່ງພົ້ນຖານແມ່ນການແບ່ງງານ, ໃນໂຮງງານຫັດຖະກຳຖືຮູບການຮູບນິທັດຂອງມັນ ແລະ ຍຶດທ່າດີໃນ ສະໄຫມສົມບູນ ຊຶ່ງເອີ້ນວ່າສະໄຫມແຫ່ງໂຮງງານຫັດຖະກຳ, ສະໄຫມ ນີ້ແກ່ຍາວລະຫວ່າງເຄິ່ງສະຕະວັດ x(// ຈົນມາເຖິງສ່ວນທີສາມ ອັນສຸດທ້າຍຂອງສະຕະວັດ x(//// .

<u>ໂຮງງານຫັດຖະກຳມີສອງບໍ່ເກີດ.</u>

ພຽງແຕ່ໂຮງງານແຫ່ງດຽວເທົ່ານັ້ນກໍສາມາດເຕົ້າໂຮມໄດ້ ພາຍໃຕ້ການບັນຊາຂອງນາຍທຶນຄົນດຽວກັນ, ບັນດາຊ່າງຫັດຖະກຳທີ່ສັງກັດຫລາຍວິຊາຊີບທີ່ຕ່າງກັນ, ແລະ ຜະລິດຕະພັນໜຶ່ງຊຶ່ງຢາກສຳເລັດຮູບຢ່າງຄັກແນ່ກໍຕ້ອງຜ່ານມືບັນດານາຍຊ່າງທັງໝົດນັ້ນ. ລົດມ້າ ຄັນໜຶ່ງແມ່ນຜະລິດຕະພັນແບບລວມໝູ່ຂອງການອອກແຮງງານຂອງຈຳ ນວນສ່ວນໃຫຍ່ໃນບັນດາຊ່າງຫັດຖະກຳທີ່ເປັນເອກະລາດນຳກັນ, ສົມມຸດຄື

ຊ່າງເຮັດລົດ, ຊ່າງເຮັດອານ, ຊ່າງຫຍິບ, ຊ່າງຕີເຫລັກ, ຊ່າງເຮັດສາຍຮັດ, ຊ່າງກົງ, ຊ່າງເຮັດຍອຍ, ຊ່າງເຂົ້າແກ້ວ, ຊ່າງທາສີ , ຊ່າງພັດແວກນີ, ຊ່າງຟອກຄຳ, ແລະອື່ນໆ. ໂຮງງານຫັດຖະກຳເຮັດລົດມ້າເຕົ້າໂຮມບັນດາຊ່າງທັງໝົດເຫລົ່ານັ້ນເຂົ້າໃນໂຮງງານ ຫລັງໜຶ່ງ, ໃນນັ້ນເຂົາຮ່ວມເຮັດວຽກນຳກັນພ້ອມໃນເວລາດຽວ ແລະ ສົ່ງຕໍ່ມືກັນ. ທີ່ຈິງເຂົາບໍ່ສາມາດຟອກຄຳໃຫ້ລົດມ້າຄັນໜຶ່ງໄດ້ ຖ້າວ່າ ລົດມ້າດັ່ງກ່າວ ເຂົາເຮັດຍັງບໍ່ທັນສຳເລັດລົງ; ແຕ່ຖ້າເຂົາເຮັດ ລົດມ້າຫລາຍຄັນພ້ອມເວລາດຽວກັນ, ແມ່ນລົດມ້າຈຳນວນນີ້ບໍ່ວ່າຍາມໃດກໍ່ສະໜອງວຽກໃຫ້ຊ່າງຟອກ, ສ່ວນລົດອື່ນໆ ນັ້ນກໍ່ຜ່ານຂະບວນວິວັດປະດິດແຕ່ງອັນອື່ນ. ມາເຖິງຕອນນີ້, ພວກເຮົາຫາກໍ່ພຽງແຕ່ເວົ້າເຖິງ ການຮ່ວມມືໂດຍງ່າຍດາຍຊຶ່ງແມ່ນການຮ່ວມມືທີ່ເຄີຍມີບັນດາພາຫະນະ ຂອງມັນກ່ຽວກັບຄົນ ແລະ ວັດຖຸເທົ່ານັ້ນ. ແຕ່ຫລັງຈາກນັ້ນເອງ, ໃນການຮ່ວມມືດັ່ງກ່າວ ເລີຍເກີດມີການປ່ຽນແປງທາງທາດແທ້ຂຶ້ນ. ນາຍຊ່າງຈັກ, ຊ່າງສາຍຮັດ, ຊ່າງຕີເຫລັກ ແລະ ອື່ນໆ ພຽງແຕ່ປະດິດ ແຕ່ງລົດມ້າໄດ້ເທົ່ານັ້ນ, ສະນັ້ນມັນກໍ່ຄ່ອຍໆເສຍຄວາມຊິນເຄີຍເຮັດວິຊາຊີບຂອງຕົນໃນຂອບເຂດວິຊາຊີບທັງໝົດນັ້ນ, ແລະ ກໍ່ຄ່ອຍໆເສຍທັງ ກຳລັງຄວາມສາມາດເຮັດວິຊາຊີບດັ່ງກ່າວໃນຂອບເຂດທັງໝົດ. ດ້ານອື່ນ, ຄວາມເກັ່ງກ້າອັນຄ່ອງແຄ່ວຂອງເຂົາຊຶ່ງດຽວນີ້ພຽງແຕ່ໃຊ້ວຽນໄປ ມາເຂົ້າວຽກໜຶ່ງທີ່ເປັນພາກສ່ວນຂອງຕົນ ເທົ່ານັ້ນ, ສະນັ້ນຈຶ່ງມີຮູບການໜຶ່ງທີ່ເໝາະສົມທີ່ສຸດກັບຂອບເຂດເຄື່ອນໄຫວທີ່ຈຳກັດດັ່ງກ່າວ. ທຳອິດ, ໂຮງງານຫັດຖະກຳຜະລິດລົດມ້າປະກົດຕົວຂຶ້ນເປັນການສົມທົບລະ

ຫວ່າງວິຊາຊີບຕ່າງໆ ທີ່ເປັນເອກະລາດ. ໂຮງງານຫັດຖະກຳດັ່ງກ່າວຄ່ອຍໆກາຍເປັນການແບ່ງປັນການຜະລິດລົດມ້າມາເປັນບັນດາຂະບວນວິວັດພິເສດ ຊຶ່ງແຕ່ລະຂະບວນວິວັດດັ່ງກ່າວນີ້ພັດປະກອບເຂົ້າເປັນ ວຽກງານວິຊາສະເພາະໜຶ່ງຂອງຄົນງານຜູ້ໜຶ່ງ, ແລະຂະບວນວິວັດທັງໝົດເຫຼົ່ານັ້ນແມ່ນບັນດາຜູ້ອອກແຮງງານພາກສ່ວນນັ້ນຮ່ວມແຮງກັນດຳເນີນງານ. ຕັ້ງແມ່ນຍອນແນວນັ້ນເອງ ບັນດາໂຮງງານຫັດຖະກຳຕ່ຳ ແຜ່ນຜ້າຂົນສັດ ແລະ ໂຮງງານຫັດຖະກຳອື່ນເປັນຈຳນວນສ່ວນໃຫຍ່ນັ້ນລ້ວນແຕ່ກຳເນີດເກີດຂຶ້ນຈາກການປະສານສົມທົບ ບັນດາວິຊາຊີບຫັດຖະກຳທີ່ຕ່າງກັນເຂົ້າ, ໂດຍພາຍໃຕ້ຄຳສັ່ງຂອງນາຍທຶນຄົນດຽວກັນ ໑).

---

໑) ຕົວຢ່າງໜຶ່ງທີ່ໃຫ່ມອ່ຽມຄື: ໂຮງງານໃຫ່ມຢູ່ທີ່ເລອົງແລະຢູ່ທີ່ນີມເມີ" ມີລັກສະນະເຈົ້າໂຄດຢ່າງເຕັມສ່ວນ; ໂຮງງານດັ່ງກ່າວໃຊ້ແມ່ຍິງ ແລະ ເດັກນ້ອຍຫລາຍຄົນ ແຕ່ບໍ່ເຮັດໃຫ້ເຂົາເສຍກຳລັງ ວັງຊາ, ກໍ່ບໍ່ເຮັດໃຫ້ເຂົາເສື່ອມຖອຍໄປ; ໂຮງງານດັ່ງກ່າວແຖມປະ ໃຫ້ເຂົາຢູ່ໃນບັນດາຫວ່າງພູ, ຊຶ່ງທິວທັດສວຍສົດງົດງາມຄືເດີຣົມ, ວາເຣີອິແຄເຣີ, ໂວເກີລຸຍເຢີ, ທັງນີ້ກໍ່ເພື່ອໃຫ້ເຂົາລ້ຽງມອນ ແລະ ສາວໄໝ; ບໍ່ມີຍາມໃດທີ່ໂຮງງານນັ້ນຈະດຳເນີນວິສາຫະກິດເຊັ່ນດຽວ ກັນກັບໂຮງງານທີ່ແທ້ຈິງເລີຍ. ການທີ່ຫລັກການແບ່ງງານດັ່ງກ່າວໄດ້ ຮັບການປະຕິບັດຢ່າງຖືກຕ້ອງຄືແນວນັ້ນ ກໍ່ຍອນໃນໂຮງງານດັ່ງກ່າວ, ຫລັກການນັ້ນມີລັກສະນະສະເພາະຢ່າງໜຶ່ງ. ເຖິງວ່າມີບັນດາຜູ້ສາວໄໝ, ບັນດາຊ່າງປັ່ນໄໝ, ບັນດາຊ່າງຍ້ອມ, ບັນດາຊ່າງເຂືອບໄໝ,==)

ແຕ່ໂຮງງານຫັດຖະກຳກໍສາມາດກຳເນີດຂຶ້ນຢ່າງກົງກັນຂ້າມໂດຍສິ້ນເຊີງ. ກຳມະກອນຈຳນວນສ່ວນໃຫຍ່ຮ່ວມກັນເຮັດວຽກງານ ຊະນິດດຽວກັນເຊັ່ນຜະລິດເຈ້ຍ, ຫລໍ່ຕົວໜັງສືພິມ, ຜະລິດເຂັມຫຍິບ, ແລະອື່ນໆ ອາດຖືກນາຍທຶນຜູ້ດຽວກັນໃຊ້ພ້ອມໆດຽວໃນໂຮງງານດຽວກັນ . ນັ້ນແມ່ນການຮ່ວມມື ພາຍໃຕ້ຮູບການອັນງ່າຍດາຍກວ່າໝູ່. ກຳມະກອນແຕ່ລະຄົນນັ້ນ ( ຫລືຮ່ວມກັນກັບເພື່ອນນາຍຊ່າງຜູ້ໜຶ່ງຫລືສອງຄົນ) ຜະລິດສິນຄ້າຊຸດໜຶ່ງອອກດ້ວຍວິທີດຳເນີນບັນດາຂະບວນວິວັດທີ່ ຈຳເປັນຢ່າງຕິດຕໍ່ໜໍ່ເນື່ອງກັນ ແລະ ເຮັດຕາມວິທີເກົ່ານັ້ນອີກ. ແຕ່ຫລັງຈາກ

---

===) ແລະບັນດາຊ່າງຕຳແຜ່ນ ; ແຕ່ເຂົາກໍບໍ່ຖືກເຕົ້າໂຮມເຂົ້າໃນໂຮງງານດຽວກັນ, ບໍ່ຂຶ້ນຕໍ່ເຈົ້າຂອງຄົນດຽວກັນ ; ທັງໝົດນັ້ນຕ່າງກໍເປັນ ບັນດາຊ່າງເອກະລາດ". (ອາ. ເບີລັງກີ:

ໂດຍແມ່ນ ອາ. ເບີແລເຢີເປັນຜູ້ຄົ້ນຫາ, ປາຣີ, ໑໘໓໘-໑໘໓໙, ໜ້າ໗໘ແລະ໗໙). ຕັ້ງແຕ່ເວລາເບີລັງກີຂຽນສິ່ງດັ່ງກ່າວອອກ ບັນດາກຳມະກອນເອກະລາດ, ໄດ້ຮັບການເຕົ້າໂຮມບໍ່ຫລາຍກໍ ໜ້ອຍເຂົ້າໃນບັນດາໂຮງງານ.

ສະບັບເປັນພາສາ ເຢລະມັນ, ທີ່ພິມຈຳໜ່າຍເປັນຄັ້ງທີສີ່: ແລະຕັ້ງແຕ່ເວລາ ມາກ ຂຽນອອກເປັນສິ່ງທີ່ພວກເຮົາຫາກໍອ່ານນັ້ນ, ຈັກຕຳແຜ່ນໄດ້ຮັບການໝູນໃຊ້ໃນບັນດາໂຮງງານແລະກໍໄດ້ແທນທີ່ບັນດາກີ່ຕຳຫູກດ້ວຍມືຢ່າງໄວວາ. ອຸດສາຫະກຳໄໝຂອງ ເກີແຮນແຟນເດີ ກໍມີພາວະການທີ່ຄ້າຍໆຄືກັນນັ້ນ. ( ຟ. ອັງແກນ ).

ນັ້ນເອງ, ສະພາບແວດລ້ອມຕ່າງໆ ທາງນອກໄດ້ເຮັດໃຫ້ເຂົາຕ້ອງໃຊ້ວິທີອື່ນ, ການເຕົ້າໂຮມກຳມະກອນເຂົ້າໃນໂຮງງານດຽວກັນແລະການເຮັດວຽກນຳກັນພ້ອມໆດຽວກັນຂອງເຂົາ. ປະລິມານສິນຄ້າທີ່ໃຫຍ່ກ່ວານັ້ນຈຳນວນໜຶ່ງ, ເປັນຕົ້ນແມ່ນ ຕ້ອງໄດ້ມອບໃນໄລຍະເວລາໜຶ່ງ ທີ່ແນ່ນອນ. ແຮງງານໃນຄາວນັ້ນຖືກແບ່ງອອກ. ແທນທີ່ຄວນບັງຄັບ ໃຫ້ກຳມະກອນຜູ້ໜຶ່ງຕ້ອງເຮັດຫລາຍວຽກງານ, ວຽກນີ້ຈະເຮັດກ່ອນວຽກນັ້ນຈະເຮັດຫລັງ, ແຕ່ເຂົາແຍກວຽກງານເຫລົ່ານັ້ນອອກ,ເຂົາເຮັດໃຫ້ວຽກງານເຫລົ່ານັ້ນຖືກໂດດດ່ຽວຕໍ່ຈາກນັ້ນເຂົາມອບໝາຍແຕ່ລະ ວຽກງານໃຫ້ກຳມະກອນແຕ່ລະຄົນເຮັດໂດຍສະເພາະ, ແລະ ວຽກງານທັງໝົດເຫລົ່ານັ້ນຊຶ່ງບັນດາຜູ້ອອກແຮງງານຮ່ວມມືປະຕິບັດພ້ອມກັນ ແລະຢູ່ໃກ້ຄຽງກັນ. ການແບ່ງປັນດັ່ງກ່າວ, ທຳອິດ, ພຽງແຕ່ໄດ້ດຳເນີນໄປໂດຍບັງເອີນເທົ່ານັ້ນ, ຕໍ່ມານັ້ນກໍໄດ້ໝູນໃຊ້ຄືນໃໝ່ຫລາຍເທື່ອ, ຊຶ່ງສະແດງອອກວ່າມີປະໂຫຍດພິເສດ ແລະ ຄ່ອຍໆພັນແປ[໑])ເປັນການແບ່ງງານໜຶ່ງທີ່ມີລະບົບ. ຈາກບ່ອນເປັນຜະລິດຕະພັນເອກະຊົນ ຂອງກຳມະກອນຜູ້ໜຶ່ງທີ່ເປັນເອກະລາດໃນການເຮັດວຽກໂດຍບໍ່ຈັກວ່າເທົ່າໃດ, ສິນຄ້າກາຍເປັນຜະລິດຕະພັນສັງຄົມຂອງກອນໜຶ່ງທີ່ປະສານ ສົມທົບກຳມະກອນຫລາຍຄົນ ຊຶ່ງແຕ່ລະຄົນມີແຕ່ເຮັດວຽກງານພາກ ສ່ວນດຽວຢູ່ເລື້ອຍໆໄປ. ກໍແມ່ນວຽກງານຕ່າງໆອັນດຽວກັນນັ້ນ, ໃນໂຮງງານຜະລິດເຈັ້ຍຂອງສັງຄົມອາຊີບຫັດຖະກຳໜຶ່ງຢູ່ເຢລະມັນ, ກໍເສື່ອມ

---

໑) S'ossifie (ພ.ປ.).

ຕິດນຳກັນເປັນຂະບວນວຽກງານທີ່ສືບຕໍ່ກັນໄປ, ແຕ່ໃນໂຮງງານຫັດຖະກຳຜະລິດເຈັຍຢູ່ ຣອນລັງ ຊ້ຳພັດກາຍເປັນບັນດາວຽກງານພາກ ສ່ວນຊຶ່ງໂດຍແມ່ນບັນດາພາຄືຂອງກຸ່ມຫນຶ່ງທີ່ຮ່ວມມືກັນປະຕິບັດພອມດຽວ. ຜູ້ເຮັດເຂັມຂັດຢູ່ ນູຣຳແບ ກໍແມ່ນປັດໃຈພື້ນຖານຂອງໂຮງງານຫັດຖະກຳຜະລິດເຂັມຂັດຢູ່ອັງກິດ, ແຕ່ໃນເມືອຄົນດັ່ງກ່າວເຮັດທັງຫມົດ ເປັນລວາດຫນຶ່ງໂລດຊຶ່ງອາດມີເຖິງຊາວວຽກງານສືບຕໍ່ກັນນັ້ນ, ແຕ່ໃນໂຮງງານຫັດຖະກຳຢູ່ອັງກິດ, ກຳມະກອນຊາວຄົນພັດເຮັດແຕ່ຜູ້ລະວຽກ ໃນຈຳນວນຊາວວຽກງານດັ່ງກ່າວ, ຊຶ່ງບັນດາວຽກງານດັ່ງກ່າວນີ້,ເນືອງຈາກບົດຮຽນຕໍ່ມານັ້ນ, ກໍຍິ່ງໄດ້ຮັບການແບ່ງເປັນພູດນ້ອຍ ແລະ ແຍກອອກຕ່າງຫາກຫລາຍຕື່ມອີກ.

ບໍ່ເກີດຂອງໂຮງງານຫັດຖະກຳ, ການທີ່ມັນກຳເນີດຂຶ້ນຈາກວິຊາຊີບຫັດຖະກຳ, ດັ່ງນັ້ນແມ່ນມີສອງດ້ານ. ດ້ານຫນຶ່ງ, ໂຮງງານຫັດຖະກຳກຳເນີດຈາກການປະສານສົມທົບບັນດາວິຊາຊີບຫັດຖະກຳທີ່ຕ່າງ ກັນແລະ ເປັນເອກະລາດ, ເຊິ່ງຄົນທັງຫລາຍຜັນແປເປັນທີ່ຂຶ້ນນຳກັນແລະເຮັດໃຫ້ມັນງ່າຍດາຍເຖິງຂັ້ນພຽງແຕ່ເປັນວຽກງານພາກສ່ວນແລະເພີ່ມເຕີມໃຫ້ກັນໃນການຜະລິດອອກເປັນສິນຄ້າອັນດຽວກັນເທົ່ານັ້ນ; ດ້ານອື່ນ, ມັນກຳເນີດຈາກການຮ່ວມມືຂອງບັນດາຊ່າງຫັດຖະກຳຮ່ວມ ວິຊາດຽວກັນ, ເອົາມາແບ່ງວິຊາຊີບຫັດຖະກຳອັນດຽວກັນນັ້ນກາຍມາ ເປັນຈັງຫວະຕ່າງໆທີ່ຕ່າງກັນ, ແຍກຈັງຫວະຕ່າງໆເຫລົ່ານັ້ນອອກຕ່າງຫາກແລະ ເຮັດໃຫ້ຈັງຫວະເຫລົ່ານັ້ນກາຍເປັນຈັງຫວະຕ່າງໆທີ່ເປັນ ເອກະລາດເຖິງຂັ້ນວ່າແຕ່ລະຈັງຫວະດັ່ງກ່າວກາຍເປັນພາລະບົດບາດ ຫນຶ່ງ

ໂດຍແມ່ນຜູ້ອອກແຮງງານພາກສ່ວນຜູ້ໜຶ່ງຮັບຜິດຊອບໂດຍສະເພາະ. ດັ່ງນັ້ນໂຮງງານຫັດຖະກຳ, ບາງເທື່ອປະຕິບັດການແບ່ງງານໃນວິຊາຊີບຫັດຖະກຳໜຶ່ງ ແລະ ແຜ່ຂະຫຍາຍການແບ່ງງານນັ້ນຂຶ້ນ; ບາງເທື່ອນຳເອົາບັນດາວິຊາຕ່າງຫາກ ແລະ ໂດດດ່ຽວນັ້ນ ສົມທົບກັນເຂົ້າ ແຕ່ເຖິງວ່າໂຮງງານຫັດຖະກຳເລີ່ມຈາກແຕ່ບ່ອນໃດກໍຕາມ, ຮູບການສຸດທ້າຍຂອງມັນກໍຍັງຄົງເປັນພຽງແຕ່ອັນໜຶ່ງອັນດຽວເທົ່ານັ້ນຄື: ໂຄງປະກອບການຜະລິດຊຶ່ງອະໄວຍະວະຫາຍໃຈແມ່ນຄົນ.

ເພື່ອເຂົ້າໃຈຢ່າງເໝາະສົມກ່ຽວກັບການແບ່ງງານໃນໂຮງງານຫັດຖະກຳ, ສິ່ງຕົ້ນຕໍແມ່ນບໍ່ຄວນຫລົງລືມສອງຈຸດດັ່ງນີ້ :

ໜຶ່ງແມ່ນ, ຢູ່ທີ່ນີ້, ການໄຈແຍກຂະບວນວິວັດແຫ່ງການຜະລິດມາເປັນບັນດາໄລຍະຜະລິດຕ່າງຫາກແມ່ນເປັນເອກະສັນໂດຍສົ້ນເຊີງກັບການແບ່ງປັນວິຊາຊີບຫັດຖະກຳຂອງຊ່າງຫັດຖະກຳມາເປັນບັນດາວຽກງານພາກສ່ວນ. ເຖິງວ່າສັບສົນຫລືງ່າຍດາຍກໍຕາມ, ການປະຕິບັດບໍ່ວ່າຍາມໃດກໍຍັງຂຶ້ນກັບກຳລັງວັງຊາ, ຄວາມຄ່ອງແຄ່ວ, ການວ່ອງໄວ ແລະ ການແມ່ນຢຳຂອງຝາມືຂອງຊາວກຳມະກອນເມື່ອເຂົາໃຊ້ເຄື່ອງມືຂອງເຂົາ. ແຕ່ພື້ນຖານບໍ່ວ່າຍາມໃດກໍຍັງແມ່ນຫັດຖະກຳ. ພື້ນຖານເຕັກນິກດັ່ງກ່າວພຽງແຕ່ອະນຸຍາດໃຫ້ໄຈແຍກວຽກງານທີ່ຕ້ອງເຮັດຢ່າງມີການຈຳກັດ. ແຕ່ລະຂະບວນວິວັດແຫ່ງພາກສ່ວນຊຶ່ງເປົ້າໝາຍແຫ່ງການອອກແຮງງານຕ້ອງຜ່ານ, ອາດຈະຕ້ອງດຳເນີນດ້ວຍມືໄດ້, ແລະ ດັ່ງນັ້ນກໍອາດຈະເວົ້າວ່າຂະບວນວິວັດໂດຍສະເພາະນັ້ນກໍເປັນວິຊາຊີບຫັດຖະກຳໜຶ່ງທີ່ຕ່າງຫາກແລ້ວ.

ຕັ້ງແມ່ນຍ້ອນການຊຳນິຊຳນານກ່ຽວກັບວິຊາຊີບຫັດຖະກຳອັນເປັນພື້ນຖານຂອງໂຮງງານຫັດຖະກຳນັ້ນເອງ, ສະນັ້ນກຳມະກອນແຕ່ລະຄົນຈຶ່ງຈຳຕ້ອງຜັນເປັນວິຊາສະເພາະຕະຫລອດຊີວິດກ່ຽວກັບພາລະບົດບາດພາກສ່ວນໜຶ່ງ.

ສອງແມ່ນ, ການແບ່ງງານຂອງໂຮງງານຫັດຖະກຳ ແມ່ນການຮ່ວມມືທີ່ຂຶ້ນກັບປະເພດພິເສດແລະບັນດາຈຸດທີ່ຍອດຍິ່ງຂອງການ ແບ່ງງານດັ່ງກ່າວ, ຊຶ່ງສ່ວນຫລາຍບໍ່ແມ່ນຍ້ອນຮູບຖານອັນພິເສດດັ່ງກ່າວນັ້ນຈຶ່ງມີຂຶ້ນ, ແຕ່ຊ້ຳພັດແມ່ນມາຈາກລັກສະນະທົ່ວໄປຂອງການຮ່ວມງານ.

.....

ຖ້າຄົນທັງຫລາຍພຽງແຕ່ພິຈາລະນາກະໂຕແຮງງານ ໂດຍສະເພາະເທົ່ານັ້ນ, ຄົນທັງຫລາຍສາມາດເອີ້ນການແບ່ງປັນພື້ນຖານ ການຜະລິດສັງຄົມເປັນຂະແໜງການໃຫຍ່ຕ່າງໆ. ອຸດສາຫະກຳ, ກະສິກຳ, ແລະ ອື່ນໆ, ແມ່ນການແບ່ງງານທົ່ວໄປ; ເອີ້ນການແບ່ງປັນຂະແໜງການຜະລິດເຫລົ່ານັ້ນເປັນປະເພດ ແລະ ຊະນິດ, ແມ່ນການແບ່ງງານສະເພາະ ແລະ ສຸດທ້າຍເອີ້ນການແບ່ງງານໃນໂຮງງານແມ່ນ ການແບ່ງງານສະເພາະລາຍ ໑).

---

໑) " ການແບ່ງງານ " ເລີ່ມຈາກການແບ່ງປັນເປັນ"ວິຊາຊີບຕ່າງໆ ທີ່ຕ່າງກັນທີ່ສຸດ, ແລະຄ່ອຍໆກ້າວຂຶ້ນການແບ່ງງານຊຶ່ງໃນນັ້ນ" ກຳມະກອນຫລາຍຄົນແບ່ງກັນປະດິດແຕ່ງຜະລິດຕະພັນແຕ່ຢ່າງດຽວ " ເຊັ່ນດຽວກັນໃນໂຮງງານຫັດຖະກຳ + (ສະຕິເຊີ,ປຶ້ມທີໄດ ===)

===) ແນະນຳແລ້ວ...[++]) ເຫລັ້ມ ໑, ໜ້າ ໑໗໙). ໃນຊາດ ຕ່າງໆທີ່ໄດ້ມີລະດັບຄວາມສີວິໄລໃດໜຶ່ງ, ພວກເຮົາເຫັນວ່າ ມີການ ແບ່ງງານສາມປະເພດ : ປະເພດທີໜຶ່ງ , ຊຶ່ງພວກເຮົາເອີ້ນວ່າວ່າ ການແບ່ງງານໂດຍທົ່ວໄປ, ການແບ່ງງານນີ້ພາໄປເຖິງການ ຈຳແນກ ແຕກຕ່າງບັນດາຊາວຜະລິດມາເປັນຜູ້ເຮັດນາ, ຜູ້ເຮັດໃນໂຮງງານຫັດ ຖະກຳ ແລະ ຜູ້ໄປຄ້າຂາຍ, ການແບ່ງງານດັ່ງກ່າວເໝາະສົມ ກັບ ສາມຂະແໜງອາຊີບວິສາຫະກິດແຫ່ງຊາດຕົ້ນຕໍ. ປະເພດທີສອງ, ຊຶ່ງ ຄົນເຮົາສາມາດເອີ້ນວ່າການແບ່ງງານສະເພາະ, ແມ່ນການແບ່ງ ປັນ ແຕ່ລະຂະແໜງການມາເປັນປະເພດ ... ປະເພດແບ່ງງານທີສາມ, ຊຶ່ງສຸດທ້າຍຄົນເຮົາຕ້ອງເອີ້ນວ່າການແຈກຢາຍວຽກງານຫລືການ ແບ່ງ ງານທີ່ແທ້ຈິງ, ແມ່ນການແບ່ງງານໄດ້ກຳເນີດຂຶ້ນໃນບັນດາວິຊາຊີບ ທີ່ ສະເພາະລາຍ ແລະ ໃນບັນດາວິຊາຊີບຫັດຖະກຳທີ່ສະເພາະລາຍ... ໃນສ່ວນໃຫ່ຍແຫລ່ງບັນດາໂຮງງານຫັດຖະກຳ ແລະ ໂຮງຊ່າງ "(ຟ. ສກາກເບັກ : ປຶ້ມດັ່ງກ່າວ ໜ້າ ໘໔, ໘໖ ).[+++]

---

\+ arts mécanique, Trung văn ພາສາຈີນ : ອາຊີບ ຫັດຖະກຳ ປະດິດແຕ່ງ ( ພ.ປ. ).

++ cours d'economie politique , ປາຣີ , ໑໘໒໓ (ບ.ກ.).

+++ théorie des richesses sociales ປາຣີ, ໑໘໒໙, ເຫລັ້ມ _I_ ( ບ. ກ ).

ໂດຍທີ່ຄາຍຄືການແບ່ງງານໃນໂຮງງານຫັດຖະກຳ, ການແບ່ງງານໃນສັງຄົມ ແລະ ການຈຳກັດຢ່າງເໝາະສົມສຳລັບບັນດາ ເອກະຊົນເຂົ້າຂົງເຂດໜຶ່ງຫລືເຂົ້າວິຊາໜຶ່ງແຫ່ງວິຊາຊີບສະເພາະ .....
...ລ້ວນແຕ່ຂະຫຍາຍຕົວຈາກຈຸດກົງຂ້າມຕ່າງໆ. ໃນຄອບຄົວໜຶ່ງ[໑] ແລະ ໃນຄອບຄົວທີ່ເປີດກວ້າງ, ໝາຍເຖິງເຜົ່າຊົນ, ມີການ ແບ່ງງານທີ່ເກີດເອງ, ອີງໃສ່ໄວອາຍຸ ແລະ ລັກສະນະເພດ, ໝາຍຄວາມວ່າບົນພື້ນຖານສິລະສາດໂດຍລ້ວນໆ. ການແບ່ງງານດັ່ງກ່າວ ຮ່ວມກັນກ້າວຂະຫຍາຍກັບການເປີດກວ້າງຂອງວົງຄະນາຍາດ, ກັບການ ເພີ່ມທະວີພົນລະເມືອງຂຶ້ນຕື່ມ, ແລະ ໂດຍສະເພາະຢ່າງຍິ່ງກັບການ ທະເລາະວິວາດລະຫວ່າງເຜົ່າຊົນຕ່າງໆທີ່ຕ່າງກັນ, ແລະ ກັບການທີ່ເຜົ່າຊົນນີ້ຮຸກຮານເຜົ່າຊົນນັ້ນ. ດ້ານອື່ນ, ດັ່ງທີ່ພວກເຮົາກໍໄດ້ສັງເກດ ,

---

໑) ສະບັບເປັນພາສາເຢລະມັນ, ພິມຈຳໜ່າຍເປັນຄັ້ງທີສາມ: ເນື່ອງຈາກໃນພາຍໜ້ານັ້ນໄດ້ຄົ້ນຄວ້າເລິກທີ່ສຸດກ່ຽວກັບບັນດາ ເງື່ອນໄຂເດີມຂອງມະນຸດຊາດ, ສະນັ້ນຜູ້ແຕ່ງຈຶ່ງກ້າວໄປເຖິງຂໍ້ສະຫລຸບວ່າ: ເມື່ອພິຈາລະນາກ່ຽວກັບບໍ່ເກີດແລ້ວກໍບໍ່ແມ່ນວ່າຄອບຄົວຂະຫຍາຍ ຕົວເປັນເຜົ່າຊົນ, ແຕ່ກົງກັນຂ້າມກະໂຕເຜົ່າຊົນເອງຊ້ຳພັດເປັນຮູບ ການເດີມ ແລະ ທຳມະຊາດຂອງສັງຄົມມະນຸດໂດຍອີງໃສ່ພື້ນຖານເຊື້ອພັນ, ເຫດສະນັ້ນພຽງແຕ່ເມື່ອບັນດາສາຍກ່ຽວພັນທີ່ເສື່ອມຕິດເຜົ່າຊົນ ເລີ່ມຫລົມແຫລວເທົ່ານັ້ນ, ໝາຍຄວາມວ່າຈົນມາເຖິງພາຍຫລັງເທົ່ານັ້ນ , ຫລາຍຮູບຖານທີ່ຕ່າງກັນຂອງຄອບຄົວ ຈຶ່ງຂະຫຍາຍຕົວ (ຟ.ອັງແກນ)

ການແລກປ່ຽນ ສິນຄ້າ ກ່ອນອື່ນໝົດມັນເກີດຂຶ້ນຈາກບັນດາຈຸດຕິດຕໍ່ລະຫວ່າງບັນດາຄອບຄົວ, ເຜົ່າຊົນ, ເປັນວົງຄະນາຍາດນຳກັນ; ເພາະວ່າໃນສະໄຫມຕົ້ນຂອງຄວາມສີວິໄລ, ມັນກໍແມ່ນບັນດາໝູ່ຄະນະຂອງ-ແຕ່ຫາກບໍ່ແມ່ນເອກະຊົນ - ຕິດຕໍ່ນຳກັນ ແລະ ແລກປ່ຽນນຳກັນ ຢ່າງເປັນເອກະລາດໂດຍສົມບູນ. ວົງຄະນາຍາດຕ່າງໆທີ່ຕ່າງກັນຄົ້ນພົບບັນດາພາຫະນະແຫ່ງການຜະລິດ ແລະ ພາຫະນະແຫ່ງການດຳເນີນຊີວິດທີ່ຕ່າງກັນໃນ ສະພາບແວດລ້ອມທຳມະຊາດທີ່ອ້ອມແອ້ມຕົນ. ດ້ວຍເຫດນັ້ນແບບວິທີການຜະລິດຂອງເຂົາ, ວິທີດຳລົງຊີວິດຂອງເຂົາ ແລະ ຜະລິດຕະພັນຂອງເຂົາຈຶ່ງບໍ່ເໝືອນກັນ. ເມື່ອວົງຄະນາຍາດຕ່າງໆທີ່ຕ່າງກັນໄດ້ກໍ່ຕັ້ງບັນດາສາຍພົວພັນນຳກັນນັ້ນແລວ, ການແລກປ່ຽນຜະລິດຕະພັນລະຫວ່າງເຂົາດ້ວຍກັນກໍຂະຫຍາຍຕົວຂຶ້ນໂດຍທັນທີ, ແລະ ຄ່ອຍໆຜັນຜະລິດຕະພັນດັ່ງກ່າວມາເປັນສິນຄ້າ. ການແລກປ່ຽນກໍບໍ່ສ້າງຄວາມແຕກຕ່າງກັນຂຶ້ນກ່ຽວກັບຂອບເຂດການຜະລິດ; ມັນພຽງແຕ່ເຮັດ ໃຫ້ຂອບເຂດຜະລິດເຫລົ່ານັ້ນມີຄວາມພົວພັນນຳກັນ ແລະ ຈາກນັ້ນ ຈຶ່ງຜັນບັນດາ ຂອບເຂດການຜະລິດເຫລົ່ານັ້ນກາຍເປັນສິ່ງຂຶ້ນຕໍ່ຢ່າງບໍ່ຫລາຍກໍໜ້ອຍກັບພື້ນຖານການຜະລິດສັງຄົມທັງໝົດ. ຢູ່ນີ້, ການແບ່ງງານສັງຄົມກໍເນີດຈາກການແລກປ່ຽນລະຫວ່າງບັນດາຂອບເຂດການ ຜະລິດທີ່ຕ່າງກັນ ແລະ ບໍ່ຂຶ້ນຕໍ່ກັນ. ຢູ່ບ່ອນໃດຊຶ່ງຈຸດເລີ່ມຕົ້ນຫາກແມ່ນ ການແບ່ງງານທີ່ມີ ລັກສະນະສະລິລະສາດ, ຢູ່ບ່ອນນັ້ນ, ກົງກັນຂ້າມກະໂຕບັນດາອະໄວຍະວະຫາຍໃຈພິເສດຂອງທັງຂະບວນພັດແຍກອອກ ຈາກກັນ, ພັດຜັນແຍກອອກ, ຊຶ່ງຕົ້ນຕໍແມ່ນຍ້ອນພົນສະທ້ອນຂອງການ ແລກ

ປ່ຽນສິນຄ້າທີ່ມີຕໍ່ວົງຄະນາຍາດອື່ນໆ ແລະ ອະໄວຍະວະທາຍໃຈເຫລົ່ານັ້ນແຍກຕົວຢູ່ຕ່າງຫາກອອກຈົນເຖິງຂັ້ນຊຶ່ງສາຍພົວພັນລະຫວ່າງ ແຮງງານຊະນິດຕ່າງໆ ທີ່ຕ່າງກັນນັ້ນພຽງແຕ່ຍັງໄດ້ຮັກສາໄວ້ດ້ວຍການແລກປ່ຽນຜະລິດຕະພັນຕ່າງໆ ຂອງວົງຄະນາຍາດຕ່າງໆດັ່ງກ່າວເທົ່ານັ້ນ.

ບໍ່ວ່າການແບ່ງງານທີ່ໄດ້ຂະຫຍາຍຕົວໃດໆ ຊຶ່ງອີງໃສ່ການ ແລກປ່ຽນສິນຄ້າເປັນສື່ກາງຈຶ່ງຮັກສາໄວ້ໄດ້ນັ້ນ, ກໍລ້ວນແຕ່ເອົາການ ຈຳແນກລະຫວ່າງຕົວເມືອງ ແລະ ຊົນນະບົດເປັນຫລັກຖານ [໑]. ຄົນທັງຫລາຍສາມາດເວົ້າວ່າ ປະຫວັດສາດເສດຖະກິດທັງໝົດຂອງ ສັງຄົມຕ້ອນມັນເຂົ້າກໍແມ່ນ ປະຫວັດສາດເຄື່ອນເໜັງຂອງການກົງກັນຂ້າມດັ່ງກ່າວ, ແຕ່ວ່າຢູ່ທີ່ນີ້ພວກເຮົາຍັງບໍ່ທັນເວົ້າເຖິງການກົງກັນຂ້າມດັ່ງກ່າວ.

ມັນກໍເຊັ່ນດຽວກັບກ່ອນທີ່ມີການແບ່ງງານໃນໂຮງງານຫັດຖະກຳ, ກໍຈຳຕ້ອງມີພື້ນຖານວັດຖຸຄືກຳມະກອນຈຳນວນໃດໜຶ່ງນັ້ນຖືກໃຊ້ພ້ອມເວ

---

໑) ກະໂຕທ່ານ ຢ.ສະຕິວອັດ ນັ້ນເອງເປັນຜູ້ທີ່ໄດ້ຄົ້ນຄວ້າ ບັນຫາດັ່ງກ່າວຢ່າງລະອຽດທີ່ສຸດ. ນິພົນຂອງເພິ່ນໄດ້ຂຽນກ່ອນນິພົນ ຂອງອາດາມສມິດ ໑໐ ປີ, ແຕ່ບັດນີ້, ກໍຍັງມີໜ້ອຍຄົນຮູ້. ຫລັກຖານພະຍານຄືພວກຜູ້ນິຍົມນັບຖື ມານຕວິດ ກໍບໍ່ຮູ້ກະທັ້ງວ່າການພິມຈຳໜ່າຍຄັ້ງ ທີໜຶ່ງສຳລັບນິພົນຂອງມານຕວິດ ທີ່ຂຽນກ່ຽວກັບພົນລະເມືອງ, - ເວັ້ນເສຍແຕ່ສ່ວນຄຸຍໂມ້ໂດຍລ້ວນໆແລ້ວ.-ກໍພຽງແຕ່ເປັນການກ່າຍ ເອົາຂອງ ຢ.ສຕິວອັດ ເທົ່ານັ້ນ, ຍັງຕ້ອງການເວົ້າຕື່ມວ່າ ແມ່ນການກ່າຍເອົາຂອງວາລາເຊີ ແລະ ຕາວແຊນ ອີກ.

ລາດຽວ, ການແບ່ງງານໃນສັງຄົມກໍເຊັ່ນດຽວກັນນັ້ນ, ປະຖົມປັດໄຈຂອງມັນແມ່ນພົນລະເມືອງຕ້ອງໃຫ້ຂຶ້ນເຖິງລະດັບໃດໜຶ່ງ, ແລະຕ້ອງມີຄວາມໜາແໜ້ນໃດໜຶ່ງ, ຄວາມໜາແໜ້ນອັນນີ້ກໍເທົ່າທຽມກັບ ໑*) ຄວາມໜາແໜ້ນທີ່ກຳມະກອນເຕົ້າໂຮມໃນໂຮງງານ ໒). ຢ່າງໃດກໍດີຄວາມໜາແໜ້ນອັນນີ້ແມ່ນສິ່ງທີ່ມີລັກສະນະພໍທຽບຄຽງ. ປະເທດໜຶ່ງຊຶ່ງພົນລະເມືອງຫ່າງພໍສົມຄວນ, ແຕ່ຖາວ່າທາງຄົມມະນາຄົມຫາກຂະຫຍາຍຕົວ, ມັນຍັງຄົງມີຄວາມໜາແໜ້ນດ້ານພົນລະເມືອງຫລາຍກ່ວາປະເທດໜຶ່ງຊຶ່ງທາງຄົມມະນາຄົມບໍ່ສະດວກ. ຕາມຄວາມໝາຍ ດັ່ງກ່າວ, ບັນດາແຄວນຢູ່ພາກເໜືອຂອງສະຫະລັດອາເມລິກາ ມີຄວາມໜາແໜ້ນດ້ານພົນລະເມືອງລື່ນກ່ວາອິນເດຍຕັ້ງຫລາຍ ໓).

---

໑*) Remplace (ຜູ້ແປ).

໒) " ຄົມມະນາຄົມສັງຄົມ, ການປະສານສົມທົບຂອງບັນດາກຳລັງ - ໂດຍອາໄສກຳລັງເຫລົ່ານີ້, ຜະລິດຕະພັນຂອງແຮງງານຈຶ່ງໄດ້ທະວີຂຶ້ນຕື່ມ- ຕ່າງກໍຮຽກຮ້ອງຕ້ອງມີຄວາມໜາແໜ້ນພົນລະເມືອງໃດໜຶ່ງ " (ເຢມເຊີມິນ, ປຶ້ມທີ່ໄດ້ອ້າງ "). ຈຳນວນຜູ້ອອກແຮງງານເພີ່ມຂຶ້ນ...ດັ່ງນັ້ນກຳລັງແຫ່ງການຜະລິດຂອງສັງຄົມກໍເພີ່ມຂຶ້ນຕາມອັດຕາສ່ວນຄືຂອງການເພີ່ມຂຶ້ນດັ່ງກ່າວທີ່ຄູນຂຶ້ນກັບພົນສັກສິດຕ່າງໆ ຂອງການແບ່ງງານ ". (ນິດສະກິນ, ປຶ້ມທີ່ໄດ້ອ້າງ ** ).

໓) ໂດຍຍ້ອນຄວາມຮຽກຮ້ອງຕ້ອງການທີ່ຍິ່ງໃຫຍ່ກ່ຽວກັບ ຝ້າຍເມື່ອປີ ໑໘໖໑, ສະນັ້ນການຜະລິດຝ້າຍໃນເມືອງຈຳນວນໜຶ່ງທີ່===)

ການແບ່ງງານໃນໂຮງງານຫັດຖະກຳຈະປົ່ງຮາກຢູ່ບ່ອນໃດກໍ່ ຕໍ່ເມື່ອການແບ່ງງານສັງຄົມໄດ້ບັນລຸເຖິງລະດັບຂະຫຍາຍຕົວໃດໜຶ່ງນັ້ນ, ການແບ່ງງານນີ້, ເນື່ອງຈາກຄຸນປະໂຫຍດກົງກັນຂ້າມ, ສະນັ້ນ ການແບ່ງງານໃນໂຮງງານຫັດຖະກຳຈຶ່ງເຮັດໃຫ້ມັນຂະຫຍາຍຕົວ ແລະ ທະວີຂຶ້ນຕື່ມ. ເຄື່ອງມືແຫ່ງການອອກແຮງງານຍິ່ງພັນແຍກ, ການ ປະດິດແຕ່ງເຄື່ອງມືເຫລົ່ານັ້ນຈະຈາກການແບ່ງອອກເປັນຫລາຍວິຊາຊີບຫັດຖະກຳທີ່ຕ່າງກັນ ¹ ).

ເມື່ອການວິສາຫະກິດໂຮງງານຫັດຖະກຳເອົາວິຊາຊີບ ຫັດຖະກຳໜຶ່ງ - ແລະ ວິຊາຊີບຫັດຖະກຳດັ່ງກ່າວນີ້ຕັ້ງແຕ່ກ່ອນມາຮອດປະຈຸບັນ

---

===) ພົນລະເມືອງເຄີຍໜາແໜ້ນຢູ່ອິນເດຍຈຶ່ງໄດ້ຂະຫຍາຍຕົວລາມອອກມາ ອົງເຂດການຜະລິດເຂົ້າ. ຈາກນັ້ນຈຶ່ງໄດ້ກໍ່ໄພອຶດຢາກຂຶ້ນໃນສ່ວນໃຫຍ່ຂອງປະເທດ, ເພາະວ່າບັນດາພາຫະນະແຫ່ງການຄົມມະນາຄົມທີ່ບໍ່ດີຈຶ່ງເຮັດໃຫ້ການຊົດເຊີຍເຂົ້າບ່ອນຂາດແຄນຂອງເມືອງໜຶ່ງ ນີ້ດ້ວຍວິທີເຂົ້າຢ່າງໄວຈາກເມືອງອື່ນໆມາກໍ່ສາມາດຊົດເຊີຍບໍ່ໄດ້.

---

*. Elément of political economy, ລອນດອນ, ໑໘໔໑, ໜ້າ ໕໐ (ບ.ກ).

**. popular political economy ,ໜ້າ ໑໔໐ . (ບ.ກ).

໑) ມັນກໍ່ຍ້ອນແນວນັ້ນເອງ ຢູ່ຮອບລັງ, ຕັ້ງແຕ່ສັດຕະວັດ===)

ນີ້ຍັງຄົງປະສົມສຳພັນກັບວິຊາຊີບຫັດຖະກຳອື່ນໆ, ເພາະວ່າວິຊາຊີບຫັດຖະກຳຕ່າງໆ ທັງໝົດນັ້ນລ້ວນແຕ່ເປັນວິຊາຊີບຂອງຊ່າງຫັດຖະກຳ ຜູ້ດຽວກັບເຮັດໝົດ - ພາຍໃຕ້ຮູບການທີ່ເປັນວິຊາຊີບຕົ້ນຕໍຫລືວິຊາ ຊີບສຳຮອງ, ບັນດາວິຊາຊີບຫັດຖະກຳເຫລົ່ານັ້ນແຍກຕົວອອກຕ່າງ ຫາກແລະ ກາຍເປັນເອກະລາດຕໍ່ກັນໂດຍທັນທີ; ວິສາຫະກິດໂຮງງານ ຫັດຖະກຳຊຶ່ງໃນເມື່ອມັນແຊກຊຶມເຂົ້າໄລຍະພິເສດໜຶ່ງຂອງການຜະລິດສິນຄ້າຊະນິດໜຶ່ງອອກ, ດັ່ງນັ້ນໄລຍະການຜະລິດອື່ນໆ ມີຈຳນວນເທົ່າໃດມັນຈະກາຍເປັນຂະແໜງວິສາຫະກິດທີ່ຕ່າງກັນຈຳນວນເທົ່ານັ້ນໂດຍທັນທີ. ພວກເຮົາກໍໄດ້ເຫັນວ່າຢູ່ບ່ອນໃດຊຶ່ງຜະລິດຕະພັນສຳເລັດຮູບ ພຽງແຕ່ມາຈາກການປະສານສົມທົບອັນງ່າຍດາຍຂອງບັນດາ ຜະລິດຕະພັນພາກສ່ວນ ແລະ ສັບສົນປົນເປຈຶ່ງເກີດມີນັ້ນ, ບັນດາວຽກງານ ພາກສ່ວນທີ່ຕ່າງກັນຈະສ້າງຜະລິດຕະພັນເຫລົ່ານັ້ນຂຶ້ນ, ສາມາດພັນແຍກອອກແລະ ພັນເປັນວິຊາຊີບຫັດຖະກຳເອກະລາດ. ເພື່ອດັດແປງການ ແບ່ງງານໃນໂຮງງານຫັດຖະກຳ, ຄົນເຮົາຈຳຕ້ອງອີງໃສ່ວັດຖຸດິບ ຊະນິດຕ່າງໆຂອງຂະແໜງການຜະລິດໜຶ່ງ, ຫລືບັນດາຮູບຖານທີ່ຕ່າງກັນ ທີ່ສາມາດມີຢູ່ຂອງວັດຖຸດິບເຫລົ່ານັ້ນໂດຍທັນທີ, ທັງນີ້ກໍເພື່ອແບ່ງ ຂະແໜງນັ້ນຍ່ອຍລົງເປັນໂຮງງານຫັດຖະກຳຕ່າງໆ ທີ່ຕ່າງກັນຊຶ່ງ ສ່ວນຫລາຍແມ່ນບັນດາໂຮງງານຫັດຖະກຳທີ່ຕ່າງກັນ, ຊຶ່ງສ່ວນຫລາຍ ແມ່ນ

---

===) x(/// ເອງ, ການປະດິດແຕ່ງກະສວຍຕຳແຜ່ນ ຈຶ່ງໄດ້ກາຍເປັນການວິສາຫະກິດພິເສດ.

ປະເພດໂຮງງານໃຫມ່ລ້ວນໆ. ຍ້ອນແນວນັ້ນເອງໃນເຄິ່ງຕົ້ນສະຕະວັດ XVIII ເອງ. ຢູ່ຝະລັ່ງເຂົາໄດ້ຕຳແຜ່ນໄໝຮ້ອຍຊະນິດ ແລະ ຢູ່ອາວິຍົງ, ເປັນຕົ້ນ, ກົດໝາຍໜຶ່ງກຳໜົດໄວ້ວ່າ " ແຕ່ລະຄົນ ຮຽນວຽກພຽງແຕ່ໄດ້ເຈາະຈົງໂດຍສະເພາະຂະແໜງການຜະລິດແຕ່ ຢ່າງດຽວເທົ່ານັ້ນ ແລະ ພຽງແຕ່ໄດ້ຮຽນຕຳແຜ່ນແພແຕ່ຊະນິດດຽວ ເທົ່ານັ້ນ ". ການແບ່ງງານຕາມທ້ອງຖິ່ນໃນການມອບຂະແໜງການຜະລິດຕ່າງໆ ຈຳນວນໜຶ່ງໃນປະເທດ. ຊ້ຳພັດຖືກຊຸກຍູ້ຕື່ມອີກການວິສາ ຫະກິດແຫ່ງໂຮງງານຫັດຖະກຳທີ່ພວມສວຍໃຊ້ລັກສະນະພິເສດຕ່າງໆເຫລົ່ານັ້ນຢູ່ທົ່ວທຸກບ່ອນ [1] ). ສຸດທ້າຍ, ການເປີດກວ້າງຕະຫລາດ ໂລກພ້ອມກັບລະບົບທົວເມືອງຂຶ້ນ ( ໝາຍເຖິງສອງໃນເງື່ອນໄຂຕ່າງໆ ທີ່ຄົງຕົວໂດຍທົ່ວໄປຂອງສະໄໝໂຮງງານຫັດຖະກຳ ) ສະໜອງເອກະສານຕ່າງໆທີ່ອຸດົມຮັ່ງມີໃຫ້ສະໄໝດັ່ງກ່າວນີ້ ສຳລັບການແບ່ງງານ ໃນ

---

໑) ແມ່ນບັນດາໂຮງງານຫັດຖະກຳທີ່ຜະລິດແພຂົນສັດຢູ່ອັງກິດນັ້ນກໍ່ບໍ່ແບ່ງເປັນຫລາຍ ຂະແໜງທີ່ພິເສດຊັ້ນລະຕິ, ຊຶ່ງແຕ່ລະ ຂະແໜງພັດມີສະຖານທີ່ພິເສດ, ຢູ່ທັ້ນເຂົາພຽງແຕ່ ທຳການຜະລິດ ຫລື ການທຳການຜະລິດເປັນຕົ້ນຕໍ : ແພຂົນສັດເຫລື້ອມຢູ່ຊໍເມີແສັດຊາຍເຣີ , ແພຂົນສັດ ທຳມະດາ ຢູ່ອີອອກຊາຍເຣີ , ເກີເຣັບຢູ່ນອກວິດ , ເບີໂຣກແຕນຢູ່ແຊນດານ , ຜ້າຫົ່ມຢູ່ວາຍເຕີໄນ ແລະ ອື່ນໆ ... "
( ປອກເຊີແປັກເກີໄລ : the querist, ໑໗໕໐, ໕໘໐ ).

ສັງຄົມ. ຢູ່ນີ້ພວກຂ້າພະເຈົ້າຍັງບໍ່ທັນຕ້ອງການໃຫ້ການພິສູດວ່າ ການແບ່ງງານດັ່ງກ່າວໄດ້ແຊກຊຶມແນວໃດເຂົ້າ ບໍ່ພຽງແຕ່ໃນຂອບເຂດເສດຖະກິດແຕ່ຍັງແຊກຊຶມເຂົ້າໃນທຸກຂອບເຂດສັງຄົມອື່ນໆ, ອັນໄດ້ເຮັດໃຫ້ປະກົດມີການຂະຫຍາຍຕົວດັ່ງກ່າວ ແລະ ທັນເປັນອາຊີບສະເພາະ ໃນທຸກແຫ່ງທຸກຫົນ, ການແບ່ງມະນຸດເປັນອັນນະຍົກມະຍ່ອຍດັ່ງກ່າວ ໄດ້ເຮັດໃຫ້ຜູ້ເປັນນາຍຂອງອາດາມສມິດຄື ອາ. ແພເຣີກູຍເຊີນຕ້ອງຮ້ອງຂຶ້ນວ່າ :

ພວກເຮົາລ້ວນແຕ່ເປັນຊາດຕ່າງໆ ທີ່ປະກອບດ້ວຍຂ້າທາດ ທັງໝົດ, ແລະ ພວກເຮົາມີພົນລະເມືອງທີ່ມີເສລີພາບແຕ່ຢ່າງໃດເລີຍ[1])

ບໍ່ຫ່ອນ ເຖິງວ່າການແບ່ງງານໃນສັງຄົມ ແລະ ການແບ່ງ ງານໃນໂຮງງານມີຫລາຍບ່ອນທີ່ເໝືອນກັນ ແລະ ມີສາຍພົວພັນນຳກັນຫຼາຍຢ່າງ, ແຕ່ວ່າລະຫວ່າງການແບ່ງງານທັງສອງນັ້ນຍັງຄົງມີການຕ່າງກັນໂດຍທາດແທ້, ແຕ່ຫາກບໍ່ແມ່ນໂດຍລະດັບ. ເປັນທຳມະດາວ່າ ການທີ່ເໝືອນກັນນັ້ນເພີຍອອກທີ່ເດັ່ນຊັດກວ່າໝູ່ແມ່ນຢູ່ບ່ອນໃດຊຶ່ງສາຍເຊືອກທີ່ບໍ່ມີຮູບໄດ້ມັດຈ່ອງບັນດາຂະແໜງວິສາຫະກິດ ທີ່ຕ່າງກັນເຂົ້າໃສ່ກັນ. ຊາວລ້ຽງສັດ, ເປັນຕົ້ນ, ຜະລິດໜັງດິບອອກ, ຊາວປຸງແຕ່ງໜັງຜັນໜັງດິບເປັນໜັງທີ່ໄດ້ປຸງແຕ່ງ, ຊ່າງເກີບເອົາໜັງທີ່ໄດ້ປຸງແຕ່ງ ມາເຮັດເກີບບົດ. ແຕ່ລະຄົນດັ່ງກ່າວນີ້ຕ່າງກໍເຮັດຜະລິດຕະພັນທີ່ມີ ລັກສະ

---

໑) ອາ. ເຟີກູຍຊັນ : History of civil society /(/ , ໜ້າ ໔,

ນະໄລຍະອອກ, ແລະ ຮູບຖານສຸດທ້າຍ ແລະ ສຳເລັດຮູບແມ່ນຜະລິດຕະພັນແບບລວມໝູ່ຂອງການອອກແຮງງານທີ່ຕ່າງຫາກຂອງເຂົາ.ພວກເຮົາຈຶ່ງເພີ່ມຂະແໜງຕ່າງທີ່ສະໜອງເຄື່ອງມືຕ່າງໆເຂົ້ານັ້ນ, ຯລຯ. ໃຫ້ຊາວລ້ຽງສັດ, ຊາວປູງແຕ່ງໜັງ ແລະ ຊ່າງເກີບ ພ້ອມກັບ ອາດາມສມິດ, ເຮົາສາມາດເຫັນວ່າການແບ່ງງານສັງຄົມດັ່ງກ່າວພຽງແຕ່ຕ່າງກັບການແບ່ງງານໃນໂຮງງານຫັດຖະກຳ ຢ່າງອັດຕະວິໄສ ເທົ່ານັ້ນ, ເພາະວ່າໃນໂຮງງານຫັດຖະກຳ[໑] ຄົນເຮົາເຫລືອດຕາເບິ່ງຜ່ານ

---

໑) ໃນບັນດາໂຮງງານຫັດຖະກຳໜລວງ, "ຍອດປະລິມານ ກຳມະກອນທີ່ເຮັດຢູ່ໃນນັ້ນ ແມ່ນອນວ່າບໍ່ຫລາຍປານໃດ, ແລະ ບັນດາຄົນທີ່ໃຊ້ໃນແຕ່ລະພາກສ່ວນວຽກງານທີ່ຕ່າງກັນຕາມທຳມະດາກໍສາ ມາດເຕົ້າໂຮມໄດ້ໃນໂຮງງານດຽວກັນ, ແລະ ໃນສາຍຕາຄົນເຮົາກໍ ສາມາດເຫັນເຂົາທັງໝົດໃນພາບດຽວໄດ້, ກົງກັນຂ້າມ ໃນບັນດາ ໂຮງງານຫັດຖະກຳໃຫ່ຍພູ້ນ (I) ໂດຍແມ່ໃສ່ສະໜອງວັດຖຸໃຊ້ສອຍ ໃຫ້ນວນຊົນ, ດັ່ງນັ້ນແຕ່ລະວິຊາຂອງວຽກງານຊ້ຳພັດໃຊ້ກຳມະກອນ ຈຳນວນສ່ວນໜາແໜ້ນເຖິງຂັ້ນບໍ່ອາດເຕົ້າໂຮມເຂົາເຈົ້າເຂົ້າໂຮງ ງານດຽວກັນໄດ້ ... ການແບ່ງງານດັ່ງກ່າວກໍບໍ່ຈະແຈ້ງປານໃດແລະ ຕັ້ງແມ່ນຍອນເຫດຜົນດັ່ງກ່າວນັ້ນເອງ ສະນັ້ນເບິ່ງຜ່ານໄປຈຶ່ງບໍ່ເຫັນໄດ້ໃນທັນທີ. " ( ອາ.ສມິດ :wealth of nations ເຫລັ້ມ ໑, ໜ້າ ໑) ກໍ

໑໘໑໔ ໔ ໕

ແມ່ນໃນພາກດຽວກັນນັ້ນ, ຕອນວັນນະຄະດີຫລຊເລີ່ມຕົ້ນດວຍ ບັນດາ

໑໕ ໗ ໔໐໐

ແຖວໜັງສືນີ້; " ຈຶ່ງເບິ່ງໃນປະເທດໜຶ່ງທີ່ສິວິໄລ ແລະ ຮັ່ງ ===)

ຜ່ານ ຮອບດຽວກໍເຫັນແຮງງານຂອງພາກສ່ວນຕ່າງໆທີ່ຕ່າງກັນນັ້ນເປັນພາບດຽວ, ແຕ່ໃນສັງຄົມ, ເນື່ອງຈາກແຮງງານເຫລົ່ານັ້ນຖືກ ກະຈັດກະຈາຍຢູ່ໃນເຫສະໜຶ່ງທີ່ກວ້າງໃຫ່ຍ ແລະ ຈຳນວນກຳມະກອນທີ່ຮ່ວມກັນເຂົ້າແຕ່ລະຂະແໜງການທຳງານຕ່າງຫາກນັ້ນກໍໃຫ່ຍ, ສະນັ້ນ ຄົນເຮົາຈຶ່ງບໍ່ສາມາດກຳເອົາສາຍພົວພັນລວມລະຫວ່າງຂະແໜງເຫລົ່ານັ້ນມາກັນໄດ້ . ແຕ່ອັນໃດປະກອບເປັນສາຍພົວພັນລະຫວ່າງແຮງງານເອກະລາດຂອງຊາວລ້ຽງສັດ, ຂອງຊາວປຸງແຕ່ງໜັງແລະຂອງ ຊ່າງ

---

===) ເຮືອງຈະເລີນ, ເຄື່ອງຂອງຂອງກຳມະກອນທຳມະດາຜູ້ ໜຶ່ງຫລືຂອງຜູ້ອອກແຮງງານສຳຮອງຜູ້ໜຶ່ງຄືແນວໃດ ",ໆລໆ.ແລະ ຫລັງຈາກນັ້ນຍັງພັນລະນາໃຫ້ເຮົາເຫັນວຽກງານຕ່າງໆ ທັງໝົດຊຶ່ງຖ້າບໍ່ມີ, "ປະຊາຊົນທຳມະດາໝູ່ຜູ້ໜຶ່ງ, ໃນປະເທດໜຶ່ງທີ່ສີວິໄລ, ບໍ່ສາມາດມີສິ່ງເສື່ອ ແລະ ເຄື່ອງຂອງໂຕະຕັ່ງສຳລັບໃຊ້ ", - ຕອນວັນນະຄະດີດັ່ງກ່າວເບິ່ງຄືວ່າໄດ້ກ່າຍອອກຈາກບັນດາຄຳໝາຍເຫດຕາມເດີມຊຶ່ງ ປ.ເດີນານເດີວີເລີ ໄດ້ເພີ່ມເຂົ້າປື້ມ ຂອງທ່ານ ໂດຍພາດຫົວ ເລື່ອງວ່າ :the fable of the bees,or private vices public benifits ພິມຈຳໜ່າຍຄັ້ງທີໜຶ່ງ, ປີ ໑໗໐໖, ບໍ່ມີໝາຍເຫດ, ພິມຈຳໜ່າຍປີ ໑໗໑໔, ມີໝາຍເຫດ . (ບ.ກ.).

໑) ບໍ່ມີອັນໃດທີ່ສາມາດເອີ້ນວ່າຄ່າແຮງງານທຳມະຊາດໃຫ້ແຮງງານເອກະຊົນໄດ້ເລີຍ. ແຮງງານແຕ່ລະຄົນພຽງແຕ່ຜະລິດອອກ ສ່ວນໜຶ່ງຂອງທັງຂະບວນເທົ່ານັ້ນ, ແລະ ຍ້ອນແຕ່ລະສ່ວນນັ້ນ, ==== )

ເກີບ ? ນັ້ນແມ່ນຍ້ອນຜະລິດຕະພັນຕ່າງໆຂອງແຕ່ລະຄົນລ້ວນແຕ່ ເປັນສິນຄ້າທັງນັ້ນ. ແລະ ກົງກັນຂ້າມ, ຈຸດພິເສດຂອງການແບ່ງງານ ໃນໂຮງງານຫັດຖະກຳແມ່ນຢູ່ບ່ອນໃດ ? ຕັ້ງແມ່ນຢູ່ບ່ອນບັນດາຜູ້ອອກແຮງງານພາກສ່ວນບໍ່ຜະລິດສິນຄ້າອອກ, ມີແຕ່ຜະລິດຕະພັນລວມໝູ່ ຂອງເຂົາເທົ່ານັ້ນຈຶ່ງກາຍເປັນສິນຄ້າສື່ກາງລະຫວ່າງບັນດາແຮງງານເອກະລາດໃນສັງຄົມ, ຕັ້ງແຕ່ການຊື້ ແລະ ຂາຍຜະລິດຕະພັນຊຶ່ງແມ່ນ ແຮງງານນັ້ນເປັນຜູ້ຜະລິດອອກ, ເງື່ອນໄຂສາຍພົວພັນທັງໝົດລະຫວ່າງບັນດາແຮງງານພາກສ່ວນຂອງໂຮງງານຫັດຖະກຳ ແລະ ການຂາຍບັນດາກຳລັງແຮງງານທີ່ຕ່າງກັນໃຫ້ນາຍທຶນອັນດຽວກັນໃນການໃຊ້ກຳລັງແຮງງານເຫລົ່ານັ້ນເປັນກຳລັງແຮງງານລວມໝູ່. ປະຖົມປັດໄຈ ຂອງການແບ່ງງານໃນໂຮງງານຫັດຖະກຳແມ່ນການລວມສູນພາຫະນະແຫ່ງ ການຜະລິດຕ່າງໆ ເຂົ້າໃນມືຂອງນາຍທຶນຜູ້ໜຶ່ງ ; ປະຖົມປັດໄຈຂອງ ການແບ່ງງານສັງຄົມຊ້ຳພັດແມ່ນການແຈກຢາຍພາຫະນະແຫ່ງການ ຜະລິດ

---

===) ກະໂຕມັນເອງກໍ່ບໍ່ມີຄຸນຄ່າ, ບໍ່ມີຄຸນປະໂຫຍດແຕ່ຢ່າງໃດເລີຍ, ສະນັ້ນອັນທີ່ຜູ້ອອກແຮງງານສາມາດຖືວ່າເປັນຂອງຕົນໄດ້ແມ່ນບໍ່ມີ ຫຍັງເລີຍ;ບໍ່ມີຫຍັງທີ່ເຮັດໃຫ້ກຳມະກອນນັ້ນສາມາດເວົ້າ:ອັນນີ້ແມ່ນວັດຖຸພັນທີ່ຂ້ອຍຜະລິດອອກ,ຂ້ອຍຢາກຮັກສາເປັນຂອງສ່ວນຕົວຂ້ອຍ" Labour defended against the claims, of capital ລອນດອນ, ໑໘໒໕, ໜ້າ ໒໕ ). ຜູ້ແຕ່ງນິພົນທີ່ດີເດັ່ນດັ່ງກ່າວແມ່ນທົສກິນ, ຊຶ່ງພວກຂ້າພະເຈົ້າໄດ້ຄັດເອົາມາອ້າງ.

ຕ່າງໆ ເຂົ້າມີຜູ້ຜະລິດສິນຄ້າຫລາຍຄົນທີ່ເປັນເອກະລາດນຳກັນ. ໃນໂຮງງານຫັດຖະກຳນັ້ນ, ກົດໝາຍເຫລັກກ່ຽວກັບລັກສະນະອັດຕາສ່ວນໄດ້ຮັດໃຫ້ບັນດາຈຳນວນກຳມະກອນທີ່ແນ່ນອນຕ້ອງແບກຫາບບັນດາພາລະບົດບາດທີ່ແນ່ນອນ, ແຕ່ກົງກັນຂ້າມ ລັກສະນະໂດຍບັງເອີນ ແລະ

---

໑) ນັ້ນເປັນສິ່ງທີ່ຊາວອາເມລິກາໄດ້ພິສູດໃນພາກປະຕິບັດຕົວຈິງ ໃນຈຳນວນພາສີຕັ້ງຫລາຍຊະນິດໃໝ່ທີ່ສຸດໄດ້ຖືກກໍ່ຕັ້ງຂຶ້ນຢູ່ວໍຊິງຕັນໃນສະໄໝເສິກກາງເມືອງ, ມີພາສີຊະນິດໜຶ່ງ ໖% ທີ່ຕີໃສ່ຜະລິດຕະພັນອຸດສາຫະກຳ. ດັ່ງນັ້ນຜະລິດຕະພັນອຸດສາຫະກຳໜຶ່ງແມ່ນແນວໃດ ? ຕອບ ບັນຫາທີ່ໂດຍແມ່ນສະພາບແວດລ້ອມຕັ້ງຂຶ້ນນັ້ນ, ບັນດານັກ ສາງລັດຖະທຳມະນູນສະຫລາດສ່ອງໃສຕອບວ່າ :" ວັດຖຸໜຶ່ງກາຍເປັນຜະລິດຕະພັນເມື່ອມັນຖືກປຸງແຕ່ງໃຫ້ສຳເລັດຮູບແລ້ວ ( when it is made" ແລະ ຜະລິດຕະພັນທີ່ໄດ້ເອີ້ນວ່າສຳເລັດຮູບເມື່ອສາມາດເອົາໄປຂາຍໄດ້. ໃນຕົວຢ່າງຫລາຍພັນຂໍ້, ບັດນີ້ພວກເຮົາພຽງ ເອົາມາເລົ່າແຕ່ຂໍ້ໜຶ່ງເທົ່ານັ້ນ. ໃນບັນດາໂຮງງານຫັດຖະກຳທີ່ເຮັດຄັນຮົ່ມ ແລະເສຕະສັດ, ຢູ່ນິວຍອກ ແລະ ຟິລາແດນຟີ, ກ່ອນອື່ນໝົດສິ່ງຂອງເຫລົ່ານັ້ນຖືກເຮັດຢ່າງຄົບຊຸດເຖິງວ່າແທ້ຈິງເຄື່ອງຂອງເຫລົ່ານັ້ນ ແມ່ນບັນດາ mixta composita ປະກອບດ້ວຍຫລາຍພາກສ່ວນທີ່ສັບສົນປະກອບເປັນ. ຕໍ່ມານັ້ນສິ່ງທີ່ປະກອບເປັນເຄື່ອງເຫລົ່ານັ້ນມີເທົ່າໃດພາກສ່ວນກໍກາຍເປັນເປົ້າໝາຍການຜະລິດພິເສດເທົ່ານັ້ນຢ່າງ, ຈຶ່ງຢູ່ກະຈັດກະຈາຍໃນຫລາຍບ່ອນ, ໝາຍຄວາມວ່າ ການແບ່ງງານ, ===)

ລັກສະນະຕາມລຳພັງໃຈຊ້ຳພັດເສີມຂະຫຍາຍຄຸນປະໂຫຍດ ທີ່ສັບປົນຄົນເລໃນການແຈກຢາຍບັນດາຜູ້ຜະລິດ ແລະ ພາຫະນະແຫ່ງການ ຜະລິດຂອງເຂົາເຈົ້າໃນບັນດາຂະແໜງການແຮງງານສັງຄົມທີ່ຕ່າງກັນ.

ບັນດາຂອບເຂດການຜະລິດຕ່າງກັນ, ແມ່ນມີທ່າອຽງຢາກຮັກສາທ່າດຸ່ນດ່ຽງເທົ່າກັນຢູ່ສະເໝີ. ດ້ານໜຶ່ງ, ຜູ້ຜະລິດສິນຄ້າແຕ່ລະ ຄົນຕ້ອງຜະລິດຄຸນຄ່າໃຊ້ສອຍໜຶ່ງອອກ, ໝາຍຄວາມວ່າ ຕ້ອງຕອບ ສະໜອງຄວາມຕ້ອງການຂອງສັງຄົມທີ່ແນ່ນອນໃດໜຶ່ງ; ແຕ່ຂອບ ເຂດຄວາມຕ້ອງການເຫລົ່ານັ້ນຊ້ຳພັດຕ່າງກັນທາງປະລິມານ ແລະ ສາຍພົວພັນທາງພາຍໃນຢ່າງໜຶ່ງທີ່ຜູກພັນຄວາມຕ້ອງການທັງໝົດເຫລົ່າ ນັ້ນ

---

===) ຈາກບ່ອນທີ່ເປັນການແບ່ງງານໃນໂຮງງານ ກາຍເປັນ ການແບ່ງງານໃນສັງຄົມ.ດັ່ງນັ້ນບັດນີ້,ຜະລິດຕະພັນຂອງແຮງງານພາກສ່ວນທີ່ຕ່າງກັນມີເທົ່າໃດ,ແມ່ນເປັນສິນຄ້າເທົ່ານັ້ນ,ສິນຄ້າດັ່ງກ່າວນີ້ ໄດ້ສົ່ງມາໂຮງງານຫັດຖະກຳຜະລິດຄັນຮົ່ມຊຶ່ງພຽງປະກອບມັນເຂົ້າເປັນຜະລິດຕະພັນທີ່ຄົບຊຸດເທົ່ານັ້ນ.ຊາວອາເມລິກາເອີ້ນຜະລິດຕະພັນເຫລົ່ານັ້ນວ່າ ປະມວນຜະລິດຕະພັນສຳເລັດຮູບ( assembled articles ), ຍິ່ງໄປກວ່ານັ້ນສຳລັບຜະລິດຕະພັນເຫລົ່ານັ້ນ,ຊື່ອັນນັ້ນຈຶ່ງແມ່ນ ເໝາະສົມແທ້ເພາະວ່າພາສີກໍໄດ້ໂຮມເຂົ້າຢູ່ໃນນັ້ນ.ດັ່ງນັ້ນແມ່ນວ່າຄັນຮົ່ມ ແຕ່ລະຄັນຕ້ອງເສຍພາສີກ້ອນໜຶ່ງແມ່ນ໖%ໃນລາຄາຂອງແຕ່ລະພາກສ່ວນທີ່ໄດ້ນຳເອົາເຂົ້າໂຮງງານຫັດຖະກຳຜະລິດຄັນຮົ່ມຊຶ່ງຖືເອັນດຽວກັບ ສິນຄ້າອັນດຽວແລະຕື່ມອີກກ້ອນໜຶ່ງແມ່ນ໖%ໃນລາຄາຂອງຄັນຮົ່ມທັງໝົດ.

ເຂົ້າເປັນລະບົບໜຶ່ງ, ລະບົບດັ່ງກ່າວນີ້ຂະຫຍາຍອັດຕາສ່ວນຕ່າງໆລະຫວ່າງຄວາມຕ້ອງການເຫລົ່ານັ້ນຊຶ່ງກັນ ແລະ ກັນຢ່າງເກີດເອງ;ດ້ານອື່ນ, ກົດເກນຈຸນຄ່າຊຶ່ງພັດກຳໜົດສັງຄົມເບິ່ງມັນສາມາດໃຊ້ສອຍ ເວລາອອກແຮງງານເທົ່າໃດເຂົ້າໃນການຜະລິດສິນຄ້າອອກແຕ່ລະຊະນິດ. ແຕ່ທ່າອຽງດັ່ງກ່າວຂອງບັນດາຂອບເຂດການຜະລິດທີ່ຕ່າງກັນ,ທ່າອຽງທີ່ຢາກຮັກສາທ່າດຸ່ນດ່ຽງເທົ່າກັນລະຫວ່າງບັນດາຂອບເຂດການ ຜະລິດນຳກັນຢູ່ເລື້ອຍໆໄປ. ພຽງແຕ່ແມ່ນການກະທົບທີ່ຕານການທຳລາຍຢ່າງບໍ່ຢຸດຢັ້ງຕໍ່ທ່າດຸ່ນດ່ຽງກັນນັ້ນ. ໃນການແບ່ງງານໃນໂຮງງານຫັດຖະກຳຂອງໂຮງງານ, ຕົວເລກອັດຕາສ່ວນກ່ອນອື່ນໝົດແມ່ນເບື້ອງດ້ວຍພຶດຕິກຳເປັນຜູ້ບົ່ງໄວ້ ແລະ ຈຸນນັ້ນແມ່ນຄົ້ນເປັນຜູ້ຶກຄອງບົ່ງອອກ - ແມ່ນກົດຂໍ້ບັງຄັບໜຶ່ງທີ່ຄອບງຳຢ່າງກ່ອນກຳໜົດ ໑) ຕໍ່ກອນກຳມະກອນ ທີ່ຖືກຕິດພັນໃສ່ແຕ່ລະພາລະບົດບາດພິເສດ, ສ່ວນໃນການແບ່ງງານ ໃນສັງຄົມ, ຕົວເລກອັດຕາສ່ວນແມ່ນຄວາມຈຳເປັນໜຶ່ງທີ່ຫລີກລ່ຽງບໍ່ໄດ້, - ຄວາມຈຳເປັນໜຶ່ງທີ່ລັບລີ້ມິດງຽບ ແລະ ຈະເຫັນແຈ້ງໄດ້ກໍ່ຕໍ່ ເມື່ອຜ່ານບັນດາການປ່ຽນແປງທີ່ມີລັກສະນະເຄືອງວັດອາກາດດັບຂອງລາຄາແຫ່ງຕະຫລາດເທົ່ານັ້ນ, ຄວາມຈຳເປັນໜຶ່ງທີ່ໃຊ້ບັນດາການລົ້ມ ຈົນເພື່ອຄອບງຳ ແລະ ຈຳກັດບໍ່ໃຫ້ບັນດາຜູ້ຜະລິດສິນຄ້າປະພຶດຕາມໃຈຟືນຂໍ້ບັງຄັບ - ສະນັ້ນມັນພຽງແຕ່ຄອບງຳກອນກຳມະກອນນັ້ນຢ່າງ ເກີດຕາມທີຫລັງ ໒ ) ເທົ່ານັ້ນ.

---

໑) A priori (ຜູ້ແປ).

໒) A posteriori (ຜູ້ແປ).

ປະຖົມປັດໄຈຂອງການແບ່ງງານໃນໂຮງງານຫັດຖະກຳແມ່ນສິດທິອັນເດັດຂາດຂອງນາຍທຶນທີ່ມີຕໍ່ບັນດາຜູ້ທີ່ໄດ້ຖືກຜັນເປັນບັນດາພາກສ່ວນອັນງ່າຍດາຍຂອງໂຄງປະກອບທີ່ຂຶ້ນຕໍ່ນາຍທຶນນັ້ນ. ການແບ່ງງານ ໃນສັງຄົມໄດ້ເຮັດໃຫ້ບັນດາຜູ້ຜະລິດເອກະລາດເກີດການປໍລະປັກຕໍ່ກັນຂຶ້ນ, ຄົນເຫລົ່ານີ້ບໍ່ຮັບຮູ້ກຳລັງອຳນາດໃດອື່ນນອກຈາກກຳລັງອຳນາດ ຂອງການແກ່ງແຍ່ງກັນ. ກຳລັງອຳນາດຂອງກຳລັງດັນຊຶ່ງສິດຜົນປະໂຫຍດລະຫວ່າງເຂົາດ້ວຍກັນໄດ້ຕັ້ງໃສ່ເຂົາ, ໃນໂລກແຫ່ງສັດ ກໍຄືກັນ , ການຕໍ່ສູ້ຂອງສິ່ງວັດຖຸທັງໝົດຕ້ານສິ່ງວັດຖຸທັງໝົດຄືນ, bellum omnium contraomnes ພິທັກຮັກສາໄດ້, ຫລືບໍ່ຫລາຍ ກໍໜ້ອຍ, ບັນດາເງື່ອນໄຂທີ່ຢືນຢົງຄົງຕົວຂອງສັດປະເພດຕ່າງທັງໝົດ, ແລະ ສະຕິຮູ້ສຶກນາຍທຶນດັ່ງກ່າວ, ສະຕິຮູ້ສຶກທີ່ຍົກຍ້ອງການ ແບ່ງງານໃນໂຮງງານຫັດຖະກຳ, ຍົກຍ້ອງການກັກຂັງຊາວຜູ້ອອກແຮງງານ ຕະຫລອດຊົ່ວຊີວິດເຂົ້າຈັ່ງຫວະພາກສ່ວນແລະຍົກຍ້ອງການຂຶ້ນຕໍ່ຢ່າງບໍ່ ມີເງື່ອນໄຂຂອງຊາວຜູ້ອອກແຮງງານຕໍ່ນາຍທຶນ, ສະຕິຮູ້ສຶກດັ່ງກ່າວຮ້ອງໂຮຂຶ້ນ ແລະ ຄຽດຈົນໜ້າຊ້ຳໜ້າມ້ານເມື່ອເຂົາເວົ້າເຖິງການ ທີ່ສັງຄົມກວດກາ ແລະ ດັດສົມຂະບວນວິວັດການຜະລິດ ! ມັນກ່າວ ຟ້ອງຄວາມຫຼິປອງຕ່າງໆທັງໝົດທີ່ຂຶ້ນກັບຊະນິດດັ່ງກ່າວວ່າແມ່ນການບຸກໂຈມຕີຕ້ານສິດທິຖືກຳມະສິດເອກະຊົນ, ສິດເສລີພາບ, ຈິດໃຈປະດິດ ສ້າງຂອງນາຍທຶນ. ໃນຂະນະນັ້ນ, ບັນດາພວກທີ່ເນົາມືໃນການແກ້ຄວາມໃຫ້ລະບອບໂຮງງານດັ່ງກ່າວເລີຍຮ້ອງຂຶ້ນວ່າ : " ຊັ້ນພວກເຈົ້າຢາກຜັນສັງຄົມເປັນໂຮງງານໜຶ່ງບໍ່ ? " ລະບອບໂຮງງານມີແຕ່ດີ ສຳລັບ

ຊາວກຳມາຊີບເທົ່ານັ້ນ !

ຖ້າວ່າພາວະການອະນາທິປະໄຕໃນການແບ່ງງານໃນສັງຄົມແລະພາວະການອຳນາດເດັດຂາດໃນການແບ່ງງານໃນໂຮງງານ ຫັດຖະກຳແມ່ນລັກສະນະພິເສດຂອງສັງຄົມທຶນນິຍົມ, ແມ່ນກົງກັນຂ້າມບັນດາ ສັງຄົມທີ່ເກົ່າແກ່ກວ່າ, - ໃນນັ້ນປະກົດການອາຊີບສະເພາະຂະຫຍາຍຕົວຢ່າງຫຳມະຊາດ, ແລ້ວຈຶ່ງພະນຶກເຂົ້າ ແລະ ສຸດທ້າຍໄດ້ຮັບຮູ້ຈາກກົດໝາຍ, - ພັດໃຫ້ພວກເຮົາຮູ້ຮູບພາບກ່ຽວກັບການຈັດຕັ້ງ ແຮງງານໜຶ່ງຂອງສັງຄົມ, ການຈັດຕັ້ງມີແຜນການ ແລະ ມີລັກສະນະກຳລັງອຳນາດ. ແຕ່ໃນນັ້ນແມ່ນບໍ່ມີການແບ່ງງານໃນໂຮງງານຫັດຖະກຳແຕ່ຢ່າງໃດຫລືມີແຕ່ໃນຂະໜາດໜຶ່ງທີ່ນ້ອຍໆທີ່ສຸດຫລືການແບ່ງງານດັ່ງ ກ່າວພຽງແຕ່ຂະຫຍາຍຕົວຢ່າງຍິກຍ່ອຍແລະໂດຍບັງເອີນເທົ່ານັ້ນ [1] ).

ບັນດາວົງຄະນາຍາດນ້ອຍນັ້ນຢູ່ອິນເດຍ, ຊຶ່ງຄົນທັງຫລາຍ ເຫັນ

---

[1] " ຄົນທັງຫລາຍສາມາດ...ກຳໜົດຊັດເຈນວ່າຕາມກົດທຳມະດາ, ຖ້າກຳລັງອຳນາດທາກຄອບງຳການແບ່ງງານໃນພາຍໃນ ສັງຄົມຍິ່ງນ້ອຍເທົ່າໃດ, ໃນພາຍໃນໂຮງງານ, ການແບ່ງງານຍິ່ງ ຂະຫຍາຍຕົວຫລາຍເທົ່ານັ້ນ ແລະ ກໍຍິ່ງຖືກຄອບງຳຈາກກຳລັງ ອຳນາດຂອງເອກະຊົນແຕ່ຜູ້ດຽວເທົ່ານັ້ນ. ດັ່ງນັ້ນ ແມ່ນກຳລັງອຳນາດ ໃນໂຮງງານ ແລະ ກຳລັງອຳນາດ ໃນສັງຄົມ , ເມື່ອປຽບທຽບການແບ່ງງານ , ມັນມີອັດຕາສ່ວນທວນຂ້າມນຳກັນ " . ( ກ . ມາກ : ຄວາມອັບຈົນ ຂອງປັດຊະຍາ, ໜ້າ ໑໓໐ - ໑໓໑ ).

ວ່າມັນປະກົດຕົວອອກຕັ້ງແຕ່ບັນດາສະໄຫມເກົ່າກ່ອນ ແລະ ປະຈຸບັນນີ້ກໍຍັງຄົງຮ່ອງຮອຍຢ່າງບໍ່ຫລາຍກໍໜ້ອຍ, ລ້ວນແຕ່ອີງບົນພື້ນຖານສິດທິກຳມະສິດທົ່ວໄປກ່ຽວກັບທີ່ດິນ, ແລະ ບົນການແບ່ງງານອັນຄົງທີ່, ການແບ່ງງານດັ່ງກ່າວນີ້ບໍ່ວ່າຍາມໃດມັນກໍໄດ້ໃຊ້ເປັນແຜນການ ແລະ ແບບຢ່າງໃຫ້ແກ່ບັນດາວົງຄະນາຍາດທີ່ຫາກໍ່ສ້າງຕັ້ງຂຶ້ນ. ກໍ່ຕັ້ງບົນຕອນ ດິນທີ່ກວ້າງແຕ່ໜຶ່ງຮ້ອຍເຖິງສອງສາມພັນ ເອເກີ , ວົງຄະ ນາຍາດເຫລົ່ານັ້ນແມ່ນບັນດາສະຖາບັນການຜະລິດ, ກຸ່ມຕົນເອງ ເພິ່ງຕົນເອງ ພາກສ່ວນຕົ້ນຕໍຂອງຜະລິດຕະພັນແມ່ນໃຊ້ສຳລັບວົງຄະນາຍາດໃນ ການໃຊ້ສອຍໂດຍກົງ, ພາກສ່ວນດັ່ງກ່າວນີ້ບໍ່ກາຍເປັນສິນຄ້າແຕ່ຢ່າງ ໃດເລີຍ, ອັນໄດ້ເຮັດໃຫ້ການຜະລິດກາຍມາເປັນອັນບໍ່ມີການກ່ຽວພັນ ແຕ່ຢ່າງໃດກັບການແບ່ງງານຊຶ່ງມັນເກີດມີຂຶ້ນຈາກການແລກປ່ຽນສິນຄ້າໃນທົ່ວສັງຄົມອິນເດຍ. ມີແຕ່ສ່ວນເຫລືອຂອງຜະລິດຕະພັນເຫລົ່ານັ້ນ ຈຶ່ງກາຍເປັນສິນຄ້າເທົ່ານັ້ນ, ແລະ ກ່ອນອື່ນໝົດແມ່ນຕົກຢູ່ໃນມືຂອງ ລັດຊຶ່ງແມ່ນອົງການ, ຕັ້ງແຕ່ສະໄຫມເກົ່າກ່ອນພຸ້ນ, ໄດ້ມີສິດເກັບເອົາຜະລິດຕະພັນສ່ວນໜຶ່ງນັ້ນເປັນສ່ວນວັດຖຸ. ໃນທ້ອງຖິ່ນອື່ນໆຂອງອິນເດຍ, ວົງຄະນາຍາດເຫລົ່ານັ້ນມີຮູບການຕ່າງໆ ທີ່ຕ່າງກັນ. ຮູບການທີ່ ງ່າຍດາຍກ່ວາໝູ່ແມ່ນວົງຄະນາຍາດໄຖດຳທີ່ດິນລວມ ແລະ ແບ່ງປັນຜະລິດຕະພັນ ທາງວັດຖຸໃຫ້ບັນດາພາຄີໃນວົງຄະນາຍາດ, ແຕ່ວ່າແຕ່ລະຄອບຄົວຊ້ຳພັດເຮັດວຽກງານຄອບຄົວໃນເຮືອນຂອງຕົນເຊັ່ນ ເຂັນຝ້າຍ , ຕຳແຜ່ນ, ຯລຯ... ຢູ່ຄຽງຂ້າງຈຳນວນມວນຊົນທີ່ເຮັດວຽກເຊັ່ນດຽວກັນນັ້ນ, ພວກເຮົາເຫັນວ່າມີ " ປະຊາຊົນຜູ້ຫລັກແຫລ່ງ ": ຜູ້ໜຶ່ງ

ທັງເປັນຫົວໜ້າສານ, ທັງເປັນຫົວໜ້າຕຳຫລວດ, ທັງເກັບພາສີ ອາກອນ; ມີຄົນຮັກສາສະໝຸດບັນຊີຊຶ່ງເຮັດໜ້າທີ່ຄິດໄລ່ກ່ຽວກັບ ກະສິກຳ ແລະ ວັດໜ້າດິນ ແລະ ບັນທຶກທັງໝົດບັນດາກອນໃດທີ່ມີການກ່ຽວພັນເຖິງບັນຫາດັ່ງກ່າວ; ຂ້າລັດຖະກອນທີ່ສາມກໍດຳລົງສະເພາະວຽກຊອກຈັບບັນດານັກໂທດ ແລະ ໄປນຳເອົາແຂກແຕ່ບ້ານນີ້ໄປຫາບ້ານອື່ນເພື່ອປ້ອງກັນໃຫ້ແຂກ; ຜູ້ທີ່ປົກປັກຮັກສາຊາຍແດນເຮັດໜ້າທີ່ກີດກັ້ນ ໂດຍບໍ່ໃຫ້ບັນດາວົງຄະນາຍາດທີ່ໃກ້ຄຽງແຊກຊຶມເຂົ້າວົງຄະນາຍາດຂອງຕົນ; ນັກກວດກາຊົນລະປະທານມີໜ້າທີ່ແຈກຢາຍນ້ຳທີ່ຂັງໄວ້ໃນບັນດາບ່ອນທີ່ຂັງນ້ຳລວມ, ໃຫ້ແກ່ຄວາມຕ້ອງການຂອງກະສິກຳ; ພະສົງສາສະໜາບາລາມິນເຮັດໜ້າທີ່ປະຕິບັດພິທີແຫ່ງສາສະໜາ; ນາຍຄູສິດສອນເດັກນ້ອຍໃນວົງຄະນາຍາດໃນການອ່ານ ແລະ ຂຽນບົນໜ້າດິນຊາຍ, ພະສົງສາສະໜາບາລາມິນ, ດ້ວຍຖານະນາມເປັນນັກດາລາສາດ, ເຮັດປະຕິທິນ ແນະນຳລະດູຫວ່ານກ້າຫລືເກັບກ່ຽວ ແລະ ບັນດາໂມງເວລາທີ່ດີຫລືບໍ່ດີສຳລັບບັນດາວຽກໄຮ່ການນາ, ຊ່າງຕີເຫລັກຜູ້ໜຶ່ງ ແລະ ຊ່າງໄມ້ເພື່ອເຮັດ ແລະ ສ້ອມແປງບັນດາເຄື່ອງມືກະສິກຳຄືນທັງໝົດ, ຊ່າງເຄືອບດິນເຜົາເຮັດຖ້ວຍ, ຊາມ , ໝໍ້ທັງໝົດໃຫ້ວົງຄະນາຍາດທັງໝົດ; ຊ່າງຕັດຜົມ, ຊ່າງຊັກເຄື່ອງ, ຊ່າງຫລໍ່ເງິນຄຳ; ແລະ ຢູ່ໃນບາງວົງຄະນາຍາດ, ນັກກະວີແທນທີ່ຊ່າງຫລໍ່ເງິນຄຳ ,ຢູ່ໃນບັນດາວົງຄະນາຍາດອື່ນໆກໍແທນຄູສອນ. ຕົວເລກຈຳນວນບຸກຄົນປະມານໂຫລໜຶ່ງນັ້ນໄດ້ຮັບການເກື້ອກູນຈາກວົງຄະນາຍາດ. ເມື່ອຈຳນວນ ພົນລະເມືອງເພີ່ມຂຶ້ນ, ກໍອາດຈະສ້າງຕັ້ງວົງຄະນາຍາດໃໝ່ຂຶ້ນຕື່ມ ຊຶ່ງຫລໍ່

ຕາມເປົ້າຂອງວົງຄະນາຍາດເກົ່າ ແລະ ຕັ້ງຢູ່ໃນຕອນດິນທີ່ຍັງບໍ່ທັນໄຖ ດຳດົງນັ້ນຮ່າງປະກອບຂອງວົງຄະນາຍາດແມ່ນອີງໃສ່ການແບ່ງງານທີ່ມີແຜນການ, ແຕ່ບໍ່ສາມາດມີການແບ່ງງານແບບໂຮງງານຫັດຖະກຳໄດ້, ເພາະວ່າຕະຫລາດຂອງຊ່າງຕີເຫລັກ, ຊ່າງໄມ້ໆລໆ...ບໍ່ເຄີຍ ປ່ຽນແປງຈັກເທື່ອ, ແລະ ຢ່າງຫລາຍແມ່ນໃນວົງຄະນາຍາດໃຫ່ມນັ້ນກໍ ມີຊ່າງຕີເຫລັກສອງຄົນຫລືຊ່າງເຄື່ອງດິນເຜົາຂອງຄົນຫາກບໍ່ແມ່ນຜູ້ໜຶ່ງໆ ຢູ່ນີ້, ກົດເກນດັດສົມການແບ່ງງານໃນວົງຄະນາຍາດເຄື່ອນເໜັງດ້ວຍຖານະນາມເປັນກຳລັງອຳນາດທີ່ບໍ່ອາດແຊກຊຶມໄດ້ຂອງກົດເກນພິຊິກ , ໃນຂະນະນັ້ນ ຊ່າງຫັດຖະກຳແຕ່ລະຄົນຊ້ຳພັດດຳເນີນວຽກງານຕ່າງ ໆ ທັງໝົດທີ່ຂຶ້ນຕໍ່ຂອບເຂດຂອງຕົນ, ຢູ່ເຮືອນຂອງຕົນ, ໃນໂຮງງານຂອງຕົນ, ຕາມແບບວິທີອອກແຮງງານທີ່ສືບມາແຕ່ບູຮານ, ແຕ່ດຳເນີນໄປຢ່າງເປັນເອກະລາດແລະກໍບໍ່ຮັບຮູ້ອຳນາດໃດໆທັງໝົດ. ລັກສະນະງ່າຍດາຍຂອງລະບົບການຜະລິດຂອງວົງຄະນາຍາດເພິ່ງຕົນເອງ, ກຸ້ມຕົນເອງ,-ວົງຄະນາຍາດເຊິ່ງກຳເນີດວົງຄະນາຍາດທີ່ມີຮູບການດຽວກັນນັ້ນເລື້ອຍເລື້ອຍແລະຖ້າບັງເອີນຫາກຖືກທຳລາຍໄປກໍຕາມ, ກໍຈະຖືກຟື້ນຟູຄືນ ໃນ

---

໑) ນາຍພັນໂທມາກວິນເຊີນ Historical sketches of the south ລອນດອນ, ໑໘໑໐-໑ກ, ເຫລັ້ມ໑, ໜ. ໑໑໘-໑໔໐. ນິພົນຂອງ ຍອກ ເຢີກຳແບນ: of India , ລອນດອນ, ໑໙໕໔, ໄດ້ກ່າວ ສະເໜີບັນດາຮູບການວົງຄະນາຍາດຢູ່ອິນເດຍຢ່າງຈະແຈ້ງທີ່ສຸດ.

Modern India .

ສະຖານທີ່ເກົ່າ ແລະ ເອົາຊື່ເກົ່າ ¹)-ເຮັດໃຫ້ພວກເຮົາເຂົ້າໃຈແຈ້ງເຖິງລັກສະນະບໍ່ປ່ຽນແປງຂອງບັນດາສັງຄົມທະວີບອາຊີ, ລັກສະນະ ບໍ່ປ່ຽນແປງນີ້ກົງກັນຂ້າມຢ່າງແປກປະຫລາດກັບປະກົດການຂອງບັນດາປະເທດໃນທະວີບອາຊີທີ່ຖືກພັງທະລາຍ ແລະ ຖືກຟື້ນຟູຄືນເລື້ອຍໆ ດ້ວຍການປ່ຽນແປງຢ່າງບໍ່ຢຸດເຊົາຂອງບັນດາລາຊະວົງ. ໂຄງປະກອບຂອງປັດໄຈເສດຖະກິດພື້ນຖານແຫ່ງສັງຄົມຍັງບໍ່ຖືກບໍ່ວ່າການຜັນປ່ຽນໃດໆໃນຂົງເຂດການເມືອງກະທົບເຖິງເລີຍ.

ບັນດາກົດຂໍ້ບັງຄັບຄ້າຍນິຄົມສະໄໝກາງ ໂບຮານຂັດຂວາງຢ່າງມີ

---

໑) " ພາຍໃຕ້ຮູບການງ່າຍດາຍນັ້ນ, ພົນລະເມືອງໄດ້ດຳລົງ ຊີວິດຕັ້ງແຕ່ບໍ່ຈັກວ່າເທົ່າໃດເຊັ່ນຄົນມາແລ້ວ. ຂອບເຂດຂອງບ້ານ ຊ່ອງໜ້ອຍເທື່ອຖືກປ່ຽນແປງ, ແລະເຖິງແມ່ນວ່າບ້ານເຫລົ່ານັ້ນຖືກທຸກຍາກຍ້ອນໄພສົງຄາມ, ໄພອຶດຫິວແລະພະຍາດອາຄາດ, ແຕ່ບໍ່ແມ່ນຍ້ອນແນວນັ້ນບ້ານຕ່າງໆດັ່ງກ່າວຈະບໍ່ຮັກສາຊື່ເກົ່າ, ຂອບເຂດເກົ່າ, ບັນດາຜົນປະໂຫຍດເກົ່າແລະຍັງຮັກສາຈົນກະທັ້ງບັນດາຄອບຄົວເກົ່າ. ພົນລະເມືອງບໍ່ສົນໃຈຫຍັງເຖິງການສະຫລາຍຕົວແລະການແຍກຍຸບຂອງລາຊະອາ ນາຈັກ. ຕ້ອງການພຽງແຕ່ໃຫ້ບ້ານຊ່ອງຄົງຢູ່ຄືເກົ່າກໍພໍແລ້ວ, ສ່ວນຜູ້ໃດຈະກຳອຳນາດກໍບໍ່ສຳຄັນເທົ່າໃດສຳຫລັບເຂົາເຈົ້າ; ພື້ນຖານ ເສດຖະກິດຂອງບ້ານກໍບໍ່ຖືກປ່ຽນແປງພໍປານໃດ " (ທ. ສແຕນຟໍຣາຍເຝີ ຜູ້ສຳເລັດລາຊະການ ຊາວນາ :
ລອນດອນ, ໑໘໑໗; ເຫລັ້ມ ໑, ໜ້າ ໘໒໔ ).

ແຜນການຕໍ່ການກົບກາຍຂອງຫົວໜ້ານາຍຊ່າງເປັນເຈົ້າທຶນ, ດ້ວຍການໃຊ້ຄຳສັ່ງຢ່າງເຄັ່ງຄັດເພື່ອກຳນົດຈຳນວນນາຍຊ່າງທີ່ຫົວໜ້ານາຍຊ່າງມີສິດນຳໃຊ້ ແລະ ເພີ່ມໃສ່ນັ້ນ, ຄົນທັງຫລາຍຍັງບໍ່ໃຫ້ຫົວໜ້າ ນາຍຊ່າງນຳໃຊ້ນາຍຊ່າງເຂົ້າໃນບໍ່ວ່າວິຊາຊີບໃດໆ ນອກຈາກວິຊາຊີບຂອງເຂົາ. ຄ້າຍນິຄົມຍັງຕໍ່ສູ້ຢ່າງເດັດດ່ຽວຕ້ານທຸກການແຊກຊຶມ ຂອງນາຍທຶນການຄ້າ, ໝາຍຄວາມວ່າຂອງຮູບຖານເສລີຢ່າງດຽວຂອງນາຍທຶນຊຶ່ງຄ້າຍນິຄົມໄດ້ພົວພັນ. ຊາວຄ້າຂາຍມີສິດຊື້ຄົບທຸກແນວສິນຄ້າ. ນອກຈາກແຮງງານ. ຜູ້ກ່ຽວໄດ້ຮັບອະນຸຍາດປະກົດຕົວແຕ່ພຽງໃນ ຖານະເປັນຄົນອອກໜ້າຂາຍຜະລິດຕະພັນຫັດຖະກຳເທົ່ານັ້ນ. ເມື່ອສະ ພາບການພາຍນອກຮຽກຮ້ອງໃຫ້ຄ່ອຍໆມີການແບ່ງງານນັ້ນ, ຄ້າຍນິຄົມຕ່າງຕ່າງທີ່ມີໃນປະຈຸບັນຈະແບ່ງນ້ອຍອອກເປັນບັນດາຄ້າຍນິຄົມສຳຮອງ, ຫລືບັນດາຄ້າຍນິຄົມທີ່ຫາກໍ່ໄດ້ສ້າງຕັ້ງຂຶ້ນຢູ່ຄຽງຂ້າງບັນດາຄ້າຍນິຄົມເກົ່າ, ແຕ່ວ່າວິຊາຊີບຫັດຖະກຳຕ່າງໆທີ່ຕ່າງກັນນັ້ນກໍ່ຍັງຄົງບໍ່ຖືກເຕົ້າໂຮມເຂົ້າໂຮງງານດັ່ງດຽວກັນ, ດັ່ງນັ້ນ, ການຈັດຕັ້ງຄ້າຍນິຄົມບໍ່ຮັບເອົາ ການແບ່ງງານໃນໂຮງງານຫັດຖະກຳ, ເຖິງແມ່ນວ່າການຈັດຕັ້ງດັ່ງກ່າວແຜ່ຂະຫຍາຍເງື່ອນໄຂຕ່າງໆ ທີ່ຄົງຕົວຂອງການແບ່ງງານໃນໂຮງງານຫັດຖະກຳດ້ວຍວິທີແຍກອອກແລະດັດແປງວິຊາຊີບຫັດຖະກຳຕ່າງໆ. ເວົ້າໂດຍທົ່ວໄປ, ຊາວຜູ້ອອກແຮງງານແລະພາຫະນະແຫ່ງການຜະລິດຕ່າງໆຂອງຜູ້ນັ້ນຍັງຄົງສົມທົບກັນຢ່າງແໜ້ນແຟ້ນຄືຫອຍກັບກາບຂອງມັນ. ດ້ວຍເຫດນັ້ນ, ຈຶ່ງບໍ່ມີພື້ນຖານເບື້ອງຕົ້ນຂອງໂຮງງານຫັດຖະກຳ, ໝາຍຄວາມວ່າບໍ່ມີຮູບຖານແຫ່ງທຶນຂອງພາຫະນະແຫ່ງການຜະລິດຕ່າງໆ.

ການແບ່ງງານໃນສັງຄົມ, ມີຫລືບໍ່ມີການແລກປ່ຽນສິນຄ້າແມ່ນສຸດແລ້ວແຕ່ບັນດາຮູບຖານເສດຖະກິດຂອງສັງຄົມຕ່າງໆ ທີ່ຕ່າງກັນທີ່ສຸດ , ສ່ວນການແບ່ງງານໃນໂຮງງານຫັດຖະກຳ, ຊ້ຳພັດເປັນສິ່ງວັດຖຸໜຶ່ງທີ່ປະດິດສ້າງອັນເປັນຕ່າງຫາກຊຶ່ງພຽງແຕ່ແບບວິທີການຜະລິດທຶນນິຍົມຈຶ່ງມີໄດ້.

.....

ໃນຍາມຕົ້ນ, ການຮ່ວມມືອີງໃສ່ພື້ນຖານແບ່ງງານ, ໝາຍຄວາມວ່າໂຮງງານຫັດຖະກຳ, ໄດ້ປະດິດສ້າງຂຶ້ນຢ່າງເກີດເອງ ແລະ ບໍ່ຮູ້ສຶກຕົນຕົວ. ເມື່ອການຮ່ວມມືດັ່ງກ່າວນັ້ນໄດ້ໜັກແໜ້ນເຖິງຂັ້ນໃດໜຶ່ງແລ້ວ ແລະ ໄດ້ມີຮາກຖານທີ່ກວ້າງພໍສົມຄວນແລ້ວ, ມັນຈຶ່ງກາຍ ເປັນຮູບຖານໜຶ່ງທີ່ໄດ້ຮັບຮູ້ ແລະ ມີລະບົບຂອງພື້ນຖານຜະລິດທຶນນິຍົມ. ປະຫວັດສາດຂອງໂຮງງານຫັດຖະກຳຫລວງຊີ້ໃຫ້ເຫັນແຈ້ງວ່າການ ແບ່ງງານອັນເປັນພິເສດຂອງໂຮງງານຫັດຖະກຳໄດ້ຜ່ານການທົດສອບຄືແນວໃດຈະບັນລຸເຖິງບ່ອນທີ່ມັນມີຮູບຖານຕ່າງໆທີ່ມີຜົນກວ່າໝູ່ໄດ້ -ສາມາດເວົ້າໄດ້ວ່າ ການທີ່ມັນມີຮູບຖານຕ່າງນັ້ນໄດ້, ຊຶ່ງບັນດາຜູ້ທີ່ກ່ຽວຂ້ອງບໍ່ຮູ້ - ແລະ ຫລັງຈາກນັ້ນການແບ່ງງານດັ່ງກ່າວໄດ້ໄປຕາມແບບ ຂອງຄາຍນິຄົມຕ່າງໆ, ເຊິ່ງມີຄວາມພະຍາຍາມຄືແນວໃດ ເພື່ອຮັກສາ ຮູບຖານທີ່ສືບມາແຕ່ບູຮານເຫລົ່ານັ້ນໄດ້, ແລະ ບາງເທື່ອກໍໄດ້ຮັກສາ ຮູບຖານເຫລົ່ານັ້ນໄວ້ໄດ້ໃນໜຶ່ງສະຕະວັດກວ່າ. ຮູບຖານດັ່ງກ່າວ ເບິ່ງຄືວ່າ ຍາມໃດກໍພຽງແຕ່ປ່ຽນແປງເວັ້ນເສຍແຕ່ບັນດາການປ່ຽນແປງ ໃນລາຍລະອຽດ - ນັ້ນແມ່ນເນື່ອງຈາກວ່າໄດ້ມີການປະຕິວັດໜຶ່ງທີ່ ເກີດ

ຂຶ້ນເຄື່ອງມືການອອກແຮງງານຕ່າງເຫລົ່ານັ້ນ. ໂຮງງານຫັດຖະກຳທັນສະໄໝ ( ຂ້າພະເຈົ້າບໍ່ເວົ້າເຖິງອຸດສາຫະກຳໃຫຍ່ທີ່ອີງໃສ່ພື້ນ ຖານກົນຈັກ ) ຫລືວ່າຊອກເຫັນໄດ້ໃນນະຄອນຕ່າງໆ ຊຶ່ງເປັນບ່ອນທີ່ມັນໄດ້ຮັບການກໍ່ຕັ້ງຂຶ້ນ, ມູນສ່ວນຕ່າງໆທີ່ປະກອບເປັນໄດ້ມີຢູ່ແລ້ວ, ເຖິງແມ່ນວ່າມູນສ່ວນເຫລົ່ານັ້ນຢູ່ກະຈັດກະຈາຍໃນທົ່ວທຸກບ່ອນ, ແລະ ມີແຕ່ການເຕົ້າໂຮມເທົ່ານັ້ນ, ເຊັ່ນໂຮງງານຫັດຖະກຳຫຍິບ ສົ້ງເສື້ອເປັນຕົ້ນ ; ຫລືວ່າຫລັກການແບ່ງງານກໍໝູນໃຊ້ງ່າຍຈົນເຖິງຂັ້ນຄົບທັງຫລາຍ ມີແຕ່ການເຮັດໃຫ້ກຳມະກອນແຕ່ລະຄົນກາຍເປັນວິຊາສະເພາະກ່ຽວກັບໜຶ່ງໃນຫລາຍຂະບວນວິວັດຂອງວິຊາຊີບໜຶ່ງ, ເປັນຕົ້ນວິຊາຊີບພັບປຶ້ມ , ດ້ວຍກໍລະນີເຫລົ່ານັ້ນ, ກໍພຽງແຕ່ຕ້ອງຖອດຖອນບົດຮຽນໃນອາທິດໜຶ່ງແມ່ນສາມາດ[໑]ເຫັນໄດ້ອັດຕາສ່ວນກຳມະກອນທີ່ຕ້ອງການສຳລັບແຕ່ລະຂະບວນວິວັດ ).

---

໑) ໂດຍທີ່ເຊື່ອຖືຢ່າງໄຮ້ດຽງສາຕໍ່ຄວາມປີຊາສາມາດຊຶ່ງ ນາຍທຶນເສີມຂະຫຍາຍຢ່າງເປັນມາແຕ່ກຳເນີດໃນການແບ່ງງານນັ້ນໃນປະຈຸບັນມີແຕ່ບັນດາສາດສະດາຈານ ເຢລະມັນເທົ່ານັ້ນ,ສົມມຸດຕິ ຣົດແຊ , ເປັນຜູ້ທີ່ໄດ້ເຫັນດີໃຫ້ນາຍທຶນໄດ້ສະເຫວີຍ "ເງິນຄ່າແຮງລະດັບຕ່າງໆທີ່ຕ່າງກັນ" ເພື່ອໃຫ້ລາງວັນຕໍ່ຄຸນຄວາມດີຂອງນາຍທຶນ, ເພາະວ່າສະໝອງທີ່ຍິ່ງໃຫຍ່ຂອງນາຍທຶນໄດ້ຄິດເຖິງການແບ່ງງານນັ້ນຢູ່ແລ້ວ. ບໍ່ແມ່ນຄວາມປີຊາສາມາດມີຫລາຍຫລືນ້ອຍ, ຫາກຕັ້ງແມ່ນເງິນມີຫລາຍຫລືໜ້ອຍນັ້ນເປັນສິ່ງຊີ້ຂາດການໝູນໃຊ້ການແບ່ງງານຢ່າງກວ້າງຫລືແຄບ.

ເນື່ອງຈາກການໄຈ້ແຍກ ແລະ ການຜັນແຍກວິຊາຊີບຫັດຖະກຳ, ເນື່ອງຈາກການຜັນເຄື່ອງມືເປັນວິຊາສະເພາະ, ເນື່ອງຈາກການ ກໍ່ສ້າງກຳມະກອນຕາມພາກສ່ວນ ແລະ ເນື່ອງຈາກການເຕົ້າໂຮມ ເຂົາເຈົ້າໃນໂຄງປະກອບໜຶ່ງທີ່ຄົບຊຸດ, ການແບ່ງງານໃນໂຮງງານຫັດຖະກຳຈຶ່ງສ້າງເປັນຂັ້ນໄດຂັ້ນໜຶ່ງກ່ຽວກັບຄຸນນະພາບ ແລະ ອັດຕາ ສ່ວນໜຶ່ງກ່ຽວກັບປະລິມານໃນບັນດາຂະບວນວິວັດແຫ່ງສັງຄົມຂອງການ ຜະລິດ. ຈັດຕັ້ງແຮງງານຢ່າງເປັນພິເສດຄືແນວນັ້ນຈຶ່ງເຮັດໃຫ້ກຳລັງການຜະລິດຂອງສັງຄົມທະວີຂຶ້ນຕື່ມ.

## ພາກ XIV

## ເຄື່ອງຈັກ ແລະ ອຸດສາຫະກຳໃຫຍ່

.....

ໃນໂຮງຈັກ ( factory ) - ແລະ ນັ້ນກໍແມ່ນ ຮູບການພິເສດຂອງໂຮງຈັກ ຊຶ່ງເອົາການໃຊ້ເຄື່ອງຈັກເປັນພື້ນຖານ, - ພວກເຮົາກໍເຫັນຢູ່ສະເໝີວ່າການຮ່ວມມືແບບງ່າຍດາຍພັດປະກົດອອກ. ເວັ້ນເສຍແຕ່ກຳມະກອນແລ້ວ, ການຮ່ວມມືແບບງ່າຍດາຍກ່ອນອື່ນໝົດສະແດງອອກເປັນການເຕົ້າໂຮມບັນດາເຄື່ອງຈັກເຮັດວຽກຮ່ວມ ຊະນິດດຽວກັນເຂົ້າ ແລະ ຮ່ວມກັນແລ່ນໃນຄາວດຽວ ໃນສະຖານທີ່ດຽວກັນ. ກະໂຕບັນດາຮູບການຕ່າງຫາກນັ້ນເອງ, ຊຶ່ງໃນນັ້ນຜະລິດຕະພັນ ໂດຍແມ່ນຈັກເຮັດວຽກເປັນສິ່ງສ້າງອອກນັ້ນໄດ້ສຳເລັດບໍລິບູນຢ່າງຄັກແນ່ , ຊຶ່ງຈັກເຮັດວຽກພຽງແຕ່ແມ່ນການອາດພາບອັນງ່າຍດາຍຂອງເຄື່ອງ ມືໜຶ່ງທີ່ສັບສົນໂດຍໃຊ້ດ້ວຍມືເທົ່ານັ້ນ, ຫລືວ່າການສົມທົບຫລາຍ ເຄື່ອງໃຊ້, ຊຶ່ງແຕ່ລະອັນມີພາລະບົດບາດພິເສດຂອງມັນ.

ສົມມຸດ ໂຮງງານຕ່ຳແຜ່ນແຫ່ງໜຶ່ງແມ່ນມາຈາກຈັກຕ່ຳຫູກຫລາຍເຄື່ອງໂຮມປະກອບກັນເຂົ້າ.ໆລໆ. ແຕ່ຢູ່ນີ້, ມີຄວາມເປັນເອກະພາບຢ່າງແທ້ຈິງທາງເຕັກນິກ, ຢູ່ບ່ອນວ່າຈັກເຮັດວຽກຫລາຍເຄື່ອງຮ່ວມກັນນັ້ເຄື່ອງຍົນອັນດຽວຊຸກຍູ້ໄດ້ແລ່ນສະເໝີກັນ ແລະ ພາບດຽວກັນ ການ

ຊຸກຍູ້ດັ່ງກ່າວນີ້ໄດ້ເຄື່ອນເໜັງດ້ວຍເຄື່ອງຈັກລະບົບໜຶ່ງ ຊຶ່ງສ່ວນໜຶ່ງແມ່ນລວມໃຫ້ບັນດາຈັກເຮັດວຽກເຫລົ່ານັ້ນ, ເພາະວ່າຈັກເຮັດວຽກແຕ່ລະເຄື່ອງພຽງແຕ່ຕໍ່ລຽນກັບກົງຍ່ອຍຕ່າງຫາກຂອງລະບົບຈັກເທົ່ານັ້ນ. ກໍ່ເຊັ່ນດຽວກັນກັບເຄື່ອງມືຫລາຍອັນທີ່ປະກອບເປັນພາກສ່ວນຕ່າງໆ ຂອງຈັກເຮັດວຽກເຄື່ອງໜຶ່ງ, ຈັກເຮັດວຽກມີເທົ່າໃດແມ່ນມີພາກສ່ວນ ຊະນິດດຽວກັນເທົ່ານັ້ນຂອງຈັກກັບເຄື່ອງດຽວກັນ.

ລະບົບເຄື່ອງຈັກຫລວງຈະປ່ຽນແທນເຄື່ອງຈັກເອກະລາດກໍ່ຕໍ່ເມື່ອໃດທີ່ເປົ້າໝາຍແຫ່ງການອອກແຮງງານຜ່ານຕາມລຳດັບເຂົ້າສູ່ຂະບວນວິວັດແຫ່ງການອອກແຮງງານຫລາຍຂັ້ນຕອນເປັນລວາດໜຶ່ງທີ່ດຳ ເນີນໄປດ້ວຍສາຍພານແຫ່ງຈັກເຮັດວຽກທີ່ຕ່າງກັນແຕ່ຕິດພັນກັນ ລະຫວ່າງເຄື່ອງນີ້ກັບເຄື່ອງນັ້ນ. ການຮ່ວມມືທ້ອງໃສ່ການແບ່ງງານ. ຈຸດພິເສດຂອງໂຮງງານຫັດຖະກຳ, ຊ້ຳພັດປະກົດຕົວອອກຢູ່ທີ່ນີ້ເປັນການ ສົມທົບຂອງຈັກເຮັດວຽກພາກສ່ວນຫລາຍເຄື່ອງ. ເຄື່ອງມືອິຊາຊີບ ສະເພາະເທົ່າໃດຢ່າງຂອງບັນດາກຳມະກອນທີ່ຕ່າງກັນໃນໂຮງງານຫັດຖະກຳຂົນສັດເປັນຕົ້ນ, ຂອງກຳມະກອນຕີ, ກຳມະກອນຜັດ, ກຳມະກອນຝັ້ນ , ກຳມະກອນປັ່ນຝ້າຍ, ໆລໆ, ລ້ວນແຕ່ທັບມາເປັນຈັກເຮັດວຽກ ຕ່າງຫາກເທົ່ານັ້ນເຄື່ອງ, ແຕ່ລະເຄື່ອງໃນຈຳນວນຈັກນີ້ພັດເປັນພາກສ່ວນທີ່ຕ່າງຫາກຂອງລະບົບຈັກປະສົມ, ກະໂຕໂຮງງານຫັດຖະກຳນັ້ນເອງສະໜອງບັນດາພື້ນຖານທຳມະຊາດ ແລະ ການແບ່ງປັນຂະບວນວິວັດແຫ່ງການຜະລິດໃຫ້ລະບົບຈັກນັ້ນ ແລະ ຈາກນັ້ນຈຶ່ງສະໜອງການຈັດຕັ້ງຂະບວນວິວັດແຫ່ງການຜະລິດ. ໃນຂະແໜງຕ່າງໆ ຊຶ່ງລະບົບຈັກນັ້ນ ໄດ້

ໃຊ້ກ່ອນໝູ່ໝົດ [1]). ແຕ່ຄວາມແຕກຕ່າງກັນທາງທາດແທ້ປະກົດອອກ

---

໑) ກ່ອນສະໄໝຊຸດສາຫະກຳໃຫຍ່, ໂຮງງານຫັດຖະກຳຂົນສັດ ກວມທ່າດີຢູ່ອັງກິດ, ສະນັ້ນໃນເຄິ່ງຕົ້ນຂອງສະຕະວັດ XVIII, ບັນດາການທົດສອບແລະທົດລອງໃນພາກຕົວຈິງກ່ຽວກັບຊຸດສາຫະກຳຂົນສັດ ກໍມີຜົນໃຫ້ແກ່ຊຸດສາຫະກຳຝ້າຍຊຶ່ງການປຸງແຕ່ງດ້ວຍຈັກມັນຮຽກ ຮ້ອງຕ້ອງການບັນດາວຽກງານກະກຽມທີ່ໜັກໜ່ວງກ່ວາ, ແລະໃນພາຍໜ້ານັ້ນກໍເຊັ່ນດຽວກັນ, ການຕຳແຜ່ນ ແລະ ກົງກັນຂ້າມການປັ່ນຝ້າຍ ດ້ວຍຈັກ ກໍເປັນພື້ນຖານໃຫ້ແກ່ຊຸດສາຫະກຳຂົນສັດທີ່ໃຊ້ຈັກ. ວຽກງານ ສະເພາະລາຍຈຳນວນໜຶ່ງຂອງໂຮງງານຫັດຖະກຳກ່ຽວກັບຂົນສັດ, ສົມມຸດການຜັດຂົນສັດ, ຈົນມານໍ່ໆນີ້ຈຶ່ງນຳມາໝູນໃຊ້ເຂົ້າລະບົບໂຮງຈັກ. " ການໝູນໃຊ້ຈັກເຂົ້າການຜັດຂົນສັດ...ປະຕິບັດດ້ວຍຂະໜາດໃຫຍ່ນັບຕັ້ງແຕ່ເນື່ອໃຊ້ຈັກຜັດ, ພິເສດແມ່ນຈັກຜັດຂອງ ວິສເຕີ... ໄດ້ນຳເອົາຜົນໄດ້ຢ່າງຈະແຈ້ງໃນການເຮັດໃຫ້ກຳມະກອນຈຳນວນສ່ວນ ໃຫຍ່ຕ້ອງ ວ່າງງານ. ກ່ອນໜ້ານັ້ນການຜັດຂົນສັດແມ່ນເຮັດດ້ວຍມື, ຕາມທຳມະດາກຳມະກອນຜັດຂົນສັດຈະເຮັດຢູ່ເຮືອນ. ປະຈຸບັນນີ້ການຜັດຂົນສັດແມ່ນເຮັດຢູ່ໃນໂຮງຈັກ, ແລະການຜັດຂົນສັດດ້ວຍມືຖືກເລີກລ້າງ , ເວັ້ນເສຍແຕ່ສິນຄ້າຊະນິດພິເສດ ຊຶ່ງຄົນທັງຫລາຍມັກໃຊ້ຂົນສັດ ທີ່ຜັດດ້ວຍມື. ກຳມະກອນຜັດຂົນສັດດ້ວຍມືຫລາຍຄົນມີວຽກເຮັດໃນໂຮງຈັກ, ແຕ່ຜະລິດຕະພັນທີ່ເອົາເປັນຜູ້ຜະລິດອອກນັ້ນຖ້າປຽບກັບຜະລິດຕະພັນ ທີ່ເຮັດດ້ວຍຈັກນັ້ນແມ່ນບໍ່ມີຫລາຍປານໃດ ສະນັ້ນກຳມະກອນຈຳນວນ==)

ໂດຍທັນທີ. ໃນໂຮງງານຫັດຖະກຳ, ແຕ່ລະຂະບວນວິວັດ ພາກສ່ວນລ້ວນແຕ່ແມ່ນເປັນຂະບວນວິວັດເຮັດດ້ວຍມືໂດຍແມ່ນແຕ່ລະບຸກຄົນຫລືແຕ່ລະຈຸກກຳມະກອນດຳເນີນໄປດ້ວຍເຄື່ອງມືຕ່າງໆຂອງເຂົາ. ຖ້າຢູ່ນີ້ , ຊາວກຳມະກອນເໝາະສົມກັບວຽກງານໃດໜຶ່ງ, ວຽກງານນັ້ນກໍໄດ້ຈັດລຽງກ່ອນ ເພື່ອເໝາະສົມກັບກຳມະກອນຜູ້ນັ້ນແລ້ວ. ຫລັກການອັດຕະວິໄສນັ້ນໃນການແບ່ງງານບໍ່ຍືນຍົງຄືຕົວໃນການຜະລິດດ້ວຍ ເຄື່ອງຈັກອີກ. ຫລັກການດັ່ງກ່າວໄດ້ກາຍເປັນຫລັກການພາວະວິໄສ, ໝາຍຄວາມວ່າມັນບໍ່ຖືກຜູກພັນເຂົ້າພອນສະຫວັນເອກະຊົນຂອງຊາວ ກຳມະກອນອີກ, ຂະບວນວິວັດທັງໝົດໄດ້ຮັບການກວດສອບ, ໂດຍອີງໃສ່ກະໂຕຂະບວນວິວັດນັ້ນເອງ ແລະ ໄດ້ໄຈ້ແຍກໃນມູນສ່ວນປະກອບເປັນຂະບວນວິວັດ ແລະ ໄລຍະຕ່າງໆຂອງຂະບວນວິວັດ; ແລະ ບັນຫາທີ່ເຮັດແນວໃດ ເພື່ອສົມກັບບັນດາຂະບວນວິວັດນັ້ນເຂົ້ານຳກັນ, ບັນຫານັ້ນໄດ້ຮັບການແກ້ໄຂຈາກພະລະສຶກສາ, ເຄມີສາດ ໑ ). ແລະອື່ນໆ;ເປັນ

---

===) ຄືແນວນັ້ນ ຈຶ່ງບໍ່ສາມາດໃຊ້ເຂົາໄດ້ອີກ ".( Rep.of Insp. of fact ວັນທີ ໓໑.ຕຸລາ ໑໘໕໖, ໜ້າ ໑໖ ).

໑) " ດັ່ງນັ້ນຫລັກການຂອງວິທີອັດຕະໂນມັດແມ່ນ...ປ່ຽນແທນການແບ່ງງານລະຫວ່າງ ບັນດາຊ່າງຫັດຖະກຳດ້ວຍການແບ່ງປັນ ຂະບວນວິວັດໜຶ່ງມາເປັນບັນດາມູນສ່ວນປະກອບເປັນຂອງຂະບວນວິວັດດັ່ງກ່າວ ( ອູເຣ, ປື້ມທີ່ໄດ້ພິສູດ, ເຫລັ້ມ ໑ , ໜ, ໓໐ ).

ທຳມະດາວ່າບໍ່ແມ່ນຄືແນວນັ້ນຈຶ່ງສຳນຶກວ່າທິດສະດີບໍ່ຕ້ອງການມີບົດຮຽນຕົວຈິງທີ່ສະສົມໃນຂະໜາດໜຶ່ງທີ່ໃຫຍ່ໂຕ, ເຮັດໃຫ້ມັນດີວິເສດ. ຈັກພາກສ່ວນແຕ່ລະເຄື່ອງລ້ວນແຕ່ສະໜອງວັດຖຸດິບໃຫ້ແກ່ຈັກພາກສ່ວນ ທີ່ເຮັດຕໍ່ ແລະ ກໍ່ຍອມວ່າຈັກພາກສ່ວນທັງໝົດເຫລົ່ານັ້ນຕ່າງກໍ ເຄື່ອນເໜັງພາບດຽວ ແລະ ເຂົ້າແກັບເຂົ້າເກຍກັນ, ສະນັ້ນຜະລິດຕະພັນບໍ່ວ່າຍາມໃດມັນກໍ່ນອນຢູ່ໃນໄລຍະຕ່າງໆຂອງຂະບວນວິວັດແຫ່ງການ ຜະລິດມັນອອກມາ ແລະ ຢູ່ບັນດາບາດກ້າວຂ້າມຜ່ານ ແຕ່ໄລຍະນີ້ມາ ຫາໄລຍະອື່ນ. ໃນໂຮງງານຫັດຖະກຳ, ການຮ່ວມມືໂດຍກົງລະຫວ່າງບັນດາກຳມະກອນພາກສ່ວນໄດ້ສ້າງບັນດາອັດຕາສ່ວນທີ່ແນ່ນອນ ລະຫວ່າງກຳມະກອນຍ່ອມຕ່າງໆດ້ວຍກັນ, ໃນລະບົບຈັກກໍເຊັ່ນດຽວກັນນັ້ນ,ການທີ່ບັນດາຈັກພາກສ່ວນສ້າງໃຫ້ກັນມີວຽກຢູ່ສະເໝີນັ້ນ ສ້າງອັດຕາ ສ່ວນໜຶ່ງທີ່ແນ່ນອນລະຫວ່າງປະລິມານ, ຂະໜາດ ແລະ ອັດຕາ ຄວາມໄວ [1] ຂອງຈັກເຫລົ່ານັ້ນ. ຈັກເຮັດວຽກສົມທົບ - ປະຈຸບັນນີ້ ແມ່ນລະບົບໜຶ່ງທີ່ເຂົ້າແກັບເຂົ້າເກຍຢ່າງເຂົ້າຈັງຫວະຊຶ່ງປະກອບດ້ວຍ ຈັກເຮັດວຽກທີ່ຕ່າງກັນຫລືຍ່ອມຈັກຕ່າງໆ ທີ່ຕ່າງກັນ - ຍິ່ງກາຍເປັນ ສົມບູນກວ່າ, ຕາບໃດທີ່ການເຄື່ອນເໜັງສັງລວມຂອງມັນຍັງລຽນຕິດ , ໝາຍຄວາມວ່າວັດຖຸດິບໄດ້ສົ່ງຕໍ່ແຕ່ໄລຍະຕົ້ນເຖິງໄລຍະທ້າຍຍັງບໍ່ ຖືກຕັດຕອນປານໃດ, ດັ່ງນັ້ນໝາຍຄວາມວ່າຕາບໃດທີ່ວັດຖຸດິບ ຍັງແມ່ນເຄື່ອງຈັກສົ່ງໄປຫາກໍ່ແມ່ນຝາມືຂອງຄົນສົ່ງໄປ. ດັ່ງນັ້ນ ຖ້າຫລັກການ

---

໑) Cilérité (ພ.ປ.).

ໃນໂຮງງານຫັດຖະກຳແມ່ນແຍກບັນດາຂະບວນວິວັດທີ່ຕ່າງຫາກ ອອກຈາກກັນດ້ວຍການແບ່ງງານ, ກົງກັນຂ້າມ, ຫລັກການໃນໂຮງຈັກແມ່ນການຕໍ່ເນື່ອງໂດຍບໍ່ຂາດຕອນຂອງຂະບວນວິວັດເຫລົ່ານັ້ນ.

ລະບົບເຄື່ອງຈັກໜຶ່ງເຖິງແມ່ນກໍ່ສ້າງຂຶ້ນບົນພື້ນຖານການຮ່ວມມືອັນງ່າຍດາຍຂອງບັນດາຈັກເຄື່ອງມືຊະນິດດຽວ, ເຊັ່ນໃນການຕຳແພ່ນ , ຫລືກໍ່ສ້າງບົນພື້ນຖານປະສານສົມທົບເຄື່ອງຈັກຕ່າງໆທີ່ຕ່າງກັນເຊັ່ນ ໃນການປັ່ນຝ້າຍ, ດ້ວຍມັນເອງມັນກໍແມ່ນຈັກອັດຕະໂນມັດໃຫຍ່, ເມື່ອມັນຖືກເຄື່ອນເໜັງດ້ວຍກົນຈັກໃຈກາງທີ່ອັດຕະໂນມັດ. ຢ່າງໃດກໍດີ, ລະບົບຈັກທັງໝົດສາມາດແລ່ນໄດ້ດ້ວຍຈັກອາຍນ້ຳເຄື່ອງໜຶ່ງ, ເຖິງວ່າວຽກງານຈຳນວນໜຶ່ງຂອງຈັກຮັດວຽກຈຳນວນໜຶ່ງຍັງຄົງຕ້ອງ ການມືນາຍຊ່າງກໍຕາມ, ປະການດັ່ງກ່າວໃນເມື່ອກ່ອນນັ້ນໄດ້ເກີດຂຶ້ນ ໃນໂຮງຈັກປັ່ນຝ້າຍທີ່ມີຕໍ່ການເຄື່ອນເໜັງຈຳນວນໜຶ່ງໃນປະຈຸບັນ ໂດຍແມ່ນຈັກປັ່ນຝ້າຍແບບອັດຕະໂນມັດຮັບຜິດຊອບ ແລະ ຢູ່ໃນບັນດາ ໂຮງຈັກປະດິດແຕ່ງຊິ້ງພາກສ່ວນຈຳນວນໜຶ່ງຂອງບັນດາຈັກຮັດວຽກ ຕ້ອງໄດ້ຮັບການກຳກັບຈາກກຳມະກອນເຊັ່ນດຽວກັບເຄື່ອງມືທີ່ງ່າຍດາຍ , ກອນ slide rest [໑]) ໄດ້ຮັບການດັດປ່ຽນເປັນ ອັດຕະໂນມັດ. ເມື່ອຈັກຮັດວຽກຮັບຜິດຊອບບັນດາການເຄື່ອນເໜັງ ທີ່ຈຳເປັນທັງໝົດ ເພື່ອປຸງແຕ່ງວັດຖຸດິບຊຶ່ງບໍ່ຕ້ອງການເຖິງຝາມືຂອງ ຄົນແລະ ພຽງແຕ່ຕ້ອງການຄົນໃນເມື່ອວຽກສຳເລັດລົງແລ້ວ, ດັ່ງນັ້ນ ໃນ

---

໑) ເພົາກົງ (ພ.ປ.).

ຂະນະນັ້ນເຮົາຈຶ່ງມີລະບົບຈັກອັດຕະໂນມັດໜຶ່ງທີ່ແທ້ຈິງ, ຢ່າງໃດກໍ່ ດີ ລະບົບເຄື່ອງຈັກອັດຕະໂນມັດດັ່ງກ່າວຍັງຄົງສາມາດໃນການ ດັດແປງ ຢ່າງເປັນປະຈຳກ່ຽວກັບລາຍລະອຽດຢູ່. ສົມມຸດດັ່ງດຽວກັນນັ້ນຄືເຄື່ອງ ຈັກອັດຕະໂນມັດໃນການຫ້າມຈັກນວດ ( Drawing flame ) ເຂົ້າ, ເມື່ອເສັ້ນຂາດ, ແລະ Self-acting stop,[1]

ຫ້າມຈັກຕຳແຜ່ນທີ່ແລ່ນດ້ອຍອາຍນ້ຳໂດຍທັນທີເມື່ອເສັ້ນ ຝ້າຍທາງນອນອອກຈາກຫລອດສອຍເຂົ້ານອນຢູ່ໃນກະສວຍ, ລ້ວນແຕ່ ແມ່ນການຄິດປະດິດທີ່ມີປະຈຸບັນໂດຍສົມບູນ. ໂຮງຈັກຜະລິດເຈ້ຍທີ່ມີປະ ຈຸບັນສາມາດເປັນຕົວຢ່າງໜຶ່ງກ່ຽວກັບຄວາມລຽນຕິດໃນການຜະລິດກໍ່ຄື ໃນການນຳໃຊ້ຫລັກມູນອັດຕະໂນມັດ. ເວົ້າລວມການຜະລິດເຈ້ຍ ຊ່ວຍ ໃຫ້ເຮົາສາມາດຄົ້ນຄວ້າຄວາມແຕກຕ່າງກັນລະຫວ່າງແບບວິທີການ ຜະ ລິດຕ່າງໆຢ່າງອຳນວຍຄວາມສະດວກ ແລະ ລະອຽດ ( ຄວາມ ແຕກ ຕ່າງກັນນີ້ອີງບົນຄວາມແຕກຕ່າງກັນກ່ຽວກັບພາຫະນະແຫ່ງການຜະລິດ) ກໍ່ເຊັ່ນດຽວກັບການຄົ້ນຄວ້າສາຍພົວພັນລະຫວ່າງເງື່ອນໄຂທາງ ສັງຄົມ ຕ່າງໆ ຂອງການຜະລິດ ແລະ ແບບວິທີການເຕັກນິກຂອງການ ຜະລິດ ຈິງຢູ່, ການປະດິດເຈ້ຍຕາມແບບເກົ່າຢູ່ເຢລະມັນແມ່ນເປັນ ຕົວຢ່າງ ໜຶ່ງກ່ຽວກັບການຜະລິດຫັດຖະກຳຢູ່ຮອນລັງໃນສະຕະວັດ x(/// ແລະ ຢູ່ຝະລັ່ງໃນສະຕະວັດ x(//// ກໍ່ໄດ້ໃຫ້ເຮົາເຫັນໂຮງງານ ຫັດຖະກຳຫລວງ, ແລະ ໃນສູ່ມື້ນີ້, ປະເທດອັງກິດກໍ່ໃຫ້ເຮົາເຫັນ ວິທີ

---

໑) ຈັກຫ້າມອັດຕະໂນມັດ (ພ.ປ.).

ປະດິດແບບອັດຕະໂນມັດ; ຢູ່ອິນເດຍ ແລະ ຢູ່ຈີນໃນປະຈຸບັນ, ຄົນທັງຫລາຍຍັງເຫັນຮູບການຕ່າງໆອັນເກົ່າກ່ອນຂອງຊຸດສາຫະກຳຜະລິດເຈ້ຍດັ່ງກ່າວ.

ລະບົບຈັກຮັດວຽກອັດຕະໂນມັດເຄື່ອນເໜັງໄດ້ຈາກການສົ່ງກຳລັງຂອງຈັກອັດຕະໂນມັດສູນກາງຊຶ່ງແມ່ນຮູບຖານທີ່ຂະຫຍາຍຕົວກ່ວາໝູ່ຂອງເຄື່ອງຈັກຜະລິດ. ເຄື່ອງຈັກເອກະເທດໄດ້ຖືກແທນທີ່ດ້ວຍຈັກ ມະໂຫຖານເຄື່ອງໜຶ່ງຊຶ່ງຕີນຂອງມັນໃຫຍ່ໂຕກວມເອົາທົ່ວທັງຫອງ ໜຶ່ງຂອງໂຮງຈັກ; ກຳລັງແປກປະຫລາດຂອງມັນທຳອິດຍັງໄດ້ປິດບັງ ພາຍໃຕ້ການເຄື່ອນເໜັງອັນເຂົ້າຈັງຫວະແລະເກືອບຄືວ່າຄຶກຄື້ນຂອງຕີນ ມືທີ່ໃຫຍ່ໂຕຂອງມັນ. ແຕ່ຕົ້ນມານັ້ນຈຶ່ງປະກົດອອກຢ່າງຈະແຈ້ງໃນ ການເຄື່ອນເໜັງທີ່ອຶກກະທຶກ ແລະ ປື້ນວຽນຂອງອະໄວຍະວະສົ່ງອາຍຮັດວຽກຂອງມັນໂດຍບໍ່ຈັກວ່າເທົ່າໃດເຄື່ອງ.

ມີຈັກຕຳແຜ່ນ. ຈັກອາຍນ້ຳຕ່າງໆ, ແລະ ອື່ນໆ ແລ້ວຈຶ່ງມີ ບັນດາຊ່າງກຳມະກອນວິຊາສະເພາະທຳການປະດິດແຕ່ງຈັກເຫລົ່ານັ້ນ. ບັນດາການຄິດປະດິດໃຫຍ່ຂອງໂວການຊັງ, ອັດເກີຣາຍຕີ, ວາດ, ແລະ ອື່ນໆ, ສາມາດນຳເອົາປະຍຸກໃຊ້ໄດ້ກໍ່ເມື່ອສະໄຫມໂຮງງານ ຫັດຖະກຳໄດ້ປະຊ່າງຈັກທີ່ຊຳນິຊຳນານໄວ້ເປັນຈຳນວນສ່ວນໃຫຍ່. ບັນດາກຳມະກອນເຫລົ່ານີ້ຊຶ່ງກ່ອນໜ້ານັ້ນແມ່ນບັນດາຊ່າງຫັດຖະກຳທີ່ເອກະລາດ ແລະ ຮັດຫລາຍວິຊາຊີບທີ່ຕ່າງກັນ, ຫລືວ່າໄດ້ເຕົ້າໂຮມໃນໂຮງງານ ຫັດຖະກຳຕ່າງໆທີ່ມີການຈັດຕັ້ງຢ່າງແໜ້ນແຟ້ນຕາມຫລັກການແບ່ງງານ. ບັນດາການຄິດປະດິດ ແລະ ຄວາມຮຽກຮ້ອງກ່ຽວກັບເຄື່ອງຈັກຄ່ອຍ ໆ

ທະວີຂຶ້ນຕື່ມ, ດັ່ງນັ້ນການປະດິດແຕ່ງເຄື່ອງຈັກກໍ່ຄ່ອຍໆໄດ້ຮັບການແບ່ງປັນເປັນຂະແໜງການຕ່າງໆ ທີ່ຕ່າງກັນ ແລະ ເອກະລາດ, ແລະ ການແບ່ງງານໃນແຕ່ລະຂະແໜງການກໍ່ຄ່ອຍໆຂະຫຍາຍຕົວ ຢ່າງເໝາະສົມນຳ. ດັ່ງນັ້ນ ໃນດ້ານປະຫວັດສາດ, ໂຮງງານຫັດຖະ ກຳ ແມ່ນພື້ນຖານເຕັກນິກຂອງພື້ນຖານອຸດສາຫະກຳໃຫຍ່.

ໃນຂົງເຂດການຜະລິດຕ່າງໆ ຊຶ່ງຄົນເອົາໃຊ້ເຄື່ອງຈັກຕ່າງຕ່າງ ໂດຍແມ່ນໂຮງງານຫັດຖະກຳເປັນທີ່ສະໜອງນັ້ນ, ພື້ນຖານອຸດ ສະຫະກຳໃຫຍ່ພ້ອມກັບເຄື່ອງຈັກຕ່າງໆຂອງກະໂຕໂຮງງານຫັດຖະກຳເອງໄດ້ຢຶດເອົາຖານະຂອງໂຮງງານຫັດຖະກຳ. ພື້ນຖານອຸດສາຫະກຳ ເຄື່ອງຈັກໄດ້ສ້າງຂຶ້ນ ບົນພື້ນຖານວັດຖຸທີ່ບໍ່ເໝາະສົມ ຊຶ່ງມັນສ້າງຂຶ້ນ ໂດຍກ່ອນອື່ນໝົດ ພາຍໃຕ້ຮູບການທີ່ສືບມາແຕ່ບູຮານ, ແຕ່ຕໍ່ມານັ້ນມັນ ຈຳເປັນຕ້ອງດັດແປງໄປ ແລະປະຕິບັດຕາມຫລັກມູນຂອງກະໂຕເອງ, ເມື່ອມັນໄດ້ບັນລຸເຖິງລະດັບທີ່ຊຳໜິຊຳນານໃດໜຶ່ງ.

ເຄື່ອງຈັກຮັດວຽກຍັງອ່ອນແອ, ໃນຕາບໃດທີ່ຜູ້ຄົນເປັນແມ່ແຮງເດີມຂອງມັນ, ແລະ ລະບົບເຄື່ອງຈັກຍັງກ້າວໄປຊ້າ, ໃນຕາບໃດ ທີ່ບັນດາແມ່ແຮງເດີມທີ່ສືບມາແຕ່ບູຮານ ໝາຍຄວາມວ່າ ສັດລ້ຽງ, ລົມພັດ ແລະ ລວມທັງນ້ຳເອງອີກ, ຍັງຄົງບໍ່ທັນມີຈັກອາຍນ້ຳມາແທນທີ່ ; ພື້ນຖານອຸດສາຫະກຳໃຫຍ່ກໍ່ເຊັ່ນດຽວກັນນັ້ນ, ມັນຄືບໜ້າຢ່າງຊັກຊ້າ, ໃນຕາບໃດຊຶ່ງພາຫະນະແຫ່ງການຜະລິດທີ່ພິເສດຂອງມັນ, ໝາຍຄວາມວ່າກະໂຕເຄື່ອງຈັກ, ຍັງຄົງອາໄສເຫື່ອແຮງ ແລະ ຄວາມສາມາດ ທີ່ຄ່ອງແຄ້ວຂອງຜູ້ຄົນຈຶ່ງຍືນຍົງຄົງຕົວໄດ້ ແລະ ຈາກນັ້ນມັນຍັງຄົງຂຶ້ນກັບ

ການຂະຫຍາຍຕົວຂອງການເນື້ອ, ໃສ່ໜ່ວຍຕາ, ໃສ່ຄວາມຄ່ອງແຄ້ວຂອງຝາມືຂອງນາຍຊ່າງຫັດຖະກຳເອກະລາດຫລືຂອງກຳມະກອນ ພາກສ່ວນຂອງໂຮງງານຫັດຖະກຳພູ້ໝູນໃຊ້ບັນດາເຄື່ອງມືເລັກໆນ້ອຍໆຂອງເຂົາເອງ.

ນອກຈາກຄວາມແພງຂອງລາຄາເຄື່ອງຈັກຕ່າງໆທີ່ຜະລິດດ້ວຍວິທີດັ່ງກ່າວແລ້ວ - ແລະ ອັນນັ້ນແມ່ນວຽກຂອງນາຍທຶນອຸດສາຫະກຳ-ບັນດາບາດກ້າວໜ້າຂອງບັນດາຂະແໜງການອຸດສາຫະກຳໄດ້ຖືກ ກໍ່ສ້າງຂຶ້ນ ບົນພື້ນຖານແຫ່ງແບບວິທີການຜະລິດດ້ວຍເຄື່ອງຈັກ ແລະການໝູນໃຊ້ແບບວິທີການຜະລິດດັ່ງກ່າວເຂົ້າໃນບັນດາຂະແໜງການໃໝ່, ລ້ວນແຕ່ຕ້ອງປະຕິບັດຕາມເງື່ອນໄຂອັນດຽວນີ້ຢ່າງເຕັມສ່ວນຄື : ການເພີ່ມທະວີຈຳນວນກຳມະກອນວິຊາສະເພາະຂຶ້ນ, ຊຶ່ງກຳມະກອນຈຳນວນດັ່ງກ່າວນີ້ໂດຍຍ້ອນວ່າລັກສະນະເຄິ່ງສິລະປະກຳຂອງແຮງງານຂອງເຂົາ, ສະນັ້ນຈຶ່ງພຽງແຕ່ສາມາດເພີ່ມຂຶ້ນໂດຍຊ້າທີ່ສຸດ.

ແນວນັ້ນກໍຍັງບໍ່ທັນແມ່ນວ່າສິ້ນສຸດເທື່ອ: ເມື່ອຂະຫຍາຍຕົວ ເຖິງລະດັບໃດໜຶ່ງ, ພື້ນຖານອຸດສາຫະກຳໃຫຍ່ຈະເກີດປະທະກັບ, ລວມທັງທາງດ້ານເຕັກນິກສາດ, ກັບພື້ນຖານຂອງມັນ, ພື້ນຖານຊຶ່ງໂດຍ ແມ່ນຫັດຖະກຳ ແລະ ໂຮງງານຫັດຖະກຳສ້າງຂຶ້ນ.

ຂະໜາດຂອງຈັກກຳເນີດແຮງ ແລະ ຈັກສົ່ງແຮງ, ນັບມື້ ນັບໃຫຍ່ຂຶ້ນ; ຈັກເຮັດວຽກນັບມື້ນັບມີຫລາຍຊະນິດ : ການປະກອບ ສ້າງຂອງຈັກເຫລົ່ານັ້ນນັບມື້ນັບສັບສົນ, ຈຳນວນ, ລັກສະນະຫລາຍຮູບຫຼາຍສີ ແລະ ຄວາມແບບນຽບຂອງບັນດາ ນູນສ່ວນປະກອບເປັນເຄື່ອງ ຈັກ

ເຫລົ່ານັ້ນມັນຮຽກຮ້ອງຕ້ອງແມ່ນຢຳຢ່າງສູດຂີດເມື່ອເຄື່ອງຈັກເຫລົ່ານັ້ນນັບມື້ນັບຕ່າງຮູບແບບ ໂດຍແມ່ນຫັດຖະກຳສ້າງຂຶ້ນນັ້ນ ແລະ ກາຍເປັນຄວາມບໍ່ເໝາະສົມກັບບັນດາຮູບການຊຶ່ງໄດ້ກຳໜົດໄວ້ດ້ວຍບັນດາ ພາລະບົດບາດແຫ່ງກົນຈັກ ໑ ) ໂດຍລວມໆ ຂອງເຄື່ອງຈັກດັ່ງກ່າວ ; ບາດກ້າວຂຶ້ນຂອງລະບົບ ອັດຕະໂນມັດ ແລະ ການໃຊ້ບັນດາພາຫະນະທີ່ປຸງແຕ່ງຍາກ, ສົມມຸດຄືໃຊ້ເຫລັກແທນໃຫ້ໄມ້; ການແກ້ໄຂ ບັນຫາຕ່າງໆດັ່ງກ່າວທັງໝົດນັ້ນ - ບັນຫາຕ່າງໆ ຊຶ່ງສະພາບການໄດ້ຄ່ອຍໆໃຫ້ ກຳເນີດຂຶ້ນ: - ມັກປະສົມກັບບັນດາເສັ້ນຂີດຂັ້ນຢູ່ສະເໝີອັນແມ່ນຄວາມອາດສາມາດຂອງຜູ້ຄົນ, ຊຶ່ງລວມທັງຜູ້ອອກແຮງງານແບບ ລວມໝູ່ນັ້ນເອງຂອງໂຮງງານຫັດຖະກຳກໍບໍ່ສາມາດແກ້ໄຂໄດ້. ຈຶ່ງຢູ່, ໄດ້ມີຈັກຕ່າງໆ, ເຊັ່ນຈັກພິມໃກປະຈຸບັນ, ຈັກຕຳແຜ່ນທີ່ແລ່ນດ້ວຍອາຍ ນ້ຳ ແລະ ຈັກຜັດຂົນສັດນັ້ນ, ໂຮງງານຫັດຖະກຳບໍ່ສາມາດສະໜອງໄດ້.

ການປະຕິວັດແບບວິທີແຫ່ງການຜະລິດໃນຂົງເຂດ ອຸດສາຫະກຳໜຶ່ງນີ້ລາກແກ່ການປະຕິວັດທີ່ຄ້າຍໆກັນໃນຂົງເຂດອຸດສາຫະກຳອື່ນພ້ອມ

---

໑) ຈັກຕຳແຜ່ນໜ່ວຍທຳອິດແມ່ນເຮັດດ້ວຍໄມ້ເປັນຕົ້ນຕໍ; ສ່ວນຈັກຕຳແຜ່ນໃກປະຈຸບັນໄດ້ຮັບການດັດແປງນັ້ນແມ່ນເຮັດດ້ວຍເຫລັກ . ຢາກສັງເກດນັບຕັ້ງແຕ່ຕົ້ນກ່ຽວກັບຮູບການເກົ່າຂອງພາຫະນະແຫ່ງການຜະລິດນັ້ນໄດ້ສິ່ງຜົນສະທ້ອນແນວໃດເຖິງຮູບການໃໝ່, ດັ່ງນັ້ນພຽງແຕ່ຕ້ອງປຽບທຽບອັນພາຍນອກຂອງຈັກຕຳແຜ່ນໃກປະຈຸບັນກັບຈັກຕຳ ແຜ່ນໜ່ວຍເກົ່າ, ປຽບທຽບບັນດາເຄື່ອງພັດລົມໃກປະຈຸບັນໃນໂຮງ ===)

ນຳ. ຄົນທັງຫລາຍກໍເຫັນສະພາບການດັ່ງກ່າວກ່ອນໝູ່ໃນບັນດາ ຂະແໜງການອຸດສາຫະກຳທີ່ເສື່ອມແໜ້ນນຳກັນເປັນບັນດາໄລຍະຂອງຂະບວນວິວັດສັງລວມໜຶ່ງ, ເຖິງແມ່ນວ່າການແບ່ງງານໃນສັງຄົມໄດ້ແຍກຂະແໜງການເຫລົ່ານັ້ນອອກ ແລະ ໄດ້ຜັນຜະລິດຕະພັນຈຳນວນ ເທົ່າໃດຂອງບັນດາຂະແໜງການດັ່ງກ່າວເປັນສິນຄ້າເອກະລາດ ຈຳນວນເທົ່ານັ້ນ. ສະນັ້ນໂຮງງານເຂັນຝ້າຍໄດ້ເຮັດໃຫ້ໂຮງຕ່ຳແຜ່ນກາຍເປັນສິ່ງຈຳເປັນ ແລະ ທັງສອງນັ້ນຕ່າງກໍພາໄປເຖິງການປະຕິວັດກົນຈັກ - ເຄມີສາດໃນຂະແໜງການ ໃບບັດ, ພິມ ແລະ ຍ້ອມແພ. ການປະຕິວັດໃນຂະແໜງການປັ່ນຝ້າຍກໍເຊັ່ນດຽວກັນນັ້ນ, ມັນໄດ້ພາໄປ ເຖິງການຄິດປະດິດຈັກກື້ອຝ້າຍອອກ ທັງນີ້ກໍເພື່ອແຍກໃນອອກຈາກຝ້າຍ. ມີແຕ່ການຄິດປະດິດນີ້ຈຶ່ງເຮັດໃຫ້ຄົນເຮົາມີຄວາມສາມາດໃນການ ຜະລິດຝ້າຍ ໃນຂະໜາດໜຶ່ງທີ່ໃຫຍ່ທີ່ສຸດ ສິ່ງທີ່ໃນປະຈຸບັນກາຍເປັນ ສິ່ງທີ່

---

===) ຈັກຫລໍ່ເຫລັກດ້ວຍຈັກສູບທີ່ໜັກໜາຊັກຊາ ຊຶ່ງອາດພາບຕາມເຄື່ອງ ທຳມະດາເປັນເຄື່ອງທຳອິດ ; ແລະ ຍິ່ງກວ່ານັ້ນ, ພຽງແຕ່ຕ້ອງຈື່ຄືນວ່າໜຶ່ງໃນບັນດາຫົວຈັກລົດໄຟທີ່ລົດລອງ ເປັນເທື່ອທຳອິດມີສອງຂາ , ຂານີ້ກ້າວຍ່າງແລ້ວ ຂານັ້ນຈຶ່ງຍ່າງຕໍ່ຄືໂຕມ້າ , ກໍເຫັນແຈ້ງພໍແຮງແລ້ວ . ຕ້ອງມີບົດຮຽນຕົວຈິງອັນຍາວນານ ແລະ ວິທະຍາສາດໜຶ່ງທີ່ກ້າວໜ້າ ; ດັ່ງນັ້ນ ຮູບການຈິ່ງໄດ້ຮັບການ ຊີ້ຂາດດ້ວຍຫລັກມູນກຳລັງສາດໂດຍສິ້ນເຊີງ ຈາກນັ້ນຈຶ່ງພົ້ນອອກຈາກຮູບການທີ່ສືບມາແຕ່ບູຮານໂດຍສົມບູນ.

ຈຳເປັນ ໑). ການປະຕິວັດໃນອຸດສາຫະກຳ ແລະ ກະສິກຳ ໄດ້ຮຽກຮ້ອງຕ້ອງການມີການປະຕິວັດໜຶ່ງໃນບັນດາເງື່ອນໄຂລວມຂອງຂະບວນວິວັດແຫ່ງການຜະລິດຂອງສັງຄົມ, ໝາຍຄວາມວ່າໃນພາຫະນະຕ່າງໆໃນການຄົມມະນາຄົມ ແລະ ຂົນສົ່ງ. ພາຫະນະຕ່າງໆ ໃນການຄົມມະນາຄົມ ແລະ ຂົນສົ່ງຂອງສັງຄົມໜຶ່ງຊຶ່ງເອົາພື້ນຖານກະສິກຳນ້ອຍເປັນເສົາຄ້ຳ ໒ ) ດັ່ງຄຳພູຣີເອ ໄດ້ເວົ້າ, ແລະ ມີພື້ນຖານ ເສດຖະກິດຄອບຄົວ ແລະ ຫັດຖະກຳ ແຫ່ງກຳແພງນະຄອນຊູ້ປະຖ້ຳຄ້ຳຊູ, ແມ່ນບໍ່ພໍໂດຍສົມບູນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພື້ນຖານຜະລິດຂອງໂຮງງານຫັດຖະກຳ, ດ້ວຍການແບ່ງງານສັງຄົມເປີດກ້ວາງດ້ວຍການເຕົ້າໂຮມກຳມະກອນ ແລະ ຫລ່ຽມລາຍອອກແຮງງານ, ດ້ວຍບັນດາຕະຫລາດທົ່ວເມືອງຂຶ້ນຂອງມັນ, ຈຶ່ງວ່າຕ້ອງດັດແປງ ພາຫະນະ

---

໑= ຈົນມາເຖິງປະຈຸບັນນີ້, ຈັກອົ້ວຝ້າຍຂອງຊາວອາເມລິກາແອນອີລິດໄນແມ່ນຈັກທີ່ຖືກປ່ຽນແປງທາງທາດແທ້ໜ້ອຍກວ່າບໍ່ວ່າຈັກຊະນິດໃດໆ ໃນສະຕະວັດ X(////. ແຕ່ລະຫວ່າງ໒໐ປີມານີ້, ຊາວອາເມລິກາຜູ້ອື່ນ ຜູ້ໜຶ່ງ, ອາເຣີຢູ້ອານບານີ (ນິວຢອກ) ໄດ້ຣັດໃຫ້ຈັກຂອງວິໄນ ກາຍເປັນສິ່ງທີ່ຖິ້ມໄປ, ຍອມວ່າດັດແປງມັນໃຫ້ທັງວ່າຍດາຍທັງມີຄວາມສັກສິດ.

໒) ອ່ານຕື່ມ : ພູຣີເອ : Traité de l'association domestique agricole ou straction industrielle ເຫລັ້ມ ໑, ໜ້າ ໒໖໑, ໕໙໗ ແລະ ອື່ນໆ, ປາຣີ, ໑໘໒໒. (ບ.ກ.).

ຕ່າງໆ ທາງຄົມມະນາຄົມ ແລະ ຂົນສົ່ງເຫລົ່ານັ້ນໄປ. ພາຫະນະ ຄົມມະນາຄົມ ແລະ ຂົນສົ່ງຊຶ່ງແມ່ນສະໄໝໂຮງງານຫັດຖະກຳປະໄວ້ນັ້ນກໍເຊັ່ນດຽວກັນ, ພາຫະນະເຫລົ່ານັ້ນບໍ່ພໍເທົ່າໃດກໍໄດ້ກາຍເປັນອຸປະສັກທີ່ບໍ່ອາດທົນທານໄດ້ສຳລັບອຸດສາຫະກຳໃຫຍ່ຊຶ່ງແມ່ນພື້ນຖານອຸດສາຫະກຳທີ່ຜະລິດອອກຫລາຍທົບຮ້ອຍເທົ່າດ້ວຍຄວາມໄວທີ່ພິລຶກພິລັ່ນ, ຊຶ່ງມັນລົງທຶນຢ່າງບໍ່ຂາດສາຍແລະໂຍນກຳມະກອນແຕ່ຂົງເຂດການຜະລິດນີ້ມາຫາຂົງເຂດນັ້ນ, ແລະ ມີບັນດາເງື່ອນໄຂໃໝ່ຂອງຕະຫລາດໂລກ ຊຶ່ງມັນສ້າງຂຶ້ນ, ນອກຈາກບັນດາການປ່ຽນແປງພື້ນຖານທີ່ໄດ້ດຳເນີນໃນ ການປະດິດແຕ່ງບັນດາກຳປັ່ນສະເພົາ, ຂະແໜງຄົມມະນາຄົມຂົນສົ່ງ. ຊຶ່ງປະກອບດ້ວຍລະບົບກຳປັ່ນແລ່ນດ້ວຍອາຍນ້ຳ, ທາງລົດໄຟ, ໄປສະນີ, ໄດ້ຄ່ອຍໆເໝາະສົມກັບຄວາມຮຽກຮ້ອງຕ້ອງການຕ່າງໆຂອງພື້ນຖານ ອຸດສາຫະກຳໃຫຍ່. ບັນດາກອນເຫລັກທີ່ໃຫຍ່ໂຕຊຶ່ງໃນຂະນະນັ້ນຕ້ອງເອົາມາຕີ, ຈອດ, ຕັດ, ຝົນ ແລະ ຫລໍ່, ຮຽກຮ້ອງຕ້ອງມີຈັກທີ່ໃຫຍ່ ໂຕມະໂຫຖານຊຶ່ງແຮງງານໃນໂຮງງານຫັດຖະກຳບໍ່ສາມາດປະດິດ ແຕ່ງອອກໄດ້.

ດັ່ງນັ້ນພື້ນຖານອຸດສາຫະກຳໃຫຍ່ຈຳເປັນຕ້ອງ ກຳເອົາເຄື່ອງ ມືຜະລິດຕ່າງຫາກ, ໝາຍຄວາມວ່າກະໂຕເຄື່ອງຈັກເຄື່ອງລານເອງ , ເພື່ອຜະລິດເຄື່ອງຈັກອື່ນໆອອກ, ດັ່ງນັ້ນ, ມັນສ້າງພື້ນຖານ ເຕັກນິກໜຶ່ງທີ່ສົມກັນອອກມາໃຫ້ມັນເອງ ແລະ ຈາກນັ້ນຈຶ່ງສາມາດກ້າວ ຂຶ້ນຢ່າງເປັນເອກະລາດ. ໃນ ໔໐ ປີຕົ້ນສະຕະວັດ XIX , ພື້ນຖານອຸດສາຫະກຳໃຫຍ່ຄ່ອຍໆຄືບໜ້າຂຶ້ນ, ດັ່ງນັ້ນເຄື່ອງຈັກກໍ່ຄ່ອຍໆ ກຳເອົາ

24/7VII ຫ້າມຈຳໜ່າຍ

ການປະດິດແຕ່ງຈັກເຮັດວຽກອອກແລະຈົນຕະຫລອດຮອດຊຸມປີລະຫວ່າງ ກາງຂອງສະຕະວັດດັ່ງກ່າວ, ກິດຈະການກໍ່ສ້າງທີ່ກວ້າງໃຫຍ່ ກ່ຽວກັບ ທາງລົດໄຟ ແລະ ຂະແໜງການຄົມມະນາຄົມທາງທະເລດ້ວຍ ກຳປັ່ນ ຂ້າມມະຫາສະໝຸດຈຶ່ງເຮັດໃຫ້ເຄື່ອງຈັກທີ່ໃຫຍ່ໂຕມະໂຫລານຕ່າງເກີດ ຂຶ້ນຊຶ່ງໃຊ້ໂດຍສະເພາະສຳລັບການຜະລິດບັນດາກົນຈັກກຳເນີດແຮງໃຈ ກາງອອກ.

ເງື່ອນໄຂຕົ້ນຕໍກ່ວາໝູ່ຂອງການໃຊ້ເຄື່ອງຈັກ ເພື່ອປະດິດ ແຕ່ງ ຈັກອອກແມ່ນໂມເຕີໜຶ່ງທີ່ສາມາດມີອັດຕາສະມັດຖະພາບຄົບຂະ ໜາດ ແລະ ພ້ອມກັນນັ້ນກໍກວດກາໄດ້ງ່າຍ. ຈັກອາຍນ້ຳກໍໄດ້ຕອບ ສະໜອງ ເງື່ອນໄຂເຫລົ່ານັ້ນໄດ້. ແຕ່ພ້ອມດຽວກັນນັ້ນກໍຕ້ອງໃຊ້ເຄື່ອງຈັກ ເພື່ອ ຜະລິດບັນດາຮູບການເລຂາຄະນິດທີ່ຈຳເປັນອອກມາໃນພາກສ່ວນ ຈຳ ນວນໜຶ່ງໃນເຄື່ອງຈັກຕ່າງໆ, ເຊັ່ນທາງຊື່, ໜ້າພຽງ, ຮູບມົນ , ກ້ອນຮູບກູບ ແລະ ກ້ອນຮູບມົນ. ຕົ້ນສະຕະວັດນີ້, ຮົງຣິມົດສະໄລ ປະ ດິດ slide rest ອອກມາເພື່ອແກ້ໄຂບັນຫາດັ່ງກ່າວ, ອັນນີ້ໄດ້ ຮັບ ການຊ້ອມແປງມາເປັນອັດຕະໂນມັດໂດຍທັນທີ, ໃນຍາມຕົ້ນມັນພຽງແຕ່ ໄດ້ໃຊ້ເປັນຕັ່ງນັ່ງຂອງຊ່າງກຶງເທົ່ານັ້ນ, ຊຶ່ງບໍ່ພໍເທົ່າໃດມັນຖືກ ສົ່ງໄປ ເຂົ້າບັນດາເຄື່ອງຈັກປະດິດແຕ່ງອື່ນໂລດ. ເຄື່ອງຈັກດັ່ງກ່າວບໍ່ພຽງແຕ່ ແທນທີ່ເຄື່ອງມືຕ່າງຫາກໜຶ່ງ, ຫາກຍັງແທນທີ່ຫົວຝາມືຂອງຄົນອັນແມ່ນ ຝາມືສາມາດຜະລິດບັນດາຮູບການທີ່ແນ່ນອນອອກໄດ້ກໍຕໍ່ເມື່ອໃດຝາມືດັ່ງ ກ່າວບັນຊາ ແລະ ຕັ້ງເບື້ອງຄົມຂອງເຄື່ອງມືໃສ່ເປົ້າໝາຍ ແຮງຈົນ ເທົ່ານັ້ນ. ດ້ວຍເຫດນັ້ນ, ເຂົາຈຶ່ງຮັບຜົນສຳເລັດໃນການຜະລິດ ຮູບ

ການເລຂາຂະນິດອອກໄດ້ທີ່ຕ້ອງມີດ້ວຍລະດັບແມ່ນຢຳດີ, ງ່າຍດາຍ ແລະ ວ່ອງໄວ ເຊິ່ງບໍ່ມີບົດຮຽນຢ່າງໃດທີ່ສະສົມມາສາມາດເຮັດໃຫ້ຝາມືຂອງນາຍຊ່າງຊຳນານທີ່ສຸດມີໄດ້ ໑ ).

ບັດນີ້, ຖ້າພວກເຮົາສັງເກດກວດເບິ່ງໃນເຄື່ອງຈັກທີ່ໃຊ້ໃນການປະດິດແຕ່ງ, ພາກສ່ວນປະກອບເປັນບັນດາອະໄວຍະວະເຮັດວຽກທີ່ແທ້ຈິງຂອງເຄື່ອງຈັກ, ແມ່ນພວກເຮົາພັດເຫັນວ່າພາກສ່ວນດັ່ງກ່າວ ແມ່ນເຄື່ອງໃຊ້ແບບຫັດຖະກຳເມື່ອກ່ອນແຕ່ມັນມີຂະໜາດຕ່າງໆທີ່ໃຫຍ່ໂຕມະໂຫຖານ. ອະໄວຍະວະເຮັດວຽກຂອງຈັກຝຸ່ນເປັນຕົ້ນ, ແມ່ນເຄື່ອງຝຸ່ນໜ່ວຍໜຶ່ງທີ່ມີຂະໜາດອັນໃຫຍ່ໂຕໂດຍແມ່ນຈັກອາຍນ້ຳເຮັດໃຫ້ເຄື່ອນເໜັງ ແລະ ຖ້າວ່າບໍ່ມີເຄື່ອງຝຸ່ນດັ່ງກ່າວກໍບໍ່ສາມາດຝຸ່ນບັນດາ ຊິແລນຂອງບັນດາຈັກອາຍນ້ຳທີ່ໃຫຍ່ໂຕ ແລະ ຂອງບັນດາຈັກໝຶບດ້ວຍພະລັງ

---

໑)The industry of nation, ລອນດອນ, ໑໘໕໕, ພາກ II ໜ້າ ໑໖໙, ໃນປຶ້ມນັ້ນໄດ້ຂຽນວ່າ: "ພາກສ່ວນນັ້ນຂອງຈັກກົງ, ຊຶ່ງເບິ່ງທາງນອກກໍງ່າຍດາຍແລະທຳມະດາສາມັນຄືແນວນັ້ນແຕ່ຖ້າຫາກ ຢືນຢັນຢ່າງສຸດຂາດວ່າຜົນສະທ້ອນຂອງມັນທີ່ມີຕໍ່ການດັດແປງແລະພັດທະ ນາເຄື່ອງຈັກກໍໃຫຍ່ເທົ່າທຽມກັບຜົນສະທ້ອນຂອງການດັດແປງຕ່າງໆ ຂອງວາດທີ່ມີຕໍ່ຈັກອາຍນ້ຳນັ້ນກໍບໍ່ແມ່ນວ່າເວົ້າເກີນຄວນແລ້ວ. ການໃຊ້ ພາກສ່ວນດັ່ງກ່າວໄດ້ພາໄປເຖິງຜົນສຳເລັດກ່າວຄືດັດແປງເຄື່ອງຈັກຕ່າງ ໆ ໄດ້ທັງໝົດ, ອັນໄດ້ລຶດລາຄາສຳເລັດຮູບຂອງເຄື່ອງຈັກລົງແລະ ປູກກະຕຸ້ນນ້ຳໃຈຄິດປະດິດ.

ນ້ຳໄດ້ ຈັກກົງທີ່ມີແຫ່ນຈັກພຽງແຕ່ເປັນການອາດພາບເຄື່ອງກົງ ທຳມະດາດ້ວຍຂະໜາດອັນໃຫຍ່ໂຕມະໂຫຖານເທົ່ານັ້ນ; ຈັກກົບ,ຈຶ່ງສາມາດເວົ້າວ່າມັນເປັນຕົວແທນໃຫ້ຊ່າງເຫລັກຜູ້ໜຶ່ງທີ່ເຮັດເຫລັກດ້ວຍເຄື່ອງມືຕ່າງໆທີ່ຄ້າຍໆຄືເຄື່ອງມືຂອງຊ່າງໄມ້; ເຄື່ອງມືທີ່ຕັດບັນດາແຜ່ນເຫລັກເພື່ອໃຊ້ໃນການຕິດຕັ້ງກຳປັ່ນ, ຢູ່ໃນກິດຈະການຕ່າງໆຢູ່ລອນດອນ , ແມ່ນມີດແຖຊະນິດໜຶ່ງທີ່ໃຫຍ່ໂຕມະໂຫຖານ, ແລະຈັກຄ້ອນຕີທີ່ ເຄື່ອນດ້ວຍອາຍນ້ຳກໍ່ເຮັດວຽກດ້ວຍຫົວຄ້ອນຕີທຳມະດາ ແຕ່ມັນມີນ້ຳໜັກ ຈຶ່ງກະໂຕເທວະດາກໍ່ເຣີກໍ່ສາມາດຍົກຂຶ້ນບໍ່ໄດ້ ໑) . ໜຶ່ງໃນບັນດາ ຈັກຄ້ອນຕີທີ່ເຄື່ອນເໜັງດ້ວຍອາຍນ້ຳດັ່ງກ່າວນັ້ນໂດຍແມ່ນນາສມິດເປັນ ຜູ້ປະດິດອອກ, ມັນມີນ້ຳໜັກ ໕ ໂຕນກວ່າ ແລະ ທັບຢູ່ເທິງໜ້າຖັງທີ່ມີນ້ຳໜັກ ໖໕ ໂຕນດ້ວຍໄລຍະຕົກຕັ້ງຊື່ ໒) . ແມ່ນ ກ ປີ໑໑.ມັນທັບລົງບາດດຽວແມ່ນເຮັດໃຫ້ແຜ່ນຫີນເພັດມຸ່ນທະລາຍໂລດ, ແຕ່ມັນສາມາດ

---

໑) ໜຶ່ງໃນບັນດາເຄື່ອງຈັກຢູ່ລອນດອນທີ່ໃຊ້ ເພື່ອຕີບັນດາເພົາຂອງຕີນລົດແບບຕີນເປັດ( Paddle-wheel shafts ຕິດຊື່ວ່າທໍເຣີ)*ມັນຕີເພົາທ່ອນໜຶ່ງທີ່ມີນ້ຳໜັກ ໑໕,໕ ໂຕນໄດ້ງ່າຍ ເໝືອນດັ່ງຊ່າງຕີເຫລັກຕີຂອບເກີບມານັ້ນ.

---

* Thor , ຕາມເທວະນິຍາຍຂອງເຜົ່າຕ່າງໆ ຢູ່ແຍກມານີ. ອັນແມ່ນເທວະດາຟ້າຮ້ອງຟ້າຜ່າ (ບ.ກ.).

໒) Elute verticale (ພ.ປ.).

ທັບລົງແບບເບົາໆ ເພື່ອຕອກຕະປູໃສ່ໄມ້ອ່ອນກໍໄດ້ຢູ່.

ໃນການໃຊ້ເຄື່ອງຈັກ, ພາຫະນະແຫ່ງການອອກແຮງງານ ທີ່ມີແບບວິທີໜຶ່ງທີ່ຄົງຕົວຂອງສິ່ງວັດຖຸຊຶ່ງຮຽກຮ້ອງຕ້ອງປ່ຽນແທນແຮງ ຄົນດ້ວຍບັນດາແຮງທຳມະດາ, ແລະ ປ່ຽນແທນລັກສະນະບູຊາ ໂບຮານດ້ວຍວິທະຍາສາດ, ໃນໂຮງງານຫັດຖະກຳ, ການແບ່ງປັນຂະບວນ ວິວັດແຫ່ງການອອກແຮງງານແມ່ນມີລັກສະນະອັດຕະວິໄສໂດຍລ້ວນໆ; ອັນນັ້ນແມ່ນການປະສານສົມທົບບັນດາກຳມະກອນພາກສ່ວນເຂົ້ານຳກັນ. ໃນລະບົບຈັກ, ພື້ນຖານອຸດສາຫະກຳໃຫ່ຍສ້າງໂຄງປະກອບການຜະລິດຂຶ້ນຢ່າງພາວະວິໄສຫລືມີລັກສະນະໂດຍສະເພາະຂອງໃພໜົດ, ໂຄງປະກອບດັ່ງກ່າວນີ້ ແມ່ນເງື່ອນໄຂວັດຖຸສຳລັບການຜະລິດຊຶ່ງໄດ້ກຽມ ພ້ອມໃນໂຮງງານສຳລັບຊາວກຳມະກອນ. ໃນການຮ່ວມມືແບບ ງ່າຍດາຍ ແລະ ລວມທັງໃນການຮ່ວມມືທີ່ອີງໃສ່ການແບ່ງງານ, ການແທນທີ່ ຜູ້ອອກແຮງງານເອກະເທດດ້ວຍຜູ້ອອກແຮງງານແບບລວມໝູ່, ຍັງຄົງມີລັກສະນະໂດຍບັງເອີນຢ່າງບໍ່ຫລາຍກໍໜ້ອຍ. ເວັ້ນເສຍແຕ່ບາງກໍລະນີນອກຣີດຊຶ່ງພວກເຮົາຈະເອົາມາເວົ້າໃນພາຍໜ້ານີ້, ເຄື່ອງຈັກເຄື່ອນ ເໜັງໄດ້ກໍຕໍ່ເມື່ອມີການຜັນແຮງງານເປັນສັງຄົມເອງຫລືແຮງງານລວມຢູ່ທີ່ນັ້ນ, ລັກສະນະຮ່ວມມືຂອງການອອກແຮງງານກາຍເປັນຄວາມ ຈຳເປັນທາງເຕັກນິກ ໜຶ່ງຊຶ່ງແມ່ນກະໂຕລັກສະນະຂອງພາຫະນະ ແຫ່ງການອອກແຮງງານກຳໜົດໄວ້.

## ພາກ x(/

## ມູນຄ່າສ່ວນເກີນ ເດັດຖານ
## ແລະ ມູນຄ່າສ່ວນເກີນທຽບຖານ

.....

ບໍ່ແມ່ນເປັນຄວາມຈະເລີນພັນອັນເດັດຂາດຂອງທີ່ດິນ, ຫາກເວົ້າຢ່າງຖືກຕ້ອງກ່ວາກໍ່ແມ່ນລັກສະນະຫລາຍຮູບຫລາຍຊົງຂອງທີ່ດິນ ທາງດ້ານມູນທາດເຄມີສາດນັ້ນເອງ, ແລະ ລັກສະນະຫລາຍຮູບຫລາຍ ຊົງຂອງຜະລິດຕະພັນທຳມະຊາດຂອງທີ່ດິນນັ້ນຈຶ່ງໂຮມເຂົ້າກັນເປັນ ຫລັກຖານທຳມະຊາດຂອງການແບ່ງງານໃນສັງຄົມ, ແລະ ຈຶ່ງກະຕຸກຊຸກ ຍູ້ຄົນ, ເນື່ອງຈາກເງື່ອນໄຂຕ່າງໆຮ້ອຍແປດພັນປະການຊຶ່ງໃນນັ້ນ ເຂົາດຳລົງຊີວິດ, ເພີ່ມທະວີຄວາມຮຽກຮ້ອງຕ້ອງການ, ຄວາມຖະໜັດ , ພາຫະນະແຫ່ງການອອກແຮງງານ ແລະ ແບບວິທີແຫ່ງການອອກ ແຮງງານຂອງຕົນຂຶ້ນຕື່ມ.

ກ. ມາກ,ທຶນ,ສຳນັກພິມຈຳໜ່າຍ,
ຊິເທີດ,ຮ່າໂນ້ຍ,໑໙໖໐,ເຫລັ້ມ ໒,
ທົວ ໑,ໜ້າ ໓໗-໔໑,໔໘-໔໙ ,
໗໖-໗໗, ໙໔-໑໐໓, ໒໓໗.

<u>ຄັດຈາກ ນິພົນ</u>

ປະກອບສ່ວນຕຳໜິວິຈານ

ເສດຖະກິດການເມືອງ

.....

ໂລກສິນຄ້າຊຸປະມາວ່າ ຕ້ອງມີການແບ່ງງານໜຶ່ງທີ່ຂະຫຍາຍຕົວ ຫລືເວົ້າຢ່າງຖືກຕ້ອງກວ່າ, ການແບ່ງງານນີ້ໄດ້ສະແດງໂດຍກົງ ຢູ່ໃນລັກສະນະຫລາຍຮູບຫລາຍຊົງຂອງບັນດາຄຸນຄ່າໃຊ້ສອຍ,ຄຸນຄ່າໃຊ້ສອຍເຫລົ່ານີ້ກົງກັນຂ້າມ ຊຶ່ງກັນ ແລະ ກັນດ້ວຍຖານະເປັນບັນດາສິນຄ້າສະເພາະພັນ, ຊຶ່ງບັນຈຸແຮງງານຊະນິດຕ່າງໆທີ່ຫລາຍຮູບຫລາຍຊົງ ເຊັ່ນດຽວກັນ. <u>ການແບ່ງງານ</u>,ດ້ວຍຖານະເປັນບັນດາຮູບການທັງໝົດຂອງການເຄື່ອນໄຫວພະລິດສະເພາະພັນ, ອັນແມ່ນສະພາວະການທົ່ວ ໄປຂອງແຮງງານສັງຄົມ, ເມື່ອພິຈາລະນາທາງດ້ານວັດຖຸຂອງມັນດ້ວຍຖານະເປັນແຮງງານທີ່ປະດິດສ້າງຄຸນຄ່າໃຊ້ສອຍອອກ. ແຕ່ພິຈາລະນາຕາມທັດສະນະຂອງສິນຄ້າຕ່າງໆ ແລະ ໃນຂະບວນວິວັດແຫ່ງການແລກປ່ຽນເອງ, ດັ່ງນັ້ນການແບ່ງງານຄືແນວນັ້ນພຽງແຕ່ຄົງຕົວຢູ່ໃນຜົນ ສຳເລັດຂອງມັນເທົ່ານັ້ນ, ໝາຍຄວາມວ່າໃນການແຍກອອກຂອງກະໂຕສິນຄ້າຕ່າງໆນັ້ນເອງ.

ກ.ມາກ,ປະກອບສ່ວນຕຳໜິວິຈານເສດຖະສາດ ການເມືອງ,ສຳນັກພິມຈຳໜ່າຍ ຈີເຫີດ, ຮ່າ ໂນ້ຍ, ໑໙໖໔, ໜ. ໔໘ - ໔໙ .

<u>ຄັດຈາກ ນິພົນ</u>

ຄວາມອັບຈົນຂອງ ປັດຊະຍາ

.....

ບັດນີ້ພວກເຮົາຈຶ່ງພິຈາລະນາ, ບົນທັດສະນະປະຫວັດສາດ ແລະ ເສດຖະກິດ, ເບິ່ງວ່າມັນແມ່ນໂຮງງານຫລືເຄື່ອງຈັກໄດ້ນຳເອົາ <u>ຫລັກມູນສິດອຳນາດ</u> ເຂົ້າໃນສັງຄົມຫລັງຈາກທີ່ການແບ່ງງານປະກົດຕົວອອກຫລືບໍ່; ແມ່ນວ່າດ້ານໜຶ່ງ, ໂຮງງານຫລືເຄື່ອງຈັກຟື້ນຟູຖານະໃຫ້ຊາວກຳມະກອນຄືນໃໝ່, ໃນເມື່ອ, ດ້ານອື່ນ, ມັນຍັງຕັ້ງກຳມະກອນ ໃນຖານະຂຶ້ນຕໍ່ສິດອຳນາດຫລືບໍ່, ແມ່ນວ່າເຄື່ອງຈັກເປັນການປະສົມ ແຮງງານໂຮມເຂົ້າກັນຄືນຊຶ່ງມັນໄດ້ຖືກແບ່ງອອກ, ແມ່ນການສັງລວມ ແຮງງານທີ່ກົງກັນຂ້າມກັບການ<u>ໄຈແຍກ</u> ແຮງງານຫລືບໍ່.

ສັງຄົມທັງໝົດມີຈຸດນີ້ທີ່ຄ້າຍຄືພາຍໃນໂຮງງານໜຶ່ງ, ໝາຍຄວາມວ່າກະໂຕສັງຄົມເອງກໍ່ມີການແບ່ງງານຂອງມັນ. ຖ້າຄົນທັງຫຼາຍເອົາການແບ່ງງານໃນໂຮງງານທັນສະໄໝແຫ່ງໜຶ່ງມາເປັນແບບຢ່າງເພື່ອໝູນໃຊ້ມັນເຂົ້າສັງຄົມທັງໝົດ, ແມ່ນສັງຄົມໄດ້ຮັບການ ຈັດຕັ້ງເປັນຢ່າງດີທີ່ສຸດໃຫ້ແກ່ການຜະລິດຊັບສົມບັດທີ່ແນ່ນອນ ຈະເປັນ ສັງຄົມທີ່ມີເຈົ້າຂອງໂຮງງານຜູ້ໜຶ່ງຜູ້ດຽວເປັນຫົວໜ້າ, ແຈກຢາຍວຽກງານຕາມກົດຂໍ້ບັງຄັບທີ່ບົ່ງໄວ້ກ່ອນໃຫ້ແກ່ບັນດາພາຄີທີ່ຕ່າງກັນຂອງກຸ່ມ ກອນ

ວິງຄະນາຍາດ. ແຕ່ໃນພາກຕົວຈິງ, ມັນບໍ່ແມ່ນແນວນັ້ນຈັກດີ້. ໃນເວລາທີ່ພາຍໃນໂຮງງານທັນສະໄໝ, ການແບ່ງງານໄດ້ຮັບການ ດັດສົມຢ່າງລະອຽດລະອໍຈາກສິດອຳນາດຂອງນັກວິສາຫະກິດນັ້ນສັງຄົມ ທັນສະໄໝບໍ່ມີຫລັກການອື່ນໃດ, ສິດອຳນາດອື່ນໃດ ເພື່ອແຈກຢາຍແຮງງານນອກຈາກການແກ່ງແຍ້ງກັນໂດຍເສລີ.

ພາຍໃຕ້ລະບອບເຈົ້າໂຄດ, ພາຍໃຕ້ລະບອບຊັ້ນວັນນະ, ພາຍໃຕ້ລະບອບສັກດີນາ ແລະ ສັງຄົມອາຊີບໄດ້ມີການແບ່ງງານໃນທົ່ວ ສັງຄົມຕາມຫລັກການອັນຄົງທີ່. ຫລັກການເຫລົ່ານັ້ນແມ່ນ ນັກສ້າງ ກົດໝາຍສ້າງຂຶ້ນບໍ່ ? ບໍ່ແມ່ນແນວນັ້ນ. ໃນຂັ້ນຕົ້ນ, ຫລັກການເຫລົ່ານັ້ນໄດ້ຮັບການກຳເນີດຂຶ້ນຈາກເງື່ອນໄຂຕ່າງໆຂອງການຜະລິດສິ່ງວັດຖຸ , ຈົນວ່າຕະຫລອດຮອດພາຍຫລັງນັ້ນຈຶ່ງກາຍເປັນກົດໝາຍ.ຕັ້ງແມ່ນຍອມແນວນັ້ນເອງ, ຮູບການຕ່າງໆທີ່ຕ່າງກັນນັ້ນຂອງການແບ່ງງານ ຈຶ່ງໄດ້ກາຍເປັນເທົ່ານັ້ນ ຮາກຖານການຈັດຕັ້ງສັງຄົມ. ສ່ວນວ່າການ ແບ່ງງານໃນໂຮງງານຈຳພັດຂະຫຍາຍຕົວຢ່າງນ້ອຍທີ່ສຸດໃນຮູບຖານທັງໝົດເຫລົ່ານັ້ນຂອງສັງຄົມ.

ຍິ່ງກວ່ານັ້ນ ເຂົາສາມາດຍົກເປັນຫລັກການລວມທີ່ວ່າ : ສິດອຳນາດຊີ້ນຳການແບ່ງງານໃນພາຍໃນສັງຄົມຍິ່ງນ້ອຍເທົ່າໃດ, ການແບ່ງງານໂຮງງານຍິ່ງຂະຫຍາຍຕົວເທົ່ານັ້ນ ແລະ ຢູ່ທີ່ນັ້ນ, ການແບ່ງງານກໍ່ຍິ່ງຂຶ້ນກັບສິດອຳນາດຂອງຜູ້ໜຶ່ງຜູ້ດຽວເທົ່ານັ້ນ. ດັ່ງນັ້ນທາງ ດ້ານ ແບ່ງງານ, ສິດອຳນາດໃນໂຮງງານ ແລະ ສິດອຳນາດໃນສັງຄົມມີອັດຕາສ່ວນທີ່ກົງກັນຂ້າມນຳກັນ.

ບັດນີ້ຕ້ອງເຂົ້າໃຈຄວາມໝາຍຂອງໂຮງງານແມ່ນແນວໃດ, ຊຶ່ງໃນນັ້ນວຽກງານຕ່າງໆຖືກແບ່ງອອກຢ່າງຄັກແນ່, ຢູ່ຫັ້ນ, ໜ້າທີ່ຂອງກຳມະກອນແຕ່ລະຄົນໄດ້ຕອມເຂົ້າເປັນຈັງຫວະທີ່ງ່າຍດາຍທີ່ສຸດ, ແລະສິດອຳນາດຢູ່ຫັ້ນ, ໝາຍຄວາມວ່າ ນາຍທຶນ, ເຕົ້າໂຮມ ແລະ ກຳກັບໝູກວຽກງານ. ໂຮງງານດັ່ງກ່າວໄດ້ກຳເນີດຂຶ້ນຄືແນວໃດ ? ເພື່ອຕອບຄຳຖາມດັ່ງກ່າວ, ພວກເຮົາຍັງຕ້ອງຄົ້ນຄວ້າເບິ່ງກ່ຽວກັບ ໂຮງງານຫັດຖະກຳໜັກໄດ້ຂະຫຍາຍຕົວຄືແນວໃດ ? ຂ້າພະເຈົ້າຢາກເວົ້າເຖິງປະເພດອຸດສາຫະກຳທີ່ຍັງບໍ່ທັນເປັນອຸດສາຫະກຳທັນສະໄໝ ທີ່ປະກອບດ້ວຍເຄື່ອງຈັກຂອງມັນ, ແຕ່ມັນກໍຍັງບໍ່ເປັນອຸດສາຫະກຳຂອງຊ່າງຫັດຖະກຳໃນສະໄໝກາງອີກ, ມັນກໍຍັງບໍ່ເປັນອຸດສາຫະກຳແບບ ຄອບຄົວອີກ. ພວກຂ້າພະເຈົ້າຈະບໍ່ເດີນໄປເຂົ້າຈຸດຕ່າງໆ ທີ່ລະອຽດ ລະອໍໂພດ, ພວກຂ້າພະເຈົ້າພຽງແຕ່ກ່າວ ສະເໜີບາງຈຸດທີ່ຫຍໍ້ສັ້ນ, ທັງນີ້ກໍເພື່ອເວົ້າຂຶ້ນວ່າ ດ້ວຍຫລັກສູດຄົນທັງຫລາຍບໍ່ສາມາດສ້າງ ປະຫວັດສາດຂຶ້ນໄດ້.

ເງື່ອນໄຂໜຶ່ງທີ່ຈຳເປັນທີ່ສຸດໃຫ້ແກ່ໂຮງງານຫັດຖະກຳ ກໍ່ຕົວຂຶ້ນແມ່ນການສະສົມທຶນ, ການສະສົມທຶນຖືກຊຸກຍູ້ແຮງຂຶ້ນຍ້ອນການ ຄົ້ນພົບທະວີບອາເມລິກາ ແລະ ການຮັບເອົາໂລຫະທີ່ມີຄ່າຕ່າງໆຂອງ ທະວີບອາເມລິກາ.

ສິ່ງໜຶ່ງທີ່ຈະແຈ້ງຄືການເພີ່ມພາຫະນະການແລກປ່ຽນຂຶ້ນຕື່ມ ນັ້ນໄດ້ພາໄປເຖິງຜົນສຳເລັດຄື, ດ້ານໜຶ່ງ, ເງິນຄ່າແຮງ ແລະຄ່າເຊົ່າທີ່ດິນລົດລົງ, ແລະ ດ້ານອື່ນ, ກຳໄລອຸດສາຫະກຳເພີ່ມຂຶ້ນ.ເວົ້າຢ່າງ

ອື່ນ : ຊົນຊັ້ນເຈົ້າທີ່ດິນ ແລະ ຊົນຊັ້ນຜູ້ອອກແຮງງານ, ພວກເຈົ້າສັກດິນາ ແລະ ປະຊາຊົນຍິ່ງຊຸດໂຊມລົງ, ຊົນຊັ້ນບັນດານາຍທຶນ, ຊົນຊັ້ນນາຍທຶນຍິ່ງໂງຂຶ້ນ.

ຍັງມີສະພາບແວດລ້ອມອື່ນທີ່ພ້ອມກັນນັ້ນຊ່ວຍໃຫ້ໂຮງງານຫັດຖະກຳຂະຫຍາຍຕົວ. ການເພີ່ມສິນຄ້າຈໍລະຈອນຂຶ້ນຕື່ມຕັ້ງແຕ່ການພົບແຜ່ນດິນເຂົ້າພາກຕາເວັນອອກຂອງອິນເດຍ ດ້ວຍເສັ້ນທາງແຫລມຄາວວອງ, ລະບອບລ່າເມືອງຂຶ້ນ, ການພັດທະນາການພາບິດທາງຄົມມະນາຄົມທະເລ.

ນິຈຸດອື່ນອັນໜຶ່ງກ່ອນໜ້ານັ້ນຄົນທັງຫລາຍຍັງບໍ່ທັນຕີລາຄາຢ່າງຄົບຖ້ວນໃນປະຫວັດສາດຂອງໂຮງງານຫັດຖະກຳ, ນັ້ນແມ່ນການເລີກລ້າງບັນດາຄະນະຣັບໃຊ້ທີ່ໜາແໜ້ນຂອງພວກສັກດິນາ, ບັນດາຂັ້ນລຸ່ມຂອງພວກຄົນຣັບໃຊ້ດັ່ງກ່າວກາຍເປັນຄົນຈໍລະຈັດກ່ອນຈະເຂົ້າໂຮງຈັກ. ກ່ອນຈະສ້າງໂຮງຈັກຂຶ້ນ (໑). ຄົນທັງຫລາຍເຫັນປະກົດການຈໍລະຈັດ, ເກືອບຄືແຜ່ຫລາຍໃນບັນດາສະຕະວັດ XVI ແລະ XVII. ໂຮງຈັກຍັງມີບ່ອນໜຶ່ງອີງໃສ່ຢ່າງແຂງແຮງໃນບັນດາຊາວກະສິກອນທີ່ໜາແໜ້ນ ເຊິ່ງຖືກໄລ່ອອກຈາກຊົນນະບົດຍ້ອນການຜັນທົ່ງນາເປັນທົ່ງຫຍ້າຕ່າງໆ ແລະຍ້ອນວ່າກະສິກຳຮູ້ກັຣອງຕ້ອງການເຫື່ອແຮງຂອງຊາວໄຖນາບໍ່ຫລາຍຄືແຕ່ກ່ອນ, ເຂົາໄດ້ພາກັນໄປຫາຕົວເມືອງຢ່າງບໍ່ຢຸດເຊົາໃນຫລາຍສະຕະວັດ.

---

໑) ພາສາຝະລັ່ງ ໃນຕົ້ນສະບັບ Atelier (ພ.ປ.).

ການເປີດກວ້າງຕະຫລາດ, ສະສົມທຶນ, ບັນດາການຜັນປ່ຽນ ທີ່ເກີດຂຶ້ນໃນຖານະແຫ່ງສັງຄົມຂອງຊົນຊັ້ນຕ່າງໆ, ຄົນຝູງໜຶ່ງ ຖືກເສຍແຫລ່ງລາຍໄດ້ຂອງເຂົາ, ນັ້ນແມ່ນເງື່ອນໄຂປະຫວັດສາດທັງນັ້ກໍ ເພື່ອໃຫ້ໂຮງງານຫັດຖະກຳກໍ່ຕົວຂຶ້ນເປັນຮູບ. ມັນກໍບໍ່ແມ່ນຄືຄຳເວົ້າ ຂອງທ່ານ ປລູດົງ ທີ່ວ່າ: ບັນດາສັນຍາພາລະດອນພາບ ລະຫວ່າງບັນດາຜູ້ສະເໜີພາບໄດ້ເຕົ້າໂຮມເຂົາເຂົ້າໃນໂຮງຈັກໂຮງງານຫັດຖະກຳ ບໍ່ແມ່ນວ່າມັນເກີດຂຶ້ນຈາກຫ້ອງຂອງບັນດາຄຸນບັຄົນເກົ່າ. ກະໂຕພໍ່ ຄ້າຂອງໄດ້ກາຍເປັນເຈົ້າຂອງໃຫ້ໂຮງງານທັນສະໄໝຫາກບໍ່ແມ່ນ ນາຍຊ່າງຫັດຖະກຳຂອງສັງຄົມອາຊີບເປັນເຈົ້າຂອງດອກ. ການຕໍ່ສູ້ອັນຂຽວຂາດສະແດງອອກລະຫວ່າງໂຮງງານຫັດຖະກຳກັບຫັດຖະກຳຢູ່ເກືອບທຸກແຫ່ງຫົນ.

ການສະສົມ ແລະ ໂຮມສຸມເຄື່ອງມືແລະຄົນງານປະກົດຕົວ ອອກກ່ອນການແບ່ງງານຂະຫຍາຍຕົວໃນພາຍໃນໂຮງງານ. ຈຸດພິເສດຂອງໂຮງງານຫັດຖະກຳແມ່ນການເຕົ້າໂຮມຫລາຍຄົນງານ ແລະ ຫລາຍອາຊີບຫັດຖະກຳເຂົ້າບ່ອນໜຶ່ງບ່ອນດຽວ, ໃນຫ້ອງໜຶ່ງໂດຍພາຍໃຕ້ການບັນຊາຂອງນາຍທຶນຜູ້ໜຶ່ງ, ທັງນີ້ມັນຖືກຕ້ອງກວ່າການຜັນແຍກ ຕ່າງໆ ແລະ ຄວາມສອດຄ່ອງຂອງກຳມະກອນແຕ່ລະຄົນທີ່ມີຄວາມສາມາດດ້ານເຕັກນິກກໍ່ເປັນພິເສດກັບວຽກສ່ວນໜຶ່ງທີ່ງ່າຍດາຍ.

ຜົນປະໂຫຍດຂອງໂຮງຈັກແຫ່ງໜຶ່ງແມ່ນຢູ່ບ່ອນວ່າມັນມີ ສະພາບແວດລ້ອມສຳລັບຄົນທັງຫລາຍເຮັດວຽກດ້ວຍຂະໜາດໃຫຍ່ກວ່າ, ເຂົາລົດຜ່ອນການເພພັງ, ສິ້ນເປືອງຫລາຍກວ່າ, ແລະ ອື່ນໆ, ຈຶ່ງມັນຖືກ

ຕ້ອງກ່ວາຢູ່ບ່ອນມີການແບ່ງງານຢ່າງແທ້ຈິງ. ທ້າຍສະຕະວັດ XVI ແລະ ຕົ້ນສະຕະວັດ XVII, ໂຮງງານຫັດຖະກຳຢູ່ຮອນລັງ ພຽງແຕ່ຮູ້ເຖິງການແບ່ງງານເທົ່ານັ້ນ.

ການຂະຫຍາຍຕົວຂອງການແບ່ງງານຮຽກຮ້ອງຕ້ອງການໃນກ່ອນນັ້ນຕ້ອງມີການເຕົ້າໂຮມບັນດາຄົນງານເຂົ້າໃນໂຮງຈັກດຽວ, ບໍ່ມີຫັງຕົວຢ່າງແຕ່ຢ່າງດຽວໃດ, ໃນສະຕະວັດ XVI ກໍຄືໃນສະຕະວັດ XVII, ຢືນຢັນວ່າບັນດາຂະແໜງທີ່ຕ່າງກັນທີ່ບໍ່ຮ່ວມໃນອາຊີບ ຫັດຖະກຳອັນດຽວກໍໄດ້ວິສາຫະກິດຕ່າງຫາກ, ຊຶ່ງຈິນວ່າພຽງແຕ່ຕ້ອງໂຮມມັນເຂົ້າໃນບ່ອນໜຶ່ງບ່ອນດຽວແມ່ນສາມາດເປັນໂຮງຈັກທີ່ບໍລິບູນ. ແຕ່ໃນເມື່ອຄົນ ແລະ ເຄື່ອງມືໄດ້ໂຮມກັນເຂົ້າແລ້ວ, ແຕ່ການ ແບ່ງງານຊຶ່ງມັນໄດ້ຄົງຕົວພາຍໃຕ້ຮູບການສັງຄົມອາຊີບ, ຊ້າພັດກໍ່ຕົວຄືນໃໝ່ ; ຊ້າພັດສ່ອງແສງຢ່າງຕ້ອງເປັນໄປໃນໂຮງຈັກ.

ຕາມທ່ານ ປຣູດົງ - ຖ້າວ່າ ທ່ານເຫັນສິ່ງວັດຖຸແທ້ໆ, ທ່ານນັ້ນກໍພຽງແຕ່ເຫັນສິ່ງ ວັດຖຸຕ່າວປີ້ນເທົ່ານັ້ນ, - ການແບ່ງງານ, ຕາມຄວາມໝາຍຂອງອາດາມສມິດ, ມັນເກີດມີກ່ອນໂຮງຈັກ, ແທ້ທີ່ ຈິງໂຮງຈັກແມ່ນເງື່ອນໄຂທີ່ຄົງຕົວຂອງການແບ່ງງານ.

ເຄື່ອງຈັກ ປະກົດຕົວອອກອັນແທ້ຈິງຕັ້ງແຕ່ທ້າຍ ສະຕະວັດ XVIII ບໍ່ມີຫຍັງທີ່ໄຮ້ເຫດຜົນເທົ່າກັບການຖືເຄື່ອງຈັກເປັນ ເຫດທີ່ກົງກັນຂາມ ຂອງການແບ່ງງານ, ເປັນການສັງລວມ ທີ່ຟື້ນຟູ ຄວາມເປັນເອກະພາບຄືນໃໝ່ໃນການອອກແຮງງານທີ່ໄດ້ຖືກແບ່ງນອຍອອກ.

ເຄື່ອງຈັກແມ່ນການເຕົ້າໂຮມເຄື່ອງມືເຂົ້າ, ແຕ່ເດັດຂາດບໍ່ແມ່ນ

ການປະສານສົມທົບບັນດາຈັງຫວະໃຫ້ແກ່ກະໂຕກຳມະກອນເອງ.

ເມື່ອເກີດຈາກການແບ່ງງານ, ແຕ່ລະຈັງຫວະຕ່າງຫາກຖືກຕອມເອົາເປັນການໃຊ້ເຄື່ອງມືທີ່ງ່າຍດາຍເຄື່ອງໜຶ່ງ, ດັ່ງນັ້ນການ ເຕົ້າໂຮມເຄື່ອງມືທັງໝົດເຫລົ່ານັ້ນ, ຊຶ່ງເຄື່ອນເໜັງໂດຍໂມເຕີອັນ ໜຶ່ງອັນດຽວ, ປະກອບເປັນເຄື່ອງຈັກ ( ບາບບາເຢີ : ກ່ຽວກັບ ລັກສະນະເສດຖະກິດ ຂອງເຄື່ອງຈັກ [໑] ) ແລະ ອື່ນໆ, ປາຣີ, ໑໘໓໓).

ເຄື່ອງມືທີ່ງ່າຍດາຍ, ສະສົມເຄື່ອງມື, ເຄື່ອງມືສົມທົບ, ການທີ່ເຮັດໃຫ້ເຄື່ອງມືສົມທົບເຄື່ອນເໜັງດ້ວຍໂມເຕີຫັດຖະກຳອັນໜຶ່ງ ອັນດຽວດ້ວຍຄົນ, ການທີ່ເຮັດໃຫ້ເຄື່ອງມືເຫລົ່ານັ້ນເຄື່ອນເໜັງດ້ວຍ ກຳລັງທຳມະຊາດ, ເຄື່ອງຈັກ, ລະບົບເຄື່ອງຈັກທີ່ມີໂມເຕີອັດຕະໂນ ມັດໜຶ່ງ, - ມັນແມ່ນວິວັດທະນາການຂະຫຍາຍຕົວຂອງເຄື່ອງຈັກ.

ການເຕົ້າໂຮມເຄື່ອງມືແຫ່ງການຜະລິດຕ່າງໆ ແລະ ການແບ່ງງານຕິດແໜ້ນກັນ, ມັນກໍເຊັ່ນດຽວກັນກັບການລວມສູນອຳນາດ ການເມືອງຕິດແໜ້ນກັບການແບ່ງປັນບັນດາສິດຜົນປະໂຫຍດຂອງ ເອກະຊົນໃນລະບອບການເມືອງ. ປະເທດອັງກິດ, ຊຶ່ງດ້ວຍການລວມສູນ ທີ່ດິນໝາຍເຖິງເຄື່ອງມືຂອງແຮງງານກະສິກຳ, ກໍມີການແບ່ງງານໃນກະສິກຳ ແລະ ເຄື່ອງຈັກນຳໃຊ້ເຂົ້າໃສ່ວຽກງານບຸກເບີກທີ່ດິນ. ຢູ່ປະເທດຝະລັ່ງມີພາວະການຊຶ່ງເຄື່ອງມືຖືກແບ່ງປັນ ແລະ ລະບອບຖືກຳມະສິດທີ່

---

໑) ອ່ານ Babbage: traité sur l'economie des machines (ບ.ກ.).

ດິນອັນນະຍິກນະຍ່ອຍ, ເວົ້າທົ່ວໄປ, ປະເທດຜະລັ່ງບໍ່ມີການແບ່ງງານໃນກະສິກຳ, ກໍ່ບໍ່ມີການໃຊ້ເຄື່ອງຈັກ ເພື່ອບຸກເບີກທີ່ດິນ.

ຕາມທ່ານ ປລູດົງ ນັ້ນ, ການລວມສູນເຄື່ອງມືແຫ່ງການ ອອກແຮງງານແມ່ນການປະຕິເສດບໍ່ຮັບຮູ້ການແບ່ງງານ. ເຄື່ອງມືຍິ່ງ ລວມສູນດັ່ງນັ້ນການແບ່ງງານຂະຫຍາຍຕົວຍິ່ງຂຶ້ນ ແລະ <u>ກົງກັນຂ້າມ</u>. ຕັ້ງແມ່ນຍ້ອນແນວນັ້ນເອງ ຈຶ່ງບໍ່ວ່າການປະດິດແຕ່ງທີ່ໃຫຍ່ໂຕໃດໆກ່ຽວກັບເຄື່ອງຈັກກໍ່ລ້ວນແຕ່ພາໄປເຖິງການແບ່ງງານທີ່ໃຫຍ່ກ່ວາ ແລະ ເຖິງຜຽນຂອງມັນ, ໃນແຕ່ລະເທື່ອທີ່ການແບ່ງງານທະວີຂຶ້ນນັ້ນຊ້ຳພັດພາໄປເຖິງການປະດິດແຕ່ງໃຫມ່ກ່ຽວກັບເຄື່ອງຈັກ.

ພວກເຮົາບໍ່ຕ້ອງການເວົ້າຄືນອີກວ່າ ບັນດາບາດກ້າວໃຫຍ່ ຂອງການແບ່ງງານຢູ່ປະເທດອັງກິດລ້ວນແຕ່ເລີ່ມຕົ້ນພາຍຫລັງຈາກການ ປະດິດແຕ່ງເຄື່ອງຈັກ. ສົມມຸດຄື, ບັນດາຊ່າງຕຳແຜ່ນ ແລະ ບັນດາຜູ້ປັ່ນຝ້າຍສ່ວນຫລາຍແມ່ນບັນດາຊາວກະສິກອນດັ່ງທີ່ຄົນເຮົາຍັງເຫັນຢູ່ໃນບັນດາປະເທດທີ່ຫລ້າຫລັງ. ການປະດິດແຕ່ງເຄື່ອງຈັກກໍ່ໄດ້ເຮັດໃຫ້ ໂຮງງານຫັດຖະກຳແຍກຕົວອອກຈາກກະສິກຳຢ່າງຂາດຕົວ. ຜູ້ຕຳແຜ່ນແລະຜູ້ປັ່ນຝ້າຍ, ຊຶ່ງໃນເມື່ອກ່ອນນັ້ນຮ່ວມຢູ່ນຳກັນໃນຄອບຄົວດຽວ, ປະຈຸບັນນີ້ຖືກແຍກອອກຈາກກັນ. ຍ້ອນວ່າມີເຄື່ອງຈັກ, ຜູ້ເຂັນຝ້າຍສາມາດດຳລົງຊີວິດຢູ່ປະເທດອັງກິດໃນເມື່ອຜູ້ຕຳແຜ່ນດຳລົງຊີວິດຢູ່ພາກຕາເວັນອອກຂອງປະເທດອິນເດຍ. ກ່ອນຈະປະດິດແຕ່ງເຄື່ອງຈັກອອກ, ອຸດສາຫະກຳຂອງປະເທດຫນຶ່ງອີງໃສ່ບັນດາວັດຖຸຜະລິດພັນຂອງບ້ານເມືອງຕົນເປັນຕົ້ນຕໍ : ສົມມຸດຄືແຜອົບສັດຢູ່ອັງກິດ, ແພນວມຢູ່ເຢລະມັນ ,

ໄໝ ແລະ ແພນອນຢູ່ຝະລັ່ງ ຝ້າຍຢູ່ພາກຕາເວັນອອກຂອງ ອິນເດຍ ແລະ ຕາເວັນອອກໄກ,ໆລໆ. ຍ້ອນການນຳໃຊ້ເຄື່ອງຈັກ ແລະ ອາຍນ້ຳ, ການແບ່ງງານຈຶ່ງສາມາດຂະຫຍາຍຕົວເຖິງລະດັບຊຶ່ງ ອຸດສາຫະກຳໃຫ່ຍ, ແຍກພົ້ນອອກຈາກປະເທດຊາດ, ພຽງແຕ່ຂຶ້ນຕໍ່ຕະ ຫລາດໂລກ, ຂຶ້ນຕໍ່ບັນດາການພົວພັນຄ້າຂາຍສາກົນ ແລະ ການແບ່ງງານສາກົນເທົ່ານັ້ນ. ສຸດທ້າຍ, ເຄື່ອງຈັກສົ່ງຜົນສະທ້ອນເຖິງການແບ່ງງານ, ຈົນວ່າໃນເມື່ອຄົນເຮົາຈັດຫາວິທີນຳເອົາເຄື່ອງຈັກສ່ວນໜຶ່ງເຂົ້າໃນອາຊີບປະດິດແຕ່ງຜະລິດຕະພັນໃດໜຶ່ງ, ທັນໃດນັ້ນ ອາຊີບປະດິດແຕ່ງນັ້ນກໍແຍກຕົວອອກເປັນສອງອາຊີບວິສາຫະກິດເອກະລາດຕໍ່ກັນ.

ມີຄວາມຕ້ອງການເວົ້າເຖິງ <u>ຈຸດປະສົງຕາມ ວາສະໜາຝ້າແຖນ</u> ແລະ ພະລາດອນພາບ ຊຶ່ງທ່ານ ປຣູດົງ ຄົ້ນພົບຢູ່ໃນການປະດິດ ແຕ່ງເຄື່ອງຈັກອອກ ແລະ ຢູ່ໃນການໃຊ້ເຄື່ອງຈັກໃນຍາມຕົ້ນຫລືບໍ່ ?

ຢູ່ປະເທດອັງກິດ, ເມື່ອຕະຫລາດໄດ້ຂະຫຍາຍຕົວເຖິງລະດັບນຶ່ງຊຶ່ງແຮງງານຫັດຖະກຳບໍ່ພຽງພໍອີກ. ດັ່ງນັ້ນຄົນເຮົາຈຶ່ງເຫັນວ່າຕ້ອງ ມີເຄື່ອງຈັກ. ໃນເມື່ອນັ້ນ ເຂົາຈຶ່ງຄິດເຖິງການໃຊ້ວິທະຍາສາດກົນຈັກທີ່ໄດ້ຂະຫຍາຍຕົວຢ່າງພຽງພໍໃນສະຕະວັດ XVIII ແລ້ວ.

ໂຮງຈັກອັດຕະໂນມັດຂີດໝາຍບາດກ້າວເບື້ອງຕົ້ນຂອງມັນ ໄວ້ດ້ວຍບັນດາການກະທຳທີ່ບໍ່ພະລະດອນພາບແກ່ຈັກເມັດເລີຍ. ພວກເດັກນ້ອຍຖືກກັກໄວ້ ເພື່ອເຮັດວຽກພາຍໃຕ້ໄມ້ແສ້; ເຂົາຖືພວກນັ້ນເປັນເປົ້າໝາຍແລກປ່ຽນອັນໜຶ່ງ. ແລະ ເຂົາເຊັນຂໍ້ຜູກມັດກັບບັນດາຄ້າຍລ້ຽງລູກກຳພ້າ. ເຂົາປະຖິ້ມບັນດາກົດໝາຍກ່ຽວກັບ ການຮຽນອາຊີບ

ຂອງກຳມະກອນຈີນໝົດ, ເພາະວ່າເພື່ອໃຊ້ຄຳເວົ້າຂອງທ່ານ ປຣູດົງ, ເຂົາຈຶ່ງບໍ່ຕ້ອງການເຖິງບັນດາກຳມະກອນ ສົງລວນອິກ. ສຸດທ້າຍ, ແຕ່ປີ ໑໘໒໕ ເປັນຕົ້ນມານັ້ນ, ບັນດາການປະດິດແຕ່ງໃໝ່ເກືອບທັງໝົດລ້ວນແຕ່ແມ່ນຜົນສຳເລັດຂອງບັນດາບັ້ນປະທະກັນລະຫວ່າງ ກຳມະກອນກັບວິສາຫະກິດ, ນັກວິສາຫະກິດຫາທຸກວິທີເຮັດໃຫ້ລາຄາດ້ານວິຊາ ສະເພາະຂອງກຳມະກອນຫລຸດຜ່ອນລົງ. ຫລັງຈາກແຕ່ລະເທື່ອຢຸດ ງານໃໝ່ທີ່ສຳຄັນພໍປານໃດ ປານໜຶ່ງ. ກໍມີເຄື່ອງຈັກໃໝ່ເຄື່ອງໜຶ່ງ ປະກົດຕົວອອກ. ຊາວກຳມະກອນບໍ່ຖືວ່າການໃຊ້ເຄື່ອງຈັກເປັນການ ຟື້ນຟູຖານະຊະນິດໜຶ່ງຂຶ້ນ, ການຟື້ນຟູ ຊະນິດໜຶ່ງຄືທ່ານ ປຣູດົງ ເວົ້າ , ສະນັ້ນໃນສະຕະວັດ x(//// , ໃນໄລຍະເວລາທີ່ເຫິງພໍຄວນ , ເຂົາຈຶ່ງໄດ້ຕ້ານຢັນກັບການປົກຄອງທີ່ຫາກໍ່ຕັ້ງຂຶ້ນຂອງເຄື່ອງ ປະກອບອັດຕະໂນມັດ.

ທ່ານດອກເຕີອູເຣີ ເວົ້າ: ວິອາດ ໄດ້ຄົ້ນພົບບັນດານິ້ວມືປັ່ນຝ້າຍ ( ເພົາຊະນິດທີ່ມີຄອງ ) ກ່ອນອັດເກີຣາຍເຕີຕັ້ງແຕ່ດົນ...ຄວາມຫຍຸ້ງຍາກຕົ້ນຕໍບໍ່ແມ່ນຢູ່ບ່ອນປະດິດແຕ່ງເຄື່ອງປະກອບກົນຈັກ ອັດຕະໂນມັດເຄື່ອງໜຶ່ງ...ຄວາມຫຍຸ້ງຍາກຕົ້ນຕໍແມ່ນຢູ່ບ່ອນສຶກສາອົບຮົມ ດ້ານລະບຽບວິໄນທີ່ຈຳເປັນ ເພື່ອໃຫ້ເຂົາປະຖິ້ມບັນດາຄວາມຊິນເຄີຍ ໃນການອອກແຮງງານທີ່ຜິດປົກກະຕິຂອງເຂົາເອງ, ແລະ ເພື່ອໃຫ້ເຂົາ ເຮັດວຽກຢ່າງເຂົ້າແກບເຂົ້າເກຍກັບຈັງຫວະທີ່ສະໝ່ຳສະເໝີຢ່າງບໍ່ມີການປ່ຽນແປງຂອງເຄື່ອງຈັກອັດຕະໂນມັດໃຫຍ່ເຄື່ອງໜຶ່ງ. ແຕ່ວ່າ, ການທີ່ປະດິດແຕ່ງ ແລະ ນຳອອກໃຊ້ຊຸດກົດໝາຍ ກ່ຽວກັບລະບຽບ ວິໄນ

ຂອງໂຮງຈັກ, ຊຶ່ງເໝາະສົມກັບບັນດາຄວາມຮຽກຮ້ອງຕ້ອງການແລະ ຄວາມໄວຂອງລະບົບອັດຕະໂນມັດ, ນັ້ນແມ່ນພາລະກິດທີ່ສົມກຽດ ກັບ ແຮກກູເລີ, ນັ້ນແມ່ນວຽກງານທີ່ປະເສີດຂອງອັກເກີຣາຍເຕີ. ລວມ ຄວາມວ່າ, ດ້ວຍການໃຊ້ເຄື່ອງຈັກ, ການແບ່ງງານຢູ່ພາຍໃນ. ສັງຄົມ ຈຶ່ງເພີ່ມຂຶ້ນ ວຽກງານຂອງຊາວກຳມະກອນຢູ່ພາຍໃນໂຮງຈັກໄດ້ ກາຍ ເປັນງ່າຍດາຍກ່ວາ, ທຶນໄດ້ຮັບການໂຮມສູບເຂົ້າ, ຜູ້ຄົນຖືກຕັດ ແບ່ງ ຍິ່ງຂຶ້ນ.

ກ. ມາກ ຄວາມອົບຈົນຂອງ ປັດຊະຍາ,ສຳນັກພິມຈຳໜ່າຍ ຊິເທີດ, ຮ່າໂນ້ຍ, ໑໙໗໑, ໜ້າ ໑໕໕ - ໑໖໘

ຄັດຈາກ ນິພົນ

ການຂະຫຍາຍຕົວຂອງລັດທິທຶນນິຍົມ

ຢູ່ລັດເຊຍ

ພາກ /(/

ການຂະຫຍາຍຕົວຂອງກະສິກຳຜະລິດ ສິນຄ້າ.

.....

/x . ຂໍ້ສະຫລຸບກ່ຽວກັບບົດບາດຂອງລັດທິທຶນນິຍົມໃນການ ກະສິກຳ ຢູ່ລັດເຊຍ.

໔. ໂດຍຍ້ອນກະໂຕທາດແທ້ຂອງຂະແໜງກະສິກຳເອງ ສະນັ້ນ ມັນຈຶ່ງຜັນມາເປັນການຜະລິດສິນຄ້າຊຶ່ງມັນໄດ້ສະແດງອອກຢ່າງ ເປັນພິເສດ, ບໍ່ຄືກັນກັບຂະບວນວິວັດນັ້ນໃນອຸດສາຫະກຳ. ອຸດສາຫະກຳປຸງແຕ່ງ ແບ່ງເປັນບັນດາຂະແໜງຕ່າງຫາກ, ເອກະລາດຢ່າງເດັດຂາດ ແລະ ພຽງແຕ່ປະດິດແຕ່ງ ໂດຍສະເພາະຜະລິດພັນຈະນິດໜຶ່ງຫຼືພາກສ່ວນໜຶ່ງ ຂອງຜະລິດພັນເທົ່ານັ້ນ. ສ່ວນຂະແໜງອຸດສາຫະກຳແຫ່ງກະສິກຳແມ່ນບໍ່ ແບ່ງເປັນຂະແໜງການຕ່າງໆ ທີ່ແຍກຂາດອອກຈາກກັນແຕ່ລ້ວນແຕ່ກໍ ລະນີເພື່ອຜະລິດໂດຍສະເພາະແຕ່ພຽງສິນຄ້າໃດໜຶ່ງໃຫ້ຕະຫລອດເທົ່ານັ້ນ, ສ່ວນດ້ານອື່ນໆ ຂອງກະສິກຳກໍເໝາະສົມກັບສິນຄ້າຈະນິດຕົ້ນ ຕໍ

ດັ່ງກ່າວ ( ໝາຍຄວາມວ່າຜະລິດຕະພັນຊະນິດທີ່ມີລັກສະນະສິນຄ້າດັ່ງກ່າວ). ສະນັ້ນຮູບການຕ່າງໆຂອງກະສິກຳສິນຄ້າ, ຈຶ່ງແມ່ນຕ່າງກັນທີ່ສຸດ, ຊຶ່ງບໍ່ພຽງແຕ່ຕ່າງກັນແຕ່ບໍລິເວນນີ້ມາຫາບໍະລເວນນັ້ນ, ຫາກຍັງຕ່າງກັນແຕ່ວິຊາວິສາຫະກິດນີ້ມາຫາວິສາຫະກິດນັ້ນອີກ. ສະນັ້ນ, ໃນເມື່ອຄົ້ນຄວ້າບັນຫາກ່ຽວກັບການຂະຫຍາຍຕົວຂອງຂະແໜງກະສິກຳສິນຄ້າຈຶ່ງບໍ່ວ່າໃນກໍລະນີໃດໆຄົນເຮົາກໍ່ບໍ່ສາມາດເອົາແຕ່ບັນດາເອກະສານສະຖິຕິໂດຍສັງເຂບກ່ຽວກັບຂະແໜງການຜະລິດກະສິກຳທັງໝົດນັ້ນໄດ້ພໍ [໑] ).

---

໑) ສົມມຸດຕິບັນດາບັກແຕ່ງ ຂອງປຶ້ມທີ່ໄດ້ແນະນຳໃນໝາຍເຫດເທິງນີ້, ກະໂຕເຂົາເອງພຽງແຕ່ໃຊ້ເອກະສານເຊັ່ນດຽວກັນນັ້ນ, ເມື່ອເວົ້າເຖິງ "ຊາວນາ" . ເຂົາອຸປະມາວ່າຊາວນາແຕ່ລະຄົນລ້ວນ ແຕ່ປູກທັນຍະພືດທີ່ຖືກກັບປະເພດເຂົາໃຊ້; ວ່າເຂົາປູກທັນຍະພືດ ທຸກຊະນິດ ຊຶ່ງເຂົາໃຊ້, ແລະ ໂດຍສະເພາະຢ່າງຍິ່ງແມ່ນປູກຕາມ ອັດຕາສ່ວນ ທີ່ເຂົາຕ້ອງການເປັນຫລັກ. ຈາກ "ຂໍ້ອຸປະມາ" ເຫລົ່ານີ້ ( ຂໍ້ອຸປະມາຕ່າງໆທີ່ກົງກັນຂ້າມກັບຄວາມເປັນຈິງ ແລະ ປະຂ້າມຈຸດພິເສດຕົ້ນຕໍຂອງສະໄໝຫລັງຈາກການປະຕິຮູບ ), ເພື່ອ "ສະຫລຸບຄວາມ" ວ່າເສດຖະກິດທຳມະຊາດກວມເອົາຖານະເປັນທ່າດີ, ແມ່ນບໍ່ຫຍຸ້ງຍາກປານໃດ.

ໃນປຶ້ມ ແລະ ໜັງສືພິມປະຊາລາດກໍ່ສາມາດເຫັນບັນດາ ບົດວິຈານທີ່ຄ່ອງແຄ່ວດັ່ງນີ້ : ແຕ່ລະຊະນິດທີ່ຕ່າງຫາກ ຂອງຂະແໜງ==)

ນີ. ການຂະຫຍາຍຕົວຂອງກະສິກຳສິນຄ້າສ້າງຕະຫລາດພາຍໃນປະເທດຂອງລັດທິທຶນນິຍົມ. ໜຶ່ງແມ່ນ, ການຜັນເປັນວິຊາສະ ເພາະຂອງກະສິກຳພາໄປເຖິງການແລກປ່ຽນລະຫວ່າງບັນດາບໍລິເວນກະສິກຳ ລະຫວ່າງບັນດາອາຊີບວິສາຫະກິດກະສິກຳ, ລະຫວ່າງບັນດາຜະລິດຕະພັນກະສິກຳທີ່ຕ່າງກັນ. ສອງແມ່ນກະສິກຳຍິ່ງເຂົ້າສູ່ການຈໍລະຈອນ ສິນຄ້າພົນລະເມືອງຢູ່ຊົນນະບົດພັດຍິ່ງຮຽກຮ້ອງຕ້ອງການຜະລິດຕະພັນຕ່າງຕ່າງຂອງຂະແໜງອຸດສາຫະກຳປຸງແຕ່ງ ທີ່ຈຳເປັນໃຫ້ແກ່ການໃຊ້ສອຍຂອງສ່ວນຕົວເຂົາເອງ, ແລະ ສາມແມ່ນ, ຄວາມຕ້ອງການດ້ານ ພາຫະນະແຫ່ງການຜະລິດທະວີຂຶ້ນ, ເພາະວ່າເຄື່ອງມືຕ່າງໆທີ່ເກົ່າແກ່ "ຂອງຊາວນາ", ດ້ວຍບັນດາເຮືອນ, ຖຽງເກົ່າ ແລະ ອື່ນໆ ຊຶ່ງບໍ່ມີເຈົ້າວິຊາຢູ່ຊົນນະບົດໃດເຖິງຈະນ້ອຍຫລືໃຫຍ່, ພັດສາມາດດຳ ເນີນການກະສິກຳສິນຄ້າ ໃໝ່ໄດ້. ສີ່ແມ່ນ, ສຸດທ້າຍເຂົາໄດ້ຄົ້ນ ເຫັນຄວາມຮຽກຮ້ອງກ່ຽວກັບການແຮງງານເກີດຂຶ້ນ, ເພາະວ່າ ການກໍ່ຕົວ

---

===) ກະສິກຳແຫ່ງສິນຄ້າລ້ວນແຕ່ເປັນ "ນອກປະເດັນ ", ຖ້າເອົາມັນມາປຽບກັບການກະສິກຳທັງໝົດ ສະນັ້ນ ການກະສິກຳສິນຄ້າ ທັງໝົດໂດຍເວົ້າທົ່ວໄປກໍ່ຕ້ອງຖືເປັນນອກປະເດັນໜຶ່ງສ່ວນ ເສດຖະກິດທຳມະຊາດຈຶ່ງເປັນປະເດັນທົ່ວໄປ. ໃນບັນດາປຶ້ມຕຳຫລາແຫ່ງການສຶກສາຂັ້ນກາງທີ່ຂຽນ ກ່ຽວກັບຕົກກະຖານໃນພາກ ວ່າດ້ວຍອາງ ຄາລົມຢ່າງເສກສັນ, ເຮົາສາມາດເຫັນຂໍ້ຍົກຕົວຢ່າງກ່ຽວກັບແບບວິພາກ ດັ່ງກ່າວຕັ້ງຫລາຍທີ່ສຸດ.

ຂຶ້ນຂອງຊົນຊັ້ນນາຍທຶນນ້ອຍຢູ່ຊົນນະບົດ ແລະ ການທີ່ບັນດາ ເຈົ້າທີ່ດິນ ຫມູນໃຊ້ແບບວິສາຫະກິດທຶນນິຍົມ ມັນຮຽກຮ້ອງປະຖົມປັດໃຈຊຶ່ງ ແມ່ນ ການກໍ່ຕົວຂຶ້ນເປັນກອງກຳລັງຊາວນາຈົນ ແລະ ບັນດາຜູ້ທຳງານ ລາຍ ວັນໃນກະສິກຳ. ມີແຕ່ການຂະຫຍາຍຕົວຂອງກະສິກຳການຄ້າຈຶ່ງ ອະທິ ບາຍຈຸດ ພິເສດຂອງສະໄຫມລຸ່ມການປະຕິຮູບໄດ້ວ່າຕະຫລາດພາຍ ໃນ ປະເທດຂອງລັດທິທຶນນິຍົມໄດ້ເປີດກວ້າງອອກ ( ການຂະຫຍາຍ ຕົວ ຂອງຂະແຫນງກະສິກຳທຶນນິຍົມ, ຂອງຂະແຫນງຊຸດສາຫະກຳເວົ້າໂດຍ ທົ່ວໄປແລະຂອງຂະແຫນງຊຸດສາຫະກຳປະດິດແຕ່ງເຄື່ອງຈັກກະສິ ກຳ ເວົ້າໂດຍສະເພາະ, ການຂະຫຍາຍຕົວຂອງອັນທີ່ເອີ້ນວ່າ "ບັນດາອາ ຊີບສຳຮອງທາງກະສິກຳ" ຂອງຊາວນາ, ຫມາຍຄວາມວ່າຂອງ ແຮງ ງານຮັບຈ້າງ. ໆລໆ.).

໔. ລັດທິທຶນນິຍົມເປີດກວ້າງອອກ ແລະ ເຮັດໃຫ້ບັນດາ ຄວາມ ຂັດແຍ້ງຕ່າງໆນາໆເລິກເຊິ່ງຕື່ມອີກຢູ່ພາຍໃນພົນລະເມືອງຊົນນະບົດ , ຄວາມຂັດແຍ້ງຕ່າງໆ ຊຶ່ງບໍ່ມີມັນໂດຍເວົ້າທົ່ວໄປແລ້ວ ແບບວິທີການຜະ ລິດທຶນນິຍົມກໍ່ບໍ່ອາດຍືນຍົງຄົງຕົວຢູ່ໄດ້. ຢ່າງໃດກໍ່ດີ ເນື່ອງຈາກ ບົດ ບາດປະຫວັດສາດຂອງມັນ, ລັດທິທຶນນິຍົມກະສິກຳຢູ່ລັດເຊຍພັດແມ່ນກຳ ລັງຫນຶ່ງທີ່ກ້າວຫນ້າທີ່ສຸດ. ຫນຶ່ງແມ່ນລັດທິທຶນນິຍົມໄດ້ພັນຊາວກະສິກອນ ຈາກບ່ອນຊຶ່ງດ້ານຫນຶ່ງແມ່ນ " ເຈົ້າອານາເຂດຫນຶ່ງ", ແລະ ດ້ານ ອື່ນເປັນຊາວນາເຈົ້າໂຄດຜູ້ຫນຶ່ງທີ່ຖືກຂຶ້ນກັບ, ກາຍມາເປັນນັກ ຊຸດສາ ຫະກຳ ຄືກັບຫມົດທຸກເຈົ້າທາງຮາບອື່ນໆ, ໃນສັງຄົມທັນສະໄຫມ. ກ່ອນ ລັດທິທຶນນິຍົມ, ສຳລັບບາງຄົນນີ້, ກະສິກຳຢູ່ລັດເຊຍແມ່ນເປັນ ວຽກ

ງານຂອງເຈົ້າຂອງ, ເປັນເລື່ອງຫລົ້ນບັນເທີງໃຈຂອງເຈົ້າທີ່ດິນ, ສຳລັບຜູ້ອື່ນ, ກະສິກຳຊ້ຳພັດແມ່ນພັນທະໜຶ່ງ, ແມ່ນງານສັບພະທຸກໜຶ່ງ; ສະນັ້ນນອກຈາກປະເພນີອັນເກົ່າກ່ອນຕັ້ງແຕ່ໃດໆແລວ, ກະສິກຳກໍບໍ່ຮູ້ວິທີເຮັດແນວອື່ນ, ແລະ ແນ່ນອນວ່າມັນຮຽກຮ້ອງຊາວກະສິກອນຕ້ອງດຳລົງຊີວິດແຕກຕ່າງຢ່າງສິ້ນເຊີງກັບສິ່ງຕ່າງໆ ທັງໝົດທີ່ໄດ້ເກີດຂຶ້ນ ຢູ່ໂລກພາຍນອກບ້ານຊ່ອງຂອງເຂົາ. ລະບອບງານກະເກນ, ຮ່ອງຮອຍຂອງສະໄໝເກົ່າຍັງເຫລືອໄວ້ໃນພື້ນຖານເສດຖະກິດທັນສະໄໝ, ພິສູດຂໍ້ດັ່ງກ່າວຢ່າງປະຈັກແຈ້ງທີ່ສຸດ. ລັດທິທຶນນິຍົມໄດ້ຕັດຂາດສາຍກ່ຽວພັນທີ່ຜູກມັດລະບອບຖືກຳມະສິດທີ່ດິນເຂົ້າໃສ່ຊັ້ນວັນນະໜຶ່ງເປັນເທື່ອທຳອິດ ຈາກນັ້ນມັນໄດ້ພັນທີ່ດິນເປັນສິນຄ້າຜະລິດຕະພັນຂອງຊາວນາທີ່ເອົາ ໄປຂາຍນັ້ນໄດ້ກາຍເປັນເປົ້າໝາຍ ເພື່ອໃຫ້ສັງຄົມຄິດໄລ່ກ່ອນອື່ນ ໝົດແມ່ນຢູ່ຕະຫລາດທ້ອງຖິ່ນ, ຕໍ່ມານັ້ນຈຶ່ງແມ່ນຢູ່ໃນຕະຫລາດໃນທົ່ວ ປະເທດ' ແລະ ສຸດທ້າຍແມ່ນຢູ່ໃນຕະຫລາດສາກົນ. ດັ່ງນັ້ນຈຶ່ງລຶບ ລ້າງໄດ້ຢ່າງຕະຫລອດການກ່ຽວກັບພາວະການທີ່ແຕກຕ່າງໃນກ່ອນໜ້າ ນັ້ນຂອງຊາວກຳມະກອນທີ່ຈຳຕ້ອງກັບມາດຳລົງຊີວິດໃນພາວະການ ທີ່ປ່າເຖື່ອນຄືນເມື່ອປຽບກັບໂລກພາຍນອກທັງໝົດ. ຍ້ອນວ່າຢ້ານຫລົ້ມ ຈົມສະນັ້ນເຖິງວ່າຢາກຫລືບໍ່ຢາກກໍຕາມ, ຊາວກະສິກອນຍັງຄົງຈຳຕ້ອງສືບໃຈເຖິງບັນດາສາຍພົວພັນທາງສັງຄົມທັງໝົດຢູ່ໃນປະເທດຂອງຕົນແລະຢູ່ໃນບັນດາປະເທດອື່ນທີ່ຜູກພັນກັນດ້ວຍຕະຫລາດໂລກລວມທັງໃນລະບອບງານກະເກນກ່ອນໜ້ານັ້ນມັນຍັງຄົງເຮັດໃຫ້ໂອໂປ້ນົບນີລາຍໄດ້ແນ່ນອນຈຳນວນໜຶ່ງ ຊຶ່ງບໍ່ຖືກເຄາະຮ້າຍຫຍັງໝົດ, ບໍ່ຕ້ອງລົງທຶນແຕ່ອັນ

ດຽວເລີຍ, ບໍ່ຕ້ອງປ່ຽນແປງຫຍັງເລີຍໃນແບບແຜນການຜະລິດ ທີ່ເກົ່າແກ່ເມື່ອກ່ອນໆ ຊຶ່ງບັດນີ້ກໍ່ບໍ່ອາດຊ່ວຍຊູເຂົ້າພົ້ນອອກຈາກການແກ່ງແຍ້ງກັນຂອງຊາວແຟກມີເອອາເມລິກາໄດ້ອີກ. ສະນັ້ນ, ບັນດາສິ່ງທີ່ ໄດ້ເວົ້າກ່ອນນີ້ເຄິ່ງສະຕະວັດກ່ຽວກັບເອີຣົບຕາເວັນຕົກນັ້ນ, ມາບັດນີ້ຍັງຄົງສາມາດຫມູນໃຊ້ຢ່າງເຕັມສ່ວນເພື່ອເວົ້າເຖິງປະເທດລັດເຊຍ ໃນຫລັງຈາກການປະຕິຮູບ, ລະອຽດແມ່ນ: ລັດທິທຶນນິຍົມແຫ່ງກະສິກຳໄດ້ " ເປັນກຳລັງຫມູນ, ມັນຂ່ວາງພາບດຳລົງຊີວິດຊາວສວນເຂົ້າໃນການເຄື່ອນເຫນັງຂອງປະຫວັດສາດ "໑ ).

---

໑) ຄວາມອັບຈົນຂອງປັດຊະຍາ ( ປາຣີ, ໑໘໔໗, ຫນ້າ໔໔ນີ) . ຜູ້ແຕ່ງໄດ້ຫມິ່ນປະຫມາດຕໍ່ບັນດາຄວາມມຸ່ງມາດປາດຖະຫນາຂອງບັນດາ ຜູ້ທີ່ຢາກຟື້ນຟູການດຳລົງຊີວິດເຈົ້າໂຄດທີ່ດີງາມຄືນ, ຟື້ນຟູຣິດຄອງຕ່າງໆທີ່ຊື່ຕົງຄືນ, ແລະອື່ນໆ, ແລະຕິຕຽນ "ການທີ່ເຮັດໃຫ້ທີ່ດິນຕ້ອງປະຕິບັດ ຕາມບັນດາກົດເກນທີ່ຄອບງຳຂະແຫນງອຸດສາຫະກຳອື່ນໆທັງຫມົດຢູ່" ແມ່ນບັນດາຄຳຈົມຫູກທີ່ປະຕິການ.

ພວກຂ້າພະເຈົ້າເຂົ້າໃຈດີວ່າ, ບັນດາຊາວປະຊາລາດ ອາດຖືເຫດຜົນທີ່ເວົ້າອອກໃນຕອນວັນນະຄະດີດັ່ງກ່າວເທິງນີ້ບໍ່ພຽງແຕ່ເບິ່ງ ຄືວ່າບໍ່ແຫນ້ນແກ່ນປານໃດຫາກຍິ່ງກ່ວານັ້ນຍັງເຂົ້າໃຈຍາກອີກ. ແຕ່ ມັນເປັນຫນ້າທີ່ທີ່ເສຍແຮງທີ່ສຸດຖ້າວ່າຈຳຕ້ອງໄຈແຍກໂດຍລະອຽດລະອໍສຳລັບຄວາມເຫັນຕ່າງໆ ເປັນຕົ້ນຄວາມເຫັນທີ່ຖືວ່າການໃຫ້ສຳປະທານ ທີ່ດິນແມ່ນປະກົດການທີ່ "ຜິດປົກກະຕິ" (ນີ້ແມ່ນຄຳເວົ້າຂອງທ່ານ ==)

ສອງແມ່ນ, ລັດທິທຶນນິຍົມແຫ່ງກະສິກຳ, ໄດ້ທຳລາຍມ້າງ ສະພາບການຢຸດສະງັກໃນຫລາຍພັນປີຂອງພື້ນຖານກະສິກຳຢູ່ ປະເທດເຮົາເປັນເທື່ອທຳອິດ, ໄດ້ຊຸກຍູ້ການດັດສ້າງເຕັກນິກຂອງມັນຢ່າງແຂງແຮງທີ່ສຸດ, ການຂະຫຍາຍຕົວຂອງບັນດາກຳລັງແຫ່ງການຜະລິດ ຂອງແຮງງານສັງຄົມ. ກ່ຽວກັບດ້ານນີ້, ໃນຫລາຍສິບປີທີ່ກະທົບ " ທຳລາຍ " ຂອງລັດທິທຶນນິຍົມໄດ້ເຮັດຫລາຍກ່ວາບໍ່ຈັກວ່າເທົ່າໃດສະຕະວັດຂອງປະຫວັດສາດກ່ອນໆນັ້ນ. ລັກສະນະງ່າຍດາຍຂອງເສດຖະກິດທຳມະ ຊາດຕາມແບບເກົ່າໄດ້ປະບ່ອນໃຫ້ລັກສະນະຫລາຍຮູບຫລາຍສີຂອງບັນດາຮູບການກະສິກຳສິນຄ້າ; ບັນດາເຄື່ອງມືເກົ່າແກ່ໄດ້ເລີ່ມຕົ້ນປະບ່ອນ ໃຫ້ເຄື່ອງຈັກ ແລະ ເຄື່ອງມືກະສິກຳດັດແປງ; ລັກສະນະຄົງທີ່ຂອງບັນດາລະບອບເພາະປູກເກົ່າກ່ອນໄດ້ຖືກທັບມ້າງຈາກແບບວິທີເພາະປູກໃໝ່. ບັນດາການປ່ຽນແປງທັງໝົດເຫລົ່ານັ້ນລ້ວນແຕ່ຕິດພັນຢ່າງສະນິດແໜ້ນ

---

===) ຕຊູບຣົບ ໃນການຖົກຖຽງກ່ຽວກັບລາຄາເຂົ້າບະເລ, ລາຍງານທີ່ຈົດຊະວະເລກໜ້າ ນັ໙).ວ່າການທີ່ຫາມບໍ່ໃຫ້ສຳປະທານບັນດາສ່ວນດິນທີ່ໄດ້ຮັບແບ່ງຂອງຊາວນາແມ່ນລະບອບໜຶ່ງທີ່ສົມໄດ້ຮັບການປົກປ້ອງວ່າລະບອບງານກະເກນແມ່ນດີກ່ວາຫລືຢ່າງນ້ອຍທີ່ສຸດມັນກໍບໍ່ຕ່າງ ຫຍັງແບບວິສາຫະກິດທຶນນິຍົມ, ແລະອື່ນໆ...ຕອນວັບນະຄະດີທັງໝົດທີ່ກ່າວມາເຖິງເທິງນີ້ໄດ້ຫັກລ້າງຄຳອ້າງຄາລົມກ່ຽວກັບເສດຖະສາດການເມືອງຊົ້ງຝ່າຍປະຊາລາດໄດ້ນຳອອກມາເພື່ອແກ້ຄວາມໃຫ້ຄວາມເຫັນ ຕ່າງໆດັ່ງກ່າວ.

ກັບປະກົດການພັນເປັນວິຊາສະເພາະໃນກະສິກຳ ຊຶ່ງເທິງນັ້ນ ເຮົາໄດ້ເວົ້າເຖິງ. ເບື້ອງຈາກທາດແທ້ຂອງມັນເອງ, ລັດທິທຶນນິຍົມ ໃນກະສິກຳ (ກໍເຊັ່ນດຽວກັນໃນອຸດສາຫະກຳ) ບໍ່ສາມາດຂະຫຍາຍຕົວສະເໝີກັນໄດ້ : ຢູ່ບ່ອນນີ້ ( ຢູ່ໃນປະເທດໜຶ່ງ, ບໍລິເວນໜຶ່ງວິຊາວິສາຫະກິດໜຶ່ງມັນຊຸກຍູ້ດ້ານນີ້ຂອງພື້ນຖານກະສິກຳ, ຢູ່ບ່ອນອື່ນ, ມັນພັດຊຸກຍູ້ດ້ານອື່ນໆ ໆລໆ... ແລວແຕ່ແຕ່ລະກໍລະນີ, ມັນດັດສ້າງເຕັກນິກຂອງວຽກງານກະສິກຳໜຶ່ງນີ້ຫລືວຽກງານກະສິກຳໜຶ່ງນັ້ນ, ເຮັດໃຫ້ ວຽກງານດັ່ງກ່າວພົ້ນຈາກພື້ນຖານເສດຖະກິດກະສິກອນເຈົ້າໂຄດຫລືພົ້ນອອກຈາກລະບອບງານກະເກນແບບເຈົ້າໂຄດ. ເພາະວ່າຂະບວນ ທັງໝົດນັ້ນສະແດງອອກຕາມຄວາມຮຽກຮ້ອງຕ້ອງການຕ່າງໆຂອງຕະຫລາດ , ບັນດາຄວາມຮຽກຮ້ອງຕ້ອງການທີ່ຜິດປົກກະຕິ ແລະ ຊ້າບໍ່ໜຳຊ້າວຜະລິດໃນບາງເທື່ອກໍບໍ່ຮູ້ ສະນັ້ນໃນແຕ່ລະກໍລະນີຕ່າງຫາກ ( ໂດຍ ມາກແມ່ນໃນແຕ່ລະບໍລິເວນ ແລະ ຍິ່ງກວ່ານັ້ນໃນແຕ່ລະປະເທດ ທີ່ ຕ່າງຫາກ ) ກະສິກຳທຶນນິຍົມພັດກາຍເປັນດ້ານດຽວກວ່າ, ລ້ວນອ່ອຍຕ້ອຍກວ່າແຕ່ກ່ອນ, ແຕ່ກົງກັນຂ້າມ ໃນເນື້ອເບິ່ງທົ່ວໄປນັ້ນມັນໄດ້ກາຍເປັນສົນເຫດສົນພົນທີ່ສຸດ ແລະ ຮອບດ້ານກວ່າກະສິກຳເຈົ້າໂຄດ. ການປະກົດຕົວອອກຂອງບັນດາຊະນິດຕ່າງໆຫາກຂອງກະສິກຳສິນຄ້າໄດ້ເຮັດໃຫ້ບັນດາວິກິດການທຶນນິຍົມໃນກະສິກຳ ແລະ ບັນດາກໍລະນີການຜະລິດທຶນນິຍົມທີ່ເຫລືອໂພດສາມາດເກີດຂຶ້ນ, ແລະ ແນ່ນອນວ່າຕ້ອງເກີດຂຶ້ນ , ແຕ່ບັນດາວິກິດການເຫລົ່ານັ້ນ ( ແລະ ກໍເຊັ່ນດຽວກັນໝົດທຸກ ວິກິດການທຶນນິຍົມໂດຍເວົ້າທົ່ວໄປ ) ຊ້ຳພັດຊຸກຍູ້ພື້ນຖານການຜະລິດ ໃນ

ໂລກ ແລະ ການພັນແຮງງານເປັນຂອງສັງຄົມ ໑ ) ໃຫ້ແຂງແຮງກ່ວາ ນັ້ນອີກ.

ສາມແມ່ນ, ລັດທິທຶນນິຍົມໄດ້ກໍ່ຕັ້ງພື້ນຖານການຜະລິດ ໂດຍຂະໜາດໃຫຍ່ທີ່ອີງບົນພື້ນຖານໃຊ້ເຄື່ອງຈັກ ແລະ ຮ່ວມມືຢ່າງ ກວ້າງຂວາງຂອງກຳມະກອນເປັນເຫື່ອທຳອິດຢູ່ລັດເຊຍ. ກ່ອນລັດທິທຶນນິຍົມ, ການຜະລິດຜະລິດຕະພັນກະສິກຳບໍ່ວ່າຍາມໃດກໍດຳເນີນງານໃນ ຂອບເຂດທີ່ບໍ່ປ່ຽນແປງ, ບົນຂະໜາດຕ່າງໆທີ່ນ້ອຍທີ່ສຸດ, ເມື່ອຊາວນາຍັງເຮັດວຽກໃຫ້ກະໂຕຕົນເອງ. ກໍ່ເຊັ່ນດຽວກັບເວລາທີ່ເຂົາເຮັດວຽກໃຫ້ເຈົ້າທີ່ດິນ, ແລະ ເວລານັ້ນກໍບໍ່ມີລະບອບຖືກຳມະສິດທີ່ດິນໜຶ່ງທີ່ ດີນຕາມແບບ "ກອມມູນຈິນນະບົດ " ໃດສາມາດເຮັດໃຫ້ພາວະການທີ່ກະຈັດກະຈາຍທີ່ສຸດນັ້ນຂອງການຜະລິດປ່ຽນແປງໄດ້. ພາວະການກະ ຈັດກະຈາຍດັ່ງກ່າວຂອງການຜະລິດພັນຢ່າງສະໜິດແໜ້ນກັບພາວະ ການ

---

໑) ຝ່າຍຈີນຕະນິຍົມ ພາກຕາເວັນຕົກ ແລະ ຝ່າຍປະຊາລາດລັດເຊຍ ຊູຊີ ໃນການເໜັ້ນໜັກໃນຂະບວນວິວັດນັ້ນ, ລັກສະນະ ດ້ານດຽວຂອງພື້ນຖານ ກະສິກຳ ທຶນນິຍົມ , ລັກສະນະ ທີ່ບໍ່ເປັນ ປົກກະຕິຂອງບັນດາວິກິດການ ຂອງລັດທິ ທຶນນິຍົມ ກໍ່ອື່ນ , ແລະ ຍ້ອນເຫດນັ້ນ , ເຂົາຈຶ່ງປະຕິເສດ ລັກສະນະ ອັນກ້າວໜ້າຂອງການ ເຄື່ອນເໜັງ ທີ່ກ້າວຂຶ້ນ ຂອງລັດທິ ທຶນນິຍົມ ປຽບກັບພາວະການ ທີ່ຢຸດ ສະງັກຂອງສະໄໝກ່ອນ ຂອງລັດທິ ທຶນນິຍົມ.

ກະຈັດກະຈາຍຂອງກະໂຕຊາວກະສິກອນເອງ ໑ ) ໂດຍທີ່ຖືກ ເກາະແໜ້ນກັບສ່ວນນາທີ່ແບ່ງໃຫ້ເຂົານັ້ນ, ກັບ "ກອມມູນຊົນນະບົດ " ອັນນ້ອຍໆ ຂອງເຂົາ, ເຂົາໄດ້ຖືກຫ່າງຈາກຢ່າງຈະແຈງລວມທັງ ບັນດາ

---

໑) ເພາະສະນັ້ນ, ເຖິງແມ່ນວ່າລະບອບຖືກຳມະສິດທີ່ດິນ ຈະມີຮູບການຕ່າງໆ ທີ່ຕ່າງກັນເກົ່າຕາມ, ແຕ່ຄົນທັງຫລາຍສາມາດໃຊ້ມັນຢ່າງເຕັມສ່ວນ ເພື່ອເວົ້າເຖິງຊາວກະສິກອນລັດເຊຍສຳລັບສິ່ງຕ່າງໆ ຈຶ່ງມາກໍໄດ້ເວົ້າເຖິງຊາວກະສິກອນນ້ອຍຢູ່ຝະລັ່ງ.

ຊາວນານ້ອຍ ( ບັນດາຜູ້ທີ່ມີຕອນດິນນ້ອຍ) ແມ່ນກອນມວນ ຊົນໜຶ່ງທີ່ໜາແໜ້ນຊຶ່ງບັນດາພາຄີທັງໝົດລ້ວນແຕ່ດຳລົງຊີວິດໃນສະພາບແວດລ້ອມອັນດຽວກັນ, ແຕ່ບໍ່ໄດ້ຕິດພັນນຳກັນຈາກບັນດາສາຍ. ພົວພັນຫລາຍດ້ານ, ແບບວິທີການຜະລິດຂອງເຂົາບໍ່ໃຫ້ເຂົາຜູກພັນນຳກັນ ແຕ່ຊ້ຳພັດເຮັດໃຫ້ເຂົາແຍກອອກຈາກກັນ. ພາວະການທີ່ແຍກອອກຈາກກັນນັ້ນຍັງໜັກໜ່ວງຂຶ້ນຕື່ມຍ້ອນສະພາບການຄົມມະນາຄົມອັນຫຍຸ້ງຍາກ ຢູ່ຝະລັ່ງ ແລະ ສະພາບທຸກຍາກຂອງຊາວນາກໍ່ຂຶ້ນ. ການຊຸດຄົ້ນຕອນດິນນ້ອຍອັນໜຶ່ງກໍບໍ່ອະນຸຍາດໝູນໃຊ້ການແບ່ງງານແຕ່ຢ່າງໃດເລີຍ, ວິທີວິທະຍາສາດແຕ່ຢ່າງໃດເລີຍ, ຈາກນັ້ນກໍ່ບໍ່ອະນຸຍາດໃຫ້ມີການ ຂະຫຍາຍຕົວອັນຫລາຍວາດຫລາຍຊົງ, ບໍ່ໃຫ້ມີການແຕກດອກອອກໜໍ່ຂອງຫລາຍຄວາມເກັ່ງກ້າສາມາດ, ບໍ່ອາດມີບັນດາສາຍພົວພັນທາງສັງຄົມທີ່ອຸດົມສົມບູນໄດ້. ແຕ່ລະຄອບຄົວຂອງຊາວນາ, ເກືອບຄືວ່າຫາລ້ຽງກຸ້ມຕົນເອງໂດຍສົມບູນ, ຕົນເອງທຳການຜະລິດຊະນິດຕ່າງໆອອກ ===)

ຊາວນາໃນກອມມູນທີ່ໃກ້ຄຽງຂອງເພາະວ່າເຂົາຂຶ້ນກັບປະເພດຕ່າງໆທີ່ຕ່າງກັນ ( ກ່ອນນັ້ນແມ່ນຊາວນາຂຶ້ນກັບເຈົ້າທີ່ດິນ, ກ່ອນນັ້ນແມ່ນຊາວນາຂຶ້ນກັບລັດ ແລະ ອື່ນໆ ), ເພາະວ່າເນື້ອທີ່ດິນນາທີ່ເປັນກຳມະສິດຂອງເຂົາຕ່າງກັນ, ເພາະວ່າເງື່ອນໄຂຕ່າງໆໃນເມື່ອເຂົາໄດ້ຮັບການປົດປ່ອຍລ້ວນແຕ່ຕ່າງກັນ ( ໝາຍເຖິງເງື່ອນໄຂຕ່າງໆ ຊຶ່ງບາງເທື່ອມັນພຽງແຕ່ແມ່ນເນື່ອງມາຈາກລັກສະນະບຸກຄົນ ຫລືວ່າເນື່ອງມາ ຈາກ

---

===) ໂດຍກົງເປັນສ່ວນໃຫຍ່ ເພື່ອໃຫ້ຕົນໃຊ້ສອຍ, ແລະ ຈາກນັ້ນສະໜອງບັນດາພາຫະນະແຫ່ງຊີວິດການເປັນຢູ່ໃຫ້ຕົນເອງດ້ວຍວິທີແລກປ່ຽນ ກັບທຳມະຊາດ ທີ່ລື່ນກວ່າການແລກປ່ຽນ ກັບສັງຄົມ . ຕອນດິນນ້ອຍໆ , ຊາວກະສິກອນ ແລະ ຄອບຄົວຂອງເຂົາ ; ຊຶ່ງຢູ່ໃກ້ ຄຽງນັ້ນ , ມີຕອນດິນນ້ອຍໆອີກ , ຊາວກະສິກອນ ຜູ້ໜຶ່ງ ແລະ ຄອບຄົວອື່ນ ຄອບຄົວໜຶ່ງ . ຫົວໜ່ວຍຈຳນວນດັ່ງກ່າວ ໂຮມເຂົ້າກັນ ເປັນບ້ານໜຶ່ງ ແລະ ບ້ານຈຳນວນໜຶ່ງ ໂຮມເຂົ້າກັນເປັນຕາແສງ . ດັ່ງນັ້ນ , ກອນອັນໃຫຍ່ໂຕແຫ່ງຊາດຝະລັ່ງ ພຽງແຕ່ເປັນຍອດ ປະລິມານອັນງ່າຍດາຍຂອງບັນດາປະລິມານໃຫຍ່ ຫລື ໜ້ອຍທີ່ຮ່ວມຊື່ເທົ່ານັ້ນ , ເວົ້າລວມມັນກໍຄ້າຍໆຄືກະສອບທີ່ບັນຈຸຕັນໄປດ້ວຍ ມັນຝະລັ່ງ ກໍເປັນກະສອບມັນຝະລັ່ງນັ້ນລະ .

Der achtzehute Brumaire des Louis Bonaparte Hmb, ໑໘໘໕ , ໜ້າ ໙໘ - ໙໙ ).

ຄວາມຈັບໃຈຕາມລຳພັງຂອງພວກເຈົ້າທີ່ດິນເປັນຜູ້ຕັດສິນເທົ່ານັ້ນ). ລັດທິທຶນນິຍົມໄດ້ມ້າງເພບັນດາຟາແອມສະໄໝກາງລວບໆ ນັ້ນທະລາຍໄປເປັນເທື່ອທຳອິດ, ແລະ ມ້າງທະລາຍຄືແນວນັ້ນແມ່ນດີທີ່ສຸດ. ປະຈຸບັນນີ້, ບັນດາການທີ່ຕ່າງກັນລະຫວ່າງຊາວນາປະເທດຕ່າງໆ, ລະຫວ່າງຊາວນາຂັ້ນຕ່າງໆ ທີ່ຈັດລຽງຕາມເນື້ອທີ່ນາສ່ວນທີ່ເຂົາຮັບແບ່ງ, ໄດ້ກາຍເປັນສິ່ງທີ່ສຳຄັນຍິ່ງກວ່າການບໍ່ເທົ່າກັນທາງເສດຖະກິດຢູ່ພາຍໃນແຕ່ລະປະເພດ, ແຕ່ລະຊັ້ນ, ແຕ່ລະກອມມູນ. ລັດທິທຶນນິຍົມ ພວມທຳລາຍມ້າງພາວະການທີ່ຫ່າງເຂີນ ແລະ ແຍກປ່ຽວຂອງທ້ອງຖິ່ນ, ພວມແທນທີ່ບັນດາການແບ່ງປັນແບບສະໄໝກາງທີ່ຍິກຍ່ອຍລະຫວ່າງ ບັນດາຊາວນາ ດ້ວຍການແບ່ງປັນແບບໃຫ່ຍ, ໃນຂອບເຂດທົ່ວປະເທດ, ການແບ່ງປັນໜຶ່ງກາຍເປັນຊົນຊັ້ນຕ່າງໆ ທີ່ມີຖານະຕ່າງກັນໃນລະບົບ ເສດຖະກິດທຶນນິຍົມທັງໝົດ [1] ). ຖ້າວ່າເມື່ອກ່ອນນັ້ນກະໂຕບັນດາ ເງືອນ

---

໑) ໃນສັງຄົມທຶນນິຍົມ, ຄວາມຕ້ອງການຮ່ວມສຳພັນ ແລະ ພັນທະພາບບໍ່ລົດຜ່ອນ, ແຕ່ກົງກັນຂ້າມຍັງທະວີຂຶ້ນຢ່າງເອົາຫຍັງມາ ປຽບທຽບບໍ່ໄດ້. ແຕ່ເອົາຮູບການແກ່ຊະລາເພື່ອຕອບສະໜອງຄວາມ ຕ້ອງການດັ່ງກ່າວນີ້ຂອງສັງຄົມໃໝ່ນັ້ນກໍໄຮ້ເຫດຜົນແທ້. ສັງຄົມໃໝ່ນີ້ຮຽກຮ້ອງໜຶ່ງແມ່ນການຮ່ວມສຳພັນ ບໍ່ຖືກຈຳກັດໃນຂອບເຂດທ້ອງຖິ່ນໜຶ່ງ, ຊັ້ນວັນນະໜຶ່ງ, ສັງຄົມອາຊີບໜຶ່ງ; ສອງແມ່ນການຮ່ວມສຳພັນ ຕ້ອງກຳເນີດຈາກການຕ່າງກັນກ່ຽວກັບຖານະ ແລະ ກ່ຽວກັບຜົນ ປະໂຫຍດໂດຍລັດທິທຶນນິຍົມ ແລະ ການພັນແຍກໃນຊາວນາກໍ່ຂຶ້ນ ". ====)

ໄຂການຜະລິດໄດ້ຕັດສິນການທີ່ມະຫາຊົນຊາວນາດຳລົງຊີວິດຢ່າງຄົງທີ່ຢູ່ທ້ອງຖິ່ນຂອງເຂົາແລ້ວ ບັດນີ້ການກໍ່ຄືບັນດາຮູບການ ແລະ ບໍລິເວນທີ່ຕ່າງກັນຂອງກະສິກຳສິນຄ້າ ແລະ ທຶນນິຍົມຂັ້ນນັ້ນບໍ່ອາດຈະບໍ່ກໍ່ ບັນດາການຍ້າຍພົນລະເມືອງເປັນລວາດໆຂຶ້ນໃນທົ່ວປະເທດ, ແລະ ບໍ່ມີການເຄື່ອນທີ່ຂອງພົນລະເມືອງ ( ດັ່ງທີ່ພວກຂ້າພະເຈົ້າໄດ້ຊີ້ອອກຢູ່ ຂ້າງເທິງນັ້ນ ) ແລ້ວລັກສະນະຕື່ນຕົວ ແລະ ລັກສະນະເປັນເຈົ້າການຂອງພົນລະເມືອງກໍ່ບໍ່ສາມາດຂະຫຍາຍຕົວໄດ້.

---

===) (ວ.ອ. ເລນິນ, ປຶ້ມທີ່ໄດ້ແນະນຳ, ໜ້າ ໗໑ - ໗໔ . ໝາຍເຫດ ) ( ອ້າງເລນິນຄົບຊຸດ, ສຳນັກພິມຈຳໜ່າຍໂປຼແກຼສ , ມົສກູ, ເຫຼັ້ມ ໔, ໜ້າ ໔໘໘ ) (ພ.ປ).

---

*. " ວັນທີ ໑໘ ເດືອນໝອກມົວ ຂອງຫຼຸຍໂບນາປາກເຕ ",ຣຳບົວ ໑໙໘໕ , ໜ້າ ໗໘ - ໗໗ .

ຫ້າມຈຳໜ່າຍ

## ພາກ IV

## ໂຮງງານ ຫັດຖະກຳ ທຶນນິຍົມ ແລະ ແຮງງານ ທີ່ເຮັດຢູ່ເຮືອນໃຫ້ ນາຍທຶນ.

.....

### III. ເຕັກນິກໃນໂຮງງານ ຫັດຖະກຳ ການແບ່ງງານ ແລະ ຄວາມໝາຍ ຂອງມັນ.

ບັດນີ້ພວກເຮົາອີງໃສ່ເອກະສານຕ່າງໆ ທີ່ໄດ້ສະເໜີມາ ເພື່ອຖອນເປັນຂໍ້ສະຫລຸບ, ພ້ອມກັນນັ້ນກໍພິຈາລະນາເບິ່ງເອກະສານ ເຫລົ່ານັ້ນມັນຈະຍົກຈຸດພິເສດຕ່າງໆຂອງ ໄລຍະສະເພາະລາຍແຫ່ງການ ຂະຫຍາຍຕົວຂອງລັດທິທຶນນິຍົມ ໃນອຸດສາຫະກຳຢູ່ໃນປະເທດເຮົາຫລືບໍ່.

---

ຈຸດພິເສດລວມອັນໜຶ່ງໃຫ້ວິຊາຫັດຖະກຳຕ່າງໆທັງໝົດ ຊຶ່ງພວກເຮົາກໍໄດ້ພິຈາລະນາອັນນັ້ນແມ່ນການຮັກສາການຜະລິດແບບ ຫັດຖະກຳ ແລະ ການແບ່ງງານໜຶ່ງທີ່ມີລະບົບໄວ້ ຊຶ່ງດຳເນີນໄປບົນ ຂະໜາດໜຶ່ງທີ່ກວ້າງໃຫຍ່. ຂະບວນວິວັດແຫ່ງການຜະລິດປະກອບດ້ວຍ ຫລາຍວຽກງານພາກສ່ວນ ຊຶ່ງຮັບຜິດຊອບໂດຍບັນດາກຳມະກອນທີ່ມີວິຊາ ສະເພາະຕ່າງກັນ. ກໍ່ສ້າງບັນດາກຳມະກອນທີ່ມີວິຊາສະເພາະເຊັ່ນ ດຽວ

ກັນນັ້ນໄດ້ຈຳຕ້ອງມີເວລາຍາວນານພໍສົມຄວນ. ເພາະສະນັ້ນ,ເປັນທຳມະດາວ່າລະບອບທີ່ໄປພ້ອມກັນຕາມໂຮງງານຫັດຖະກຳແມ່ນ ລະບອບຮຽບວຽກ. ພວກເຂົາໄດ້ຮູ້ວ່າ, ໃນຂອບເຂດລວມຂອງເສດຖະກິດສິນຄາ ແລະ ຂອງລັດທິທຶນນິຍົມ, ປະກົດການດັ່ງກ່າວໄດ້ພາໄປເຖິງ ຮູບການຕ່າງໆທີ່ຂື້ນກັບອັນຮ້າຍທີ່ສຸດກ່ຽວກັບຮ່າງກາຍ ແລະ ບັນດາ ຮູບການຂູດຮີດອັນຮ້າຍທີ່ສຸດ [1]) ລະບອບຮຽບວຽກຈະຫາຍຕົວໄປ ກໍ່ຕໍ່

---

໑) ພວກເຂົາພຽງແຕ່ຍົກຕົວຢ່າງຂໍ້ໜຶ່ງເທົ່ານັ້ນໃນບ້ານ ໂບຣິຊົບກາ ( ເມືອງກຣາຍໂວຣົນ,ແຂວງກວກເຊີ ) ມີອາຊີບທາສີໃສ່ຮູບປັ້ນຂອງເທວະດາຊຶ່ງໃຊ້ກຳມະກອນລະຫວ່າງ ໕໐໐ ຄົນ. ບັນດາຫົວໜ້າ ຄົນງານບໍ່ໃຊ້ກຳມະກອນຮັບຈ້າງ, ແຕ່ເຂົາມີບັນດາຊ່າງຮຽບວຽກຊຶ່ງເຮັດແຕ່ລະວັນແຕ່ ໑໔ ເຖິງ ໑໕ ຊົ່ວໂມງ. ການທີ່ເຂົາມີທ່າທີເປັນ ປໍລະປັກກັນກັບຮ່າງບັນດາໃຫ້ຈັດຕັ້ງໂຮງຮຽນສອນອາຊີບແຜນແຫ່ງໜຶ່ງ ໃນບ້ານ, ຕັ້ງແມ່ນວ່າເຂົາຍ້ານເສຍກຳມະກອນຈຳນວນທີ່ບໍ່ຕ້ອງສິ້ນເປືອງເງິນຂອງເຂົາ, ເຊິ່ງແມ່ນບັນດາຊ່າງຮຽບວຽກ ( "ລາຍງານ ແລະ ສືບສວນ " ເຫລັ້ມ ໑, ໜ້າ ໓໓໓ ) ສະພາບຊີວິດການເປັນຢູ່ຂອງພວກເດັກນ້ອຍທີ່ເຮັດຢູ່ເຮືອນໃຫ້ໂຮງງານຫັດຖະກຳທຶນນິຍົມ ກໍ່ບໍ່ຕ່າງຫຍັງກັບສະພາບຊີວິດການເປັນຢູ່ຂອງຊ່າງຮຽບວຽກ, ເພາະວ່າກຳມະກອນທີ່ເຮັດຢູ່ເຮືອນຕ້ອງແກ່ຍາວ Nec plus ultra * ) ວັນແຮງງານຂອງຕົນອອກແລະຕ້ອງຈຳໃຫ້ຄອບຄົວອອກແຮງງານ ຢ່າງອອກເຫື່ອເທແຮງ, ຮູບການຄອບຄົວຂອງການຜະລິດໃຫຍ່ ແລະ ==)

ເມື່ອ ໂຮງງານຫັດຖະກຳຂະຫຍາຍຕົວສູງກ່ວານັ້ນອີກ ແລະ ເມື່ອຊຸດສາທະກຳກົນຈັກໃຫຍ່ກໍ່ຕົວຂຶ້ນເທົ່ານັ້ນ. ໃນຂະນະນັ້ນເຄື່ອງຈັກຈະເຮັດໃຫ້ເວລາຮຽນວຽກລຶດຜ່ອນລົງ ມິນິມູມ, ຫລືວ່າວຽກງານ ພາກສ່ວນກາຍເປັນງ່າຍດາຍຈົນວ່າເດັກນ້ອຍກໍ່ຮັບປະກັນໄດ້ ( ເບິ່ງຂໍ້ຍົກ ຕົວຢ່າງ ດາກາຣິເອ ດັ່ງເທິງນັ້ນ ).

ການຜະລິດແບບຫັດຖະກຳໄດ້ຖືກຮັກສາໄວ້ເປັນພື້ນຖານໃຫ້ ແກ່ໂຮງງານຫັດຖະກຳໄດ້ໃຫ້ເຮົາເຫັນຄວາມບໍ່ເປັນໃຈພໍສົມຄວນຂອງໂຮງງານຫັດຖະກຳຖ້າປຽບກັບໂຮງຈັກ. ການແບ່ງງານກໍ່ກ້າວຂະຫຍາຍຊັກຊ້າທີ່ສຸດທາງກວ້າງກໍ່ຄືທາງເລິກ. ເຫດສະນັ້ນຫລາຍສິບປີ ( ຍິ່ງກ່ວານັ້ນໃນຫລາຍຮ້ອຍປີ ), ໂຮງງານຫັດຖະກຳຍັງຄົງຮັກສາຮູບການ ທຳອິດຂອງມັນໄວ້; ພວກເຮົາສາມາດເຫັນໄດ້ວ່າອາຊີບຫັດຖະກຳເປັນຈຳນວນສ່ວນມາກຊຶ່ງພວກເຮົາພິຈາລະນານັ້ນລ້ວນແຕ່ດຳລົງຄົງຕົວ ເທິງຕີນແລ້ວ, ແຕ່ວ່າຈົນມາຮອດປະຈຸບັນນີ້, ຊຶ່ງໃນສ່ວນຫລາຍຂອງບັນດາອາຊີບເຫລົ່ານັ້ນ, ພວກເຮົາກໍ່ຍັງບໍ່ທັນເຫັນດີການພັນປ່ຽນທີ່ສຳຄັນ ແກ່

---

==) ໂຮງງານຫັດຖະກຳແມ່ນທົນທາງເອົາຕົວລອດທີ່ຈຳເປັນແລະ ຍິ່ງກ່ວານັ້ນມັນຫັນລູຖຽງລະດັບໃດໜຶ່ງແມ່ນສົມເປັນການຄອຍຫວັງ ສຳລັບຊຸດສາທະກຳນ້ອຍ, ເອກະລາດ, ເມື່ອຊຸດສາທະກຳນັ້ນກວມທົ່ວບໍລິ ເວນໜຶ່ງທີ່ກວ້າງໃຫຍ່. (ຄາຣໂດແນນົບ, ໃນ "ເພີຍຂ່າວກົດໝາຍ" ໑໘໘໓, ສະບັບເລກ ໑໑, ໜ້າ ໔໓໔).

*. ສຸດຂີດ.

ຢ່າງໃດໃນດ້ານແບບວິທີການຜະລິດເລີຍ.

ສ່ວນວ່າການແບ່ງງານນັ້ນ, ຢູ່ທີ່ນີ້ພວກເຮົາຈະບໍ່ເວົ້າເຖິງບັນດາບົດທະຍັນ, ຊຶ່ງທຸກຄົນຕ່າງກໍ່ຮູ້ແລ້ວ, ຂອງວິຊາເສດຖະສາດທີ່ ກ່າວອ້າງກ່ຽວກັບບົດບາດຂອງການແບ່ງງານໃນຂະບວນວິວັດທະນາການຂະຫຍາຍຕົວຂອງບັນດາກຳລັງການຜະລິດຂອງແຮງງານ. ໃນພື້ນຖານການຜະລິດທີ່ອີງໃສ່ພື້ນຖານແຮງງານຫັດຖະກຳນັ້ນ, ເຕັກນິກອາດຈະ ກ້າວໜ້າຂຶ້ນໄດ້ກໍ່ຕໍ່ເມື່ອມັນຢູ່ພາຍໃຕ້ຮູບການຂອງການແບ່ງງານເທົ່ານັ້ນ). ພວກເຮົາພຽງແຕ່ຍົກສອງກໍລະນີທີ່ສຳຄັນກ່ວາໝູ່ຂຶ້ນ ເພື່ອພິສູດ ໃຫ້ລັກສະນະທີ່ຕ້ອງເປັນໄປຂອງການແບ່ງງານ, ໃນດ້ານທີ່ມັນເປັນໄລຍະກະກຽມໃຫ້ແກ່ອຸດສາຫະກຳກົນຈັກໃຫ່ຍໜຶ່ງແມ່ນມີແຕ່ການແບ່ງປັນຂະບວນວິວັດແຫ່ງການຜະລິດເປັນຣວາດວຽກງານໜຶ່ງກົນຈັກອ້ອຍຕ້ອຍ ແລະ ງ່າຍດາຍທີ່ສຸດ; ຈຶ່ງເຮັດໃຫ້ມີຄວາມສາມາດໃນການໃຊ້ກົນຈັກໄດ້ ຊຶ່ງກ່ອນອື່ນໝົດຄົນທັງຫລາຍໃຊ້ສຳລັບວຽກງານຕ່າງໆ ທີ່ງ່າຍດາຍ ກ່ວາໝູ່, ແລ້ວຈຶ່ງຄ່ອຍໆໃຊ້ເຂົ້າວຽກງານຕ່າງໆທີ່ສັບສົນກ່ວາ. ເປັນຕົ້ນໃນຂະແໜງຕ່ຳແຜ່ນ, ຊຶ່ງຄົນເຮົາໄດ້ໃຊ້ຈັກກີ່ຕ່ຳຫູກ ເພື່ອຕ່ຳແພ ຊະນິດທຳມະດາ, ແຕ່ສຳລັບໄໝນັ້ນສ່ວນຫລາຍກໍ່ຍັງຄົງຕ້ອງຕ່ຳດ້ວຍມື ... ໃນຂະແໜງບັນຈະໂລຫະ, ເຄື່ອງຈັກກ່ອນອື່ນໝົດແມ່ນໄດ້ໃຊ້ ເພື່ອເຮັດວຽກງານໜຶ່ງໃນວຽກງານຕ່າງໆ ທີ່ງ່າຍດາຍກ່ວາໝູ່, ເຊັ່ນຝົນໃຫ້ເຫລື້ອມ, ແລະ ອື່ນໆ ... ແຕ່ວຽກທີ່ແບ່ງນ້ອຍໃຫ້ຂະບວນ ວິວັດການຜະລິດເປັນວຽກງານຕ່າງໆ ທີ່ງ່າຍດາຍທີ່ສຸດນັ້ນ, ທັງເປັນໄລຍະໜຶ່ງທີ່ກະກຽມໃຫ້ການປະຕິບັດການຜະລິດໃຫ່ຍດ້ວຍກົນຈັກ, ພ້ອມກັນ

ນັ້ນມັນກໍເຮັດໃຫ້ອາຊີບຫັດຖະກຳນ້ອຍທະວີຂຶ້ນຕື່ມ. ພົນລະເມືອງ ໃນແຖບໃກ້ຄຽງສາມາດເຮັດວຽກງານພາກສ່ວນເຫລົ່ານັ້ນຢູ່ເຮືອນຫລື ຮັບວັດຖຸປະກອບຂອງບັນດາເຈົ້າຂອງໂຮງງານຫັດຖະກຳ ແລະ ຈະເຮັດຕາມໃບຈ່ອງສິນຄ້າຂອງເຂົາ ( ຕິດຂົນໃສ່ຝອຍໃນອາຊີບເຮັດຝອຍ ; ປຸງແຕ່ງໜັງແກະ, ເຮັດເສື້ອຊຸມຂອງຂົນ, ເຮັດຖົງມື; ປະດິດເກີບ, ແລະ ອື່ນໆ ໃນອາຊີບປຸງແຕ່ງໜັງ; ສຳເລັດຫວີໃນອາຊີບເຮັດຫວີ , ປະກອບນ້ຳເຕົ້າຊາໂມວາ ງລງ ຫລືວ່າ " ຂອກເງິນຂອງ " ຊື້ວັດຖຸດິບ, ແລ້ວຈຶ່ງເຮັດບັນດາພາກສ່ວນປະກອບ ເພື່ອຂາຍໃຫ້ບັນດາ ເຈົ້າຂອງໂຮງງານຫັດຖະກຳ ( ເຊັ່ນໃນອາຊີບໝວກ, ເຮັດລິດມ້າ,ເຮັດເຄື່ອງເສບອັກກອກເດອົງ ແລະ ອື່ນໆ )ເບິ່ງຄືວ່າເປັນສິ່ງທີ່ປັ່ນໂລກ. ການຂະຫຍາຍຕົວຂອງບັນດາອາຊີບຫັດຖະກຳນ້ອຍ ( ຊ້ຳບໍ່ໜຳບາງທີພັດເປັນບັນດາອາຊີບ " ເອກະລາດ " ອີກ) ແຕ່ຊ້ຳພັດເປັນສິ່ງທີ່ສະແດງອອກຂອງການຂະຫຍາຍຕົວຂອງໂຮງງານຫັດຖະກຳທຶນນິຍົມ. ແຕ່ອັນນັ້ນແມ່ນຄວາມຈິງ. " ຄວາມເປັນເອກະລາດ" ຂອງ" ຊ່າງ ຫັດຖະກຳ " ຈຳນວນໃດໜຶ່ງນັ້ນເປັນສິ່ງທີ່ບໍ່ມີຈິງໂດຍສິ້ນເຊີງ. ຖ້າວ່າບໍ່ຕິດແໜ້ນ ກັບວຽກງານຕ່າງໆຂອງພາກສ່ວນອື່ນ, ບັນດາພາກສ່ວນອື່ນອື່ນຂອງພະລິດພັນນັ້ນແລ້ວວຽກງານຂອງເຂົາບໍ່ຄົງຕົວ, ພະລິດພັນຂອງເຂົາບາງເທື່ອກໍ່ບໍ່ມີຄຸນຄ່າໃຊ້ສອຍແຕ່ຢ່າງໃດເລີຍຊ້ຳ. ມີແຕ່ນາຍ ທຶນໃຫຍ່ ເທົ່ານັ້ນຈຶ່ງອາດສາມາດກໍ່ຕັ້ງ ໑*) ແລະ ໃນຕົວຈິງຈຶ່ງໄດ້ ກໍ່

---

໑* ເປັນຫຍັງຈຶ່ງມີແຕ່ນາຍທຶນເທົ່ານັ້ນທີ່ສາມາດກໍ່ຕັ້ງການ ==>

ຕັ້ງການເຊື່ອມຕໍ່ດັ່ງກ່າວນັ້ນຂຶ້ນ, ເພາະມັນໄດ້ຮູ້ໃຊ້ຫຼາກວິທີເພື່ອປົກຄອງກອນບັນດາກຳມະກອນພາກສ່ວນທີ່ໜາແໜ້ນ. ໜຶ່ງໃນບັນດາ ຄວາມຜິດພາດອັນເປັນພື້ນຖານຂອງວິຊາເສດຖະສາດປະຊາລາດຢູ່ບ່ອນວ່າ ວິຊານັ້ນບໍ່ຮູ້ເຖິງ ໂດຍຕັ້ງໃຈຫລືວ່າເຊື່ອງອຳຄວາມຈິງອັນນີ້ກ່າວຄື: "ຊ່າງຫັດຖະກຳ " ເຮັດລາຍລະອຽດຕ່າງໆຂອງພະລິດພັນພາກສ່ວນ ທີ່ປະກອບເປັນຂອງໂຮງງານຫັດຖະກຳທຶນນິຍົມ.

ສອງແມ່ນ, ສິ່ງທີ່ຕອງນັ້ນໜັກເປັນພິເສດແມ່ນໂຮງງານຫັດຖະກຳໄດ້ກໍ່ສ້າງບັນດາກຳມະກອນທີ່ຄ່ອງແຄ່ວຂຶ້ນ. ຫລັງຈາກການດັດແປງຊຸດສາທະກຳກົນຈັກໃຫຍ່, ບໍ່ສາມາດຂະຫຍາຍໄວຄືແນວນັ້ນໄດ້, ຖ້າວ່າກ່ອນນັ້ນບໍ່ມີໄລຍະນານໜຶ່ງ, ຊຶ່ງໃນນັ້ນໂຮງງານຫັດຖະກຳກໍ່ສ້າງ ກຳມະກອນເປັນຕົ້ນຄື ບັນດາພາລະກອນຜູ້ສືບສອນຂະແໜງ ຕ່ຳແພ່ນແບບ " ຫັດຖະກຳ " ໃນເມືອງໂປກຣົບ, ແຂວງລວາດິເນັຍ, ໄດ້ຍົກໃຫ້ເຫັນ " ຊ່າງມີອາຊີບຊຳນິຊຳນານ ແລະ ມີປະສົບການ " ອັນເປັນສິ່ງສັນພິເສດຂອງບັນດາຊ່າງຕ່ຳແພ່ນຢູ່ຕາແສງກາດີກິໂນ ( ບ້ານ ໂອເຣໂຕໂວ ແລະ ບັນດາໂຮງຈັກທີ່ລຊໂນໂຣຢັບ ແມ່ນສັງກັດຕາແສງ ດັ່ງ

---

==) ເຊື່ອມຕໍ່ນັ້ນໄດ້ ? ເພາະວ່າດັ່ງທີ່ພວກເຮົາກໍໄດ້ຮູ້ແລວ, ພື້ນຖານການຜະລິດສິນຄ້າໄດ້ກໍ່ຄວາມກະຈັດກະຈາຍຂອງຊາວຜະລິດນ້ອຍ ແລະຄວາມພັນແຍກໂດຍສິ້ນເຊີງຂອງເຂົາ ; ເພາະວ່າອາຊີບຫັດຖະກຳ ນ້ອຍໄດ້ປະບັນດາໂຮງຈັກທຶນນິຍົມແລະການຄ້າທຶນນິຍົມໄດ້ໃຫ້ ໂຮງງານຫັດຖະກຳ.

ກ່າວນີ້ ) ຄື : " ຍັງບໍ່ທັນມີບ່ອນໃດຊຶ່ງ...ພວກຂ້າພະເຈົ້າ ພົດເຫັນ ຄວາມຊຸ້ນຂ້ຽວໃນການອອກແຮງງານຄືແນວນັ້ນ...ຢູ່ທີ່ນີ້,ເຂົາດຳເນີນ ການແບ່ງງານອັນແໜ້ນແຟ້ນຢູ່ສະເໝີລະຫວ່າງຊ່າງຕ່ຳແຜ່ນກັບ ຊ່າງ ຣັດຫລອດ...ອາດິດ...ກໍໄດ້ສອນໃຫ້ບັນດາຊາວຕາແສງກູຢີກີໂນ.. ຮູ້ບັນດາວິທີການເຕັກນິກທີ່ດີບໍລິບູນຂອງການຜະລິດ...ຈຸນວູດທີ່ຕົ້ນພົບ ທິດເດີນໃນເມື່ອພົບຂໍ້ຫຍຸ້ງຍາກທຸກຊະນິດ "໑ ) ກ່ຽວກັບຂະແໜງ ຕ່ຳ ໄໝ, ພວກເຮົາໄດ້ອ່ານ :" ບໍ່ແມ່ນວ່າໃນບໍ່ວ່າບ້ານໃດ, ເຂົາຢາກ ກໍ່ສ້າງໂຮງງານຫລາຍເທົ່າໃດກໍໄດ້ ", " ໂຮງງານຕ້ອງໄປນຳຊ່າງ ຕ່ຳແຜ່ນຢູ່ໃນບັນດາບ້ານຊຶ່ງຢູ່ຫັ້ນ, ໂດຍອາໄສການຍົກຍ້າຍ ພົນລະ ເມືອງອຸດສາຫະກຳ " ( ເຮົາສາມາດເພີ່ມ ) ຫລືແຮງງານທີ່ເຣັດຢູ່ ເຮືອນ ) " ໄດ້ກໍ່ຕົວເປັນຖັນແຖວກຳມະກອນທີ່ຮູ້ອາຊີບຂຶ້ນ "໒** ). ບັນດາໂຮງງານຄືໂຮງງານທີ່ຍົບເກັບຢູ່ໃນແຕກບົວ ໓*** ) ຈະບໍ່ ສາ ມາດຂະຫຍາຍຕົວໂດຍໄວໄດ້, ຖ້າວ່າໃນບ້ານກິມຣີ, ເປັນຕົ້ນ,ບັນດາ

---

໑) ບັນດາອາຊີບ " ສຳຣວງຢູ່ແຂວງ ວລາດິເມຍ ", ເຫລັ້ມ III , ໜ້າ ໒໒.

໒**) ບັນດາອາຊີບ " ສຳຣວງຢູ່ແຂວງ ວລາດິເມຍ ",ເຫຼັ້ມ III, ໜ້າ ໖໓.

໓*** ) ເມື່ອປີ ໑໘໙໐ - ກຳມະກອນ ໕໑໔ ຄົນ, ຈຳນວນ ພະລິດພັນແມ່ນ ໖໐໐.໐໐໐ ຣູບ, ເມື່ອປີ ໑໘໙໔ - ໑໘໙໕ - ກຳມະ ກອນ ໘໔໔ຄົນ, ຈຳນວນພະລິດພັນແມ່ນ ໑.໒໘໘.໐໐໐ ຣູບ.

ກຳມະກອນທີ່ຄ່ອງແຄ່ວນັ້ນບໍ່ໄດ້ຮັບການກໍ່ສ້າງຂຶ້ນຢູ່ຫັ້ນ ໂດຍຜ່ານ ຫລາຍສະຕະວັດ ແລະ ປະຈຸບັນນີ້ເຂົາພວມຢາກອົບພະຍົບ,ໆລໆ. ສະນັ້ນ , ຕັ້ງແມ່ນຍ້ອນແນວນັ້ນເອງ, ການທີ່ໂຮງງານຫັດຖະກຳສ້າງໃຫ້ມີບັນດາພື້ນທີ່ກວາງໃຫ່ຍຂຶ້ນທີ່ດຳເນີນການຜະລິດໂດຍສະເພາະທີ່ແນ່ນອນ ແລະ ສ້າງໃຫ້ມີກອນກຳມະກອນທີ່ຫນາແຫນ້ນມີສີມືຄ່ອງແຄ່ວຂຶ້ນ, ເປັນວຽກຫນຶ່ງທີ່ມີຄວາມຫມາຍອັນໃຫ່ຍໂຕທີ່ສຸດ ໑* ).

ການແບ່ງງານໃນໂຮງງານຫັດຖະກຳທຶນນິຍົມໄດ້ເຮັດໃຫ້ ກຳມະກອນພ້ອມທັງ " ຊ່າງຫັດຖະກຳ " ທີ່ເຮັດບັນດາລາຍລະອຽດຂອງຜະລິດພັນນັ້ນກາຍເປັນຮູບແປກປະຫລາດ ແລະ ຖືກພິການ.ການແບ່ງງານໄດ້ສ້າງບັນດາຊ່າງທີ່ປີຊາສາມາດ ແລະ ບັນດາຊ່າງທີ່ພິການ; ຊ່າງຜູ

---

໑* ສັບເຕັກນິກ"ອາຊີບຫັດຖະກຳທົ່ວບໍລິເວນ"ຍົກໃຫ້ເປັນລັກສະນະພິເສດຂອງປະກົດການນີ້ຢ່າງຈະແຈ້ງ. ກອກສັກ ໄດ້ຂຽນ; " ນັບແຕ່ສະຕະວັດ XVII,ເປັນຕົ້ນມາ, ອຸດສາຫະກຳຢູ່ຊົນນະບົດ ເລີ່ມຕົ້ນຂະຫຍາຍຕົວຢ່າງເຫັນກັບຕາ; ຫມົດແຕ່ລະບ້ານ, ພິເສດແມ່ນ ບັນດາບ້ານຢູ່ອ້ອມແອ້ມມົສກູ, ນອນຢູ່ແຄມຖະຫນົນຫົນທາງໃຫ່ຍ, ເລີ່ມຕົ້ນເຮັດອາຊີບຫນຶ່ງທີ່ແນ່ນອນ; ຊາວບ້ານນີ້ເປັນຊ່າງຟອກຫນັງ,ຊາວບ້ານນັ້ນເປັນຊ່າງຕຳຫູກ, ຢູ່ບ້ານອື່ນເປັນຊ່າງຍ້ອມ, ປະກອບລົດ, ເປັນຊ່າງຕີເຫລັກ,ແລະ ອື່ນໆ ທ້າຍສະຕະວັດຫວ່າງແລ້ວນີ້,ອາຊີບ ຫັດຖະກຳຕ່າງໆໃນທົ່ວບໍລິເວນດັ່ງກ່າວ, - ບາງເທື່ອເຂົາເອີ້ນແນວນັ້ນ,ໄດ້ແຜ່ຫລາຍຢູ່ລັດເຊຍ " ( ປ.ທ.ດ.ອ. ຫນ້າ ໑໑໙, ໑໔໑ ).

ເກືອງກໍຫາໄດ້ຍາກ ແລະ ເຮັດໃຫ້ບັນດາພາລະກອນສືບສວນຕ້ອງ ນິຍົມ ນັບຖື ໑) ; ສ່ວນຊ່າງຜູ້ພິການແມ່ນ " ບັນດາຊ່າງຫັດຖະກຳຈຳນວນ ຫລວງຫລາຍ, " ໜ້າເອີກລີບ, ນິຍາວເກີນລະດັບ, " ມີເອີນລ່ອງ ດຽວ", ແລະອື່ນໆ...໒) .

ວ.ອ.ເລນິນ, ຄົບຊຸດ, ສຳນັກພິມຈຳໜ່າຍ ໂປຼແກຼສ໌, ມົສກູ, ໑໙໗໖ , ເຫລັ້ມ ໓, ໜ້າ ໓໘໔ - ໓໙໑ , ໔໓໓ -໔໓໘ .

---

໑) ພວກເຮົາພຽງແຕ່ເອົາຕົວຢ່າງສອງຂໍ້ດັ່ງນີ້ເທົ່ານັ້ນ: ຊ່າງກະແຈທີ່ລັອກຢູ່ບ້ານ ປາໂວໂວ ຊື່ວ່າ ຂະໂວຣົບ, ແຕ່ລະໂດລິດນິກ * ໃດແມ່ນເຮັດກະແຈໄດ້ອັນໜຶ່ງ; ມີພາກສ່ວນຂອງກະແຈນ້ອຍກວ່າ ຫົວຂອງເຂັມຫຍິບ (ລາບຢີນ, ປ.ທ.ດ.ອ. ໜ້າ ໔໔) ຜູ້ເຮັດ ເຄື່ອງຫລິ້ນຂອງເດັກນ້ອຍຜູ້ໜຶ່ງຢູ່ແຂວງ ມົສກູ ຊຶ່ງເບິ່ງຄືວ່າໃນຕະຫລອດ ຊີວິດນັ້ນພຽງແຕ່ເຮັດອາຊີບປະດັບບັນດານາແກ່ລົດຄືນ, ສະນັ້ນໃນແຕ່ລະມື້ຈຶ່ງບັນລຸເຖິງລະດັບທີ່ເຮັດໃຫ້ ໔໐໐ ໂຕ ( ເອກະສານສະຖິຕິ ກ່ຽວກັບແຂວງ ມົສກູ, ສະບັບ III, ພາກ II , ໜ້າ ໓໘ - ໓໙).

໒) ທ່ານ ກຣິໂກຣິແອບ ໄດ້ເວົ້າເຖິງບັນດາຊ່າງຫັດຖະກຳ ຢູ່ປາໂວໂວ ດັ່ງກ່າວນີ້: " ຂ້າພະເຈົ້າໄດ້ພົບກຳມະກອນຜູ້ໜຶ່ງ ຊຶ່ງຜີປີມານີ້ຍັງຄົງຢືນເຮັດວຽກຕໍ່ໜ້າລົດໂອໂຕຄັນໜຶ່ງຢູ່ເລື້ອຍໆມາ, ເຫດສະນັ້ນຝາຕີນຊ້າຍທັບຖືເກີບຂອງເພິ່ນໄດ້ເຮັດໃຫ້ແປນປູເຮືອນ ===)

=÷=) ຫລຸບລົງກ່ວາເຄິ່ງໜຶ່ງລວງໜາຂອງແປ້ນ ; ເພິ່ນເວົ້າດ້ວຍສຽງເວົ້າຕະຫລົກທີ່ຂົມຂື່ນວ່າ ເມື່ອໃດເພິ່ນເຈາະແປ້ນປູ້ຮານນັ້ນຊອດແລ້ວ, ເຈົ້າຂອງຈະໄລ່ເພິ່ນອອກ "( ປຶ້ມທີ່ໄດ້ອ້າງ, ໜ້າ ໑໐໗ - ໑໐໘)

---

* ຫົວໜ່ວຍນ້ຳໜັກເທົ່າທຽມ ໔,໘໕ ກຣາມ .

24/VII
ຫ້າມຈຳໜ່າຍ

# ພາກທີ ສາມ
# ບາງຈຸດກ່ຽວກັບການແບ່ງງານໃໝ່
# ພາຍໃຕ້ລະບອບສັງຄົມນິຍົມ.

ຄັດຈາກ ນິພົນ

## ບັນດາຜູ້ເປັນ " ເພື່ອນຂອງປະຊາ " ແມ່ນແນວໃດແລະ ເຂົາຕໍ່ສູ້ຕ້ານບັນດາຊາວປະຊາທິປະໄຕ-ສັງຄົມນິຍົມແນວໃດ

.....

ເມື່ອກ່າວເຖິງການຜະລິດທຶນນິຍົມທີ່ພັນແຮງງານເປັນສັງຄົມນັ້ນບໍ່ແມ່ນໄດ້ເວົ້າເຖິງຄົນທັງຫລາຍທີ່ເຮັດວຽກຢູ່ບ່ອນດຽວກັນ (ນັ້ນມັນພຽງແຕ່ສ່ວນນ້ອຍໜຶ່ງຂອງຂະບວນວິວັດ) ຫາກແມ່ນເວົ້າເຖິງ ການສະສົມທຶນທີ່ຕິດຫອຍກັບການພັນແຮງງານສັງຄົມເປັນວິຊາສະເພາະ, ການລຶດຜ່ອນຈຳນວນບັນດານາຍທຶນລົງໃນແຕ່ລະຂະແໜງອຸດສາຫະກຳ ທີ່ແນ່ນອນ ແລະ ການເພີ່ມຈຳນວນບັນດາ ຂະແໜງອຸດສາຫະກຳຕ່າງຫາກຂຶ້ນ; - ແມ່ນເວົ້າເຖິງຫລາຍຂະບວນວິວັດ ທີ່ກະຈັດກະຈາຍຂອງການຜະລິດທີ່ໂຮມກັນເຂົ້າເປັນຂະບວນວິວັດແຫ່ງສັງຄົມອັນໜຶ່ງອັນດຽວ. ຖ້າວ່າ, ເປັນຕົ້ນ, ໃນໄລຍະ ຕ່ຳແພແບບຫັດຖະກຳ, ບັນດາຜູ້ທຳ ການຜະລິດນ້ອຍປັ່ນຝ້າຍ ແລະ ຕ່ຳແພເຂົາເອງນັ້ນ, ແມ່ນພວກເຮົາມີ ຂະແໜງອຸດສາຫະກຳຈຳນວນນ້ອຍ ( ຂະແໜງປັ່ນຝ້າຍ ແລະຂະແໜງຕ່ຳຫູກ ໂຮມກັນເປັນອັນດຽວ ) ແຕ່ຖ້າການຜະລິດທີ່ໄດ້ຮັບການ ພັນເປັນສັງຄົມຈາກລັດທິທຶນນິຍົມແລ້ວດັ່ງນັ້ນຈຳນວນບັນດາຂະແໜງອຸດສາຫະກຳຕ່າງຫາກຈະເພີ່ມຂຶ້ນ : ຂະແໜງເຂັນຝ້າຍຈະທຳການ ຜະລິດ

ຕ່າງຫາກ,     ຂະແໜງຕ່ຳຫູກທຳການຜະລິດຕ່າງຫາກ ຊຶ່ງກະໂຕການແຍກອອກຕ່າງຫາກນັ້ນເອງ ແລະ ການລວມສູນນັ້ນໃນການຜະລິດພັດເຮັດໃຫ້ບັນດາຂະແໜງອຸດສາຫະກຳໃໝ່ກຳເນີດຂຶ້ນ : ຂະແໜງປະດິດແຕ່ງເຄື່ອງຈັກ, ຂະແໜງຂຸດຄົ້ນບໍ່ຖ່ານ ແລະ ອື່ນໆ. ໃນແຕ່ລະຂະແໜງການອຸດສາຫະກຳ, ບັດນີ້ກາຍເປັນວິຊາສະເພາະ ກ່ວາອີກ, ດັ່ງນັ້ນຈຳນວນບັນດານາຍທຶນນັບມື້ຫລຸດລົງ. ປະການດັ່ງກ່າວ ມີຄວາມໝາຍວ່າສາຍກ່ຽວພັນທາງສັງຄົມລະຫວ່າງບັນດາຜູ້ຜະລິດ ນັບມື້ນັບໄດ້ຮັບການປັບປຸງຂຶ້ນຕື່ມ, ບັນດາຜູ້ທຳການຜະລິດໂຮມກັນເຂົ້າເປັນກ້ອນໜຶ່ງ. ບັນດາຜູ້ທຳການຜະລິດນ້ອຍເອກະເທດ, ເມື່ອກ່ອນນັ້ນແຕ່ລະຄົນເຮັດວຽກງານຈຳນວນໜຶ່ງພ້ອມບາດດຽວ, ຈາກນັ້ນເຂົາ ຈຶ່ງເປັນເອກະລາດນຳກັນພໍສົມຄວນ, ຖ້າສົມມຸດຄືຊ່າງຕັດຖະກຳປູກປ່ານ, ປັ່ນຝ້າຍ ແລະ ຕ່ຳຫູກເອົາເອງ, ເບິ່ງຄືວ່າເພິ່ນເປັນເອກະລາດ ກັບບັນດາຜູ້ອື່ນໆ. ກະໂຕລະບອບແຫ່ງບັນດາຜູ້ທຳການຜະລິດສິນຄ້າ ນ້ອຍທີ່ເອກະເທດນັ້ນເອງ ( ແລະ ມີແຕ່ລະບອບນັ້ນ ) ຈຶ່ງຖືກຕ້ອງກັບຄຳສຸພາສິດ : ຜູ້ໃດກໍຫ່ວງໄຍນຳຜູ້ນັ້ນ. ສ່ວນພະຜູ້ເປັນເຈົ້າເປັນຫ່ວງໄຍນຳທັງໝົດ ", ໝາຍຄວາມວ່າພາວະການປັ່ນປ່ວນອະນາທິ ປະໄຕຂອງຕະຫລາດ. ດ້ວຍການພັນແຮງງານເປັນສັງຄົມ, ເນື່ອງຈາກມີສັດທິທຶນນິຍົມຈຶ່ງບັນລຸພົນໄດ້ນັ້ນ ສະພາບການຊ້ຳພັດຕ່າງໂດຍຂາດອັ້ນ. ໝໍ່ເຈົ້າຂອງໂຮງງານຜະລິດແພກໍຂຶ້ນກັບໝໍ່ເຈົ້າຂອງໂຮງງານປັ່ນຝ້າຍ ; ໝໍ່ນີ້ຊ້ຳພັດຂຶ້ນກັບນາຍທຶນເຈົ້ານິຄົມປູກຝ້າຍ, ຂຶ້ນກັບໝໍ່ເຈົ້າຂອງໂຮງງານປະດິດແຕ່ງເຄື່ອງຈັກ, ຂຶ້ນກັບໝໍ່ເຈົ້າຂອງບໍ່ຖ່ານຫີນ ໆລໆ,ໆລໆ

ພົນສຸດທ້າຍແມ່ນບໍ່ມີນາຍທຶນຜູ້ໃດທີ່ສາມາດວ່າບໍ່ຕ້ອງການເຖິງ ບັນດານາຍທຶນຜູ້ອື່ນໆ. ມັນເປັນອັນຈະແຈ້ງວ່າ ຄຳສຸພາສິດ " ຜູ້ໃດກໍ່ ຫ່ວງໄຍນຳຜູ້ນັ້ນ " ແມ່ນໝູນໃຊ້ບໍ່ໄດ້ສົມບູນໃຫ້ແກ່ລະບອບໜຶ່ງເຊັ່ນ ດຽວກັນນັ້ນ ໃນລະບອບດັ່ງກ່າວນີ້, ແຕ່ລະຄົນເຮັດວຽກໃຫ້ທັງໝົດ, ແລະທັງໝົດເຮັດວຽກໃຫ້ແຕ່ລະຄົນ ( ແລະຈະບໍ່ມີບ່ອນໃຫ້ພະຜູ້ເປັນ ເຈົ້າອີກ. ເຖິງແມ່ນວ່າໃນຖານະທີ່ເປັນການເພີ້ຝັນບິນຟ້າ ຫລືດ້ວຍ ຖານະວ່ານັ້ນເປັນ " ງົວດ້ວຍຄຳ " ໂຕໜຶ່ງໃນປະຖະພີກໍເຊັ່ນດຽວກັນນັ້ນ) ລັກສະນະຂອງລະບອບໄດ້ປ່ຽນແປງໂດຍສົມບູນ. ຖ້າໃນສະໄໝຊຶ່ງບັນດາໂຮງງານນ້ອຍ, ກະຈັດກະຈາຍ, ວຽກງານຢຸດສະງັກໃນໂຮງງານໃດໜຶ່ງ, ມັນກໍ່ພຽງແຕ່ສົ່ງຜົນສະທ້ອນເຖິງບັນດາພາຄີໃນສັງຄົມ ໂດຍຈຳນວນນ້ອຍເທົ່ານັ້ນ, ບໍ່ກໍ່ສະພາບການຜັນຜວນລວມ, ແລະຍ້ອນແນວນັ້ນຈຶ່ງບໍ່ເຮັດໃຫ້ຫລູກຄົນຕ້ອງເອົາໃຈໃສ່, ບໍ່ເຮັດໃຫ້ສັງຄົມຕ້ອງ ແຊກແຊງເຂົ້າ, ແຕ່ຖ້າວ່າການຢຸດງານຄືແນວນັ້ນເກີດຂຶ້ນໃນໂຮງງານໃຫຍ່ແຫ່ງ ໜຶ່ງທີ່ຂຶ້ນສັງກັດຂະແໜງອຸດສາຫະກຳທີ່ໄດ້ຜັນເປັນວິຊາ ສະເພາະສູງທີ່ສຸດ ແລະ ຈາກນັ້ນ ການເຮັດວຽກເບິ່ງຄືວ່າໃຫ້ສັງຄົມ ທັງໝົດ, ແລະ ພ້ອມກັນນັ້ນ, ຊ້ຳພັດຂຶ້ນກັບສັງຄົມທັງໝົດ (ເພື່ອໃຫ້ມັນງ່າຍດາຍ, ຂ້າພະເຈົ້າຈຶ່ງເອົາກໍລະນີໜຶ່ງຊຶ່ງການຜັນເປັນສັງຄົມ ໄດ້ບັນລຸເຖິງລະດັບສູງສຸດ ), ໃນຂະນະນັ້ນວຽກງານໃນບັນດາໂຮງງານອື່ນໆ ທັງໝົດຂອງສັງຄົມຕ້ອງຢຸດສະງັກທັງໝົດ, ເພາະວ່າ ບັນດາໂຮງງານເຫລົ່ານີ້ແຕ່ສາມາດຮັບເອົາຜະລິດພັນທີ່ຈຳເປັນຈາກ ໂຮງງານດັ່ງກ່າວເທິງນັ້ນໄດ້ເທົ່ານັ້ນ, - ເພາະວ່າໂຮງງານເຫລົ່ານີ້ອາດ

ຈະປະຕິບັດສິນຄ້າທັງໝົດຂອງຕົນໃຫ້ປະກົດເປັນຈິງໃນເງື່ອນໄຂທີ່ມີສິນຄ້າຕ່າງໆຂອງໂຮງງານດັ່ງກ່າວເທິງນັ້ນ. ດັ່ງນັ້ນ, ບັນດາ ຂະແໜງການຜະລິດທັງໝົດນັ້ນໂຮມກັນເຂົ້າເປັນຂະບວນວິວັດການຜະລິດສັງຄົມອັນໜຶ່ງອັນດຽວ, ແຕ່ວ່າແຕ່ລະຂະແໜງການຜະລິດຊ້ຳມີນາຍທຶນ ສະເພາະລາຍຜູ້ໜຶ່ງທຳການວິສາຫະກິດ, ຊ້ຳພັດຂຶ້ນກັບຄວາມປາຖະໜາຕາມລຳພັງຂອງເຂົາ ແລະ ສະໜອງຜະລິດພັນສັງຄົມໃຫ້ເຂົາ ເພື່ອເປັນຂອງສ່ວນຕົວຂອງເຂົາເອງ. ບໍ່ແມ່ນເປັນອັນຈະແຈ້ງແລ້ວຫວະວ່າຮູບການຜະລິດໄດ້ກາຍເປັນຄວາມຂັດແຍ້ງທີ່ບໍ່ປະສົມກົມກຽວກັນໄດ້ ກັບຮູບການຍຶດເປັນກຳມະສິດ ? ບໍ່ແມ່ນເປັນອັນຈະແຈ້ງແລ້ວຫວະວ່າ ຮູບການຍຶດເປັນກຳມະສິດບໍ່ອາດຈະບໍ່ເໝາະສົມກັບຮູບການຜະລິດ,ບໍ່ອາດຈະບໍ່ກາຍເປັນສິ່ງທີ່ມີລັກສະນະສັງຄົມດີກັນ, ໝາຍຄວາມວ່າມີ ລັກສະນະສັງຄົມ ? ປານນັ້ນ ທ້າວພິລິສແຕງ ຜູ້ຄົນຄາຍຂອງໜັງສືພິມ" ບັນທຶກເຫດການບ້ານເມືອງ " ນັ້ນຊ້ຳພັດໂຮມທອນທັງໝົດເຂົ້າເປັນການອອກແຮງງານໃນບ່ອນດຽວກັນໄດ້. ອັນນັ້ນຈຶ່ງແມ່ນເດັກນ້ອຍທີ່ຫລິ້ງແທ້ແທ້ ! ( ຂ້າພະເຈົ້າພຽງແຕ່ພັນລະນາໂດຍສະເພາະສຳລັບຂະບວນວິວັດແຫ່ງວັດຖຸ, ໂດຍສະເພາະສຳລັບການຫັນປ່ຽນຂອງບັນດາຄວາມພົວພັນແຫ່ງການຜະລິດ, ແຕ່ບໍ່ທັນແຕະຕ້ອງເຖິງແງ່ສັງຄົມຂອງຂະບວນ ວິວັດດັ່ງກ່າວ, ເຖິງການຮ່ວມສຳພັນ, ຄວາມສາມັກຄີ ແລະ ອົງການຈັດຕັ້ງຂອງກຳມະກອນ ເພາະວ່າອັນນັ້ນມັນເປັນປະກົດການໜຶ່ງ ທີ່ກຳເນີດຂຶ້ນ, ຊຶ່ງຂຶ້ນກັບແຖວທີສອງ [໑] ).

---

໑) ພາສາຝະລັ່ງ: Dérivé, secondaire (ພ.ປ.).

ການທີ່ຕ້ອງອະທິບາຍໃຫ້ບັນດາ " ຊາວປະຊາທິປະໄຕ " ລັດເຊຍເຂົ້າໃຈບັນດາສິ່ງທີ່ທົ່ວໄປແນວນັ້ນ, ກໍ່ຍອມວ່າເຂົາຖືກນໍ້າຖ້ວມຈົມເຖິງຫູໃນບວກຕົມແຫ່ງບັນດາແນວຄິດຊາວເມືອງນ້ອຍ, ຈົນວ່າ ນອກຈາກລະບອບຊາວເມືອງນ້ອຍແລ້ວເຂົາບໍ່ອາດວາດພາບເຖິງລະບອບໃດອື່ນໄດ້ອີກເລີຍ.

ແຕ່ພວກເຮົາຈົ່ງກັບມາເວົ້າເຖິງທ່ານນິຄາຍລົບສກີ. ເພິ່ນໄດ້ອ້າງອີງອີຫຍັງມາ ເພື່ອປັດປະຕິເສດບັນດາຄວາມຈິງ ແລະ ເຫດຜົນ ຊຶ່ງມາກໄດ້ອີງໃສ່ ເພື່ອສະຫລຸບຄວາມວ່າຈາກກະໂຕ ບັນດາກົດເກນ ຂະຫຍາຍຕົວຂອງລັດທິທຶນນິຍົມນັ້ນເອງລະບອບສັງຄົມນິຍົມຈຶ່ງຕ້ອງກຳເນີດຂຶ້ນຢ່າງແນ່ນອນ ? ແມ່ນຫລືທີ່ທ່ານນັ້ນໄດ້ຊີ້ອອກໄດ້ວ່າໃນຕົວຈິງ-ດ້ວຍການຈັດຕັ້ງສິນຄ້າຂອງພື້ນຖານເສດຖະກິດສັງຄົມ - ບໍ່ມີການຜັນເປັນວິຊາສະເພາະທີ່ນັບມື້ນັບເພີ່ມຂຶ້ນຂອງຂະບວນວິວັດແຫ່ງການອອກແຮງງານ, ບໍ່ມີການສະສົມບັນດາທຶນ ແລະ ໂຮງງານຕ່າງໆ, ບໍ່ມີການຜັນເປັນສັງຄົມທັງໝົດຂະບວນວິວັດແຫ່ງການອອກແຮງງານ ? ບໍ່, ທ່ານນັ້ນບໍ່ໄດ້ຍົກຫຍັງມາ ເພື່ອປັດປະຕິເສດຄວາມຈິງ ເຫລົ່ານັ້ນ ເລີຍ. ແມ່ນຫລືທີ່ທ່ານນັ້ນໄດ້ສົ່ງຄອນບົດທະຍັນທີ່ຖືວ່າພາລະການອະນາທິປະໄຕບໍ່ເໝາະສົມກັບການຜັນເປັນສັງຄົມຂອງແຮງງານເຊິ່ງເປັນພາວະການທີ່ເຄີຍມີຢູ່ແລ້ວຂອງສັງຄົມທຶນນິຍົມໄດ້ ? ທ່ານນັ້ນບໍ່ເວົ້າຫຍັງເຖິງ ບັນຫາດັ່ງກ່າວນັ້ນເລີຍ ແມ່ນຫລືທີ່ທ່ານນັ້ນໄດ້ພິສູດວ່າການຮ່ວມສຳພັນ ຂະບວນວິວັດແຫ່ງການອອກແຮງງານຂອງບັນດານາຍທຶນທັງໝົດເປັນ ຂະບວນວິວັດແຫ່ງການອອກແຮງງານສັງຄົມ ໜຶ່ງສາມາດຮ່ວມຢູ່ດ້ວຍກັນກັບ

ລະບອບຖືກຳມະສິດເອກະຊົນ ? ວ່າສຳລັບຄວາມຂັດແຍ້ງດັ່ງກ່າວກໍສາມາດມີຢູ່ ແລະ ສາມາດວາດນຶກອອກເປັນເສັ້ນທາງເອົາຕົວລອດໃດອື່ນນອກຈາກເສັ້ນທາງເອົາຕົວລອດ ຊຶ່ງມາກໄດ້ຊື້ອອກ ? ບໍ່, ເພິ່ນບໍ່ເວົ້າຈັກຄວາມກ່ຽວກັບສິ່ງດັ່ງກ່າວນັ້ນເລີຍ.

ວ.ອ.ເລນິນ, ວົບຊຸດ, ສຳນັກພິມຈຳໜ່າຍ ໂປຼແກຼສ, ມົສກູ, ໑໙໘໓ , ເຫລັ້ມ ໑ , ໜ້າ ໔໑໔ - ໔໑໕ .

ຄັດຈາກ ນິພົນ

ລະບົບແນວຄິດແຫ່ງ ເຢລະມັນ

...ສ່ວນໃນສັງຄົມກອມມູນິດ, ສັງຄົມດັ່ງກ່າວຊຶ່ງແຕ່ລະຄົນ ບໍ່ຖືກຈຳກັດໃນຂອບເຂດໜຶ່ງທີ່ເຄື່ອນໄຫວສະເພາະລາຍ, ຫາກສາມາດບຳລຸງຕົນເອງໃນຂະແໜງໃດທີ່ຕົນນິຍົມຊົມຊອບ, ດັ່ງນັ້ນສັງຄົມດັດສົມການຜະລິດລວມ ແລະ ຈາກນັ້ນຈຶ່ງເຮັດໃຫ້ຄົນເຮົາອາດຈະເຮັດວຽກນີ້ໃນມື້ນີ້, ມື້ອື່ນຈະເຮັດວຽກອື່ນ, ຕອນເຊົ້າໄປລ່າເນື້ອ, ກາຍທ່ຽງຈະໄປຕຶກເບັດ, ຕອນແລງລ້ຽງສັດ, ດຳເນີນການຕຳໜິຕິຊົມ ໃນຫລັງຈາກຄາບກິນຊຶ່ງ ແລ້ວແຕ່ຕາມຄວາມຊອບໃຈຂອງຕົນ, ແຕ່ບໍ່ມີຍາມໃດຈະກາຍເປັນຊາວລ່າເນື້ອ, ຊາວປະມົງ ຫລື ນັກຕຳໜິຕິຊົມໄດ້.

ກ. ມາກ ແລະ ຟ. ອັງແກນ, ລະບົບແນວຄິດແຫ່ງເຢລະມັນ, ສຳນັກພິມຈຳໜ່າຍ ຊີເທິດ, ຮ່າໂນ້ຍ. ໑໙໖໘. ໜ້າ ໘໒ .

ຄັດຈາກ ນິພົນ

ທຶນ

ພາກ X(/

## ເຄື່ອງຈັກ ແລະ ອຸດສາຫະກຳໃຫຍ່

.....

ອຸດສາຫະກຳສະໄໝປະຈຸບັນບໍ່ສັງເກດແລະກໍບໍ່ມີການໃດຈະຖືຮູບຖານທີ່ມີໃນປະຈຸບັນຂອງຂະບວນວິວັດໜຶ່ງເປັນຮູບຖານສຸດທ້າຍເລີຍ , ສະນັ້ນພື້ນຖານຂອງອຸດສາຫະກຳສະໄໝປະຈຸບັນແມ່ນມີລັກສະນະ ປະຕິວັດ, ສ່ວນພື້ນຖານຂອງແບບວິທີການຜະລິດຕ່າງໆ ທັງໝົດໃນ ກ່ອນໜ້ານັ້ນ, ໂດຍພື້ນຖານ, ລ້ວນແຕ່ມີລັກສະນະອະນຸລັກນິຍົມ [໑] )

---

໑) " ຊົນຊັ້ນນາຍທຶນບໍ່ສາມາດຢືນຍົງຄົງຕົວໄດ້, ຖ້າວ່າ ບໍ່ພິກປັ້ນເຄື່ອງມືແຫ່ງການຜະລິດຕ່າງໆຢູ່ສະເໝີ ແລະ ຈາກນັ້ນຈຶ່ງ ພິກປັ້ນຄວາມພົວພັນແຫ່ງການຜະລິດ ແລະ ບັນດາຄວາມພົວພັນທາງສັງຄົມທັງໝົດ. ກົງກັນຂ້າມ, ສຳລັບບັນດາຊົນຊັ້ນອຸດສາຫະກຳທັງໝົດໃນເມື່ອກ່ອນ, ການຮັກສາແບບວິທີການຜະລິດເກົ່າໄວ້ນັ້ນແມ່ນເງື່ອນໄຂທຳອິດໃຫ້ແກ່ການຢືນຍົງຄົງຕົວຂອງເຂົາ. ດັ່ງນັ້ນ, ສະໄໝທຶນນິຍົມ ກໍຕ່າງກັບສະໄໝຕ່າງໆ ທັງໝົດໃນກ່ອນນັ້ນຢູ່ບ່ອນວ່າມີການປ່ຽນແປງ===)

ໂດຍອາໄສການໃຊ້ເຄື່ອງຈັກ. ອາໄສບັນດາວິທີເຄມີສາດ ສະນັ້ນຊຸດສາທະກຳສະໄໝປະຈຸບັນຈຶ່ງຕ່າວປັ້ນໄດ້, ພ້ອມກັບພື້ນຖານ ເຕັກນິກຂອງການຜະລິດ, ບັນດາພາລະບົດບາດຂອງຜູ້ອອກແຮງງານ ແລະບັນດາການປະສານສົມທົບສັງຄົມຂອງແຮງງານ, ພ້ອມກັນນັ້ນຊຸດສາທະກຳ

---

===) ຢ່າງລຽນຕິດໃນການຜະລິດ, ມີການສັ່ນສະເທືອນຢ່າງບໍ່ຢຸດຢັ້ງໃນບັນດາສາຍພົວພັນສັງຄົມ,ມີການສະເທືອນແລະພາລະການທີ່ບໍ່ ສະຫງົບຢ່າງບໍ່ຢຸດຢັ້ງ.ບັນດາສາຍພົວພັນທາງສັງຄົມທີ່ສືບມາແຕ່ບູຮານແລະຄົງທີ່ທັງໝົດ,ພ້ອມກັບບັນດາພວງທັດສະນະແລະແນວຄິດເກົ່າກ່ອນທີ່ໄດ້ຮັບການນິຍົມນັບຖືນັ້ນ.ປະຈຸບັນນີ້ພວມເສື່ອມຫາຍໄປ, ບັນດາ ສາຍພົວພັນທາງສັງຄົມມາແທນທີ່ບັນດາສາຍພົວພັນດັ່ງກ່າວຊຶ່ງຍັງບໍ່ທັນແຂງແກ່ນເຂົ້າຊ້ຳພັດເກົ່າແກ່ຫ່ຽວແຫ້ງແລ້ວ. ບັນດາສິ່ງໃດທີ່ໜັກແໜ້ນ, ຄົງທີ່ທັງໝົດລ້ວນແຕ່ສູນຫາຍໄປຄືຄວັນໄຟ, ທຸກສິ່ງໃດທີ່ສັກກະລະບູຊາລ້ວນແຕ່ເປື້ອນເປິະ, ແລະ ສຸດທ້າຍທຸກຄົນຈະຕ້ອງເບິ່ງເງື່ອນໄຂຊີວິດການເປັນຢູ່ຕ່າງໆຂອງເຂົາແລະຄວາມພົວພັນຕ່າງໆລະຫວ່າງເຂົາ ນຳກັນດ້ວຍສາຍຕາທີ່ເບື່ອໜ່າຍ " ( ກ.ມາກ ແລະ ຟ.ອັງແກນ :

Manifest der communistishen partei *,ລອນດອນ, ໑໘໔໘,ໜາ ໔໖-໔໗ ).

---

*.ປະກາດຖະແຫລງຂອງພັກກອມມູນິດ,ສຳນັກພິມຈຳໜ່າຍ ຈີເທີດ , ຮ່າໂນ້ຍ,ພິມຈຳໜ່າຍເປັນຄັ້ງທີ ໔,໑໙໕໘, ໜ້າ ໔໖ - ໔໗ .

ໃຫຍ່ກໍບໍ່ຢຸດຢັ້ງໃນການຕ່າວປີ້ນການແບ່ງງານໃນສັງຄົມດ້ວຍວິທີບໍ່ລົດລະ ໃນການຫວ່ານບັນດາກ້ອນປະລິມານທຶນ ແລະ ກຳມະກອນ ນອກຈາກຂະແໜງການຜະລິດນຶ່ງມາຫາຂະແໜງການຜະລິດນັ້ນ.

ຖ້າວ່າກະໂຕທາດແທ້ເອງຂອງອຸດສາຫະກຳໃຫຍ່ຣຽກຮ້ອງ ຕ້ອງການມີການປ່ຽນແປງໃນການອອກແຮງງານ, ການເຄື່ອນເໜັງ ຂອງບັນດາພາລະບົດບາດ ໑ ). ການເຄື່ອນຍ້າຍຢ່າງຮອບດ້ານຂອງ ຜູ້ອອກແຮງງານ ໒ ). ດ້ານອື່ນ, ພາຍໃຕ້ຮູບການທຶນນິຍົມຂອງມັນນັ້ນຊ້ຳພັດສ້າງການແບ່ງງານເກົ່າຄືນເປັນຄັ້ງໃໝ່ທີ່ມີລັກສະນະຄົງທີ່. ພວກເຮົາກໍໄດ້ເຫັນວ່າ ຄວາມຂັດແຍ້ງອັນເດັດຂາດດັ່ງກ່າວລະຫວ່າງຄວາມຈຳເປັນຕ່າງໆ ທາງດ້ານເຕັກນິກຂອງອຸດສາຫະກຳໃຫຍ່ກັບບັນດາ ລັກສະນະສັງຄົມ ຂອງມັນພາຍໃຕ້ລະບອບທຶນນິຍົມ, ໃນທີ່ສຸດ ມັນດັບສູນໝົດທຸກຄວາມຮັບປະກັນໃຫ້ແກ່ຊີວິດການເປັນຢູ່ຂອງຜູ້ອອກແຮງງານຊຶ່ງເປັນຄົນທີ່ເຫັນສະເໝີວ່າຕົນອາດສາມາດຕົກໃສ່ໄພອັນຕະລາຍ ເສຍຫລ່ຽມລາຍການອອກແຮງງານ, ໝາຍເຖິງເສຍທັງພາຫະນະ ແຫ່ງການດຳເນີນຊີວິດ ). ໄປເປັນພ້ອມໆ ແລະ ກາຍເປັນເຫລືອ ຖ້າ

---

໑) La fluidité des fonctions ການເຄື່ອນທີ່ ຂອງບັນດາພາລະບົດບາດ.

໒) La mobilité universelle du travailleur ການເຄື່ອນຍ້າຍຮອບດ້ານຂອງຜູ້ອອກແຮງງານ.

\- ====)

ວຽກງານພາກສ່ວນຂອງຕົນຖືກປະຖິ້ມ. ພວກເຮົາກໍເຫັນໄດ້ວ່າ ຄວາມປະຕິປັກກັນດັ່ງກ່າວພວມເຮັດໃຫ້ພາວະການທີ່ຕ່າງໆປະຫລາດເກີດຂຶ້ນອັນແມ່ນມີກອງກຳລັງອຸດສາຫະກຳສຳຮອງ, ຖືກອັງໄວ້ໃນສະພາບທຸກຈົນ, ທັງນີ້ກໍເພື່ອສະໜອງຄວາມຕ້ອງການຂອງນາຍທຶນໃນທຸກເມື່ອທຸກເວລາ ຄວາມປະຕິປັກກັນດັ່ງກ່າວພາໄປເຖິງພົນສຳເລັດກ່າວຄືແຕ່ລະໄລຍະ ທີ່ແນ່ນອນໃດ ອຶນອັ້ນກຳມະກອນພັດຖືກເສຍສະຫລະ, ກຳລັງແຮງ ງານຖືກຟຸ່ມເຟືອຍຢ່າງສຸດຂີດ ແລະ ພາວະການອະນາທິປະໄຕໃນສັງຄົມ ກໍ່ຄວາມເສຍຫາຍຫລາຍຢ່າງ, ພ້ອມກັນນັ້ນມັນກໍພົນແຕ່ລະບາດກ້າວກ່າຍອຸກັບເສດຖະກິດກາຍເປັນໄພພິບັດໃຫ້ສັງຄົມ. ນັ້ນແມ່ນເບື້ອງໜຶ່ງ ທີ່ມັນເອງ.

ແຕ່ວ່າການປ່ຽນແປງໃນແຮງງານມີແຕ່ຈູນປະໂຫຍດຄືແບບ ກົດເກນພິຊິກສາດ ¹ ) - ໝາຍເຖິງກົດເກນ, ຈຶ່ງບໍ່ວ່າຢູ່ບ່ອນໃດທີ່ມັນ

---

= you take my life then you do take the means where by life ** ເຊັກສະເປຍ.

---

**. ເຈົ້າ ຍາດເອົາພາຫະນະແຫ່ງການດຳລົງຊີວິດຂອງຂ້ອຍກໍແມ່ນວ່າເຈົ້າຍາດເອົາຊີວິດຂອງຂ້ອຍ, ( ພໍ່ຄ້າແຫ່ງເມືອງເວນິດ , ສາກ ___, ພາບ ໑). (ກ.ກ).

໑) ໃນເມື່ອກັບມາ ແຕ່ຊານຟຣານຊິສໂກ, ກຳມະກອນ ຄົນຝະລັ່ງຜູ້ໜຶ່ງໄດ້ຂຽນ: " ອາດຈະແມ່ນວ່າຍັງບໍ່ທັນມີຍາມໃດເລີຍທີ່ ==)

ປະສົບກັບອຸປະສັກ, ມັນລ້ວນແຕ່ທັບມ້າງບັນດາອຸປະສັກດັ່ງກ່າວຢ່າງມິດມິນ - ດັ່ງນັ້ນກະໂຕບັນດາມະຫັນຕະໄພຊຶ່ງແມ່ນອຸດສາຫະກຳໃຫຍ່ ໃຫ້ກຳເນີດຂຶ້ນນັ້ນກໍຈຳໃຫ້ຄົນທັງຫລາຍຕ້ອງຮັບຮູ້ການປ່ຽນແປງໃນ ແຮງງານ ແລະຈາກນັ້ນຈຶ່ງຕ້ອງຮັບຮູ້ການຂະຫຍາຍຕົວອັນຍິ່ງໃຫຍ່ທີ່ສຸດຂອງຄວາມອາດສາມາດຫລາຍດ້ານຂອງຜູ້ອອກແຮງງານ, ຖືອັນນັ້ນເປັນກົດເກນຂອງພື້ນຖານການຜະລິດທັນສະໄໝ, ແລະ ບໍ່ວ່າເປັນໄປແນວໃດບັນດາຄວາມພົວພັນ [໑] ກໍຕ້ອງສອດຄ່ອງກັບການປະຕິບັດທີ່ ປົກກະຕິ

---

=) ຂ້ອຍເຊື່ອແນ່ວ່າຂ້ອຍພັດເຮັດໄດ້ທຸກອາຊີບຊຶ່ງຂ້ອຍໄດ້ເຮັດຢູ່ກາລີຟອກນີ . ກ່ອນໜ້ານັ້ນຂ້ອຍເຊື່ອແນ່ຢ່າງເລິກເຊິ່ງທີ່ສຸດວ່າ, ນອກຈາກອາຊີບພິມແລ້ວ, ຂ້ອຍເຮັດວຽກຫຍັງບໍ່ໄດ້ໝົດ...ເມື່ອໄດ້ດຳລົງ ຊີວິດຢູ່ກາງໂລກແຫ່ງບັນດາຜູ້ທີ່ມັກສະຫວາດສະເຫວີຍ, ເຂົາປ່ຽນອາຊີບງ່າຍດາຍກ່ວາປ່ຽນເສື້ອ, ດັ່ງນັ້ນຂ້ອຍກໍເຮັດໄດ້ຄືຜູ້ອື່ນໆແທ້. ອາຊີບຊ່າງບໍ່ແຮ່ກິນບໍ່ກຸ້ມ, ຂ້ອຍໄດ້ໄປຫາຕົວເມືອງບາງເທື່ອກໍເຮັດອາຊີບລຽງຕົວໜັງສືບາງເທື່ອ ກໍເຮັດອາຊີບຊ່າງມຸງເຮືອນ, ແລະ ອື່ນໆອາຊີບເຮັດເຄື່ອງດ້ວຍຊິ້ນ ແລະ ກື່ວບໍ່ແມ່ນເປັນອາຊີບ ທີ່ຂ້ອຍຫາເງິນໄດ້ນ້ອຍ... ປະສົບການດັ່ງກ່າວ...ໄດ້ເຮັດໃຫ້ຂ້ອຍເຊື່ອໂດຍຕາຍໃຈວ່າ ຖ້າວ່າຂາດວຽກງານໃນອາຊີບໃດໜຶ່ງ, ໃນບໍ່ວ່າສະພາບແວດລ້ອມໃດຂ້ອຍກໍບໍ່ເຖິງຂັ້ນອຶດອັດປານໃດ. ບັດນີ້ຂ້ອຍຮູ້ສຶກວ່າຕົນເອງກໍບໍ່ໂງ່ຈ້າປານໃດ ແລະ ກາຍເປັນຄົນຄັກແນ່ກ່ວາແລ້ວ "*.

໑) Circonstances ;ພາສາອັງກິດ mode of ===)

ຂອງກົດເກນດັ່ງກ່າວ. ອັນນັ້ນກໍເປັນບັນຫາເປັນຕາຍ. ຖືກຕ້ອງຄືແນວນັ້ນ, ພື້ນຖານອຸດສາຫະກໍາໃຫ່ຍຈໍາໃຫ້ສັງຄົມ, ຖ້າຢາກພົ້ນຈາກຄວາມດັບສູນ, ແມ່ນຕ້ອງແທນທີ່ບັນດາຜູ້ອອກແຮງງານພາກສ່ວນໝາຍເຖິງຜູ້ທີ່ຍອມທົນທຸກໃນການເຮັດພາລະບົດບາດການຜະລິດພາກສ່ວນດ້ວຍ ຜູ້ອອກແຮງງານທີ່ຂະຫຍາຍຕົວຢ່າງເຕັມສ່ວນ, ໝາຍເຖິງຜູ້ທີ່ ສາມາດເຮັດວຽກງານຫລາຍປະເພດທີ່ຕ່າງກັນໄດ້ ແລະ ສໍາລັບເຂົານັ້ນ. ບັນດາພາລະບົດບາດທີ່ຕ່າງກັນໂດຍແມ່ນເຂົາເປັນຜູ້ຮັບຜິດຊອບພຽງ ແຕ່ເຮັດໃຫ້ຄວາມສາມາດທີ່ຫລາຍຮູບຫລາຍສີ. ຊຶ່ງເຄີຍມີຢູ່ແລ້ວຫລື ໂດຍຜ່ານການຫລໍ່ຫລອມຈິງມືຂອງເຂົາ, ໄດ້ຮັບການຂະຫຍາຍຕົວໂດຍເສລີເທົ່ານັ້ນ.

ກ.ມາກ "ທຶນ", ສໍານັກພິມຈໍາໜ່າຍ
ຊິເທັດ, ຣ່າໂບ້ຍ, ໑໙໖໐, ຫົວ ໑,
ເຫລັ້ມ ໒, ໜ້າ ໑໖໕ - ໑໖໖.

---

===) Production ພາສາລັດເຊຍ ແລະ ພາສາຈີນກໍແປວ່າ ຄວາມພົວພັນ .

---

* . ອ.ກໍຣົບົງ: ກ່ຽວກັບການອະຊີວະສຶກສາ, ພິມຈໍາໜ່າຍຄັ້ງທີ ໒, ປາຣີ, ໑໙໖໐, ໜ້າ ໕໐ . (ບ.ກ.).

## <u>ຄັດຈາກນິພົນ</u>

### ຄວາມອັບຈົນຂອງປັດຊະຍາ

.....

ຈຸດພິເສດຂອງການແບ່ງງານໃນໂຮງຈັກອັດຕະໂນມັດແມ່ນຢູ່ທີ່ນັ້ນ ແຮງງານໄດ້ເສຍລັກສະນະວິຊາສະເພາະໝົດແລ້ວ. ແຕ່ວ່າໃນ ເມືອທຸກການຂະຫຍາຍຕົວດ້ານວິຊາສະເພາະຢຸດຕິລົງ, ແມ່ນຄວາມ ຕ້ອງການກ່ຽວກັບລັກສະນະແຜ່ຫລາຍທົ່ວໄປມີທ່າອຽງໄປເຖິງການຂະຫຍາຍຕົວອັນຮອບດ້ານຂອງທຸກຄົນກໍເລີ່ມຕົ້ນປະກົດອອກແຈ້ງ. ໂຮງຈັກອັດຕະໂນມັດລົບລ້າງບັນດາຊ່າງອາຊີບ ແລະ ຄວາມໂງ່ຈ້າກ່ຽວກັບອາຊີບ.

ກ.ມາກ, ຄວາມອັບຈົນຂອງປັດຊະຍາ<br>
ສຳນັກພິມຈຳໜ່າຍ ຊິເທິດ, ຮ່າໂນ້ຍ<br>
໑໙໗໑, ໜ້າ ໑໖໗.

ຄັດຈາກ ນິພົນ

ຕ້ານ ດຸຍຊິງ

.....

ການທີ່ຫັນພາຫະນະແຫ່ງການຜະລິດມາເປັນກຳມະສິດ ສັງຄົມບໍ່ພຽງແຕ່ປັດເຂ່ຍການກົດໜ່ວງທີ່ມີໃນປະຈຸບັນຊຶ່ງເຂົາພວມສ້າງຂຶ້ນ ໃນການຜະລິດ, ຫາກຍັງປັດເຂ່ຍທັງຄວາມຟູມເຟືອຍ ແລະ ການທຳລາຍໂດຍກົງຕໍ່ບັນດາກຳລັງການຜະລິດ ແລະ ຜະລິດ ພັນຕ່າງໆ; ປະຈຸບັນນີ້, ຄວາມຟູມເຟືອຍ ແລະ ການທຳລາຍດັ່ງກ່າວແມ່ນເປັນ ໄພສອງຢ່າງທີ່ຕິດນຳໂດຍຫລີກລ່ຽງບໍ່ໄດ້ນັ້ນຂອງການຜະລິດ, ແລະ ໄພສອງຢ່າງນັ້ນຍິ່ງຂະຫຍາຍຕົວຢ່າງສຸດຂີດໃນບັນດາວິກິດການ. ນອກຈາກນັ້ນການພັນເປັນສັງຄົມດັ່ງກ່າວຍັງປົດປ່ອຍພາຫະນະການຜະລິດ ແລະ ຜະລິດພັນສັງຄົມເປັນຈຳນວນສ່ວນໃຫຍ່ດ້ວຍ ວິທີປັດເຂ່ຍການຫລິ້ນ ກິນຟູມເຟືອຍຂອງຊົນຊັ້ນທີ່ພວມທຳການປົກຄອງໃນປະຈຸບັນນີ້ ແລະ ບັນດາຜູ້ແທນການເມືອງຂອງຊົນຊັ້ນຕ່າງໆດັ່ງກ່າວ. ຍ້ອນການຜະລິດ ທີ່ມີລັກສະນະສັງຄົມ, ຄວາມອາດສາມາດໃນການຮັບປະກັນໃຫ້ພາຄີສັງຄົມທັງຫມົດມີຊີວິດການເປັນຢູ່ຊຶ່ງບໍ່ພຽງແຕ່ພຽງພໍຢ່າງສົມບູນທາງດ້ານ ວັດຖຸແລະ ນັບມື້ນັບບໍລິບູນຍິ່ງຂຶ້ນເທົ່ານັ້ນ ຫາກຍັງຮັບປະກັນໃຫ້ເຂົາໄດ້ ຮັບການຂະຫຍາຍຕົວໂດຍເສລີ ແລະ ພຽງພໍ, ແລະ ນຳໃຊ້ບັນດາ ພອນ

ສະຫວັນດ້ານກຳລັງກາຍ ແລະ ຫົວຄິດປັນຍາຂອງເຂົາໄດ້ຢ່າງ ເສລີ ແລະ ພຽງພໍ, - ຄວາມອາດສາມາດດັ່ງກ່າວໃນປະຈຸບັນໄດ້ບັນລຸ ຜົນເປັນເທື່ອທຳອິດ, ແລະ ບັນລຸຜົນໄດ້ຢ່າງແທ້ຈິງແລ້ວ [1] ).

ເມື່ອສັງຄົມໄດ້ເປັນເຈົ້າກຳມະສິດພາຫະນະແຫ່ງການຜະລິດຕ່າງ

---

໑) ບາງຕົວເລກລຸ່ມນີ້ຈະໃຫ້ຄວາມຄິດເຫັນແກ່ເຮົາໂດຍສັງເຂບ ກ່ຽວກັບກຳລັງແຜ່ຂະຫຍາຍອັນໃຫ່ຍໂຕຂອງບັນດາພາຫະນະແຫ່ງ ການຜະລິດທັນສະໄໝ, ລວມທັງພາຍໃຕ້ກຳລັງດັນແຫ່ງທຶນນິຍົມເອງ.ຕາມຕົວເລກຕ່າງໆໃນມໍ່ໆນີ້ຂອງກິບເຟີນ, ຍອດປະລິມານແຫ່ງ ຊັບສົມບັດຂອງປະເທດອັງກິດ ແລະ ອາຍເຊີແລນ ໄດ້ບັນລຸເຖິງຈຳນວນຕົວເລກມົນຕ່າງໆ ດັ່ງນີ້ :

| | | | | |
|---|---|---|---|---|
| ປີ | ໑໘໑໔ | - ໒.໒໒໐ | ລ້ານລິເວີ | = ໔໔.໐໐໐ລ້ານມາກ |
| " | ໑໘໖໕ | - ໖.໑໐໐ | " | =໑໒໒.໐໐໐ລ້ານມາກ |
| " | ໑໘໗໕ | - ໘.໕໐໐ | " | =໑໗໐.໐໐໐ລ້ານມາກ |

ສ່ວນບັນດາພາຫະນະແຫ່ງການຜະລິດ ແລະ ຜະລິດພັນທີ່ຖືກທຳລາຍໃນບັນດາການເສດຖະໄພ, ໃນກອງປະຊຸມໃຫ່ຍຄັ້ງທີ 77 ຂອງບັນດາເຈົ້າອຸດສາຫະກຳໃຫ່ຍຂອງເຢລະມັນຢູ່ທີ່ແບງແລງ, ໄຂຂຶ້ນເມື່ອວັນທີ ໒໑ ກຸມພາ ໑໘໗໘ ໄດ້ຄິດໄລ່ໂດຍສະເພາະພຽງແຕ່ ຂະແໜງອຸດສາຫະກຳຫລອມໂລຫະຢູ່ເຢລະມັນ ເທົ່ານັ້ນ,ຍອດປະລິມານ ທີ່ຖືກເສຍຫາຍໃນການເສດຖະໄພຫວ່າງແລ້ວນີ້ກໍໄດ້ຂຶ້ນເຖິງ ໔໕໕ລ້ານມາກ ( ໝາຍເຫດຂອງ ອັງແກນ ).

ຕ່າງ, ພື້ນຖານການຜະລິດສິນຄ້າຈະຖືກລົບສູນ, ແລະ ຈາກນັ້ນພາວະການທີ່ຜະລິດພັນຄອບງຳຜູ້ຜະລິດກໍຖືກລົບສູນຄືກັນ. ພາລະການ ອະນາທິປະໄຕຢູ່ພາຍໃນພື້ນຖານການຜະລິດສັງຄົມໄດ້ຖືກແທນທີ່ດ້ວຍການ ຈັດຕັ້ງທີ່ມີແຜນການ ແລະ ມີສະຕິການຕໍ່ສູ້ ເພື່ອຄວາມມີຊີວິດຂອງ ເອກະຊົນຖືກຢຸດຕິລົງ. ເວົ້າຕາມຄວາມໝາຍໃດໜຶ່ງນັ້ນ, ແມ່ນວ່າ ເປັນເທື່ອທຳອິດທີ່ມະນຸດພົ້ນອອກຈາກຄວາມເປັນ ໂລກແຫ່ງສັດ ຢ່າງ ນິລັນດອນ, ຫັນແຕ່ບັນດາເງື່ອນໄຂດຳລົງຊີວິດຂອງຊາດສັດມາຫາເງື່ອນໄຂຕ່າງໆຂອງມະນຸດຊາດຢ່າງແທ້ຈິງ. ບັນດາເງື່ອນໄຂດຳລົງຊີວິດ ອ້ອມແອ້ມຄົນເຮົາ, ຊຶ່ງຕັ້ງແຕ່ກ່ອນເປັນຕົ້ນມາຮອດປະຈຸບັນນີ້ຍັງຄົງຄອບງຳຄົນເຮົາ, ບັດນີ້ຄົນເຮົາຈະເປັນຜູ້ຄອບງຳ ແລະ ກວດກາ; ມັນເປັນເທື່ອທຳອິດທີ່ຜູ້ຄົນກາຍເປັນເຈົ້າທຳມະຊາດຢ່າງແທ້ຈິງ ແລະ ຢ່າງມີສະຕິ, ເພາະວ່າເຂົາໄດ້ກາຍເປັນເຈົ້າຂອງການດຳລົງຊີວິດ ຂອງກະໂຕເຂົາເອງໃນສັງຄົມ. ບັນດາກົດເກນແຫ່ງການກະທຳສັງຄົມ ຂອງເຂົາເອງ. ແຕ່ກ່ອນມາຮອດປະຈຸບັນນີ້, ປະກົດອອກຕໍ່ໜ້າເຂົາ ເຊັ່ນດຽວກັບບັນດາກົດເກນທຳມະຊາດ, ແປກປະຫລາດສຳລັບເຂົາ ແລະ ຄອບງຳເຂົາ, ແຕ່ນີ້ເປັນຕົ້ນໄປຄົນເຮົາຈະເອົາມັນມາໝູນໃຊ້ ດ້ວຍຄວາມຮູ້ຢ່າງຮອບຄອບ. ແລະ ດ້ວຍເຫດນັ້ນຄົນເຮົາຈະເປັນຜູ້ຄອບງຳມັນ. ການດຳລົງຊີວິດຂອງຄົນຢູ່ໃນສັງຄົມ, ແຕ່ກ່ອນມາຮອດປະຈຸບັນ, ສຳລັບເຂົານັ້ນ, ຍັງຄົງຖືຄືວ່າທຳມະຊາດ ແລະ ປະຫວັດສາດໄດ້ທານໃຫ້ເຂົາ, ແຕ່ດຽວນີ້ການດຳລົງຊີວິດດັ່ງກ່າວກາຍເປັນການກະທຳໂດຍສະເພາະ ແລະ ເສລີພາບຂອງເຂົາ. ບັນດາກຳແປກປະຫລາດພາວະ

ວິໄສ, ຊຶ່ງແຕ່ກ່ອນມາຮອດປະຈຸບັນນີ້ຍັງຄົງຄອບງຳປະຫວັດສາດ, ມາດຽວນີ້ຈະແມ່ນກະໂຕຄົນເອງເປັນຜູ້ກວດກາ. ພຽງແຕ່ໃນຂະນະນັ້ນ , ມະນຸດຊາດຈຶ່ງປະດິດສ້າງປະຫວັດສາດຂອງຕົນໂດຍຕົນເອງຂຶ້ນ ໂດຍຄວາມຕື່ນຕົວຢ່າງສົມບູນ ; ພຽງແຕ່ຈາກເວລານັ້ນ, ບັນດາສາຍເຫດແຫ່ງສັງຄົມຊຶ່ງເຂົາເອົາມານຳໃຊ້ນັ້ນຈຶ່ງເກີດຜົນສຳເລັດຊຶ່ງເຂົາປາຖະໜາ, ດ້ວຍລະດັບທີ່ໃຫ່ຍຍິ່ງ ແລະ ທະວີຂຶ້ນຕື່ມຢູ່ເລື້ອຍໆ. ນັ້ນແມ່ນບາດກ້າວກະໂດດຂຶ້ນຂອງມະນຸດຊາດຈາກອານາຈັກຈຳເປັນມາສູ່ອານາຈັກເສລີພາບ.

.....

ບັນດານັກໄຝ່ຝັນບິນເມກ ໄດ້ຮູ້ໂດຍສົມບູນວ່າບັນດາຜົນຮ້າຍຢ້ອນຫລັງຂອງການແບ່ງງານ, ໄດ້ເຫັນວ່າດ້ານໜຶ່ງແມ່ນກຳມະກອນ ຖືກອ່ອນໂຊລົງ, ແລະ ດ້ານອື່ນ, ການເຄື່ອນໄຫວອອກເຮື່ອເທແຮງ ນັ້ນເອງກໍບໍ່ເສີມຂະຫຍາຍໄດ້ຢ່າງພຽງພໍ ແລະ ພຽງແຕ່ຖືກຈຳກັດໃນການຊ້ຳໄປຊ້ຳມາແບບກົນຈັກໃນຈັງຫວະໜຶ່ງຢູ່ເລື້ອຍໆ ແລະ ບໍ່ວ່າຍາມໃດກໍຄືກັນນັ້ນ, ໃນຕະຫລອດຊີວິດ. ຟູຣີເອ ກໍຄື ໂອແວນ ໄດ້ ເຄີຍຮຽກຮ້ອງຕ້ອງລົບລ້າງຄວາມປໍລະປັກກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ຖືອັນນັ້ນເປັນເງື່ອນໄຂທີໜຶ່ງ ແລະ ພື້ນຖານ ເພື່ອລົບລ້າງການແບ່ງງານເກົ່າໂດຍເວົ້າທົ່ວໄປ, ທ່ານທັງສອງລ້ວນແຕ່ວາງແຜນ ວ່າຕ້ອງແບ່ງພົນລະເມືອງຢູ່ໃນປະເທດເປັນກຸ່ມຕ່າງໆ ແຕ່ ໑.໖໐໐ ເຖິງ ໓.໐໐໐ ຄົນ ແຕ່ລະກຸ່ມຕ່າງກໍຮ່ວມຢູ່ໃນຫໍຜາສາດທີ່ໃຫ່ຍໂຕຢູ່ຈຸດ ໃຈກາງອານາເຂດຂອງຕົນ. ຈິງຢູ່ແລ້ວວ່າຢູ່ບາງບ່ອນ, ຟູຣີເອກໍໄດ້ເວົ້າ

ເຖິງຕົວເມືອງ; ແຕ່ລະໂຕເມືອງເອງກໍພຽງແຕ່ປະກອບດ້ວຍຫໍພາສາດ ສີ່, ຫ້າແຫ່ງຄືແນວນັ້ນທີ່ຢູ່ໃກ້ຄຽງກັນເທົ່ານັ້ນ. ທ່ານທັງສອງ ຕ່າງກໍຖື ວ່າ ແຕ່ລະພາຄີໃນສັງຄົມລ້ວນແຕ່ເຂົ້າຮ່ວມກະສິກຳ ແລະ ອຸດສາຫະ ກຳທັງນັ້ນ. ຕາມຟູຣິເອນັ້ນ, ຂະແໜງຫັດຖະກຳ ແລະ ໂຮງງານອຸດ ສາຫະກຳນັ້ນເອງດຳລົງບົດບາດຕົ້ນຕໍໃນອຸດສາຫະກຳ. ກົງກັນຂ້າມໂອ ແວນຊ໌ພັດຖືວ່າໃນຂະນະນັ້ນມັນກໍໄດ້ເປັນອຸດສາຫະກຳໃຫຍ່ແລ້ວ, ແລະ ທ່ານກໍໄດ້ຮຽກຮ້ອງຕ້ອງໝູນໃຊ້ອາຍນ້ຳ ແລະ ເຕັກນິກ ແຫ່ງເຄື່ອງ ຈັກເຂົ້າວຽກງານຫຼູຕົ້ນໃນຄອບຄົວ. ແລະ ລວມທັງໃນກະສິກຳ ແລະ ອຸດສາຫະກຳທັງສອງນັ້ນ, ທ່ານຕ່າງກໍຮຽກຮ້ອງໃຫ້ແຕ່ລະຄົນຕ່າງກໍໄດ້ ເຂົ້າຮ່ວມຢ່າງສຸດກຳລັງເຂົ້າວຽກງານຫຼາຍຢ່າງ, ແລະ ຈາກນັ້ນຈຶ່ງ ກໍ່ສ້າງໃຫ້ຊາຍໜຸ່ມມີຄວາມອາດສາມາດໃນການເຄື່ອນໄຫວດ້ານ ເຕັກ ນິກໄດ້ຫຼາຍຢ່າງກໍຍິ່ງດີ. ທ່ານທັງສອງຕ່າງກໍຖືວ່າຜູ້ຄົນຕ້ອງໄດ້ ຮັບ ການຂະຫຍາຍຕົວຢ່າງຮອບດ້ານດ້ວຍການເຄື່ອນໄຫວພຶດຕິກຳຢ່າງຮອບ ດ້ານ; ແລະ ຕ້ອງເຮັດໃຫ້ຜູ້ຄົນຊອກເຫັນຄວາມຈັບໃຈ, ເມົານົວ ນຳ ການອອກແຮງງານຊຶ່ງການແບ່ງງານໄດ້ເຮັດໃຫ້ມັນຫາຍໄປ, ກ່ອນອື່ນ ໝົດແມ່ນດ້ວຍການເຄື່ອນໄຫວຫຼາຍດ້ານຄືໄດ້ກ່າວຂ້າງເທິງແລະດ້ວຍ ວິທີຫຍໍ້ໃຫ້ເວລາຂອງແຕ່ລະ "ພຽນ" ສັ້ນລົງ ( ໃຊ້ຕາມສັບ "

Séance " ຂອງ ຟູຣິເອ) ເຮັດແນວໃດເພື່ອໃຫ້ມັນເໝາະ ສົມກັບແຕ່ລະວຽກງານພິເສດ, ທ່ານທັງສອງ ຕ່າງກໍໄດ້ກາຍແບບວິທີ ຕິກຕອງຂອງຈີນຈົ້ນຊູດຣິດທີ່ໄດ້ປະໄວ້ໃຫ້ທ່ານຄູຍຣົງຢ່າງໄກໆ, ຊຶ່ງຖື ວ່າການປໍລະປັກລະຫວ່າງຕົວເມືອງກັບຊົນນະບົດແມ່ນພາວະການໜຶ່ງທີ່

ບໍ່ອາດຫລີກລຽງໄດ້ໂດຍທາດແທ້ຂອງສິ່ງວັດຖຸນັ້ນເອງໃຫ້ກຳເນີດຂື້ນ .
ຕາມແບບວິທີຈິນຕະນາການອັນຊົ່ວຮ້າຍ ແລະ ຈຳກັດ, "ຄົນ" ຈຳນອນໃດໜຶ່ງທີ່ແນ່ນອນ, ໃນບໍ່ວ່າກໍລະນີໃດໜຶ່ງນັ້ນ, ຕ່າງກໍຖືກ ຈຳຕ້ອງທຳການຜະລິດຕະພັນ ແຕ່ຢ່າງດຽວເທົ່ານັ້ນ; ແບບວິທີຈິນຕະ ນາການດັ່ງກ່າວ ຊູຊີຢາກໃຫ້ສະພາວະການທີ່ມະນຸດຊາດດ້ຳລົງແບບ ວິທີແຫ່ງຊີວິດການເປັນຢູ່ທີ່ຕ່າງກັນສະນັ້ນຈຶ່ງແບ່ງເປັນບັນດາ " ປະເພດເສດຖະກິດຕ່າງກັນ " ນັ້ນຍືນຍົງຄົງຕົວຄືແນວນັ້ນຢູ່ເລື້ອຍໆໄປ; ໝາຍຄວາມວ່າຢາກຮັກສາສະພາວະການບັນດາຜູ້ຄົນພຽງແຕ່ມັກວຽກເກົ່າ ແຕ່ບໍ່ມັກເຮັດວຽກໃດອື່ນ, ໝາຍຄວາມວ່າບັນດາຜູ້ຄົນຖືກເສື່ອມເສຍລົງລະດັບໜຶ່ງທີ່ຕ່ຳຕ້ອຍຈົນວ່າສະແດງຄວາມຊື່ນບານ ຕໍ່ການທີ່ຕົນເອງຖືກກົດຂີ່ເປັນຂ້າທາດ ແລະ ຊີວິດຂອງຕົນເອງຖືກຮັດແຄບເຂົ້າ. ເມື່ອປຽບທຽບກັບແນວຄິດທີ່ໄດ້ໃຊ້ເປັນພື້ນຖານໃຫ້ຄວາມໄຝ່ຝັນບິນເມກທີ່ປ່ວງບ້າກ່ວາໝູ່ຂອງ " ທ້າວໂງ້ຈາ " ຟຣິເອ ເມື່ອປຽບທຽບກັບບັນດາແນວຄິດອັນຫຼຸກຈົນທີ່ສຸດຂອງ "ທ້າວຫຽາບທຶກ, ໂງຈາ ແລະ ຫູກຈົນ " ໂອແວນ ແລ້ວ, ທ່ານດູຍຣິງນີ້, ຊຶ່ງເປັນຄົນຜູ້ໜຶ່ງທີ່ຍັງຄົງເປັນຂ້ອຍ ຂ້າໃຫ້ແກ່ການແບ່ງງານຢ່າງເຕັມສ່ວນ, ພຽງແຕ່ແມ່ນທາວຄົນຕ່ຳເຕ້ຍ ທີ່ອອດອິ່ງທະນົງຕົວເທົ່ານັ້ນ.

ເມື່ອສັງຄົມກຳເອົາພາຫະນະແຫ່ງການຜະລິດທັງໝົດດ້ວຍ ຕົນເອງ ເພື່ອໃຫ້ລວມໃຫ້ທົ່ວສັງຄົມຕາມແຜນການໜຶ່ງ, ດັ່ງນັ້ນ ໝາຍຄວາມວ່າສັງຄົມໄດ້ປົດຖິ້ມພາວະການຊຶ່ງຜູ້ຄົນໃນເມື່ອກ່ອນນີ້ ຖືກກົດຂີ່ເປັນຂ້າທາດດ້ວຍພາຫະນະແຫ່ງການຜະລິດຂອງກະໂຕເຂົາເອງ.ຕາມ

ທຳມະດາວ່າສັງຄົມບໍ່ອາດປົດປ່ອຍໃຫ້ຕົນເອງໄດ້, ຖ້າວ່າບໍ່ປົດປ່ອຍໃຫ້ແຕ່ລະບຸກຄົນ, ສະນັ້ນແບບວິທີການຜະລິດເກົ່າຈະຖືກໂຄ່ນລົ້ມເຖິງຮາກເຫງົ້າຢ່າງແນ່ນອນ, ແລະ ໂດຍສະເພາະຢ່າງຍິ່ງແມ່ນການແບ່ງງານເກົ່າຕ້ອງຫາຍໄປ. ແທນໃຫ້ມັນ, ຈຳຕ້ອງມີການຈັດຕັ້ງການຜະລິດ , ໃນນັ້ນ, ດ້ານໜຶ່ງ, ຈະບໍ່ມີເອກະຊົນຜູ້ໃດສາມາດໃຫ້ຜູ້ອື່ນຫາບ ເອົາສ່ວນແຮງງານການຜະລິດຂອງຕົນທີ່ເຄີຍເປັນເງື່ອນໄຂທຳມະຊາດແຫ່ງຄວາມເປັນຕາຍຂອງມະນຸດຊາດ; ດ້ານອື່ນແຮງງານການຜະລິດບໍ່ແມ່ນຫລ່ຽມລາຍ ເພື່ອກົດຂີ່ເປັນຂ້າທາດອີກ, ຫາກກາຍເປັນພາຫະນະໜຶ່ງເພື່ອປົດປ່ອຍໃຫ້ຜູ້ຄົນ, ດ້ວຍວິທີນຳເອົາຄວາມສາມາດຂະຫຍາຍ ແລະໝູນໃຊ້ບັນດາພອນສະຫວັນທາງກຳລັງກາຍ ແລະ ກຳລັງຫົວຄິດປັນຍາຂອງຕົນກ່ຽວກັບດ້ານຕ່າງໆ ທັງໝົດມາໃຫ້ແຕ່ລະຄົນ : ຈາກນັ້ນແຮງງານການຜະລິດຈາກບ່ອນຊຶ່ງເມື່ອກ່ອນນີ້ເປັນຫາບໜັກໜຶ່ງ, ກາຍມາເປັນຄວາມຈັບໃຈໃນປະຈຸບັນ.

ປະຈຸບັນນີ້, ສິ່ງດັ່ງກ່າວນັ້ນບໍ່ເປັນຄວາມໄຝ່ຝັນບິນເມກ, ຄວາມປາຖະໜາທີ່ຈິງໃຈຢ່າງໜຶ່ງອີກ. ດ້ວຍການຂະຫຍາຍຕົວໃນປະ ຈຸບັນຂອງກຳລັງການຜະລິດດັ່ງນັ້ນປະກົດການຜະລິດທີ່ນັບມື້ນັບທະວີຂຶ້ນຕື່ມຊຶ່ງກະໂຕການພັນກຳລັງການຜະລິດເປັນຂອງສັງຄົມນຳເອົາມາ, ການປັດເຂ່ຍຄວາມອຸປະສັກຕ່າງໆ ແລະ ຄວາມສັບປົນຄົນເລໂດຍແມ່ນແບບວິທີການຜະລິດທຶນນິຍົມກໍ່ຂຶ້ນ , ການປັດເຂ່ຍພາວະການຟູມເຟືອຍ ຜະລິດພັນ ແລະ ພາຫະນະການຜະລິດ, - ພຽງແຕ່ວຽກງານຕ່າງໆ ເຫລົ່ານັ້ນກໍພຽງພໍເພື່ອເຮັດໃຫ້ກໍລະນີຊຶ່ງໝົດທຸກຄົນລ່ວນແຕ່ເຂົ້າຮ່ວມ ການ

ອອກແຮງງານ, ສາມາດເຮັດໃຫ້ເວລາອອກແຮງງານລົດຜ່ອນລົງ ລະດັບສັ້ນກ່ວາໝູ່, ຕາມບັນດາທັດສະນະປະຈຸບັນ.

ດ້ານອື່ນ, ກໍບໍ່ແມ່ນວ່າລົບລ້າງການແບ່ງງານເກົ່າໄດ້ເປັນຄວາມຮ້ອງຂໍຊຶ່ງພຽງແຕ່ສາມາດປະຕິບັດໃຫ້ປະກົດເປັນຈິງດ້ວຍວິທີທຳ ຄວາມເສຍຫາຍເຖິງຜະລິດຕະພາບຂອງງານດອກ. ກົງກັນຂ້າມ, ເນື່ອງຈາກພື້ນຖານອຸດສາຫະກຳໃຫ່ຍ, ສະນັ້ນການລົບລ້າງການແບ່ງງານເກົ່າຈຶ່ງໄດ້ກາຍເປັນເງື່ອນໄຂໜຶ່ງຂອງກະໂຕພື້ນຖານການຜະລິດເອງ.

ການຜະລິດດ້ວຍກົນຈັກທຳການລົບລ້າງຄວາມຈຳເປັນທີ່ຕ້ອງຮັກສາແບບແບ່ງງານໄວ້ເຊັ່ນດຽວໃນໂຮງງານຫັດຖະກຳຕ່າງໆ, ອັນແມ່ນ ຜູກມັດກຳມະກອນໃສ່ວຽກງານໜຶ່ງເຊິ່ງຄົງທີ່ຢ່າງກາລະນານ. ເພາະວ່າການເຄື່ອນເໜັງໃນທັງໝົດຂອງໂຮງງານ ໂດຍແມ່ນເຄື່ອງຈັກປະຕິບັດແຕ່ບໍ່ແມ່ນກຳມະກອນເປັນຜູ້ປະຕິບັດ ສະນັ້ນການປ່ຽນແປງພາລະກອນຢູ່ສະເໝີນັ້ນຈຶ່ງອາດຈະບໍ່ກໍຄວາມຕິດຕອນຂຶ້ນແຕ່ຢ່າງໃດໃນຂະບວນວິວັດແຫ່ງການອອກແຮງງານເລີຍ. ສຸດທ້າຍ, ຍ້ອນວ່າພວກເດັກນ້ອຍຮຽນໃຊ້ເຄື່ອງຈັກແມ່ນໄວທີ່ສຸດ, ສະນັ້ນພາວະການດັ່ງກ່າວຈຶ່ງ ລົບລ້າງຄວາມຈຳເປັນທີ່ຕ້ອງກໍ່ສ້າງຊັ້ນຄົນງານພິເສດທີ່ຈຳເພາະໃຊ້ ເຄື່ອງຈັກ [໑] ).

ແຕ່ໃນເນື້ອແບບວິທີໃຊ້ເຕັກນິກຂອງເຄື່ອງຈັກທຶນນິຍົມຍັງຄົງ ຈຳ

---

໑) ກ. ມາກ, ທຶນ, ຫົວ ໑, ເຫລັ້ມ ໔, ໜ້າ ໑໐໓, ສຳນັກພິມຈຳໜ່າຍສັງຄົມ, ປາຣີ, ໑໙໔໘ (ປ.ກ.).

ໃຫ້ຕ້ອງຮັກສາການແບ່ງງານເກົ່າກັບການພັນເປັນວິຊາສະເພາະທີ່ແຂງກະດ້າງຂອງມັນໄວ້ຢູ່ເລື້ອຍໆມາ, ເຖິງແມ່ນວ່າທາງດ້ານເຕັກນິກ , ການແບ່ງງານດັ່ງກ່າວນີ້ໄດ້ກາຍເປັນວຽກໜຶ່ງທີ່ເຫລືອແລ້ວ, ກະໂຕການຜະລິດດ້ວຍເຄື່ອງຈັກກໍຈູກຂຶ້ນຕານການຫລາສະໄໝດັ່ງກ່າວນັ້ນ . ພື້ນຖານເຕັກນິກຂອງພື້ນຖານອຸດສາຫະກຳໃຫຍ່ມີລັກສະນະປະຕິວັດ.

ໂດຍອາໄສເຄື່ອງຈັກ, ອາໄສບັນດາຂະບວນວິວັດແຫ່ງເຄມີສາດ ແລະ ອາໄສວິທີອື່ນໆ. ພື້ນຖານອຸດສາຫະກຳໃຫຍ່ໄດ້ກໍ່ການຕ່າວປີ້ນຂຶ້ນຢູ່ສະເໝີ ໃນພື້ນຖານເຕັກນິກຂອງການຜະລິດ, ພ້ອມກັບນັ້ນທັງໃນພາລະບົດບາດຂອງກຳມະກອນ ແລະ ທັງໃນການປະສານສົມທົບທີ່ມີລັກສະນະສັງຄົມຂອງຂະບວນວິວັດແຫ່ງການອອກແຮງງານອີກ. ດັ່ງນັ້ນ ແມ່ນມັນພັນການແບ່ງງານເປັນປະຕິວັດຢູ່ສະເໝີຢູ່ພາຍໃນສັງຄົມ ແລະ ບໍ່ລົດລະໃນການຖົ້ມທຶນເປັນລວາດໆ ແລະ ກຳມະກອນເປັນລວາດໆຈາກຂະແໜງການຜະລິດໜຶ່ງນີ້ມາສູ່ຂະແໜງການຜະລິດໜຶ່ງນັ້ນ. ເພາະເຫດນັ້ນລັກສະນະຂອງພື້ນຖານອຸດສາຫະກຳໃຫຍ່ຈຶ່ງຮຽກຮ້ອງຕ້ອງ ມີການປ່ຽນແປງໃນແຮງງານ, ການເຄື່ອນເໜັງຂອງພາລະ ບົດບາດຕ່າງໆ ການເຄື່ອນຍ້າຍຢ່າງຮອບດ້ານຂອງຄົນງານ... ພວກເຮົາ ກໍໄດ້ເຫັນວ່າ ຄວາມຂັດແຍ່ງອັນເດັດຂາດດັ່ງກ່າວນີ້...ໄດ້ສະແດງອອກຢ່າງພິລຶກພິລ້ຳຄືແນວໃດໃນການທຳລາຍດັບສູນຢ່າງບໍ່ຢຸດຢັ້ງທີ່ມີຕໍ່ຊົນຊັ້ນກຳມະກອນ, ໃນການຟູມເຟືອຍທີ່ບໍ່ມີຂອບເຂດກ່ຽວກັບກຳລັງແຮງງານ ແລະ ໃນບັນດາການທຳລາຍລ້າງທີ່ມາຈາກພາວະການອະນາທິປະໄຕກໍ່ຂຶ້ນໃນສັງຄົມ. ນັ້ນແມ່ນດ້ານຫຍໍ້ທໍ້. ແຕ່ຖ້າວ່າໃນປະຈຸບັນນີ້ ການປ່ຽນ

ແປງໃນແຂວງການທາກວາງເສັ້ນທາງໄປເອງຄືກັບກົດເກນ ທຳມະຊາດໜຶ່ງດ້ວຍກຳລັງທຳລາຍລ້າງອັນເປັນຕາບອດຂອງມັນ, ຊຶ່ງບໍ່ວ່າຢູ່ບ່ອນໃດກໍປະສົບກັບບັນດາກຳລັງຊຸປະສັກຄືກັນ, ດັ່ງນັ້ນດ້ານອື່ນກະໂຕ ພື້ນຖານຊຸດສາຫະກຳໃຫ່ຍເອງ, ເນື່ອງຈາກມະຫັນຕະໄພຂອງມັນ, ຍັງຕ້ອງຮັບຮູ້ການປ່ຽນແປງໃນໂຮງງານຄ້າຍຄືບັນຫາເປັນຕາຍ, ແລະຈາກນັ້ນຕ້ອງຮັບຮູ້ຄວາມອາດສາມາດຂະຫຍາຍຕົວໃນທຸກດ້ານຂອງ ກຳມະກອນ, ຖືອັນນັ້ນເປັນກົດເກນອັນແຜ່ຫລາຍຂອງພື້ນຖານການຜະລິດ ສັງຄົມຊຶ່ງທຸກຄວາມພົວພັນລ້ວນແຕ່ເໝາະສົມກັບການປະຕິບັດອັນທຳມະດາຂອງກົດເກນດັ່ງກ່າວ. ໂດຍທີ່ເປັນບັນຫາເປັນຕາຍນັ້ນພື້ນຖານ ຊຸດສາຫະກຳໃຫ່ຍຈຶ່ງວາງໜ້າທີ່ : ປ່ຽນແທນໃຫ້ພາວະການອັນຕ່າງປະຫຼາດນັ້ນແມ່ນ ຈຳນວນພົນລະເມືອງແຮງງານສຳຮອງທີ່ໜ້າສົມເພດເວດທະນາ, - ໄດ້ຮັກສາເປັນການແຮໄວ້ ເພື່ອຕອບສະໜອງຄວາມ ຕ້ອງການທີ່ປ່ຽນແປງຂອງນາຍທຶນໃນການຂູດຮີດ, ດ້ວຍກຳລັງຄວາມ ສາມາດອັນເດັດຂາດຂອງຜູ້ຄົນ, ຕອບສະໜອງຄວາມຕ້ອງການໃນຫລາຍດ້ານຂອງແຮງງານ; ປ່ຽນແທນຜູ້ຄົນກຳມະກອນທີ່ຖືກແບ່ງຕາມ ແຕ່ລະວຽກນ້ອຍ, ຜູ້ຊຶ່ງຖືພາລະບົດບາດສັງຄົມເອກະເທດທີ່ແນ່ນອນໄປນຳໂຕດ້ວຍຜູ້ຄົນໜຶ່ງທີ່ຂະຫຍາຍຕົວຢ່າງຮອບດ້ານ, ຊຶ່ງສຳລັບຜູ້ນີ້, ບັນດາພາລະບົດບາດສັງຄົມຕ່າງໆ ກັນລ້ວນແຕ່ເປັນບັນດາແບບວິທີເຄື່ອນໄຫວທີ່ຍືນຍົງຄົງຕົວຢ່າງມີການປ່ຽນແປງຢູ່ສະເໝີ [1] ).

---

໑) ມາກ, ທຶນ, ສຳນັກພິມຈຳໜ່າຍ ຊູເທີດ, ຣາໂນຍ, ໑໙໖໐, ຫົວ ໑, ເຫຼັ້ມ ໔, ໜ້າ ໔໓໖ - ໔໓໗ ( ບ.ກ. ).

ໃນເມື່ອສອນໃຫ້ພວກເຂົາຮູ້ທຳການປ່ຽນແປງການ ເຄື່ອນເໜັງຂອງມູນສ່ວນ, ຊຶ່ງຢູ່ທົ່ວທຸກບ່ອນແມ່ນຄົນທັງຫລາຍຕ່າງກໍສາມາດ ປະຕິບັດໃຫ້ປະກົດເປັນຈິງໄດ້ຢ່າງບໍ່ຫລາຍກໍນ້ອຍ, ກາຍມາເປັນການເຄື່ອນເໜັງທີ່ມີລັກສະນະລວມໝູ່, ເນັ້ນໃສ່ບັນດາຈຸດປະສົງດ້ານເຕັກນິກ , ພ້ອມກັນນັ້ນ, ອຸດສາຫະກຳໃຫຍ່ໄດ້ປົດປ່ອຍການຜະລິດ ອຸດສາຫະກຳອອກຈາກບັນດາການຈຳກັດຂອງທ້ອງຖິ່ນໃນລະດັບໜຶ່ງອັນໃຫຍ່ໂຕທີ່ສຸດ. ກຳລັງນ້ຳໃນເມື່ອກ່ອນນັ້ນແມ່ນກຳລັງແຮງໜຶ່ງທີ່ມີລັກສະນະທ້ອງຖິ່ນ ; ກຳລັງອາຍນ້ຳໃນປະຈຸບັນນີ້ມີລັກສະນະເສລີ. ຖ້າວ່າກຳລັງນ້ຳຈຳເປັນຕ້ອງຢູ່ຊົນນະບົດຢ່າງເດັດຂາດ, ກຳລັງອາຍນ້ຳແມ່ນອນວ່າບໍ່ຈຳ ເປັນຕ້ອງຢູ່ຕົວເມືອງຢ່າງເດັດຂາດ. ກະໂຕການໝູນໃຊ້ກຳລັງ ອາຍນ້ຳຕາມແບບວິທີທຶນນິຍົມຊຶ່ງໂຮມສູນອາຍນ້ຳຢ່າງເປັນຕົ້ນຕໍຢູ່ຕົວເມືອງ , ແລະ ຜັນບັນດາບ້ານທີ່ມີໂຮງງານກາຍເປັນຕົວເມືອງທີ່ມີໂຮງງານ ແຕ່ຍ້ອນເຫດນັ້ນ, ວິທີໝູນໃຊ້ດັ່ງກ່າວຈຶ່ງທຳລາຍທັງບັນດາເງື່ອນໄຂຂອງວິວັດທະນາການຜະລິດທຳມະດາຢ່າງເປັນພ້ອມກັນໂດຍທັນທີ. ຄວາມຕ້ອງການທຳອິດຂອງຈັກອາຍນ້ຳ ແລະ ຄວາມຕ້ອງການຕົ້ນຕໍ ຂອງເກືອບທັງໝົດຂະແໜງການຜະລິດຕ່າງໆໃນພື້ນຖານອຸດສາຫະກຳໃຫຍ່ແມ່ນຣຽກຮ້ອງຕ້ອງມີນ້ຳຊະນິດໃສພໍສົມຄວນ. ແຕ່ວ່າຢູ່ຕົວເມືອງ ທີ່ມີໂຮງງານ, ບໍ່ວ່ານ້ຳຊະນິດໃດບາດນັ້ນກໍຖືກຜັນເປັນນ້ຳຝຸ່ນທີ່ ເໜົ່າເໝັນທັງໝົດ. ສະນັ້ນ, ເຖິງວ່າລວມສູນຢູ່ຕົວເມືອງແມ່ນເງື່ອນ ໄຂພື້ນຖານຂອງການຜະລິດທຶນນິຍົມ ແຕ່ໂດຍສະເພາະແຕ່ລະນາຍທຶນ ອຸດສາຫະກຳແມ່ນວ່າຜູ້ໃດກໍລ້ວນແຕ່ມີທ່າອ່ຽງຢາກອອກຈາກຕົວເມືອງໃຫຍ່

ຕ່າງໆ - ເນື່ອງຈາກພາວະການລວມສູນດັ່ງກ່າວມັນໃຫ້ກຳເນີດ ຂຶ້ນ ໂດຍແນ່ນອນ - ເພື່ອຍົກຍ້າຍພື້ນຖານວິສາຫະກິດມາສູ່ຊົນນະບົດ. ຄົນທັງຫລາຍອາດສາມາດຄົ້ນຄວ້າຂະບວນວິວັດດັ່ງກ່າວຢ່າງລະອຽດ ລະອໍ ໃນບັນດາເຂດອຸດສາຫະກຳຕ່ຳຫູກຢູ່ແຄ້ວນແລນກາ ຊາຍເອີ ແລະ ແຄ້ວນອີອອກຊາຍເອີ; ຢູ່ບ່ອນຕ່າງໆເຫລົ່ານັ້ນ. ພື້ນຖານອຸດສາ ຫະກຳໃຫຍ່ທຶນນິຍົມ, ໃນເວລາໂຕນໜີຈາກຕົວເມືອງມາຫາຊົນນະບົດ ຢູ່ສະເໝີນັ້ນ, ພ້ອມກັນນັ້ນກໍ່ໃຫ້ເກີດບັນດາຕົວເມືອງໃຫ່ມຢູ່ສະເໝີ ແລະ ບໍ່ຢຸດບໍ່ເຊົາ. ໃນບັນດາອຸດສາຫະກຳຫລອມໂລຫະ, ສະພາບການກໍ່ເຊັ່ນດຽວກັນນັ້ນ; ຢູ່ທີ່ນັ້ນເຖິງແມ່ນວ່າສາຍເຫດຕ່າງໆອາດຈະຕ່າງກັນ ສ່ວນໃດສ່ວນໜຶ່ງ, ແຕ່ກໍ່ລ້ວນແຕ່ພາໄປເຖິງບັນດາໝາກຜົນເຊັ່ນ ດຽວກັນນັ້ນ.

ອີກເທື່ອໜຶ່ງ, ເຮົາພົບເຫັນວ່າ : ມີແຕ່ດັບສູນລັກສະນະ ທຶນນິຍົມຂອງອຸດສາຫະກຳທັນສະໄໝຈຶ່ງສາມາດດັບສູນວົງວຽນໄປມາຢ່າງບໍ່ມີທາງອອກອັນໃຫ່ມນັ້ນໄດ້, ຈຶ່ງສາມາດດັບສູນຄວາມຂັດແຍ້ງທີ່ ກັບຄືນຢູ່ສະເໝີຂອງພື້ນຖານອຸດສາຫະກຳທັນສະໄໝນັ້ນໄດ້. ມີແຕ່ສັງຄົມ ໃດສັງຄົມໜຶ່ງທີ່ມີຄວາມສາມາດໃນການປະສານສົມທົບບັນດາກຳລັງຜະລິດຂອງມັນໄດ້ຢ່າງເປັນຈັງຫວະ, ຕາມແຜນການລວມອັນໜຶ່ງອັນດຽວ , ດັ່ງນັ້ນອຸດສາຫະກຳຈຶ່ງສາມາດຮັບການກໍ່ສ້າງຂຶ້ນໄດ້ໃນທົ່ວປະເທດ ; ຣັດແນວໃດເພື່ອໃຫ້ເໝາະສົມທີ່ສຸດກັບການຂະຫຍາຍຕົວ ແລະ ການປົກປັກຮັກສາຂອງອຸດສາຫະກຳກໍ່ຄືກັບການຂະຫຍາຍບັນດາປັດໄຈຜະລິດອື່ນໆ.

ດັ່ງນັ້ນ, ການລົບລ້າງຄວາມເປັນປໍລະປັກກັນລະຫວ່າງຊົນນະບົດກັບຕົວເມືອງບໍ່ພຽງແຕ່ເປັນວຽກໜຶ່ງທີ່ສາມາດປະຕິບັດໃຫ້ປະກົດເປັນຈິງ ໄດ້ເທົ່ານັ້ນ, ມັນໄດ້ກາຍເປັນຄວາມຈຳເປັນໂດຍກົງຂອງກະໂຕ ພື້ນຖານການຜະລິດອຸດສາຫະກຳເອງ, ກໍເຊັ່ນດຽວກັບຂອງພື້ນຖານການຜະລິດອຸດສາຫະກຳທັງໝົດ ແລະ ນອກຈາກນັ້ນມັນທັງເປັນຂອງການ ອະນາໄມສາທາລະນະອີກ. ມີແຕ່ເຮັດໃຫ້ຊົນນະບົດ ແລະ ຕົວເມືອງ ປະສົມກັນຈຶ່ງສາມາດຈຳກັດປັດເປົ່າໄພຕິດອາຍພິດໃນປະຈຸບັນຂອງ ອາກາດຂອງນ້ຳ ແລະ ຂອງດິນ; ມີແຕ່ການປະສົມກັນຄືແນວນັ້ນຈຶ່ງສາມາດພາມວນຊົນຊຶ່ງໃນປະຈຸບັນພວມດຳລົງຊີວິດຢ່າງຫລຸຍຫຼຽນໄປໃນຕົວ ເມືອງຕ່າງໆ, ໄປຫາບ່ອນຊຶ່ງຝຸ່ນຂອງເຂົາໃຊ້ ເພື່ອໃຫ້ກຳເນີດແກ່ພືດພັນ, ແຕ່ບໍ່ແມ່ນເພື່ອໃຫ້ກຳເນີດພະຍາດ.

ອຸດສາຫະກຳທຶນນິຍົມ ໄດ້ກາຍເປັນເອກະລາດພໍສົມຄວນສຳລັບບັນດາຂອບເຂດທີ່ຄັບແຄບຂອງທ້ອງຖິ່ນທີ່ຜະລິດວັດຖຸດິບທີ່ຈຳເປັນໃຫ້ ແກ່ມັນ. ອຸດສາຫະກຳຕ່ຳຫູກໃນປະຈຸບັນໃຊ້ວັດຖຸດິບຕ່າງໆ ທີ່ຂາເຂົ້າເປັນຕົ້ນຕໍ.ບັນດາແຮ່ເຫລັກຂອງແອດສະປາຍໄດ້ຮັບການປຸງແຕ່ງຢູ່ ອັງກິດແລະ ຢູ່ເຢລະມັນ ບັນດາແຮ່ທອງຂອງແອດສະປາຍ ແລະ ອາເມລິກາໃຕ້ລ້ວນແຕ່ປຸງແຕ່ງຢູ່ອັງກິດ. ບໍ່ວ່າຂອບເຂດບໍ່ຖ່ານໃດກໍລ້ວນແຕ່ ສະໜອງເຊື້ອໄຟໃຫ້ອຸດສາຫະກຳເຊິ່ງແຕ່ລະປີຍິ່ງຂ້າມໄປໄກຈາກ ຂອບເຂດຂອງບໍ່ແຮ່ດັ່ງກ່າວ. ລຽບຕາມຝັ່ງທະເລຢູ່ເອີຣົບ,ບັນດາຈັກ ອາຍນ້ຳຕ່າງກໍແລ່ນດ້ວຍຖ່ານຂອງອັງກິດ, ບາງທີຂອງເຢລະມັນ ແລະຂອງແບນຊິກ. ຫລັງຈາກທີ່ສັງຄົມໄດ້ຮັບການປົດປ່ອຍຈາກບັນດາການຄູມຂັງ

ຂອງພື້ນຖານການຜະລິດທຶນນິຍົມແລ້ວສາມາດຄືບໜ້າໄປໄກກ່ວານັ້ນອີກ ໃນເມື່ອກໍ່ສ້າງຮຸ່ນຄົນໃໝ່ຂຶ້ນ, ບັນດາຜູ້ຜະລິດໄດ້ຮັບການຂະຫຍາຍຕົວໃນທຸກດ້ານ, - ເຂົາເຂົ້າໃຈບັນດາພື້ນຖານວິທະຍາສາດຂອງພື້ນຖານການຜະລິດອຸດສາຫະກຳທັງໝົດນັ້ນຢ່າງຈະແຈ້ງ, ແລະ ແຕ່ລະຄົນໃນພວກເຂົາລ້ວນແຕ່ຈະຜ່ານການຝຶກຫັດໃນພາກຕົວຈິງແຕ່ຕົ້ນຈົນຮອດປາຍໃນຕະຫລອດຂະແໜງການຜະລິດເປັນລວາດໜຶ່ງ,- ພ້ອມກັນນັ້ນ ສັງຄົມກໍອາດຈະສ້າງກຳລັງແຫ່ງການຜະລິດໃໝ່ກຳລັງໜຶ່ງຂຶ້ນທີ່ມີ ຄວາມອາດສາມາດອັນເຫລືອກາຍ ເພື່ອແທນໃສ່ບ່ອນທີ່ຕ້ອງຂົນສົ່ງ ວັດຖຸດິບແລະ ເຊື້ອໄຟຕ່າງໆມາຈາກບ່ອນໄກທີ່ສຸດ.

ດັ່ງນັ້ນ, ການທີ່ລົບລ້າງການແຍກອອກຈາກກັນລະຫວ່າງ ຫົວເມືອງ ແລະ ຊົນນະບົດບໍ່ແມ່ນເປັນຄວາມໄຝ່ຝັນໜຶ່ງ, ລວມທັງ ທາງດ້ານການລົບລ້າງນັ້ນເອງຮຽກຮ້ອງຕ້ອງແຈກຢາຍພື້ນຖານອຸດສາຫະກຳໃຫຍ່ໃຫ້ສະເໝີກັນໃນທົ່ວປະເທດ. ຈິງຢູ່ແລ້ວວ່າ ສຳລັບບັນດາ ຫົວເມືອງໃຫຍ່, ພື້ນຖານອະລິຍະທຳໄດ້ປະມູນມັງໄວ້ໃຫ້ພວກເຂົາຊຶ່ງ ຈະຕ້ອງເສຍເວລາ ແລະ ເຫື່ອແຮງຫລາຍຢ່າງຈຶ່ງລົບລ້າງໄດ້.ແຕ່ມັນຈະຖືກລົບລ້າງໂດຍແນ່ນອນ, ແລະ ຈະຖືກລົບລ້າງເຖິງວ່ານັ້ນແມ່ນ ຂະບວນວິວັດໜຶ່ງທີ່ດົນນານທີ່ສຸດກໍ່ຕາມ. ເຖິງວ່າຊາຕາກຳຂອງຈັກກະພັດເຢລະມັນທີ່ຂຶ້ນຕໍ່ຊາດປະຊຸດຈະເປັນໄປແນວໃດກໍ່ຕາມ, ບິສມາກກໍອາດຈະນອນຢູ່ໃນຫີບສົບກັບສະຕິຮູ້ສຶກອັນອວດອົ່ງວ່າຄວາມມຸ່ງມາດ ປາຖະໜາອັນແຮງກ້າຂອງຕົນຈະໄດ້ຮັບການປະຕິບັດໃຫ້ປະກົດເປັນຈິງ ຢ່າງແນ່ນອນ : ບັນດາຫົວເມືອງໃຫຍ່ຈະສະລັກຫັກພັງ.

ແລະ ເວລານີ້, ບັນດາສິ່ງທີ່ໄດ້ກ່າວມາດັ່ງເທິງນັ້ນ, ອາດຈະຕີລາຄາຢ່າງສົມກຽດກ່ຽວກັບຄວາມເຫັນເດັກນ້ອຍຂອງທ່ານ ດູຍຣິນ ທີ່ຖືວ່າສັງຄົມສາມາດຍຶດຄອງພາຫະນະແຫ່ງການຜະລິດທັງໝົດເປັນການະສິດມາໄດ້ໂດຍບໍ່ຕ້ອງການເຮັດໃຫ້ພື້ນຖານແບບວິທີການຜະລິດເກົ່າຕ່າວປີ້ນ ແລະ ໂດຍສະເພາະຢ່າງຍິ່ງແມ່ນບໍ່ຕ້ອງດັບສູນການແບ່ງງານເກົ່າ ແລະ ໜ້າທີ່ນັ້ນອາດຈະເບິ່ງຄືວ່າໄດ້ຮັບການແກ້ໄຂແລ້ວໃນເມື່ອຄົນທັງຫລາຍພຽງແຕ່ " ເອົາໃຈໃສ່ເຖິງບັນດາເງື່ອນໄຂທຳມະຊາດ ແລະ ບັນດາກຳລັງຄວາມສາມາດຂອງເອກະຊົນ ". ແຕ່ບໍ່ແມ່ນຍ້ອນແນວນັ້ນຈຶ່ງບໍ່ມີພາວະການຄືແຕ່ກ່ອນອີກຄືມີຄົນເປັນລວາດໆຖືກຂັ້ນກັບການ<u>ຜະລິດ</u>
<u>ໂດຍສະເພາະສຳລັບສິນຄ້າຊະນິດດຽວ</u>. ລວມທັງພົນລະເມືອງ ເປັນລວາດໆຖືກບັງຄັບເອົາຂະແໜງການຜະລິດອັນໜຶ່ງອັນດຽວ, ແລະມະນຸດຊາດຍັງຄົງຖືກແບ່ງຄືແຕ່ກ່ອນເປັນ " ປະເພດເສດຖະກິດ " ຈຳນວນໜຶ່ງທີ່ຖືກອຳມະພາດໃນຫລາຍດ້ານທີ່ຕ່າງກັນ, ກໍຄືໃນປະຈຸບັນຍັງຄົງມີບັນດາ " ຊ່າງສຳຣອງ " ແລະ ບັນດານັກ " ສະຖາປະນິກ", ເຫດສະນັ້ນສັງຄົມໂດຍເວົ້າທົ່ວໄປຕ້ອງກາຍເປັນເຈົ້າຂອງຂອງ ພາຫະນະແຫ່ງການຜະລິດຕ່າງໆທັງໝົດ, ທັງນີ້ກໍເພື່ອພຽງແຕ່ໃຫ້ແຕ່ລະ ຄົນຍັງເປັນຂ້າທາດໃຫ້ພາຫະນະແຫ່ງການຜະລິດຂອງຕົນ, ແລະ ຍັງມີແຕ່ສິດທິຄັດເລືອກເຄື່ອງມືຊະນິດໜຶ່ງທີ່<u>ແນ່ນອນ</u> ໃນການກົດຂີ່ລ່າທາດ ກະໂຕເອງເທົ່ານັ້ນ ! ແລະ ເຮົາຈຶ່ງພິຈາລະນາເບິ່ງຄືແນວໃດຊຶ່ງ ທ່ານ ດູຍຣິນ ຊ້ຳພັດຖືການແຍກອອກຈາກກັນລະຫວ່າງຕົວເມືອງກັບຊົນນະບົດເປັນ " ພາວະການໜຶ່ງຊຶ່ງເນື່ອງຈາກທາດແທ້ຂອງສິ່ງວັດຖຸນັ້ນ ເອງ

ສະບັນກໍບໍ່ອາດຫລີກລ່ຽງໄດ້ ", ແລະ ຈຶ່ງພຽງແຕ່ຄົ້ນເຫັນວິທີທາງອັນນ້ອຍໆເທົ່ານັ້ນ ເພື່ອຊ່ວຍຊູເປັນຊົ່ວຄາວອັນແມ່ນສອງຂະແໜງການຜະລິດ - ປະສານສົມທົບເຂົ້ານຳກັນສອງຂະແໜງການຂອງປະເທດ ປະຣູດໂດຍລ້ວນນ້ອຍຕ້ອຍ, - ຂະແໜງຕົ້ນເຫລົ້າ ແລະ ຂະແໜງ ຜະລິດນ້ຳຕານດ້ວຍຫົວຜັກກາດ, ທ່ານນັ້ນຖືວ່າການຈັດແບ່ງ ອຸດສາຫະກຳອອກໃນທົ່ວປະເທດແມ່ນຍ້ອນບັນດາສິ່ງທີ່ຄົ້ນພົບອະນາຄົດເປັນສິ່ງຕັດສິນຊີ້ຂາດ, ແລະ ແມ່ນຍ້ອນພາວະການທີ່<u>ຖືກບັງຄັບ</u>ຈຳໃຫ້ນຳເອົາການຜະລິດໂດຍກົງ, ທີ່ອີງໃສ່ການຂຸດຄົ້ນບັນດາວັດຖຸດິບຕັດສິນຊີ້ຂາດ, - ແຕ່ປະຈຸບັນນີ້ເອງບັນດາວັດຖຸເຫລົ່ານັ້ນກໍຍັງຖືກໃຊ້ສອຍຢູ່ບ່ອນໜຶ່ງນັບມື້ນັບຢູ່ຫ່າງໄກຈາກບ່ອນທີ່ໄດ້ໃຫ້ກຳເນີດມັນຂຶ້ນ ! - ແລະ ສຸດທ້າຍ,ທ່ານນັ້ນຫາວິທີເຊື່ອງອຳພາງຂອງທ່ານນັ້ນດ້ວຍວິທີຢັ້ງຢືນວ່າຄວາມຕ້ອງການຕ່າງໆຂອງສັງຄົມຈະເປັນໄປແບບໃດກໍຈະບັງຄັບໃຫ້ຂະແໜງ ກະສິກຳ ແລະ ອຸດສາຫະກຳຕ້ອງສົມທົບນຳກັນ, ລວມທັງອັນນັ້ນເອງແມ່ນ<u>ກົງກັນຂ້າມ</u> ກັບເຫດຜົນເສດຖະກິດ, ເຮັດຄືວ່າຢູ່ຫັ້ນຕ້ອງມີຄວາມເສຍສະຫລະໃດທາງດ້ານເສດຖະກິດນັ້ນແຫລະ !

ບັນດາມູນສ່ວນປະຕິວັດຊຶ່ງໃນພາຍໜ້ານັ້ນຈະດັບສູນການ ແບ່ງງານເກົ່າກໍເຊັ່ນດຽວກັບການແຍກອອກຈາກກັນລະຫວ່າງຕົວເມືອງ ກັບຊົນນະບົດ ແລະ ດຳເນີນການປະຕິວັດໃນພື້ນຖານການຜະລິດທັງໝົດ, ລ້ວນແຕ່ມີຮູບການທີ່ເປັນຫົ່ນແໜງຢູ່ແລ້ວໃນບັນດາເງື່ອນໄຂຜະລິດຂອງພື້ນຖານອຸດສາຫະກຳໃຫ່ຍທັນສະໄໝ ແລະ ພຽງແຕ່ໃນແບບວິທີ ການຜະລິດທຶນນິຍົມໃນປະຈຸບັນ, ບັນດາມູນສ່ວນດັ່ງກ່າວຈຶ່ງປະສົບກັບ ອຸປະ

ສັກຕ່າງໆໃນການຂະຫຍາຍຕົວກ່ວາບັ້ນອີກຂອງມັນ, ແຕ່ເພື່ອເຂົ້າ ໃຈວຽກນັ້ນຕາມທຳມະດາວ່າຕ້ອງມີສາຍຕາເບິ່ງກວ້າງເຫັນໄກກ່ວາ ຂອບເຂດທຳນຽມທີ່ສືບມາແຕ່ບູຮານຂອງປະເທດປະຊຸດຈັກນ້ອຍ, ໝາຍຄວາມວ່າບ່ອນທີ່ເຫລົ້າປູກ ແລະ ນ້ຳຕານທີ່ຜະລິດດ້ວຍຜັກກາດແມ່ນຜະລິດພັນອຸດສາຫະກຳຕົ້ນຕໍຕ່າງໆ, ແລະ ເປັນບ່ອນຊຶ່ງໃນພັນຄົນເຮົາສາມາດອີງໃສ່ປື້ມ ແລະ ໜັງສືພິມເພື່ອຄົ້ນຄວ້າບັນດາວິທີການແຫ່ງ ການຄ້າ. ດັ່ງນັ້ນ, ກໍ່ຕ້ອງຮູ້ແຈ້ງກ່ຽວກັບພື້ນຖານອຸດສາຫະກຳໃຫຍ່ໃນພາກຕົວຈິງ, ໃນການຂະຫຍາຍຕົວທາງປະຫວັດສາດຂອງມັນ ແລະໃນພາກຕົວຈິງປະຈຸບັນນີ້ຂອງມັນ, ໂດຍສະເພາະຢ່າງຍິ່ງໃນປະເທດໜຶ່ງດຽວທີ່ໄດ້ໃຫ້ກຳເນີດມັນຂຶ້ນ, ແລະ ຢູ່ບ່ອນຊຶ່ງມັນໄດ້ບັນລຸເຖິງລະດັບ ຂະຫຍາຍຕົວອັນຄົບບໍລິບູນທີ່ດີເດັ່ນ, ແລະ ດັ່ງນັ້ນ, ຕາມທຳມະດາວ່າຈະບໍ່ມີໃຜຄິດເຖິງການຜັນໃຫ້ລັດທິສັງຄົມນິຍົມວິທະຍາສາດສະໄໝນີ້ ເປັນທຳມະດາສາມັນ ແລະ ເຮັດໃຫ້ລັດທິດັ່ງກ່າວ ກັບມາເປັນ ລັດທິສັງຄົມນິຍົມຊະນິດຕາມແບບປະຊຸດໂດຍລ້ວນໆ ຂອງທ່ານ ຖຸຍຣິນ.

ຟ. ອັງແກນ, ຕ້ານຖຸຍຣິນ, ສຳນັກພິມ
ຈຳໜ່າຍ ອິເຫີດ, ຮ່າໂນ້ຍ, ໑໙໖໑,
ໜ້າ ໔໘໑ - ໕໘໓, ໕໐໘ - ໕໑໑.

ໝາຍເຫດຂອງສຳນັກພິມຈຳໜ່າຍ

## ພາກທີໜຶ່ງ

## ລັກສະນະທີ່ຈຳເປັນຂອງການແບ່ງງານຄືນໃໝ່ຈາກ ການຜະລິດນ້ອຍຂຶ້ນສູ່ການ ຜະລິດໃຫຍ່


ຄັດຈາກນິພົນ : ລະບົບແນວຄິດເປລະມັນ.................... 9

ຄັດຈາກນິພົນ : ການຂະຫຍາຍຕົວຂອງລັດທິທຶນນິຍົມຢູ່ລັດເຊຍ.... 17

ຄັດຈາກນິພົນ : ທຶນ ..............................22

ຄັດຈາກນິພົນ : ສະບັບລ່າງ ແລະ ບົດອະທິບາຍກ່ຽວກັບ ໂຄງການ
ການເມືອງຂອງພັກປະຊາທິປະໄຕ-ສັງຄົມ.......42

ຄັດຈາກນິພົນ : ຄ່າແຮງ, ລາຄາ ແລະ ກຳໄລ..................47

ຄັດຈາກຈົດໝາຍຂອງທ່ານ ມາກ ຝາກໃຫ້ ວ. ກູແກນມານ. 49

ຄັດຈາກນິພົນ : ຕົ້ນກຳເນີດຂອງຄອບຄົວ; ຂອງລະບອບຖືກຳມະສິດ
ເອກະຊົນແລະຂອງລັດ.....................51

ຄັດຈາກນິພົນ : ຫລັກມູນຕ່າງໆຂອງລັດທິກອມມູນິດ.............79

ຄັດຈາກນິພົນ : ຕ້ານດູຍຣິ .............................81

ຄັດຈາກນິພົນ : ກ່ຽວກັບອັນທີ່ເອີ້ນວ່າບັນຫາຕະຫລາດ...........85

ຄັດຈາກນິພົນ : ກ່ຽວກັບຈຸດພິເສດຂອງລັດທິເດີນຈິດເສດຖະກິດ....92

ຄັດຈາກນິພົນ : ການຂະຫຍາຍຕົວຂອງລັດທິ ທຶນນິຍົມ ຢູ່ລັດເຊຍ
..............................105

## ພາກທີ ສອງ

## ເນື້ອໃນ ແລະ ປະຖົມປັດໄຈຂອງການແບ່ງງານ ຄືນໃໝ່ສຳລັບ ແຮງງານ ສັງຄົມ.


ຄັດຈາກນິພົນ : ລະບົບແນວຄິດເຢລະມັນ.................149

ຄັດຈາກນິພົນ : ທຶນ.................................151

ຄັດຈາກນິພົນ : ປະກອບສ່ວນ ຕຳໜິວິຈານ ເສດຖະສາດການເມືອງ ...................................203

ຄັດຈາກນິພົນ : ຄວາມອັບຈົນຂອງປັດຊະຍາ...............204

ຄັດຈາກນິພົນ : ການຂະຫຍາຍຕົວຂອງລັດທິທຶນນິຍົມຢູ່ລັດເຊຍ....215


## ພາກທີ ສາມ

## ບາງຢ່າງກ່ຽວກັບການແບ່ງງານໃໝ່ພາຍ ໃຕ້ລະບອບ ສັງຄົມນິຍົມ.


ຄັດຈາກນິພົນ : ບັນດາຜູ້ເປັນ "ເພື່ອຂອງປະຊາ" ແມ່ນແນວໃດ ແລະ ເຂົາຕໍ່ສູ້ຕ້ານບັນດາ ຊາວປະຊາທິປະໄຕ - ສັງຄົມະຄື ແນວໃດ...........................241

ຄັດຈາກນິພົນ : ລະບົບແນວຄິດເຢລະມັນ.................247

ຄັດຈາກນິພົນ : ທຶນ.................................248

ຄັດຈາກນິພົນ : ຄວາມອັບຈົນຂອງປັດຊະຍາ...............254

ຄັດຈາກນິພົນ : ຕ້ານດູຍຣິນ...........................235

28.1.2011.

ພິມທີ່ໂຮງພິມແຫ່ງລັດ. ສ.ປ.ປ.ລ
ພິມຈຳນວນ 3.000 ຫົວ, ຂະໜາດ 13 × 19
ພິມແລ້ວວັນທີ 30.12.1987